Australian Aid | ASEAN-Australia Counter Trafficking

# ການຈັດຕັ້ງປະຕິບັດ ຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດໃນລັດສະມາຊິກອາຊຽນ

ມາຣິກາ ແມັກອາດຳ (Marika McAdam)



ມິນາ 2020

ຜູ້ຂຽນ: ທ່ານ ນາງ ປອ. ມາຣິກາ ແມັກອາດຳ, ທີ່ປຶກສາດ້ານນະໂຍບາຍບາຍ ແລະ ກົດໝາຍສາກົນ ແຜນງານ ASEAN-ACT

ລິຂະສິດທັງໝົດ ແລະ ໃນທຸກໆພາກສ່ວນຂອງເອກະສານນີ້ ເປັນລິຂະສິດຂອງຄາດໂນ້ (Cardno) ແລະ ບໍ່ສາມາດ ນຳໃຊ້, ຂາຍ, ໂອນ, ສຳເນົາ ຫຼື ຜະລິດຊ້ຳຄືນ ທັງໝົດ ຫຼື ບາງພາກສ່ວນ ໃນລັກສະນະ ຫຼື ໃນຮູບແບບໃດໜຶ່ງ ຫຼື ທາງ ສື່ໃດໜຶ່ງ ໃຫ້ແກ່ບຸກຄົນໃດໜຶ່ງ ທີ່ນອກເໜືອຈາກຂໍ້ຕົກລົງກັບ ຄາດໂນ້.

ເອກະສານສະບັບນີ້ຜະລິດຂຶ້ນໂດຍ ຄາດໂນ້ ແຕ່ພຽງຜູ້ດຽວເພື່ອຜົນປະໂຫຍດ ແລະ ນຳໃຊ້ໂດຍລູກຄ້າ ອີງຕາມຂໍ້ກຳ ນົດໃນການມີສ່ວນຮ່ວມເທົ່ານັ້ນ. ຄາດໂນ້ ຈະບໍ່ຮັບ ແລະ ບໍ່ມີຄວາມຮັບຜິດຊອບໃດໆ ຫຼື ບໍ່ຮັບຜິດຊອບໃດໆ ຕໍ່ກັບ ບຸກຄົນທີ່ສາມ ທີ່ນຳໃຊ້ ຫຼື ອ້າງອີງເນື້ອໃນຂອງເອກະສານສະບັບນີ້.

ໝາຍເຫດ/ຂໍ້ຄວາມປະຕິເສດຄວາມຮັບຜິດຊອບ: ລັດຖະບານອົດສະຕຣາລີ ໄດ້ໃຫ້ທຶນການພິມເຜີຍແຜ່ເອກະສານ ສະບັບນີ້ ຜ່ານກະຊວງການຕ່າງປະເທດ ແລະ ການຄ້າ. ຄວາມຄິດເຫັນໃນເອກະສານພິມເຜີຍແຜ່ສະບັບນີ້ ເປັນຂອງຜູ້ ຂຽນແຕ່ພຽງຜູ້ດຽວ ແລະ ບໍ່ແມ່ນຄວາມຄິດເຫັນຂອງລັດຖະບານອົດສະຕຣາລີ.

ຮູບພາບໜ້າປົກໂດຍ: ທ່ານເປົາໂລ ນິຄໍໂລ (Paolo Nicolello), ທ່ານ ຫງວຽນ ດັງ ຮວງ ຍູ (Nguyen Dang Hoang Nhu) , ທ່ານ ຄຣິດເຕັນ ສເຕີດີວັນ (Kristen Sturdivant), ແລະ ທ່ານ ເຮເກັນ ນູໂຣ (Hakan Nural) ໃນ Unsplash

Australian Aid | ASEAN-Australia Counter Trafficking

# ການຈັດຕັ້ງປະຕິບັດ ຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດໃນລັດສະມາຊິກອາຊຽນ

**ມາຣິກາ ແມັກອາດຳ (Marika McAdam)**



# ສາລະບານ

**ຄໍານໍາຈາກຜູ້ຕາງໜ້າຂອງປະເທດອິນໂດເນເຊຍ ປະຈໍາ AICHR .............................. vii**

**ຄໍານໍາຈາກຫົວໜ້າ - ຟີລິບປິນ .............................................................. ix**

**ບົດສະຫຼຸບສັງລວມ ............................................................................. 1**

ແຫຼ່ງຂໍ້ມູນຂອງຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍ ................................................ 2
ການຕີຄວາມໝາຍກ່ຽວກັບຫຼັກການບໍ່ລົງໂທດ ........................................................ 5
ການນໍາໃຊ້ຫຼັກການບໍ່ລົງໂທດ ........................................................................ 6
ສິ່ງທ້າທາຍໃນການຮ່ວມມືລະຫວ່າງປະເທດ .......................................................... 7
ສິ່ງທ້າທາຍໃນການກໍານົດຕົວຜູ້ຖືກເຄາະຮ້າຍ......................................................... 8
ການລົງໂທດຜູ້ຖືກເຄາະຮ້າຍ ໃນພາກປະຕິບັດຕົວຈິງ ............................................. 10
ຂໍ້ສະເໜີແນະນໍາກ່ຽວກັບການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ................................ 12

**ພາກສະເໜີ ..................................................................................... 15**

**ແຫຼ່ງຂໍ້ມູນຂອງຫຼັກການບໍ່ລົງໂທດ ........................................................... 20**

1.1. ນະໂຍບາຍ ແລະ ກົດໝາຍສາກົນ ........................................................... 21
1.2. ນະໂຍບາຍ ແລະ ກົດໝາຍໃນພາກພື້ນ ..................................................... 25
1.3. ນະໂຍບາຍ ແລະ ກົດໝາຍພາຍໃນ .......................................................... 33

**ກົດໝາຍ, ນະໂຍບາຍ ແລະ ພາກປະຕິບັດຕົວຈິງໃນລັດສະມາຊິກອາຊຽນ .................. 40**

2.1. ບຣູໄນ ດາຣູຊາລໍາ ............................................................................. 43

2.2. ກໍາປູເຈຍ ..... 45
2.3. ອິນໂດເນເຊຍ ..... 52
2.4. ສປປ ລາວ ..... 62
2.5. ມາເລເຊຍ ..... 69
2.6. ມຽນມາ ..... 72
2.7. ຟີລິບປິນ ..... 74
2.8. ສິງກະໂປ ..... 83
2.9. ປະເທດໄທ ..... 89
2.10. ຫວຽດນາມ ..... 100

**ຄໍາແນະນໍາ ..... 106**

3.1. ການກໍານົດຕົວ ແລະ ການສືບສວນ-ສອບສວນ ..... 110
3.2 ການຈັບຕົວ ແລະ ການຕັ້ງຂໍ້ຫາ ..... 114
3.3 ການດໍາເນີນຄະດີ ..... 116
3.4 ການປົກປ້ອງ ທາງກົດໝາຍ ..... 120
3.5 ການຕັດສິນໂທດ ແລະ ການລົງໂທດ ..... 127
3.6 ການປຽວຢາ ພາຍຫຼັງການຕັດສິນໂທດ ..... 132

**ເອກະສານຊ້ອນທ້າຍ ..... 136**

ເອກະສານຊ້ອນທ້າຍ 1: ຄວາມຜິດທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄດ້ກະທໍາຜິດທາງອາຍາ ..... 136
ເອກະສານຊ້ອນທ້າຍ 2: ເຄື່ອງມືໃນການອໍານວຍຄວາມສະດວກ ສໍາລັບການປຶກສາຫາລື ແບບໂຕະມົນ ..... 151
ເອກະສານ ຊ້ອນທ້າຍ 3: ລາຍຊື່ຜູ້ເຂົ້າຮ່ວມ ..... 166

**ເອກະສານອ້າງອີງ ..... 177**

# ລາຍການຫ້ອງຂໍ້ມູນ


**ຫ້ອງທີ 1:** ນິຍາມ "ການຄ້າມະນຸດ" ........................................................................ 19

**ຫ້ອງທີ 2:** ບົດບັນທຶກຄວາມເຂົ້າໃຈສອງຝ່າຍລະຫວ່າງ ລັດສະມາຊິກອາຊຽນ .................................. 26

**ຫ້ອງທີ 3:** ຫຼັກການບໍ່ລົງໂທດ ໃນບົດລາຍງານການຄ້າມະນຸດຂອງກະຊວງການຕ່າງປະເທດ
ສະຫະລັດອາເມລິກາ ........................................................................................ 29

**ຫ້ອງທີ 4:** ການພິຈາລະນາຂອງສານສິດທິມະນຸດຂອງສານເອີລົບ
ກ່ຽວກັບການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ: ........................................................ 31

**ຫ້ອງທີ 5:** ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ປະເຊີນກັບຄວາມຕາຍ
ຍ້ອນການລັກລອບຂົນສິ່ງຢາເສບຕິດ - ແມຣີ ເຈນ ເວໂລໂຊ (Mary Jane Veloso) ......................... 60

**ຫ້ອງທີ 6:** ຄວາມສ່ຽງທີ່ຈະຖືກໂທດປະຫານຊີວິດ ສຳລັບຜູ້ຖືກເຄາະຮ້າຍ
ທີ່ເຫັນປ່ຽນຕົນເອງເປັນຜູ້ຄ້າມະນຸດ ໃນຟີລິບປິນ...................................................................... 82

**ຫ້ອງທີ 7:** ກໍລະນີສຶກສາ: ການນຳໃຊ້ຫຼັກການບໍ່ລົງໂທດທີ່ບໍ່ເປັນເອກະພາບກັນ
ໃນພາກປະຕິບັດຕົວຈິງ........................................................................................... 92

**ຫ້ອງທີ 8:** ການບຸກກວດຄົ້ນ ແລະ ການກອບກູ້ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ
ສິ່ງຜົນໃຫ້ຜູ້ບໍລິການທາງເພດມີ ໂທດທາງອາຍາ ......................................................................... 98

**ຫ້ອງທີ 9:** ກອບການວິເຄາະ ຫຼັກການການບໍ່ລົງໂທດ ໃນການປະຕິບັດພາຍໃນປະເທດ....................... 108

**ຫ້ອງທີ 10:** ຮູບແບບຂໍ້ກຳນົດຕາມກົດໝາຍ ໃນຫຼັກການບໍ່ລົງໂທດ ............................................ 121

**ຫ້ອງທີ 11:** ສານການຄ້າມະນຸດ ທີ່ປະຈຳຢູ່ຊຸມຊົນ ໃນປະເທດສະຫະລັດອາເມລິກາ ......................... 129

**ຫ້ອງທີ 12:** ຄຳແນະນຳທີ່ເປັນຕົວແບບທີ່ດີສຳລັບກົດໝາຍ vacatur ............................................133

**ຫ້ອງທີ 13:** ກົດໝາຍ Vacatur ໃນການສະໜັບສະໜູນຜູ້ຖືກເຄາະຮ້າຍທີ່ມີໂທດທາງອາຍາ ............. 135

# ລາຍການແຜນວາດ

**ແຜນວາດທີ1:** ການຖືເປັນຄະດີອາຍາ ແລະ ບໍ່ເປັນຄະດີອາຍາຂອງຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ..... 109

**ແຜນວາດທີ 2:** ວົງຈອນ ການລົງໂທດ ຜູ້ຖືກເຄາະຮ້າຍ ..................................................... 110

**ແຜນວາດທີ 3:** ການຈັດຕັ້ງປະຕິບັດ ຫຼັກການ ການບໍ່ລົງໂທດ................................................. 122

# ລາຍການຕາຕາລາງ

**ຕາຕະລາງ 1:** ຮູບແບບການບັງຄັບ........................................................................ 34

**ຕາຕະລາງ 2:** ຮູບແບບສາເຫດ.............................................................................. 36

**ຕາຕະລາງ 3:** ການກຳນົດຫຼັກການບໍ່ລົງໂທດ ແລະ ຂອບເຂດໃນການປົກປ້ອງ.................................. 41

**ຕາຕະລາງ 4:** ເອກະສານດ້ານນະໂຍບາຍຂອງກຳປູເຈຍ ແລະ ຂັ້ນຕອນທີ່ກ່ຽວຂ້ອງກັບການບໍ່ລົງໂທດ ........ 47

“

ຂ້າພະເຈົ້າ ຖືວ່າບົດລາຍງານສະບັບນີ້ ມີຄວາມສຳຄັນຫຼາຍໃນການພັດທະນາການ
ວິເຄາະທາງດ້ານກົດໝາຍ ຕໍ່ກັບຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດ ແລະ
ຮັບປະກັນການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ໃນກົດໝາຍສາກົນ.

ຂ້າພະເຈົ້າຮູ້ສຶກຍິນດີເປັນຢ່າງຍິ່ງ ທີ່ບົດລາຍງານສະບັບນີ້ ໄດ້ມີການກອດກາ
ສິ່ງທ້າທາຍກ່ຽວກັບການຈັດຕັ້ງປະຕິບັດ ແລະ ການນຳໃຊ້ຫຼັກການດັ່ງກ່າວ
ໃນພາກພື້ນອາຊຽນ ແລະ ມີຄວາມຄວບຄຸມ ທີ່ຊີ້ໃຫ້ເຫັນເຖິງສິ່ງທ້າທາຍສະເພາະ
ທີ່ເກີດຂຶ້ນໃນພາກປະຕິບັດຕົວຈິງ ແລະ ຂໍ້ສະເໜີແນະນຳ
ທີ່ໃຫ້ຂໍ້ມູນແກ່ຜູ້ປະຕິບັດຕົວຈິງ, ຜູ້ສ້າງນະໂຍບາຍ ແລະ ຜູ້ສ້າງກົດໝາຍ; ແລະ ຜູ້
ທີ່ຈັດຕັ້ງປະຕິບັດທັງໝົດ ທີ່ມີຄວາມສຳຄັນ ເພື່ອຮັບປະກັນວ່າການນຳໃຊ້
ຫຼັກການດັ່ງກ່າວນີ້ ມີປະສິດທິພາບຫຼາຍຂຶ້ນ.

”

ຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ,

ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ,

ສາດສະດາຈານ ສິໂອບານ ມູນລາລີ (Siobhán Mullally)



# ຄຳນຳ
# ຈາກຜູ້ຕາງໜ້າຂອງປະເທດ ອິນໂດເນເຊຍ ປະຈຳ AICHR

ໃນຖານະທີ່ເປັນໜ່ວຍງານຮັບຜິດຊອບໃນການສົ່ງເສີມ ແລະ ປົກປ້ອງສິດທິມະນຸດ, ຄະນະກຳມາທິການລະຫວ່າງລັດຖະບານກ່ຽວກັບສິດທິມະນຸດຂອງອາຊຽນ (AICHR) ໄດ້ຮັບມອບໝາຍໃຫ້ຮັບຜິດຊອບເລື່ອງສິດທິມະນຸດເປັນຕົ້ນຕໍໃນທົ່ວປະຊາຄົມອາຊຽນ, ລວມທັງ ມາດຕະການໃນການແກ້ໄຂບັນຫາການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ. ບັນຫາການຄ້າມະນຸດແມ່ນຢູ່ໃນຄວາມສົນໃຈຂອງ AICHR ເພື່ອເຮັດໃຫ້ແນ່ໃຈວ່າ ສິດທິມະນຸດເປັນຫົວໃຈສຳຄັນຂອງຄວາມພະຍາຍາມໃນການປ້ອງກັນການຄ້າມະນຸດ, ດຳເນີນຄະດີຜູ້ທີ່ກະທຳຜິດຕໍ່ເຂົາເຈົ້າ ແລະ ປົກປ້ອງຜູ້ຖືກເຄາະຮ້າຍ.

ໃນຂະນະທີ່ຄວາມປອດໄພຂອງຜູ້ຖືກເຄາະຮ້າຍ ແລະ ຄອບຄົວຂອງເຂົາເຈົ້າ ເປັນສິ່ງທີ່ພິຈາລະນາວ່າເປັນສິ່ງທີ່ສຳຄັນທີ່ສຸດ, ການຫຼຸດຜ່ອນຄວາມເປັນໄປໄດ້ໃນການແກ້ແຄ້ນຕໍ່ເຂົາເຈົ້າ ຄວນຈະເປັນໃນລັກສະນະທີ່ປົກປ້ອງສິດທິຂອງຜູ້ຖືກເຄາະຮ້າຍ. ມັນມີຄວາມສຳຄັນຢ່າງເທົ່າທຽມກັນໃນການຂະຫຍາຍການປົກປ້ອງຕໍ່ກັບຜູ້ຖືກເຄາະຮ້າຍທຸກຄົນ ຜູ້ທີ່ເປັນພະຍານ. ການລວມເອົາມາດຕະການ ການປົກປ້ອງພະຍານ ແລະ ການປົກປ້ອງຜູ້ຖືກເຄາະຮ້າຍ ດ້ວຍການສະໜັບສະໜູນຢ່າງເໝາະສົມ, ບໍ່ພຽງແຕ່ເປັນການເພີ່ມໂອກາດໃນການໄດ້ຮັບການຮ່ວມມືຈາກເຂົາເຈົ້າເທົ່ານັ້ນ ແຕ່ຍັງຊ່ວຍບັນດາປະເທດຕ່າງໆໃນການປະຕິບັດພັນທະດ້ານສິດທິມະນຸດລະຫວ່າງປະເທດ ອີກດ້ວຍ.

ໃນຄວາມສາມາດຂອງຂ້າພະເຈົ້າ ໃນຖານະຜູ້ຕາງໜ້າຂອງປະເທດອິນໂດເນເຊຍ ປະຈຳ AICHR ຂ້າພະເຈົ້າໄດ້ເຫັນສະຖານະການ ໃນກໍລະນີທີ່ສະຖານະຂອງຜູ້ຖືກເຄາະຮ້າຍທີ່ມັກຈະຖືກເບິ່ງຂ້າມ ຫຼື ຖືກປະຖິ້ມ ຫຼື ຖືກປະຕິບັດໃນຖານະຜູ້ເຂົ້າ-ອອກ ເມືອງທີ່ຜິດກົດໝາຍ ຫຼື ໃນຖານະອາຊະຍາກອນ ເຊິ່ງປະຕິເສດພວກເຂົາຈາກຄຳໝັ້ນສັນຍາໃນການປົກປ້ອງ. ຂ້າພະເຈົ້າ ຍັງໄດ້ຮັບການລາຍງານຈຳນວນໜຶ່ງ ທີ່ຜູ້ຄ້າມະນຸດ ເປັນຜູ້ເປີດເຜີຍຜູ້ຖືກເຄາະຮ້າຍ ໃຫ້ມີຄວາມສ່ຽງຕໍ່ການຖືກດຳເນີນຄະດີອາຍາ ແລະ ໝູນໃຊ້ເຂົາເຈົ້າສຳລັບການກະທຳຜິດທາງອາຍາ ທີ່ກ່ຽວຂ້ອງກັບຮູບແບບສະເພາະຂອງການຂູດຮີດ. ດ້ວຍເຫດນັ້ນ, ຈິ່ງເຮັດໃຫ້ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ມີຈຸດຈົບດ້ວຍການຖືກກັກຂັງ, ດຳເນີນຄະດີ, ຖືກຕັດສິນ ແລະ ຖືກສົ່ງກັບໂດຍບໍ່ມີການພິຈາລະນາສະຖານະພາບຜູ້ຖືກເຄາະຮ້າຍ.

ໃນສະຖານະການທັງໝົດນີ້, ການປະເມີນທີ່ສຳຄັນກ່ຽວກັບການຄ້າມະນຸດຂອງຜູ້ຖືກເຄາະຮ້າຍ ແລະ ຮັບຟັງການຮ້ອງທຸກຂອງເຂົາເຈົ້າດ້ວຍຄວາມເອົາໃຈໃສ່ ເປັນສິ່ງທີ່ສຳຄັນ ແລະ ຜູ້ຖືກເຄາະຮ້າຍໄດ້ຮັບການປົກປ້ອງ ບໍ່ແມ່ນຖືກດຳເນີນຄະດີ ຫຼື ລົງໂທດ ໃນການລະເມີດສິດທິໃນການເຄົາລົບສິດທິມະນຸດຂອງເຂົາເຈົ້າ. ສິດທິ ທີ່ຈະບໍ່ລົງໂທດສາມາດພິຈາລະນາໄດ້ວ່າເປັນຫົວໃຈສຳຄັນຂອງການປົກປ້ອງສິດທິມະນຸດຂອງຜູ້ຖືກເຄາະຮ້າຍໃນກອບກົດໝາຍສາກົນ, ພາກພື້ນ, ແລະ ລະດັບຊາດໃນການແກ້ໄຂການຄ້າມະນຸດ. ໃນຄວາມຈິງແລ້ວ, ມັນຕ້ອງໄດ້ຮັບຄວາມສຳຄັນໃນລະດັບສູງ ເນື່ອງຈາກມັນກ່ຽວຂ້ອງກັບສິດທິທາງດ້ານກົດໝາຍຂອງຜູ້ຖືກເຄາະຮ້າຍທີ່ບໍ່ສາມາດປະຕິເສດໄດ້ໃນ

ການປົກປ້ອງຕາມກົດໝາຍ.

ໃນອາຊຽນ, ຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄດ້ຖືກຮັບປະກັນໄວ້ໃນສົນທິສັນຍາອາຊຽນວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ປີ 2015 (ACTIP). ໃນມາດຕາ 14(7) ຮຽກຮ້ອງໃຫ້ລັດພາຄີ "ພິຈາລະນາບໍ່ໃຫ້ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ມີຄວາມຮັບຜິດຊອບທາງອາຍາ ຫຼື ທາງບໍລິຫານ". ນອກນັ້ນ, ມາດຕາ 13 ຂອງຖະແຫຼງການວ່າດ້ວຍສິດທິມະນຸດຂອງອາຊຽນ ປີ 2012 (AHRD) ໄດ້ຢືນຢັນຢ່າງຊັດເຈນວ່າ ຈະບໍ່ມີຜູ້ໃດຖືກຄ້າມະນຸດ ແລະ ມາດຕາ 2 ຍັງໄດ້ກຳນົດຫຼັກການບໍ່ຈຳແນກເຊື້ອຊາດ, ເພດ, ອາຍຸ, ພາສາ, ສາສະໜາ, ຄວາມຄິດເຫັນທາງດ້ານການເມືອງ ຫຼື ຄວາມຄິດເຫັນດ້ານອື່ນໆ, ຊາດກຳເນີດ ຫຼື ສັງຄົມ, ຖານະດ້ານເສດຖະກິດ, ຄວາມພິການຈາກກຳເນີດ ຫຼື ສະຖານະພາບອື່ນໆ ເຊິ່ງມີຄວາມສຳຄັນຫຼາຍໃນການນຳໃຊ້ຫຼັກການບໍ່ລົງໂທດສຳລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ຂໍ້ກຳນົດເຫຼົ່ານີ້ ໄດ້ເນັ້ນໜັກວ່າການປະຕິບັດຫຼັກການບໍ່ລົງໂທດ ແມ່ນມີຄວາມຈຳເປັນທີ່ຈະໃຫ້ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄດ້ຮັບການປົກປ້ອງ ທີ່ພວກເຂົາມີສິດໄດ້ຮັບຕາມກົດໝາຍ, ໃນຂະນະດຽວກັນ ກໍເປັນການປ້ອງກັນບໍ່ໃຫ້ພວກເຂົາຖືກຄ້າມະນຸດຊ້ຳຄືນອີກ ແລະ ເປັນການສະໜັບສະໜູນຄວາມພະຍາຍາມຂອງພວກເຮົາໃນການລົງໂທດຜູ້ຄ້າມະນຸດ.

ໃນລະດັບປະເທດ, ຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຍັງພົບເຫັນໃນກອບກົດໝາຍຂອງລັດສະມາຊິກອາຊຽນ ໃນການຕ້ານການຄ້າມະນຸດ. ເຖິງຢ່າງໃດກໍຕາມ, ການນຳໃຊ້ຫຼັກການດັ່ງກ່າວ ມີຄວາມຈຳເປັນໃນການສະໜັບສະໜູນຜູ້ຖືກເຄາະຮ້າຍ ໃນການຟື້ນຟູກຽດສັກສີ, ຊື່ສຽງ ແລະ ການນຳໃຊ້ສິດທິຂອງເຂົາເຈົ້າໄດ້ຢ່າງເຕັມສ່ວນ.

ດັ່ງນັ້ນ, ຂ້າພະເຈົ້າ ມີຄວາມຍິນດີໃນການຕ້ອນຮັບເອົາບົດຄົ້ນຄວ້າຂອງແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ ກ່ຽວກັບ ການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນລັດສະມາຊິກອາຊຽນ. ຂ້າພະເຈົ້າ ເຫັນວ່າການວິເຄາະ, ຜົນໄດ້ຮັບ ແລະ ຂໍ້ສະເໜີແນະນຳ ໄດ້ນຳສະເໜີໂດຍເອກະສານເຜີຍແຜ່ສະບັບນີ້ ບໍ່ພຽງແຕ່ທັນເວລາ ແລະ ເປັນຍຸດທະສາດ ແຕ່ຍັງເວົ້າໃນພາສາຂອງສິດທິມະນຸດ ເຊິ່ງສອດຄ່ອງກັບວຽກຂອງ AICHR ຕໍ່ກັບວຽກງານສິດທິມະນຸດໃນອາຊຽນ ແລະ ຕອບສະໜອງຄວາມຕ້ອງການຂອງ AICHR ໃນການຈັດການກັບການປັບປຸງຂະບວນການໃນການແກ້ໄຂບັນຫາການຄ້າມະນຸດໃນທົ່ວອາຊຽນ.

ຂ້າພະເຈົ້າ ຂໍສະແດງຄວາມຂອບໃຈຕໍ່ກັບ ແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ ຕໍ່ກັບຄວາມໝັ້ນໝາຍຂອງເຂົາເຈົ້າ ໃນການແກ້ໄຂບັນຫາການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ແລະ ພ້ອມທີ່ຈະເສີມສ້າງຄວາມເຂັ້ມແຂງໃນການຮ່ວມມືຂອງພວກເຮົາເພື່ອເຮັດໃຫ້ເກີດຜົນຕໍ່ກັບຫຼັກການບໍ່ລົງໂທດ ເນື່ອງຈາກພວກເຮົາໄດ້ເຮັດວຽກຮ່ວມກັນ ເພື່ອອອກແບບ ແລະ ຈັດຕັ້ງປະຕິບັດບັດແນວຄິດລິເລີ່ມ ທີ່ເນັ້ນໃສ່ຜູ້ຖືກເຄາະຮ້າຍຮ່ວມກັບບັນດາໜ່ວຍງານ-ຂະແໜງການຂອງອາຊຽນ ແລະ ລັດສະມາຊິກອາຊຽນ.

**ພະນະທ່ານ ຍູຍຸນ ວາຍໍນິງຣັມ (Yuyun Wahyuningrum)**

**ຜູ້ຕາງໜ້າຂອງປະເທດອິນໂດເນເຊຍ ປະຈຳ ຄະນະກຳມາທິການລະຫວ່າງລັດຖະບານ**

**ກ່ຽວກັບສິດທິມະນຸດຂອງອາຊຽນ (2019-2021, 2022-2024**

# ຄໍານໍາ
## ຈາກຫົວໜ້າ - ຟີລິບປິນ

ປະຊາຄົມອາຊຽນ ໄດ້ຮັບຜົນກະທົບຈາກໄພຂົ່ມຂູ່ຕໍ່ກັບຄວາມໝັ້ນຄົງຈາກອາຊະຍາກໍາຂ້າມຊາດ. ການຄ້າມະນຸດ - ເປັນຮູບແບບອາຊະຍາກໍາຂ້າມຊາດທີ່ແຜ່ຫຼາຍ ແລະ ຮ້າຍກາດເປັນພິເສດ - ກໍ່ໃຫ້ເກີດມີຄວາມສ່ຽງຮ້າຍແຮງຕໍ່ກັບລັດສະມາຊິກອາຊຽນ ແລະ ພົນລະເມືອງຂອງເຂົາເຈົ້າ. ແຕ່ວ່າ ສໍາລັບຜູ້ກະທໍາຜິດແລ້ວ ການຄ້າມະນຸດ ຍັງເປັນຜົນປະໂຫຍດສູງ, ອາຊະຍາກໍາທີ່ມີຄວາມສ່ຽງຕໍ່າ ແລະ ໄດ້ຮັບຜົນກໍາໄລຢ່າງຫຼວງຫຼາຍໃນແຕ່ລະປີ ແລະ ມີຄວາມສ່ຽງນ້ອຍທີ່ຈະຖືກກວດພົບ ແລະ ດໍາເນີນຄະດີ. ເນື່ອງຈາກຜູ້ຄ້າມະນຸດ ໄດ້ຮັບການຍົກເວັ້ນຈາກການຖືກລົງໂທດ, ຫຼາຍຄັ້ງທີ່ຜູ້ຖືກເຄາະຮ້າຍ ພົບກັບຄວາມຜິດທາງແພ່ງ, ທາງບໍລິຫານ ຫຼື ແມ້ກະທັ້ງທາງອາຍາ ທີ່ເປັນຜົນສະທ້ອນມາຈາກການກະທໍາ ທີ່ຜິດກົດໝາຍ ເນື່ອງຈາກການຖືກຄ້າມະນຸດ ນັ້ນ.

ໃນທົ່ວພາກພື້ນອາຊຽນ ແລະ ນອກເໜືອຈາກປະເທດໃນພາກພື້ນອາຊຽນ ທີ່ພົນລະເມືອງອາຊຽນຖືກຄ້າມະນຸດ, ຜູ້ຖືກເຄາະຮ້າຍ ອາດຈະຖືກລົງໂທດ ເນື່ອງຈາກການນໍາໃຊ້ເອກະສານປອມ, ການຂ້າມຊາຍແດນທີ່ຜິດກົດໝາຍ ຫຼື ການອາໄສຢູ່ ຫຼື ເຮັດວຽກໂດຍຜິດກົດໝາຍ. ພວກເຮົາອາດຈະຖືກດໍາເນີນຄະດີ ສໍາລັບການມີສ່ວນຮ່ວມໃນອຸດສາຫະກໍາທາງເພດ ຫຼື ອຸດສາຫະກໍາການປະມົງ ຫຼື ໃນຂະແໜງການອື່ນໆ ທີ່ພວກເຂົາຖືກຄ້າມະນຸດ. ພວກເຂົາອາດຈະຖືກດໍາເນີນຄະດີໃນຖານະຜູ້ຄ້າມະນຸດ ໃນກໍລະນີທີ່ພວກເຂົາບໍ່ໄດ້ຖືກກໍານົດຕົວ ແລະ ຖືກປົກປ້ອງໃນຖານະຜູ້ຖືກເຄາະຮ້າຍ. ໃນກໍລະນີທີ່ຜູ້ຖືກເຄາະຮ້າຍຖືກຂູດຮີດໃນການກະທໍາຜິດທາງອາຍາ, ອາດເປັນຜົນໃຫ້ຖືກລົງໂທດຢ່າງຮ້າຍແຮງ; ພວກເຂົາຖືກຂູດຮີດໃນການຜະລິດສິ່ງເສບຕິດ ຫຼື ການລັກລອບຄ້າຂາຍສິ່ງເສບຕິດ ຫຼື ແມ້ກະທັ່ງຂໍ້ຂັດແຍ່ງທາງອາວຸດ ຫຼື ການກໍ່ການຮ້າຍ ສິ່ງຜົນໃຫ້ຖືກລົງໂທດທາງຮ່າງກາຍ ຫຼື ໂທດປະຫານຊີວິດ. ຄວາມກັງວົນອັນໃຫຍ່ຫຼວງນີ້ ເຕືອນພວກເຮົາຢ່າງຮີບດ່ວນ ເຊິ່ງພວກເຮົາຕ້ອງປະຕິບັດ ເພື່ອຮັບປະກັນວ່າ ການຕອບໂຕ້ຕໍ່ກັບການຄ້າມະນຸດຂອງພວກເຮົາ ບໍ່ໄດ້ລະເມີດສິດຂອງບຸກຄົນ ທີ່ໄດ້ຮັບຜົນກະທົບຈາກພວກເຂົາ ເຊິ່ງມັກຈະເປັນກຸ່ມທີ່ດ້ອຍໂອກາດ.

ພວກເຮົາມີເຄື່ອງມືໃນພາກພື້ນອາຊຽນ ເພື່ອປົກປ້ອງຜູ້ຖືກເຄາະຮ້າຍຈາກການຖືກລົງໂທດ ຕໍ່ກັບຄວາມຜິດທີ່ພວກເຂົາໄດ້ກະທໍາ ທີ່ກ່ຽວຂ້ອງກັບການຄ້າມະນຸດ ພາຍໃຕ້ສົນທິສັນຍາອາຊຽນວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ (ACTIP), ລັດສະມາຊິກອາຊຽນ ມີມະຕິທີ່ຈະປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ດ້ວຍການເຄົາລົບສິດທິມະນຸດຂອງເຂົາເຈົ້າຢ່າງເຕັມສ່ວນ ລວມທັງ ສິ່ງທີ່ກໍານົດໄວ້ໃນຖະແຫຼງການວ່າດ້ວຍສິດທິມະນຸດຂອງອາຊຽນ. ສົນທິສັນຍາ ACTIP ຮຽກຮ້ອງໃຫ້ ລັດຕ່າງໆ ບໍ່ໃຫ້ຜູ້ຖືກເຄາະຮ້າຍ ມີຄວາມຮັບຜິດຊອບທາງບໍລິຫານ ຫຼື ທາງອາຍາ ຕໍ່ກັບການກະທໍາຜິດ ທີ່ກ່ຽວຂ້ອງໂດຍກົງກັບການຄ້າມະນຸດ. ດັ່ງນັ້ນ, ປະຊາຄົມອາຊຽນ ຈິ່ງມີຄວາມເປັນເອກະພາບກັນໃນການແກ້ໄຂ ເພື່ອຮັບປະກັນວ່າການຕອບໂຕ້ການຄ້າມະນຸດແມ່ນອີງໃສ່ສິດທິມະນຸດ ແລະ ເອົາຜູ້ຖືກເຄາະຮ້າຍເປັນໃຈກາງ. ການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ເປັນສິ່ງສໍາຄັນຕໍ່ກັບຄວາມໝັ້ນໝາຍນັ້ນ.

ກອງປະຊຸມເຈົ້າໜ້າທີ່ອາວຸໂສກ່ຽວກັບອາຊະຍາກຳຂ້າມຊາດ (SOMTC) ຊົມເຊີຍຕໍ່ກັບແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ ສຳລັບການຄົ້ນຄວ້າທີ່ສຳຄັນ ແລະ ທັນເວລາ ກ່ຽວກັບ ການຈັດຕັ້ງປະຕິບັດຫຼັກການ ບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນລັດສະມາຊິກອາຊຽນ. ການປຶກສາຫາລືທີ່ເຂັ້ມແຂງເພື່ອແຈ້ງໃຫ້ຊາບກ່ຽວກັບວຽກນີ້ ຮັບປະກັນວ່າ ຜົນໄດ້ຮັບຈາກການຄົ້ນຄວ້າແມ່ນຍຶດໝັ້ນກັບຄວາມຊ່ຽວຊານ ແລະ ປະສົບການພາຍໃນພາກພື້ນອາຊຽນ. ຂໍ້ສະເໜີແນະນຳຍັງສອດຄ່ອງກັບວິໄສທັດຂອງພວກເຮົາໃນການຕ້ານການຄ້າມະນຸດ ໂດຍຜ່ານການຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ການແບ່ງປັນຄວາມເຂົ້າໃຈ ແລະ ຄວາມໝັ້ນໝາຍຮ່ວມກັນ ຕໍ່ກັບສິດທິມະນຸດ. ພວກເຮົາຫວັງວ່າຈະໄດ້ເຮັດວຽກກັບຄູ່ຮ່ວມງານໃນທ້ອງພາກພື້ນ ໃນການຈັດຕັ້ງປະຕິບັດບັນດາຂໍ້ສະເໜີແນະນຳເຫຼົ່ານີ້ ທີ່ເປັນສ່ວນໜຶ່ງຂອງຄວາມພະຍາຍາມຂອງພວກເຮົາ ເພື່ອນຳເອົາອາຊະຍາກຳຂ້າມຊາດເຂົ້າສູ່ຂະບວນການຍຸຕິທຳ ໃນຂະນະທີ່ປົກປ້ອງຜູ້ຖືກເຄາະຮ້າຍ ລວມທັງ ປົກປ້ອງຈາກການຖືກລົງໂທດຕໍ່ກັບການກະທຳທີ່ຜິດກົດໝາຍ ທີ່ພວກເຂົາໄດ້ເຮັດໃນຖານະຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.



**ພະນະທ່ານ ເບີນາໂດ ຊີ. ຟລໍເຣສ. ເຈອາ. (Bernardo C. Florece, Jr.), ຮອງລັດຖະມົນຕີ**

**ຫົວໜ້າ ກອງປະຊຸມເຈົ້າໜ້າທີ່ອາວຸໂສກ່ຽວກັບອາຊະຍາກຳຂ້າມຊາດ (SOMTC) ຟີລິບປິນ**

**ປະທານ SOMTC WG ຂອງການຄ້າມະນຸດ**

**ທີ່ ມະນິລາ, 21 ກຸມພາ 2022**

# ບົດສະຫຼຸບສັງລວມ

ຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍ ໄດ້ກໍານົດໄວ້ວ່າ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ບໍ່ຄວນຈະຖືກດໍາເນີນຄະດີ ຫຼື ຖືກລົງໂທດຈາກການກະທໍາຜິດ ທີ່ພວກເຂົາໄດ້ກະທໍາ ທີ່ເປັນຜົນສະທ້ອນມາຈາກການຄ້າມະນຸດ. ມັນບໍ່ແມ່ນສິ່ງທີ່ສາມາດປ້ອງກັນຢ່າງຄອບຄຸມ ແຕ່ເປັນເຄື່ອງມືທີ່ສໍາຄັນ ໃນການປົກປ້ອງຜູ້ຖືກເຄາະຮ້າຍ ແລະ ການຕອບໂຕ້ຍຸດຕິທໍາທາງອາຍາ ຕໍ່ກັບການຄ້າມະນຸດ.

ບົດຄົ້ນຄວ້ານີ້ ໄດ້ຄົ້ນຄວ້າກົດໝາຍ, ນະໂຍບາຍ ແລະ ການປະຕິບັດ ການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍໃນບັນດາລັດສະມາຊິກອາຊຽນ ແລະ ສໍາຫຼວດສິ່ງທ້າທາຍ ແລະ ອຸປະສັກ ໃນພາກປະຕິບັດຕົວຈິງ ຕໍ່ກັບການປະຕິບັດຍຸຕິທໍາທາງອາຍາ. ຜົນໄດ້ຮັບຂອງການຄົ້ນຄວ້າ ແລະ ຂໍ້ສະເໜີແນະນໍາ ຕໍ່ກັບຜູ້ອອກກົດໝາຍ, ຜູ້ວາງນະໂຍບາຍ ແລະ ຜູ້ປະຕິບັດຕົວຈິງໃນຂະແໜງຍຸຕິທໍາທາງອາຍາ ເພື່ອສະໜັບສະໜູນຄວາມພະຍາຍາມຢ່າງຕໍ່ເນື່ອງຂອງເຂົາເຈົ້າ ຕໍ່ກັບພັນທະໃນການປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍສອດຄ່ອງກັບສິດທິມະນຸດຂອງເຂົາເຈົ້າ, ການປ້ອງກັນການຄ້າມະນຸດ ແລະ ການຮ່ວມມືກັນເພື່ອແກ້ໄຂບັນຫາດັ່ງກ່າວ.

ບົດຄົ້ນຄວ້າສະບັບນີ້ ໄດ້ເຮັດຂຶ້ນໂດຍການຄົ້ນຄວ້າບັນດາເອກະສານທີ່ມີຢູ່ ຈາກພາກພື້ນອາຊຽນ ແລະ ຈາກບ່ອນອື່ນໆ ແລະ ຈັດ 12 ກອງປະຊຸມປຶກສາຫາລືໂຕະມົນ ທີ່ຈັດຂຶ້ນໃນ 6 ປະເທດ (ຟີລິບປິນ, ກໍາປູເຈຍ, ຫວຽດນາມ, ສປປ ລາວ, ໄທ ແລະ ອິນໂດເນເຊຍ). ມີຈໍານວນຜູ້ເຂົ້າຮ່ວມໃນການປຶກສາຫາລື ທັງໝົດ 196 ຄົນ ຊຶ່ງປະກອບດ້ວຍຜູ້ຕາງໜ້າຈາກລັດຖະບານ 122 ຄົນ ແລະ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ 74 ຄົນ. ນອກນັ້ນ, ຍັງມີຜູ້ຊ່ຽວຊານສີ່ທ່ານ ທີ່ໄດ້ປະກອບຄໍາເຫັນ ທີ່ເປັນລາຍລັກອັກສອນ ຫຼື ຜ່ານການສົນທະນາແບບເລິກເຊິ່ງ.[1]

## ແຫຼ່ງຂໍ້ມູນຂອງຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍ

**ນະໂຍບາຍ ແລະ ກົດໝາຍສາກົນ:** ຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍ ບໍ່ໄດ້ຖືກກໍານົດໄວ້ຢ່າງຊັດເຈນໃນ ອານຸສັນຍາວ່າດ້ວຍການປ້ອງກັນ, ປາບປາມ ແລະ ລົງໂທດການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ (ອານຸສັນຍາວ່າດ້ວຍການຕ້ານການຄ້າມະນຸດ) ຫຼື ສົນທິສັນຍາວ່າດ້ວຍການຕ້ານອາຊະຍາກໍາຂ້າມຊາດທີ່ມີການຈັດຕັ້ງ (UNTOC). ເຖິງຢ່າງໃດກໍຕາມ ມັນໄດ້ມີຄວາມເຂົ້າໃຈທີ່ເພີ່ມຂຶ້ນວ່າເປັນອົງປະກອບທີ່ສໍາຄັນໃນການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ລວມທັງ ໃນຄູ່ມື ແລະ ຫຼັກການກ່ຽວກັບຂໍ້ສະເໜີແນະນໍາ ກ່ຽວກັບສິດທິມະນຸດ ແລະ ການຄ້າມະນຸດ ຂອງຫ້ອງການຂອງຄະນະກໍາມາທິການໃຫຍ່ເພື່ອສິດທິມະນຸດ. ຄວາມເຂົ້າໃຈດັ່ງກ່າວໄດ້ຮັບການດຶງດູດທີ່ສໍາຄັນ ລວມທັງ ການປຶກສາຫາລືໃນຄະນະທີ່ເຮັດວຽກກ່ຽວກັບການຕ້ານການຄ້າມະນຸດ,[2] ບົດລາຍງານຂອງຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ,[3] ແລະ ແມ້ກະທັ້ງມະຕິຂອງສະພາຄວາມໝັ້ນຄົງ ທີ່ຮຽກຮ້ອງໃຫ້ລັດບໍ່

---

1 ການຄົ້ນຄວ້ານີ້ຍັງໄດ້ຮັບຜົນປະໂຫຍດຈາກການເຂົ້າຮ່ວມຂອງຜູ້ຂຽນ ໃນກິດຈະກໍາທີ່ກ່ຽວຂ້ອງກັບຫຼັກການບໍ່ລົງໂທດ. ຜູ້ຂຽນໄດ້ເຂົ້າຮ່ວມໃນຖານະຜູ້ເຂົ້າຮ່ວມ ແລະ ອໍານວຍຄວາມສະດວກໃນກອງປະຊຸມປຶກສາຫາລື ທີ່ໄດ້ຈັດຂຶ້ນໃນວັນທີ 4-5 ກຸມພາ 2021 ໂດຍຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, ເພື່ອແຈ້ງການລາຍງານຂອງຜູ້ລາຍງານພິເສດ: ການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍ: *ບົດລາຍງານຂອງຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, Siobhán Mullaly,* ເອກະສານຂອງ UN. A/HRC/47/34 (17 ພຶດສະພາ 2021). ຜູ້ຂຽນຍັງເຂົ້າຮ່ວມກອງປະຊຸມໂຕະມົນຂອງສະພາສິດທິມະນຸດຄັ້ງທີ 47, ວັນທີ 30 ມິຖຸນາ 2021, 13:00-14:30 CET, ຈັດໂດຍ ICAT ແລະ OHCHR, ຫົວຂໍ້ *ຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ: ກອງປະຊຸມໂຕະມົນກ່ຽວກັບການນໍາໃຊ້ຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ* https://aseanactpartnershiphub.com/resources/video-non-punishment-roundtable/. ຜູ້ຂຽນມີຄວາມຮູ້ສຶກຍິນດີຕໍ່ກັບໂອກາດນີ້ ໃນການຮວບຮວມຂໍ້ມູນແບບລົງເລິກໃນທົ່ວໂລກ.

2 *ຫຼັກການບໍ່ລົງໂທດ ແລະ ບໍ່ດໍາເນີນຄະດີຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ: ວິທີການທາງດ້ານບໍລິຫານ ແລະ ຍຸຕິທໍາ ຕໍ່ກັບຄວາມຜິດໃນຂະບວນການຄ້າມະນຸດ: ເອກະສານພື້ນຖານຄວາມເປັນມາ ກະກຽມໂດຍ ກອງເລຂາ,* ວຽນນາ ວັນທີ 27-29 ມັງກອນ 2010, ເອກະສານ UN. CTOC/COP/WG.4/2010/4 (ວັນທີ 9 ທັນວາ 2010), ແຖວທີ 10.

3 *ບົດລາຍງານຂອງຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, Maria Grazia Giammarinaro, ວັນທີ 6 ເມສາ 2020,* ເອກະສານ UN A/HRC/44/45 ແຖວ 36; *ການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ: ບົດລາຍງານຂອງຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ Siobhán Mullaly,* ເອກະສານ UN A/HRC/47/34 (ວັນທີ 17 ພຶດສະພາ 2021)

ໃຫ້ມີການລົງໂທດຜູ້ຖືກເຄາະຮ້າຍ.[4] ຄໍາໝັ້ນໝາຍກ່ຽວກັບຫຼັກການບໍ່ລົງໂທດ ຍັງໄດ້ຮັບການຢືນຢັນຄືນໃນ *ຖະແຫຼງການທາງດ້ານການເມືອງກ່ຽວກັບການຈັດຕັ້ງປະຕິບັດແຜນປະຕິບັດງານສາກົນຂອງອົງການສະຫະປະຊາຊາດ ເພື່ອຕ້ານການຄ້າມະນຸດ.*[5] ຫຼັກການດັ່ງກ່າວນີ້ ຍັງໄດ້ກໍານົດໄວ້ຢ່າງຊັດເຈນໃນກົດໝາຍສາກົນ ໂດຍສະເພາະທີ່ກ່ຽວຂ້ອງກັບການບັງຄັບ ຫຼື ແຮງງານບັງຄັບ; ມາດຕາ 4(2) *ຂອງອານຸສັນຍາວ່າດ້ວຍການບັງຄັບໃຊ້ແຮງງານ ເລກທີ 29* ທີ່ໃຫ້ສິດແກ່ເຈົ້າໜ້າທີ່ ທີ່ມີອໍານາດ ບໍ່ໃຫ້ມີການລົງໂທດຜູ້ຖືກເຄາະຮ້າຍ ທີ່ມີສ່ວນຮ່ວມໃນກິດຈະກໍາທີ່ຜິດກົດໝາຍທີ່ພວກເຂົາຖືກບັງຄັບໃຫ້ມີການກະທໍາຜິດ ເຊິ່ງເປັນຜົນສະທ້ອນໂດຍກົງຈາກການຖືກບັງຄັບ ຫຼື ຖືກບັງຄັບໃຊ້ແຮງງານ. ມາດຕາ 31 ຂອງ *ສົນທິສັນຍາທີ່ກ່ຽວກັບສະຖານະຂອງຜູ້ເຄື່ອນຍ້າຍ ປີ 1951,* ເຊິ່ງອາດຈະກ່ຽວຂ້ອງກັບຜູ້ທີ່ຖືກຄ້າມະນຸດ ທີ່ຊອກຫາບ່ອນລີ້ໄພ. ໃນມາດຕາດັ່ງກ່າວ ຫ້າມບໍ່ໃຫ້ມີການລົງໂທດຕໍ່ກັບຜູ້ເຄື່ອນຍ້າຍທີ່ເຂົ້າເມືອງ ຫຼື ອາໄສຢູ່ໃນປະເທດໂດຍຜິດກົດໝາຍ.

**ນະໂຍບາຍ ແລະ ກົດໝາຍໃນພາກພື້ນ:** ໃນອາຊີ, *ສົນທິສັນຍາອາຊຽນວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ* (2015), ໄດ້ກໍານົດວ່າບັນດາປະເທດພາຄີ (ທີ່ເປັນລັດສາມາຊິກອາຊຽນໃນສິບປະເທດ) ຈະຕ້ອງພິຈາລະນາ ບໍ່ດໍາເນີນຄະດີອາຍາ ຫຼື ມີຄວາມຮັບຜິດຊອບທາງບໍລິຫານ ຕໍ່ກັບການກະທໍາຜິດ ທີ່ເປັນຜົນສະທ້ອນໂດຍກົງມາຈາກການຄ້າມະນຸດ (ມາດຕາ 14(7)). ຫຼັກການນີ້ ມີຜົນບັງຄັບໃຊ້ ຕໍ່ກັນ *ແຜນປະຕິບັດງານອາຊຽນ ເພື່ອຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ;* ຄະນະກໍາມາທິການອາຊຽນ ເພື່ອປົກປ້ອງ ແລະ ສົ່ງເສີມສິດທິຂອງແມ່ຍິງ ແລະ ເດັກນ້ອຍ (ACWC) *ຄໍາແນະນໍາໃນການເຮັດວຽກກັບແມ່ຍິງ ທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍເອົາໃຈໃສ່ບົດບາດຍິງ-ຊາຍ, ແລະ ຄູ່ມືຂອງຜູ້ປະຕິບັດຕົວຈິງໃນອາຊຽນກ່ຽວກັບການຕອບໂຕ້ຍຸດຕິທໍາທາງອາຍາ ຕໍ່ກັບການຄ້າມະນຸດ* (2007). ນອກນັ້ນ, ຍັງມີບົດບັນທຶກຄວາມເຂົ້າໃຈສອງຝ່າຍລະຫວ່າງລັດສະມາຊິກອາຊຽນ ທີ່ກໍານົດຫຼັກການບໍ່ລົງໂທດ ເຖິງຈະມີຂໍ້ຈໍາກັດໃນການປົກປ້ອງຜູ້ຖືກເຄາະຮ້າຍບາງສ່ວນເທົ່ານັ້ນ (ຕົວຢ່າງ ແມ່ຍິງ ແລະ ເດັກຍິງ) ຫຼື ການກະທໍາຜິດສະເພາະ (ຕົວຢ່າງ ການກະທໍາຜິດທີ່ກ່ຽວຂ້ອງກັບການເຂົ້າອອກ-ເມືອງ). ໃນລະດັບອານຸພາກພື້ນ ການລິເລີ່ມການຮ່ວມມືລະຫວ່າງລັດຖະມົນຕີໃນປະເທດລຸ່ມແມ່ນໍ້າຂອງວ່າດ້ວຍການຕ້ານການຄ້າມະນຸດ (COMMIT) *ບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມື ເພື່ອຕ້ານການຄ້າມະນຸດໃນອານຸພາກພື້ນແມ່ນໍ້າຂອງ ແລະ ຄູ່ມືວ່າດ້ວຍການກໍານົດຕົວ ແລະ ກົນໄກການສົ່ງຕໍ່ຜູ້ຖືກເຄາະຮ້າຍ* (2016) ທີ່ຍຶດໝັ້ນຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍ.

ໃນອາຟຣິກາ, ຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍ ພົບເຫັນຢ່າງຊັດເຈນໃນເຄື່ອງມືດ້ານນະໂຍບາຍ ແລະ ກົດໝາຍລວມທັງ *ແຜນປະຕິບັດງານຂອງວາກາດູກູ (Ouagadougou) ເພື່ອຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ແລະ ແຜນຍຸດທະສາດ SADC 10 ປີ ວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ* (2009-2019).

ໃນອາເມລິກາ, ກອງປະຊຸມມ້ອນທ້າຍ ແລະ ຂໍ້ສະເໜີແນະນໍາຂອງອົງການຈັດຕັ້ງຂອງສະຫະລັດອາເມລິກາ ໄດ້ຮັບຮູ້ຫຼັກການ. ໂດຍສອດຄ່ອງກັບກົດໝາຍວ່າດ້ວຍການປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ປີ 2000, ກະຊວງການຕ່າງປະເທດຂອງປະເທດສະຫະລັດອາເມລິກາ ພິຈາລະນາຂອບເຂດທີ່ຜູ້ຖືກເຄາະຮ້າຍໄດ້ຮັບການປົກປ້ອງຈາກການຖືກລົງໂທດ ເປັນເງື່ອນໄຂໃນການປະເມີດລັດອື່ນໆໃນບົດລາຍງານການຄ້າມະນຸດ.

ໃນເອີລົບ, ອົງການເພື່ອຄວາມໝັ້ນຄົງ ແລະ ການຮ່ວມມືໃນເອີລົບ (OSCE) *ແຜນປະຕິບັດງານເພື່ອຕ້ານການຄ້າ*

---

4 ລາຍລະອຽດເພີ່ມເຕີມທີ່ ມະຕິຂອງສະພາຄວາມໝັ້ນຄົງ 2331 (2016); ມະຕິຂອງສະພາຄວາມໝັ້ນຄົງ 2388 (2017).

5 ຖະແຫຼງການທາງດ້ານການເມືອງກ່ຽວກັບການຈັດຕັ້ງປະຕິບັດແຜນປະຕິບັດງານສາກົນຂອງອົງການສະຫະປະຊາຊາດ ເພື່ອຕ້ານການຄ້າມະນຸດ ປີ 2021, ເອກະສານ UN A/76/L.11 ວັນທີ 9 ພະຈິກ 2021 [13].

*ມະນຸດ* ໄດ້ແນະນຳວ່າ *'ຮັບປະກັນວ່າຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈະບໍ່ຖືກດຳເນີນຄະດີອາຍາ ທີ່ເປັນຜົນສະທ້ອນໂດຍກົງມາຈາກທີ່ພວກເຂົາຖືກຄ້າມະນຸດ'* (ການຮັບຮອງ 557/Rev.1). ສົນທິສັນຍາຂອງສະພາເອີລົບວ່າດ້ວຍການຕ້ານການຄ້າມະນຸດ ໄດ້ກຳນົດຄວາມເປັນໄປໄດ້ທີ່ຈະບໍ່ລົງໂທດຜູ້ຖືກເຄາະຮ້າຍ ສຳລັບການມີສ່ວນຮ່ວມໃນກິດຈະກຳ ໃນຂອບເຂດທີ່ພວກເຂົາຖືກບັງຄັບໃຫ້ເຮັດ (ມາດຕາ 26). ຄຳສັ່ງຂອງ ສະຫະພາບເອີລົບ *2011/36/EU ຂອງສະພາແຫ່ງຊາດເອີລົບ ແລະ ສະພາ* ໃນການປົກປ້ອງຜູ້ຖືກເຄາະຮ້າຍຈາກການຖືກດຳເນີນຄະດີ ຫຼື ລົງໂທດສຳລັບບັນຊີໂດຍຫຍໍ້ລາຍການກິດຈະກຳທາງອາຍາ (ລາຍການ 14), ທີ່ພວກເຂົາຖືກບັງຄັບໃຫ້ກະທຳຜິດ ທີ່ເປັນຜົນໂດຍກົງມາຈາກການຖືກຄ້າມະນຸດ (ມາດຕາ 8). ຄຳສັ່ງ ຍັງຮັບຮູ້ການຂູດຮີດໃນກິດຈະກຳທາງອາຍາ ວ່າເປັນຮູບແບບໜຶ່ງຂອງການຂູດຮີດຜູ້ຖືກເຄາະຮ້າຍ ທີ່ອາດຈະຖືກຄ້າມະນຸດ (ລາຍງານ 11). ໃນເດືອນ ເມສາ 2021, ໄດ້ມີການຕັດສິນຄັ້ງສຳຄັນຈາກສານສິດທິມະນຸດຂອງເອີລົບ ໃນກໍລະນີຂອງ *V.C.L ແລະ A.N. v ສະຫະລາຊະອານາຈັກ,* ທີ່ພົບເຫັນໃນສະຫະລາຊອານາຈັກ ທີ່ລະເມີດພັນທະຂອງສົນທິສັນຍາຂອງສະຫະພາບເອີລົບວ່າດ້ວຍສິດທິມະນຸດໃນການດຳເນີນຄະດີຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ (ຫ້ອງທີ 4).

**ນະໂຍບາຍ ແລະ ກົດໝາຍພາຍໃນ:** ການປະກາດໃຊ້ກົດໝາຍທີ່ມີຄວາມຊັດເຈນກ່ຽວກັບການບໍ່ລົງໂທດ ແມ່ນເປັນການປະຕິບັດທີ່ເປັນຕົວແບບທີ່ດີ ເປັນທີ່ຮັບຮູ້ຢ່າງກວ້າຂວາງ ເພື່ອເຮັດໃຫ້ເກີດຜົນຕໍ່ກັບຫຼັກການບໍ່ລົງໂທດ.[6] ໃນບັນດາສິບລັດສະມາຊິກອາຊຽນ, ເຈັດລັດສະມາຊິກອາຊຽນ ມີຂໍ້ກຳນົດຫຼັກການບໍ່ລົງໂທດໃນກົດໝາຍວ່າດ້ວຍການຕ້ານການຄ້າມະນຸດຂອງເຂົາເຈົ້າ. ໃນເອີລົບ, ຄະນະຊ່ຽວຊານສະເພາະກິດ ກ່ຽວກັບການຕ້ານການຄ້າມະນຸດ (GRETA) ໄດ້ໃຫ້ຂໍ້ສັງເກດວ່າ ໃນທ້າຍປີ 2019, ຈາກ 42 ລັດ ທີ່ໄດ້ເຮັດການປະເມີນຮອບສອງສຳເລັດນັ້ນ, ມີພຽງແຕ່ 17 ລັດ ທີ່ຮັບຮອງເອົາຂໍ້ກຳນົດສະເພາະ ການບໍ່ລົງໂທດ.[7]

ແຕ່ລະລັດ ນຳໃຊ້ວິທີການທີ່ແຕກຕ່າງກັນໃນການສ້າງຄວາມສຳພັນລະຫວ່າງ ການກະທຳຜິດທາງອາຍາຂອງຜູ້ຖືກເຄາະຮ້າຍ ແລະ ການຄ້າມະນຸດໃນກົດໝາຍພາຍໃນ. ບາງຄົນ ຮຽກຮ້ອງໃຫ້ຜູ້ຖືກເຄາະຮ້າຍ ທີ່ຖືກບັງຄັບໃຫ້ມີສ່ວນຮ່ວມໃນການກະທຳຜິດທາງອາຍາ ແລະ ບາງຄົນຮຽກຮ້ອງວ່າການກະທຳນັ້ນ ເປັນຜົນສະທ້ອນໂດຍກົງມາຈາກການຄ້າມະນຸດ. ຜູ້ຊ່ຽວຊານບາງທ່ານ ໄດ້ພິຈາລະນາວ່າ ວິທີການໃນຮູບແບບດັ່ງກ່າວນີ້ ເປັນທີ່ຮັບຮູ້ວ່າເປັນຮູບແບບ 'ສາເຫດ', ເຊິ່ງເປັນວິທີການທີ່ດີກວ່າ ເພາະວ່າເປັນວິທີທີ່ກວ້າງກວ່າ ແລະ ງ່າຍກວ່າໃນການພິສູດ ຫຼາຍກວ່າຮູບແບບ 'ບັງຄັບ' ເຊິ່ງຈຳເປັນຕ້ອງມີ ວິທີການ ທີ່ນຳໃຊ້ໂດຍຜູ້ຄ້າມະນຸດ ເພື່ອພິສູດການບັງຄັບຜູ້ຖືກເຄາະຮ້າຍ. ວິທີການບັງຄັບນີ້ ຍັງບໍ່ສາມາດນຳໃຊ້ໄດ້ໃນພາກປະຕິບັດຕົວຈິງ ໃນກໍລະນີການຄ້າເດັກ ເຊິ່ງບໍ່ຈຳເປັນຕ້ອງ ມີວິທີການ. ທັງສອງຮູບແບບນີ້ ອະທິບາຍເພີ່ມເຕີມໃນ ໜ້າທີ່ 33.

ຫ້າໃນເຈັດປະເທດໃນອາຊຽນ ໄດ້ມີຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍໃນກົດໝາຍຂອງເຂົາເຈົ້າ, ໄດ້ຮັບຮອງຮູບແບບສາເຫດ (ບຣູໄນ, ສປປ ລາວ, ມາເລເຊຍ, ມຽນມາ ແລະ ຟີລິບປິນ). ມີພຽງແຕ່ກົດໝາຍອິນໂດເນເຊຍ ທີ່ນຳໃຊ້ວິທີການແບບບັງຄັບ, ທີ່ກຳນົດວ່າຜູ້ຄ້າມະນຸດບັງຄັບຜູ້ຖືກເຄາະຮ້າຍ. ປະເທດໄທ ນຳໃຊ້ວິທີການທີ່ແຕກຕ່າງ, ທີ່ຮຽກຮ້ອງໃຫ້ມີການຂໍອະນຸຍາດທີ່ເປັນລາຍລັກອັກສອນຈາກລັດຖະມົນຕີກະຊວງຍຸຕິທຳ ເພື່ອດຳເນີນຄະດີກັບຜູ້ຖືກເຄາະຮ້າຍ ສຳລັບການກະທຳຜິດໃນລາຍການສະເພາະ. ກົດໝາຍໃນຫວຽດນາມ ແລະ ສິງກະໂປ ບໍ່ໄດ້ກຳນົດຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍໄວ້ຢ່າງຊັດເຈນ. ປະເທດສ່ວນໃຫຍ່ໃນພາກພື້ນ, ຂອບເຂດການປົກປ້ອງຈາກການຖືກລົງໂທດນັ້ນ ນຳໃຊ້ສະເພາະບັນຊີລາຍການກະທຳຜິດທີ່ຖືກເລືອກໄວ້ເທົ່ານັ້ນ, ບໍ່ວ່າຈະເປັນການເຂົ້າ-ອອກ

---

6 *ຄຳແນະນຳວ່າດ້ວຍບັນຫາ ການຕອບໂຕ້ຍຸຕິທຳທາງອາຍາຢ່າງເໝາະສົມຕໍ່ກັບຜູ້ຖືກເຄາະຮ້າຍ ທີ່ຖືກບັງຄັບໃຫ້ກະທຳຜິດທາງອາຍາ ເຊິ່ງເປັນຜົນສະທ້ອນມາຈາກການຖືກຄ້າມະນຸດ: ເອກະສານຄວາມເປັນມາທີ່ກະກຽມໂດຍ ກອງເລຂາຂອງຄະນະສະເພາະທີ່ເຮັດວຽກຕ້ານການຄ້າມະນຸດ,* ວຽນນາ 10 ແລະ 11 ກັນຍາ 2020. ເອກະສານຂອງ UN. CTOC/COP/WG.4/2020/2 (15 ມິຖຸນາ 2020), ວັກທີ 46.

7 ກອງປະຊຸມຂອງພາຄີ ຕໍ່ກັບສົນທິສັນຍາ UNTOC, ລາຍງານກ່ຽວກັບກອງປະຊຸມຂອງຄະນະສະເພາະທີ່ເຮັດວຽກຕ້ານການຄ້າມະນຸດ (10-11 ກັນຍາ 2020). ເອກະສານຂອງ UN. CTOC/COP/WG.4/2020/4, 28 ກັນຍາ 2020, ວັກທີ 34.

ເມືອງ ແລະ ເອກະສານທີ່ກ່ຽວຂ້ອງ (ບຣູໄນ້, ມາເລເຊຍ); ການເຂົ້າ-ອອກເມືອງທີ່ຜິດກົດໝາຍ ແລະ ການເປັນໂສເພນີ (ສປປ ລາວ); ການເຂົ້າ-ອອກເມືອງ, ການເປັນໂສເພນີ, ເອກະສານ ແລະ ການກະທຳຜິດທີ່ກ່ຽວຂ້ອງ (ປະເທດໄທ) ຫຼື ການກະທຳຜິດກ່ຽວກັບການຄ້າມະນຸດ (ມຽນມາ). ໃນອິນໂດເນເຊຍ ແລະ ຟີລິບປິນ ການປົກປ້ອງຈາກການລົງໂທດ ບໍ່ໄດ້ຈຳກັດ ຕໍ່ກັບການກະທຳຜິດສະເພາະ. ໃນຂະນະທີ່ຂໍ້ກຳນົດໃນກົດໝາຍ ໄດ້ພິຈາລະນາການປະກອບສ່ວນເຂົ້າໃນຄວາມເຂົ້າໃຈທົ່ວໄປກ່ຽວກັບການບໍ່ລົງໂທດ, ບາງຕົວຢ່າງ ສາມາດພົບເຫັນໄດ້ໃນພາກປະຕິບັດຕົວຈິງ.

## ການຕີຄວາມໝາຍກ່ຽວກັບຫຼັກການບໍ່ລົງໂທດ

**ການສ້າງການເຊື່ອມໂຍງລະຫວ່າງການກະທຳຜິດ ແລະ ການຄ້າມະນຸດ:** ຄວາມເຊື່ອມໂຍງເກີດຂຶ້ນໄດ້ແນວໃດລະຫວ່າງ ການກະທຳຜິດຂອງຜູ້ຖືກເຄາະຮ້າຍ ແລະ ການຄ້າມະນຸດນັ້ນ ແມ່ນມີຄວາມເຂົ້າໃຈທີ່ແຕກຕ່າງກັນໃນປະເທດຕ່າງໆ ແລະ ພາຍໃນປະເທດເອງ. ມີຄຳຖາມເກີດຂຶ້ນວ່າ ເມື່ອໃດທີ່ຜູ້ຖືກເຄາະຮ້າຍຄວນຈະຖືກລົງໂທດ ແລະ ບໍ່ຄວນຈະຖືກລົງໂທດ ແລະ ເມື່ອໃດທີ່ບຸກຄົນໄດ້ຖືກຍົກເລີກຈາກການເປັນຜູ້ຖືກເຄາະຮ້າຍ ເພື່ອຈຸດປະສົງຈາກການໄດ້ຮັບຜົນປະໂຫຍດຈາກຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍ. ໃນບັນດາປະເທດທີ່ໄດ້ເຮັດການຄົ້ນຄວ້າ, ຈຸດທີ່ຄວາມເຊື່ອມໂຍງໄດ້ຖືກຕັດຂາດນັ້ນ ເປັນສິ່ງທີ່ໂຕ້ແຍ່ງກັນ. ໂດຍທົ່ວໄປແລ້ວ ການປົກປ້ອງ ຄວນຈະຖືກຍົກເລີກເມື່ອເວລາທີ່ບຸກຄົນດັ່ງກ່າວ ບໍ່ໄດ້ຢູ່ພາຍໃຕ້ອິດທິພົນທີ່ມີການແຊກແຊງ ຕໍ່ກັບທາງເລືອກວ່າຈະກະທຳຜິດ ຫຼື ບໍ່. ເຖິງແມ່ນວ່າ ໃນຂອບເຂດອຳນາດຂອງສານ ທີ່ຮັບຮອງຮູບແບບຂອງສາເຫດ, ມຸມມອງໂດຍທົ່ວໄປຄືບຸກຄົນ ບໍ່ຄວນຈະຖືກດຳເນີນຄະດີຕໍ່ກັບການກະທຳຜິດທີ່ພວກເຂົາຖືກບັງຄັບໃຫ້ກະທຳ, ແຕ່ຄວນດຳເນີນຄະດີຕໍ່ກັບບຸກຄົນທີ່ກະທຳຜິດດ້ວຍຄວາມເຕັມໃຈ. ຕໍ່ກັບສິ່ງນີ້, ສັງເກດໄດ້ວ່າ ‘ການບັງຄັບ’ ແລະ ‘ໄພຄຸກຄາມ’ ອາດຈະບໍ່ຄວບຄຸມຕໍ່ກັບກົນລະຍຸດທາງຈິດຕະວິທະຍາຂອງຜູ້ຄ້າມະນຸດ ທີ່ນຳໃຊ້ຕໍ່ກັບຜູ້ຖືກເຄາະຮ້າຍ, ຄວາມໝາຍຂອງການບັງຄັບຄວນຈະຕີຄວາມໝາຍຢ່າງກວ້າງຂວາງເພື່ອຄວບຄຸມ ‘ວິທີການ’ ຢ່າງກວ້າງຂວາງ ທີ່ຖືກນຳໃຊ້ໂດຍຜູ້ຄ້າມະນຸດ.

**ທັດສະນະທີ່ແຕກຕ່າງກັນ ກ່ຽວກັບຂອບເຂດການປົກປ້ອງ:** ຜູ້ຕອບບາງທ່ານສະແດງຄວາມເປັນກັງວົນກ່ຽວກັບຂໍ້ກຳນົດທີ່ຄວບຄຸມສະເພາະບາງການກະທຳຜິດເທົ່ານັ້ນ (ຄວາມຜິດຫຼັກ ກ່ຽວກັບການເຂົ້າ-ອອກເມືອງ ແລະ ການເປັນໂສເພນີ) ແລະ ໄດ້ໂຕ້ແຍ່ງ ເພື່ອການແກ້ໄຂ ເພື່ອໃຫ້ຄວບຄຸມຕໍ່ກັບການກະທຳຜິດທັງໝົດ ທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ອາດຈະກະທຳຈາກການຖືກຄ້າມະນຸດ. ການສະແດງຄວາມຄິດເຫັນອື່ນໆ ທີ່ສະແດງອອກເຖິງຄວາມບໍ່ພໍໃຈຢ່າງຍິ່ງຕໍ່ກັບວິທີການທີ່ຂະຫຍາຍອອກໄປ ໂດຍພິຈາລະນາວ່າ ການກະທຳຜິດທີ່ຮຸນແຮງຄວນຈະກ່ຽວຂ້ອງກັບການປະເມີນນີ້. ຫຼາຍຄົນຮູ້ສຶກວ່າ ຜູ້ກະທຳຜິດ-ທີ່ເປັນຜູ້ຖືກເຄາະຮ້າຍ ຄວນຈະຖືກດຳເນີນຄະດີຕໍ່ກັບການກະທຳຜິດທີ່ຮ້າຍແຮງ, ໂດຍສະເພາະ ການກະທຳຜິດທີ່ກ່ຽວຂອງກັບຢາເສບຕິດ. ຄວາມຄິດເຫັນທີ່ແຕກຕ່າງ ຕໍ່ກັບສະຖານະການ ທີ່ຜູ້ຖືກເຄາະຮ້າຍ ໄດ້ກາຍມາເປັນຜູ້ຄ້າມະນຸດເອງ ແລະ ຈຸດທີ່ຜູ້ຖືກເຄາະຮ້າຍ ໄດ້ກາຍມາເປັນຜູ້ຄ້າມະນຸດ ຄວນຈະຖືກລົງໂທດ. ທັດສະນະຄະຕິສ່ວນນ້ອຍ ກ່ຽວກັບຈຸດປະສົງຂອງການປົກປ້ອງ ຄືການສະໜັບສະໜູນຜູ້ຖືກເຄາະຮ້າຍ ເພື່ອໃຫ້ຄວາມຮ່ວມມື ແລະ ບຸກຄົນທີ່ບໍ່ຄວນຖືກຍົກເວັ້ນຈາກການດຳເນີນຄະດີ.

**ຄວາມຕ້ອງການຄຳແນະນຳໃນການຕີຄວາມໝາຍຫຼັກການບໍ່ລົງໂທດ:** ບໍ່ພົບເຫັນຫຼັກການກ່ຽວກັບນະໂຍບາຍໃນລະດັບພາກພື້ນ ຫຼື ພາຍໃນ ຫຼື ເອກະສານແນະນຳໃດໆ ທີ່ຖືກນຳໃຊ້ເຂົ້າໃນການສະໜັບສະໜູນການນຳໃຊ້ ແລະ ການຕີຄວາມໝາຍຂອງຫຼັກການບໍ່ລົງໂທດ. ເຖິງຢ່າງໃດກໍຕາມ, ມີຄວາມກະຕືລືລົ້ນຢ່າງກວ້າງຂວາງ ກ່ຽວກັບຄວາມຕ້ອງການກ່ຽວກັບຄຳແນະນຳ ເພື່ອທີ່ຈະໄດ້ພັດທະນາຄວາມເຂົ້າໃຈທີ່ເປັນເອກະພາບກັນຕໍ່ກັບຫຼັກການດັ່ງກ່າວ. ຜູ້ຕອບ ໄດ້ເນັ້ນວ່າ ຄຳແນະນຳດັ່ງກ່າວ ຄວນຈະມີໃຫ້ແກ່ຜູ້ປະຕິບັດຕົວຈິງໃນຂະບວນການຍຸຕິທຳທາງອາຍາ, ລວມທັງ ໃນພື້ນທີ່ຫ່າງໄກ ແລະ ໃນລະດັບພາກພື້ນ ເພື່ອປິດຊ່ອງຫວ່າງ ໃນການຮັບຮູ້ ແລະ ຄວາມສາມາດລະຫວ່າງຂັ້ນ

ສູນກາງ, ພາກພື້ນ ແລະ ຂັ້ນແຂວງ. ມີການສະເໜີແນະນຳ ເພື່ອເປັນແນວທາງໃຫ້ມີຄວາມປານີປານອມກັນກັບຄວາມບໍ່ສອດຄ່ອງກັນ ລະຫວ່າງ ເຄື່ອງມືດ້ານນິຕິກຳ ແລະ ເພື່ອແນະນຳແກ່ເຈົ້າໜ້າທີ່ດ່ານໜ້າ (ຕຳຫຼວດ, ພະນັກງານກວດຄົນເຂົ້າ-ອອກເມືອງ ແລະ ຜູ້ກວດສອບດ້ານແຮງງານ) ເພື່ອນຳໃຊ້ຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍ ໃຫ້ມານຳໃຊ້ແຕ່ຂັ້ນທຳອິດ ເພື່ອປົກປ້ອງຜູ້ກະທຳຜິດຈາກຈຸດທີ່ພວກເຂົາໄດ້ຖືກກຳນົດຕົວວ່າອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

## ການນຳໃຊ້ຫຼັກການບໍ່ລົງໂທດ

**ຂໍ້ກຳນົດຫຼັກການບໍ່ລົງໂທດໃນກົດໝາຍ ບໍ່ຄ່ອຍຖືກນຳໃຊ້ໃນພາກປະຕິບັດຕົວຈິງ:** ຫຼັກການບໍ່ລົງໂທດ ເປັນທີ່ຮັບຮູ້ຢ່າງກວ້າງຂວາງວ່າເປັນອົງປະກອບຂອງການຕອບໂຕ້ ໃນການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ຕໍ່ກັບການຕອບໂຕ້ການຄ້າມະນຸດ, ແຕ່ມັນບໍ່ໄດ້ຖືກນຳໃຊ້ຢ່າງຕໍ່ເນື່ອງໃນພາກປະຕິບັດຕົວຈິງ. ໃນກໍລະນີທີ່ຜູ້ຖືກເຄາະຮ້າຍ-ຜູ້ກະທຳຜິດ ບໍ່ຖືກດຳເນີນຄະດີ, ມັນບໍ່ຄ່ອຍຈະມີການອ້າງອີງເຖິງຜົນໄດ້ຮັບຢ່າງຊັດເຈນວ່າເປັນຜົນມາຈາກຂໍ້ກຳນົດຂອງຫຼັກການບໍ່ລົງໂທດໃນກົດໝາຍພາຍໃນ ຫຼື ເປັນການນຳໃຊ້ເພື່ອປ້ອງກັນຂໍ້ຫາດັ່ງກ່າວ. ເຖິງຢ່າງໃດກໍຕາມ, ໃນເຂດສານທີ່ມີສິດອຳນາດ ບ່ອນທີ່ຂໍ້ກຳນົດຫຼັກການບໍ່ລົງໂທດຖືກນຳໃຊ້ ຕໍ່ກັບລາຍງານຄວາມຜິດທີ່ຄົບຖ້ວນ, ມີການສະເໜີຕົວຢ່າງທີ່ຜູ້ຖືກເຄາະຮ້າຍ *ບໍ່ຖືກ* ລົງໂທດຕໍ່ກັບອາຊະຍາກຳທີ່ພວກເຂົາໄດ້ກະທຳເນື່ອງຈາກການຖືກຄ້າມະນຸດ, ລວມທັງ ແຕ່ບໍ່ສະເພາະແຕ່ການກະທຳຜິດທີ່ກຳນົດໄວ້ໃນກົດໝາຍ. ຜູ້ຕອບບາງທ່ານ ຍັງມີຄວາມຕັ້ງໃຈວ່າ (ການກຳນົດ) ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ບໍ່ເຄີຍຖືກດຳເນີນຄະດີ. ຕົວຢ່າງ ສະຖານະພາບຂອງຜູ້ຖືກເຄາະຮ້າຍ ໃນການກຳນົດສະຖານະພາບຂອງຜູ້ກະທຳຜິດ ໃນການກຳນົດວິທີການທີ່ປະຕິບັດຕໍ່ກັບຄົນອື່ນແນວໃດ, ບໍ່ແມ່ນຜົນສະທ້ອນໂດຍກົງມາຈາກການນຳໃຊ້ນິຕິກຳສະເພາະ. ຜູ້ອື່ນໆ ໄດ້ຍົກຕົວຢ່າງທີ່ຖືກເຄາະຮ້າຍ ໄດ້ຖືກດຳເນີນຄະດີ ໃນກິດຈະກຳທີ່ກ່ຽວຂ້ອງກັບການຄ້າມະນຸດ.

**ບົດບາດຂອງຜູ້ປະຕິບັດຕົວຈິງໃນຂະແໜງຍຸຕິທຳທາງອາຍາ:** ຜູ້ຕອບ ໄດ້ອະທິບາຍວ່າ ຜູ້ປະຕິບັດຕົວຈິງໃນຂະແໜງຍຸຕິທຳທາງອາຍາ ໄດ້ມີດຸນພິນິດທີ່ສຳຄັນວ່າ ຈະດຳເນີນຄະດີ ຫຼື ຮ້ອງຟ້ອງ ຫຼື ບໍ່ ໂດຍມີອຸປະສັກບາງຢ່າງທີ່ສຳຄັນທີ່ປະເຊີນໃນການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍ. ຜູ້ປະຕິບັດຕົວຈິງໃນຂະແໜງຍຸຕິທຳທາງອາຍາ ອາດຈະບໍ່ມີຄວາມຄຸ້ນເຄີຍ ຫຼື ຂາດຄວາມເຂົ້າໃຈທີ່ພຽງພໍຕໍ່ກັບຫຼັກການບໍ່ລົງໂທດ, ຈຸດປະສົງຂອງຫຼັກການ ແລະ ບົດບາດຂອງເຂົາເຈົ້າໃນການນຳໃຊ້ຫຼັກການດັ່ງກ່າວໃນພາກປະຕິບັດຕົວຈິງ. ເຊິ່ງມັນເປັນເລື່ອງຈິງ ບໍ່ສະເພາະແຕ່ໃນພາກພື້ນອາຊຽນເທົ່ານັ້ນ, ແຕ່ຍັງພົບເຫັນໃນບ່ອນອື່ນໆອີກ.[8] ຄວາມພະຍາຍາມໃນການສ້າງຂີດຄວາມສາມາດເພື່ອຕ້ານການຄ້າມະນຸດໂດຍທົ່ວໄປ ແລະ ຫຼັກການບໍ່ລົງໂທດ ໂດຍສະເພາະແລ້ວ ແມ່ນຖືວ່າບໍ່ມີຄວາມເທົ່າທຽມກັນ. ບໍ່ແມ່ນພາກສ່ວນທີ່ກ່ຽວຂ້ອງທັງໝົດໃນລະບົບຍຸຕິທຳທາງອາຍາ ທີ່ໄດ້ຮັບການຝຶກອົບຮົມກ່ຽວກັບການຕ້ານການຄ້າມະນຸດ, ໂດຍສະເພາະຜູ້ທີ່ຢູ່ຕ່າງແຂວງ, ຊົນນະບົດ ຫຼື ເຂດຫ່າງໄກສອກຫຼີກ ອາດຈະບໍ່ໄດ້ຮັບການຝຶກອົບຮົມທີ່ຈຳເປັນ. ນີ້ເປັນເລື່ອງຈິງໃນອາຊຽນ ແລະ ໃນພາກພື້ນອື່ນໆນຳ.[9]

ຜູ້ຕອບໄດ້ອະທິບາຍວ່າ ຜູ້ປະຕິບັດຕົວຈິງ ມີແນວໂນ້ມສະດວກໃຈໃນການຮ້ອງຟ້ອງຄະດີຕາມ ປະມວນກົດໝາຍອາຍາ, ຈາກນັ້ນ *ບໍ່* ດຳເນີນຄະດີຕາມພື້ນຖານຂອງກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ. ສິ່ງທ້າທາຍອີກ

---

8 ຕົວຢ່າງ, GRETA ໄດ້ສັງເກດເຫັນວ່າ ການຂາດຄວາມຮັບຮູ້ ເປັນບັນຫາຖາວອນໃນລັດສະມາຊິກຂອງ EU, ອັນເນື່ອງມາຈາກການຂາດການຝຶກອົບຮົມກ່ຽວກັບຫຼັກການບໍ່ລົງໂທດ ແລະ ການກຳນົດຕົວຜູ້ຖືກເຄາະຮ້າຍ ໂດຍທົ່ວໄປ. ລາຍລະອຽດເບິ່ງທີ່ Ryszard Piotrowicz, ມາດຕາ 26, ຂໍ້ກຳນົດຫຼັກການບໍ່ລົງໂທດ ໃນ Julia Planitzer and Helmut Sax (eds.) ຄຳເຫັນກ່ຽວກັບອານຸສັນຍາຂອງສະພາເອີລົບວ່າດ້ວຍການຕ້ານການຄ້າມະນຸດ (Edward Elgar, 2020) 318, ອ້າງອີງເຖິງບົດລາຍງານຂອງ GRETA.

9 Michelle Koinange, ຜູ້ປະສານງານການຮ່ວມມືກັນ, ຢຸດການຄ້າມະນຸດ (Stop the Traffik), ປະເທດເຄນຢາ, ກ່າວກ່ຽວກັບຫຼັກການບໍ່ລົງໂທດຜູ້ຖືກເຄະຮ້າຍຈາກການຄ້າມະນຸດ, ໃນກອງປະຊຸມຂອງ ສະພາສິດທິມະນຸດ ຄັ້ງທີ 47, ວັນທີ 30 ມິຖຸນາ 2021, 13:00  14:30 CET. ບັນທຶກຂອງຜູ້ຂຽນຢູ່ໃນຟາຍເອກະສານ.

ປະການໜຶ່ງທີ່ເກີດຂຶ້ນ ແມ່ນຂໍ້ເທັດຈິງທີ່ວ່າ ການບໍ່ດຳເນີນຄະດີຕໍ່ຜູ້ກະທຳຜິດ[10] ແມ່ນຂັດກັບບົດບາດຂອງຜູ້ປະຕິບັດຕົວຈິງໃນຂະແໜງຍຸຕິທຳທາງອາຍາ: ບົດບາດຂອງໄອຍະການໃນການດຳເນີນຄະດີ. ປະເດັນດຽວກັນນີ້ກ່ຽວຂ້ອງກັບເຈົ້າໜ້າທີ່ກວດຄົນເຂົ້າ-ອອກເມືອງ ຜູ້ທີ່ມີໜ້າທີ່ຫຼັກໃນການກຳນົດຜູ້ທີ່ລະເມີດການເຂົ້າ-ອອກເມືອງ, ບໍ່ແມ່ນກຳນົດຜູ້ຖືກເຄາະຮ້າຍໃນອາຊະຍາກຳທີ່ຮ້າຍແຮງ. ເຖິງແມ່ນວ່າຈະມີຫຼັກການບໍ່ລົງໂທດ, ຜູ້ປະຕິບັດຕົວຈິງໃນຂະແໜງຍຸຕິທຳທາງອາຍາ ຈຳເປັນຕ້ອງໄດ້ມີການປັບປ່ຽນທັດສະນະຄະຕິ ເພື່ອໃຫ້ເບິ່ງບຸກຄົນ ວ່າເປັນຜູ້ຖືກເຄາະຮ້າຍແທນທີ່ຈະເປັນຜູ້ກະທຳຜິດ. ສິ່ງທ້າທາຍອື່ນໆ ທີ່ເກີດຂຶ້ນຈາກຜົນຂອງການປະຕິບັດງານທີ່ຖືກວັດແທກດ້ວຍການຮັບປະກັນການລົງໂທດ ຫຼາຍກວ່າທີ່ຈະຫຼີກລ້ຽງການລົງໂທດ. ສະນັ້ນ, ມັນມີຄວາມຈຳເປັນທີ່ຕ້ອງສ້າງແຮງຈູງໃຈໃຫ້ແກ່ຜູ້ປະຕິບັດຕົວຈິງ ນຳໃຊ້ຫຼັກການບໍ່ລົງໂທດ ແລະ ຫຼີກລ້ຽງການກ່າວຫາວ່າປະໝາດ, ເລີ່ນເລີ້ ໃນການປະຕິບັດໜ້າທີ່ຂອງຕົນ ທີ່ບໍ່ມີການດຳເນີນຄະດີ.

**ເມື່ອໃດທີ່ຫຼັກການບໍ່ລົງໂທດ ໄດ້ຖືກນຳໃຊ້ໃນພາກປະຕິບັດຕົວຈິງ:** ໃນທິດສະດີ, ຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍໄດ້ຖືກນຳໃຊ້ໃນທຸກຂັ້ນຕອນຂອງຂະບວນຍຸຕິທຳທາງອາຍາ, ແຕ່ທິດສະດີນີ້ ມີສິ່ງທ້າທາຍໃນພາກປະຕິບັດຕົວຈິງ. ມີຄຳຖາມເກີດຂຶ້ນກ່ຽວກັບຄວາມສຳພັນລະຫວ່າງ ການຂະບວນການທີ່ເປັນຄູ່ຂະໜານໃນການກຳນົດຕົວ ຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍ ແລະ ການສືບສວນ-ສອບສວນ ຜູ້ທີ່ອາດຈະເປັນຜູ້ຄ້າມະນຸດ. ມີການເຫັນດີໂດຍທົ່ວໄປແລ້ວ ຫຼັກການດັ່ງກ່າວ ຄວນຖືກນຳໃຊ້ໃນຈຸດທຳອິດ ທີ່ຮັບຮູ້ວ່າຜູ້ກະທຳຜິດອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ບໍ່ໄດ້ມີການກຳນົດເງື່ອນໄຂກ່ຽວກັບຂະບວນການກຳນົດຕົວຜູ້ຖືກເຄາະຮ້າຍຢ່າງເປັນທາງການ ໃຫ້ສຳເລັດຜົນ, ບໍ່ມີການຕັ້ງຂໍ້ຫາ ຫຼື ຜົນຂອງການດຳເນີນຄະດີຕໍ່ກັບການຄ້າມະນຸດ. ຫາກບໍ່ສາມາດດຳເນີນການປົກປ້ອງໃນເບື້ອງຕົ້ນ, ມັນເປັນສິ່ງທີ່ຍາກຫຼາຍທີ່ຈະນຳເອົາບຸກຄົນອອກຈາກລະບົບຍຸຕິທຳທາງອາຍາ ເມື່ອພວກເຂົາໄດ້ຖືກກຳນົດວ່າເປັນຜູ້ກະທຳຜິດ ເຊິ່ງແມ່ນວ່າ ຜູ້ປະຕິບັດຕົວຈິງ ຈະສັງເກດເຫັນໂອກາດທີ່ຈະຫຼຸດຜ່ອນການລົງໂທດ ເຊິ່ງເປັນສິ່ງສຸດທ້າຍທີ່ຜູ້ກະທຳຜິດໄດ້ຖືກກຳນົດຕົວວ່າເປັນຜູ້ຖືກເຄາະຮ້າຍ ແຕ່ກໍໄດ້ຖືກລົງໂທດວ່າເປັນຜູ້ກະທຳຜິດແລ້ວ.

**ເມື່ອໃດທີ່ຫຼັກການບໍ່ລົງໂທດ ບໍ່ຄວນຖືກນຳໃຊ້ໃນພາກປະຕິບັດຕົວຈິງ:** ໄດ້ມີການຍົກຄວາມເປັນກັງວົນບາງຢ່າງຂຶ້ນ ກ່ຽວກັບຫຼັກການບໍ່ລົງໂທດ ທີ່ອາດຈະມີການນຳໃຊ້ບໍ່ຖືກຕ້ອງ ໃນການປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈາກການກະທຳຜິດ ທີ່ບໍ່ກ່ຽວຂ້ອງກັບການຄ້າມະນຸດ ຫຼື ນຳໃຊ້ໂດຍບໍ່ຖືກຕ້ອງ ເພື່ອປົກປ້ອງຜູ້ທີ່ບໍ່ແມ່ນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ຜູ້ຕອບບາງຈຳນວນ ໄດ້ສະແດງຄວາມຄິດເຫັນວ່າ ຫຼັກການບໍ່ລົງໂທດ ຄວນໄດ້ຮັບການປົກປ້ອງຈາກການນຳໃຊ້ໃນທາງທີ່ບໍ່ຖືກຕ້ອງ ເພື່ອປົກປ້ອງຜູ້ຖືກເຄາະຮ້າຍທີ່ກະທຳຜິດຊ້ຳຊ້ອນ ຫຼື ກະທຳຜິດເປັນອາຈິນ. ຄວາມເປັນກັງວົນນີ້ ໄດ້ຖືກນຳສະເໜີວ່າເປັນສິ່ງທີ່ສຳຄັນຫຼາຍໃນການສ້າງຂີດຄວາມສາມາດໃນການຕ້ານການຄ້າມະນຸດ ໃຫ້ແກ່ຜູ້ປະຕິບັດຕົວຈິງໃນຂະແໜງຍຸຕິທຳທາງອາຍາ ແລະ ຄວາມເຂົ້າໃຈຂອງການເຊື່ອມໂຍງກັນຂອງອົງປະກອບດັ່ງກ່າວ.

## ສິ່ງທ້າທາຍໃນການຮ່ວມມືລະຫວ່າງປະເທດ

**ການປະຕິບັດຫຼັກການບໍ່ລົງໂທດທີ່ບໍ່ສະເໝີພາບກັນ ໃນສັນຍາການຮ່ວມມືສອງຝ່າຍ:** ສັນຍາການຮ່ວມມືສອງຝ່າຍ ຫຼາຍສະບັບໃນພາກພື້ນອາຊຽນ ໄດ້ກ່າວເຖິງຫຼັກການບໍ່ລົງໂທດໄວ້ຢ່າງຊັດເຈນ ແຕ່ບໍ່ປາກົດເຫັນຕົວຢ່າງໃນການນຳໃຊ້ຫຼັກການດັ່ງກ່າວໃນພາກປະຕິບັດຕົວຈິງ. ຄວາມສຳຄັນຂອງຄວາມເຂົ້າໃຈທີ່ເປັນເອກະພາບກັນ ລະຫວ່າງປະເທດຕົ້ນທາງ ແລະ ປະເທດປາຍທາງແມ່ນເປັນຫົວໃຈຫຼັກສຳຄັນ. ໂດຍສະເພາະຢ່າງຍິ່ງ, ລັດ ຈຳເປັນຕ້ອງໄດ້ຕົກລົງກັນວ່າ ໃຜເປັນຜູ້ຖືກເຄາະຮ້າຍ, ແລະ ບຸກຄົນໃດທີ່ຖືກຮັບຮູ້ວ່າໄດ້ມີການກຳນົດຕົວໃນລັກສະນະທາງບວກຢູ່ບ່ອນອື່ນແລ້ວ. ມີຄວາມກັງວົນເກີດຂຶ້ນກ່ຽວກັບຊ່ອງຫວ່າງຂອງການປົກປ້ອງທີ່ສຳຄັນ ໃນສັນຍາສອງຝ່າຍ, ເຊິ່ງ

---

10 Anne T. Gallagher, ກົດໝາຍສາກົນກ່ຽວກັບການຄ້າມະນຸດ (Cambridge, 2010) 502

ມັກຖືກນຳໃຊ້ເຂົ້າໃນການກະທຳຜິດທີ່ກຳຈັດ (ການເຂົ້າ-ອອກເມືອງ ແລະ ການເປັນໂສເພນີ) ແລະ ສະເພາະຜູ້ທີ່ເປັນຜູ້ຖືກເຄາະຮ້າຍບາງປະເພດເທົ່ານັ້ນ (ແມ່ຍິງ ແລະ ເດັກນ້ອຍ) ເຊິ່ງຊີ້ໄປເຖິງການປະຕິບັດຫຼັກການ ທີ່ມີການຈຳແນກ. ມີຄຳຖາມກ່ຽວກັບການປະຕິບັດຕົວຈິງ ກ່ຽວກັບການນຳໃຊ້ຫຼັກການບໍ່ລົງໂທດທີ່ມີຢູ່ໃນສັນຍາສອງຝ່າຍ ໃນກໍລະນີທີ່ບໍ່ມີຂໍ້ກຳນົດທີ່ຄ້າຍຄືກັນໃນກົດໝາຍພາຍໃນ.

**ສິ່ງທ້າທາຍໃນພາກປະຕິບັດຕົວຈິງ ຕໍ່ກັບການຮ່ວມມືລະຫວ່າງປະເທດ:** ຜູ້ຕອບໄດ້ຍົກຕົວຢ່າງຂອງສິ່ງທ້າທາຍໃນຂະບວນການທີ່ກ່ຽວຂ້ອງກັບການລົງໂທດຜູ້ຖືກເຄາະຮ້າຍໃນປະເທດໜຶ່ງ ເພື່ອໃຫ້ການຕໍ່ສູ້ກັບຜູ້ຄ້າມະນຸດໃນອີກປະເທດໜຶ່ງ, ສິ່ງຜົນເຮັດໃຫ້ມີການລົງໂທດໄລຍະຍາວ (ລາຍລະອຽດເບິ່ງໃນກ່ອງ 5), ແລະ ການກັບຄືນປະເທດຂອງຜູ້ຖືກເຄາະຮ້າຍຈາກປະເທດໜຶ່ງ ໄປສູ່ອີກປະເທດໜຶ່ງ ເພື່ອຫຼີກລ້ຽງການດຳເນີນຄະດີຕໍ່ເຂົາເຈົ້າເຊັ່ນກັນ. ສິ່ງທ້າທາຍໃນເຂດອຳນາດຂອງສານ ໄດ້ຖືກກຳນົດໄວ້ໃນຄະດີຄ້າມະນຸດແບບຂ້າມຊາດທີ່ມີຄວາມຊັບຊ້ອນ - ລວມທັງ ນອກເໜືອພາກພື້ນອາຊຽນ. ການຂູດຮີດໃນບໍລິບົດທາງທະເລ ໄດ້ສັງເກດວ່າເປັນສິ່ງທ້າທາຍສະເພາະ ໃນເຂດອຳນາດສານທີ່ມີສິດອຳນາດທີ່ມີຄວາມຊັບຊ້ອນ. ຄວາມສຳຄັນຂອງການຮ່ວມມືກັນ ໃນລະດັບ ຜູ້ປະຕິບັດຕົວຈິງ ຕໍ່ ຜູ້ປະຕິບັດຕົວຈິງ ບໍ່ສະເພາະແຕ່ໃນອາຊຽນ ແຕ່ຍັງນອກເໜືອໃນອາຊຽນ ເຊິ່ງມັນຖືກເນັ້ນວ່າ ເປັນວິທີການທີ່ຈະຂ້າມຜ່ານອຸປະສັກ ລວມທັງ ການສະໜັບສະໜູນພາກສ່ວນຕ່າງໆໃນແຜນງານອາຊຽນ-ອົດສະຕຣາລີເພື່ອຕ້ານການຄ້າມະນຸດ ແລະ ອົງການສະຫະປະຊາຊາດເພື່ອຕ້ານຢາເສບຕິດ ແລະ ອາຊະຍາກຳ (UNODC) ເພື່ອສະໜັບສະໜູນການຮ່ວມມື ແລະ ການສື່ສານທີ່ເປັນຕົວແບບທີ່ດີ.

## ສິ່ງທ້າທາຍໃນການກຳນົດຕົວຜູ້ຖືກເຄາະຮ້າຍ

**ການກຳນົດຕົວຜູ້ຖືກເຄາະຮ້າຍມີຄວາມສຳຄັນຕໍ່ກັບຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ:** ການກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍໄວ ແລະ ມີປະສິດທິພາບນັ້ນ ເປັນສິ່ງທີ່ສຳຄັນໃນການປົກປ້ອງເຂົາເຈົ້າຈາກການກະທຳຜິດ ທີ່ຜິດກົດໝາຍ ທີ່ເປັນຜົນສະທ້ອນໂດຍກົງທີ່ຖືກຄ້າມະນຸດ. ບົດຄົ້ນຄວ້າໄດ້ຢັ້ງຢືນວ່າ ຜູ້ຖືກເຄາະຮ້າຍທີ່ບໍ່ໄດ້ຮັບການກຳນົດຕົວ ເປັນເຫດຜົນຫຼັກໃນການຖືກດຳເນີນຄະດີ. ມັນເປັນສິ່ງທີ່ຍອມຮັບຢ່າງກວ້າງຂວາງວ່າ ຜູ້ຖືກເຄາະຮ້າຍທີ່ໄດ້ຮັບການກຳນົດຕົວນັ້ນ, ບໍ່ຄວນຈະຖືກລົງໂທດຕໍ່ກັບຄວາມຜິດທີ່ພວກເຂົາໄດ້ກະທຳ ໃນເວລາທີ່ຖືກຄ້າມະນຸດ. ບໍລິບົດ ຫຼື ສະພາບການ ອາດຈະເປັນຕົວກຳນົດວ່າ ຈະຖືກດຳເນີນຄະດີອາຍາ ຫຼື ບໍ່; ໃນກໍລະນີທີ່ພົບບຸກຄົນໃດໜຶ່ງ ໃນຖານະຜູ້ຖືກເຄາະຮ້າຍ ແລະ ຜູ້ກະທຳຜິດພ້ອມກັນນັ້ນ, ອາດຈະບໍ່ຖືກດຳເນີນຄະດີຕໍ່ກັບການກະທຳຜິດທີ່ເບົາບາງ, ແຕ່ມັນອາດຈະເປັນໄປບໍ່ໄດ້ວ່າ ບຸກຄົນທີ່ຖືກດຳເນີນຄະດີ ຕໍ່ກັບຄວາມຜິດນັ້ນ ຈະຖືກກຳນົດຕົວວ່າເປັນຜູ້ຖືກເຄາະຮ້າຍພາຍຫຼັງ.[11] ການຮັບຮູ້ສະຖານະຂອງບຸກຄົນທີ່ເປັນຜູ້ຖືກເຄາະຮ້າຍ ອາດນຳໄປສູ່ຄວາມເຕັມໃຈໃນການຮ່ວມມືກັບເຈົ້າ ໜ້າທີ່ຕຳຫຼວດ.[12]

**ບາງບໍລິບົດ ລວມທັງ 'ການກວດຄົ້ນ' ເປັນອັນຕະລາຍໃນການກຳນົດຕົວ:** ການກຳນົດຕົວຜູ້ຖືກເຄາະຮ້າຍທີ່ຜິດພາດ ເກີດຂຶ້ນໃນເວລາທີ່ການປະຕິບັດ ການບັງຄັບໃຊ້ກົດໝາຍ ບ່ອນທີ່ຜູ້ຖືກຄ້າມະນຸດ ອາດຈະເຮັດວຽກ ຫຼື ອາໄສຢູ່, ຫຼື ເວລາທີ່ຜູ້ຖືກເຄາະຮ້າຍ ອາດຈະໄປສະຖານີຕຳຫຼວດ ເພື່ອຂໍຄວາມຊ່ວຍເຫຼືອ ແຕ່ກັບຖືກດຳເນີນຄະດີແທນ.[13] ຄວາມຫຼົ້ມເຫຼວໃນການກຳນົດຕົວຜູ້ຖືກເຄາະຮ້າຍໃນເວລາ 'ກວດຄົ້ນ' ທີ່ໄດ້ດຳເນີນຢູ່ບ່ອນທີ່ຜູ້ເຮັດວຽກບໍລິການທາງເພດ ໄດ້ເຮັດວຽກຢູ່ ເປັນສິ່ງທີ່ຮັບຮູ້ກັນຢ່າງກວ້າງຂວາງ. ຜູ້ຖືກເຄາະຮ້າຍ ມັກຈະບໍ່ໄດ້ຮັບການກຳນົດຕົວໃນຂະບວນການຄຸ້ມຄອງການເຂົ້າ-ອອກເມືອງ ໂດຍທີ່ເຈົ້າໜ້າທີ່ໄດ້ປະຕິບັດກັບຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍ

---

11 Carolina Villacampa and Nria Torres, ການຄ້າມະນຸດ ເພື່ອຂູດຮີດທາງອາຍາ: ຜົນກະທົບຂອງຜູ້ຖືກເຄາະຮ້າຍຈາກການຜ່ານລະບົບຍຸຕິທຳທາງອາຍາ, ການທົບທວນສາກົນກ່ຽວກັບຜູ້ຖືກເຄາະຮ້າຍວິທະຍາ (International Review of Victimology), 2019, ສະບັບທີ. 25(1) 318, ທີ່ 12.

12 Carolina Villacampa and Nria Torres, ການຄ້າມະນຸດ ເພື່ອຂູດຮີດທາງອາຍາ: ຜົນກະທົບຂອງຜູ້ຖືກເຄາະຮ້າຍຈາກການຜ່ານລະບົບຍຸຕິທຳທາງອາຍາ, ການທົບທວນສາກົນກ່ຽວກັບຜູ້ຖືກເຄາະຮ້າຍວິທະຍາ (International Review of Victimology), 2019, ສະບັບ. 25(1) 318, ທີ່ 8.

13 *ເບິ່ງຕົວຢ່າງ: ສົມຄວນເປັນຜູ້ຖືກເຄາະຮ້າຍບໍ່? ບົດລາຍງານລະດັບຊຸມຊົນ ກ່ຽວກັບໃນອາຊະກຳຂອງຜູ້ຖືກເຄາະຮ້າຍທີ່ເປັນແຮງງານເຄື່ອນຍ້າຍໃນການບໍລິການດ້ານເພດໃນເອີລົບ* (ICRSE, 2020) 27-29

ວ່າເປັນແຮງງານເຄື່ອນຍ້າຍທີ່ຜິດກົດໝາຍ ແລະ ດຳເນີນຄະດີເຂົາເຈົ້າ ກ່ຽວກັບຄວາມຜິດໃນການເຂົ້າ-ອອກເມືອງ ແລະ ເອກະສານທີ່ກ່ຽວຂ້ອງ ໂດຍບໍ່ຮັບຮູ້ວ່າພວກເຂົາອາດຈະເປັນຜູ້ຖືກເຄາະຮ້າຍ. ຄວາມສ່ຽງນີ້ ມີຄວາມສ່ຽງສູງຂຶ້ນ ໃນບໍລິບົດ ທີ່ມີນະໂຍບາຍທີ່ບໍ່ເປັນມິດຕໍ່ກັບແຮງງານທີ່ບໍ່ມີເອກະສານ ທີ່ອາດຈະມີອິດທິພົນຕໍ່ກັບວິທີການທີ່ດຳເນີນການໂດຍເຈົ້າໜ້າທີ່ດ່ານໜ້າ.[14] ການລວມຕົວເພື່ອຕ້ານການຄ້າມະນຸດ ກ່ຽວກັບກົດລະບຽບຂອງແຮງງານເຄື່ອນຍ້າຍໄດ້ຖືກຮັບຮອງໃນພາກພື້ນອາຊຽນ, ສິ່ງພົນໃຫ້ຜູ້ຄ້າມະນຸດໄດ້ຖືກກຳນົດຕົວ ແລະ ຖືກສົ່ງກັບ ໃນຖານະແຮງງານທີ່ຜິດກົດໝາຍ.[15]

**ຜູ້ຖືກເຄາະຮ້າຍ ມັກຈະບໍ່ໄດ້ຖືກກຳນົດຕົວ ເມື່ອພວກເຂົາໄດ້ເຂົ້າສູ່ລະບົບຍຸຕິທຳທາງອາຍາ ໃນຖານະຜູ້ກະທຳຜິດ:** ເມື່ອຜູ້ເຄາະຮ້າຍ ໄດ້ເຂົ້າສູ່ລະບົບຍຸຕິທຳໃນຖານະຜູ້ກະທຳຜິດ, ມັນເປັນສິ່ງທີ່ຍາກ ທີ່ຈະປ່ຽນແປງທິດທາງເພື່ອຈະປົກປ້ອງເຂົາເຈົ້າຕາມພາຍຫຼັງ, ແລະ ເປັນໄປບໍ່ໄດ້ທີ່ຈະປົກປ້ອງເຂົາເຈົ້າຈາກການຖືກລົງໂທດ ໃນເມື່ອພວກເຂົາໄດ້ກະທົບແລ້ວ. ໄດ້ມີການກ່າວເຖິງຄວາມເປັນກັງວົນຂຶ້ນ ໃນບັນດາປະເທດທີ່ໄດ້ເຮັດການຄົ້ນຄວ້າ ທີ່ເຈົ້າໜ້າທີ່ບັງຄັບປະຕິບັດກົດໝາຍ, ໄອຍະການ, ຜູ້ປົກປ້ອງ ແລະ ຜູ້ພິພາກສາ ທີ່ພິຈາລະນາຄະດີ ອາດຈະຂາດທັກສະໃນການຮັບຮູ້ວ່າ ຜູ້ກະທຳຜິດ ກ່ອນ ໜ້ານັ້ນ ພວກເຂົາອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ການກຳນົດຕົວທີ່ບໍ່ພຽງພໍ ນອກເໜືອກຈາກບໍລິບົດຂອງການຂູດຮີດທາງເພດ ໄດ້ຖືກກຳນົດໄວ້ໃຫ້ມີຄວາມເອົາໃຈໃສ່ ເຊັ່ນດຽວກັບມິຕິດ້ານເພດ ທີ່ກ່ຽວຂ້ອງກັບການກຳນົດຕົວຜູ້ຖືກເຄາະຮ້າຍທີ່ເປັນເພດຊາຍ ທີ່ບໍ່ພຽງພໍ ແລະ ແມ່ຍິງທີ່ຖືກສັງຄົມປະນາມ ທີ່ມີສ່ວນກ່ຽວກັບກັບການບໍລິການທາງເພດ.

**ມາດຕະການຮີບດ່ວນ ເພື່ອແກ້ໄຂສິ່ງທ້າທາຍໃນການກຳນົດຕົວຜູ້ຖືກເຄາະຮ້າຍ:** ຜູ້ຕອບ ໄດ້ສະແດງໃຫ້ເຫັນເຖິງຄວາມຈຳເປັນທີ່ຕ້ອງໄດ້ກະຕຸ້ນໃຫ້ຜູ້ປະຕິບັດຕົວຈິງ ຕອບໂຕ້ລະບົບຍຸຕິທຳທາງອາຍາໃນທຸກລະດັບ, ລວມທັງ ການສ້າງຄວາມເຂົ້າໃຈກ່ຽວກັບນິຍາມ ຂອງ ການຄ້າມະນຸດ, ແລະ ການພົວພັນຂອງອົງປະກອບຂອງການຄ້າມະນຸດ ຂອງຜູ້ໃຫຍ່ ແລະ ເດັກນ້ອຍ. ໂດຍສະເພາະຢ່າງຍິ່ງ, ຄວາມເຂົ້າໃຈກ່ຽວກັບການນຳໃຊ້ວິທີການທີ່ລະອຽດອ່ອນ ແລະ ຄວາມຍິນຍອມ ທີ່ບໍ່ກ່ຽວຂ້ອງກັບວິທີການທີ່ຖືກນຳໃຊ້ ເຊິ່ງຖືກຮັບຮູ້ວ່າເປັນຈຸດສຳຄັນໃນການກຳນົດຕົວຢ່າງມີປະສິດທິພາບ. ຂະບວນການກັ່ນກອງທີ່ເຂັ້ມງວດ ຈຳເປັນຕ້ອງໄດ້ນຳໃຊ້ໃນຂັ້ນຕອນທຳອິດ ເພື່ອເປັນຕົວຊີ້ວັດໃນການກຳນົດຕົວຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍ. ການນຳໃຊ້ຂັ້ນຕອນການດຳເນີນງານທີ່ມີມາດຕະຖານ (SOP) ແບບຕັ້ງໜ້າ, ຜູ້ແປພາສາທີ່ມີຄຸນວຸດທິ ແລະ ວິທີການຮ່ວມມືກັບຫຼາຍພາກສ່ວນ ໂດຍການມີສ່ວນຮ່ວມຂອງ NGO ເພື່ອເສີມສ້າງຄວາມເຂັ້ມແຂງໃນຂະບວນການກັ່ນກອງທີ່ເນັ້ນໃຫ້ເຫັນເຖິງຄວາມຈຳເປັນໃນການກຳນົດຕົວຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍ ໃນກຸ່ມແຮງງານເຄື່ອນຍ້າຍທີ່ຜິດກົດໝາຍ. ຜູ້ປະຕິບັດຕົວຈິງ ໄດ້ເນັ້ນໃຫ້ເຫັນເຖິງຄວາມສຳຄັນໃນການນຳໃຊ້ຂໍ້ສັນນິຖານວ່າບຸກຄົນໃດໜຶ່ງເປັນຜູ້ຖືກເຄາະຮ້າຍ ກ່ອນທີ່ຈະມີການກຳນົດຕົວຢ່າງເຕັມສ່ວນ, ເພື່ອປ້ອງກັນການດຳເນີນຄະດີ. ອາຍຸອາດຈະມີຄວາມແຕກຕ່າງລະຫວ່າງບຸກຄົນທີ່ຖືກດຳເນີນຄະດີໃນຖານະຜູ້ກະທຳຜິດ ຫຼື ຖືກປົກປ້ອງ ໃນຖານະຜູ້ຖືກເຄາະຮ້າຍ. ດັ່ງນັ້ນ ການສັນນິຖານວ່າເປັນເດັກ ຈົນເຖິງ ອາຍຸຂອງເຂົາເຈົ້າ ສາມາດກຳນົດການປະຕິບັດທີ່ເປັນຕົວແບບທີ່ດີ ທີ່ເປັນທີ່ຍອມຮັບ ເພື່ອປົກປ້ອງເດັກຈາກການຖືກລົງໂທດ.

**ການບໍ່ລົງໂທດຜູ້ຖືກເຄາະຮ້າຍ ແລະ ການປົກປ້ອງທີ່ສຳຄັນຕໍ່ກັບການກຳນົດຕົວຜູ້ຖືກເຄາະຮ້າຍ:** ການກຳນົດຕົວຜູ້ຖືກເຄາະຮ້າຍ ບໍ່ພຽງແຕ່ສຳຄັນຕໍ່ກັບການບໍ່ລົງໂທດເທົ່ານັ້ນ ແຕ່ການບໍ່ລົງໂທດ ຍັງຊ່ວຍໃນການກຳນົດຕົວຜູ້ຖືກເຄາະຮ້າຍເຊັ່ນກັນ. ໃນກໍລະນີທີ່ຜູ້ຖືກເຄາະຮ້າຍ ຖືກປະຕິບັດໃນຖານະຜູ້ກະທຳຜິດ, ພວກເຂົາຈະຖືກກີດຂວາງບໍ່ໃຫ້ຂໍຄວາມຊ່ວຍເຫຼືອ ຫຼື ບໍ່ໃຫ້ສື່ສານກັບເຈົ້າໜ້າທີ່ຕຳຫຼວດ. ໃນທາງກົງກັນຂ້າມ, ໃນກໍລະນີທີ່ຜູ້ຖືກເຄາະຮ້າຍໄດ້ຖືກປະຕິບັດ ແລະ ປົກປ້ອງໃນຖານະຜູ້ຖືກເຄາະຮ້າຍ ຫຼາຍກວ່າ ຜູ້ກະທຳຜິດ ແລະ ໄດ້ຮັບການແຈ້ງສິດທີ່ຈະບໍ່

---

14 *ບົດລາຍງານຂອງຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນອຍ, Maria Grazia Giammarinaro, 6 ເມສາ 2020,* ເອກະສານຂອງ UN A/HRC/44/45, 35.

15 Marija Jovanovi, ກົດໝາຍສາກົນ ແລະ ບັນຖັດຖານໃນພາກພື້ນກ່ຽວກັບການລັກລອບເຂົ້າ-ອອກເມືອງ: ສະຫະພາບເອີລົບ ແລະ ອາຊຽນ ໄດ້ມີການກຳນົດນິຍາມຄືນໃໝ່ກ່ຽວກັບການປົກຄອງໂລກດ້ວຍການຄ້າມະນຸດ, ວາລະສາວິຊາການຂອງອາເມລິກາກ່ຽວກັບກົດໝາຍສາກົນ, 2021, ສະບັບ. XX, 1, 19

ຖືກລົງໂທດຈາກການກະທຳຜິດ ໃນເວລາທີ່ຖືກຄ້າມະນຸດ, ພວກເຂົາມີແນວໂນ້ມທີ່ຈະໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ ແລະ ເຮັດໃຫ້ມີການກຳນົດຕົວທີ່ມີປະສິດທິພາບຫຼາຍຂຶ້ນ. ຄວາມເປັນຈິງເຫຼົ່ານີ້ ໄດ້ເນັ້ນໃຫ້ເຫັນເຖິງຄວາມສຳຄັນຕໍ່ກັບວິທີການທີ່ຄຳນຶງເຖິງສິດ ເພື່ອປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ. ຄວາມເປັນຈິງທີ່ກ່ຽວຂ້ອງນີ້, ຜູ້ຕອບໄດ້ໃຫ້ຂໍ້ສັງເກດວ່າ ສິ່ງທ້າທາຍຫຼັກຕໍ່ກັບການກຳນົດຕົວຜູ້ຖືກເຄາະຮ້າຍ ຜູ້ຖືກເຄາະຮ້າຍຫຼາຍຄົນອາດຈະບໍ່ຕ້ອງການທີ່ຈະຖືກກຳນົດຕົວໃນຖານະຜູ້ຖືກເຄາະຮ້າຍ, ຍ້ອນວ່າພວກເຂົາບໍ່ຕ້ອງການທີ່ຈະຮ່ວມມືກັບເຈົ້າໜ້າທີ່ ຫຼື ຢູ່ໃນສູນພັກເຊົາ. ໃນກໍລະນີທີ່ຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍ ໄດ້ຖືກປະຕິບັດໃນຖານະຜູ້ກະທຳຜິດ ຫຼາຍກວ່າ ໃນຖານະຜູ້ຖືກເຄາະຮ້າຍ, ມັນມີຄວາມຈຳເປັນທີ່ຮີບດ່ວນ ທີ່ຕ້ອງມີການປະເມີນຮູບແບບການປົກປ້ອງ ແລະ ການຊ່ວຍເຫຼືອ.

## ການລົງໂທດຜູ້ຖືກເຄາະຮ້າຍ ໃນພາກປະຕິບັດຕົວຈິງ

**ຜູ້ຖືກເຄາະຮ້າຍທີ່ຖືກລົງໂທດໃນຄວາມຜິດສະຖານຕ່າງໆໃນພາກປະຕິບັດຕົວຈິງ:** ບົດຄົ້ນຄວ້ານີ້ໄດ້ຢັ້ງຢືນແລ້ວວ່າ ຄວາມຜິດທີ່ກ່ຽວຂ້ອງກັບການເຂົ້າ-ອອກເມືອງ ແລະ ການເປັນໂສເພນີ ເປັນຄວາມຜິດທີ່ເຫັນຫຼາຍທີ່ສຸດ ທີ່ຜູ້ຖືກເຄາະຮ້າຍໄດ້ຖືກຈັບຕົວ, ຖືກຕັ້ງຂໍ້ຫາ, ດຳເນີນຄະດີ ແລະ ຖືກລົງໂທດໃນພາກພື້ນອາຊຽນ ແລະ ບ່ອນອື່ນໆ. ຜູ້ຖືກເຄາະຮ້າຍໄດ້ຖືກດຳເນີນຄະດີ ສຳລັບການກະທຳຜິດທາງອາຍາທີ່ພວກເຂົາໄດ້ກະທຳ ໃນເວລາທີ່ຖືກຄ້າມະນຸດ ລວມທັງ ຄວາມຜິດກ່ຽວກັບຢາເສບຕິດ. ພວກເຂົາໄດ້ຖືກດຳເນີນຄະດີຕໍ່ກັບຄວາມຜິດທີ່ພວກເຂົາໄດ້ເຮັດ ໃນເວລາທີ່ພະຍາຍາມຫຼົບໜີຈາກສະຖານະການທີ່ພົບພໍ້ ລວມທັງ ການທຳຮ້າຍຮ່າງກາຍ ຫຼື ແມ້ກະທັ້ງການຄາດຕະກຳ. ແລະ ໃນກໍລະນີທີ່ຜູ້ຖືກເຄາະຮ້າຍ ໄດ້ສິ້ນສຸດການເປັນຜູ້ຖືກເຄາະຮ້າຍ ແລ້ວມາຮັບບົດບາດເປັນຜູ້ຄ້າມະນຸດ ເພື່ອຫຼົບຫຼີກຈາກການຕົກເປັນຜູ້ຖືກເຄາະຮ້າຍ, ພວກເຂົາໄດ້ຖືກດຳເນີນຄະດີ ຕໍ່ກັບຄວາມຜິດໃນການຄ້າມະນຸດ.[16] ໄດ້ມີຄວາມກັງວົນກ່ຽວກັບການລົງໂທດຜູ້ຖືກເຄາະຮ້າຍໃນອຸດສາຫະກຳການປະມົງ ເຊິ່ງເປັນຄວາມເປັນກັງວົນໃນປະເທດຕ່າງໆ, ລວມທັງ ຄວາມຜິດກ່ຽວກັບແຮງງານ, ເອກະສານ, ການເຂົ້າ-ອອກເມືອງ ລວມໄປເຖິງ ການປະມົງທີ່ຜິດກົດໝາຍ, ບໍ່ມີການລາຍງານ ແລະ ບໍ່ມີການຄວບຄຸມ (IUU). ຜູ້ຕອບຍັງສະແດງໃຫ້ເຫັນເຖິງຈຸດທີ່ຜູ້ຖືກເຄາະຮ້າຍ ໄດ້ກະທຳຜິດກ່ຽວກັບການກໍ່ການຮ້າຍ, ລວມທັງ ແມ່ຍິງ ແລະ ເດັກ ທີ່ຖືກບັງຄັບໃຫ້ແຕ່ງງານກັບຜູ້ກໍ່ການຮ້າຍ ແລະ ໄດ້ກາຍມາເປັນຜູ້ກໍ່ການຮ້າຍເອງ.[17]

**ການນຳໃຊ້ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດໃນທາງທີ່ບໍ່ຖືກຕ້ອງ ເພື່ອດຳເນີນຄະດີຕໍ່ກັບແມ່ຍິງ ໃນອຸດສາຫະກຳທາງເພດ:** ມີຄວາມເປັນຫ່ວງວ່າ ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ຈະຖືກນຳໃຊ້ໃນທາງທີ່ບໍ່ຖືກຕ້ອງ ເພື່ອດຳເນີນຄະດີຕໍ່ກັບແມ່ຍິງ ໃນອຸດສາຫະກຳທາງເພດ - ລວມທັງ ແຕ່ບໍ່ສະເພາະແຕ່ຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໃນກຸ່ມຂອງເຂົາເຈົ້າເທົ່ານັ້ນ - ສຳລັບຄວາມຜິດກ່ຽວກັບການຄ້າມະນຸດ, ມັນສົ່ງຜົນໃຫ້ມີການລົງໂທດ ນັບແຕ່ການຖືກປັບໃໝ ຈົນເຖິງການກັກຂັງ ຫຼື ເນລະເທດກັບປະເທດ ຫຼື ການຖືກລົງໂທດດ້ານຮ່າງກາຍຢູ່ໃນບາງສະຖານະການ/ບໍລິບົດ. ໄດ້ມີຂໍ້ສະເໜີແນະນຳໃຫ້ປັບປຸງກົດໝາຍ ເພື່ອຫຼຸດຜ່ອນຄວາມສ່ຽງຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ກຸ່ມສ່ຽງອື່ນໆ ທີ່ຈະຖືກດຳເນີນຄະດີ, ໄປສູ່ການຫັນປ່ຽນຊັບພະຍາກອນດ້ານຍຸຕິທຳທາງອາຍາ ແລະ ຫັນຄວາມສົນໃຈດັ່ງກ່າວອອກຈາກ ຜູ້ບໍລິການທາງເພດ ແລ້ວຫັນຄວາມສົນໃຈໄປດຳເນີນຄະດີກັບຜູ້ຄ້າມະນຸດ ແລະ ອາຊະຍາກຳທາງອາຍາທີ່ຮ້າຍແຮງອື່ນໆແທນ.

**ການລົງໂທດພົນລະເມືອງໃນຕ່າງປະເທດ ລວມທັງ ນອກເໜືອເຂດອຳນາດສານຂອງອາຊຽນ:** ພົນລະເມືອງຂອງລັດສະມາຊິກອາຊຽນ - ລວມທັງ ເດັກ - ໄດ້ຖືກດຳເນີນຄະດີຢູ່ຕ່າງປະເທດ ຫຼັງຈາກທີ່ຖືກຄ້າມະນຸດໃນຮູບແບບການບັງຄັບແຕ່ງງານ, ບັງຄັບໃຫ້ກະທຳຜິດທາງອາຍາ, ການປະມົງ, ບັນເທີງ, ທາງເພດ ແລະ ອຸດສາຫະກຳອື່ນໆ. ຄວາມສ່ຽງນີ້ທະ

---

16 ສຳລັບການແບ່ງປະເພດຄວາມຜິດ ໃນຖານະນະຄວາມຜິດ, ຄວາມຜິດທີ່ເປັນຜົນສະທ້ອນຕໍ່ເນື່ອງ, ຄວາມຜິດກ່ຽວກັບອິດສະລະພາບ, ເບິ່ງທີ່ Andreas Schloenhardt & Rebekkah Markey-Towler, ການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຫຼັກການ, ຄຳໝັ້ນສັນຍາ ແລະ ທັດສະນະ, ວາລະສາດ້ານວິຊາການຂອງ Groningen ກ່ຽວກັບກົດໝາຍສາກົນ, ເຫຼັ້ມທີ 4(1) (2016), 10-38 ທີ່ 13-15.

17 ສຳລັບລາຍງານຄວາມຜິດທັງໝົດ ທີ່ຜູ້ຖືກເຄາະຮ້າຍ ໄດ້ຖືກລົງໂທດ, ກະລຸນາເບິ່ງເອກະສານຊ້ອນທ້າຍ 1.

ວິຄວາມຮຸນແຮງຂຶ້ນ ໃນຂອບເຂດອຳນາດຂອງສານ ບ່ອນທີ່ ແຮງງານເຄື່ອນຍ້າຍທີ່ຜິດກົດໝາຍ ທີ່ຖືວ່າເປັນຄວາມຜິດທາງອາຍາ ແລະ ແຮງງານເຄື່ອນຍ້າຍນັ້ນ ຖືກຕີສັງຄົມປະນາມ ໂດຍມີຜົນສະທ້ອນທາງອາຍາໂດຍບໍ່ຕັ້ງໃຈຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ຢູ່ໃນສະຖານະການທີ່ຜິດກົດໝາຍ. ຕໍ່ກັບການອະທິບາຍນີ້, ມັນມີຄວາມສຳຄັນໃນການສ້າງຄວາມເຂັ້ມແຂງໃນການຮ່ວມມືກ່ຽວກັບຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍ ທັງໃນພາກພື້ນອາຊຽນ ແລະ ນອກ ເໜືອພາກພື້ນອາຊຽນ ລວມທັງ ຄວາມເຂົ້າໃຈທີ່ເປັນເອກະພາບກັນວ່າ ໃຜເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ໃນເວລາທີ່ຫຼັກການບໍ່ລົງໂທດ ໄດ້ຖືກນຳໃຊ້.

**ການລົງໂທດເດັກ:** ມີການຍົກຕົວຢ່າງເດັກທີ່ຖືກດຳເນີນຄະດີຕໍ່ກັບຄວາມຜິດທີ່ພວກເຂົາໄດ້ເຮັດ ໃນເວລາທີ່ຖືກຄ້າມະນຸດ ລວມທັງ ການຄ້າເດັກຄືນອື່ນໆນຳ. ການດຳເນີນຄະດີດັ່ງກ່າວ ອາດຈະເປັນຜົນມາຈາກການກຳນົດຕົວເດັກທີ່ຜິດພາດວ່າເປັນຜູ້ໃຫຍ່ ແລະ ການບໍ່ກຳນົດຕົວພາຍຫຼັງ ວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ນີ້ແມ່ນຄວາມສຳຄັນໃນການນຳໃຊ້ຂໍ້ສົມມຸດຕິຖານໃນຂະບວນການກັ່ນກອງເດັກ ແລະ ການກຳນົດຕົວ. ຄວາມກັງວົນຍັງສະແດງໃຫ້ເຫັນໃນບາງຄະດີທີ່ຜູ້ກະທຳຜິດ ເປັນຜູ້ຖືກເຄາະຮ້າຍທີ່ເປັນເດັກ ອາດຈະຈັດວາງວ່າ 'ເດັກທີ່ຂັດກັບກົດໝາຍ' ຫຼາຍກວ່າທີ່ຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ທີ່ຂັດຕໍ່ກັບສິດ ແລະ ຜົນປະໂຫຍດຂອງເດັກ. ອາຍຸຕໍ່ກັບຄວາມຮັບຜິດຊອບທາງອາຍາ ເປັນສິ່ງທີ່ກ່ຽວກັບຂ້ອງການປະຕິບັດຕໍ່ກັບຜູ້ກະທຳຜິດທີ່ເປັນເດັກ ແລະ ອາດຈະລົງໂທດຜູ້ຖືກເຄາະຮ້າຍທີ່ເປັນເດັກ ໃນກຸ່ມເຂົາເຈົ້າ ແລະ ອາດຈະເພີ່ມຈຳນວນຂຶ້ນ.

**ການນຳໃຊ້ການລົງໂທດຜູ້ຖືກເຄາະຮ້າຍ ໂດຍຜູ້ຄ້າມະນຸດ:** ຜູ້ຄ້າມະນຸດອາດຈະໃຊ້ປະໂຫຍດຈາກການມີສ່ວນຮ່ວມຂອງຜູ້ຖືກເຄາະຮ້າຍໃນອາຊະຍາກຳ (ເຊັ່ນ ການການກະທຳຜິດທີ່ກ່ຽວຂ້ອງກັບການຄ້າຂາຍຢາເສບຕິດ) ເພື່ອເອົາຄວາມສ່ຽງຈາກການຖືກລົງໂທດອອກຈາກຕົນເອງ ແລ້ວເອົາຄວາມສ່ຽງໄປໃຫ້ຜູ້ຖືກເຄາະຮ້າຍ. ພວກເຂົາອາດຈະຂົ່ມຂູ່ການລົງໂທດ ສຳລັບຄວາມຜິດທີ່ກ່ຽວຂ້ອງກັບການເຂົ້າ-ອອກເມືອງ ຫຼື ຄວາມຜິດກ່ຽວກັບແຮງງານ ເຊິ່ງເປັນກົນລະຍຸດໃນການຄວບຄຸມຜູ້ຖືກເຄາະຮ້າຍ. ໃນກໍລະນີທີ່ເຈົ້າໜ້າທີ່ປະຕິບັດຕໍ່ກັບຜູ້ຖືກເຄາະຮ້າຍຄືກັບຜູ້ກະທຳຜິດ, ຜູ້ຄ້າມະນຸດ ໄດ້ຮັບການພິສູດວ່າຖືກຕ້ອງ. ຜູ້ຂູດຮີດ ອາດຈະນຳໃຊ້ຄວາມຜິດກ່ຽວກັບການໝິ່ນປະໝາດ ຫຼື ການໃສ່ຮ້າຍ ເພື່ອເຮັດໃຫ້ມີຄວາມມິດງຽບ. ໃນກໍລະນີດັ່ງກ່າວ, ເຫັນວ່າມີຄວາມບໍ່ສົມດູນກ່ຽວກັບອຳນາດຢ່າງຊັດເຈນ; ຜູ້ຄ້າມະນຸດ ແລະ ຜູ້ໃຊ້ແຮງງານທີ່ຂູດຮີດ ມີຊັບພະຍາກອນທີ່ສຳຄັນຫຼາຍ ເພື່ອທີ່ຈະດຳເນີນການທາງດ້ານກົດໝາຍ ໃນການຕໍ່ຕ້ານກັບຜູ້ຖືກເຄາະຮ້າຍ ຜູ້ທີ່ອາດຈະເພິ່ງພາພວກເຂົາໃນດ້ານການເງິນ ແລະ ດ້ານອື່ນໆ.

**ການນຳໃຊ້ການລົງໂທດໂດຍເຈົ້າໜ້າທີ່ຂອງລັດ ເພື່ອການສໍ້ລາດບັງຫຼວງ ຫຼື ເພື່ອອຳນວຍຄວາມສະດວກ:** ໃນບາງກໍລະນີ ການໃຊ້ ຫຼື ການຂົ່ມຂູ່ກ່ຽວກັບການລົງໂທດ ໄດ້ເປັນເຄື່ອງມືທີ່ເຈົ້າໜ້າທີ່ຂອງລັດອາດຈະນຳໃຊ້ ເພື່ອຜົນປະໂຫຍດໃນການສໍ້ລາດບັງຫຼວງ ຫຼື ອຳນວຍຄວາມສະດວກ. ໃນຖານະທີ່ເປັນເຄື່ອງມືໃນການສໍ້ລາດບັງຫຼວງ, ມີການບັນທຶກເຫດການ ທີ່ເຈົ້າໜ້າທີ່ໄດ້ຂົ່ມຂູ່ຜູ້ຖືກຄ້າມະນຸດວ່າຈະລົງໂທດ ຖ້າພວກເຂົາບໍ່ຈ່າຍຄ່າໃຫ້ສິນບົນ (ຕົວຢ່າງ ການຂ້າມຊາຍແດນທີ່ຜິດກົດໝາຍ ຫຼື ການສືບຕໍ່ເຮັດວຽກໃນອຸດສາຫະກຳດ້ານເພດ) ຫຼື ອາດຈະມີການບໍລິການດ້ານເພດ. ໃນຖານະທີ່ເປັນເຄື່ອງມືອຳນວຍຄວາມສະດວກ, ການຂົ່ມຂູ່ ຫຼື ນຳໃຊ້ການລົງໂທດ ເປັນໜຶ່ງໃນຕົວຢ່າງວ່າເປັນຂໍ້ໄດ້ປຽບ; ການກັກຂັງຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍ ເປັນການຫຼີກລ້ຽງຄ່າໃຊ້ຈ່າຍ ແລະ ຄວາມພະຍາຍາມທີ່ຈຳເປັນໃນການສົ່ງຜູ້ຖືກເຄາະຮ້າຍກັບຄືນປະເທດຕົ້ນກຳເນີດ ເພື່ອໃຫ້ການໃນຖານະພະຍານ ຕໍ່ກັບຜູ້ຄ້າມະນຸດ.

**ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ມີຄວາມສ່ຽງສູງທີ່ຈະຖືກດຳເນີນຄະດີ ຕໍ່ກັບຄວາມຜິດທີ່ກ່ຽວຂ້ອງກັບຢາເສບຕິດ**: ຜູ້ຕອບ ໄດ້ສົນທະນາກ່ຽວກັບຄວາມສ່ຽງຂອງຜູ້ຖືກເຄາະຮ້າຍທີ່ຈະຖືກດຳເນີນຄະດີ ຕໍ່ກັບຄວາມຜິດທີ່ກ່ຽວຂ້ອງກັບຢາເສບຕິດ, ຕັ້ງແຕ່ຄວາມຜິດເລັກນ້ອຍ ໄປຈົນເຖິງຄວາມຜິດທີ່ຮ້າຍແຮງ ທີ່ມີການລົງໂທດໜັກ. ມີຄວາມກັງວົນກ່ຽວກັບວິທີການຄວາມຮັບຜິດຊອບທີ່ເຂັ້ມງວດ ຕໍ່ກັບຄວາມຜິດກ່ຽວກັບຢາເສບຕິດໃນພາກພື້ນ ແລະ ຜົນກະທົບທີ່ເປັນອັນຕະລາຍຕໍ່ກັບ 'ສົງຄາມຢາເສບຕິດ' ທີ່ມີຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ໃນນີ້ ມີຂໍ້ສັງເກດວ່າ ເຖິງວ່າຜູ້ປະຕິບັດຕົວຈິງແຕ່ລະຄົນ ອາດຈະມີຄວາມຕັ້ງໃຈທີ່ຈະນຳໃຊ້ຫຼັກການບໍ່ລົງໂທດ ແຕ່ມັນອາດຈະເປັນໄປບໍ່ໄດ້ທີ່ຈະໂນ້ມນ້າວພາກສ່ວນຕ່າງໆ ໃນຕະຫຼອດຂະບວນການຍຸຕິທຳ ເພື່ອໃຫ້ເຮັດສິ່ງນີ້ເຊັ່ນດຽວກັນ. ໃນຕົວຈິງແລ້ວ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ກ່ຽວຂ້ອງກັບອາຊະຍາກຳຢາເສບຕິດ ອາດຈະມີຄວາມສ່ຽງທີ່ຮ້າຍແຮງ.

**ການລົງໂທດທາງຮ່າງກາຍ ແລະ ໂທດປະຫານຊີວິດ:** ຜູ້ຖືກເຄາະຮ້າຍອາດຈະພົບກັບການລົງໂທດທີ່ຮ້າຍແຮງຕໍ່ກັບການກະທຳຜິດທາງອາຍາ ທີ່ພວກເຂົາໄດ້ເຮັດໃນເວລາທີ່ຖືກຄ້າມະນຸດ. ການລົງໂທດນີ້ນັບແຕ່ການລົງໂທດທາງດ້ານຮ່າງກາຍ ສຳລັບການກະທຳທີ່ກ່ຽວຂ້ອງກັບອຸດສາຫະກຳທາງເພດ, ໂທດປະຫານຊີວິດ ໃນກໍລະນີທີ່ພວກເຂົາຖືກຊູດຮີດຫຼອກລໍ້ໃນຢາເສບຕິດ. ເຄິ່ງໜຶ່ງຂອງລັດສະມາຊິກອາຊຽນ ໄດ້ນຳໃຊ້ໂທດປະຫານຊີວິດຕໍ່ກັບຄວາມຜິດກ່ຽວກັບຢາເສບຕິດ. ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ກຳລັງປະເຊີນກັບການຖືກປະຫານຊີວິດ ຫຼັງຈາກທີ່ກຳນົດໂທດປະຫານຊີວິດ, ລວມທັງ Mary Jane Veloso, ທີ່ໄດ້ມີການປຶກສາຫາລືກັນໃນກອງປະຊຸມໂຕະມົນ (ເບິ່ງໃນຫ້ອງທີ 5). ຜູ້ຕອບໄດ້ອະທິບາຍວ່າ ກໍລະນີດັ່ງກ່າວ ສະແດງໃຫ້ເຫັນເຖິງຄວາມຈຳເປັນ ທີ່ຕ້ອງມີການນຳໃຊ້ຫຼັກການບໍ່ລົງໂທດ ໃຫ້ເປັນເລື່ອງທີ່ຮີບດ່ວນ.

## ຂໍ້ສະເໜີແນະນຳກ່ຽວກັບການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ

26 ຂໍ້ສະເໜີແນະນຳຕໍ່ໄປນີ້ ໄດ້ຖືກສະເໜີເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດໃນກົດໝາຍ, ນະໂຍບາຍ ແລະ ພາກປະຕິບັດຕົວຈິງ ໃນທຸກຂະບວນການຍຸຕິທຳທາງອາຍາໃນທຸກຂັ້ນ. ຄຳແນະນຳແຕ່ລະຂໍ້ສະ ເໜີແນະນຳ ໄດ້ຢູ່ໃນພາກທີ 3 ຂອງບົດຄົ້ນຄວ້າສະບັບນີ້.

**ການກຳນົດຕົວ ແລະ ການສືບສວນ-ສອບສວນ**

1. ການສ້າງຂີດຄວາມສາມາດໃຫ້ແກ່ເຈົ້າໜ້າທີ່ດ່ານໜ້າ ເພື່ອກຳນົດຕົວຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນກຸ່ມຄົນທີ່ປະເຊີນໜ້າວ່າເປັນຜູ້ກະທຳຜິດ.
2. ເສີມສ້າງຄວາມເຂັ້ມແຂງຕໍ່ກັບຄວາມເຂົ້າໃຈ ວິທີການທີ່ຜູ້ຄ້າມະນຸດນຳໃຊ້ຕໍ່ກັບຜູ້ຖືກເຄາະຮ້າຍ ແລະ ຜົນກະທົບຕໍ່ກັບຜູ້ຖືກເຄາະຮ້າຍ.
3. ຄວາມທ້າທາຍຕໍ່ກັບຄວາມເຂົ້າໃຈຜິດ ແລະ ສົມມຸດຖານກ່ຽວກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ກ່ຽວກັບ 'ອຸດົມຄະຕິ' ຫຼື 'ເໝາະສົມ'
4. ຮັບປະກັນວ່າຜູ້ກະທຳຜິດ ທີ່ອາດຈະເປັນຜູ້ຖືກເຄາຮ້າຍຈາກການຄ້າມະນຸດ ໄດ້ຖືກສົ່ງຕໍ່ເພື່ອກັ່ນກອງຢ່າງມີປະສິດທິພາບ ແລະ ປະສິດທິຜົນ
5. ການສືບສວນ-ສອບສວນຢ່າງຕັ້ງໜ້າ ກ່ຽວກັບຄວາມເຊື່ອມໂຍງລະຫວ່າງ ການກະທຳຜິດຂອງຜູ້ທີ່ອາດຈະເປັນຜູ້ກະທຳຜິດ-ທີ່ເປັນຜູ້ຖືກເຄາະຮ້າຍ ແລະ ພຶດຕິກຳຂອງຜູ້ທີ່ອາດຈະເປັນຜູ້ຄ້າມະນຸດ.



**ການຈັບຕົວ ແລະ ການສົ່ງຟ້ອງ**

6. ຮັບປະກັນວ່າເຈົ້າໜ້າທີ່ດ່ານໜ້າ ມີຄວາມເຂົ້າໃຈຕໍ່ກັບຜົນກະທົບຈາກການຈັບຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ການຕອບໂຕ້ຍຸຕິທຳທາງອາຍາຕໍ່ກັບການຄ້າມະນຸດ
7. ຮັບປະກັນວ່າເຈົ້າໜ້າທີ່ດ່ານໜ້າ ມີຄວາມເຂົ້າໃຈຕໍ່ກັບດຸນພິນິດຂອງເຂົາເຈົ້າ ແລະ ວິທີການທີ່ຈະນຳໃຊ້ດຸນພິນິດດັ່ງກ່າວ.
8. ສ້າງແຮງຈູງໃຈຂອງເຈົ້າໜ້າທີ່ບັງຄັບປະຕິບັດກົດໝາຍ ໃນການນຳໃຊ້ຫຼັກການບໍ່ລົງໂທດ
9. ຮັບປະກັນວ່າ ເຈົ້າໜ້າທີ່ຜູ້ຈັບຕົວມີຄວາມເຂົ້າໃຈຕໍ່ກັບພັນທະຂອງເຂົາເຈົ້າໃນການຈັບຕົວບຸກຄົນ

**ການດຳເນີນຄະດີ**

10. ປັບປຸງກົດໝາຍເພື່ອຫຼຸດຜ່ອນຄວາມສ່ຽງໃນການດຳເນີນຄະດີຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຢ່າງບໍ່ເໝາະສົມ
11. ຮັບປະກັນວ່າ ການຕັດສິນໃດໆ ເພື່ອດຳເນີນຄະດີຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄດ້ຖືກດຳເນີນການພາຍຫຼັງທີ່ໄດ້ມີຂະບວນການກຳນົດຕົວຢ່າງເປັນທາງການເທົ່ານັ້ນ ແລະ ໄດ້ມີການອະທິບາຍໄວ້ຢ່າງຊັດເຈນ
12. ຊີ້ແຈງຄວາມສຳພັນລະຫວ່າງສະຖານະຂອງຜູ້ຖືກເຄາະຮ້າຍ ແລະ ການບໍ່ດຳເນີນຄະດີ
13. ຮັບປະກັນວ່າໄອຍະການເຂົ້າໃຈດຸນພິນິດຂອງເຂົາເຈົ້າ ແລະ ວິທີການນຳໃຊ້ດຸນພິນິດ
14. ຈັດການຝຶກອົບຮົມວຽກງານຕ້ານການຄ້າມະນຸດໃຫ້ແກ່ໄອຍະການ ໂດຍສະເພາະຜູ້ທີ່ຊ່ຽວຊານໃນການດຳເນີນຄະດີຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທົ່ວໄປ
15. ເສີມສ້າງຄວາມເຂົ້າໃຈກ່ຽວກັບຄວາມຍິນຍອມຂອງຜູ້ຖືກເຄາະຮ້າຍ ທີ່ບໍ່ກ່ຽວຂ້ອງກັບການຄ້າມະນຸດ, ໂດຍນຳເອົາຫຼັກການບໍ່ລົງໂທດໄປນຳໃຊ້

**ການປົກປ້ອງຕາມກົດໝາຍ**

16. ຮ່າງ ຫຼື ປັບປຸງກົດໝາຍ ເພື່ອກຳນົດການປົກປ້ອງຕາມກົດໝາຍທີ່ຊັດເຈນ ເພື່ອໃຫ້ມີຜົນຕໍ່ກັບຫຼັກການບໍ່ລົງໂທດ
17. ຈັດຝຶກອົບຮົມ ແລະ ແນະນຳຜູ້ປະຕິບັດຕົວຈິງກ່ຽວກັບວິທີການສ້າງຄວາມເຊື່ອມໂຍງລະຫວ່າງການກະທຳຜິດຂອງຜູ້ຖືກເຄາະຮ້າຍ ແລະ ການຄ້າມະນຸດຂອງເຂົາເຈົ້າ.
18. ຈັດຝຶກອົບຮົມ ແລະ ຄຳແນະນຳໃຫ້ແກ່ຜູ້ປະຕິບັດຕົວຈິງໃນຂະແໜງຍຸຕິທຳທາງອາຍາ ໃນການນຳໃຊ້ການປົກປ້ອງທົ່ວໄປ ສຳລັບຜູ້ຖືກເຄາະຮ້າຍ ທີ່ໄດ້ກະທຳຜິດ ເນື່ອງຈາກຜົນສະທ້ອນໂດຍກົງຈາກການຄ້າມະນຸດ.
19. ຮັບປະກັນວ່າພາລະການພິສູດຫຼັກຖານເປັນຂອງພາກລັດ ບໍ່ແມ່ນຂອງຜູ້ຖືກເຄາະຮ້າຍ



20. ປ້ອງກັນການນຳໃຊ້ຫຼັກການບໍ່ລົງໂທດໃນທາງທີ່ບໍ່ຖືກຕ້ອງ

**ການຕັດສິນ ແລະ ການລົງໂທດ**

21. ເຮັດໃຫ້ສະມາຊິກຂອງຕຸລາການມີຄວາມຮັບຮູ້ຕໍ່ກັບຫຼັກການບໍ່ລົງໂທດ ແລະ ບົດບາດຂອງເຂົາເຈົ້າໃນການນຳໃຊ້ຫຼັກການດັ່ງກ່າວ.
22. ຫຼີກລ້ຽງ ຫຼື ຫຼຸດຜ່ອນໂທດສຳລັບການຕັດສິນລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ
23. ພິຈາລະນາ ການຟື້ນຟູຄວາມຍຸຕິທຳ ແທນທີ່ຈະເປັນແກ້ແຄ້ນທາງຄວາມຍຸຕິທຳສຳລັບຜູ້ກະທຳຜິດ-ທີ່ເປັນຜູ້ຖືກເຄາະຮ້າຍ

24. ປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈາກການຖືກລົງໂທດທາງດ້ານຮ່າງກາຍ ແລະ ໂທດປະຫານຊີວິດ

**ການຢຽວຢາພາຍຫຼັງການຕັດສິນ**

25. ສຶກສາໂອກາດໃນການອອກກົດໝາຍ ເພື່ອລຶບລ້າງປະຫວັດອາຊະຍາກຳຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ
26. ກຳນົດ ແລະ ແກ້ໄຂສິ່ງທ້າທາຍຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ປະເຊີນກັບການລຶບລ້າງຄຳຕັດສິນ

# ພາກສະເໜີ

ຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍ ໄດ້ກຳນົດໄວ້ວ່າ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ບໍ່ຄວນຈະຖືກດຳເນີນຄະດີ ຫຼື ຖືກລົງໂທດຈາກການກະທຳຜິດ ທີ່ພວກເຂົາໄດ້ກະທຳ ທີ່ເປັນຜົນສະທ້ອນມາຈາກການຄ້າມະນຸດ. ຫຼັກການນີ້ ໄດ້ຖືກກຳນົດໄວ້ຢ່າງຊັດເຈນໃນ ສົນທິສັນຍາອາຊຽນວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ປີ2015 ຊຶ່ງໄດ້ຮັບການໃຫ້ສັດຕະຍາບັນໂດຍສິບລັດສະມາຊິກອາຊຽນ. ມາດຕາ 14(7) ຮຽກຮ້ອງໃຫ້ ລັດ ພິຈາລະນາ ບໍ່ໃຫ້ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຮັບຜິດຊອບຕໍ່ກັບການກະທຳຜິດທີ່ພວກເຂົາໄດ້ເຮັດ ທີ່ກ່ຽວຂ້ອງໂດຍກົງທີ່ພວກເຂົາຖືກຄ້າມະນຸດ. ຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍ ບໍ່ໄດ້ໃຫ້ການຄຸ້ມກັນຈາກອາຊະຍາກຳ ທີ່ພວກເຂົາໄດ້ກະທຳ ໂດຍເຈດຕະນາທາງດ້ານອາຍາ.[18] ແທນທີ່ ຫຼັກການດັ່ງກ່າວ ຈະເປັນເຄື່ອງມືເພື່ອຮັບປະກັນວ່າຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈະບໍ່ຖືກຈັບຕົວ, ຕັ້ງຂໍ້ກ່າວຫາ, ກັກຂັງ, ດຳເນີນຄະດີ, ລົງໂທດ ຫຼື ຖືກລົງໂທດຕໍ່ກັບການກະທຳທີ່ຜິດກົດໝາຍ ທີ່ພວກເຂົາອາດຈະມີສ່ວນຮ່ວມ ທີ່ເປັນຜົນສະທ້ອນໂດຍກົງມາຈາກ ການຖືກຄ້າມະນຸດ.[19]

ຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍ ເປັນອົງປະກອບຫຼັກຂອງວິທີການທີ່ອີງໃສ່ສິດທິມະນຸດຕໍ່ກັບການຄ້າມະນຸດ, ຮັບປະ ກັນວ່າສິດທິຂອງຜູ້ຖືກເຄາະຮ້າຍ ໄດ້ຮັບການສະໜັບສະໜູນໃນທົ່ວລະບົບຍຸຕິທຳທາງອາຍາ ລວມທັງຮັບປະກັນການເຂົ້າເຖິງຄວາມຍຸຕິທຳ ແລະ ປົກປ້ອງຜູ້ຖືກເຄາະຮ້າຍຈາກຄວາມບອບຊ້ຳທາງດ້ານຈິດໃຈ ແລະ ຕົກເປັນຜູ້ຖືກເຄາະຮ້າຍຊ້ຳຄືນອີກ.[20] ໃນຄວາມໝາຍນີ້, ຫຼັກການບໍ່ລົງໂທດ ເປັນຫົວໃຈສຳຄັນໃນການແຈ້ງໃຫ້ຮັບຮູ້ກ່ຽວກັບຄວາມບອບຊ້ຳທາງດ້ານຈິດໃຈ ແລະ ວິທີການທີ່ເອົາຜູ້ຖືກເຄາະຮ້າຍເປັນໃຈກາງ. ມັນຍັງເປັນສິ່ງທີ່ສຳຄັນໃນການປະຕິບັດໃນຂະບວນຍຸຕິທຳທາງອາຍາຕໍ່ກັບຜູ້ຄ້າມະນຸດ.[21] ໃນກໍລະນີທີ່ຜູ້ຖືກເຄາະຮ້າຍຖືກຈັບຕົວ ແລະ ຖືກດຳເນີນຄະດີທາງອາຍາ ທີ່ພວກເຂົາໄດ້ກະທຳ ທີ່ເປັນຜົນສະທ້ອນມາຈາກການຖືກຄ້າມະນຸດ, ຄວາມເຊື່ອໃຈຂອງເຂົາເຈົ້າທີ່ມີຕໍ່ອົງການຂອງລັດ ໄດ້ຖືກທຳລາຍລົງ, ເຮັດໃຫ້ພວກເຂົາບໍ່ໃຫ້ການຮ່ວມມືແກ່ອົງການຂອງລັດ.[22] ເຖິງຢ່າງໃດກໍຕາມ, ນີ້ເປັນເຫດຜົນສຳຮອງທີ່ຈະບໍ່ລົງໂທດຜູ້ຖືກເຄາະຮ້າຍ, ເຫດຜົນຫຼັກທີ່ພວກເຂົາຈະບໍ່ຖືກລົງໂທດຍ້ອນພວກເຂົາບໍ່ມີຄວາມຮັບຜິດຊອບທາງອາຍາ.[23]

ຫຼັກການບໍ່ລົງໂທດ ໄດ້ຮັບຄວາມສົນໃຈເພີ່ມຂຶ້ນໃນຊຸມປີຜ່ານມາ. ຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ ໄດ້ໃຫ້ຄວາມໃສ່ໃຈເປັນພິເສດຕໍ່ກັບບັນຫາດັ່ງກ່າວ.[24] ກຸ່ມປະສານງານລະຫວ່າງໜ່ວຍງານເພື່ອຕ້ານການຄ້າມະນຸດ

---

18 *ຄຳອະທິບາຍຕໍ່ກັບ ຂໍ້ສະເໜີແນະນຳຕໍ່ກັບຫຼັກຖານ ແລະ ຄຳແນະນຳກ່ຽວກັບການຄ້າມະນຸດ ແລະ ສິດທິມະນຸດ* (OHCHR), ໜ້າ 133

19 ເບິ່ງບົດຄົ້ນຄວ້າອື່ນ, *ຫຼັກການບໍລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ: ສະບັບຫຍໍ້ ເລກທີ 8* (ກຸ່ມປະສານງານລະຫວ່າງໜ່ວຍງານເພື່ອຕ້ານການຄ້າມະນຸດ, ປີ 2020); *ຂໍ້ສະເໜີແນະນຳດ້ານນະໂຍບາຍ ແລະ ນິຕິກຳ ຕໍ່ກັບການຈັດຕັ້ງປະຕິບັດຂໍກຳນົດ ການບໍລົງໂທດຢ່າງມີປະສິດທິພາບ ຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ"* (ຫ້ອງການ OSCE ຂອງຜູ້ແທນພິເສດ ແລະ ຜູ້ປະສານງານ ເພື່ອຕ້ານການຄ້າມະນຸດ, ວຽນນາ, 2013, ວັກທີ 10; Ryszard Piotrowicz,ມາດຕາ 26, ຂໍ້ກຳນົດການບໍ່ລົງໂທດ, Julia Planitzer and Helmut Sax (eds.) *ຄຳອະທິບາຍກ່ຽວກັບອານຸສັນຍາຂອງສະພາເອີລົບ ວ່າດ້ວຍການຕ້ານການຄ້າມະນຸດ* (Edward Elgar, 2020) ໜ້າທີ 310

20 *ການຄ້າມະນຸດ: ຄຳເຫັນຮ່ວມຂອງສະຫະປະຊາຊາດ ກ່ຽວກັບຄຳສັ່ງ ຂອງສະຫະພາບເອີຣົບ– ວິທີການທີ່ອີງໃສ່ສິດທິມະນຸດ (ອົງການ OHCHR, UNHCR, UNICEF, UNODC, UN Women ແລະ ILO, 2011);* ອົງການສະຫະປະຊາຊາດເພື່ອຕ້ານຢາເສບຕິດ ແລະ ອາຊະຍາກຳ, *ຄຳແນະນຳທາງດ້ານກົດໝາຍຕໍ່ກັບອານຸສັນຍາວ່າດ້ວຍການປ້ອງກັນ, ປາບປາມ ແລະ ລົງໂທດການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, ເພີ່ມເຕີມໃຫ້ແກ່ສົນທິສັນຍາຂອງອົງການສະຫະປະຊາຊາດວ່າດ້ວຍການຕ້ານການຊະຍາກຳຂ້າມຊາດແບບມີການຈັດຕັ້ງ* (ອົງການສະຫະປະຊາຊາດ, ວຽນນາ, 2020) 48

21 ກອງປະຊຸມຂອງອົງການສະຫະປະຊາຊົນຂອງພາຄີ ສົນທິສັນຍາຂອງອົງການສະຫະປະຊາຊາດວ່າດ້ວຍການຕ້ານການຊະຍາກຳຂ້າມຊາດແບບມີການຈັດຕັ້ງ, ຄະນະເຮັດວຽກເພື່ອຕ້ານການຄ້າມະນຸດ, *ການບໍລົງໂທດ ແລະ ບໍ່ດຳເນີນຄະດີຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ: ວິທີທາງບໍລິຫານ ແລະ ຍຸຕິທຳ ສຳລັບຄວາມຜິດທີ່ເກີດຂຶ້ນໃນຂະບວນການຄ້າມະນຸດ,* ເອກະສານຂອງ UN
CTOC/COP/WG.4/2010/4 (ວັນທີ 9 ທັນວາ 2009) 2-3, ວັກທີ 5-6

22 *ບົດລາຍງານຂອງຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, Maria Grazia Giammarinaro,* ວັນທີ 6 ເມສາ 2020, ເອກະສານ UN A/HRC/44/45 ວັກທີ 29.

23 Ryszard Piotrowicz, ມາດຕາ 26, ຂໍ້ກຳນົດຫຼັກການບໍ່ລົງໂທດ ໃນ Julia Planitzer ແລະ Helmut Sax (eds.) *ຂໍ້ສະເໜີແນະນຳຂອງສົນທິສັນຍາຂອງສະພາເອີລົບ ວ່າດ້ວຍການຕ້ານການຄ້າມະນຸດ* (Edward Elgar, 2020) ໜ້າທີ .317

24 *ການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ:* ບົດລາຍງານຂອງຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ *ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, Siobhán Mullaly,* ເອກະສານ UN A/HRC/47/34 (ວັນທີ 17 ພຶດສະພາ 2021); *ຄວາມສຳຄັນຂອງການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ: ພັນທະໃນການປົກປ້ອງຜູ້ຖືກເຄາະຮ້າຍ,* Maria Grazia Giammarinaro, ຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, ອົງການສະຫະປະຊາຊາດ, ເຈນີວາ, ວັນທີ 30 ກໍລະກົດ 2020.

(ICAT) ໄດ້ເຮັດບົດສະຫຼຸບຫຍໍ້ໃນບັນຫາດັ່ງກ່າວ.[25] ອົງການເພື່ອຄວາມໝັ້ນຄົງ ແລະ ການຮ່ວມມືໃນເອີລົບ (OSCE) ໄດ້ເຜີຍແຜ່ບົດຄົ້ນຄວ້າທີ່ສຳຄັນກ່ຽວກັບຫຼັກການບໍ່ລົງໂທດໃນປີ 2013.[26] ຄະນະຊ່ຽວຊານຂອງສະພາເອີລົບເພື່ອຕ້ານການຄ້າມະນຸດ (GRETA) ພິຈາລະນາຫຼັກການບໍ່ລົງໂທດໃນບົດລາຍງານຂອງປະເທດຕົນ ເຊັ່ນດຽວກັບກະຊວງການຕ່າງປະເທດຂອງສະຫະລັດອາເມລິກາ ໃນການລາຍງານການຄ້າມະນຸດປະຈຳປີ. ການຕັດສິນທີ່ສຳຄັນໃນປີ 2021, ສານສິດທິມະນຸດຂອງເອີລົບ ໄດ້ຢືນຢັນວ່າ ລັດຖະບານບໍ່ຄວນລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.[27]

ບົດຄົ້ນຄວ້ານີ້ເປັນບົດຄົ້ນຄວ້າທຳອິດ ເພື່ອແກ້ໄຂການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ໃນລັດສະມາຊິກອາຊຽນ. ມັນໄດ້ສະເໜີໃຫ້ແກ່ຜູ້ສ້າງກົດໝາຍ, ຜູ້ສ້າງນະໂຍບາຍ ແລະ ຜູ້ປະຕິບັດຕົວຈິງໃນຂະບວນຍຸຕິທຳທາງອາຍາ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຖານຄວາມຮູ້ ແລະ ສະໜັບສະໜູນຄວາມພະຍາຍາມຢ່າງຕໍ່ເນື່ອງຂອງເຂົາເຈົ້າ ໃນການປະຕິບັດຫຼັກການດັ່ງກ່າວ ໃນພາກປະຕິບັດຕົວຈິງ. ບົດຄົ້ນຄວ້າ ປະກອບດ້ວຍສາມພາກ.

- ພາກທີ 1 ສະຫຼຸບແຫຼ່ງທີ່ມາຂອງຫຼັກການບໍ່ລົງໂທດໃນກົດໝາຍ ແລະ ນະໂຍບາຍ
- ພາກທີ 2 ກວດສອບວ່າລັດສະມາຊິກອາຊຽນ ມີການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດໃນກົດໝາຍ, ນະໂຍບາຍ ແລະ ພາກປະຕິຕົວຈິງຄືແນວໃດ
- ພາກທີ 3 ສະເໜີຂໍ້ສະເໜີແນະນຳ ແລະ ທິດທາງຕໍ່ກັບການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດຕະຫຼອດຂະບວນການຍຸຕິທຳທາງອາຍາ.

**ວິທີການຄົ້ນຄວ້າ:** ບົດຄົ້ນຄວ້ານີ້ໄດ້ສຶກສາບັນດາເອກະສານ/ບົດຄົ້ນຄວ້າທີ່ມີຢູ່ແລ້ວຈາກພາກພື້ນອາຊຽນ ແລະ ຈາກບ່ອນອື່ນໆ ແລະ ການປຶກສາຫາລືແບບໂຕະມົນ 12 ຄັ້ງ ເຊິ່ງຈັດຂຶ້ນໃນ 6 ປະເທດ (ຟີລິບປິນ, ກຳປູເຈຍ, ຫວຽດນາມ, ສປປ ລາວ, ໄທ ແລະ ອິນໂດເນເຊຍ), ນຳໃຊ້ເຄື່ອງມືການອຳນວຍຄວາມສະດວກ ທີ່ໄດ້ມີການພັດທະນາຂຶ້ນ ເພື່ອຈຸດປະສົງຂອງການຄົ້ນຄວ້າ ແລະ ປັບໃຊ້ໃຫ້ເຂົ້າກັບບໍລິບົດຂອງແຕ່ລະປະເທດ (ເບິ່ງເອກະສານຊ້ອນທ້າຍ 2). ມີຜູ້ເຂົ້າຮ່ວມທັງໝົດ 196 ທ່ານ ທີ່ເຂົ້າຮ່ວມປຶກສາຫາລື, ປະກອບມີຝ່າຍລັດຖະບານ 122 ທ່ານ, ຜູ້ຕາງໜ້າຈາກອົງການຈັດຕັ້ງສາກົນ 74 ທ່ານ. ນອກນັ້ນ ຍັງມີຜູ້ຊ່ຽວຊານສີ່ທ່ານ ທີ່ໄດ້ປະກອບຄຳເຫັນ ທີ່ເປັນລາຍລັກອັກສອນ ຫຼື ຜ່ານການສົນທະນາແບບເລິກເຊິ່ງ. ການຄົ້ນຄວ້ານີ້ຍັງໄດ້ຮັບຜົນປະໂຫຍດຈາກການເຂົ້າຮ່ວມຂອງຜູ້ຂຽນ ໃນກິດຈະກຳທີ່ກ່ຽວຂ້ອງກັບຫຼັກການບໍ່ລົງໂທດ.[28]

**ພາກສ່ວນທີ່ເຂົ້າຮ່ວມ**




**ພາກສ່ວນທີ່ເຂົ້າຮ່ວມ**




---

25 *ການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ: ເອກະສານສະບັບຫຍໍ້ ເລກທີ 8* (ກຸ່ມປະສານງານລະຫວ່າງໜ່ວຍງານເພື່ອຕ້ານການຄ້າມະນຸດ, 2020)

26 *ຂໍ້ສະເໜີແນະນຳດ້ານກົດໝາຍ ແລະ ນະໂຍບາຍຕໍ່ກັບການຈັດຕັ້ງປະຕິບັດການບໍ່ລົງໂທດຢ່າງມີປະສິດທິພາບຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ"* (ຫ້ອງການ OSCE ຂອງຜູ້ຕາງໜ້າພິເສດ ແລະ ຜູ້ປະສານງານສຳລັບການຕ້ານການຄ້າມະນຸດ, ວຽນນາ, 2013)

27 *V.C.L ແລະ A.N. v ສະຫະຣາດຊະອານາຈັກອັງກິດ* [ຄຳຮ້ອງເລກທີ 77587/12 ແລະ 74603/12], ສານສິດທິມະນຸດຂອງເອີລົບ, ວັນທີ 16 ກຸມພາ 2021.

28 ຜູ້ຂຽນໄດ້ເຮັດໜ້າທີ່ໃນຖານະຜູ້ເຂົ້າຮ່ວມ ແລະ ຜູ້ອຳນວຍຄວາມສະດວກ ໃນກອງປະຊຸມປຶກສາຫາລື ທີ່ຈັດຂຶ້ນໃນວັນທີ 4-5 ກຸມພາ 2021 ໂດຍຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ເພື່ອແຈ້ງກ່ຽວກັບບົດລາຍງານຂອງຜູ້ລາຍງານພິເສດ: *ການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ: ບົດລາຍງານຂອງຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, Siobhán Mullaly*, ເອກະສານ UN A/HRC/47/34 (ວັນທີ 17 ພຶດສະພາ 2021). ຜູ້ຂຽນຍັງໄດ້ເຂົ້າຮ່ວມໃນກອງປະຊຸມໂຕະມົນຂອງ ສະພາສິດທິມະນຸດຄັ້ງທີ 47, ວັນທີ 30 ມິຖຸນາ 2021, ເວລາ 13:00 14:30 CET, ຈັດໂດຍ by ICAT ແລະOHCHR, ຫົວຂໍ້ *ການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ: ກອງປະຊຸມໂຕະມົນກ່ຽວກັບການນຳໃຊ້ຫຼັກການບໍ່ລົງໂທດ ສຳລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ* https://aseanactpartnershiphub.com/resources/video-non-punishment-roundtable/. *ຜູ້ຂຽນມີຄວາມຮູ້ຂອບໃຈສຳລັບໂອກາດເຫຼົ່ານີ້ ໃນການຮວບຮວມເອົາຂໍ້ມູນແບບລວງເລິກໃນທົ່ວໂລກ.*

**ຂໍ້ຈຳກັດໃນການຄົ້ນຄວ້າ:** ມີຄວາມຂາດແຄນຢ່າງຫຼວງຫຼາຍກ່ຽວກັບບົດວິໄຈ ແລະ ຫຼັກນິຕິສາດ ໃນການຕີຄວາມໝາຍ ແລະ ການນຳໃຊ້ຫຼັກການບໍ່ລົງໂທດໃນອາຊຽນ. ໂດຍສະເພາະຢ່າງຍິ່ງ ຂໍ້ມູນທີ່ຈຳກັດ ທີ່ໄດ້ຮັບຈາກບັນດາປະເທດທີ່ບໍ່ໄດ້ມີການຈັດກອງປະຊຸມໂຕະມົນເພື່ອປຶກສາຫາລື. ຂໍ້ຈຳກັດໃນການຄົ້ນຄ້ວາໃນພາກປະຕິບັດຫຼາຍຂຶ້ນທີ່ກ່ຽວຂ້ອງກັບນັກຄົ້ນຄວ້າ/ນັກວິໄຈ ທີ່ບໍ່ສາມາດເຮັດດຳເນີນການປຶກສາຫາລືແບບເຊິ່ງໜ້າ ອັນເນື່ອງມາຈາກຂໍ້ຈຳກັດໃນການເດີນທາງ ທີ່ກ່ຽວຂ້ອງກັບການແຜ່ລະບາດຂອງພະຍາດ ເຊິ່ງອາດຈະສົ່ງຜົນກະທົບຕໍ່ກັບຜົນໄດ້ຮັບຂອງການຄົ້ນຄວ້າ. ການປຶກສາຫາລືທາງອອນລາຍ ມັກຈະຂາດການສະແດງຄວາມຄິດເຫັນຢ່າງກົງໄປກົງມາ ແລະ ຄວາມສະດວກໃນການສົນທະນາແບບເຊິ່ງໜ້າ ເຖິງວ່າຈະມີຄວາມກະຕືລືລົ້ນຢ່າງສູງ ແລະ ການມີສ່ວນຮ່ວມຂອງຜູ້ເຂົ້າຮ່ວມໃນທາງອອນລາຍ ແລະ ແບບປະສົມປະສານ ໃນການປຶກສາຫາລື. ຂໍ້ຈຳກັດເພີ່ມເຕີມທີ່ກ່ຽວຂ້ອງກັບລັກສະນະຂອງຫຼັກການບໍ່ລົງໂທດ ແລະ ວິທີການຈັດຕັ້ງປະຕິບັດໃນພາກປະຕິບັດຕົວຈິງແບບປະຈັກຕາ. ບໍ່ມີການເກັບກຳຂໍ້ມູນ ແລະ ບໍ່ມີການບັນທຶກໃນເວລາທີ່ເຈົ້າໜ້າທີ່ສືບສວນ-ສອບສວນ ນຳໃຊ້ດຸນພິນິດຂອງຕົນເອງ ທີ່ຈະ ບໍ່ໃສ່ຂໍ້ຫາ, ຫຼື ໄອຍະການ ນຳໃຊ້ດຸນພິນິດຂອງຕົນ ທີ່ຈະ *ບໍ່* ດຳເນີນຄະດີຕໍ່ກັບເຂົາເຈົ້າ.[29] ບາງທີ່ ນີ້ອາດຈະເປັນຈຸດບອດທີ່ສຳຄັນທີ່ສຸດໃນບົດຄົ້ນຄວ້ານີ້ ທີ່ອາດຈະກ່ຽວຂ້ອງກັບຜູ້ຖືກເຄາະຮ້າຍ ຜູ້ທີ່ຍັງບໍ່ໄດ້ຮັບການກຳນົດຕົວ. ຈຳນວນຜູ້ຖືກເຄາະຮ້າຍທີ່ຖືກກັກຂັງໃນທົ່ວພາກພື້ນອາຊຽນ ແລະ ຈາກບ່ອນອື່ນໆ - ທີ່ຍັງບໍ່ຮູ້ແນ່ນອນ.

**ບັນທຶກກ່ຽວກັບຄຳສັບ:** "ການບໍ່ລົງໂທດ" ສາມາດເຂົ້າໃຈໄດ້ຢ່າງກວ້າງຂວາງ ຫຼື ແຄບ. ໃນກໍລະນີທີ່ມີຄວາມເຂົ້າໃຈຢ່າງກວ້າງຂວາງ, ມັນອາດຈະນຳໃຊ້ຕໍ່ກັບການປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈາກການລົງໂທດທຸກຮູບແບບ ລວມທັງ ການກັກຂັງ ແລະ ການສົ່ງກັບປະເທດ ແລະ ການປະຕິບັດໃນລັກສະນະທີ່ທຽບເທົ່າກັບ "ການລົງໂທດ" ລວມທັງ ໃຫ້ການປົກປ້ອງ ແລະ ການບໍລິການ ການຊ່ວຍເຫຼືອທີ່ບໍ່ຕ້ອງການ.[30] ຈຸດປະສົງຂອງການຄົ້ນຄວ້ານີ້, ການບໍ່ລົງໂທດແມ່ນໄດ້ຮັບການຕີຄວາມແບບແຄບ ທີ່ອ້າງອີງເຖິງການປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຈາກການລົງໂທດໃນຂະບວນຍຸຕິທຳທາງອາຍາ ຜ່ານການຈັບຕົວ, ການດຳເນີນຄະດີ, ການຕັດສິນລົງໂທດ ແລະ ຖືກລົງໂທດ.

**ບັນທຶກກ່ຽວກັບຂອບເຂດ:** ໃນທົ່ວໂລກ, ໂດຍສະເພາະໃນບ່ອນທີ່ກອບການເຮັດວຽກກ່ຽວກັບການປົກປ້ອງສິດທິມະນຸດ, ສັງຄົມ ແລະ ແຮງງານທີ່ບໍ່ພຽງພໍ, ຄວາມບໍ່ຍຸຕິທຳທີ່ຮ້າຍແຮງ ທີ່ເກີດຂຶ້ນໃນນາມຂອງ 'ການຕ້ານການຄ້າມະນຸດ'. ການນຳໃຊ້ກອບວຽກກ່ຽວກັບຄວາມຍຸຕິທຳທາງອາຍາ ເພື່ອຕ້ານການຄ້າມະນຸດ ທີ່ບໍ່ຖືກຕ້ອງ ໄດ້ເຮັດໃຫ້ 'ຜູ້ກະທຳຜິດ' ແລະ 'ຜູ້ຖືກເຄາະຮ້າຍ' ທີ່ບໍ່ແມ່ນທັງຜູ້ກະທຳຜິດ ແລະຜູ້ຖືກເຄາະຮ້າຍ, ສົ່ງຜົນເຮັດໃຫ້ມີການປະນາມຈາກສັງຄົມ ແລະ ການລົງໂທດທາງອາຍາແກ່ແຮງງານເຄື່ອນຍ້າຍ ແລະ ກຸ່ມຄົນຜູ້ດ້ອຍໂອກາດອື່ນໆ. ບາງທີ່ ສິ່ງນີ້ອາດຈະເປັນສິ່ງທີ່ໂດດເດັ່ນທີ່ສຸດ ທີ່ເກີດຈາກການເຂົ້າໄປກວດຄົ້ນສະຖານທີ່ເຮັດວຽກ ເຊິ່ງສາມາດສົ່ງຜົນໃຫ້ມີການກຳນົດຕົວບຸກຄົນ ຫຼື ກຳນົດຕົວຜິດພາດວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ຂັດກັບຄວາມເຕັມໃຈຂອງເຂົາເຈົ້າ, ໃນຂະນະທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ບໍ່ໄດ້ຮັບການກຳນົດຕົວ ໄດ້ຖືກລົງໂທດທາງອາຍາ ໃນສະຖານການເປັນ 'ໂສເພນີ', 'ແຮງງານທີ່ຜິດກົດໝາຍ' ຫຼື ແມ້ແຕ່ເປັນຜູ້ຄ້າມະນຸດ (ເບິ່ງໃນຫ້ອງທີ່ 8).[31] ຄວາມບໍ່ຍຸຕິທຳເຫຼົ່ານີ້ ຈຳເປັນຕ້ອງໄດ້ປະເຊີນໜ້າຢ່າງຮີບດ່ວນ ເຊິ່ງເປັນສ່ວນໜຶ່ງໃນການຕອບໂຕ້ການຕ້ານການຄ້າມະນຸດທີ່ເອົາ

---

29 *ບົດແນະນຳ ກ່ຽວກັບບັນຫາການຕອບໂຕ້ທາງຍຸຕິທຳອາຍາທີ່ແທດເໝາະ ຕໍ່ຜູ້ຖືກເຄາະຮ້າຍ ທີ່ຖືກບັງຄັບໃຫ້ກະທຳຜິດ ຍ້ອນຖືກຄ້າມະນຸດ: ເອກະສານກ່ຽວກັບຄວາມເປັນມາ ກະກຽມ ໂດຍກອງເລຂາ ຂອງໜ່ວຍວິຊາການ ດ້ານການຄ້າມະນຸດ*, ວຽນນາ ວັນທີ 10 ແລະ 11 ກັນຍາ 2020, UN Doc. CTOC/COP/WG.4/2020/2 (15 ມິຖຸນາ 2020), ວັນທີ 38.

30 ບາງຮູບແບບຂອງການ ລົງໂທດ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ເຈັບປວດ ອີງຕາມການສຶກສາຄົ້ນຄວ້າຂອງ McAdam, M.; *ອິດສະຫຼະພາບ ໃນການເຄື່ອນຍ້າຍຂອງບຸກຄົນ ທີ່ຖືກກຳນົດວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ: ການວິໄຈກົດໝາຍ, ນະໂຍບາຍ ແລະ ການປະຕິບັດໃນພາກພື້ນ ASEAN* (ແຜນງານ ASEAN-ACT, 2021)

31 ເບິ່ງທີ ໃນສິ່ງຕ່າງໆ (inter alia) ການຈັດຕັ້ງຜູ້ບໍລິການທາງເພດ ເພື່ອການປ່ຽນແປງ: ການເປັນຕົວແທນຕົນເອງ, ການລະດົມຂອງຊຸມຊົນ ແລະ ເງື່ອນໄຂການເຮັດວຽກ (ພັນທະມິດສາກົນ ເພື່ອຕ້ານການຄ້າມະນຸດໃນແມ່ຍິງ (GAATW, 2018); ບົດແນະນຳຫຍໍ້ ກ່ຽວກັບຄວາມເສຍຫາຍທີ່ຫຼີກລ້ຽງບໍ່ໄດ້ ຂອງກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ແລະ ມາດຕະການ ຕໍ່ ຜູ້ຂາຍບໍລິການທາງເພດ (ຄະນະກຳມະການສາກົນ ດ້ານສິດທິ ຂອງຜູ້ຂາຍບໍລິການທາງເພດ ຢູ່ເອີລົບ, 2019); ຈາກຄວາມສ່ຽງໄປສູ່ການຟື້ນຟູທີ່ເຂັ້ມແຂງ: ການຈັດຕັ້ງການບໍລິການທາງເພດ ເພື່ອຢຸດການຂູດຮີດ (ຄະນະກຳມະການສາກົນ ດ້ານສິດທິ ຂອງຜູ້ຂາຍບໍລິການທາງເພດ ຢູ່ ເອີລົບ, ພຶດສະພາ 2021); ຫຼັກປະກັນຄວາມເສຍຫາຍ: ຜົນກະທົບຂອງມາດຕະການ ເພື່ອຕ້ານການຄ້າມະນຸດຕໍ່ສິດທິມະນຸດໃນທົ່ວໂລກ (GAATW, 2007).

ຜູ້ຖືກເຄາະຮ້າຍເປັນໃຈກາງ ແລະ ຄຳນຶງເຖິງສິດທິມະນຸດ, ແຕ່ສ່ວນໃຫຍ່ຢູ່ນອກເໜືອຂອບເຂດການຄົ້ນຄວ້າ ເຊິ່ງບໍ່ໄດ້ແກ້ໄຂການລົງໂທດບຸກຄົນທີ່ບໍ່ແມ່ນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແຕ່ໄດ້ເບິ່ງເຖິງການລົງໂທດຜູ້ທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຕາມທີ່ກຳນົດໄວ້ໃນມາດຕາ 3 ຂອງ ອານຸສັນຍາວ່າດ້ວຍການປ້ອງກັນ, ປາບປາມ ແລະ ລົງໂທດການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, ອານຸສັນຍາເພີ່ມເຕີມໃຫ້ແກ່ ສົນທິສັນຍາວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ (ອານຸສັນຍາວ່າດ້ວຍການຕ້ານການຄ້າມະນຸດ) ແລະ ມາດຕາ 2 ຂອງ ສົນທິສັນຍາອາຊຽນວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ (ACTIP).

### ຫ້ອງທີ 1: ນິຍາມ "ການຄ້າມະນຸດ"

(ກ) "ການຄ້າມະນຸດ" ໝາຍເຖິງ ການຊອກຫາ, ການນຳສົ່ງ, ການສົ່ງຕໍ່, ການໃຫ້ບ່ອນລີ້ຊ່ອນ ຫລື ຮັບເອົາຄົນ ດ້ວຍການຂົ່ມຂູ່ ຫຼື ໃຊ້ການບັງຄັບ ຫຼື ໃນຮູບແບບຕ່າງໆຂອງການບັງຄັບ, ດ້ວຍການລັກພາໂຕ, ສໍ້ໂກງ, ຕົວະຍົວະຫຼອກລວງ, ການໃຊ້ອຳນາດຂົ່ມຂູ່ ຫຼື ສະຖານະພາບທີ່ອ່ອນແອ ຫຼື ການໃຫ້ ຫຼື ການຮັບເງິນ ຫຼື ຜົນປະໂຫຍດອື່ນໆ ເພື່ອທີ່ຈະໄດ້ຮັບຄວາມຍິນຍອມຈາກບຸກຄົນໃຫ້ຢູ່ພາຍໃຕ້ການຄວບຄຸມ, ເພື່ອຈຸດປະສົງໃນການກົດຂີ່ຂູດຮີດ. ການກົດຂີ່ຂູດຮີດຈະລວມເຖິງ ຢ່າງໜ້ອຍທີ່ສຸດໃນການກົດຂີ່ຂູດຮີດຈາກການຄ້າໂສເພນີຜູ້ອື່ນ ຫຼື ຮູບແບບອື່ນໆຂອງການຂູດຮີດທາງເພດ, ການບັງຄັບໃຊ້ແຮງງານ ຫຼື ການບໍລິການ, ເປັນຂ້າທາດ ຫຼື ປະຕິບັດຄືກັນກັບການເປັນຂ້າທາດ, ຄວາມເປັນທາດ ຫຼື ການຕັດເອົາອະໄວຍະວະອອກ.

(ຂ) ການຍິນຍອມຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນການສະແຫວງຫາຜົນປະໂຫຍດຕາມທີ່ກຳນົດໄວ້ໃນວັກ (ກ) ຂອງມາດຕານີ້ ບໍ່ກ່ຽວຂ້ອງກັບວິທີການໃດໆທີ່ກຳນົດໄວ້ໃນວັກ (ກ).

(ຄ) ການຊອກຫາ, ການນຳສົ່ງ, ການສົ່ງຕໍ່, ການໃຫ້ບ່ອນລີ້ຊ່ອນ ຫຼື ຮັບເອົາເດັກ ເພື່ອຈຸດປະສົງຂອງການຂູດຮີດ ຈະຖືວ່າເປັນ 'ການຄ້າມະນຸດ' ເຖິງຈະບໍ່ມີວິທີການໃດໆ ຕາມທີ່ກຳນົດໄວ້ໃນວັກ (ກ) ຂອງມາດຕານີ້.

(ງ) "ເດັກ ໝາຍເຖິງບຸກຄົນທີ່ມີອາຍຸຕ່ຳກວ່າ ສິບແປດ (18) ປີ.

ມາດຕາ 3 ຂອງ ອານຸສັນຍາວ່າດ້ວຍການປ້ອງກັນ, ປາບປາມ ແລະ ລົງໂທດການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, ອານຸສັນຍາເພີ່ມເຕີມໃຫ້ແກ່ສົນທິສັນຍາວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ (ອານຸສັນຍາວ່າດ້ວຍການຕ້ານການຄ້າມະນຸດ) ແລະ ມາດຕາ 2 ຂອງ ສົນທິສັນຍາອາຊຽນວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ (ACTIP).



# 1

# ແຫຼ່ງຂໍ້ມູນຂອງ ຫຼັກການບໍ່ລົງໂທດ

## 1.1. ນະໂຍບາຍ ແລະ ກົດໝາຍສາກົນ

ຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍ ບໍ່ໄດ້ຖືກກຳນົດໄວ້ຢ່າງຊັດເຈນໃນ ອານຸສັນຍາວ່າດ້ວຍການປ້ອງກັນ, ປາບປາມ ແລະ ລົງໂທດການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ (ອານຸສັນຍາວ່າດ້ວຍການຕ້ານການຄ້າມະນຸດ) ຫຼື ສົນທິສັນຍາວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ (UNTOC). ເຖິງຢ່າງໃດກໍຕາມ ຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄດ້ກາຍເປັນອົງປະກອບຫຼັກຕໍ່ກັບພັນທະໃນການປົກປ້ອງຂອງລັດ.[32]

ຫຼັກການນີ້ ເຫັນວ່າມີການສະແດງອອກຢ່າງຊັດເຈນໃນເຄື່ອງມືທີ່ເປັນກົດໝາຍແບບເບົາ (soft law) ລວມທັງ ຄູ່ມື ແລະ ຫຼັກການກ່ຽວກັບຂໍ້ສະເໜີແນະນຳ ກ່ຽວກັບສິດທິມະນຸດ ແລະ ການຄ້າມະນຸດຂອງຫ້ອງການຂອງຄະນະກຳມາທິການໃຫຍ່ເພື່ອສິດທິມະນຸດ (ເອກະສານ UN E/2002/68/Add.1), ຫຼັກການທີ 7 ເຊິ່ງກຳນົດໄວ້ວ່າ:

> *ຜູ້ຖືກຄ້າມະນຸດ ຕ້ອງບໍ່ຖືກກັກຂັງ, ຕັ້ງຂໍ້ຫາ ຫຼື ດຳເນີນຄະດີ ສຳລັບການເຂົ້າ ຫຼື ອາໄສຢູ່ໃນບັນດາປະເທດທາງຜ່ານ ແລະ ປະເທດປາຍທາງ ຫຼື ການມີສ່ວນຮ່ວມພົວພັນກັບການກະທຳທີ່ຜິດກົດໝາຍ ໃນຂອບເຂດທີ່ການມີສ່ວນຮ່ວມດັ່ງກ່າວ ເປັນຜົນສະທ້ອນໂດຍກົງມາຈາກສະຖານະຂອງເຂົາເຈົ້າໃນຖານະຜູ້ຖືກຄ້າມະນຸດ*

ມີການສົນທະນາທີ່ສຳຄັນໃນລະດັບສາກົນ ທີ່ໃຫ້ຂໍ້ມູນກ່ຽວກັບຄວາມເຂົ້າໃຈ ແລະ ນຳໃຊ້ຫຼັກການບໍ່ລົງໂທດ ລວມທັງ ກຸ່ມຄະນະເຮັດວຽກກ່ຽວກັບການຕ້ານການຄ້າມະນຸດ, ເຊິ່ງສ້າງຕັ້ງຂຶ້ນເພື່ອສະໜັບສະໜູນການຈັດຕັ້ງປະຕິບັດອານຸສັນ ຍາວ່າດ້ວຍການຕ້ານການຄ້າມະນຸດ. ການປະຊຸມຄັ້ງທຳອິດໃນປີ 2009, ຄະນະເຮັດວຽກ ໄດ້ແນະນຳວ່າລັດພາຄີ ຄວນຈະ:

> *(ກ) ສ້າງຂັ້ນຕອນທີ່ເໝາະສົມ ສຳລັບການກຳນົດຕົວຜູ້ຖືກເຄົ້າຮາຍຈາກການຄ້າມະນຸດ ແລະ ໃຫ້ການສະໜັບສະໜູນຜູ້ຖືກເຄາະຮ້າຍດັ່ງກ່າວ ແລະ (ຂ) ພິຈາລະນາ, ໂດຍສອດຄ່ອງກັບກົດໝາຍພາຍໃນຂອງເຂົາເຈົ້າບໍ່ລົງໂທດ ຫຼື ບໍ່ດຳເນີນຄະດີຜູ້ຖືກຄ້າມະນຸດ ສຳລັບການກະທຳຜິດກົດໝາຍ ທີ່ເຂົາເຈົ້າໄດ້ເຮັດ ທີ່ເປັນຜົນສະທ້ອນໂດຍກົງຈາກສະຖານະການທີ່ຖືກຄ້າມະນຸດ ຫຼື ໃນກໍລະນີທີ່ຖືກບັງຄັບກະທຳຜິດ ຕໍ່ກັບການກະທຳທີ່ຜິດກົດໝາຍດັ່ງກ່າວ.*[33]

ໃນປີ 2010 ຄະນະເຮັດວຽກກ່ຽວກັບການຕ້ານການຄ້າມະນຸດ ໄດ້ສະແດງເຖິງ ‘ມຸມມອງ/ທັດສະນະຄະຕິທີ່ແຕກຕ່າງຢ່າງຫຼວງຫຼາຍ’ ເຊັ່ນວ່າ ‘ບໍ່ສາມາດບັນລຸຂໍ້ຕົກລົງວ່າດ້ວຍຂໍ້ສະເໜີແນະນຳເພີ່ມເຕີມກ່ຽວກັບການບໍ່ດຳເນີນຄະດີ ຕາມທີ່ໄດ້ຕົກລົງກັນໄວ້ໃນກອງປະຊຸມຄັ້ງທຳອິດ.’[34] ຜູ້ແທນກອງປະຊຸມບາງທ່ານ ບໍ່ສະໜັບສະໜູນການຕັດສິນໃຈ ທີ່ຈະກ່າວຄືນວ່າ ຂໍ້ສະເໜີແນະນຳເປັນຜົນໄດ້ຮັບຈາກກອງປະຊຸມຄັ້ງສອງ ແຕ່ກໍຍັງມີການຢືນຢັນໃນບົດລາຍງານ ພ້ອມກັບຖະແຫຼງການທີ່ວ່າຫຼັກການບໍ່ລົງໂທດ ກຳນົດໄວ້ຢ່າງຊັດເຈນ ໃນກົດໝາຍພາຍໃນ, ຄຳແນະນຳ,

---

32 *ຫຼັກການບໍ່ລົງໂທດ ແລະ ບໍ່ດຳເນີນຄະດີຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ: ວິທີການທາງດ້ານບໍລິຫານ ແລະ ຍຸຕິທຳ ຕໍ່ກັບຄວາມຜິດໃນຂະບວນການຄ້າມະນຸດ: ເອກະສານພື້ນຖານຄວາມເປັນມາ ກະກຽມໂດຍ ກອງເລຂາ*, ວຽນນາ ວັນທີ 27-29 ມັງກອນ 2010, ເອກະສານ UN. CTOC/COP/WG.4/2010/4 (ວັນທີ 9 ທັນວາ 2010), ແຖວທີ 10.

33 ກອງປະຊຸມຂອງພາຄີຕໍ່ກັບສົນທິສັນຍາ UNTOC, ບົດລາຍງານການປະຊຸມຂອງຄະນະເຮັດວຽກ ເພື່ອຕ້ານການຄ້າມະນຸດ (ວັນທີ 14-15 ເມສາ 2009) ເອກະສານ UN. CTOC/COP/WG.4/2009/2, ວັນທີ 21 ເມສາ 2009, ວັກທີ 12.

34 ກອງປະຊຸມຂອງພາຄີຕໍ່ກັບສົນທິສັນຍາ UNTOC, ບົດລາຍງານການປະຊຸມຂອງຄະນະເຮັດວຽກ ເພື່ອຕ້ານການຄ້າມະນຸດ (ວັນທີ 27-29 ມັງກອນ 2010) ເອກະສານ UN. CTOC/COP/WG.4/2010/6, ວັນທີ 16 ກຸມພາ 2010 ວັກທີ 109. ກອງປະຊຸມຂອງພາຄີຕໍ່ກັບສົນທິສັນຍາ UNTOC, ບົດລາຍງານການປະຊຸມຂອງຄະນະເຮັດວຽກ ເພື່ອຕ້ານການຄ້າມະນຸດ (ວັນທີ 27-29 ມັງກອນ 2010) ເອກະສານ UN. CTOC/COP/WG.4/2010/6, ວັນທີ 16 ກຸມພາ 2010 ວັກທີ 50, 51.

ການແນະນຳ ຫຼື ໃນເຄື່ອງມືອື່ນໆ.[35] ປະເດັນດັ່ງກ່າວນີ້ ບໍ່ໄດ້ຖືກນຳມາກ່າວເຖິງອີກໃນຄະນະເຮັດວຽກກ່ຽວກັບການຕ້ານການຄ້າມະນຸດ ຈົນເຖິງການປະຊຸມສະໄໝທີ່ 8, ເຊິ່ງໄດ້ແນະນຳລັດພາຄີ ຄວນຈະ

> *ພິຈາລະນາ, ໂດຍສອດຄ່ອງກັບກົດໝາຍພາຍໃນ ແລະ ດຸນພິນິດຂອງໄອຍະການ, ບໍ່ລົງໂທດ ຫຼື ດຳເນີນຄະດີຜູ້ຖືກຄ້າມະນຸດ ສຳລັບການກະທຳຜິດກົດໝາຍ ທີ່ເຂົາເຈົ້າໄດ້ເຮັດ ທີ່ເປັນຜົນສະທ້ອນໂດຍກົງຈາກສະຖານະການທີ່ຖືກຄ້າມະນຸດ ຫຼື ໃນກໍລະນີທີ່ຖືກບັງຄັບກະທຳຜິດ ຕໍ່ກັບການກະທຳທີ່ຜິດກົດໝາຍດັ່ງກ່າວ.*[36]

ຂໍ້ສະເໜີແນະນຳ ນຳສະເໜີການອ້າງອີງໃໝ່ ທີ່ກ່າວເຖິງ 'ດຸນພິນິດຂອງໄອຍະການ' ທີ່ບໍ່ໄດ້ມີການກ່າວເຖິງໃນບົດລາຍ ງານກ່ອນໜ້ານີ້. ຂໍ້ສະເໜີແນະນຳ ຍັງລວມເອົາວິທີການທີ່ເປັນຮູບແບບບັງຄັບ ແລະ ສາເຫດ ທີ່ເຊື່ອມໂຍງລະຫວ່າງການກະທຳຜິດຂອງຜູ້ຖືກເຄາະຮ້າຍ ແລະ ການຄ້າມະນຸດຂອງຜູ້ຖືກເຄາະຮ້າຍ (ລາຍລະອຽດຂອງທັງສອງຮູບແບບເບິ່ງທີ່ໜ້າ 33). ຮູບແບບສຸດທ້າຍ ໄດ້ຖືກຍົກຂຶ້ນສະເພາະໃນກອງປະຊຸມສະໄໝທີ່ 9 ເຊິ່ງ ຄະນະເຮັດວຽກກ່ຽວກັບການຕ້ານການຄ້າມະນຸດ ໄດ້ແນະນຳໃຫ້ກອງປະຊຸມຂອງລັດພາຄີຕ່າງໆ ພິຈາລະນາເປັນບູລິມະສິດຕົ້ນຕໍ 'ຄຳແນະນຳກ່ຽວກັບບັນຫາການຕອບໂຕ້ຍຸຕິທຳທາງອາຍາທີ່ເໝາະສົມ ແກ່ຜູ້ຖືກເຄາະຮ້າຍ ຜູ້ທີ່ຖືກບັງຄັບໃຫ້ກະທຳຜິດ ຕໍ່ກັບການກະທຳທີ່ຜິດກົດໝາຍ ທີ່ເປັນຜົນສະທ້ອນຈາກການຖືກຄ້າມະນຸດ.[37]

ຫົວຂໍ້ຫຼັກການບໍ່ລົງໂທດ ເປັນວາລະສະເພາະໃນກອງປະຊຸມສະໄໝທີ 10 ຂອງຄະນະທີ່ເຮັດວຽກກ່ຽວກັບການຕ້ານການຄ້າມະນຸດ ໃນປີ 2020. ຄວາມເປັນມາຂອງເອກະສານ ໄດ້ຖືກກະກຽມໂດຍກອງເລຂາ ເພື່ອສະໜັບສະໜູນໃຫ້ແກ່ການປຶກສາຫາລືເຫຼົ່ານັ້ນ ໄດ້ຕັ້ງຂໍ້ສັງເກດວ່າ ເຖິງແມ່ນວ່າຈະມີຄວາມພະຍາຍາມໃນການປະຕິບັດຫຼັກການດັ່ງກ່າວ, ແຕ່ການປະຕິບັດກໍບໍ່ເທົ່າທຽມກັນ.[38] ໃນລະຫວ່າງການປຶກສາຫາລື, ຜູ້ແທນກອງປະຊຸມຫຼາຍທ່ານ ໄດ້ຊີ້ໃຫ້ເຫັນເຖິງສິ່ງທ້າທາຍໃນການກຳນົດວ່າ ຜູ້ຖືກເຄາະຮ້າຍໄດ້ຖືກບັງຄັບ. ບັນຫາຄວາມບໍ່ສອດຄ່ອງກັນລະຫວ່າງວິທີການຂອງປະເທດ ກໍໄດ້ຖືກຍົກຂຶ້ນມາສົນທະນາ, ເຊັ່ນດຽວກັນກັບຄວາມສຳຄັນໃນການລຶບປະຫວັດອາຊະຍາກຳຂອງຜູ້ຖືກເຄາະຮ້າຍ ເປັນເງື່ອນໄຂເບື້ອງຕົ້ນໃນການຟື້ນຟູ ແລະ ກັບຄືນສູ່ສັງຄົມ ແລະ ຈຳເປັນຕ້ອງນຳໃຊ້ຫຼັກການຈາກການສືບສວນ-ສອບສວນເບື້ອງຕົ້ນ ຕະຫຼອດຂະບວນການຍຸຕິທຳທາງອາຍາ.[39]

ນອກນັ້ນ, ມະຕິກອງປະຊຸມຂອງພາຄີໃນປີ 2020 ຕໍ່ກັບສົນທິສັນຍາວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ, ກຳນົດວ່າ ລັດຄວນຈະ:

> *ພິຈາລະນາ ໂດຍສອດຄ່ອງກັບກົດໝາຍພາຍໃນຂອງຕົນ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈະບໍ່ຖືກລົງໂທດ ຫຼື ດຳເນີນຄະດີທີ່ບໍ່ເໝາະສົມ ສຳລັບການກະທຳຜິດ ທີ່ເປັນຜົນສະທ້ອນໂດຍກົງຈາກການຖືກຄ້າມະນຸດ ແລະ ໃນກໍລະນີທີ່ເໝາະສົມ, ໃຫ້ເຂົ້າເຖິງ*

---

35 ກອງປະຊຸມຂອງພາຄີຕໍ່ກັບສົນທິສັນຍາ UNTOC, *ບົດລາຍງານການປະຊຸມຂອງຄະນະເຮັດວຽກ ເພື່ອຕ້ານການຄ້າມະນຸດ* (ວັນທີ 27-29 ມັງກອນ 2010) ເອກະສານ UN. CTOC/COP/WG.4/2010/6, ວັນທີ 16 ກຸມພາ 2010 ວັກທີ 50, 51.

36 ກອງປະຊຸມຂອງພາຄີຕໍ່ກັບສົນທິສັນຍາ UNTOC, *ບົດລາຍງານການປະຊຸມຂອງຄະນະເຮັດວຽກ ເພື່ອຕ້ານການຄ້າມະນຸດ* (ວັນທີ 18 ກໍລະກົດ 2018) ເອກະສານ UN. CTOC/COP/WG.4/2018/3, ວັນທີ 16 ກຸມພາ 2010 ວັກທີ 7(c).

37 ກອງປະຊຸມຂອງພາຄີຕໍ່ກັບສົນທິສັນຍາ UNTOC, *ບົດລາຍງານການປະຊຸມຂອງຄະນະເຮັດວຽກ ເພື່ອຕ້ານການຄ້າມະນຸດ* (ວັນທີ 9 ຫາ ວັນທີ 11 ກັນຍາ 2019) ເອກະສານ UN. CTOC/COP/WG.4/2018/3, ວັນທີ 25 ກັນຍາ 2019 ວັກທີ 4.

38 *ຄຳແນະນຳວ່າດ້ວຍບັນຫາ ການຕອບໂຕ້ຍຸຕິທຳທາງອາຍາຢ່າງເໝາະສົມຕໍ່ກັບຜູ້ຖືກເຄາະຮ້າຍ ທີ່ຖືກບັງຄັບໃຫ້ກະທຳຜິດທາງອາຍາ ເຊິ່ງເປັນຜົນສະທ້ອນມາຈາກການຖືກຄ້າມະນຸດ: ເອກະສານຄວາມເປັນມາທີ່ກະກຽມໂດຍ ກອງເລຂາຂອງຄະນະສະເພາະທີ່ເຮັດວຽກຕ້ານການຄ້າມະນຸດ,* ວຽນນາ ວັນທີ 10 ແລະ 11 ກັນຍາ 2020. ເອກະສານຂອງ UN. CTOC/COP/WG.4/2020/2 (15 ມິຖຸນາ 2020), ວັກທີ 2.

39 ກອງປະຊຸມຂອງພາຄີຕໍ່ກັບສົນທິສັນຍາ UNTOC, *ບົດລາຍງານການປະຊຸມຂອງຄະນະເຮັດວຽກ ເພື່ອຕ້ານການຄ້າມະນຸດ* (ວັນທີ 10-11 ກັນຍາ 2020) ເອກະສານ UN. CTOC/COP/WG.4/2020/4, ວັນທີ 28 ກັນຍາ 2020 ວັກທີ 8, 9, 11, 12, 13, 15, 16.

> *ການຍຽວຢາ ຖ້າຫາກຖືກການລົງໂທດ ຫຼື ຖືກດຳເນີນຄະດີ ຈາກການກະທຳດັ່ງກ່າວ, ໂດຍດຳເນີນການຢ່າງເໝາະສົມ, ຕາມກົດໝາຍພາຍໃນ, ຄຳແນະນຳ ຫຼື ນະໂຍບາຍທີ່ຍຶດໝັ້ນຫຼັກການເຫຼົ່ານີ້.*[40]

ສະພາຄວາມໝັ້ນຄົງ ຍັງຮຽກຮ້ອງໃຫ້ລັດ ບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.[41] ຄະນະກຳມະການວ່າດ້ວຍການລຶບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ ແລະ ເດັກ ຮຽກຮ້ອງໃຫ້ ນຳໃຊ້ຫຼັກການນີ້ ຕໍ່ກັບຜູ້ຖືກເຄາະຮ້າຍທຸກຄົນ ໂດຍບໍ່ມີການຈຳແນກ.[42] ນອກນັ້ນ, ອີງຕາມມະຕິຂອງສະພາສິດທິມະນຸດ ເລກທີ 44/4, ຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ, ທ່ານ Siobhán Mullally ໄດ້ຍື່ນບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດຕໍ່ກັບກອງປະຊຸມສະໄໝທີ 44 ຂອງຄະນະກຳມະການສິດທິມະນຸດ, ເຊິ່ງໄດ້ອະທິບາຍວ່າ ຫຼັກການບໍ່ລົງໂທດ ເປັນພື້ນຖານທີ່ສຳຄັນຂອງພັນທະຂອງລັດໃນການປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.[43] *ຖະແຫຼງການທາງການເມືອງ ວ່າດ້ວຍການຈັດຕັ້ງປະຕິບັດແຜນງານສາກົນຂອງອົງການສະຫະປະຊາຊາດ ເພື່ອຕ້ານການຄ້າມະນຸດ ປີ 2021* ໄດ້ຢືນຢັນຄືນຕໍ່ກັບຄວາມໝັ້ນໝາຍໃນການປະຕິບັດຫຼັກການບໍ່ລົງໂທດ ໃນການບໍ່ລົງໂທດການຄ້າມະນຸດ ໃນຄວາມຜິດທາງອາຍາ, ທາງແພ່ງ, ທາງບໍລິຫານ ແລະ ການເຂົ້າ-ອອກເມືອງ ທີ່ພວກເຂົາໄດ້ຖືກບັງຄັບໃຫ້ມີສ່ວນຮ່ວມພົວພັນ ທີ່ເປັນຜົນສະທ້ອນໂດຍກົງຈາກການຄ້າມະນຸດເຂົາເຈົ້າ.[44]

ໂດຍສະເພາະ ທີ່ກ່ຽວຂ້ອງກັບການບັງຄັບ ແລະ ແຮງງານບັງຄັບ, ມາດຕາ 4(2) *ຂອງອານຸສັນຍາ ສະບັບປີ 2014 ຕໍ່ກັບສົນທິສັນຍາວ່າດ້ວຍບັງຄັບໃຊ້ແຮງງານ ເລກທີ 29* ເຊິ່ງກຳນົດວ່າ

> *ລັດສະມາຊິກແຕ່ລະລັດ ຄວນຈະ, ໂດຍສອດຄ່ອງກັບຫຼັກການພື້ນຖານຂອງລະບົບກົດໝາຍຂອງຕົນເອງ, ດຳເນີນການ ມາດຕະການທີ່ຈຳເປັນ ເພື່ອຮັບປະກັນວ່າອົງການທີ່ມີສິດອຳນາດ ມີສິດທີ່ຈະບໍ່ດຳເນີນຄະດີ ຫຼື ກຳນົດການລົງໂທດຕໍ່ກັບຜູ້ຖືກເຄາະຮ້າຍທີ່ຖືກບັງຄັບ ຫຼື ແຮງງານພາກບັງຄັບ ສຳລັບການມີສ່ວນຮ່ວມໃນການກະທຳທີ່ຜິດກົດໝາຍ ເຊິ່ງພວກເຂົາຖືກບັງຄັບໃຫ້ກະທຳ ທີ່ເປັນຜົນສະທ້ອນໂດຍກົງຈາກການຖືກບັງຄັບ ຫຼື ແຮງງານພາກບັງຄັບ.*

ພາສາໃນທີ່ນີ້ ໂດຍສະເພາະ ທີ່ອ້າງອີງເຖິງ 'ການກະທຳທີ່ຜິດກົດໝາຍ" ໝາຍຄວາມວ່າ ການປົກປ້ອງ ທີ່ອາດຈະບໍ່ຄວບຄຸມການກະທຳທີ່ບໍ່ສະເພາະເປັນການລະເມີດກົດໝາຍອາຍເທົ່ານັ້ນ ແຕ່ຍັງໝາຍເຖິງ ທາງບໍລິຫານ, ການເຂົ້າ-ອອກເມືອງ ຫຼື ກົດໝາຍອື່ນໆ. ຫຼັກການບໍ່ລົງໂທດ ຍັງສະແດງອອກໃນມາດຕາ 31 ຂອງ ອານຸສັນຍາທີ່ກ່ຽວຂ້ອງກັບສະຖານະພາບຂອງຜູ້ລີ້ໄພ ປີ 1951 ຫ້າມບໍ່ໃຫ້ລົງໂທດທາງອາຍາ ຕໍ່ກັບຜູ້ເຄື່ອນຍ້າຍ ອັນເນື່ອງມາຈາກການເຂົ້າ-ອອກເມືອງ ຫຼື ຢູ່ໃນປະເທດຢ່າງຜິດກົດໝາຍ. ຂໍ້ກຳນົດນີ້ອາດຈະກ່ຽວຂ້ອງກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ຕ້ອງການໃຊ້ສິດໃນການລີ້ໄພ.

---

40 CTOC/COP/2020/L.6/Rev.1, ວັກທີ. 13, ອັກສອນ g

41 ເບິ່ງມະຕິຂອງສະພາຄວາມໝັ້ນຄົງ 2331 (2016); ມະຕິຂອງສະພາຄວາມໝັ້ນຄົງ 2388 (2017).

42 ເບິ່ງ: ຄະນະກຳມະການ ການລຶບລ້າງທຸກຮູບແບບຂອງການຈຳແນກຕໍ່ແມ່ຍິງ, ຂໍ້ສະເໜີແນະນຳທົ່ວໄປ ເລກທີ 38 (2020) ວ່າດ້ວຍການຄ້າແມ່ຍິງ ແລະ ເດັກຍິງ ໃນບໍລິບົດຂອງ ແຮງງານເຄື່ອນຍ້າຍທົ່ວໂລກ, ວັກທີ 98.

43 *ການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍ: ບົດລາຍງານຂອງຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, Siobhán Mullaly,* ເອກະສານຂອງ UN. A/HRC/47/34 (17 ພຶດສະພາ 2021). ຜູ້ຂຽນບົດຄົ້ນຄວ້າສະບັບປັດຈຸບັນນີ້ ແມ່ນຜູ້ເຂົ້າຮ່ວມທີ່ເປັນຜູ້ຊ່ຽວຊານ ແລະ ຜູ້ອຳນວຍຄວາມສະດວກທີ່ກອງປະຊຸມປຶກສາຫາລື ຄັ້ງວັນທີ 4 ແລະ 5 ກຸມພາ 2021 ເພື່ອຮວບຮວມຄຳເຫັນເຂົ້າໃນບົດລາຍງານ.

44 ຖະແຫຼງການທາງດ້ານການເມືອງກ່ຽວກັບການຈັດຕັ້ງປະຕິບັດແຜນປະຕິບັດງານສາກົນຂອງອົງການສະຫະປະຊາຊາດ ເພື່ອຕ້ານການຄ້າມະນຸດ ປີ 2021, ເອກະສານ UN A/76/L.11 ວັນທີ 9 ພະຈິກ 2021 [13].

## ການບໍ່ລົງໂທດເດັກໃນນະໂຍບາຍ ແລະ ກົດໝາຍສາກົນ

*ຄູ່ມື ແລະ ຫຼັກການກ່ຽວກັບຂໍ້ສະເໜີແນະນໍາກ່ຽວກັບສິດທິມະນຸດ ແລະ ການຄ້າມະນຸດຂອງຫ້ອງການຂອງຄະນະກໍາມາທິການໃຫຍ່ເພື່ອສິດທິມະນຸດ* ສະເໜີການປົກປ້ອງຢ່າງຊັດເຈນ ຕໍ່ກັບການລົງໂທດເດັກ ໃນຄໍາແນະນໍາ 8.3 'ຮັບປະກັນວ່າເດັກທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈະບໍ່ຖືກດໍາເນີນການທາງອາຍາ ຫຼື ການລົງໂທດສໍາລັບການກະທໍາຜິດ ທີ່ກ່ຽວຂ້ອງກັບສະຖານະການ ໃນຖານະຜູ້ຖືກຄ້າມະນຸດ.' ຫຼັກການບໍ່ລົງໂທດເດັກ ຍັງໄດ້ຮັບການປົກປ້ອງເພີ່ມເຕີມໂດຍ ຄູ່ມືແນະນໍາຂອງ UNICEF 2.1 ທີ່ກໍານົດໄວ້ວ່າ:

> *ການມີສ່ວນພົວພັນຂອງເດັກ ໃນການກະທໍາທາງອາຍາ ບໍ່ຄວນທໍາລາຍສະຖານະພາບຂອງເຂົາເຈົ້າ ທັງເດັກ ແລະ ຜູ້ຖືກເຄາະຮ້າຍ ແລະ ສິດທີ່ກ່ຽວຂ້ອງ ຕໍ່ກັບການປົກປ້ອງພິເສດຂອງເຂົາເຈົ້າ.*[45]

ນອກນັ້ນ ທີ່ກ່ຽວຂ້ອງກັບການບໍ່ລົງໂທດເດັກ ທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ມາດຕາ 37(b) ຂອງສົນທິສັນຍາວ່າດ້ວຍສິດທິເດັກ (CRC) ທີ່ກໍານົດໄວ້ວ່າ 'ການຈັບຕົວ, ກັກຂັງ ຫຼື ຈໍາຄຸກເດັກ ຈະຕ້ອງເປັນໄປຕາມກົດໝາຍ ແລະ ຕ້ອງນໍາໃຊ້ເປັນມາດຕະການສຸດທ້າຍ ແລະ ເປັນໄລຍະເວລາທີ່ເໝາະສົມ ທີ່ສັ້ນທີ່ສຸດ,'[46] ດ້ວຍເຫດການ, ການລົງໂທດທາງອາຍາຕໍ່ເດັກແມ່ນຂັດຕໍ່ກັບຫຼັກການບໍ່ລົງໂທດ, ຖືເປັນການລະເມີດສົນທິສັນຍາCRC.[47]

ຄະນະກໍາມະການຂອງອົງການສະຫະປະຊາຊາດ ວ່າດ້ວຍສິດທິເດັກ ກໍານົດວ່າໃນການພັດທະນານະໂຍບາຍກ່ຽວກັບເດັກທີ່ບໍ່ມີຄົນເບິ່ງແຍງ ຫຼື ການແຍກເດັກ, ລວມທັງ ເດັກທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, "...ລັດຄວນຮັບປະກັນວ່າເດັກດັ່ງກ່າວ ຈະບໍ່ຖືກລົງໂທດທາງອາຍາ ດ້ວຍເຫດຜົນໃນການເຂົ້າ-ອອກເມືອງ ຫຼື ອາໄສຢູ່ໃນປະເທດແບບຜິດກົດໝາຍ ພຽງຢ່າງດຽວ.'[48] ຂໍ້ສັງເກດມ້ວນທ້າຍຂອງຄະນະກໍາມະການກ່ຽວກັບສົນທິສັນຍາວ່າດ້ວຍສິດທິເດັກ ແລະ ອານຸສັນຍາເພີ່ມເຕີມວ່າດ້ວຍການຂາຍເດັກ ແລະ ພາບລາມົກອານາຈານເດັກ ລວມທັງ ຂໍ້ສະເໜີແນະນໍາທີ່ອອກໂດຍ ຄະນະກໍາມະການ ເນັ້ນຢໍ້າວ່າ ເດັກ ທີ່ຖືກຄ້າມະນຸດ ບໍ່ຄວນຈະຖືກລົງໂທດ.[49] ອົງການ UNICEF ແລະ ສະຫະພາບ ລັດຖະສະພາ ກໍານົດວ່າ ກົດໝາຍຕ້ອງລວມເອົາຂໍ້ກໍານົດສະເພາະ ທີ່ຮັບປະກັນວ່າເດັກ ຈະບໍ່ຖືກໂທດທາງອາຍາ ທີ່ເປັນຜົນສະທ້ອນຈາກການຖືກຄ້າມະນຸດ ໃນອຸດສາຫະກໍາທີ່ຜິດກົດໝາຍ ແລະ ຈະບໍ່ຖືກຈໍາຄຸກ, ກັກຂັງ ຫຼື ລົງໂທດອື່ນ.[50]

---

45 *ຄູ່ມືວ່າດ້ວຍການປົກປ້ອງເດັກທີ່ຖືກເຄາະຮ້າຍຈາກການຄ້າມະນຸດ* (Unicef, 2006) 10

46 ມາດຕາ 37(b) ຂອງສົນທິສັນຍາວ່າດ້ວຍສິດທິເດັກ, ໄດ້ຮັບຮອງເອົາ ແລະ ເປີດໃຫ້ລົງນາມ, ໃຫ້ສັດຕະຍາບັນ ແລະ ເຂົ້າເປັນສະມາຊິກໂດຍ ມະຕິຂອງສະມັດຊາໃຫຍ່ 44/25 ຄັ້ງວັນທີ 20 ພະຈິກ 1989, ມີຜົນບັງຄັບໃຊ້ໃນວັນທີ 2 ກັນຍາ 1990 ໂດຍສອດຄ່ອງຕາມມາດຕາ 49.

47 ໃນກໍລະນີທີ່ເດັກ ເຂົ້າມາພົວພັນໃນລະບົບຍຸຕິທໍາທາງອາຍາ ມາດຕາ 40 ຂອງ CRC ເຂົ້າມາມີບົດບາດສໍາຄັນ ເພື່ອຮັບປະກັນວ່າເດັກ ຜູ້ທີ່ຖືກກ່າວຫາ, ຖືກຫາ ຫຼື ຖືກຮັບຮູ້ມີການລະເມີດກົດໝາຍອາຍາ ໄດ້ຖືກປະຕິບັດທີ່ສອດຄ່ອງກັບອາຍຸຂອງເຂົາເຈົ້າ ແລະ ສອດຄ່ອງກັບສິດຂອງເຂົາເຈົ້າ.

48 ຄໍາເຫັນທົ່ວໄປ CRC ວັກທີ 62.

49 Benyam Dawit Mezmur, ສະມາຊິກຂອງຄະນະກໍາມະການ UN ວ່າດ້ວຍສິດທິເດັກ ແລະ ສາດສະດາຈານດ້ານກົດໝາຍ ສະຖາບັນ Dullah Omar, ມະຫາວິທະຍາໄລ Western Cape ກ່າວເຖິງຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຢູ່ໃນກອງປະຊຸມຄັ້ງທີ 47 ຂອງສະພາສິດທິມະນຸດ ຄັ້ງວັນທີ 30 ມິຖຸນາ 2021, ເວລາ 13:00  14:30 CET. ບັນທຶກໃນເອກະສານຂອງຜູ້ຂຽນ.

50 *ການຕ້ານການຄ້າເດັກ:* ຄູ່ມືສໍາລັບສະມາຊິກລັດຖະສະພາ ຄັ້ງທີ 9 (ສະຫະພາບລະຫວ່າງລັດຖະສະພາ ແລະ UNICEF, 2005) 34

## 1.2. ນະໂຍບາຍ ແລະ ກົດໝາຍໃນພາກພື້ນ

ຫຼັກການບໍ່ລົງໂທດ ພົບເຫັນຢ່າງຊັດເຈນໃນເຄື່ອງມືດ້ານນະໂຍບາຍ ແລະ ກົດໝາຍໃນອາຟຣິກາ, ອາເມລິກາ, ເອີລົບ ແລະ ອາຊີ ລວມທັງ ໃນພາກພື້ນອາຊຽນ.

### ອາຊີ

*ສົນທິສັນຍາອາຊຽນວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກ ປີ 2015,* ທີ່ໄດ້ໃຫ້ສັດຕະຍາບັນຈາກທັງສິບປະເທດອາຊຽນ ເຊິ່ງມີຖະແຫຼງການທີ່ເຂັ້ມແຂງ ຍຶດໝັ້ນຕໍ່ກັບຫຼັກການບໍ່ລົງໂທດ. ມາດຕາ 14(7) ຂອງສົນທິສົນຍາ ໄດ້ກ່າວໄວ້ວ່າ:

> *ແຕ່ລະລັດພາຄີຈະ, ຂຶ້ນກັບກົດໝາຍ, ກົດເກນ, ລະບຽບການ ແລະ ນະໂຍບາຍພາຍໃນຂອງຕົນ ແລະ ຕາມກໍລະນີທີ່ແທດເໝາະຕ່າງໆ, ພິຈາລະນາ ບໍ່ໃຫ້ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຕ້ອງ ຮັບຜິດຊອບທາງອາຍາ ຫຼື ທາງບໍລິຫານ ສໍາລັບການກະທໍາທີ່ຜິດກົດໝາຍ ຂອງເຂົາເຈົ້າ ຖ້າການກະທໍາດັ່ງກ່າວ ແມ່ນພົວພັນໂດຍກົງກັບການກະທໍາຜິດຖານການຄ້າມະນຸດ.*

ຂໍ້ກໍານົດນີ້ ໄດ້ຮັບການຍົກຍ້ອງ ໃນການສະແດງອອກຢ່າງຊັດເຈນຕໍ່ກັບຫຼັກການບໍ່ລົງໂທດ. ອະດີດຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ ໄດ້ເນັ້ນຢໍ້າຂໍ້ຄວາມທີ່ວ່າ 'ບໍ່ຍຶດໝັ້ນ' ຜູ້ຖືກເຄາະຮ້າຍ 'ຮັບຜິດຊອບ', ເຊິ່ງກໍານົດໄວ້ວ່າ ຂໍ້ຄວາມທີ່ຊັດເຈັນດັ່ງກ່າວ ບໍ່ລວມເອົາຄວາມເປັນໄປໄດ້ໃນການຕີຄວາມໝາຍ ການບໍ່ລົງໂທດ ວ່າເປັນການຫຼຸດຜ່ອນການລົງໂທດ.'[51] ຄໍາວ່າ 'ກໍລະນີທີ່ເໝາະສົມ' ແລະ ຂໍ້ຮຽກຮ້ອງທີ່ວ່າ ລັດ 'ພິຈາລະນາ' ໄດ້ຖືກຕີຄວາມໝາຍໄວ້ວ່າ ບໍ່ແມ່ນລັດມີດຸນພິນິດ ວ່າ ຈະນໍາໃຊ້ຫຼັກການບໍ່ລົງໂທດ ຫຼື ບໍ່, ແຕ່ ໃຫ້ມີຄວາມຍືດຍຸ່ນວ່າ ພວກເຂົາຈະບັນລຸຜົນດັ່ງກ່າວ ໄດ້ແນວໃດ ໂດຍສອດຄ່ອງກັບກອບວຽກພາຍໃນຂອງຕົນ.[52]

ເອກະສານເພີ່ມເຕີມ ເພື່ອເຮັດໃຫ້ມີປະສິດທິພາບ ຕໍ່ກັບສົນທິສັນຍາອາຊຽນ ໃນການໃຫ້ຄວາມຊັດເຈນຕໍ່ກັບຫຼັກການ. *ແຜນປະຕິບັດງານອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ* ໄດ້ກໍານົດໄວ້ໃນ ວັກ B(d) ວ່າລັດ:

> *ອີງຕາມກົດໝາຍ, ກົດເກນ, ລະບຽບການ ແລະ ນະໂຍບາຍພາຍໃນຂອງຕົນ ແລະ ຕາມກໍລະນີທີ່ແທດເໝາະຕ່າງໆ, ພິຈາລະນາ ບໍ່ໃຫ້ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຕ້ອງ ຮັບຜິດຊອບທາງອາຍາ ຫຼື ທາງບໍລິຫານ ສໍາລັບການກະທໍາທີ່ຜິດກົດໝາຍ ຂອງເຂົາເຈົ້າ ຖ້າ ການກະທໍາດັ່ງກ່າວ ແມ່ນພົວພັນໂດຍກົງກັບການກະທໍາຜິດຖານການຄ້າມະນຸດ.*

ຄະນະກໍາມາທິການອາຊຽນວ່າດ້ວຍການສົ່ງເສີມ ແລະ ປົກປ້ອງສິດທິແມ່ຍິງ ແລະ ເດັກນ້ອຍ (ACWC) *ຄໍາແນະນໍາໃນການເຮັດວຽກກັບແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໂດຍເອົາໃຈໃສ່ບົດບາດຍິງຊາຍ* ໄດ້ກໍານົດໄວ້ (ໃນພາກ III 3.6.1) ວ່າ:

---

51 *ຄວາມສໍາຄັນຂອງການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ: ພັນທະໃນການປົກປ້ອງຜູ້ຖືກເຄາະຮ້າຍ,* Maria Grazia Giammarinaro, ຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກ, ອົງການສະຫະຊາຊາດ, ເຈນີວາ, ວັນທີ 10 ກໍລະກົດ 2020, 5 ທີ່ [14]

52 ເບິ່ງທີ່ ບໍລິບົດຂອງຫຼັກການບໍ່ລົງໂທດໃນສົນທິສັນຍາຂອງສະພາເອີລົບວ່າດ້ວຍການຕ້ານການຄ້າມະນຸດ, Ryszard Piotrowicz, ມາດຕາ 26, ຂໍ້ກໍານົດການບໍ່ລົງໂທດ ໃນ Julia Planitzer ແລະ Helmut Sax (eds.). ຄໍາອະທິບາຍກ່ຽວກັບອານຸສັນຍາຂອງສະພາເອີລົບ ວ່າດ້ວຍການຕ້ານການຄ້າມະນຸດ (Edward Elgar, 2020) ໜ້າທີ 317

*ຜູ້ຖືກເຄາະຮ້າຍ ບໍ່ຄວນຈະຖືກກັກຂັງ, ຕັ້ງຂໍ້ຫາ ຫຼື ດຳເນີນຄະດີທາງອາຍາ ທີ່ພວກເຂົາໄດ້ກະທຳ ອັນເປັນ ທີ່ເປັນຜົນໂດຍກົງ ແລະ ທັນທີ ຈາກການຖືກຄ້າມະນຸດ.*

*ຄູ່ມືແນະນຳຂອງອາຊຽນສຳລັບຜູ້ປະຕິບັດຕົວຈິງ ໃນການຕອບໂຕ້ດ້ານຍຸຕິທຳ ທາງອາຍາຕໍ່ກັບການຄ້າມະນຸດ* (2007) ໄດ້ກຳນົດໄວ້ໃນພາກ 1, C2 ວ່າ:

*ໃນຂອບເຂດທີ່ເປັນໄປໄດ້, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ບໍ່ຄວນຈະຖືກຕັ້ງຂໍ້ຫາ ຫຼື ດຳເນີນຄະດີ ທີ່ກ່ຽວຂ້ອງກັບອາຊະຍາກຳ ທີ່ພວກເຂົາໄດ້ກະທຳ ທີ່ເປັນຜົນສະທ້ອນໂດຍກົງຈາກສະພາບ ໃນຖານະຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.*

**ຫ້ອງທີ 2: ບົດບັນທຶກຄວາມເຂົ້າໃຈສອງຝ່າຍລະຫວ່າງ ລັດສະມາຊິກອາຊຽນ**

ມີຂໍ້ຕົກລົງສອງຝ່າຍຫຼາຍສະບັບ ລວມທັງ ບົດບັນທຶກຄວາມເຂົ້າໃຈ (MOU) ລະຫວ່າງລັດສະມາຊິກອາຊຽນ ເຊິ່ງລວມທັງຂໍ້ກຳນົດ ຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ບາງກໍລະນີໃຊ້ສະເພາະກັບຂອບເຂດຈຳກັດຂອງຄວາມຜິດ, ຫຼື ສະເພາະຜູ້ຖືກເຄາະຮ້າຍບາງຄົນ ຫຼື ບໍ່ແມ່ນຄົນອື່ນໆ ແລະ ມັກຈະບໍ່ລວມເອົາຜູ້ຊາຍທີ່ເປັນຜູ້ໃຫຍ່ແລ້ວ.

| **ຄູ່ພາຄີ ສົນທິສັນຍາສອງຝ່າຍ, ປີ** | **ຂໍ້ຈຳກັດ ໃນຫຼັກການບໍ່ລົງໂທດ** |
|---|---|
| ກຳປູເຈຍ ແລະ ຫວຽດນາມ (2005) | ນຳໃຊ້ເພາະແມ່ຍິງ ແລະ ເດັກນ້ອຍເທົ່ານັ້ນ |
| ໄທ ແລະ ຫວຽດນາມ (2008) | ນຳໃຊ້ເພາະແມ່ຍິງ ແລະ ເດັກນ້ອຍເທົ່ານັ້ນ |
| ມຽນມາ ແລະ ໄທ (2009) | |
| ມຽນມາ ແລະ ຈີນ (2009) | |
| ລາວ ແລະ ຫວຽດນາມ (2010) | |
| ລາວ ແລະ ຈີນ (2014) | ນຳໃຊ້ສະເພາະການເຂົ້າ-ອອກເມືອງ ຢ່າງຜິດກົດໝາຍ ຫຼື ຄວາມຜິດອື່ນໆທີ່ເກີດຂຶ້ນໂດຍກົງຈາກການຄ້າມະນຸດ. |
| ກຳປູເຈຍ ແລະ ໄທ (2014) | ນຳໃຊ້ເພາະແມ່ຍິງ ແລະ ເດັກນ້ອຍເທົ່ານັ້ນ |
| ລາວ ແລະ ໄທ (2017) | ບໍ່ໄດ້ກຳນົດການບໍ່ລົງໂທດສະເພາະເຈາະຈົງ ແຕ່ກ່າວເຖິງຄວາມຍຸຕິທຳ ແລະ ການປົກປ້ອງເພີ່ມເຕີມຈາກການເປັນຜູ້ຖືກເຄາະຮ້າຍ ໃນຂະບວນການດຳເນີນຄະດີ |
| ລາວ ແລະ ຫວຽດນາມ (2020) | ນຳໃຊ້ສະເພາະການເຂົ້າ-ອອກເມືອງ ຢ່າງຜິດກົດໝາຍ ແລະ ຄວາມຜິດທີ່ກ່ຽວຂ້ອງເທົ່ານັ້ນ. |

ໃນລະດັບອະນຸພາກພື້ນ, ໂຄງການລິເລີ່ມການປະສານງານ ລະດັບລັດຖະມົນຕີເພື່ອຕ້ານການຄ້າມະນຸດ ລຸ່ມແມ່ນ້ຳ

ຂອງ (COMMIT) ເຊິ່ງປະກອບດ້ວຍ ປະເທດກຳປູເຈຍ, ຈີນ, ສປປ ລາວ, ມຽນມາ, ໄທ ແລະ ຫວຽດນາມ. *ບົດບັນທຶກຄວາມເຂົ້າໃຈຂອງ COMMIT ວ່າດ້ວຍການຮ່ວມມືເພື່ອຕ້ານການຄ້າມະນຸດ ໃນອານຸພາກພື້ນລຸ່ມແມ່ນ້ຳຂອງ* ໄດ້ລົງນາມໃນພາກທີ 16 ເພື່ອຮັບປະກັນວ່າຜູ້ຖືກເຄາະຮ້າຍທີ່ໄດ້ຮັບການກຳນົດຕົວ ໃນຖານະຜູ້ຖືກເຄາະຮ້າຍນັ້ນ ຈະບໍ່ຖືກກັກຂັງໃນສະຖານທີ່ເຂົ້າ-ອອກເມືອງ ໂດຍເຈົ້າໜ້າທີ່ບັງຄັບປະຕິບັດກົດໝາຍ.’ [53]

*ຄູ່ມືແນະນຳຂອງ COMMIT ວ່າດ້ວຍການກຳນົດຕົວຜູ້ຖືກເຄາະຮ້າຍ ແລະ ກົນໄກການສົ່ງຕໍ່: ຄຳແນະນຳທົ່ວໄປ ໃນອານຸພາກພື້ນແມ່ນ້ຳຂອງ* (2016), ກຳນົດໄວ້ວ່າ:

> *ໃນສະພາບການໃດໜຶ່ງ, ຜູ້ຖືກເຄາະຮ້າຍຈະບໍ່ຖືກດຳເນີນຄະດີ ສຳລັບການລະເມີດກົດໝາຍການເຂົ້າ-ອອກເມືອງ ຫຼື ການກະທຳໃດໜຶ່ງ ທີ່ພວກເຂົາໄດ້ມີສ່ວນຮ່ວມ ຊຶ່ງເປັນຜົນສະທ້ອນໂດຍກົງມາຈາກສະຖານະການຂອງພວກເຂົາ ໃນຖານະທີ່ຖືກຄ້າມະນຸດ; ຫຼື ຖືກກັກຂັງ.*

*ສົນທິສັນຍາວ່າດ້ວຍການປ້ອງກັນ ແລະ ຕ້ານການຄ້າແມ່ຍິງ ແລະ ເດັກນ້ອຍ ເພື່ອການຄ້າປະເວນີ* ຂອງສະມາຄົມອາຊີໃຕ້ ເພື່ອການຮ່ວມມືລະດັບພາກພື້ນ (SAARC) ຍັງບໍ່ມີປະຕິກິລິຍາໃດໆຕໍ່ກັບຫຼັກການບໍ່ລົງໂທດ.

## ອາຟຣິກາ

ການລິເລີ່ມຂອງຄະນະກຳມາທິການ ສະຫະພາບອາຟຣິກາເພື່ອຕ້ານການຄ້າມະນຸດ (AU.COMMIT) ໄດ້ບັນລຸ *ແຜນປະຕິບັດງານຂອງວາກາດູກູ (Ouagadougou) ເພື່ອຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ເຊິ່ງໄດ້ຮັບການຮັບຮອງຈາກກອງປະຊຸມລະດັບລັດຖະມົນຕີວ່າດ້ວຍການເຄື່ອນຍ້າຍແຮງງານ ແລະ ການພັດທະນາ* (ວັນທີ 22-23 ພະຈິກ 2006) ທີ່ຮຽກຮ້ອງໃຫ້ລັດ ‘ນຳໃຊ້ມາດຕະການສະເພາະ ເພື່ອຫຼີກລ້ຽງການລົງໂທດທາງອາຍາແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.’ ໃນລະດັບອະນຸພາກພື້ນ, *ແຜນຍຸດທະສາດ 10 ເພື່ອຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ* ຂອງຊຸມຊົນພັດທະນາອາຟຣິກາໃຕ້ (SADC) ກຳນົດໄວ້ຢ່າງຊັດເຈນໃນຂໍ້ 3.1.6 ວ່າ ‘ຜູ້ຖືກເຄາະຮ້າຍບໍ່ຄວນຖືກລົງໂທດທາງອາຍາ ສຳລັບການກະທຳ ທີ່ພວກເຂົາໄດ້ມີສ່ວນຮ່ວມພົວພັນ ເຊິ່ງເປັນຜົນສະທ້ອນໂດຍກົງມາຈາກສະຖານະການຂອງເຂົາເຈົ້າ ໃນຖານະຜູ້ຖືກເຄາະຮ້າຍ.’ ບໍ່ມີການກຳນົດສະເພາະເຈາະຈົງກ່ຽວກັບການປະຕິບັດຫຼັກການບໍ່ລົງໂທດໃນ ອານຸພາກພື້ນອາຟຣິກາຕາເວັນອອກ ໃນຖະແຫຼງການ ECOWAS (2001) ແລະ *ແຜນປະຕິບັດງານເພື່ອຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ* (2002-2003) ນອກເໜືອຈາກການປົກປ້ອງຜູ້ຖືກເຄາະຮ້າຍຈາກການຕົກເປັນຜູ້ຖືກເຄາະຮ້າຍເພີ່ມເຕີມອີກ.

53 COMMIT ບົດບັນທຶກຄວາມເຂົ້າໃຈກ່ຽວກັບການຮ່ວມມືເພື່ອຕ້ານການຄ້າມະນຸດໃນພາກພື້ນລຸ່ມແມ່ນ້ຳຂ້ອງ, ໄດ້ລົງນາມໃນວັນທີ 29 ຕຸລາ 2004 ໂດຍຜູ້ຕາງໜ້າຂອງລັດຖະບານຂອງຣາຊະອານາຈັກກຳປູເຈນ, ສາທາລະນະລັດປະຊາຊົນຈີນ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສະຫະພາບມຽນມາ, ຣາຊະອານາຈັກໄທ, ແລະ ສັງຄົມນິຍົມຫວຽດນາມ

## ອາເມລິກາ

ອົງການຈັດຕັ້ງສາກົນຂອງລັດອາເມລິກາ (OAS) ຮັບຮູ້ຫຼັກການບໍ່ລົງໂທດໃນກອງປະຊຸມຄັ້ງທໍາອິດຂອງໜ່ວຍງານລະດັບຊາດເພື່ອຕ້ານການຄ້າມະນຸດ. ໃນບົດສະຫຼຸບ ແລະ ຂໍ້ສະເໜີແນະນໍາ, ໜ່ວຍງານແຫ່ງຊາດ ໄດ້ຮຽກຮ້ອງໃຫ້ລັດສະມາຊິກ ຮັບປະກັນວ່າຜູ້ຖືກເຄາະຮ້າຍ ຈະບໍ່ຖືກດໍາເນີນຄະດີ ຈາກການເຂົ້າຮ່ວມໃນການກະທໍາ ທີ່ຜິດກົດໝາຍ ທີ່ເປັນຜົນໂດຍກົງມາຈາກການຖືກຄ້າມະນຸດ.[54] ບົດສະຫຼຸບ ແລະ ຂໍ້ສະເໜີແນະນໍາດັ່ງກ່າວ ໄດ້ຖືກຢືນຢັນໃນກອງປະຊຸມຄັ້ງທີສອງ ວັນທີ 25-27 ປີ 2009. ນອກນັ້ນ, ຂໍ້ມູນຈາກຄະນະປະຕິບັດງານດ້ານວິຊາການກ່ຽວກັບການດໍາເນີນຄະດີອາຍາ ການຄ້າມະນຸດ, ການບໍລິຫານດ້ານຍຸຕິທໍາ ແລະ ຍຸດທະສາດໃນການຮ່ວມມືສາກົນ ແລະ ການສ້າງຄວາມເຂັ້ມແຂງໃນລະດັບສະຖາບັນ, ສົ່ງຜົນໃຫ້ບົດສະຫຼຸບຂອງຂໍ້ສະເໜີແນະນໍາ ເພື່ອຫຼີກລ້ຽງການກັກຂັງ, ການດໍາເນີນຄະດີ ແລະ ການລົງໂທດຜູ້ຖືກເຄາະຮ້າຍ "ໃນຂອບເຂດຂອງການມີສ່ວນຮ່ວມດັ່ງກ່າວ ທີ່ເປັນຜົນສະທ້ອນມາຈາກການເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ໃນຂອບເຂດທີ່ຜູ້ຖືກເຄາະຮ້າຍ ຖືກບັງຄັບໃຫ້ມີສ່ວນຮ່ວມພົວພັນໃນການກະທໍາຜິດດັ່ງກ່າວ."[55] ໃນກອງປະຊຸມຄັ້ງທີ່ສາມ, ໄດ້ຂໍ້ສະຫຼຸບວ່າບາດກ້າວຕ່າງໆແມ່ນມີຄວາມຈໍາເປັນເຖິງຂັ້ນຕອນການສືບສວນ-ສອບສວນຂອງຝ່າຍຕຸລາການ, ເພື່ອຮັບປະກັນວ່າຜູ້ຖືກຮ້າຍ "ຈະບໍ່ຖືກດໍາເນີນຄະດີອາຍາ ຫຼື ເປັນຜູ້ຖືກເຄາະຮ້າຍຊໍ້າຄືນອີກ ແລະ ຕ້ອງຄໍານຶງວິທີການທີ່ອີງໃສ່ສິດທິມະນຸດຕະຫຼອດເວລາ ຄໍານຶງເຖິງຄວາມອ່ອນໄຫວໃນດ້ານຕ່າງໆ ໃນດ້ານເພດ, ຮຸ່ນຄົນ/ຍຸກສະໄໝ, ຊົນເຜົ່າ, ເຊື້ອຊາດ, ລັດທິນິຍົມດ້ານເພດ ແລະ ທັກສະ."[56] ໃນກອງປະຊຸມຄັ້ງທີສີ່ຂອງໜ່ວຍງານແຫ່ງຊາດ ເພື່ອຕ້ານການຄ້າມະນຸດ, ອົງການຈັດຕັ້ງສາກົນຂອງ OAS ໄດ້ຮັບຮອງເອົາ *ຖະແຫຼງການລະຫວ່າງໜ່ວຍງານຂອງອາເມລິກາ ວ່າດ້ວຍການຕ້ານການຄ້າມະນຸດ* ຫຼື ຖະແຫຼງການບຣາສີເລຍ (Brasilia) ທີ່ຖະແຫຼງເຖິງຄວາມສໍາຄັນຂອງ 'ວິທີການທີ່ບໍ່ມີການປ່ຽນແປງຢ່າງແນ່ນອນ ໃນການເຄົາລົບສິດທິ ແລະ ປົກປ້ອງສິດທິມະນຸດຂອງຜູ້ຖືກເຄາະຮ້າຍ.'[57]

---

54 ກອງປະຊຸມຄັ້ງທໍາອິດຂອງເຈົ້າໜ້າທີ່ລະດັບຊາດວ່າດ້ວຍການຕ້ານການຄ້າມະນຸດ, Porlamar, ເກາະ Margarita, ສາທາລະນະລັດ ໂບລິວາຣຽນຂອງເວເນສຊູເອລາ - ວັນທີ 14 ຫາ 17 ມີນາ 2006, ບົດສະຫຼຸບ ແລະ ຂໍ້ສະເໜີແນະນໍາ RTP/doc.16/06 rev. 1 corr. ວັນທີ 26 ເມສາ 2016, ຫົວຂໍ້ທີ IV ການປົກປ້ອງ ແລະ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ຈຸດທີ 7.

55 ກອງປະຊຸມຄັ້ງທີສອງຂອງເຈົ້າໜ້າທີ່ລະດັບຊາດວ່າດ້ວຍການຕ້ານການຄ້າມະນຸດ, Buenos Aires, ອາເຈນຕິນາ, ວັນທີ 25-27 ມີນາ 2009, ບົດສະຫຼຸບ ແລະ ຂໍ້ສະເໜີແນະນໍາ RTP-II/doc.5/09 rev. 10, ວັນທີ 18 ກັນຍາ 2009, ຈຸດທີ 21.

56 ກອງປະຊຸມຄັ້ງທີສາມຂອງເຈົ້າໜ້າທີ່ລະດັບຊາດວ່າດ້ວຍການຕ້ານການຄ້າມະນຸດ, ເມືອງ ກົວເຕມາລາ, ກົວເຕມາລາ ວັນທີ 15-16 ຕຸລາ 2012, ບົດສະຫຼຸບ RTP-III/doc.7/12, ວັນທີ 16 ຕຸລາ 2012, ຈຸດທີ 4c.

57 ຖະແຫຼງການຂອງອົງການລະຫວ່າງໜ່ວຍງານຂອງອາເມລິກາ ເພື່ອຕ້ານການຄ້າມະນຸດ, ຖະແຫຼງການຂອງບຣາສີເລຍ, ກອງປະຊຸມຄັ້ງທີສີ່ຂອງເຈົ້າໜ້າທີ່ລະດັບຊາດວ່າດ້ວຍການຕ້ານການຄ້າມະນຸດ, ບຣາສີເລຍ, ບຣາຊິວ, ວັນທີ 5 ທັນວາ 2014, RTP-IV/doc.5/14 rev. 1 ວັກທີ 4.

## ຫ້ອງທີ 3: ຫຼັກການບໍ່ລົງໂທດ ໃນບົດລາຍງານການຄ້າມະນຸດຂອງກະຊວງການຕ່າງປະເທດ ສະຫະລັດອາເມລິກາ

ກົດໝາຍພາຍໃນປະເທດຂອງສະຫະລັດອາເມລິກາ ມີຄວາມສຳຄັນຢ່າງຫຼວງຫຼາຍວ່າ ຫຼັກການບໍ່ລົງໂທດ ມີຄວາມເຂົ້າໃຈແນວໃດ ແລະ ຫຼັກການດັ່ງກ່າວຖືກນຳໃຊ້ທົ່ວໂລກ. 'ມາດຕະຖານຂັ້ນຕ່ຳ ສຳລັບການລຶບລ້າງການຄ້າມະນຸດ' ກຳນົດໄວ້ໃນກົດໝາຍວ່າດ້ວຍການປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຂອງປະເທດອາເມລິກາ ປີ 2002, ກຳນົດເງື່ອນໄຂວ່າລັດຖະບານທັງໝົດຈະຖືກປະເມີນ ເພື່ອຈຸດປະສົງຂອງການລາຍງານການຄ້າມະນຸດ ທີ່ອອກບົດລາຍງານໂດຍກະຊວງການຕ່າງປະເທດຂອງສະຫະລັດອາເມລິກາ.[58] ໂດຍສະເພາະທີ່ກ່ຽວຂ້ອງກັບຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍ, ເຄື່ອງ ໝາຍອັນທີ່ສອງກ່ຽວກັບ 'ຄວາມພະຍາຍາມທີ່ຈິງຈັງ ແລະ ຍືນຍົງ' ທີ່ນຳໃຊ້ໃນບົດລາຍງານ ທີ່ກ່ຽວຂ້ອງກັບການບໍ່ລົງໂທດ ບໍ່ວ່າລັດຖະບານຂອງປະເທດຈະ 'ຮັບປະກັນວ່າຜູ້ຖືກເຄາະຮ້າຍ ຈະບໍ່ຖືກຈຳຄຸກ, ປັບໃໝ ຫຼື ລົງໂທດອື່ນໆທາງອາຍາຢ່າງບໍ່ເໝາະສົມ ສຳລັບການກະທຳ ທີ່ເປັນຜົນະສະທ້ອນຈາກການຖືກຄ້າມະນຸດ ພຽງແຕ່ຢ່າງດຽວ, ລວມທັງ ໂດຍການ ການສະໜອງການຝຶກອົບຮົມໃຫ້ແກ່ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ແລະ ເຈົ້າໜ້າທີ່ເຂົ້າ-ອອກເມືອງ ກ່ຽວກັບການກຳນົດຕົວ ແລະ ການປະຕິບັດຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍນຳໃຊ້ວິທີການ ທີ່ສຸມໃສ່ຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍ'[59]

## ເອີລົບ

*ແຜນປະຕິບັດງານ ເພື່ອຕ້ານການຄ້າມະນຸດ* ຂອງອົງການເພື່ອຄວາມໝັ້ນຄົງ ແລະ ການຮ່ວມມືໃນເອີລົບ (OSCE) ໄດ້ແນະນຳວ່າ 'ຮັບປະກັນວ່າຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈະບໍ່ຖືກດຳເນີນຄະດີອາຍາ ທີ່ເປັນຜົນສະທ້ອນໂດຍກົງຈາກການຖືກຄ້າມະນຸດ' (ມະຕິ 557/Rev.1).

ມາດຕາ 26 ຂອງສົນທິສັນຍາສະພາເອີລົບວ່າດ້ວຍການຕ້ານການຄ້າມະນຸດ ປີ 2005 ໄດ້ກຳນົດໄວ້ວ່າ:

> *ແຕ່ລະລັດພາຄີ ຈະ, ໂດຍສອດຄ່ອງກັບຫຼັກການພື້ນຖານຂອງລະບົບກົດໝາຍປະເທດຕົນ, ກຳນົດຄວາມເປັນໄປໄດ້ທີ່ຈະບໍ່ລົງໂທດທາງອາຍາແກ່ຜູ້ຖືກເຄາະຮ້າຍ ທີ່ມີສ່ວນຮ່ວມພົວພັນໃນກິດຈະກຳທີ່ຜິດກົດໝາຍ, ໃນຂອບເຂດທີ່ເຂົາເຈົ້າຖືກບັງຄັບໃຫ້ກະທຳນັ້ນ.*

ຄຳວ່າ 'ຈັດໃຫ້ມີຄວາມເປັນໄປໄດ້' ໄດ້ຖືກຕີຄວາມວ່າ ບໍ່ໄດ້ໃຫ້ລັດ ມີດຸນພິນິວ່າຈະນຳໃຊ້ຫຼັກການບໍ່ລົງໂທດບໍ່,

---

58 ກົດໝາຍວ່າດ້ວຍການປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ປີ 2000, Div. A of Pub. L. No. 106-386 108, ສະບັບປັບປຸງ

59 ມາດຕະຖານຂັ້ນຕ່ຳສຸດ ສຳລັບການລຶບລ້າງການຄ້າມະນຸດ ຕາມທີ່ກຳນົດໄວ້ໃນ *ກົດໝາຍວ່າດ້ວຍການປົກປ້ອງຜູ້ຖືກເຄາະຮ້າຍ* ປີ 2000, Div. A of Pub. L. No. 106-386 108 ວັກທີ 2, ສະບັບປັບປຸງ.

ແຕ່ເປັນດຸນພິນິດວ່າ *ວິທີການ* ທີ່ຈະປະຕິບັດຕາມພັນທະນີ້ຄືແນວໃດ.[60] ມັນບໍ່ມີຄວາມຊັດເຈນຈາກຄຳເວົ້າ ທີ່ກ່ຽວຂ້ອງກັບແນວຄິດທີ່ວ່າ "ບັງຄັບ" ແລະ ບໍ່ວ່າ ມັນຈະລວມເອົາ ການຫຼອກລວງ ຫຼື ການໃຊ້ອຳນາດໃນທາງທີ່ບໍ່ຖືກຕ້ອງ ຫຼື ການສວຍໃຊ້ອຳນາດ. ຂອບເຂດທີ່ຈຳກັດຂອງ 'ການບໍ່ກຳນົດການລົງໂທດທາງອາຍາ' ໃນທາງທິດສະດີ ອາດຈະອະນຸຍາດໃຫ້ລັດ ຍັງກັກຂັງ, ເນລະເທດ ຫຼື ຈັບຕົວ ແລະ ດຳເນີນຄະດີຜູ້ຖືກເຄາະຮ້າຍ ລວມທັງ ການລະເມີດກົດໝາຍວ່າດ້ວຍແຮງງານ ແລະ ການເຂົ້າ-ອອກເມືອງ.[61]

ຄຳສັ່ງຂອງສະຫະພາບເອີລົບ 2011/36/EU ຂອງສະພາແຫ່ງຊາດເອີລົບ ແລະ ສະພາ ຄັ້ງວັນທີ 5 ເມສາ 2011 ກ່ຽວກັບການປ້ອງກັນ ແລະ ຕ້ານການຄ້າມະນຸດ ແລະ ການປົກປ້ອງຜູ້ຖືກເຄາະຮ້າຍ ແລະ ປ່ຽນແທນການຕັດສິນໃຈກອບການເຮັດວຽກຂອງສະພາ ເລກທີ 2002/629/JHA (OJ L 101, 1 15.4.2011) (ມາດຕາ 8 ແລະ ວັກທີ 14) ວັກ 14 ໄດ້ກຳນົດໄວ້ວ່າ:

> *ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຄວນຈະ, ໂດຍສອດຄ່ອງກັບຫຼັກການພື້ນຖານຂອງລະບົບກົດໝາຍຂອງບັນດາປະເທດສະມາຊິກທີ່ກ່ຽວຂ້ອງ, ຕ້ອງໄດ້ຮັບການປົກປ້ອງຈາກການດຳເນີນຄະດີ ຫຼື ການລົງໂທດ ສຳລັບການກະທຳຜິດທາງອາຍາ ເຊັ່ນ ການນຳໃຊ້ເອກະສານປອມ ຫຼື ຄວາມຜິດຕາມກົດໝາຍວ່າດ້ວຍການຄ້າໂສເພນີ ຫຼື ການເຂົ້າ-ອອກເມືອງ ທີ່ພວກເຂົາໄດ້ຖືກບັງຄັບໃຫ້ກະທຳ ເຊິ່ງເປັນຜົນສະທ້ອນໂດຍກົງຈາກການຖືກຄ້າມະນຸດ. ເປົ້າໝາຍຂອງການປົກປ້ອງດັ່ງກ່າວ ເພື່ອປົກປ້ອງສິດທິມະນຸດຂອງຜູ້ຖືກເຄາະຮ້າຍ, ຫຼີກລ້ຽງການເປັນຜູ້ຖືກເຄາະຮ້າຍເພີ່ມເຕີມ ແລະ ສະໜັບສະໜູນໃຫ້ພວກເຂົາປະຕິບັດໜ້າທີ່ໃນຖານະພະຍານ ໃນການດຳເນີນຄະດີອາຍາຕໍ່ກັບຜູ້ກະທຳຜິດ. ການປົກປ້ອງນີ້ ບໍ່ຄວນຍົກເວັ້ນ ການດຳເນີນຄະດີ ຫຼື ການລົງໂທດ ສຳລັບຄວາມຜິດທີ່ບຸກຄົນສະໝັກໃຈກະທຳຜິດ ຫຼື ມີສ່ວນຮ່ວມນຳ.*

ມາດຕາ 8 ກ່ຽວຂ້ອງກັບ 'ການບໍ່ດຳເນີນຄະດີ ຫຼື ບໍ່ລົງໂທດຜູ້ຖືກເຄາະຮ້າຍ':

> *ລັດສະມາຊິກ ຈະ, ໂດຍສອດຄ່ອງກັບຫຼັກການພື້ນຖານຂອງລະບົບກົດໝາຍພາຍໃນຂອງຕົນ, ນຳໃຊ້ມາດຕະການທີ່ຈຳເປັນ ເພື່ອຮັບປະກັນວ່າໜ່ວຍງານທີ່ມີສິດອຳນາດໃນລະດັບຊາດ ມີສິດ ທີ່ຈະບໍ່ດຳເນີນຄະດີ ຫຼື ບໍ່ກຳນົດການລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ສຳລັບການມີສ່ວນຮ່ວມພົວພັນຂອງເຂົາເຈົ້າ ໃນການກະທຳຜິດທາງອາຍາ ທີ່ພວກເຂົາໄດ້ຖືກບັງຄັບໃຫ້ກະທຳ ທີ່ເປັນຜົນສະທ້ອນໂດຍກົງ ຕໍ່ກັບການກະທຳໃດໜຶ່ງ ທີ່ອ້າງອີງໃນມາດຕາ 2.*

ອີງຕາມຄຳສັ່ງຂອງ EU 2011/36/EU ໄດ້ກ້າວໜ້າກວ່າສົນທິສັນຍາຂອງອີລົບ ທີ່ກຳນົດໄວ້ວ່າເຈົ້າໜ້າທີ່ ມີສິດທີ່ຈະ 'ບໍ່ດຳເນີນຄະດີ ຫຼື ບໍ່ກຳນົດການລົງໂທດ' ໃນທາງທີ່ກົງກັນຂ້າມກັບສິ່ງທີ່ໄດ້ກ່າວໄວ້ຕາມຫຼັກຕໍ່ກັບ 'ບໍ່ກຳນົດການລົງໂທດ' ເທົ່ານັ້ນ. ທີ່ສຳຄັນ, ຄວາມແຕກຕ່າງລະຫວ່າງ ການລົງໂທດທາງບໍລິຫານ ແລະ ທາງອາຍາ ແມ່ນພິຈາລະນາວ່າ ບໍ່ກ່ຽວຂ້ອງກັບບໍລິບົດໃນມາຕາ 7 ຂອງຄຳສັ່ງ.[62] ວັກທີ 11 ຂອງ ຄຳສັ່ງ EU ຍັງຮັບຮູ້ເຖິງການລ່ວງລະເມີດໃນການກະທຳຜິດທາງອາຍາ ໃນຮູບແບບຂອງການລ່ວງລະເມີດ, ລວມທັງ (ແຕ່ບໍ່ຈຳກັດ) ການລ່ວງລະເມີດໃຫ້ບຸກຄົນກະທຳຜິດ, ໃນສິ່ງຕ່າງໆ *(inter alia)*, 'ການລັກຈົກກະເປົາເງິນ, ການລັກເຄື່ອງໃນຮ້ານຄ້າ, ການຄ້າຢາເສບຕິດ ແລະ ການກະທຳຜິດອື່ນໆທີ່ຄ້າຍຄືກັນ ເຊິ່ງໝາຍເຖິງການຖືກລົງໂທດ ແລະ ບົ່ງບອກເຖິງຜົນກຳໄລທາງດ້ານການເງິນ.'

---

60 Ryszard Piotrowicz, ມາດຕາ 26, ຂໍ້ກຳນົດຫຼັກການບໍ່ລົງໂທດ ໃນ Julia Planitzer ແລະ Helmut Sax (eds.) ຂໍ້ສະເໜີແນະນຳຂອງສົນທິສັນຍາຂອງສະພາເອີລົບ ວ່າດ້ວຍການຕ້ານການຄ້າມະນຸດ (Edward Elgar, 2020) ໜ້າທີ .317; Ryszard Piotrowicz and Liliana Sorrentino, ທ່ານຄິດຫຍັງຢູ່? ຕໍ່ການຮັບຮູ້ຫຼັກການບໍ່ລົງໂທດ ຕໍ່ກັບການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ? ຈົດໝາຍຂ່າວ La Strada, ສະບັບທີ 44, ວັນທີ 10 ເມສາ 2017.

61 Anne T. Gallagher, ກົດໝາຍສາກົນກ່ຽວກັບການຄ້າມະນຸດ (Cambridge, 2010) 117-118, 127

62 *ການຄ້າມະນຸດ:* ຄຳເຫັນຮ່ວມຂອງສະຫະປະຊາຊາດ ກ່ຽວກັບຄຳສັ່ງ ຂອງສະຫະພາບເອີຣົບ ວິທີການທີ່ອີງໃສ່ສິດທິມະນຸດ (ອີງການ OHCHR, UNHCR, UNICEF, UNODC, UN Women ແລະ ILO, 2011) 37

## ຫ້ອງທີ 4: ການພິຈາລະນາຂອງສານສິດທິມະນຸດຂອງສານເອີລົບ ກ່ຽວກັບການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ:

ໃນເດືອນ ເມສາ 2021 ສານສິດທິມະນຸດຂອງສານເອີລົບ (ECtHR) ໄດ້ຕັດສິນໃຫ້ V.C.L ແລະ *A.N. v ສະຫະລາດອານາຈັກ (ອັງກິດ)* [ຄຳຮ້ອງເລກທີ 77587/12 ແລະ 74603/12] ສານໄດ້ສະເໜີຄວາມຊັດເຈນກ່ຽວກັບຫຼັກການບໍ່ລົງໂທດ.

ສະຫະລາຊະອານາຈັກ (ອັງກິດ) ໄດ້ດຳເນີນຄະດີ, ຕັດສິນ ແລະ ລົງໂທດເດັກນ້ອຍຫວຽດນາມສອງຄົນ ໃນການມີສ່ວນຮ່ວມໃນການຜະລິດຢາເສບຕິດ ເຖິງແມ່ນວ່າ ພວກເຂົາໄດ້ຖືກຮັບຮູ້ໂດຍໜ່ວຍງານຕ້ານການຄ້າມະນຸດ ໃນຖານະຜູ້ຖືກເຄາະຮ້າຍ ສຳລັບຈຸດປະສົງຂອງການລ່ວງລະເມີດ/ສະແຫວງຫາຜົນປະໂຫຍດ ໃນການກະທຳຜິດທາງອາຍາ. ການຕັດສິນນີ້ ມີເຫດຜົນວ່າ ໜ່ວຍງານຂອງສະຫະລາຊະອານາຈັກ (ອັງກິດ) ມີການຈຳແນກຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ບົນພື້ນຖານການກະທຳຜິດ ໃນກໍລະນີນີ້ ເປັນຄວາມຜິດທີ່ກ່ຽວຂ້ອງຄັນຊາ ເຊິ່ງກົງກັນຂ້າມກັບຄວາມຜິດທີ່ກ່ຽວຂ້ອງກັບເອກະສານ ເຊິ່ງຜູ້ຖືກຄ້າມະນຸດ ເຄີຍຫຼີກລ້ຽງການຖືກຕັດສິນມາແລ້ວ.[63] ສານ ECtHR ເຫັນວ່າ ສະຫະລາຊະອານາຈັກ (ອັງກິດ) ໄດ້ລະເມີດພັນທະ ໃນມາດຕາ 4 ຂອງສົນທິສັນຍາເອີລົບວ່າດ້ວຍສິດທິມະນຸດ ທີ່ຫ້າມການເປັນຂ້າທາດ ແລະ ການບັງຄັບໃຊ້ແຮງງານ (ລວມທັງການຄ້າມະນຸດ) ແລະ ໃນມາດຕາ 6 ທີ່ກ່ຽວຂ້ອງກັບສິດທິໃນການພິຈາລະນາຄະດີຢ່າງເປັນທຳ. ໃນການຕັດສິນຄັ້ງນີ້, ສານ ECtHR ໄດ້ລະບຸຫຼາຍປະເດັນກ່ຽວກັບຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

ສານໄດ້ຕັ້ງຂໍ້ສັງເກດວ່າ ບໍ່ມີຂໍ້ຫ້າມທົ່ວໄປໃນການດຳເນີນຄະດີໃນເຄື່ອງມືສາກົນ ແລະ ພາກພື້ນ ແຕ່ໃນກໍລະນີທີ່ຜູ້ຖືກເຄາະຮ້າຍ ຖືກບັງຄັບ, ລັດ ມີສິດ ເຖິງແມ່ນວ່າຈະບໍ່ແມ່ນພັນທະ, ທີ່ຈະບໍ່ດຳເນີນຄະດີ.[64] ເຖິງຢ່າງໃດກໍຕາມ, ສານໄດ້ພິຈາລະນາວ່າ ການດຳເນີນຄະດີຜູ້ຖືກເຄາະຮ້າຍ ຫຼື ຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ອາດຈະຂັດກັບໜ້າທີ່ຂອງລັດ ໃນການດຳເນີນມາດຕະການເພື່ອປົກປ້ອງພວກເຂົາ, ໃນກໍລະນີທີ່ພວກເຂົາຮັບຮູ້ ຫຼື ຄວນຮັບຮູ້ຕໍ່ກັບສະຖານະການທີ່ກໍ່ໃຫ້ເກີດເຖິງຄວາມສົງໄສທີ່ໜ້າເຊື່ອຖືໄດ້ວ່າ ບຸກຄົນໃດໜຶ່ງ ໄດ້ຖືກຄ້າມະນຸດ. ໃນຈຸດນີ້, ສານໄດ້ສະແດງຄວາມເຫັນວ່າ ລັດມີພັນທະໃນການປົກປ້ອງຜູ້ຖືກເຄາະຮ້າຍ ແລະ ອຳນວຍຄວາມສະດວກໃນການຟື້ນຟູເຂົາເຈົ້າ, ແລະ ການດຳເນີນຄະດີ ຈະເປັນການສ້າງຄວາມເປັນອັນຕະລາຍໃນການຟື້ນຟູ ແລະ

---

63 Parosha Chandran ທະນາຍຄວາມ ແລະ ສາສະດາຈານດ້ານການປະຕິບັດກົດໝາຍວ່າດ້ວຍຂ້າທາດສະໄໝໃໝ່ ທີ່ວິທະຍາໄລກົດໝາຍ Dickson Poon, King's College London ໄດ້ອ້າງອີງເຖິງກໍລະນີຂອງ R v O [2008] EWCA Crim 2835, ກ່າວເຖິງຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນກອງປະຊຸມຍ່ອຍຂອງ ກອງປະຊຸມສະພາສິດທິມະນຸດ ຄັ້ງທີ 47, ວັນທີ 30 ມິຖຸນາ 2021, ເວລາ 13:00 14:30 CET. ຜູ້ຂຽນໄດ້ບັນທຶກໄວ້ໃນຟາຍເອກະສານ.

64 *V.C.L ແລະ A.N. v ສະຫະຣາດອານາຈັກອັງກິດ* [ຄຳຮ້ອງ nos. 77587/12ແລະ 74603/12], ສານສິດທິມະນຸດຂອງເອີລົບ, ວັນທີ 16 ກຸມພາ 2021, ແຖວທີ 158.

ມີທ່າແຮງທີ່ເຂົາເຈົ້າຈະມີຄວາມສ່ຽງທີ່ຈະຖືກຄ້າມະນຸດຊ້ຳຄືນອີກ. ໃນປະເດັນນີ້, ຂະບວນການທາງອາຍາ ໄດ້ຖືກຕັ້ງຂໍ້ສັງເກດວ່າ ເປັນສິ່ງທີ່ສ້າງຄວາມເຈັບປວດ, ການຕັດສິນທີ່ສ້າງອຸປະສັກ ໃນການລວມຕົວກັນ ແລະ ການຈຳຄຸກ ເປັນອຸປະສັກໃນການເຂົ້າເຖິງການສະໜັບສະໜູນ ແລະ ການບໍລິການ.[65]

ສານ ຍັງໄດ້ອະທິບາຍວ່າ ການກຳນົດຕົວຜູ້ຖືກເຄາະຮ້າຍ ເປັນສິ່ງທີ່ສຳຄັນຫຼາຍໃນການປົກປ້ອງພວກເຂົາຈາກການລົງໂທດ. ສະນັ້ນ, ໃນກໍລະນີທີ່ມີສະຖານະການເກີດຂຶ້ນ ຕໍ່ກັບຄວາມສົງໄສທີ່ໜ້າເຊື່ອຖືໄດ້ວ່າ ບຸກຄົນທີ່ຖືກສົງໄສ ໄດ້ກະທຳຜິດທາງອາຍານັ້ນ ອາດຈະຖືກຄ້າມະນຸດ, ບຸກຄົນດັ່ງກ່າວ ຄວນໄດ້ຮັບການປະເມີນທັນທີ່ ໂດຍບຸກຄົນທີ່ໄດ້ຮັບການຝຶກອົບຮົມ ແລະ ມີຄຸນສົມບັດ ເພື່ອກຳນົດວ່າບຸກຄົນນັ້ນ ຖືກຄ້າມະນຸດ ຕາມທີ່ກຳນົດໄວ້ໃນເຄື່ອງມືສາກົນ ແລະ ພາກພື້ນ ຫຼື ບໍ່.

ນອກນັ້ນ, ສານຍັງໄດ້ຕັ້ງຂໍ້ສັງເກດວ່າ ການຕັດສິນໃດໆວ່າຈະດຳເນີນຄະດີຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຫຼື ບໍ່ນັ້ນ,ເທົ່າທີ່ເປັນໄປໄດ້, ຄວນພິຈາລະນາພາຍຫຼັງທີ່ມີການປະເມີນກ່ຽວກັບການຄ້າມະນຸດ ໂດຍບຸກຄົນທີ່ມີຄຸນສົມບັດ. ໂດຍສະເພາະຢ່າງຍິ່ງ ເດັກທີ່ມີຄວາມສ່ຽງ ເຊິ່ງຕ້ອງໄດ້ບັນທຶກໄວ້. ເມື່ອຜູ້ທີ່ມີຄຸນສົມບັດ ໄດ້ປະເມີນສຳເລັດແລ້ວ, ການຕັດສິນໃຈທີ່ຕາມມາຂອງໄອຍະການນັ້ນ ຄວນຄຳນຶງເຖິງການປະເມີນນີ້ນຳ. ໄອຍະການອາດຈະບໍ່ມີຂໍ້ຜູກມັດຕໍ່ກັບຜົນໄດ້ຮັບຈາກການປະເມີນ, ແຕ່ມີຄວາມຈຳເປັນຕ້ອງມີເຫດຜົນທີ່ຊັດເຈນໃນການແຍກອອກຈາກການປະເມີນ ເຊິ່ງສອດຄ່ອງກັບນິຍາມຂອງການຄ້າມະນຸດໃນເຄື່ອງມືສາກົນ ແລະ ພາກພື້ນ.[66]

ສານ ECtHR ເຫັນວ່າ ສະຫະລາຊະອານາຈັກ (ອັງກິດ) ໄດ້ລະເມີດພັນທະຂອງຕົນເອງ ຕາມທີ່ກຳນົດໄວ້ໃນມາດຕາ 4 ຂອງສົນທິສັນຍາເອີລົບວ່າດ້ວຍສິດທິມະນຸດ ທີ່ກ່ຽວຂ້ອງກັບການບັງຄັບໃຊ້ແຮງງານ ແລະ ມາດຕາ 6 ສິດໃນການພິຈາລະນາຄະດີຢ່າງເປັນທຳ ແລະ ໄດ້ຕຳນິວ່າ ການດຳເນີນຄະດີຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຂອງ ສະຫະລາຊະອານາຈັກ (ອັງກິດ) ຂັດກັບຄວາມໝັ້ນໝາຍຂອງຕົນໃນ ຄຳສັ່ງຂອງ EU ວ່າດວຍການຕ້ານການຄ້າມະນຸດ ແລະ ອານຸສັນຍາວ່າດ້ວຍການຕ້ານການຄ້າມະນຸດ.

---

65 *V.C.L ແລະ A.N. v ສະຫະຣາດອານາຈັກອັງກິດ* [ຄຳຮ້ອງ nos. 77587/12 ແລະ 74603/12], ສານສິດທິມະນຸດຂອງເອີລົບ, ວັນທີ 16 ກຸມພາ 2021, ແຖວທີ 158-159.

66 *V.C.L ແລະ A.N. v ສະຫະຣາດອານາຈັກອັງກິດ* [ຄຳຮ້ອງ nos. 77587/12 ແລະ 74603/12], ສານສິດທິມະນຸດຂອງເອີລົບ, ວັນທີ 16 ກຸມພາ 2021, ແຖວທີ 160-162.

## 1.3. ນະໂຍບາຍ ແລະ ກົດໝາຍພາຍໃນ

ການປະຕິບັດທີ່ເປັນຕົວແບບທີ່ດີ ທີ່ຍອມຮັບຕໍ່ກັບການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດໃນພາກປະຕິບັດຕົວຈິງ ແມ່ນການປະກາດໃຊ້ຂໍ້ກໍານົດສະເພາະໃນກົດໝາຍພາຍໃນ.[67] ປະເທດຕ່າງໆ ກໍານົດຫຼັກການບໍ່ລົງໂທດໃນຮູບແບບທີ່ແຕກຕ່າງກັນ ໂດຍສອດຄ່ອງກັບລະບົບກົດໝາຍພາຍໃນຂອງຕົນ. ບາງປະເທດ ມີຫຼັກການສະເພາະກ່ຽວກັບຫຼັກການບໍ່ລົງໂທດ ໃນກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ຫຼື ໃນປະມວນກົດໝາຍອາຍາ (ຫຼື ກົດໝາຍອາຍາ). ການປະຕິບັດທີ່ເປັນຕົວແບບທີ່ດີ ບໍ່ກໍາຈັດສະເພາະການປົກປ້ອງຕໍ່ກັບຄວາມຜິດບາງປະເພດ ແຕ່ຮັບປະກັນມັນຖືກນໍາໃຊ້ຕໍ່ກັບຄວາມຜິດທີ່ຮ້າຍແຮງ ຫຼື ການກະທໍາຜິດທີ່ຮ້າຍແຮງ, ເຖິງແມ່ນວ່າ ກົດໝາຍຂອງຫຼາຍໆລັດ ຈະໃຫ້ການປົກປ້ອງສະເພາະບາງການກະທໍາຜິດສະເພາະ ເທົ່ານັ້ນ.[68]

ເພື່ອໃຫ້ຫຼັກການບໍ່ລົງໂທດ ຖືກນໍາໃຊ້, ຈະຕ້ອງໄດ້ສ້າງການເຊື່ອມໂຍງລະຫວ່າງການກະທໍາຜິດຂອງຜູ້ຖືກເຄາະຮ້າຍ ແລະ ການຄ້າມະນຸດ. ລັດຕ້ອງໃຊ້ວິທີການທີ່ແຕກຕ່າງກັນ ກ່ຽວກັບຄວາມສໍາພັນລະຫວ່າງການກະທໍາຜິດທາງອາຍາຂອງຜູ້ຖືກເຄາະຮ້າຍ ແລະ ການຖືກຄ້າມະນຸດຂອງເຂົາເຈົ້າໃນກົດໝາຍພາຍໃນຂອງຕົນ.

| ຮູບແບບການບັງຄັບ | ຮູບແບບຕາມສາເຫດ |
| --- | --- |
| ການກະທໍາທີ່ເກີດຂຶ້ນ ພາຍໃຕ້ການບັງຄັບ/ການຂົ່ມຂູ່ | ການກະທໍາທີ່ເປັນຜົນສະທ້ອນໂດຍກົງມາຈາກການຄ້າມະນຸດ |

**ຮູບແບບການບັງຄັບ:** ຮູບແບບການບັງຄັບ (ຫຼືເອີ້ນອີກຢ່າງໜຶ່ງວ່າຮູບແບບການຂົ່ມຂູ່) ມີພື້ນຖານຄວາມເຊື່ອທີ່ວ່າ ບຸກຄົນດັ່ງກ່າວ ຈະບໍ່ມີຄວາມຮັບຜິດຊອບທາງອາຍາ ສໍາລັບການກະທໍາຜິດທີ່ພວກເຂົາ ບໍ່ໄດ້ເຮັດໂດຍຄວາມສະໝັກໃຈ. ສະນັ້ນ, ຜູ້ຖືກຄ້າມະນຸດ ຈະບໍ່ຖືກລົງໂທດທາງອາຍາສໍາລັບການກະທໍາຜິດ ໃນຂອບເຂດທີ່ພວກເຂົາຖືກບັງຄັບໃຫ້ກະທໍາ ໃນລະຫວ່າງທີ່ຖືກຄ້າມະນຸດ. ບໍ່ໜ້າແປກໃຈເລີຍທີ່ ຫຼັກການບໍ່ລົງໂທດ ມີແນວໂນ້ມທີ່ຈະຖືກນໍາໃຊ້ຕໍ່ກັບຜູ້ຖືກເຄາະຮ້າຍ ຜູ້ທີ່ເປັນຜູ້ຄ້າມະນຸດ ໄດ້ນໍາໃຊ້ວິທີການທີ່ຊັດເຈນຕໍ່ເຂົາເຈົ້າ (ເຊັ່ນການບັງຄັບ) ຫຼາຍກວ່າໃນກໍລະນີທີ່ ມີການນໍາໃຊ້ວິທີການທີ່ລະອຽດອ່ອນ (ເຊັ່ນ ການສວຍໃຊ້ອໍານາດໜ້າທີ່).[69] ສະນັ້ນ, ຮູບແບບການບັງຄັບ ຈິ່ງມີຂໍ້ຈໍາກັດທີ່ສໍາຄັນໃນການນໍາໃຊ້ ໃນກໍລະນີທີ່ການບັງຄັບນັ້ນຖືກເຂົ້າໃຈແບບຄັບແຄບ ສະເພາະການຂົ່ມຂູ່ ຫຼື ການບັງຄັບເທົ່ານັ້ນ.[70] ການປະຕິບັດທີ່ເປັນຕົວແບບທີ່ດີ ແມ່ນການເຂົ້າໃຈເຖິງການບັງຄັບຢ່າງກວ້າງຂວາງ ເພື່ອເຂົ້າໃຈຕໍ່ກັບ ວິທີການ ທັງໝົດ ທີ່ຜູ້ຄ້າມະນຸດສາມາດບັງຄັບຜູ້ຖືກເຄາະຮ້າຍໄດ້ ຕາມທີ່ກໍານົດໄວ້ໃນນິຍາມສາກົນຂອງການຄ້າມະນຸດ.

---

67 *ຄໍາແນະນໍາວ່າດ້ວຍບັນຫາ ການຕອບໂຕ້ຍຸຕິທໍາທາງອາຍາຢ່າງເໝາະສົມຕໍ່ກັບຜູ້ຖືກເຄາະຮ້າຍ ທີ່ຖືກບັງຄັບໃຫ້ກະທໍາຜິດທາງອາຍາ ເຊິ່ງເປັນຜົນສະທ້ອນມາຈາກການຖືກຄ້າມະນຸດ: ເອກະສານຄວາມເປັນມາທີ່ກະກຽມໂດຍ ກອງເລຂາຂອງຄະນະສະເພາະທີ່ເຮັດວຽກຕ້ານການຄ້າມະນຸດ,* ວຽນນາ ວັນທີ 10 ແລະ 11 ກັນຍາ 2020. ເອກະສານຂອງ UN. CTOC/COP/WG.4/2020/2 (15 ມິຖຸນາ 2020), ວັກທີ 46.

68 ຕົວຢ່າງ, ຫຼາຍລັດໃນສະຫະລັດອາເມລິກາ, ຂໍ້ກໍານົດການບໍ່ລົງໂທດ ກ່ຽວຂ້ອງກັບຄວາມຜິດທີ່ກ່ຽວກັບການຄ້າປະເວນີເທົ່ານັ້ນ, ເຮັດໃຫ້ມີຂໍ້ຈໍາກັດໃນການປົກປ້ອງຜູ້ຖືກເຄາະຮ້າຍຈາກຮູບແບບການລ່ວງລະເມີດທາງເພດ ແລະ ບໍ່ມີຜູ້ຖືກເຄາະຮ້າຍຈາກການຄ້າມະນຸດສໍາລັບຮູບແບບທີ່ບໍ່ແມ່ນການຂູດຮີດທາງເພດ. Zornosa, Francisco ການປົກປ້ອງຜູ້ຖືກເຄາະຮ້າຍຈາກການລົງໂທດ ແລະ ສົ່ງເສີມການຟື້ນຟູເຂົາເຈົ້າ: ຄວາມຈໍາເປັນໃນການຢືນຢັນການປົກປ້ອງ, ວາລະສານ *Washington ແລະ Lee* ວ່າດ້ວຍສິດທິຂອງພົນລະເມືອງ ແລະ ສັງຄົມຍຸຕິທໍາ, 2016, ສະບັບທີ 22, ສະບັບທີ, 177-203 at 195-196

69 ອົງການສະຫະປະຊາຊາດເພື່ອຕ້ານຢາເສບຕິດ ແລະ ອາຊະຍາກໍາ, *ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ເປັນແມ່ຍິງ ສໍາລັບການລ່ວງລະເມີດທາງເພດ ໃນຖານະຈໍາເລີຍ: ການວິເຄາະກໍລະນີທາງດ້ານກົດໝາຍ* (ອົງການສະຫະປະຊາຊາດ, ວຽນນາ, 2020) 66-88.

70 ອົງການສະຫະປະຊາຊາດເພື່ອຕ້ານຢາເສບຕິດ ແລະ ອາຊະຍາກໍາ, *ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ເປັນແມ່ຍິງ ສໍາລັບການລ່ວງລະເມີດທາງເພດ ໃນຖານະຈໍາເລີຍ: ການວິເຄາະກໍລະນີທາງດ້ານກົດໝາຍ* (ອົງການສະຫະປະຊາຊາດ, ວຽນນາ, 2020) 65, 109.

## ຕາຕະລາງ 1: ຮູບແບບການບັງຄັບ

| | ການບັງຄັບ (ຂົ່ມຂູ່) |
|---|---|
| **ເກນຫຼັກຖານ** | ຜູ້ຖືກເຄາະຮ້າຍບໍ່ຄວນຈະຖືກລົງໂທດ ສຳລັບຄວາມຜິດທີ່ພວກເຂົາໄດ້ຖືກບັງຄັບໃຫ້ກະທຳ. ການບັງຄັບບໍ່ໄດ້ພິສູດດ້ວຍມາດຕະຖານທີ່ສູງຄືກັບການປ້ອງກັນແບບດັ້ງເດີມ ແຕ່ດ້ວຍ 'ວິທີການ' ໃດໜຶ່ງ ທີ່ກຳນົດໄວ້ໃນອານຸສັນຍາວ່າດ້ວຍການຄ້າມະນຸດ ເຊັ່ນວ່າບຸກຄົນທີ່ຢູ່ໃນສະຖານະການດຽວກັນ ທີ່ສົມເຫດສົມຜົນ ຄືກັບຜູ້ຖືກຫາ ທີ່ບໍ່ມີທາງເລືອກໃນຕົວຈິງ ເພື່ອປະຕິບັດການກະທຳຜິດທາງອາຍາ. |
| **ຕົວຢ່າງໃນລະດັບພາກພື້ນ (ນອກເໜືອຈາກອາຊຽນ)** | ແຕ່ລະພາຄີ ຈະ, ໂດຍສອດຄ່ອງກັບຫຼັກການພື້ນຖານຂອງລະບົບກົດໝາຍພາຍໃນຂອງຕົນ, ກຳນົດໃຫ້ມີຄວາມເປັນໄປໄດ້ທີ່ຈະບໍ່ກຳນົດໂທດທາງອາຍາ ຕໍ່ຜູ້ຖືກເຄາະຮ້າຍ ທີ່ພວກເຂົາໄດ້ມີສ່ວນຮ່ວມພົວພັນກັບການກະທຳຜິດທາງອາຍາ ໃນຂອບເຂດທີ່ພວກເຂົາໄດ້ຖືກບັງຄັບໃຫ້ກະທຳ.<br><br>(ມາດຕາ 26 ຂອງສົນທິສັນຍາສະພາເອີລົບວ່າດ້ວຍການຕ້ານການຄ້າມະນຸດ) |
| **ຕົວຢ່າງໃນລະດັບຊາດ (ອາຊຽນ)** | **ອິນໂດເນເຊຍ**<br><br>ຜູ້ຖືກເຄາະຮ້າຍ ທີ່ໄດ້ກະທຳຜິດທາງອາຍາ ທີ່ຢູ່ພາຍໃຕ້ການບັງຄັບຂອງຜູ້ກະທຳຜິດ ໃນສະຖານການຄ້າມະນຸດ ຈະບໍ່ມີຄວາມຮັບຜິດຊອບທາງອາຍາ.<br><br>(ມາດຕາ 18) ກົດໝາຍເລກທີ 21 ວ່າດ້ວຍການລຶບລ້າງການກະທຳຜິດທາງອາຍາ ໃນການຄ້າມະນຸດ ປີ 2007) |
| **ຕົວຢ່າງໃນລະດັບຊາດ (ທີ່ບໍ່ແມ່ນໃນອາຊຽນ)** | **ປະເທດເຣຕິ**<br><br>ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈະຖືກຍົກເວັ້ນຈາກການດຳເນີນຄະດີທັງໝົດ ຕໍ່ກັບການກະທຳທີ່ຜິດກົດໝາຍ ທີ່ກ່ຽວຂ້ອງກັບການຄ້າມະນຸດ ທີ່ໄດ້ກະທຳໃນເວລາທີ່ຢູ່ພາຍໃຕ້ການຂົ່ມຂູ່ຂອງຜູ້ກະກະທຳຜິດຕົວຈິງ ຂອງຄວາມຜິດຕາມທີ່ອ້າງອີງໄວ້ໃນກົດໝາຍສະບັບປັດຈຸບັນ. (ມາດຕາ 22.2, ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ)<br><br>ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ຖືກກ່າວຫາວ່າໄດ້ກະທຳການຄາດຕະກຳ ພາຍໃຕ້ເງື່ອນໄຂດຽວກັນທີ່ກຳນົດໄວ້ໃນວັກເທິງກ່ອນໜ້ານັ້ນ ອາດຈະມີສິດໄດ້ຮັບການຫຼຸດຜ່ອນຕາມສະຖານະການນັ້ນ (ມາດຕາ 22.3, ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ)<br><br>**ໂມຊຳບິກ**<br><br>ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈະບໍ່ມີຄວາມຮັບຜິດຊອບທາງອາຍາ ສຳລັບການກະທຳທີ່ກ່ຽວຂ້ອງກັບການຄ້າມະນຸດ ເຊິ່ງລວມໃນກົດໝາຍນີ້ ຫຼື ການກະທຳອື່ນ ທີ່ພວກເຂົາຖືກບັງຄັບໃຫ້ກະທຳ ໂດຍບໍ່ກ່ຽວຂ້ອງກັບຄວາມຍິນຍອມຂອງເຂົາເຈົ້າ<br><br>(ມາດຕາ 20(3), ກົດໝາຍເລກທີ 6/2008) |

| | ການບັງຄັບ (ຂົ່ມຂູ່) |
|---|---|
| **ຕົວຢ່າງໃນລະດັບຊາດ (ທີ່ບໍ່ແມ່ນໃນອາຊຽນ)** | **ສະຫະລາຊະອານາຈັກ (ອັງກິດ)**<br>(1) ບຸກຄົນໃດໜຶ່ງ ຈະບໍ່ມີຄວາມຜິດ ໃນການກະທຳຜິດ ຖ້າຫາກ-<br>(a) ບຸກຄົນທີ່ມີອາຍຸ 18 ປີ ຫຼື ຫຼາຍກວ່າ 18 ປີ ເມື່ອບຸກຄົນນັ້ນ ໄດ້ກະທຳຜິດ ເຊິ່ງຖືວ່າເປັນຄວາມຜິດ<br>(b) ບຸກຄົນດັ່ງກ່າວ ໄດ້ກະທຳຜິດ ຍ້ອນບຸກຄົນນັ້ນ ຖືກບັງຄັບໃຫ້ກະທຳຜິດ,<br>(c) ການບັງຄັບນັ້ນ ເກີດມາຈາກການເປັນຂ້າທາດ ຫຼື ການສະແຫວງຫາຜົນປະໂຫຍດທີ່ກ່ຽວຂ້ອງ ແລະ<br>(d) ບຸກຄົນທີ່ສົມເຫດສົມຜົນ ທີ່ຢູ່ໃນສະຖານະການດຽວກັບບຸກຄົນ ແລະ ມີລັກສະນະທີ່ກ່ຽວຂ້ອງກັບບຸກຄົນດັ່ງກ່າວ ໂດຍບໍ່ມີທາງເລືອກອື່ນທີ່ແທ້ຈິງ ໃນການກະທຳນັ້ນ<br>(2) ບຸກຄົນ ອາດຈະຖືກບັງຄັບໃຫ້ກະທຳສິ່ງໃດໜຶ່ງ ໂດຍບຸກຄົນອື່ນ ຫຼື ໂດຍສະຖານະການຂອງບຸກຄົນນັ້ນ.<br>(3) ການບັງຄັບເນື່ອງມາຈາກການເປັນຂ້າທາດ ຫຼື ການສະແຫວງຫາຜົນປະໂຫຍດອື່ນໆ ທີ່ກ່ຽວຂ້ອງສະເພາະ ຖ້າວ່າ —<br>(a) ມັນແມ່ນ ຫຼື ເປັນສິ່ງໜຶ່ງ ຂອງການກະທຳ ທີ່ຖືວ່າເປັນຄວາມຜິດ ພາຍໃຕ້ ພາກທີ 1 ຫຼື ການກະທຳເຊິ່ງຖືວ່າເປັນຄວາມຜິດ ທີ່ກ່ຽວຂ້ອງກັບການລ່ວງລະເມີດ ຫຼື<br>(b) ມັນເປັນຜົນສະທ້ອນໂດຍກົງຂອງບຸກຄົນ ຫຼື ຜູ້ທີ່ເຄີຍເປັນຜູ້ຖືກເຄາະຮ້າຍຂອງການເປັນຂ້າທາດ ຫຼື ຜູ້ຖືກເຄາະຮ້າຍຈາກການຖືກລ່ວງລະເມີດ ທີ່ກ່ຽວຂ້ອງ.<br>(4) ບຸກຄົນໃດໜຶ່ງ ຈະບໍ່ມີຄວາມຜິດ ໃນການກະທຳຜິດ ຖ້າຫາກ-<br>(a) ບຸກຄົນທີ່ມີອາຍຸຕໍ່າກວ່າ 18 ປີ ໃນເວລາທີ່ບຸກຄົນດັ່ງກ່າວໄດ້ມີການກະທຳ ທີ່ຖືວ່າເປັນຄວາມຜິດ<br>(b) ບຸກຄົນ ທີ່ໄດ້ກະທຳ ທີ່ເປັນຜົນສະທ້ອນໂດຍກົງມາຈາກການຖືກ ຫຼື ເຄີຍຖືກ ເປັນຜູ້ຖືກເຄາະຮ້າຍຈາກການເປັນຂ້າທາດ ຫຼື ຜູ້ຖືກເຄາະຮ້າຍຈາກການລ່ວງລະເມີດທີ່ກ່ຽວຂ້ອງ, ແລະ<br>(c) ບຸກຄົນທີ່ສົມເຫດສົມຜົນ ທີ່ຢູ່ໃນສະຖານະການດຽວກັບບຸກຄົນ ແລະ ມີລັກສະນະທີ່ກ່ຽວຂ້ອງກັບບຸກຄົນດັ່ງກ່າວ ໂດຍບໍ່ມີທາງເລືອກອື່ນທີ່ແທ້ຈິງ ໃນການກະທຳນັ້ນ<br>(5) ເພື່ອຈຸດປະສົງຂອງພາກນີ້ —<br>"ລັກສະນະທີ່ກ່ຽວຂ້ອງ" ໝາຍເຖິງ ອາຍຸ, ເພດ ແລະ ຄວາມເຈັບປ່ວຍດ້ານຮ່າງກາຍ ຫຼື ຈິດໃຈ ຫຼື ຄວາມພິການ;<br>"ການລ່ວງລະເມີດທີ່ກ່ຽວຂ້ອງ" ແມ່ນການລ່ວງລະເມີດ (ຕາມຄວາມໝາຍຂອງພາກ 3) ທີ່ເນື່ອງມາຈາກເປັນຜູ້ຖືກລ່ວງລະເມີດ ຫຼື ເຄີຍເປັນ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.<br>(6) ໃນພາກທີ່ ອ້າງອີງເຖິງການກະທຳ ທີ່ລວມເອົາການລະເວັ້ນ<br>(ພາກທີ 45, ກົດໝາຍວ່າດ້ວຍການເປັນຂ້າທາດສະໄໝໃໝ່ ປີ 2015) |

**ຮູບແບບສາເຫດ:** ອີງຕາມຮູບແບບຂອງສາເຫດ, ຜູ້ຖືກຄ້າມະນຸດ ຈະບໍ່ຖືກໂທດທາງອາຍາ ໃນກໍລະນີທີ່ການກະທຳຜິດນັ້ນກ່ຽວຂ້ອງກັບການຄ້າມະນຸດ. ຄວາມສຳພັນລະຫວ່າງ ການກະທຳຜິດ ແລະ ການຄ້າມະນຸດ ບໍ່ຈຳເປັນຕ້ອງມີການບັງຄັບ, ການຂົ່ມຂູ່ ຫຼື ການບີບບັງຄັບ ຫຼື ບັງຄັບ, ແຕ່ຄວາມຜິດນັ້ນຕ້ອງເປັນຜົນສະທ້ອນໂດຍກົງມາຈາກການຄ້າມະນຸດ. ການເຊື່ອມໂຍງລະຫວ່າງການກະທຳຜິດ ແລະ ການຄ້າມະນຸດ ຈະມີຄວາມຊັບຊ້ອນໂດຍສະເພາະ ໃນກໍລະນີທີ່ອາຊະຍາກຳເອງ ສະແດງໃຫ້ເຫັນຢ່າງປະຈັກຕາຕໍ່ກັບຈຸດປະສົງຂອງການລ່ວງລະເມີດຈາກການຄ້າມະນຸດ ເຊັ່ນດຽວກັບກໍລະນີທີ່ບຸກຄົນທີ່ຖືກຄ້າມະນຸດ ໄດ້ເຂົ້າໄປມີຄວາມຜິດທາງອາຍາ. ຮູບແບບສາເຫດນີ້ ເປັນຮູບແບບທີ່ມັກໃຊ້ໂດຍພາກສ່ວນຕ່າງໆທີ່ເຮັດວຽກຕ້ານການຄ້າມະນຸດ ຫຼາຍກວ່າ ຮູບແບບຂອງການບັງຄັບ ລວມທັງ ຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ.[71] ເຖິງວ່າວິທີການຂອງທັງສອງຮູບແບບຈະບໍ່ມີສິ່ງທ້າທາຍໃນພາກປະຕິບັດ, ຮູບແບບຂອງສາເຫດ ພິຈາລະນາວ່າມີຄວາມງ່າຍກວ່າ ໃນການພິສູດ ແລະ ນຳໃຊ້ໃນພາກປະຕິບັດຫຼາຍກວ່າຮູບແບບຂອງການບັງຄັບ.[72] ໂດຍສະເພາະທີ່ກ່ຽວຂ້ອງກັບເດັກ, ຮູບແບບບັງຄັບ ໄດ້ຖືກຕັ້ງຂໍ້ສັງເກດວ່າບໍ່ສາມາດປະຕິບັດໄດ້ ເນື່ອງຈາກວ່າວິທີການ ບໍ່ຈຳເປັນຕ້ອງມີການພິສູດ ເພື່ອພິສູດວ່າພວກເຂົາໄດ້ຖືກຄ້າມະນຸດ.[73] ຮູບແບບຂອງສາເຫດນັ້ນ ໃນພາກປະຕິບັດແລ້ວມີຄວາມກ້ວາງກວ່າວິທີການຂອງຮູບແບບບັງຄັບ ເຊິ່ງຈຳເປັນຕ້ອງມີຫຼັກຖານສະເພາະ ເພື່ອສະແດງໃຫ້ເຫັນວ່າ ການກະທຳຜິດຂອງຜູ້ຖືກເຄາະຮ້າຍ ເປັນຜົນສະທ້ອນມາຈາກການບັງຄັບໃນສ່ວນຂອງຜູ້ຄ້າມະນຸດ.[74]

## ຕາຕະລາງ 2: ຮູບແບບສາເຫດ

| | **ສາເຫດ (ການເຊື່ອມຕໍ່/ຄວາມສຳພັນ)** |
|---|---|
| **ເກນຫຼັກຖານ** | ຜູ້ຖືກເຄາະຮ້າຍ ຈະບໍ່ຖືກລົງໂທດ ສຳລັບການກະທຳຜິດທີ່ກ່ຽວຂ້ອງກັບການຄ້າມະນຸດ. |
| **ຕົວຢ່າງໃນລະດັບພາກພື້ນ** | ແຕ່ລະລັດພາຄີ ຈະ, ຂຶ້ນກັບກົດໝາຍ, ກົດເກນ, ລະບຽບການ ແລະ ນະໂຍບາຍພາຍໃນຂອງຕົນ ແລະ ຕາມກໍລະນີທີ່ແທດເໝາະຕ່າງໆ, ພິຈາລະນາ ບໍ່ໃຫ້ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຕ້ອງຮັບຜິດຊອບທາງອາຍາ ຫຼື ທາງບໍລິຫານ ສຳລັບການກະທຳທີ່ຜິດກົດໝາຍ ຂອງເຂົາເຈົ້າ ຖ້າ ການກະທຳດັ່ງກ່າວ ແມ່ນພົວພັນໂດຍກົງກັບການກະທຳຜິດຖານການຄ້າມະນຸດ. (ມາດຕາ 14(7), ສົນທິສັນຍາ ACTIP) |

71 ວັນທີ 6 ເມສາ 2020, ເອກະສານ UN A/HRC/44/45, ແຖວທີ 36; *ການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ: ບົດລາຍງານຂອງຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ,* Siobhn Mullaly, ເອກະສານ UN A/HRC/47/34 (ວັນທີ 17 ພຶດສະພາ 2021) ແຖວທີ 52.

72 *ຄວາມສຳຄັນຂອງການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ: ພັນທະໃນການປົກປ້ອງຜູ້ຖືກເຄາະຮ້າຍ,* Maria Grazia Giammarinaro, ຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, ອົງການສະຫະປະຊາຊາດ, ເຈນີວາ, ວັນທີ 30 ກໍລະກົດ 2020 5 ທີ່ [14]; *ການຄ້າມະນຸດໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, ບົດລາຍງານຂອງຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ,* ເອກະສານ UN A/HRC/44/45 (ວັນທີ 6 ເມສາ 2020) [23]

73 ອົງການສະຫະປະຊາຊາດເພື່ອຕ້ານຢາເສບຕິດ ແລະ ອາຊະຍາກຳ, *ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ເປັນແມ່ຍິງ ສຳລັບການລ່ວງລະເມີດທາງເພດໃນຖານະຈຳເລີຍ: ການວິເຄາະກໍລະນີທາງດ້ານກົດໝາຍ* (ອົງການສະຫະປະຊາຊາດ, ວຽນນາ, 2020) 87.

74 *ຄຳແນະນຳວ່າດ້ວຍບັນຫາ ການຕອບໂຕ້ຍຸຕິທຳທາງອາຍາຢ່າງເໝາະສົມຕໍ່ກັບຜູ້ຖືກເຄາະຮ້າຍ ທີ່ຖືກບັງຄັບໃຫ້ກະທຳຜິດທາງອາຍາ ເຊິ່ງເປັນຜົນສະທ້ອນມາຈາກການຖືກຄ້າມະນຸດ: ເອກະສານຄວາມເປັນມາທີ່ກະກຽມໂດຍ ກອງເລຂາຂອງຄະນະສະເພາະທີ່ເຮັດວຽກຕ້ານການຄ້າມະນຸດ,* ວຽນນາ ວັນທີ 10 ແລະ 11 ກັນຍາ 2020. ເອກະສານຂອງ UN. CTOC/COP/WG.4/2020/2 (15 ມິຖຸນາ 2020), ວັກທີ 61-62.

| | **ສາເຫດ (ການເຊື່ອມຕໍ່/ຄວາມສຳພັນ)** |
|---|---|
| **ຕົວຢ່າງໃນລະດັບຊາດ (ອາຊຽນ)** | **ບຣູໄນ ດາຣູຊາລຳ**<br><br>ຜູ້ຖືກຄ້າມະນຸດ ຈະບໍ່ມີຄວາມຮັບຜິດຊອບໃນການຖືກດຳເນີນຄະດີອາຍາ ທີ່ກ່ຽວກັບ –<br><br>(a) ການເຂົ້າປະເທດບຣູໄນ ຢ່າງຜິດກົດໝາຍ;<br><br>(b) ໄລຍະເວລາ ການອາໄສຢູ່ປະເທດບຣູໄນ ດາຣູຊາລຳ ຢ່າງຜິດກົດໝາຍ; ຫຼື<br><br>(c) ການຈັດຫາ ຫຼື ການຄອບຄອງເອກະສານໂດຍບໍ່ຖືກຕ້ອງຕາມກົດໝາຍ ຫຼື ເອກະສານລະບຸຕົວຕົນ ທີ່ພວກເຂົາໄດ້ຮັບ ຫຼື ທີ່ພວກເຂົາໄດ້ຮັບການສະໜອງໃຫ້, ເພື່ອຈຸດປະສົງຂອງການເຂົ້າປະເທດບຣູໄນ ດາຣູຊາລຳ ເຊິ່ງການກະທຳດັ່ງກ່າວເປັນຜົນສະທ້ອນໂດຍກົງຈາກການກະທຳຜິດໃນສະຖານການຄ້າມະນຸດ ທີ່ຖືກກ່າວຫາວ່າ ໄດ້ກະທຳ ຫຼື ໄດ້ຖືກກະທຳ. (ມາດຕາ 47, *ຄຳສັ່ງວ່າດ້ວຍການຕ້ານການຄ້າມະນຸດຂອງບຣູໄນ ດາຣູຊາລຳ* (2019))<br><br>**ສປປ ລາວ**<br><br>ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ມີສິດດັ່ງຕໍ່ໄປນີ້:[…] 7.ໄດ້ຮັບການຍົກເວັ້ນຈາກຄວາມຮັບຜິດຊອບທາງອາຍາ ແລະ ຈະບໍ່ຖືກກັກຂັງໃນສະຖານການເປັນໂສເພນີ ແລະ ເຂົ້າ-ອອກ ເມືອງຜິດກົດໝາຍ<br><br>(ມາດຕາ 39, ກົດໝາຍເລກທີ 21 ວ່າດ້ວຍການລຶບລ້າງການກະທຳຜິດທາງອາຍາຈາກການຄ້າມະນຸດ, ປີ 2007)<br><br>**ມາເລເຊຍ**<br><br>ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈະບໍ່ມີຄວາມຮັບຜິດຊອບໃນການຖືກດຳເນີນຄະດີອາຍາ ຖ້າຫາກວ່າ—<br><br>(a) ການເຂົ້າປະເທດຜູ້ຮັບ ແລະ ປະເທດທາງຜ່ານໂດຍຜິດກົດໝາຍ;<br><br>(b) ໄລຍະເວລາທີ່ອາໄສຢູ່ປະເທດຜູ້ຮັບ ຫຼື ປະເທດທາງຜ່ານໂດຍບໍ່ຖືກຕ້ອງຕາມກົດໝາຍ; ຫຼື<br><br>(c) ການຈັດຫາ ຫຼື ການຄອບຄອງເອກະສານໂດຍບໍ່ຖືກຕ້ອງຕາມກົດໝາຍ ຫຼື ເອກະສານລະບຸຕົວຕົນ ທີ່ພວກເຂົາໄດ້ຮັບ ຫຼື ທີ່ພວກເຂົາໄດ້ຮັບການສະໜອງໃຫ້, ເພື່ອຈຸດປະສົງຂອງການເຂົ້າປະເທດຜູ້ຮັບ ຫຼື ປະເທດທາງຜ່ານ ເຊິ່ງວ່າກໍລະນີດັ່ງກ່າວເປັນຜົນສະທ້ອນໂດຍກົງຈາກການກະທຳຂອງການຄ້າມະນຸດ ທີ່ຖືກກ່າວຫາວ່າ ໄດ້ກະທຳ ຫຼື ໄດ້ຖືກກະທຳ.<br><br>(ພາກທີ 25, ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ແລະ ການຕ້ານການລັກລອບເຂົ້າ-ອອກເມືອງຢ່າງຜິດກົດໝາຍ, ປີ 2007) |

| | ສາເຫດ (ການເຊື່ອມຕໍ່/ຄວາມສຳພັນ) |
|---|---|
| **ຕົວຢ່າງໃນລະດັບຊາດ (ອາຊຽນ)** | **ມຽນມາ**<br><br>ໜ່ວຍງານຂັ້ນສູນກາງ: (a) ຕ້ອງບໍ່ດຳເນີນຄະດີຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ສຳລັບຄວາມຜິດໃດໜຶ່ງ ພາຍໃຕ້ກົດໝາຍສະບັບນີ້. (b) ຕ້ອງກຳນົດວ່າ ມີຄວາມສົມເຫດສົມຜົນ ຫຼື ບໍ່ ທີ່ຈະດຳເນີນການຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ສຳລັບຄວາມຜິດທີ່ເກີດຂຶ້ນ ທີ່ເປັນຜົນສະທ້ອນໂດຍກົງຈາກການຄ້າມະນຸດ<br><br>(ພາກທີ 13 *ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ* ປີ 2005)<br><br>**ຟີລິບປິນ**<br><br>ຜູ້ຖືກຄ້າມະນຸດ ຈະຖືກຮັບຮູ້ວ່າເປັນຜູ້ຖືກເຄາະຮ້າຍຂອງການກະທຳ ຫຼື ການກະທຳຂອງການຄ້າມະນຸດ ແລະ ການກະທຳດັ່ງກ່າວ ຈະບໍ່ຖືກລົງໂທດ ສຳລັບອາຊະຍາກຳທີ່ກ່ຽວຂ້ອງກັບການກະທຳຂອງການຄ້າມະນຸດ [...] ຫຼື ການປະຕິບັດຕາມຄຳສັ່ງຂອງຜູ້ຄ້າມະນຸດ ທີ່ກ່ຽວຂ້ອງກັບການກະທຳດັ່ງກ່າວ. ດ້ວຍເຫດນັ້ນ, ຄວາມຍິນຍອມຂອງຜູ້ຖືກຄ້າມະນຸດ ຕໍ່ກັບການລ່ວງລະເມີດຕາມທີ່ກຳນົດໄວ້ໃນກົດໝາຍສະບັບນີ້ ຈະບໍ່ມີຄວາມກ່ຽວຂ້ອງກັນ<br><br>(ພາກທີ 17, ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ (RA ເລກທີ. 9208) ຂອງປີ 2003) |
| **ຕົວຢ່າງໃນລະດັບຊາດ (ທີ່ບໍ່ແມ່ນໃນອາຊຽນ)** | **ອາເຈນຕິນາ**<br><br>ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈະບໍ່ຖືກລົງໂທດ ສຳລັບການກະທຳຜິດທາງອາຍາໃດໆ ທີ່ເປັນຜົນສະທ້ອນໂດຍກົງຈາກການຖືກຄ້າມະນຸດ.<br><br>(ມາດຕາ 5, ກົດໝາຍ, 26.364, ການປ້ອງກັນ ແລະ ການລົງໂທດທາງອາຍາຕໍ່ກັບການຄ້າມະນຸດ ແລະ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ສະບັບປີ 2008)<br><br>**ອີຢິບ**<br><br>ຜູ້ຖືກເຄາະຮ້າຍ ຈະບໍ່ມີຄວາມຮັບຜິດຊອບທາງແພ່ງ ແລະ ທາງອາຍາ ສຳລັບອາຊະຍາກຳໃດໜຶ່ງຂອງການຄ້າມະນຸດ ເມື່ອໃດກໍຕາມທີ່ອາຊະຍາກຳທີ່ເກີດຂຶ້ນນັ້ນ ຫຼື ທີ່ເປັນຜົນສະທ້ອນໂດຍກົງ ໃນການຕົກເປັນຜູ້ຖືກເຄາະຮ້າຍ.<br><br>(ມາດຕາ 21, ກົດໝາຍເລກທີ (64) ປີ 2010 ວ່າດ້ວຍການຕ້ານການຄ້າມະນຸດ)<br><br>**ເຄນຢາ**<br><br>ເຖິງວ່າຈະມີຂໍ້ກຳນົດໃນກົດໝາຍໃດໜຶ່ງກໍຕາມ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຕ້ອງບໍ່ມີຄວາມຮັບຜິດຊອບທາງອາຍາ ສຳລັບຄວາມຜິດທີ່ກ່ຽວຂ້ອງກັບການຢູ່ໃນເຄນຢາຢ່າງຜິດກົດໝາຍ ຫຼື ການກະທຳຜິດທາງອາຍາໃດໜຶ່ງ ທີ່ເປັນຜົນເກີດຂຶ້ນໂດຍກົງຈາກການຖືກຄ້າມະນຸດ. (ພາກທີ 14, ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ) |

| | ສາເຫດ (ການເຊື່ອມຕໍ່/ຄວາມສຳພັນ) |
|---|---|
| **ຕົວຢ່າງໃນລະດັບຊາດ (ທີ່ບໍ່ແມ່ນໃນອາຊຽນ)** | **ມາລາວີ**<br>ບຸກຄົນໃດທີ່ໄດ້ຮັບການຮັບຮອງວ່າເປັນຜູ້ຖືກຄ້າມະນຸດ ໂດຍເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ຫຼື ເຈົ້າໜ້າທີ່ປົກປ້ອງ, ໂດຍສອດຄ່ອງຕາມກົດໝາຍສະບັບນີ້, ຈະບໍ່ຖືກດຳເນີນຄະດີທາງອາຍາໂດຍກົງ ທີ່ກ່ຽວຂ້ອງກັບ ຫຼື ເປັນຜົນສະທ້ອນຈາກ, ສະຖານະການຂອງບຸກຄົນໃດໜຶ່ງ ໃນຖານະຜູ້ຖືກຄ້າມະນຸດ<br>(ພາກທີ 42, ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ປີ 2015)<br><br>**ກາຕ້າ**<br>ຜູ້ຖືກເຄາະຮ້າຍ ຈະບໍ່ມີຄວາມຮັບຜິດຊອບທາງແພ່ງ ຫຼື ທາງອາຍາ ຕໍ່ກັບອາຊະຍາກຳໃດໜຶ່ງຂອງການຄ້າມະນຸດ ໃນກໍລະນີ ທີ່ອາຊະຍາກຳດັ່ງກ່າວໄດ້ເກີດຂຶ້ນ ຫຼື ກ່ຽວຂ້ອງໂດຍກົງກັບບຸກຄົນດັ່ງກ່າວໃນຖານະຜູ້ຖືກເຄາະຮ້າຍ.<br>(ມາດຕາ 4, ກົດໝາຍກາຕ້າ ເລກທີ 15 ປີ 2011 ວ່າດ້ວຍການຕ້ານການຄ້າມະນຸດ.)<br><br>**ໂຣມາເນຍ**<br>ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ທີ່ມີຜົນສະທ້ອນເກີດຂຶ້ນຈາກການຖືກລ່ວງລະເມີດ ໄດ້ກະທຳຄວາມຜິດໃນສະຖານການເປັນໂສເພນີ, ການເປັນຂໍທານ, ການຂ້າມຊາຍແດນຢ່າງຜິດກົດໝາຍ ຫຼື ການມອບອະໄວຍະວະ, ເນື້ອເຍື່ອ ຫຼື ເຊວຈາກມະນຸດ ຈະບໍ່ຖືກລົງໂທດ<br>(ມາດຕາ 20 ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ (ສະບັບປັບປຸງປີ 2010))<br><br>**ສະຫະລັດອາເມລິກາ**<br>ການລົງໂທດສຳລັບອາຊະຍາກຳທີ່ຜິດກົດໝາຍ ທີ່ໄດ້ກະທຳກ່ຽວກັບເອກະສານ ທີ່ກ່ຽວຂ້ອງກັບການຄ້າມະນຸດ, ການຜູກມັດດ້ວຍໜີ້ສິນ, ການເປັນຂ້າທາດ, ການເປັນທາດດ້ວຍຄວາມບໍ່ສະໝັກໃຈ, ຫຼື ບັງຄັບໃຊ້ແຮງງານ "ບໍ່ໃຊ້ສຳລັບການປະພຶດຂອງບຸກຄົນ ຜູ້ທີ່ເປັນ ຫຼື ເຄີຍເປັນຜູ້ຖືກເຄາະຮ້າຍໃນຮູບແບບຂອງການຄ້າມະນຸດຢ່າງຮ້າຍແຮງ, [...] ຖ້າຫາກການປະພຶດນັ້ນ ເກີດຂຶ້ນໂດຍຫຼື ເກີດຂຶ້ນຈາກການຄ້າມະນຸດ."<br>"[...] ຜູ້ຖືກເຄາະຮ້າຍໃນຮູບແບບຂອງການຄ້າມະນຸດຢ່າງຮ້າຍແຮງ ບໍ່ຄວນທີ່ຈະຖືກຈຳຄຸກ, ປັບໃໝ ຫຼື ລົງໂທດທາງອາຍາອື່ນໆ ຢ່າງບໍ່ເໝາະສົມ ເນື່ອງຈາກກະທຳຜິດທີ່ໄດ້ກະທຳ ທີ່ເປັນຜົນສະທ້ອນໂດຍກົງຈາກການຖືກຄ້າມະນຸດ.' (ພາກທີ 1592, ກົດໝາຍວ່າດ້ວຍການປົກປ້ອງຜູ້ຖືກເຄາະຮ້າຍ ປີ 2000 (TVPA)) |

ບໍ່ວ່າ ຫຼັກການບໍ່ລົງໂທດ ຈະຖືກກຳນົດໃນກົດໝາຍ ຫຼື ບໍ່ ຫຼື ແນວໃດກໍຕາມ, ການປະຕິບັດຕາມຫຼັກການນັ້ນ ມັນເປັນສິ່ງທີ່ຈຳເປັນ ສຳລັບລັດ ເຊິ່ງເປັນສ່ວນໜຶ່ງຂອງພັນທະໃນການປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ລັດອາດຈະລະເມີດພັນທະນີ້ ໂດຍການບໍ່ທີ່ສາມາດກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເຊິ່ງຕໍ່ມາຜູ້ຖືກເຄາະຮ້າຍໄດ້ຖືກດຳເນີນຄະດີອາຍາ ຫຼື ບໍ່ສາມາດ ໃຫ້ນ້ຳໜັກໄດ້ຢ່າງພຽງພໍຕໍ່ກັບຂໍ້ເທັດຈິງຂອງບຸກຄົນທີ່ຕົກເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນການຕັດສິນໃຈວ່າ ຈະດຳເນີນຄະດີ ແລະ ຕັດສິນລົງໂທດເຂົາເຈົ້າ ຫຼື ບໍ່.[75]

75 Ryszard Piotrowicz, ມາດຕາ 26, ຂໍ້ກຳນົດການບໍ່ລົງໂທດ, ໃນ Julia Planitzer and Helmut Sax (eds.) *ຄຳອະທິບາຍກ່ຽວກັບອານຸສັນຍາຂອງສະພາເອີລົບ ວ່າດ້ວຍການຕ້ານການຄ້າມະນຸດ* (Edward Elgar, 2020) ໜ້າທີ 319

# 2

# ກົດໝາຍ, ນະໂຍບາຍ ແລະ ພາກປະຕິບັດຕົວຈິງໃນລັດສະມາຊິກອາຊຽນ

ພາກນີ້ຈະຄົ້ນຄວ້າວ່າ ຫຼັກການບໍ່ລົງໂທດໄດ້ຖືກກຳນົດໄວ້ໃນກົດໝາຍ ແລະ ນະໂຍບາຍໃນລັດສະມາຊິກອາຊຽນ ແນວໃດ ແລະ ໄດ້ມີການນຳໃຊ້ແນວໃດໃນພາກປະຕິບັດຕົວຈິງ. ຫຼັກການບໍ່ລົງໂທດ ໄດ້ກຳນົດໄວ້ຢ່າງຊັດເຈນໃນກົດໝາຍພາຍໃນຂອງ ເຈັດໃນສິບລັດສະມາຊິກອາຊຽນ: ບຣູໄນ ດາຣູຊາລຳ, ອິນໂດເນເຊຍ, ສປປ ລາວ, ມາເລເຊຍ, ມຽນມາ, ຟີລິບປິນ ແລະ ໄທ.

## ຕາຕະລາງ 3: ການກຳນົດຫຼັກການບໍ່ລົງໂທດ ແລະ ຂອບເຂດໃນການປົກປ້ອງ

| ປະເທດ | ຂໍ້ກຳນົດທີ່ຊັດເຈນໃນກົດໝາຍ | ຂໍ້ຈຳກັດຂອງຂອບເຂດໃນການປົກປ້ອງ | ຮູບແບບ | |
|---|---|---|---|---|
| | | | ສາເຫດ | ການບັງຄັບ |
| **ບຣູໄນ ດາຣູຊາລຳ** | ມາດຕາ 17, ຄຳສັ່ງວ່າດ້ວຍການຕ້ານການຄ້າມະນຸດຂອງບຣູໄນ ດາຣູຊາລຳ (2019) | ມີຂໍ້ຈຳກັດ. ນຳໃຊ້ສະເພາະການເຂົ້າ-ອອກເມືອງ, ການຢູ່ອາໄສ ຢ່າງຜິດກົດໝາຍ ແລະ ເອກະສານທີ່ກ່ຽວຂ້ອງກັບຄວາມຜິດນັ້ນ. | ✓ | |
| **ກຳປູເຈຍ** | ບໍ່ມີ | N/A | N/A | N/A |
| **ອິນໂດເນເຊຍ** | ມາດຕາ 18, ກົດໝາຍເລກທີ 21 ວ່າດ້ວຍການລຶບລ້າງອາຊະຍາກຳທາງອາຍາກ່ຽວກັບການຄ້າມະນຸດ, ປີ 2007 | ບໍ່ມີ | | ✓ |
| **ສປປ ລາວ** | ມາດຕາ 39, ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ (2015) | ມີຂໍ້ຈຳກັດ. ນຳໃຊ້ສະເພາະຄວາມຜິດກ່ຽວກັບການເປັນໂສເພນີ ແລະ ການເຂົ້າ-ອອກເມືອງຢ່າງຜິດກົດໝາຍ | ✓ | |
| | ມາດຕາ 25, ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ (2004) | ມີຂໍ້ຈຳກັດ. ນຳໃຊ້ສະເພາະແມ່ຍິງ ແລະ ເດັກ ແລະ ນຳໃຊ້ສະເພາະການຄ້າແມ່ຍິງ ແລະ ເດັກ, ການເປັນໂສເພນີ ແລະ ການເຂົ້າ-ອອກເມືອງຢ່າງຜິດກົດໝາຍ | ✓ | |

| ປະເທດ | ຂໍ້ກຳນົດທີ່ຊັດເຈນໃນກົດໝາຍ | ຂໍ້ຈຳກັດຂອງຂອບເຂດໃນການປົກປ້ອງ | ຮູບແບບ | |
|---|---|---|---|---|
| | | | ສາເຫດ | ການບັງຄັບ |
| **ມາເລເຊຍ** | Article 25, Anti-Trafficking in Persons and Anti-Smuggling of Migrants Act (2007) | ມີຂໍ້ຈຳກັດ. ນຳໃຊ້ສະເພາະການເຂົ້າ-ອອກເມືອງ, ການຢູ່ອາໄສ ຢ່າງຜິດກົດໝາຍ ແລະ ເອກະສານທີ່ກ່ຽວຂ້ອງກັບຄວາມຜິດນັ້ນ. | ✓ | |
| **ມຽນມາ** | Article 13, Anti-Trafficking in Persons Law (2005) | ມີຂໍ້ຈຳກັດ. ນຳໃຊ້ສະເພາະຄວາມຜິດທີ່ກຳນົດສະເພາະໃນ ກົດ ໝາຍວ່າດ້ວຍການຕ້ານການຄ້າມະນຸດ | ✓ | |
| **ຟີລິບປິນ** | Article 17, Republic Act No. 9208 (2003) as amended by RA 10364 (2012) (Expanded Anti-Trafficking Act) | ບໍ່ມີ | ✓ | |
| **ສິງກະໂປ** | None | N/A | N/A | N/A |
| **ໄທ** | Section 41 of Thailand's Anti-Trafficking in Persons Act B.E. 2551(2008) | ມີຂໍ້ຈຳກັດ. ນຳໃຊ້ສະເພາະການເຂົ້າ-ອອກ, ອາໄສຢູ່, ນຳໃຊ້ຂໍ້ມູນປອມ, ຄວາມຜິດກ່ຽວກັບເອກະສານ, ຄວາມຜິດກ່ຽວກັບການເປັນໂສເພນີ, ຄວາມຜິດກ່ຽວກັບການເຮັດວຽກໂດຍບໍ່ຖືກຕ້ອງ. ເຖິງຢ່າງໃດກໍຕາມ, ອາດມີການຂໍອະນຸຍາດຢ່າງເປັນລາຍລັກອັກສອນ ໃນການດຳເນີນຄະດີອາຍາ ຕໍ່ຜູ້ຖືກຄ້າມະນຸດ ສຳລັບຄວາມຜິດເຫຼົ່ານີ້. | | |
| **ຫວຽດນາມ** | None | N/A | N/A | N/A |

ໃນການນຳໃຊ້ຫຼັກການນີ້ ເຂົ້າໃນສະຖານະການຂອງຊີວິດຈິງ, ຜູ້ປະຕິບັດຕົວຈິງ ຈະໄດ້ປະເຊີນໜ້າກັບຄຳຖາມທີ່ຊັບຊ້ອນກ່ຽວກັບຂອບເຂດ ແລະ ຜົນກະທົບຂອງມັນ. ຕົວຢ່າງ: ເມື່ອໃດທີ່ນຳໃຊ້ຫຼັກການນີ້ ແລະ ເມື່ອໃດທີ່ບໍ່ນຳໃຊ້? ການເຊື່ອມໂຍງລະຫວ່າງການກະທຳຜິດຂອງຜູ້ຖືກເຄາະຮ້າຍ ແລະ ການຖືກຄ້າມະນຸດຂອງເຂົາເຈົ້າ ເກີດຂຶ້ນໄດ້ແນວໃດ? ການປົກປ້ອງຈາກການລົງໂທດ ນຳໃຊ້ສຳລັບອາຊະຍາກຳທຸກປະເພດ ຫຼື ບາງປະເພດ ແລະ ໃຊ້ໃນສະຖານະການໃດ? ຄວາມຮັບຜິດຊອບທາງອາຍາຂອງບຸກຄົນດັ່ງກ່າວໄດ້ຖືກລຶບລ້າງຍ້ອນວ່າ ລາວເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຫຼື ຫຼຸດຜ່ອນໂທດເທົ່ານັ້ນບໍ່? ຄວາມຊັບຊ້ອນຂອງຄຳຕອບຕໍ່ກັບຄຳຖາມເຫຼົ່ານີ້ ອະທິບາຍໄດ້ສ່ວນໜຶ່ງວ່າ ເປັນຫຍັງຫຼັກການນີ້ ຈຶ່ງບໍ່ມີຄວາມສອດຄ່ອງກັນ ໃນການນຳໃຊ້ໃນພາກປະຕິບັດ, ເຖິງວ່າຈະມີການຮັບຮູ້ຢ່າງກວ້າງຂວາງໃນກົດໝາຍ.

## 2.1. ບຣູໄນ ດາຣູຊາລຳ

ເຈົ້າໜ້າທີ່ຂອງປະເທດບຣູໄນ ດາຣູຊາລຳ ເລືອກທີ່ຈະບໍ່ເຂົ້າຮ່ວມກອງປະຊຸມປຶກສາຫາລືແບບໂຕະມົນ ສຳລັບຈຸດປະສົງຂອງການສຶກສານີ້, ໝາຍຄວາມວ່າ ຂໍ້ມູນກ່ຽວກັບການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ໄດ້ຮັບມາຈາກແຫຼ່ງຂໍ້ມູນແບບເປີດກວ້າງເທົ່ານັ້ນ. ການລະບຸຂໍ້ມູນທີ່ກ່ຽວຂ້ອງນັ້ນ ມີຄວາມຈຳກັດຫຼາຍ.

**ຂໍ້ກຳນົດກ່ຽວກັບຫຼັກການບໍ່ລົງໂທດ ມີຊັດເຈນໃນກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ:** ຫຼັກການບໍ່ລົງໂທດ ໄດ້ກຳນົດໄວ້ໃນມາດຕາ 47 ຂອງ ຄຳສັ່ງວ່າດ້ວຍການຕ້ານການຄ້າມະນຸດຂອງບຣູໄນ ດາຣູຊາລຳ (2019), ກຳນົດໄວ້ວ່າ ຜູ້ຖືກຄ້າມະນຸດ ຈະບໍ່ມີຄວາມຮັບຜິດຊອບໃນການຖືກດຳເນີນຄະດີອາຍາ ທີ່ກ່ຽວກັບການເຂົ້າປະເທດບຣູໄນ, ອາໄສຢູ່ໃນປະເທດຢ່າງຜິດກົດໝາຍ ແລະ ການຈັດຫາ ຫຼື ການຄອບຄອງເອກະສານການເດີນທາງໂດຍບໍ່ຖືກຕ້ອງຕາມກົດໝາຍ ຫຼື ເອກະສານລະບຸຕົວຕົນ ທີ່ເປັນຜົນສະທ້ອນໂດຍກົງຈາກຄວາມຜິດໃນສະຖານການຄ້າມະນຸດ.

> *ການປ້ອງກັນຈາກການດຳເນີນຄະດີອາຍາ*
>
> *47. ຜູ້ຖືກຄ້າມະນຸດ ຈະບໍ່ມີຄວາມຮັບຜິດຊອບໃນການຖືກດຳເນີນຄະດີອາຍາ ທີ່ກ່ຽວກັບ -*
>
> *(a) ການເຂົ້າປະເທດບຣູໄນ ຢ່າງຜິດກົດໝາຍ;*
>
> *(b) ໄລຍະເວລາ ການອາໄສຢູ່ປະເທດບຣູໄນ ດາຣູຊາລຳ ຢ່າງຜິດກົດໝາຍ; ຫຼື*
>
> *(c) ການຈັດຫາ ຫຼື ການຄອບຄອງເອກະສານໂດຍບໍ່ຖືກຕ້ອງຕາມກົດໝາຍ ຫຼື ເອກະສານລະບຸຕົວຕົນ ທີ່ພວກເຂົາໄດ້ຮັບ ຫຼື ທີ່ພວກເຂົາໄດ້ຮັບການສະໜອງໃຫ້, ເພື່ອຈຸດປະສົງຂອງການເຂົ້າປະເທດບຣູໄນ ດາຣູຊາລຳ ເຊິ່ງການກະທຳດັ່ງກ່າວເປັນຜົນສະທ້ອນໂດຍກົງຈາກການກະທຳຜິດໃນສະຖານການຄ້າມະນຸດ ທີ່ຖືກກ່າວຫາວ່າ ໄດ້ກະທຳ ຫຼື ໄດ້ຖືກກະທຳ.*

ບໍ່ໄດ້ຮັບຂໍ້ມູນວ່າ ມາດຕາ 47 ຂອງ*ຄຳສັ່ງວ່າດ້ວຍການຕ້ານການຄ້າມະນຸດຂອງບຣູໄນ ດາຣູຊາລຳ* (2019), ໄດ້ຖືກຕີຄວາມໝາຍ ແລະ ນຳໃຊ້ໃນພາກປະຕິບັດຕົວຈິງ ຄືແນວໃດ

**ແຮງງານເຄື່ອນຍ້າຍ ທີ່ຜິດກົດໝາຍ ມີຄວາມສ່ຽງທີ່ຈະຖືກລົງໂທດຕໍ່ກັບຄວາມຜິດທີ່ກ່ຽວຂ້ອງກັບການຄ້າມະນຸດ:** ມີຄວາມສ່ຽງຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນບຣູໄນ ຈະຖືກລົງໂທດທາງອາຍາ ສໍາລັບຄວາມຜິດທີ່ກ່ຽວຂ້ອງກັບການຄ້າມະນຸດ, ພາຍໃຕ້ມາດຕາ 48 ຂອງ*ຄໍາສັ່ງວ່າດ້ວຍການຕ້ານການຄ້າມະນຸດຂອງບຣູໄນ ດາຣູຊາລໍາ* (2019).

> *ຜູ້ກະທໍາຜິດ ຖືວ່າຫ້າມເຂົ້າ-ອອກເມືອງ*
>
> *48. ບຸກຄົນ ທີ່ບໍ່ແມ່ນພົນລະເມືອງຂອງ ບຣູໄນ ດາຣູຊາລໍາ, ໄດ້ຖືກຕັດສິນລົງໂທດສໍາລັບຄວາມຜິດໃດນຶ່ງ ຕໍ່ຄໍາສັ່ງນີ້ ຫຼື ລະບຽບການໃດໜຶ່ງ ທີ່ເຮັດຂຶ້ນພາຍໃຕ້ມາດຕານີ້ ຖືວ່າຫ້າມເຂົ້າ-ອອກເມືອງ ພາຍໃຕ້ພາກທີ 8 ຂອງກົດໝາຍວ່າດ້ວຍການເຂົ້າ-ອອກເມືອງ (ໝວດທີ 17).*

ໃນກໍລະນີທີ່ພວກເຂົາໄດ້ຖືກກໍານົດຕົວວ່າຜິດພາດ ໃນຖານະຜູ້ຄ້າມະນຸດ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ຫຼຸດພົ້ນອອກຈາກຜູ້ຖືກເຄາະຮ້າຍ ມາເປັນຜູ້ມີສ່ວນຮ່ວມໃນການຈັດຫາ ຫຼື ຈັດການຂອງຜູ້ອື່ນ ເພື່ອການລ່ວງລະເມີດ, ອາດຈະຢູ່ນອກຂອບເຂດການປົກປ້ອງຕາມທີ່ກໍານົດໄວ້ໃນມາດຕາ 47, ແລະ ຖືວ່າ 'ຫ້າມເຂົ້າ-ອອກເມືອງ' ພາຍໃຕ້ມາດຕາ 48.

**ສິ່ງທ້າທາຍໃນການກໍານົດຕົວ ສິ່ງຜົນໃຫ້ມີການລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ:** ບົດລາຍງານການຄ້າມະນຸດ ປີ 2021 ຂອງສະຫະລັດອາເມລິກາ ໄດ້ຕັ້ງຂໍ້ສັງເກດວ່າ ການກໍານົດຕົວຜູ້ຖືກເຄາະຮ້າຍບໍ່ພຽງພໍ ສິ່ງຜົນໃຫ້ມີການລົງໂທດຜູ້ຖືກເຄາະຮ້າຍ. ບົດລາຍງານກໍານົດໄວ້ວ່າ 'ລັດຖະບານ ຍັງສືບຕໍ່ກັກຂັງ, ເນລະເທດ ແລະ ຕັ້ງຂໍ້ຫາຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍສໍາລັບອາຊະຍາກໍາ ໂດຍບໍ່ມີການນໍາໃຊ້ວິທີການທີ່ເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ເພື່ອໄຈ້ແຍກວ່າ ຖ້າຜູ້ຄ້າມະນຸດ ບັງຄັບໃຫ້ຜູ້ຖືກເຄາະຮ້າຍ ມີສ່ວນຮ່ວມພົວພັນກັບການກະທໍາທີ່ຜິດກົດໝາຍ.'[76] ນອກນັ້ນ, ບົດລາຍງານຍັງກ່າວວ່າ ເຈົ້າໜ້າທີ່ນໍາໃຊ້ມາດຕະການໃນການກໍານົດຕົວ ພາຍຫຼັງກັກຂັງຜູ້ຖືກເຄາະຮ້າຍ ຫຼັງຈາກການປະຕິບັດງານຂອງເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍເທົ່ານັ້ນ, ເຊັ່ນວ່າ 'ການບຸກກວດຄົ້ນ' ເຊິ່ງແມ່ຍິງຕ່າງປະເທດໄດ້ຖືກຈັບຕົວໃນຂໍ້ຫາການເປັນໂສເພນີ. ຜູ້ຖືກເຄາະຮ້າຍທີ່ບໍ່ໄດ້ຮັບການກໍານົດຕົວ ອາດຈະຖືກຈັບຕົວໃນສະຖານການລະເມີດແຮງງານ ຫຼື ການເຂົ້າອອກ-ເມືອງ; ມີບົດລາຍງານກ່ຽວກັບແຮງງານຕ່າງປະເທດທີ່ຖືກສົ່ງກັບຈາກປະເທດບຣູໄນ ໂດຍບໍ່ມີການກັ່ນກອງຢ່າງເໝາະສົມ ລວມທັງໃນກໍລະນີທີ່ນາຍຈ້າງລະງັບການຈ່າຍຄ່າແຮງງານ ແລະ ກັກເອົາໜັງສືເດີນທາງເຂົາເຈົ້າໄວ້ ແລະ ລາຍງານເຂົາເຈົ້າຫາໜ່ວຍງານການເຂົ້າ-ອອກເມືອງວ່າມີການຫຼົບໜີ.[77]

---

76 ບົດລາຍການການຄ້າມະນຸດປີ 2021: ບຣູໄນ (ກະຊວງການຕ່າງປະເທດ ສະຫະລັດອາເມລິກາ, 2021)

77 ບົດລາຍການການຄ້າມະນຸດປີ 2021: ບຣູໄນ (ກະຊວງການຕ່າງປະເທດ ສະຫະລັດອາເມລິກາ, 2021)

## 2.2. ກຳປູເຈຍ

ມີການຈັດກອງປະຊຸມປຶກສາຫາລືແບບໂຕະມົນສອງຄັ້ງ ໃນປະເທດກຳປູເຈຍ ເພື່ອຈຸດປະສົງຂອງການຄົ້ນຄວ້ານີ້, ໂດຍມີຜູ້ເຂົ້າຮ່ວມທັງໝົດ 30 ທ່ານ ທີ່ຕາງໜ້າມາຈາກທັງຝ່າຍລັດ ແລະ ໜ່ວຍງານທີ່ບໍ່ແມ່ນຝ່າຍລັດ ທີ່ເຮັດວຽກຕ້ານການຄ້າມະນຸດ. ໃນພາກນີ້ ເນັ້ນໃຫ້ເຫັນເຖິງຂໍ້ມູນດ້ານເລິກ ລວມທັງ ເອກະສານ/ຂໍ້ມູນທີ່ເປີດກວ້າງ ທີ່ກ່ຽວຂ້ອງ.

### ຫຼັກການບໍ່ລົງໂທດໃນກົດໝາຍ ແລະ ນະໂຍບາຍ

**ບໍ່ມີຂໍ້ກຳນົດທີ່ຊັດເຈນກ່ຽວກັບຫຼັກການບໍ່ລົງໂທດໃນນິຕິກຳ:** ບໍ່ມີຂໍ້ກຳນົດທີ່ຊັດເຈນໃນນິຕິກຳຂອງກຳປູເຈຍ ເພື່ອປ້ອງກັນການດຳເນີນຄະດີຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ສຳລັບຄວາມຜິດທີ່ກ່ຽວຂ້ອງກັບການຖືກຄ້າມະນຸດຂອງເຂົາເຈົ້າ. ມີຜູ້ຕອບບາງທ່ານ ໄດ້ໃຫ້ທັດສະນະວ່າ ຫຼັກການບໍ່ລົງໂທດ ຄວນກຳນົດໃຫ້ຊັດເຈນໃນກົດໝາຍ ເພື່ອໃຫ້ເຈົ້າໜ້າທີ່ຕຳຫຼວດ, ໄອຍະການ ແລະ ສານ ສາມາດນຳໃຊ້ໄດ້ຢ່າງມີປະສິດທິພາບ ແລະ ນຳໃຊ້ຢ່າງຕໍ່ເນື່ອງ.

**ຂໍ້ກຳນົດທີ່ກ່ຽວຂ້ອງຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍທີ່ເປັນເດັກ:** ມາດຕາ 44 ຂອງ *ກົດໝາຍວ່າດ້ວຍການປາບປາມການຄ້າມະນຸດ ແລະ ການລ່ວງລະເມີດທາງເພດ* (2008) ໄດ້ຍົກເວັ້ນເດັກຈາກການລົງໂທດ ສຳລັບຄວາມຜິດ ລວມທັງ ຄວາມສຳພັນທາງເພດກັບເດັກທີ່ອາຍຸຕ່ຳກວ່າສິບຫ້າປີ (ມາດຕາ 42) ແລະ ການກະທຳອານາຈານກັບເດັກ ທີ່ອາຍຸຕ່ຳກວ່າສິບຫ້າປີ (ມາດຕາ 43). ຊ່ອງຫວ່າງໃນການປົກປ້ອງ ທີ່ອາດຈະນຳໃຊ້ເພື່ອປົກປ້ອງຜູ້ຖືກເຄາະຮ້າຍ/ຜູ້ກະທຳຜິດ ທີ່ອາຍຸຫຼາຍກວ່າ 15 ປີ ກໍໄດ້ຖືກຕັ້ງຂໍ້ສັງເກດໄວ້, ເຖິງວ່າຜູ້ຕອບຈາກລັດຖະບານ ຈະສະແດງໃຫ້ເຫັນວ່າມີຂັ້ນຕອນທີ່ສະໜັບສະໜູນໃນການກຳນົດອາຍຸ ແລະ ການໃຊ້ຂໍ້ສັນນິຖານການເປັນເດັກກ່ອນທີ່ຈະມີການກຳນົດຕົວຢ່າງເປັນທາງການ. ຜູ້ຕອບຝ່າຍລັດ ຍັງໃຫ້ຂໍ້ສັງເກດກ່ຽວກັບການປົກປ້ອງພິເສດແກ່ເດັກ ຜູ້ທີ່ລະເມີດກົດໝາຍໃນກຳປູເຈຍ ຜ່ານມາດຕາ 96 ຂອງ *ປະມວນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ* (ທີ່ກ່ຽວຂ້ອງກັບຂໍ້ຈຳກັດຂອງເຈົ້າໜ້າທີ່ຕຳຫຼວດໃນການເບິ່ງແຍງເດັກ) ແລະ ມາດຕາ 7 ຂອງ *ກົດໝາຍວ່າດ້ວຍກົດໝາຍຍຸຕິທຳສຳລັບເດັກ* (ທີ່ກຳນົດວ່າ ອາຍຸ 18 ປີ ເປັນອາຍຸທີ່ມີຄວາມຮັບຜິດຊອບທາງອາຍາ).[78]

**ນິຕິກຳອື່ນໆທີ່ກ່ຽວຂ້ອງ ໃນການປົກປ້ອງເດັກຈາກການລົງໂທດ:** ເຖິງຈະບໍ່ມີຂໍ້ກຳນົດທີ່ຊັດເຈນກ່ຽວກັບຫຼັກການບໍ່ລົງໂທດໃນກົດໝາຍພາຍໃນ, ຜູ້ຕອບບາງທ່ານ ໄດ້ສະແດງຄວາມຄິດເຫັນວ່າ ກົດໝາຍໄດ້ໃຫ້ການປົກປ້ອງຫຼັກການ ດ້ວຍການປົກປ້ອງຜູ້ຖືກເຄາະຮ້າຍໂດຍທົ່ວໄປ. ການປົກປ້ອງຜູ້ຖືກເຄາະຮ້າຍ ໄດ້ຮັບການເນັ້ນໜັກວ່າເປັນອົງປະກອບຫຼັກທີ່ສຳຄັນຂອງພັນທະດ້ານສິດທິມະນຸດ ແລະ ມີຄວາມສຳຄັນເພື່ອຮັບປະກັນການຮ່ວມມືຂອງເຂົາເຈົ້າ. ໃນບໍລິບົດນີ້, ການອ້າງອີງນັ້ນ ອ້າງອີງເຖິງ *ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ,* ກົດໝາຍອາຍາ, ມາດຕາ 31 ຂອງລັດຖະທຳມະນູນຂອງກຳປູເຈຍ (ການປົກປ້ອງສິດທິມະນຸດ ແລະ ຄວາມສະເໝີພາບຕໍ່ໜ້າກົດໝາຍ ສຳລັບພົນລະເມືອງຂອງຂະເໝນ) ລວມທັງ ເຄື່ອງມືໃນລະດັບສາກົນ ແລະ ພາກພື້ນ. ເຖິງຢ່າງໃດກໍຕາມ, ປະເດັນດັ່ງກ່າວໄດ້ເຮັດໃຫ້ກຳປູເຈຍ ທີ່ເປັນພາຄີຕໍ່ກັບເຄື່ອງມືສາກົນທີ່ກ່ຽວຂ້ອງນັ້ນ, ການຕັດສິນຂອງສານ ໄດ້ຖືກຕັ້ງຂໍ້ສັງເກດວ່າ ຖືກແນະນຳໂດຍກົດໝາຍພາຍໃນພຽງຢ່າງດຽວເທົ່ານັ້ນ ເຊິ່ງມັກຈະບໍ່ມີຄວາມຊັດເຈນຕໍ່ກັບຫຼັກການເຊັ່ນ ຫຼັກການບໍ່ລົງໂທດ ໃນລັກສະນະທີ່ສາມາດນຳໄປໃຊ້ໄດ້ຢ່າງມີປະສິດທິພາບ.

78 ລະບຽບການນີ້ຢູ່ພາຍໃຕ້ຂໍ້ຍົກເວັ້ນທີ່ສານສາມາດເຮັດໃຫ້ເດັກທີ່ອາຍຸ 14 ປີຂຶ້ນໄປ ຕ້ອງຮັບຜິດຊອບທາງອາຍາ ໃນກລະນີທີ່ສະຖານະການ ຫຼື ບຸກຄະລິກກະພາບເອື້ອຍອຳນວຍ. ເບິ່ງທີ່ ແຜນປະຕິບັດງານດ້ານຍຸດທະສາດ ແລະ ຍຸຕິທຳເດັກ 2018-2020, ກະຊວງກິດຈະກຳທາງສັງຄົມ, ນັກຮົບເກົ່າ ແລະ ການຟື້ນຟູໄວໜຸ່ມ ແລະ ກະຊວງຍຸຕິທຳ, ໜ້າທີ 201.

**ເອກະສານນະໂຍບາຍທີ່ກ່ຽວຂອງກັບຫຼັກການບໍ່ລົງໂທດ:** ເອກະສານດ້ານນະໂຍບາຍຫຼາຍສະບັບ, ຄໍາແນະນໍາ, ແບບ ຟອມ ແລະ ຂັ້ນຕອນທີ່ກ່ຽວຂ້ອງກັບຫຼັກການບໍ່ລົງໂທດ ລວມທັງ ທີ່ກໍານົດໄວ້ໃນຕາຕະລາງ 4 ຂ້າງລຸ່ມນີ້. ບໍ່ມີເອກະສານດ້ານນະໂຍບາຍອັນໃດເລີຍ ທີ່ຜູ້ປະຕິບັດຕົວຈິງໄດ້ກ່າວເຖິງໃນເວລາຢູ່ກອງປະຊຸມປຶກສາຫາລືແບບໂຕະມົນ, ສະແດງໃຫ້ເຫັນວ່າພວກເຂົາມີຂໍ້ຈັດກັດ ຫຼື ບໍ່ໄດ້ນໍາໃຊ້ຫຼັກການບໍ່ລົງໂທດເລີຍ. ແຜນຍຸດທະສາດແຫ່ງຊາດຫ້າປີ ເພື່ອຕ້ານການຄ້າມະນຸດ 2019-2023 ບໍ່ໄດ້ກ່າວເຖິງຫຼັກການບໍ່ລົງໂທດ ເຖິງແມ່ນວ່າຈະອ້າງເຖິງກອບແນວຄວາມຄິດທີ່ສອດຄ່ອງກັບແຜນປະຕິບັດງານອາຊຽນເພື່ອຈັດຕັ້ງປະຕິບັດສົນທິສັນຍາ ACTIP.[79] ເອກະສານດ້ານນະໂຍບາຍອື່ນໆ ຍັງບໍ່ໄດ້ມີການກໍານົດຫຼັກການບໍ່ລົງໂທດ.[80]

## ການຕີຄວາມໝາຍຫຼັກການບໍ່ລົງໂທດ

**ການສ້າງການເຊື່ອມໂຍງລະຫວ່າງການຄ້າມະນຸດ ແລະ ຄວາມຜິດຂອງຜູ້ຖືກເຄາະຮ້າຍ:** ພາກສ່ວນທີ່ກ່ຽວຂ້ອງຂອງລັດຖະບານ ໄດ້ອະທິບາຍວ່າ ຄວາມຮັບຜິດຊອບຂອງຜູ້ຖືກເຄາະຮ້າຍ ສໍາລັບຄວາມຜິດທີ່ພວກເຂົາໄດ້ກະທໍານັ້ນ ຂຶ້ນກັບເຈດຕະນາຂອງເຂົາເຈົ້າ. ຖ້າຫາກວ່າເຂົາເຈົ້າບໍ່ມີເຈດຕະນາ, ຕົວຢ່າງ: ຍ້ອນວ່າເຂົາເຈົ້າຖືກບັງຄັບໃຫ້ກະທໍາອາຊະຍາກໍາ, ຈະພິຈາລະນາວ່າເປັນຜູ້ຖືກເຄາະຮ້າຍ. ມີຄໍາອະທິບາຍໄວ້ວ່າ ກົດໝາຍຂອງກໍາປູເຈຍກໍານົດໄວ້ຢ່າງຊັດເຈນວ່າ ບຸກຄົນໃດທີ່ກໍ່ອາຊະຍາກໍາທາງອາຍາ ໂດຍບໍ່ຕັ້ງໃຈ ຈະພິຈາລະນາວ່າບໍ່ມີຄວາມຜິດ, ແຕ່ຖ້າບຸກຄົນໃດທີ່ລະເມີດສິດທິຂອງບຸກຄົນອື່ນ ແລະ ບໍ່ໄດ້ຖືກບັງຄັບໃຫ້ກະທໍານັ້ນ, ບຸກຄົນດັ່ງກ່າວ ຕ້ອງຮັບຜິດຊອບຕໍ່ກັບການກະທໍາດັ່ງກ່າວ.

**ຄຸນຄ່າຂອງຄໍາແນະນໍາກ່ຽວກັບຫຼັກການບໍ່ລົງໂທດ:** ຄໍາແນະນໍາທີ່ມີຢູ່ ທີ່ກ່າວເຖິງຫຼັກການບໍ່ລົງໂທດ ເຊິ່ງຜູ້ປະຕິບັດຕົວຈິງບໍ່ໄດ້ມີການອ້າງອີງເຖິງໃນກອງປະຊຸມປຶກສາຫາລື (ເບິ່ງຕາຕະລາງ 4 ຂ້າງລຸ່ມ). ເຖິງຢ່າງໃດກໍຕາມ, ມັນສະແດງໃຫ້ເຫັນວ່າ ລັດມີຄໍາແນະນໍາ ແລະ ເງື່ອນໄຂໃນການກໍານົດຕົວຜູ້ຖືກເຄາະຮ້າຍ, ທີ່ກ່ຽວຂ້ອງກັບການປົກປ້ອງຜູ້ຖືກເຄາະຮ້າຍ ແລະ ພະຍານຈາກການຄ້າມະນຸດ ຜູ້ທີ່ອາດຈະຖືກຫາວ່າກະທໍາຜິດໃນສະຖານການຄ້າມະນຸດຢ່າງມີປະສິດທິພາບ. ຄໍາແນະນໍາດັ່ງກ່າວ ຍັງສະແດງໃຫ້ເຫັນເຖິງ ການເນັ້ນໜັກຄຸນຄ່າຂອງອົງການ NGO ໃນການສະໜັບສະໜູນຂະບວນການກໍານົດຕົວຜູ້ຖືກເຄາະຮ້າຍ. ຄໍາແນະນໍາດັ່ງກ່າວນີ້ ຍັງເຮັດຂຶ້ນ ເພື່ອເປັນແນວທາງໃນການນໍາໃຊ້ຫຼັກການບໍ່ລົງໂທດ ເພື່ອໃຫ້ການດໍາເນີນຄະດີຕໍ່ຜູ້ຖືກເຄາະຮ້າຍຫຼຸດລົງ, ແລະ ເປັນແນວທາງໂດຍກົງໃຫ້ແກ່ໜ່ວຍງານຕຸລາການ ຕໍ່ກັບຄວາມໝັ້ນໝາຍສາກົນ ແລະ ສັນຍາສອງຝ່າຍ.

79 ແຜນຍຸດທະສາດແຫ່ງຊາດເພື່ອຕ້ານການຄ້າມະນຸດ ໄລຍະ 5 ປີ, 2019-2023, ໜ້າທີ 12.

80 ສິ່ງເຫຼົ່ານີ້ລວມມີ: *Prakas* 852 ວ່າດ້ວຍການຈັດຕັ້ງປະຕິບັດນະໂຍບາຍໃນການປົກປ້ອງສິດທິການຄ້າມະນຸດ ລົງວັນທີ 31 ສິງຫາ 2009; ນະໂຍບາຍໃນການປົກປ້ອງສິດທິຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ລົງວັນທີ 31 ສິງຫາ 2009 ແລະ *Prakas* ເລກທີ 857S.V.Y ວ່າດ້ວຍມາດຕະຖານຂັ້ນຕໍ່າໃນການປົກປ້ອງສິດທິຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ລົງວັນທີ 3 ກັນຍາ 2009, ກະຊວງກິດຈະກໍາທາງສັງຄົມ, ນັກຮົບເກົ່າ ແລະ ການຟື້ນຟູໄວໜຸ່ມ. ມາດຕະຖານຂັ້ນຕໍ່າ ບໍ່ໄດ້ກໍານົດຊັດເຈນກ່ຽວກັບການປົກປ້ອງຜູ້ຖືກເຄາະຮ້າຍຈາກການດໍາເນີນຄະດີອາຍາ, ແຕ່ຄາດຄະເນວ່າຜູ້ຖືກເຄາະຮ້າຍອາດຈະປະເຊີນໜ້າກັບການຖືກຕັ້ງຂໍ້ຫາທາງອາຍາ. ປະເດັນທີ່ມີໃນມາດຕາ 6(11) ວ່າດ້ວຍສິດຕໍ່ໃນເສລີພາບໃນການເຄື່ອນຍ້າຍ ກໍານົດວ່າ ຜູ້ຖືກເຄາະຮ້າຍຜູ້ໃຫຍ່ ບໍ່ຖືກຕັ້ງຂໍ້ຫາອາຍາ ມີສິດທີ່ຈະອອກຈາກສະຖາບັນບັງຄັບໃຊ້ກົດໝາຍ ຫຼື ຜູ້ສະໜອງການບໍລິການ ພາຍຫຼັງທີ່ໄດ້ແຈ້ງບອກໃຫ້ແກ່ໜ່ວຍງານ ຫຼື ສະຖາບັນທີ່ມີສິດອໍານາດ.... ຂໍ້ກໍານົດນີ້ມີຄວາມໝາຍວ່າ ມີສະຖານະການທີ່ຜູ້ຖືກເຄາະຮ້າຍຜູ້ໃຫຍ່ ຈະປະເຊີນໜ້າກັບການປ່ຽນແປງທາງອາຍາ ໃນກໍລະນີທີ່ພວກເຂົາບໍ່ມີເສລີພາບໃນການເຄື່ອນຍ້າຍ. ໃນທາງກົງກັນຂ້າມ, ມາດຕາ 6(4) ຢືນຢັນສິດຂອງເຂົາເຈົ້າທີ່ຈະ ໄດ້ຮັບການປະຕິບັດດ້ວຍການເຄົາລົບຕະຫຼອດໄລຍະຂະບວນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ຖືກຮັບຮູ້ໃນຖານະບຸກຄົນທີ່ຜ່ານສະຖານະການທີ່ໜັກໜ່ວງ ແລະ ຍັງລະບຸວ່າ ການກະທໍາໃດໜຶ່ງທີ່ເປັນການຈໍາແນກ ແລະ/ຫຼື ແນວຄິດຍຶດຕິດແບບດັ້ງເດີມທີ່ມີຕໍ່ຜູ້ຖືກເຄາະຮ້າຍ ບົນພື້ນຖານຂອງເພດ, ອາຍຸ, ເຊື້ອຊາດ, ຊົນເຜົ່າ, ສາສະໜາ, ສັນຊາດ, ການສະແດງອອກດ້ານເພດ ຫຼື ປະສົບການຜ່ານມາ ເປັນສິ່ງທີ່ຖືກຫ້າມຢ່າງເຂັ້ມງວດ.

**ຕາຕະລາງ 4: ເອກະສານດ້ານນະໂຍບາຍຂອງກຳປູເຈຍ ແລະ ຂັ້ນຕອນທີ່ກ່ຽວຂ້ອງກັບການບໍ່ລົງໂທດ**

| | |
|---|---|
| *ຄູ່ມືແນະນຳກ່ຽວກັບແບບຟອມ ແລະ ຂັ້ນຕອນໃນການກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເພື່ອໃຫ້ການບໍລິການທີ່ເໝາະສົມ* (ຄະນະກຳມະການແຫ່ງຊາດເພື່ອຕ້ານການຄ້າມະນຸດ, NCCT, 2015) | ໃນລະຫວ່າງຂະບວນການ [ຂອງການກຳນົດຕົວເບື້ອງຕົ້ນ] ຄົນຕ່າງປະເທດ ຜູ້ທີ່ໄດ້ຮັບການກຳນົດຕົວຢ່າງເປັນທາງການວ່າເປັນຜູ້ຖືກເຄາະຮ້າຍ ຈະຕ້ອງບໍ່ຖືກກັກຂັງ ຫຼື ຕັ້ງຂໍ້ຫາໃນສະຖານການເຂົ້າ-ອອກເມືອງຢ່າງຜິດກົດໝາຍ ແລະ/ຫຼື ການເປັນໂສເພນີ. ພວກເຂົາຕ້ອງໄດ້ຮັບສະຖານທີ່ພັກເຊົາ ແລະ ການປົກປ້ອງໃນໄລຍະລໍຖ້າຂັ້ນຕອນການສົ່ງກັບປະເທດຢ່າງເປັນທາງການ. |
| *ຄຳສັ່ງກ່ຽວກັບຄູ່ມືສຳລັບການປົກປ້ອງສິດຂອງເດັກທີ່ຖືກຄ້າມະນຸດຂອງຣາຊະອານາຈັກກຳປູເຈຍ* (ສະພາເດັກແຫ່ງຊາດກຳປູເຈຍ, CNCC, 20 ທັນວາ 2007, ເລກທີ. 107) | ມາດຕາ 4, 2.3 (a) ເດັກທີ່ຖືກຄ້າມະນຸດ ແມ່ນຜູ້ຖືກເຄາະຮ້າຍຈາກການລະເມີດສິດທິມະນຸດ. ພວກເຂົາບໍ່ຄວນຖືກປະຕິບັດຄືກັບຜູ້ກະທຳຜິດ ຫຼື ຢູ່ພາຍໃຕ້ ຫຼື ຖືກຂົ່ມຂູ່ດ້ວຍການລົງໂທດທາງອາຍາ ສຳລັບຄວາມຜິດທີ່ກ່ຽວຂ້ອງກັບສະຖານະການຂອງເຂົາເຈົ້າ ໃນຖານະເດັກທີ່ເປັນຜູ້ຖືກຄ້າມະນຸດ |
| *ຄູ່ມືກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປາບປາມການຄ້າມະນຸດ ແລະ ການລ່ວງລະເມີດທາງເພດ* (ສະບັບແປຢ່າງບໍ່ເປັນທາງການຂອງ UNIAP ປີ 2008), ຄູ່ມືແນະນຳທົ່ວໄປ | (4) ໂສເພນີ ຈະຖືວ່າເປັນຜູ້ຖືກເຄາະຮ້າຍຈາກການຈັດຫາເພື່ອການຄ້າປະເວນີ. ໂສເພນີບໍ່ແມ່ນອາຊະຍາກຳ; ສະນັ້ນໂສເພນີແຕ່ລະຄົນ ບໍ່ຄວນຈະຖືກລົງໂທດໃນຖານະຜູ້ກະທຳຜິດພາຍໃຕ້ກົດໝາຍສະບັບໃໝ່ນີ້. |
| *ນະໂຍບາຍ ແລະ ມາດຕະຖານຕໍ່າສຸດສຳລັບການປົກປ້ອງສິດທິຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ* (ກະຊວງກິດຈະການທາງສັງຄົມ, ນັກຮົບເກົ່າ ແລະ ການຟື້ນຟູໄວໜຸ່ມ, ປີ 2009) | "ພວກເຮົາຮູ້ວ່າຜູ້ຖືກເຄາະຮ້າຍຈາກການຄ້າມະນຸດເປັນຜູ້ຖືກເຄາະຮ້າຍຂອງອາຊະຍາກຳຂ້າມຊາດ ແລະ ບໍ່ແມ່ນບຸກຄົນເຂົ້າ-ອອກເມືອງຢ່າງຜິດກົດໝາຍ ເຖິງແມ່ນວ່າເລື່ອງລາວຂອງເຂົາເຈົ້າອາດຈະຄ້າຍຄືກັບການເຂົ້າ-ອອກເມືອງຢ່າງຜິດກົດໝາຍ. ພວກເຂົາບໍ່ແມ່ນອາຊະຍາກອນແຕ່ພວກເຂົາ ແມ່ນບຸກຄົນທີ່ມີສິດໃນການເຄົາລົບ, ໃນຄວາມຍຸຕິທຳ ແລະ ໃນການຕັດສິນໃຈດ້ວຍຕົນເອງ ໃນການກຳນົດອານາຄົດຕົນເອງໂດຍບໍ່ມີການຈຳແນກ." (ໜ້າທີ 1) .ເອກະສານນີ້ ຍັງຮັບຮູ້ວ່າ (ໃນໜ້າທີ 8) ບຸກຄົນດັ່ງກ່າວອາດຈະຖືກຄ້າມະນຸດ ເພື່ອໃຫ້ກະທຳຜິດທາງອາຍາ. ເຖິງຢ່າງໃດກໍຕາມ, ມາດຕະຖານຂັ້ນຕໍ່າສຸດ ໄດ້ຄາດຄະເນໃຫ້ເຫັນລ່ວງໜ້າຕໍ່ກັບການກະທຳຜິດທາງອາຍາຂອງຜູ້ຖືກຄ້າມະນຸດ, ໂດຍໃຫ້ອິດສະລະພາບໃນການເຄື່ອນຍ້າຍແກ່ຜູ້ຖືກເຄາະຮ້າຍເຫຼົ່ານັ້ນ ດ້ວຍການບໍ່ຖືກຕັ້ງຂໍ້ຫາທາງອາຍາເທົ່ານັ້ນ (ໜ້າ 27). |

## ການນຳໃຊ້ຫຼັກການບໍ່ລົງໂທດ

**ການນຳໃຊ້ຫຼັກການບໍ່ລົງໂທດ ສະເພາະບາງການກະທຳຜິດເທົ່ານັ້ນ:** ເຖິງວ່າຈະບໍ່ມີຂໍ້ກຳນົດຫຼັກການບໍ່ລົງໂທດຢ່າງຊັດເຈນໃນກົດໝາຍ, ຜູ້ຕອບຝ່າຍລັດ ໄດ້ກ່າວວ່າ ບໍ່ມີກໍລະນີການສັນນິຖານວ່າຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຖືກລົງໂທດ. ໄດ້ມີການສະເໜີຕົວຢ່າງທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ເປັນຄົນຕ່າງປະເທດທີ່ເປັນໂສເພນີ ເຊິ່ງຖືກຫາວ່າເປັນຜູ້ກະທຳຜິດ ແຕ່ບໍ່ໄດ້ຖືກຕັ້ງຂໍ້ຫາ ເນື່ອງຈາກວ່າພວກເຂົາໄດ້ຮັບການກຳນົດຕົວວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ຍັງມີຕົວຢ່າງກ່ຽວກັບຄົນອິນເດຍ, ບັງກາລາເດດ ແລະ ປາກິດສະຖານທີ່ຖືກລ່ອງລະເມີດໃນອິນເດຍ ເຊິ່ງບໍ່ໄດ້ຖືກລົງໂທດໃນສະຖານລະເມີດກົດໝາຍວ່າດ້ວຍແຮງງານ ແລະ ການເຂົ້າ-ອອກເມືອງ ແຕ່ພວກເຂົາໄດ້ຮັບການປົກປ້ອງໃນຖານະເປັນຜູ້ຖືກເຄາະຮ້າຍ. ປະເດັນດຽວກັນນີ້ ຍັງເກີດຂຶ້ນສຳລັບຄວາມຜິດທີ່ກ່ຽວຂ້ອງກັບການຄ້າປະເວນີ ເຊິ່ງໄດ້ຕັ້ງຂໍ້ຫາສະເພາະຜູ້ທີ່ໄດ້ຮັບຜົນປະໂຫຍດທາງການຄ້າເທົ່ານັ້ນ. ເຖິງຢ່າງໃດກໍຕາມ, ມັນຍັງໄດ້ຮັບການອະທິບາຍວ່າ ບຸກຄົນໃດໜຶ່ງ ສາມາດເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ເປັນຜູ້ກະທຳຜິດສຳລັບການກະທຳຜິດອື່ນ ເຊິ່ງຕ້ອງພວກເຂົາຕ້ອງໄດ້ຮັບຜິດຊອບ. ຕົວຢ່າງ ການກະທຳຜິດທີ່ກ່ຽວຂ້ອງກັບຢາເສບຕິດ.

**ບົດບາດ ດຸນພິນິດຂອງສານໃນການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ:** ຜູ້ຕອບຝ່າຍລັດຖະບານໄດ້ອະທິບາຍວ່າເຈົ້າໜ້າທີ່ສືບສວນ-ສອບສວນ, ໄອຍະການ ແລະ ການໄຕ່ສວນຂອງສານ ມີຄວາມສຳຄັນຕໍ່ກັບດຸນພິນິດ ທີ່ຈະບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍວ່າ ຕໍ່ມາສາມາດແກ້ໄຂ ຫຼື ຍົກເລີກການຕັ້ງຂໍ້ຫາໂດຍອີງຕາມການສືບສວນ-ສອບສວນຂອງເຂົາເຈົ້າ. ບໍ່ໄດ້ມີການຍົກຕົວຢ່າງຂອງສານກຳປູເຈຍໃນການນຳໃຊ້ດຸນພິນິດຂອງສານໃນການຊັດມ້ຽນຄະດີ ທີ່ຜູ້ຖືກຫາເປີດເຜີຍວ່າເປັນຜູ້ຖືກເຄາະຮ້າຍ, ຫຼື ອອກຄຳສັ່ງ ເພື່ອໃຫ້ສະຖານະຜູ້ຖືກເຄາະຮ້າຍ. ການໃຫ້ຄຳເຫັນດັ່ງກ່າວໄດ້ເຮັດໃຫ້ການນຳໃຊ້ຫຼັກການບໍ່ລົງໂທດ ຂຶ້ນກັບດຸນພິນິດ ຫຼາຍກວ່າທີ່ຈະກຳນົດໄວ້ໃນກົດໝາຍ, ສົ່ງຜົນເຮັດໃຫ້ການນຳໃຊ້ຫຼັກການນັ້ນບໍ່ສອດຄ່ອງກັນ. ອີກເທື່ອໜຶ່ງ, ການລວມເອົາຂໍ້ກຳນົດທີ່ຊັດເຈນໃນນິຕິກຳ ເພື່ອກຳນົດຫຼັກການບໍ່ລົງໂທດໃຫ້ເກີດຂຶ້ນ ເພື່ອເຮັດໃຫ້ຜູ້ພິພາກສານຳໃຊ້ດຸນພິນິດໄດ້ງ່າຍຂຶ້ນ ສົ່ງຜົນໃຫ້ມີການນຳໃຊ້ຫຼັກການບໍ່ລົງໂທດສອດຄ່ອງຂຶ້ນຫຼາຍກວ່າເກົ່າ.

## ສິ່ງທ້າທາຍໃນການຮ່ວມມືລະຫວ່າງປະເທດ

ຄວາມສຳຄັນຂອງສົນທິສັນຍາສອງຝ່າຍ ແລະ ສົນທິສັນຍາລະດັບພາກພື້ນ: ຄວາມສຳຄັນຂອງການຮ່ວມມືສາກົນລະຫວ່າງປະເທດປາຍທາງສຳລັບຜູ້ຖືກຄ້າມະນຸດ ທີ່ເປັນຄົນກຳປູເຈຍ ໄດ້ພິຈາລະນາວ່າເປັນຫົວໃຈສຳຄັນໃນການປົກປ້ອງພວກເຂົາຈາກການລົງໂທດ. ທີ່ສຳຄັນ ການຮ່ວມມືດັ່ງກ່າວ ຈະສົ່ງຜົນໃຫ້ບັນລຸຜົນຢ່າງເປັນເອກະພາບກ່ຽວກັບເງື່ອນໄຂການກຳນົດຕົວ. ກຳປູເຈຍມີບົດບັນທຶກຄວາມເຂົ້າໃຈ (MOU) ກັບປະເທດໄທ ແລະ ຫວຽດນາມໂດຍຄູ່ພາຄີໄດ້ຢືນຢັນວ່າ ແມ່ຍິງ ແລະ ເດັກ ຈະຖືກປະຕິບັດໃນຖານະເປັນຜູ້ຖືກເຄາະຮ້າຍ ບໍ່ແມ່ນຜູ້ກະທຳຜິດ ແລະ ຈະບໍ່ລົງໂທດຜູ້ຖືກເຄາະຮ້າຍໃນສະຖານການເຂົ້າ ຫຼື ອອກອານາເຂດຂອງຕົນຢ່າງຜິດກົດໝາຍ ຫຼື ຄວາມຜິດອື່ນໆທີ່ເກີດຂຶ້ນໂດຍກົງຈາກການຄ້າມະນຸດ.[81] ສຳລັບບາງປະເທດທີ່ມີຄວາມສົນໃຈຫຼັກ (ລວມທັງມາເລເຊຍ) ແມ່ນຍັງບໍ່ທັນມີບົດບັນທຶກຄວາມເຂົ້າໃຈເທື່ອ. ເຖິງຢ່າງໃດກໍຕາມ ໄດ້ມີການຍົກຕົວຢ່າງກ່ຽວກັບ ສານມາເລເຊຍ ທີ່ໄດ້ຍົກເລີກການຕັ້ງຂໍ້ຫາ ການເຂົ້າ-ອອກ ແລະ ອາໄສຢູ່ຢ່າງຜິດກົດໝາຍ ໂດຍວ່າຜູ້ພິພາກສາໄດ້ໃຫ້ສະຖານະຜູ້ຖືກເຄາະຮ້າຍ ແກ່ຜູ້ຖືກເຄາະຮ້າຍທີ່ເປັນຄົນກຳປູເຈຍ.

---

81 ເບິ່ງທີ່ ມາດຕາ 6 ຂອງ *ບົດບັນທຶກຄວາມເຂົ້າໃຈລະຫວ່າງລັດຖະບານຂອງຣາຊະອານາຈັກກຳປູເຈຍ ແລະ ຣາຊະອານາຈັກໄທ ວ່າດ້ວຍການຮ່ວມມືສອງຝ່າຍເພື່ອລຶບລ້າງການຄ້າມະນຸດ ແລະ ປົກປ້ອງຜູ້ຖືກເຄາະຮ້າຍ* (ວັນທີ 30 ເມສາ 2014) ແລະ ມາດຕາ 5 ຂອງ *ສັນຍາລະຫວ່າງລັດຖະບານ ຣາຊະອານາຈັກກຳປູເຈຍ ແລະ ລັດຖະບານສັງຄົມນິຍົມຫວຽດນາມວ່າດ້ວຍການຮ່ວມມືສອງຝ່າຍໃນການລຶບລ້າງການຄ້າແມ່ຍິງ ແລະ ເດັກ ແລະ ການປົກປ້ອງຜູ້ຖືກເຄາະຮ້າຍ* (ເຊັນໃນວັນທີ 10 ຕຸລາ 2005) ແລະ ປັບປຸງໃນວັນທີ 28 ກັນຍາ 2012)

**ການນຳໃຊ້ສັນຍາສອງຝ່າຍ ແລະ ສັນຍາລະດັບພາກພື້ນທີ່ບໍ່ເປັນເອກະພາບກັນ:** ສັນຍາສອງຝ່າຍ ລວມທັງ *ສົນທິສັນຍາອາຊຽນວ່າດ້ວຍການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍ* ໃນຄະດີອາຍາ ແລະ ຂໍ້ຕົກລົງການສົ່ງຜູ້ຮ້າຍຂ້າມແດນ ຍັງບໍ່ໄດ້ຮັບການຈັດຕັ້ງປະຕິບັດຢ່າງເຕັມສ່ວນ ຫຼື ປະຕິບັດຢ່າງສະໝໍ່າສະເໝີ. ໄດ້ມີການຍົກຕົວຢ່າງການປະຕິບັດ ບົດບັນທຶກຄວາມເຂົ້າໃຈສອງຝ່າຍ ວ່າດ້ວຍການຮ່ວມມືດ້ານຍຸຕິທຳທາງອາຍາ ເຊິ່ງບໍ່ໄດ້ຖືກນຳໃຊ້ຢ່າງເປັນປະໂຫຍດ ສິ່ງຜົນໃຫ້ບໍ່ມີຄວາມເປັນເອກະພາບກັນວ່າຄະດີດັ່ງກ່າວເປັນຄະດີຄ້າມະນຸດ ຫຼື ການລະເມີດແຮງງານ. ຍັງມີການຍົກຕົວຢ່າງກ່ຽວກັບການສືບສວນ-ສອບສວນ ທີ່ບໍ່ໄດ້ດຳເນີນການຂ້າມຊາຍແດນ ສົ່ງຜົນເຮັດໃຫ້ການດຳເນີນຄະດີຕໍ່ກັບຜູ້ຄ້າມະນຸດ ບໍ່ໄດ້ຖືກດຳເນີນຄະດີໃນເຂດອຳນາດສານອື່ນ. ໄດ້ມີຄຳຖາມເກີດຂຶ້ນວ່າ ຫຼັກການບໍ່ລົງໂທດ ທີ່ກຳນົດໄວ້ໃນບົດບັນທຶກຄວາມເຂົ້າໃຈ ຈະມີປະສິດທິພາບໃນການຈັດຕັ້ງປະຕິບັດ ແນວໃດ ຖ້າຫາກວ່າມັນບໍ່ໄດ້ກຳນົດໄວ້ໃນກົດໝາຍພາຍໃນ. ປະເດັນນີ້ໄດ້ຍົກໃຫ້ເຫັນວ່າ ຂໍ້ກຳນົດໃນກົດໝາຍທີ່ຊັດເຈນ ຈະສະໜັບສະໜູນການນຳໃຊ້ຫຼັກການບໍ່ລົງໂທດລະຫວ່າງປະເທດ ຢ່າງສະໝໍ່າສະເໝີ ແລະ ທ່າແຮງໃນການຫຼຸດຜ່ອນການເອື້ອຍອີງໃສ່ບົດບັນທຶກຄວາມເຂົ້າໃຈ ແລະ SOP ລະຫວ່າງກັນ. ມີຂໍ້ກັງກົນວ່າ SOP ແລະ MOU ສຸມໃສ່ແມ່ຍິງ ແລະ ເດັກ, ເຮັດໃຫ້ມີຊ່ອງຫວ່າງໃນການປົກປ້ອງການຄ້າຜູ້ຊາຍ ໃນການປະມົງ, ການກໍ່ສ້າງ ແລະ ອຸດສາຫະກຳອື່ນໆ.

## ສິ່ງທ້າທາຍໃນການກຳນົດຕົວຜູ້ຖືກເຄາະຮ້າຍ

**ການກຳນົດຕົວຢ່າງມີປະສິດທິພາບ ເປັນຫົວໃຈສຳຄັນຕໍ່ການບໍ່ລົງໂທດ:** ພາກສ່ວນທີ່ກ່ຽວຂ້ອງໄດ້ເຮັດໃຫ້ເຫັນເຖິງຄວາມສຳຄັນໃນການກຳນົດຕົວຕໍ່ກັບການບໍ່ລົງໂທດ. ໜ່ວຍງານຂອງລັດ ໝັ້ນໃຈວ່າການກຳນົດຕົວໂດຍໄວ ແລະ ມີປະສິດທິພາບ ໝາຍເຖິງຜູ້ທີ່ຖືກຄ້າມະນຸດວ່າ - ບໍ່ວ່າຈະເປັນຄົນກຳປູເຈຍ ຫຼື ບໍ່ແມ່ນຄົນກຳປູເຈຍ - ຈະບໍ່ຖືກລົງໂທດ. ຂັ້ນຕອນການກຳນົດຕົວຜູ້ຖືກເຄາະຮ້າຍ ໄດ້ກຳນົດໂດຍສອດຄ່ອງກັບ *ອານຸສັນຍາວ່າດ້ວຍການຕ້ານການຄ້າມະນຸດ ແລະ ກົດໝາຍຂອງກຳປູເຈຍ ວ່າດ້ວຍການປາບປາມການຄ້າມະນຸດ ແລະ ການລ່ວງລະເມີດທາງເພດ.* ພວກເຂົາໄດ້ອະທິບາຍວ່າ ມີການລາຍງານ ການນຳໃຊ້ ການສັນນິຖານວ່າເປັນຜູ້ຖືກເຄາະຮ້າຍ ໃນຂັ້ນຕອນເບື້ອງຕົ້ນ ເພື່ອບໍ່ໃຫ້ມີຂໍ້ຜິດພາດ ແຕ່ເຖິງວ່າຜູ້ຖືກເຄາະຮ້າຍ ຈະບໍ່ໄດ້ຮັບການກຳນົດຕົວໃນເບື້ອງຕົ້ນນັ້ນ, ບຸກຄົນດັ່ງກ່າວຈະຖືກກຳນົດຕົວພາຍຫຼັງ ໂດຍການສືບສວນ-ສອບສວນ ຫຼື ການໄຕ່ສວນຂອງຜູ້ພິພາກສາ. ຄວາມຄິດເຫັນເຫຼົ່ານີ້ກົງກັນຂ້າມກັບຄວາມຄິດເຫັນທີ່ສະແດງອອກໃນລະດັບສາກົນ ກ່ຽວກັບ ການຂາດການກຳນົດຕົວຜູ້ຖືກເຄາະຮ້າຍຈາການຄ້າມະນຸດຢ່າງມີປະສິດທິພາບໃນກຳປູເຈຍ.[82]

**ການປະຕິບັດທີ່ເປັນຕົວແບບທີ່ດີ ໃນການກັ່ນກອງ ຄົນກຳປູເຈຍ ທີ່ກັບມາຈາກຕ່າງປະເທດ:** ໄດ້ມີການຍົກຕົວຢ່າງກ່ຽວກັບປະຕິບັດຂອງເຈົ້າໜ້າທີ່ຕຳຫຼວດ ເພື່ອຮັບປະກັນວ່າ ປະຊາຊົນສະບາຍໃຈທີ່ຈະໂອ້ລົມກັບເຂົາເຈົ້າ ລວມທັງ ການໃສ່ຊຸດທຳມະດາ ແທນທີ່ຈະໃສ່ຊຸດເຄື່ອງແບບເພື່ອສຳພາດເຂົາເຈົ້າ. ໃນນີ້ ສັງເກດໄດ້ວ່າ ກຸ່ມຄົນທີ່ກັບມາຈາກປະເທດໄທ ຫຼື ມາເລເຊຍ ຫຼື ອິນໂດເນເຊຍ ໄດ້ຮັບການກັ່ນກອງໂດຍເຈົ້າໜ້າທີ່ຕຳຫຼວດຕ້ານການຄ້າມະນຸດ.

**ຄວາມກັງວົນກ່ຽວກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດເພດຊາຍ ບໍ່ໄດ້ຮັບການກຳນົດຕົວ:** ຜູ້ຕອບບາງທ່ານ ໄດ້ສະແດງຄວາມເປັນກັງວົນທີ່ວ່າ ຂໍ້ສົມມຸດຕິຖານວ່າຜູ້ຊາຍບໍ່ໄດ້ຮັບການກຳນົດຕົວ ສົ່ງຜົນໃຫ້ການກຳນົດຕົວຜູ້ຖືກເຄາະຮ້າຍເພດຊາຍຕໍ່າ ເມື່ອທຽບກັບແມ່ຍິງ ແລະ ເດັກນ້ອຍ.

**ສິ່ງທ້າທາຍໃນການກຳນົດຕົວຜູ້ຖືກເຄາະຮ້າຍທີ່ເປັນຄົນຕ່າງປະເທດໃນກຳປູເຈຍ:** ໄດ້ມີການສະແດງຄວາມເປັນກັງວົນວ່າຄົນຕ່າງປະເທດ ທີ່ໄດ້ຖືກຈັບຕົວ ແລະ ປັບໃໝ ຈາກການລະເມີດກົດໝາຍວ່າດ້ວຍແຮງງານ ແລະ ການເຂົ້າ-ອອກເມືອງ ໂດຍບໍ່ມີການສືບສວນ-ສອບສວນເພີ່ມເຕີມວ່າພວກເຂົາໄດ້ເຂົ້າມາປະເທດກຳປູເຈຍ

---

82 ເບິ່ງຕົວຢ່າງ, ການສັງເກດບົດສະຫຼຸບມ້ວນທ້າຍ ກ່ຽວກັບບົດລາຍງານເປັນໄລຍະ ຄັ້ງທີ 6 ຂອງກຳປູເຈຍ, *ຄະນະກຳມະການວ່າດ້ວຍການລຶບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ,* CEDAW/C/KHM/CO/6, ວັນທີ 12 ພະຈິກ 2019 [26].

ໄດ້ແນວໃດ, ໃຜເປັນຄົນພາພວກເຂົາມາປະເທດກຳປູເຈຍ, ໄດ້ມີການສັນຍາຫຍັງໄວ້ແດ່ ແລະ ໃນດ້ານອື່ນໆ ເພື່ອເຮັດໃຫ້ພວກເຂົາໄດ້ຮັບການກັ່ນກອງ ສຳລັບຕົວຊີ້ວັດການຄ້າມະນຸດ. ໃນກໍລະນີດັ່ງກ່າວນີ້ ໄດ້ມີການຕັ້ງຂໍ້ສັງເກດວ່າ ມີການຂາດການປະສານງານລະຫວ່າງເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງ ແລະ ເຈົ້າໜ້າທີ່ຕຳຫຼວດຕ້ານການຄ້າມະນຸດ ຜູ້ທີ່ມີບົດບາດແຕກຕ່າງກັນ ເຊິ່ງໝາຍຄວາມວ່າ ຜູ້ເຄື່ອນຍ້າຍແຮງງານບາງຄົນ ຢູ່ໃນສະຖານະການທີ່ຜິດກົດໝາຍ ບໍ່ໄດ້ຮັບການກັ່ນກອງ ວ່າຈະເປັນຜູ້ທີ່ຕົກເປັນຜູ້ຖືກເຄາະຮ້າຍ ແຕ່ ຖືກເນລະເທດກັບ ແທນທີ່ຈະຖືກສົ່ງກັບປະເທດ. ເພື່ອແກ້ໄຂກໍລະນີນີ້, ໄດ້ເນັ້ນໜັກໃຫ້ເຫັນເຖິງຄຸນຄ່າທີ່ເນັ້ນໃສ່ວິທີການຂອງຫຼາຍພາກສ່ວນ, ເພື່ອເຮັດໃຫ້ໜ່ວຍງານການກວດຄົນເຂົ້າ-ອອກເມືອງໄດ້ດຳເນີນການ ໃນກໍລະນີທີ່ມີແຮງງານ ມາເຮັດວຽກ ຫຼື ອາໄສຢູ່ໂດຍບໍ່ຖືກຕ້ອງຕາມກົດໝາຍ ໂດຍສາມາດໄດ້ຮັບການສະໜັບສະໜູນຈາກເຈົ້າໜ້າທີ່ຕຳຫຼວດຕ້ານການຄ້າມະນຸດ, ກົດຈະກຳທາງສັງຄົມ ແລະ ພາກສ່ວນອື່ນໆ ເພື່ອສະໜັບສະໜູນການກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນກຸ່ມຄົນທີ່ເປັນແຮງງານເຄື່ອນຍ້າຍ.

## ການລົງໂທດຜູ້ຖືກເຄາະຮ້າຍໃນພາກປະຕິບັດຕົວຈິງ

ການນຳໃຊ້ກົດໝາຍວ່າດ້ວຍການຄ້າມະນຸດທີ່ບໍ່ຖືກຕ້ອງ ເພື່ອລົງໂທດແມ່ຍິງໃນອຸດສາຫະກຳທາງເພດ: ຄະນະກຳມະການ ເພື່ອລຶບລ້າງການຈຳແນກຕໍ່ແມ່ຍິງ ໄດ້ສະແດງຄວາມເປັນຫ່ວງກ່ຽວກັບການນຳໃຊ້ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດໃນທາງທີ່ບໍ່ຖືກຕ້ອງ ເພື່ອເປັນການລົງໂທດບຸກຄົນ ທີ່ບໍ່ຮັບຜິດຊອບສຳລັບການຄ້າມະນຸດ ແລະ ຮຽກຮ້ອງໃຫ້ກຳປູເຈຍປັບປຸງກົດໝາຍພາຍໃນ ເພື່ອບໍ່ໃຫ້ລົງໂທດແມ່ຍິງໃນສະຖານການຄ້າປະເວນີ.[83] ໃນຂະນະດຽວກັນ ຜູ້ລ່ວງລະເມີດ ກໍບໍ່ຄ່ອຍຈະຖືກດຳເນີນຄະດີ. ເພື່ອຕອບສະໜອງສິ່ງນີ້, ຄະນະກຳມະການ ໄດ້ຮຽກຮ້ອງໃຫ້ກຳປູເຈຍ ເພື່ອ:

> *ຮັບປະກັນວ່າ ມາດຕະການ ຕ້ານການຄ້າມະນຸດ ລວມທັງ ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ຖືກນຳໃຊ້ເພື່ອຈຸດປະສົງຂອງການດຳເນີນຄະດີຜູ້ຄ້າມະນຸດ ແລະ ສະໜອງການປຽວຢາທີ່ມີປະສິດທິພາບໃຫ້ແກ່ຜູ້ຖືກເຄາະຮ້າຍ ແລະ ຈະບໍ່ນຳໃຊ້ມາດຕະການດັ່ງກ່າວໃນທາງທີ່ບໍ່ຖືກຕ້ອງຕໍ່ກັບບຸກຄົນ ຜູ້ທີ່ບໍ່ມີຄວາມຮັບຜິດຊອບຕໍ່ກັບຄວາມຜິດໃນສະຖານການຄ້າມະນຸດ.*[84]

ໃນບັນດາກຸ່ມຄົນເຫຼົ່ານີ້ ໃນອຸດສາຫະກຳທາງເພດ ທີ່ຖືກດຳເນີນຄະດີສຳລັບຄວາມຜິດໃນກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ, ອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ໄດ້ຖືກຕັ້ງຂໍ້ຫາ, ການດຳເນີນຄະດີ ແລະ ຖືກຕັດສິນໃນຖານະຜູ້ຄ້າມະນຸດ ແທນທີ່ຜູ້ຄ້າມະນຸດຈະຖືກສອບສວນ-ສອບສວນ ແລະ ນຳເຂົ້າສູ່ຂະບວນການຍຸຕິທຳ.

**ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ເປັນຄົນຕ່າງປະເທດ ໃນກຳປູເຈຍ:** ມີຄວາມເປັນກັງວົນກ່ຽວກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ເປັນຄົນຕ່າງປະເທດ ທີ່ຖືກລົງໂທດໃນກຳປູເຈຍ. ບົດລາຍງານການຄ້າມະນຸດຂອງສະຫະລັດອາເມ ລິກາ ປີ 2020 ໄດ້ອ້າງເຖິງການລາຍງານຂອງສື່ມວນຊົນກ່ຽວກັບໄວໜຸ່ມມາເລເຊຍ ທີ່ໄດ້ຈ່າຍຄ່າທຳນຽມໃນການຈັດຫາງານ ສຳລັບວຽກທີ່ມີຄ່າຕອບແທນສູງ, ພຽງແຕ່ຖືກສົ່ງຕໍ່ມາທີ່ກຳປູເຈຍ ບ່ອນທີ່ພວກເຂົາຖືກລ່ວງລະເມີດໂດຍຜູ້ຄ້າມະນຸດ ແລະ ຖືກຈັບຕົວໃນຂໍ້ຫາການລະເມີດການເຂົ້າ-ອອກເມືອງ.[85] ຜູ້ຕອບບາງທ່ານໄດ້ຊີ້ໃຫ້ເຫັນເຖິງສະຖານະການທີ່ຜູ້ຖືກເຄາະຮ້າຍທີ່ເປັນຄົນຕ່າງປະເທດ ທີ່ຖືກລ່ວງລະເມີດບາງຮູບແບບ ໄດ້ຖືກຈຳແນກ; ຜູ້ຕອບບາງທ່ານ ໄດ້ໃຫ້ຂໍ້ສັງເກດວ່າ ບາງຄັ້ງຜູ້ຖືກເຄາະຮ້າຍທີ່ເປັນຄົນຫວຽດນາມ, ຄົນຈີນ ແລະ ຄົນອາຟຣິກາ ມີຄວາມຢ້ານກົວຕໍ່ກັບການເລືອກປະຕິບັດ. ເຖິງແມ່ນວ່າຈະມີການບໍລິການ ຈຳນວນຫຼາຍທີ່ເປັນໜ່ວຍງານ

---

83 ເບິ່ງຕົວຢ່າງ ການສັງເກດບົດສະຫຼຸບມ້ອນທ້າຍ ກ່ຽວກັບບົດລາຍງານເປັນໄລຍະ ຄັ້ງທີ 6 ຂອງກຳປູເຈຍ, *ຄະນະກຳມະການວ່າດ້ວຍການລຶບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ,* CEDAW/C/KHM/CO/6, ວັນທີ 12 ພະຈິກ 2019 [26].

84 ເບິ່ງຕົວຢ່າງ ການສັງເກດບົດສະຫຼຸບມ້ອນທ້າຍ ກ່ຽວກັບບົດລາຍງານເປັນໄລຍະ ຄັ້ງທີ 6 ຂອງກຳປູເຈຍ, *ຄະນະກຳມະການວ່າດ້ວຍການລຶບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ,* CEDAW/C/KHM/CO/6, ວັນທີ 12 ພະຈິກ 2019 [26](c); [27](f).

85 ບົດລາຍງານການຄ້າມະນຸດ ປີ 2020: ມາເລເຊຍ (ກະຊວງການຕ່າງປະເທດສະຫະລັດອາເມລິກາ, 2020)

ຂອງລັດ ແລະ ໜ່ວຍງານທີ່ບໍ່ແມ່ນຂອງລັດສໍາລັບຄົນກໍາປູເຈຍ ແຕ່ມີສອງສາມອົງການເທົ່ານັ້ນ ທີ່ໃຫ້ການບໍລິການແກ່ຄົນຕ່າງປະເທດ. ຄວາມສ່ຽງໃນການລົງໂທດເພີ່ມຂຶ້ນ ໂດຍສະເພາະ ຄົນຕ່າງປະເທດໃນກໍາປູເຈຍ ທີ່ຖືກລ່ວງລະເມີດໃນການຄ້າປະເວນີ ແລະ ການໃຫ້ຖືພາແທນ, ໂດຍມີຄໍາຖາມທີ່ຊັບຊ້ອນເກີດຂຶ້ນວ່າ ການໃຫ້ຖືພາແທນນັ້ນຢູ່ໃນຄວາມເຂົ້າໃຈຂອງການຄ້າມະນຸດ ຫຼື ບໍ່. ຕໍ່ກັບປະເດັນນີ້, ມັນໄດ້ສັງເກດເຫັນວ່າ ຜູ້ຍິງບາງຄົນ ທີ່ເຄີຍຖືກໃຫ້ຖືພາແທນນັ້ນ ໄດ້ຖືກລົງໂທດສໍາລັບການກະທໍາ ທີ່ຜິດກົດໝາຍ ບໍ່ສະເພາະແຕ່ ໃນກໍາປູເຈຍ ເທົ່ານັ້ນ ແຕ່ຍັງຢູ່ບ່ອນອື່ນໆອີກໃນພາກພື້ນອາຊຽນ ຖ້າຫາກບໍ່ມີກົດໝາຍ ທີ່ສາມາດໃຫ້ກໍານົດຕົວພວກເຂົາໃນຖານະທີ່ອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ໃນທາງກົງກັນຂ້າມ, ຜູ້ຕອບບາງທ່ານ ໄດ້ສະແດງຄວາມຄິດເຫັນວ່າ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ເປັນຄົນຕ່າງປະເທດໃນກໍາປູເຈຍ ບໍ່ໄດ້ຖືກລົງໂທດສໍາລັບຄວາມຜິດທີ່ກ່ຽວຂ້ອງກັບການຄ້າມະນຸດ ແຕ່ໄດ້ຖືກປະຕິບັດໃນຖານະຜູ້ຖືກເຄາະຮ້າຍ ໂດຍເຈົ້າໜ້າທີ່ກວດຄົນເຂົ້າ-ອອກເມືອງ ແລະ ເຈົ້າໜ້າທີ່ຕໍາຫຼວດ. ໄດ້ມີການອ້າງເຖິງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ເປັນຄົນຕ່າງປະເທດ ທີ່ຖືກລ່ວງລະເມີດທາງເພດ ແລະ ບັງຄັບໃຊ້ແຮງງານ (ລວມທັງ ທີ່ມາຈາກ ບັງກາລາເດສ, ຈີນ, ເອີລີບຕາເວັນອອກ, ອິນເດຍ ຫຼື ເນປານ, ສີລັງກາ ຫຼື ຫວຽດນາມ) ຜູ້ທີ່ບໍ່ໄດ້ຖືກດໍາເນີນຄະດີ ເຖິງແມ່ນວ່າໃນກໍລະນີທີ່ພວກເຂົາສະໜັບສະໜູນໃຫ້ຜູ້ອື່ນເຂົ້າມາປະເທດກໍາປູເຈຍກັບພວກເຂົາ ເຊິ່ງຮູ້ວ່າການກະທໍາດັ່ງກ່າວນັ້ນຜິດກົດໝາຍ.

**ຜູ້ຖືກເຄາະຮ້າຍຄົນກໍາປູເຈຍ ທີ່ຖືກຄ້າມະນຸດໃນຕ່າງປະເທດ:** ໜ່ວຍງານຂອງລັດໄດ້ກ່າວວ່າ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄດ້ຖືກປົກປ້ອງພາຍໃນກໍາປູເຈຍ, ມີການສະແດງຄວາມເປັນຫ່ວງກ່ຽວກັບສະຖານະພາບຂອງຜູ້ຖືກເຄາະຮ້າຍ ຄົນກໍາປູເຈຍ ທີ່ຖືກຄ້າມະນຸດໃນຕ່າງປະເທດ. ມີການລາຍງານວ່າ ຜູ້ຖືກເຄາະຮ້າຍຄົນກໍາປູເຈຍ ໄດ້ປະເຊີນກັບການຖືກລົງໂທດ ສໍາລັບການລະເມີດການເຂົ້າ-ອອກເມືອງ ຫຼື ຂໍ້ກໍານົດທາງອາຍາ ໃນຕ່າງປະເທດ ລວມທັງ ປະເທດຈີນ, ມາເລເຊຍ, ໄທ ແລະ ສິງກະໂປ, ໃນບາງກໍລະນີ ພວກເຂົາກໍໄດ້ຮັບການກໍານົດຕົວແລ້ວ ໃນຖານະຜູ້ຖືກເຄາະຮ້າຍ. ຜູ້ທີ່ອາດຈະເປັນຜູ້ຖືກຄ້າມະນຸດ ໃນສະຖານການບັງຄັບໃຊ້ແຮງງານ ກໍໄດ້ຖືກລາຍງານວ່າ ຖືກລົງໂທດໃນສະຖານການຕັດໄມ້ທີ່ຜິດກົດໝາຍ ຫຼື ເຮັດວຽກທີ່ຜິດກົດໝາຍໃນຄາຊີໂນຂອງຄົນຈີນ ໂດຍທີ່ບໍ່ໄດ້ຮັບການກໍານົດຕົວ ໃນຖານະຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

**ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນອຸດສາຫະກໍາການປະມົງ:** ຜູ້ຕອບຝ່າຍລັດຖະບານ ແລະ ບໍ່ແມ່ນຝ່າຍລັດຖະບານ ໄດ້ສະແດງຄວາມເປັນຫ່ວງກ່ຽວກັບສິ່ງທ້າທາຍໃນການປົກປ້ອງບຸກຄົນ ທີ່ຖືກລ່ວງລະເມີດໃນອຸດສາຫະກໍາການປະມົງ, ບຸກຄົນທີ່ເຄີຍຖືກຂົ່ມຂູ່ ຫຼື ຂົ່ມຂູ່ທີ່ຈະຖືກຮ້ອງຟ້ອງ ແລະ ລົງໂທດ ກ່ຽວກັບເອກະສານປອມ ແລະ ອາຊະຍາກໍາທີ່ກ່ຽວຂ້ອງກັບການເຂົ້າ-ອອກເມືອງ. ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນການປະມົງ ຜູ້ທີ່ຈັດການ ການຫຼົບໜີຈາກສະຖານະການຂອງເຂົາເຈົ້າ ໄດ້ຖືກລົງໂທດ ສໍາລັບຄວາມຜິດທີ່ກ່ຽວຂ້ອງກັບການເຂົ້າ-ອອກເມືອງ ໃນປະເທດທີ່ສາມາດໄປເຖິງໄດ້ ໂດຍບໍ່ມີການກໍານົດຕົວໃນຖານະຜູ້ຖືກເຄາະຮ້າຍ. ໄດ້ມີການລາຍງານວ່າ ຊາວປະມົງທີ່ອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄດ້ຖືກສົ່ງໄປກັກຂັງ ແລະ ຖືກແນະນໍາໃຫ້ຮັບສາລະພາບຜິດ ແລະ ຈາກນັ້ນ ໄດ້ຖືກລົງໂທດທາງດ້ານຮ່າງກາຍ ແລະ ບັນທຶກປະຫວັດອາຊະຍາກໍາ ແທນທີ່ ທີ່ຈະໄດ້ຮັບການກໍານົດຕົວ ແລະ ປົກປ້ອງໃນຖານະຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

**ຜູ້ຖືກເຄາະຮ້າຍຄົນກໍາປູເຈຍ ທີ່ກັບຄືນມາຈາກຕ່າງປະເທດ:** ມີຄວາມເປັນເອກະພາບກັນວ່າ ຜູ້ທີ່ກັບຄືນບ້ານທີ່ກັບມາຈາກຕ່າງປະເທດ ບໍ່ຖືກລົງໂທດ ໃນສະຖານການອອກຈາກປະເທດກໍາປູເຈຍຢ່າງຜິດກົດໝາຍ. ຄວາມພະຍາຍາມຂອງເຈົ້າໜ້າທີ່ຕໍາຫຼວດ ໃນການບັນເທົາຄວາມເປັນກັງວົນຂອງຜູ້ຖືກເຄາະຮ້າຍທີ່ຈະກັບຄືນບ້ານ - ລວມທັງ ຊາວປະມົງທີ່ຖືກສົ່ງກັບຄືນປະເທດ - ແມ່ນໄດ້ຮັບການຍົກຍ້ອງຊົມເຊີຍ. ຫົວໜ້າແກ້ງ ຫຼື ນາຍໜ້າ ໃນລະຫວ່າງກຸ່ມຂອງເຂົາເຈົ້າ ຜູ້ທີ່ໄດ້ພາເພື່ອນບ້ານ ຫຼື ຍາດພີ່ນ້ອງເພື່ອໄປເຮັດວຽກຫາປາໃນຕ່າງປະເທດ ຈະບໍ່ຖືກຕັ້ງຂໍ້ຫາໃນຖານະຜູ້ກະທໍາຜິດ ເນື່ອງຈາກວ່າພວກເຂົາກໍຕົກເປັນຜູ້ຖືກເຄາະຮ້າຍເຊັ່ນກັນ. ໃນທາງກົງກັນຂ້າມກັບກໍລະນີນີ້, ມີການກ່າວເຖິງເຫດການ ທີ່ມີບຸກຄົນຫນຶ່ງ ທີ່ເຄີຍໄດ້ຮັບການບໍລິການໃນຖານະຜູ້ຖືກເຄາະຮ້າຍ ແຕ່ເມື່ອຖືກຄົ້ນພົບວ່າ ລາວໄດ້ນໍາພາເອົາຜູ້ຖືກເຄາະຮ້າຍຫຼາຍຄົນໄປເຮັດວຽກຢ່າງຜິດກົດໝາຍຢູ່ຕ່າງປະເທດ, ລາວໄດ້ຖືກຈັດປະເພດຄືນໃໝ່ໃນຖານະຜູ້ກະທໍາຜິດ ແລະ ການບໍລິການສໍາລັບລາວໄດ້ຖືກຍົກເລີກໄປ.

## 2.3. ອິນໂດເນເຊຍ

ມີການຈັດກອງປະຊຸມປຶກສາຫາລືແບບໂຕະມົນສອງຄັ້ງ ໃນປະເທດອິນໂດເນເຊຍ ເພື່ອຈຸດປະສົງຂອງການຄົ້ນຄວ້ານີ້, ໂດຍມີຜູ້ເຂົ້າຮ່ວມທັງໝົດ 29 ທ່ານ ທີ່ຕາງໜ້າມາຈາກທັງຝ່າຍລັດ ແລະ ໜ່ວຍງານທີ່ບໍ່ແມ່ນຝ່າຍລັດ ທີ່ເຮັດວຽກຕ້ານການຄ້າມະນຸດ. ໃນພາກນີ້ ເນັ້ນໃຫ້ເຫັນເຖິງຂໍ້ມູນດ້ານເລິກ ລວມທັງ ເອກະສານ/ຂໍ້ມູນທີ່ເປີດກວ້າງ ທີ່ກ່ຽວຂ້ອງ.

### ຫຼັກການບໍ່ລົງໂທດໃນກົດໝາຍ ແລະ ນະໂຍບາຍ

**ຂໍ້ກໍານົດທີ່ຊັດເຈນກ່ຽວກັບຫຼັກການບໍ່ລົງໂທດ ໃນກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ:** ມາດຕາ 18 ຂອງກົດ ໝາຍເລກທີ 21 ວ່າດ້ວຍ *ການລຶບລ້າງອາຊະຍາກໍາທາງອາຍາກ່ຽວກັບການຄ້າມະນຸດ* ປີ 2007 ທີ່ປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈາກການຖືກຕັ້ງຂໍ້ຫາທາງອາຍາ ໃນກໍລະນີທີ່ພວກເຂົາຖືກບັງຄັບໃຫ້ກະທໍາຜິດທາງອາຍາ. ມັນບໍ່ຈໍາກັດຂອບເຂດການຕັ້ງຂໍ້ຫາທາງອາຍາ ທີ່ຖືກນໍາໃຊ້, ໂດຍກໍານົດພຽງແຕ່ວ່າ 'ຜູ້ຖືກເຄາະຮ້າຍ ທີ່ກະທໍາຜິດທາງອາຍາ ພາຍໃຕ້ການບັງຄັບຂອງຜູ້ກະທໍາຜິດທາງອາຍາໃນສະຖານການຄ້າມະນຸດ ຈະບໍ່ມີຄວາມຮັບຜິດຊອບໃນຂໍ້ຫາທາງອາຍາ.' ຄວາມຜິດກ່ຽວກັບທາງແພ່ງ, ທາງບໍລິຫານ ແລະ ການເຂົ້າ-ອອກເມືອງ ບໍ່ໄດ້ກໍານົດໄວ້ໃນຂໍ້ກໍານົດນີ້.

**ນິຕິກໍາອື່ນໆທີ່ກ່ຽວຂ້ອງ ຕໍ່ກັບຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍ:** ກົດໝາຍສະບັບອື່ນໆທີ່ກ່າວວ່າ ກ່ຽວຂ້ອງກັບຫຼັກການບໍ່ລົງໂທດ ລວມມີ ມາດຕາ 55 ຂອງ *ປະມວນກົດໝາຍອາຍາ* ເຊິ່ງແຄບກວ່າການປົກປ້ອງຕາມທີ່ກໍານົດໄວ້ໃນມາດຕາ 18 ຂອງກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ແລະ ກ່ຽວຂ້ອງກັບຄວາມຮັບຜິດຊອບທາງອາຍາສໍາລັບບຸກຄົນທີ່ກະທໍາຜິດໂດຍເຈດຕະນາ ຫຼື ທີ່ຊັກຊວນໃຫ້ຜູ້ອື່ນກະທໍາຜິດທາງອາຍາ. ມາດຕາ 10 ຂອງກົດໝາຍເລກທີ 31 (2014), ທີ່ເປັນ *ກົດໝາຍວ່າດ້ວຍການປົກປ້ອງຜູ້ຖືກເຄາະຮ້າຍ ແລະ ພະຍານ* ແມ່ນໄດ້ສັງເກດເຫັນວ່າຂັດກັບຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍ ໂດຍບໍ່ອະນຸຍາດໃຫ້ດໍາເນີນຄະດີກັບພະຍານ, ຜູ້ຖືກເຄາະຮ້າຍ, ຜູ້ໃຫ້ຂໍ້ມູນ ໃນກົດໝາຍແພ່ງ ແລະ ກົດໝາຍອາຍາ ຜູ້ທີ່ໃຫ້ຂໍ້ມູນ ຫຼື ໃຫ້ການດ້ວຍຄວາມບໍລິສຸດໃຈ. ມີການປຶກສາຫາລືກ່ຽວກັບສົນທິສັນຍາ ACTIP ເຊັ່ນດຽວກັນ ແລະ ໃນຂອບເຂດທີ່ເປັນໄປໄດ້ ແລະ ຄວນໄດ້ຮັບການພິຈາລະນາ ໃຫ້ມີຜົນຜູກມັດທາງດ້ານກົດໝາຍ ໃນກໍລະນີທີ່ບໍ່ມີຂໍ້ກໍານົດໃນກົດໝາຍພາຍໃນ ທີ່ເຮັດໃຫ້ມີຜົນກະທົບທີ່ຊັດເຈນ.

**ນະໂຍບາຍ ທີ່ກ່ຽວຂ້ອງກັບການບໍ່ລົງໂທດ:** *ແຜນງານແຫ່ງຊາດເພື່ອລຶບລ້າງການຄ້າມະນຸດ* ປີ 2015-2019 ບໍ່ມີຫຼັກການບໍ່ລົງໂທດ. ແຜນງານແຫ່ງຊາດ ປີ 2020-2024 ຍັງບໍ່ທັນມີເອກະສານໃນເວລາທີ່ເຮັດບົດຄົ້ນຄວ້າໃນປີ 2021 ໃນເວລາການປຶກສາຫາລືແບບໂຕະມົນນັ້ນ, ມີການແນະນໍາວ່າ ຄວນລວມເອົາຫຼັກການບໍ່ລົງໂທດເຂົ້າໃນ ແຜນງານໃນລະດັບຊາດ ແລະ ລະດັບພາກພື້ນ ທີ່ໄດ້ຮັບການສະໜັບສະໜູນໂດຍ ແຜນງານ ສໍາລັບການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ຕາມທີ່ກໍານົດໄວ້ໃນກົດໝາຍ.

### ການຕີຄວາມໝາຍຫຼັກການບໍ່ລົງໂທດ

**ຄວາມເຂົ້າໃຈຫຼັກການບໍ່ລົງໂທດ:** ບັນດາຜູ້ປະຕິບັດຕົວຈິງ ໄດ້ສະແດງຄວາມຄິດເຫັນທີ່ແຕກຕ່າງກັນ ວ່າຫຼັກການບໍ່ລົງໂທດນັ້ນ ໄດ້ຖືກເຂົ້າໃຈເປັນຢ່າງດີໃນອິນໂດເນເຊຍ ຫຼື ບໍ່. ບາງທ່ານຮູ້ສຶກວ່າເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍດ່ານໜ້າ ແລະ ຜູ້ຕາງໜ້າຈາກໜ່ວຍງານປົກປ້ອງຜູ້ຖືກເຄາະຮ້າຍ ແລະ ພະຍານ (LPSK) ຮັບຮູ້ວ່າຜູ້ຖືກເຄາະຮ້າຍທີ່ກໍ່ອາຍະຊາກໍາທາງອາຍາ ເຊັ່ນ ການປອມແປງເອກະສານ ເຊິ່ງພວກເຂົາບໍ່ຖືກລົງໂທດ ເນື່ອງຈາກວ່າ ມາດຕາ 18 ຂອງກົດໝາຍເລກທີ 21 ນັ້ນ ມີຜົນສັກສິດ. ຜູ້ຕອບບາງທ່ານ ສະແດງຄວາມຄິດເຫັນວ່າ ສະມາຊິກຝ່າຍຕຸລາການມີຄວາມເຂົ້າໃຈກ່ຽວກັບຫຼັກການບໍ່ລົງໂທດເປັນຢ່າງດີ ເພາະວ່າ ມັນໄດ້ກໍານົດໄວ້ໃນກົດໝາຍ ໃນຂະນະທີ່ ຜູ້ຕອບທ່ານອື່ນ ຮູ້ສຶກວ່າ ມັນຈໍາເປັນຕ້ອງໄດ້ມີການອະທິບາຍເພີ່ມເຕີມຢູ່ພາຍໃນປະເທດຫຼາຍຂຶ້ນ ເພື່ອເຮັດໃຫ້ຜູ້ພິພາກສາຍອມຮັບວ່າ ມັນໄດ້ຖືກລວມເຂົ້າໃນກົດໝາຍພາຍໃນຢ່າງມີປະສິດທິພາບ. ຜູ້ຕອບບາງທ່ານ ຮູ້ສຶກວ່າ ຂໍ້ກໍານົດດັ່ງ

ກ່າວ ອາດຈະຖືກຕີຄວາມໝາຍແຕກຕ່າງກັນໄປຕາມແຕ່ລະບຸກຄົນ. ມີຄວາມເປັນກັງວົນຕໍ່ກັບກຸ່ມຄົນທີ່ມີຄວາມເຂົ້າໃຈທີ່ບໍ່ເປັນເອກະພາບກັນ ໂດຍສະເພາະໃນລະດັບທ້ອງຖິ່ນ, ຜູ້ປະຕິບັດຕົວຈິງທາງດ້ານຍຸຕິທຳທາງອາຍາ ເຊິ່ງອາດຈະຂາດຄວາມເຂົ້າໃຈກ່ຽວກັບການຄ້າມະນຸດ ແລະ ບໍ່ສາມາດເຂົ້າໃຈວ່າ ເປັນຫຍັງ ຜູ້ທີ່ກໍ່ອາຊະຍາກຳ ຈຶ່ງບໍ່ຄວນລົງໂທດພວກເຂົາ.

**ການສ້າງການເຊື່ອມໂຍງລະຫວ່າງການຄ້າມະນຸດ ແລະ ຄວາມຜິດຂອງຜູ້ຖືກເຄາະຮ້າຍ:** ການເຊື່ອມໂຍງກັນລະຫວ່າງຄວາມຜິດ ແລະ ການຄ້າມະນຸດ ໄດ້ຖືກອະທິບາຍໄວ້ ໂດຍການຂົ່ມຂູ່ (ບັງຄັບ); ໃນກໍລະນີທີ່ຜູ້ຖືກເຄາະຮ້າຍ ກະທຳຄວາມຜິດທີ່ຂັດກັບເຈດຈຳນົງຂອງເຂົາເຈົ້າ, ພວກເຂົາຈະບໍ່ຖືກລົງໂທດ. ເຖິງຢ່າງໃດກໍຕາມ, ຜູ້ຕອບບາງທ່ານຮູ້ສຶກວ່າກົດໝາຍຍັງຂາດລາຍລະອຽດທີ່ພຽງພໍກ່ຽວກັບເງື່ອນໄຂ ວ່າຈະພິສູດອີງປະກອບຂອງການຄ້າມະນຸດແນວໃດ ໃນການພິຈາລະນາຄະດີ ເພື່ອເຮັດໃຫ້ມາດຕາ 18 ໄດ້ຖືກນຳໃຊ້ ເພື່ອປົກປ້ອງບຸກຄົນທີ່ຖືກຄ້າມະນຸດ.

ມີຂໍ້ສັງເກດກ່ຽວກັບສິ່ງທ້າທາຍ ໃນການພິສູດການກໍ່ອາຊະຍາກຳທາງອາຍາ ທີ່ກະທຳໂດຍຜູ້ຖືກເຄາະຮ້າຍມີຄວາມສຳພັນກັບການກະທຳຂອງຜູ້ກະທຳຜິດ ເຊິ່ງມີຄຳຖາມ ທີ່ຖາມກ່ຽວກັບຄວາມໝາຍຂອງຄຳວ່າ 'ບັງຄັບ' ແລະ 'ຂົ່ມຂູ່' ແລະ ມີການນຳໃຊ້ຫຼັກຈິດຕະວິທະຍາເຂົ້າມາມີບົດບາດ ຫຼື ບໍ່ ໃນການສ້າງຄວາມເຂົ້າໃຈວ່າຜູ້ຖືກເຄາະຮ້າຍ ໄດ້ກະທຳຄວາມຜິດຄືແນວໃດ. ໃນປະເດັນນີ້ໄດ້ເຮັດໃຫ້ຜູ້ຖືກເຄາະຮ້າຍບາງຄົນ, 'ການບັງຄັບ' ອາດຈະເປັນມາດຕະຖານທີ່ສູງ ທີ່ຈະອະທິບາຍການມີສ່ວນຮ່ວມຂອງເຂົາເຈົ້າໃນການກະທຳຄວາມຜິດ. ມີຂໍ້ສັງເກດວ່າ ຄວາມຍິນຍອມໃດໆທີ່ຜູ້ຖືກເຄາະຮ້າຍອາດຈະຍິນຍອມກໍ່ອາຊະຍາກຳ ແມ່ນບໍ່ກ່ຽວຂ້ອງກັນ ໃນກໍລະນີທີ່ຜູ້ຖືກເຄາະຮ້າຍ ໄດ້ກະທຳພາຍໃຕ້ການຄວບຄຸມຂອງຜູ້ຄ້າມະນຸດ.

**ຄຳແນະນຳໃນການຈັດຕັ້ງປະຕິບັດຫຼັກການ ໃນພາກປະຕິບັດຕົວຈິງ:** ມີບາງຄຳແນະນຳທີ່ກ່ຽວຂ້ອງກັບຫຼັກການບໍ່ລົງໂທດໃນອິນໂດເນເຊຍ. *ຄູ່ມືສຳລັບການບັງຄັບໃຊ້ກົດໝາຍ ແລະ ການປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນການຈັດການກັບຄະດີຄ້າມະນຸດ* (2009) ໄດ້ຍົກໃຫ້ເຫັນເຖິງສິ່ງທ້າທາຍຂອງຜູ້ຖືກເຄາະຮ້າຍທີ່ອາດຈະໄດ້ຮັບການພິຈາລະນາວ່າເປັນຜູ້ກະທຳຜິດທາງອາຍາທີ່ກ່ຽວຂ້ອງກັບການຄ້າມະນຸດ (ໜ້າທີ 36) ແລະເນັ້ນໜັກເຖິງຄວາມຈຳເປັນສຳລັບເຈົ້າໜ້າທີ່ ໃຫ້ມີທັກສະ ສະເພາະດ້ານເພື່ອໃຫ້ເຂົ້າໃຈວ່າຜູ້ຖືກເຄາະຮ້າຍ ອາດຈະກະທຳຄວາມຜິດທີ່ກ່ຽວຂ້ອງກັບການຄ້າມະນຸດ (ໜ້າທີ 41). *ຄູ່ມືວ່າດ້ວຍສູນລວມການບໍລິການສຳລັບພະຍານ ແລະ/ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ* (ISC) ໄດ້ກ່າວເຖິງຫຼັກການບໍ່ຖືເປັນຄະດີອາຍາ ໃນຕາຕະລາງທີ 4 ທີ່ກ່າວວ່າຜູ້ສຳພາດຕ້ອງແຈ້ງຜູ້ຖືກເຄາະຮ້າຍວ່າເຂົາເຈົ້າ ຈະບໍ່ຖືກດຳເນີນຄະດີອາຍາ ສຳລັບການກະທຳຄວາມຜິດ ທີ່ໄດ້ເຮັດໂດຍຂັດກັບເຈດຈຳນົງຂອງເຂົາເຈົ້າ ເນື່ອງມາຈາກການຖືກກົດດັນໃດໜຶ່ງຈາກຜູ້ກະທຳຜິດ.[86] ບໍ່ມີຄູ່ມືໃດເຫຼົ່ານີ້ໄດ້ຖືກກ່າວເຖິງໂດຍຜູ້ຕອບ ເພື່ອແຈ້ງຄວາມເຂົ້າໃຈກ່ຽວກັບຫຼັກການບໍ່ລົງໂທດ.

**ຄວາມຕ້ອງການສຳລັບຄຳແນະນຳເພີ່ມເຕີມກ່ຽວກັບຫຼັກການບໍ່ລົງໂທດ ແລະ ການຈັດຕັ້ງປະຕິບັດຄຳແນະນຳທີ່ມີຢູ່:** ຂໍ້ເທັດຈິງທີ່ວ່າ ຄູ່ມືທີ່ມີຢູ່ແລ້ວ ບໍ່ໄດ້ຖືກກ່າວເຖິງໂດຍຜູ້ປະຕິບັດຕົວຈິງ ສະແດງໃຫ້ເຫັນວ່າ ຄູ່ມືດັ່ງກ່າວບໍ່ໄດ້ຖືກນຳໃຊ້ຢ່າງກວ້າງຂວາງ. ບໍ່ໄດ້ມີການກ່າວເຖິງຄູ່ມື ແລະ ເອກະສານອື່ນ ທີ່ມີຄວາມກ່ຽວຂ້ອງສະເພາະຕໍ່ກັບຫຼັກການບໍ່ລົງໂທດ. ເຖິງຢ່າງໃດກໍຕາມ, ໃນການປຶກສາຫາລືຢ່າງບໍ່ຊັດເຈນກ່ຽວກັບຫຼັກການບໍ່ລົງໂທດ, ໄດ້ມີການແນະນຳ ໃຫ້ມີການພັດທະນາລະບຽບການຂອງລັດຖະບານ ຫຼື ຄຳສັ່ງທາງດ້ານວິຊາການ ໂດຍສະເພາະໃຫ້ແກ່ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ແລະ ເຈົ້າໜ້າທີ່ເຂົ້າ-ອອກເມືອງ ເພື່ອຮັບປະກັນໃຫ້ມີຄວາມເຂົ້າໃຈທີ່ເປັນເອກະພາບກັນກ່ຽວກັບຫຼັກການບໍ່ລົງໂທດ ແລະ ປິດຊ່ອງຫວ່າງດ້ານຄວາມຮູ້ ລະຫວ່າງຂັ້ນສູນກາງ ແລະ ຂັ້ນແຂວງ. ພ້ອມທັງ ຮຽກຮ້ອງໃຫ້ມີການຈັດຝຶກອົບຮົມ ເພື່ອສະ ໜັບສະໜູນເຈົ້າໜ້າທີ່ຕຳຫຼວດ ແລະ ໄອຍະການ ເພື່ອພິຈາລະນາຫຼັກການບໍລົງໂທດ ໃນກອງປະຊຸມການຄຸ້ມຄອງກໍລະນີ.sider the non-punishment principle in case management meetings.

---

86 ASEAN & ACTIP: ການນຳໃຊ້ກອບກົດໝາຍໃນພາກພື້ນ ເພື່ອຕໍ່ສູ້ກັບອາຊະຍາກຳໂລກ (Liberty Asia, 2017) 39, 44.

## ການນຳໃຊ້ຫຼັກການບໍ່ລົງໂທດ:

**ເວລາໃດ ທີ່ນຳໃຊ້ຫຼັກການບໍ່ລົງໂທດໃນຂະບວນການຍຸຕິທຳທາງອາຍາ:** ຜູ້ຕອບໄດ້ກ່າວວ່າ ມາດຕາ 18 ຍັງບໍ່ໄດ້ຖືກນຳໃຊ້ໃນພາກປະຕິບັດຕົວຈິງ, ໝາຍຄວາມວ່າ ການນຳໃຊ້ມາດຕານີ້ ມີພຽງແຕ່ເວົ້າແບບສົມມຸດຕິຖານເທົ່ານັ້ນ. ຍັງບໍ່ມີຄວາມເປັນເອກະພາບກັນວ່າ ຫຼັກການນີ້ ຈະນຳໃຊ້ໃນເບື້ອງຕົ້ນທີ່ມີການກຳນົດອົງປະກອບຂອງການຄ້າມະນຸດ ຫຼື ບໍ່; ຫຼື ເມື່ອຜູ້ຖືກຫາວ່າຄ້າມະນຸດໄດ້ຖືກຕັ້ງຂໍ້ຫາ, ດຳເນີນຄະດີ ຫຼື ຖືກຕັດສິນລົງໂທດໃນສະຖານການຄ້າມະນຸດ; ຫຼື ໃນເວລາທີ່ບຸກຄົນ ຖືກຕັ້ງຂໍ້ຫາວ່າກະທຳຄວາມຜິດ ແລະ ຕໍ່ມາຖືກຄົ້ນພົບວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ; ຫຼື ສິ່ງຕ່າງໆເຫຼົ່ານີ້ຈະເກີດຂຶ້ນພ້ອມກັນ ຫຼື ບໍ່, ໃນຈຸດທີ່ຖືກຄົ້ນພົບວ່າຜູ້ຄ້າມະນຸດ ໄດ້ຂົ່ມຂູ່ໃຫ້ຜູ້ຖືກເຄາະຮ້າຍກະທຳຄວາມຜິດ. ໃນປະເດັນນີ້, ການກຳນົດຕົວຜູ້ຖືກເຄາະຮ້າຍ ເປັນຂະບວນການທີ່ບໍ່ເປັນທາງການແຍກອອກຕ່າງຫາກ ດຳເນີນການເພື່ອຈຸດປະສົງປົກປ້ອງຜູ້ຖືກເຄາະຮ້າຍ ເຊິ່ງອາດຈະບໍ່ເກີດຂຶ້ນພ້ອມກັນໃນການສືບສວນ-ສອບສວນຄະດີຄ້າມະນຸດ. ຜູ້ຕອບອີກຄົນກ່າວວ່າ ໃນກໍລະນີທີ່ມີຄວາມຜິດ, ອົງປະກອບຂອງມັນຈະຕ້ອງໄດ້ຮັບການປະຕິບັດ ເຊິ່ງກໍລະນີທີ່ຜູ້ຖືກເຄາະຮ້າຍ ໄດ້ກະທຳຄວາມຜິດພາຍໃຕ້ການຂົ່ມຂູ່, ມັນຈະບໍ່ເປັນແບບນັ້ນ. ມີຄຳຖາມເກີດຂຶ້ນກ່ຽວກັບວ່າຄຳຕອບຕໍ່ກັບຫຼັກການ ຖືກນຳໃຊ້ເມື່ອໃດ ແລະ ແນວໃດນັ້ນ ໄດ້ຮັບຄຳຕອບວ່າມັນຢູ່ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ. ບົນພື້ນຖານຂອງການສົນທະນານີ້, ຜູ້ຕອບ ໄດ້ເນັ້ນໜັກອີກຄັ້ງວ່າ ມີຄວາມຕ້ອງການສຳລັບຄຳແນະນຳ ເພື່ອສະໜັບສະໜູນການນຳໃຊ້ຫຼັກການບໍ່ລົງໂທດໃນພາກປະຕິບັດຕົວຈິງ.

**ບົດບາດຂອງເຈົ້າໜ້າທີ່ຕຳຫຼວດ ໃນການນຳໃຊ້ຫຼັກການບໍ່ລົງໂທດ:** ໃນການປຶກສາຫາລືກ່ຽວກັບບົດບາດຂອງຜູ້ປະຕິບັດຕົວຈິງໃນຂະບວນຍຸຕິທຳທາງອາຍາ, ມາດຕາ 18 ໄດ້ຖືກຕັ້ງຂໍ້ສັງເກດວ່າ ເປັນການດຳເນີນການ, ຢ່າງນ້ອຍກໍໃນທິດສະດີ, ໃນທຸກຂັ້ນຕອນຂອງຂະບວນການຍຸຕິທຳທາງອາຍາ ນັບແຕ່ຈຸດທີ່ເຈົ້າໜ້າທີ່ຕຳຫຼວດ ພົບກັບຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ເຈົ້າໜ້າທີ່ຕຳຫຼວດ ສາມາດປົກປ້ອງຜູ້ຖືກເຄາະຮ້າຍ ໃນກໍລະນີທີ່ໄດ້ຮູ້ວ່າຜູ້ຖືກເຄາະຮ້າຍ ຕົກເປັນຜູ້ຖືກເຄາະຮ້າຍ ດ້ວຍການຈັດຕັ້ງປະຕິບັດມາດຕາ 18 ໃນການສັ່ງຟ້ອງໂດຍມີຫຼັກຖານທີ່ຢັ້ງຢືນວ່າພວກເຂົາເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ໂດຍການຈັດປະເພດບຸກຄົນ ໃນຖານະຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແທນທີ່ຈະເປັນຜູ້ກະທຳຜິດ ຕັ້ງແຕ່ເບື້ອງຕົ້ນ. ເຖິງຢ່າງໃດກໍຕາມ, ມີຄວາມເປັນຫ່ວງກ່ຽວກັບຄວາມສາມາດຂອງຜູ້ບັງຄັບໃຊ້ກົດໝາຍ ທີ່ຄຸ້ນເຄີຍກັບຄວາມຜິດໃນປະມວນກົດໝາຍອາຍາ ຫຼາຍກວ່າ ຄວາມຜິດໃນກົດໝາຍວ່າດ້ວຍການຕ້ານການຄ້ມະນຸດ, ແລະ ຜູ້ທີ່ພ້ອມຈະຕັ້ງຂໍ້ຫາບຸກຄົນ ພາຍໃຕ້ກົດໝາຍທີ່ຕົນເອງມີຄວາມຄຸ້ນເຄີຍ ຫຼາຍກວ່າຈະທີ່ຫຼີກລ້ຽງ ການຕັ້ງຂໍ້ຫາບຸກຄົນ ໃນກົດໝາຍທີ່ຕົນເອງບໍ່ຄຸ້ນເຄີຍຈາກນັ້ນ ກໍສົ່ງການຕັດສິນໃຈຂອງຕົນໄປຫາສານ.

**ບົດບາດຂອງໄອຍະການ ແລະ ທະນາຍຄວາມຜູ້ປົກປ້ອງ ໃນການນຳໃຊ້ຫຼັກການບໍ່ລົງໂທດ:** ເວັ້ນແຕ່ພວກເຂົາໄດ້ຮັບການປົກປ້ອງຈາກການລົງໂທດ ນັບແຕ່ເບື້ອງຕົ້ນ, ຜູ້ຖືກເຄາະຮ້າຍອາດຈະຖືກດຳເນີນຄະດີໃນສານ. ໃນລະຫວ່າງການດຳເນີນຄະດີ, ທະນາຍຄວາມຜູ້ປົກປ້ອງ ສາມາດນຳສະເໜີຫຼັກຖານວ່າບຸກຄົນນັ້ນ ເປັນຜູ້ຖືກເຄາະຮ້າຍ ແລະ ໄອຍະການ ອາດຈະຍັງຄົ້ນພົບອົງປະກອບທີ່ສະແດງໃຫ້ເຫັນວ່າ ບຸກຄົນດັ່ງກ່າວເປັນຜູ້ຖືກເຄາະຮ້າຍ ທີ່ຖືກບັງຄັບໃຫ້ກະທຳຜິດທາງອາຊະຍາກຳ. ຂໍ້ສັງເກດຕໍ່ກັບສິ່ງທ້າທາຍນີ້ ແມ່ນຂໍ້ເທັດຈິງທີ່ວ່າ ບົດບາດຂອງໄອຍະການແມ່ນເພື່ອດຳເນີນຄະດີ. ໃນພາກປະຕິບັດຕົວຈິງ, ມາດຕາ 18 ອາດຈະຖືກນຳໃຊ້ ໃນກໍລະນີທີ່ຜູ້ຖືກເຄາະຮ້າຍ ໄດ້ຖືກປະຕິບັດໃນຖານະຜູ້ກະທຳຜິດ ໂດຍເຈົ້າໜ້າທີ່ຕຳຫຼວດ ແລະ ໃນເວລາທີ່ຜູ້ຄ້າມະນຸດໄດ້ຖືກກຳນົດຕົວ ແລະ ຖືກດຳເນີນຄະດີ.

**ບົດບາດຂອງສະມາຊິກຕຸລາການໃນການນຳໃຊ້ຫຼັກການບໍ່ລົງໂທດ:** ໃນກໍລະນີທີ່ ຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຖືກດຳເນີນຄະດີ ສຳລັບຄວາມຜິດນັ້ນ, ຜູ້ພິພາກສານ ສາມາດພິຈາລະນາວ່າຈະຍົກເລີກຄວາມຮັບຜິດຊອບທາງອາຍາໃຫ້ເຂົາເຈົ້າ ຫຼື ຕັດສິນຫຼຸດຜ່ອນໂທດ. ຜູ້ພິພາກສາ ສາມາດດຳເນີນການບົນພື້ນຖານຄວາມສຳນຶກຄິດໃນຄວາມຍຸຕິທຳຂອງເຂົາເຈົ້າວ່າບຸກຄົນນັ້ນ ບໍ່ຄວນຈະຖືກລົງໂທດ. ໜ່ວຍງານການປົກປ້ອງຜູ້ຖືກເຄາະຮ້າຍ ແລະ ພະຍານ (LPSK) ຍັງສາມາດລາຍງານ ຄຳເຫັນທາງດ້ານກົດໝາຍເປັນລາຍລັກອັກສອນໃຫ້ແກ່ສານໄດ້ ໂດຍນຳໃຊ້ມາດຕາ 10 ຂອງກົດໝາຍເລກທີ 10 ປີ 2014 ແລະ ມາດຕາ 18 ຂອງກົດໝາຍ ເລກທີ 21 ປີ

2007. ມັນຍັງບໍ່ມີຄວາມຊັດເຈນວ່າ ການປຶກສາຫາລື ໂອກາດເຫຼົ່ານີ້ ເພື່ອຢືນຢັນຫຼັກການບໍ່ລົງໂທດ ໄດ້ຖືກນຳໃຊ້ໃນພາກປະຕິບັດຕົວຈິງ ຫຼື ບໍ່.

**ການຟື້ນຟູຫຼັກການຄວາມຍຸຕິທຳ ທີ່ກ່ຽວຂ້ອງກັບຫຼັກການບໍ່ລົງໂທດ:** ຜູ້ປະຕິບັດຕົວຈິງບາງທ່ານ ໄດ້ຊີ້ໃຫ້ເຫັນເຖິງການຟື້ນຟູຄວາມຍຸຕິທຳ ເປັນທາງເລືອກສຸດທ້າຍໃນການປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ການຟື້ນຟູຄວາມຍຸຕິທຳ ຖືເປັນສິ່ງທີ່ສຳຄັນ ໂດຍສະເພາະ ທີ່ກ່ຽວຂ້ອງກັບອາຊະຍາກຳບາງປະເພດ (ທີ່ບໍ່ໄດ້ມີການຕັດສິນລົງໂທດຫຼາຍກວ່າ 5 ປີ) ແລະ ຜູ້ກະທຳຜິດບາງປະເພດ (ແມ່ຍິງ ແລະ ເດັກນ້ອຍ). ການພິຈາລະນາການຟື້ນຟູຄວາມຍຸຕິທຳ ສາມາດເຮັດໄດ້ໂດຍຜູ້ພິພາກສາ ໃນການຫຼຸດຜ່ອນໂທດໃນການຕັດສິນ; ໄດ້ມີການຍົກຕົວຢ່າງ ທີ່ສານຫຼຸດຜ່ອນໂທດໃນຄຳຕັດສິນ ຍ້ອນວ່າຜູ້ກະທຳຜິດ ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເຖິງວ່າພວກເຂົາຈະບໍ່ໄດ້ຮັບຍົກເລີກຄວາມຮັບຜິດຊອບທາງອາຍາກໍຕາມ.

## ສິ່ງທ້າທາຍໃນການຮ່ວມມືລະຫວ່າງປະເທດ

**ການຮ່ວມມືທີ່ບໍ່ສະໝໍ່າສະເໝີໃນເສັ້ນທາງການຄ້າມະນຸດຂ້າມຊາດ:** ການຊ່ວຍເຫຼືອທາງດ້ານກົດໝາຍອາດຈະໄດ້ຮັບໂດຍໜ່ວຍງານຂອງອິນໂດເນເຊຍ ດ້ວຍການຮ້ອງຂໍໃຫ້ເຈົ້າໜ້າທີ່ຕຳຫຼວດ ໃນປະເທດອື່ນ ເພື່ອກັ່ນກອງ ແລະ ປົກປ້ອງພົນລະເມືອງອິນໂດເນເຊຍ ພາຍໃຕ້ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດຂອງປະເທດນັ້ນ. ມີຄວາມເປັນກັງວົນວ່າ ບາງປະເທດໃນພາກພື້ນອາຊຽນ ທີ່ໃຫ້ຄວາມຮ່ວມມືນ້ອຍກວ່າປະເທດອື່ນໆ ຕໍ່ກັບບັນຫາການຄ້າມະນຸດ ລວມທັງຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍ. ຄວາມສຳຄັນຂອງການມີການຊ່ວຍເຫຼືອເຊິ່ງກັນແລະ ກັນ ແລະ ສົນທິສັນຍາວ່າດ້ວຍການສົ່ງຜູ້ຮ້າຍຂ້າມແດນ ເປັນເຄື່ອງໝາຍທີ່ສຳຄັນ ທີ່ເປັນຫົວໃຈຫຼັກ ຄວບຄູ່ກັບການເຮັດໃຫ້ສອດຄ່ອງກັບກົດໝາຍພາຍໃນ ໂດຍສອດຄ່ອງກັບສົນທິສັນຍາ ACTIP. ຜູ້ປະຕິບັດຕົວຈິງ ຊີ້ໃຫ້ເຫັນວ່າ ຄວາມສຳຄັນຂອງຄວາມເຂົ້າໃຈທີ່ເປັນເອກະພາບກ່ຽວກັບການຄ້າມະນຸດ ໃນທົ່ວເຂດອຳນາດຂອງສານແລະ ຂະບວນການຍຸຕິທຳທາງອາຍາທີ່ສອດຄ່ອງກັນ. ມີຄວາມເປັນກັງວົນດຽວກັນນີ້ ໃນສະຖານະການທີ່ຄົນອິນໂດເນເຊຍໄດ້ຖືກຄ້າມະນຸດ ໄປນອກເໜືອພາກພື້ນອາຊຽນ ຕົວຢ່າງ ຖືກຄ້າມະນຸດ ໄປປະເທດຕາເວັນອອກກາງ. ສິ່ງທ້າທາຍນີ້ ສະແດງໃຫ້ເຫັນວ່າ ການນຳໃຊ້ຫຼັກການບໍ່ລົງໂທດ ໃນສະຖານະການດັ່ງກ່າວ, ໃນກໍລະນີທີ່ຜູ້ຄ້າມະນຸດ ໄດ້ຖືກສືບສວນ-ສອບສວນ ຫຼື ດຳເນີນຄະດີໃນອິນໂດເນເຊຍ ແຕ່ຜູ້ຖືກເຄາະຮ້າຍຍັງຢູ່ປະເທດອື່ນ ຕົວຢ່າງ: ປະເທດອີຣັກ ບ່ອນທີ່ເຂົາເຈົ້າຖືກຕັ້ງຂໍ້ຫາ ຫຼື ຖືກປັບໃໝ ໂດຍເຈົ້າ ໜ້າທີ່ຕຳຫຼວດ. charged or fined by police.

**ການຮ່ວມມືລະຫວ່າງປະເທດ ມີຄວາມຈຳເປັນເພື່ອແກ້ໄຂການຄ້າມະນຸດຂ້າມຊາດ ໃນບໍລິບົດທາງທະເລ ທັງພາຍໃນ ແລະ ນອກເໜືອພາກພື້ນອາຊຽນ:** ຜູ້ຕອບໄດ້ຍົກໃຫ້ເຫັນຕົວຢ່າງທີ່ຄົນອິນໂດເນເຊຍໄດ້ຖືກລ່ວງລະເມີດຢູ່ນອກເໜືອພາກພື້ນອາຊຽນ, ລວມທັງ ການບັງຄັບໃຊ້ແຮງງານໃນເຮືອປະມົງ ລວມທັງ ໃນປາຊີຟິກ. ການຈັດຫາເຂົາເຈົ້າເພື່ອຂຶ້ນເຮືອໂດຍຜ່ານປະເທດທາງຜ່ານ (ເຊັ່ນປະເທດສິງກະໂປ) ເຊິ່ງຕໍ່ມາໄດ້ຖືກລ່ວງລະເມີດໃນບ່ອນອື່ນໆ ເຊິ່ງສະແດງໃຫ້ເຫັນເຖິງຄວາມຈຳເປັນສຳລັບການຮ່ວມມືລະຫວ່າງປະເທດ ເພື່ອຕ້ານການຄ້າມະນຸດໃນບໍລິບົດທາງທະເລ. ການປະຕິບັດທີ່ເປັນຕົວແບບທີ່ດີ ໄດ້ຖືກຍົກຂຶ້ນໃນບໍລິບົດນີ້ ທີ່ລູກເຮືອກຳປັ່ນໄດ້ຖືກຮັບຮູ້ໃນຖານະຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍໜ່ວຍງານຂອງຟີລິບປິນ ແລະ ໄດ້ກັບຄືນປະເທດອິນໂດເນເຊຍຢ່າງມີປະສິດທິຜົນ ໂດຍປາສະຈາກການຖືກດຳເນີນຄະດີ ສຳລັບການມີສ່ວນຮ່ວມຂອງເຂົາເຈົ້າໃນການກະທຳຜິດໃດໜຶ່ງ.

**ສິ່ງທ້າທາຍໃນການຮ່ວມມືລະຫວ່າງປະເທດ ໃນການດຳເນີນຄະດີອາຍາ:** ຄວາມສະຫຼັບຊັບຊ້ອນ ໄດ້ສະແດງໃຫ້ເຫັນໃນກໍລະນີຂອງ Mary Jane Veloso (ເບິ່ງໃນຫ້ອງທີ 5 ດ້ານລຸ່ມ) ທີ່ຖຸມຂັງຄົນອິນໂດເນເຊຍ ທີ່ລາວໄດ້ມີສ່ວນຮ່ວມຄວາມຜິດທີ່ກ່ຽວຂ້ອງກັບຢາເສບຕິດ, ໃນຂະນະທີ່ຖືກຮ້ອງຂໍໃຫ້ການ ເພື່ອດຳເນີນຄະດີຕໍ່ກັບຜູ້ທີ່ຖືກກ່າວຫາວ່າຄ້າມະນຸດ ໃນການພິຈາລະນາຄະດີທີ່ຟີລິບປິນ. ການດຳເນີນການນີ້ ເກີດຂຶ້ນໂດຍບໍ່ມີຄວາມຊັດເຈນເນື່ອງຈາກວ່າຟີລິປິນ ຮຽກຮ້ອງໃຫ້ພະຍານຕ້ອງໃຫ້ການດ້ວຍຕົນເອງໃນຟີລິບປິນ. ໃນກໍລະນີນີ້, ອິນໂດເນເຊຍບໍ່ໄດ້

ຮັບຮູ້ວ່າ Mary Jane Veloso ທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເຖິງວ່າການພິຈາລະນາຄະດີໃນຟີລິປິນ ຢືນຢັນວ່າລາວເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ອີກຄະດີໜຶ່ງ ທີ່ໄດ້ຖືກກ່າວເຖິງແມ່ນ ແຮງງານເຄື່ອນຍ້າຍ ຄົນອິນໂດເນເຊຍ ທີ່ຢູ່ໃນຄຸກເປັນເວລາ 7 ປີ ເຊິ່ງຕໍ່ມາໄດ້ຖືກປ່ອຍຕົວ ດ້ວຍເຫດຜົນຕ່າງໆ ລວມທັງ ຂໍ້ເທັດຈິງທີ່ວ່າ ລາວເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

## ສິ່ງທ້າທາຍໃນການກຳນົດຕົວຜູ້ຖືກເຄາະຮ້າຍ

ການກຳນົດຕົວຜູ້ຖືກເຄາະຮ້າຍ ເປັນຫົວໃຈສຳຄັນໃນການນຳໃຊ້ຫຼັກການບໍ່ລົງໂທດ: ຜູ້ຕອບໄດ້ຢືນຢັນວ່າສິ່ງທ້າທາຍທີ່ສຳຄັນ ຕໍ່ກັບຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍ ແມ່ນການກຳນົດຕົວທີ່ມີປະສິດທິພາບຂອງເຂົາເຈົ້າ. ມີຫຼາຍຄົນທີ່ຍັງບໍ່ໄດ້ຮັບການກຳນົດຕົວ ແລະ ດັ່ງນັ້ນ ຈຶ່ງຕ້ອງຮັບຜິດຊອບ ດ້ວຍການຖືກປະຕິບັດ ໃນຖານະຜູ້ກະທຳຜິດ ແທນທີ່ ຈະເປັນການປົກປ້ອງ ໃນຖານະຜູ້ຖືກເຄາະຮ້າຍ. ບົດລາຍງານການຄ້າມະນຸດຂອງສະຫະລັດອາເມລິກາ ປີ 2020 ຍັງຊີ້ໃຫ້ເຫັນເຖິງການກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຢ່າງບໍ່ພຽງພໍ ເປັນສາເຫດເຮັດໃຫ້ເຂົາເຈົ້າຖືກລົງໂທດ, ລວມທັງ ໃນບໍລິບົດທີ່ມີການກວດຄົ້ນການການບໍລິການທາງເພດ ເພື່ອຈຸດປະສົງທາງການຄ້າ ແລະ ການຕ້ານການປະມົງທີ່ຜິດກົດໝາຍ.[87] ຂໍ້ກັງວົນນີ້ ຍັງໄດ້ຖືກເໜັ້ນໜັກອີກໃນປີຕໍ່ມາ ໃນບົດລາຍງານການຄ້າມະນຸດຂອງສະຫະລັດອາເມລິກາ ໃນປີ 2021 ທີ່ກ່າວວ່າ ເຈົ້າໜ້າທີ່ຕຳຫຼວດ ບາງຄັ້ງ ບໍ່ຕອບສະໜອງໃນເວລາທີ່ຜູ້ຖືກເຄາະຮ້າຍພະຍາຍາມ ທີ່ຈະລາຍງານສະຖານະການ ການຖືກຄ້າມະນຸດຂອງເຂົາເຈົ້າ.[88]

**ໂອກາດໃນການກຳນົດຕົວ ທີ່ຜິດພາດໃນທົ່ວຂະບວນການດຳເນີນຄະດີດ້ານຍຸຕິທຳທາງອາຍາ:** ໃນກໍລະນີທີ່ບຸກຄົນ ບໍ່ໄດ້ຮັບການກຳນົດຢ່າງເປັນທາງການໃນຖານະຜູ້ຖືກເຄາະຮ້າຍ ແລະ ຖືກປະຕິບັດໃນຖານະຜູ້ກະທຳຜິດ, ມີລາຍງານວ່າ ເປັນສິ່ງທີ່ຍາກທີ່ຈະນຳເອົາເຂົາເຈົ້າອອກຈາກຂະບວນການຍຸຕິທຳທາງອາຍາຫຼັງຈາກນັ້ນ. ຄວາມກັງວົນທີ່ກ່ຽວຂ້ອງໄດ້ຖືກຍົກຂຶ້ນ ກ່ຽວກັບພາສາທີ່ສື່ເຖິງການຜິດກົດໝາຍ ທີ່ນຳໃຊ້ຕໍ່ກັບແຮງງານເຄື່ອນຍ້າຍທີ່ຮູ້ສຶກວ່າຖືກຕຳນິ ໃນການເຂົ້າເມືອງຢ່າງຜິດກົດໝາຍ ໂດຍບໍ່ຄຳນຶງວ່າມັນເກີດຂຶ້ນໄດ້ແນວໃດ. ມີການລາຍງານວ່າ ເຈົ້າໜ້າທີ່ສືບສວນ-ສອບສວນ ໄດ້ຈັດປະເພດຂອງຜູ້ຖືກເຄາະຮ້າຍ ໃນຖານະຜູ້ກະທຳຜິດ (ຕົວຢ່າງ ການປອມແປງເອກະສານ) ແທນທີ່ຈະຈັດໃນຖານະຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເນື່ອງຈາກວ່າ ຄວາມຜິດທີ່ປາກົດຂຶ້ນນັ້ນ, ໃນເວລາທີ່ພວກເຂົາຕົກເປັນຜູ້ຖືກເຄາະຮ້າຍ. ໃນບາງກໍລະນີ ຜູ້ຖືກເຄາະຮ້າຍ ຈະຖືກກຳນົດຕົວໄດ້ ກໍຕໍ່ເມື່ອຂະບວນການທາງກົດໝາຍ ທີ່ດຳເນີນຕໍ່ເຂົາເຈົ້ານັ້ນ ໄດ້ເຮັດສຳເລັດແລ້ວ ເຊິ່ງພວກເຂົາຈະຖືກລົງໂທດໃນການດຳເນີນຄະດີ ແລະ ຫຼັງຈາກນັ້ນອີກ. ຕົວຢ່າງທີ່ສະແດງໃຫ້ເຫັນນີ້ ລວມມີ ກໍລະນີຂອງ Merry Utami ແລະ Mary Jane Veloso (ເບິ່ງຫ້ອງທີ 5 ດ້ານລຸ່ມ), ເຊິ່ງທັງສອງຖືກຕັດສິນລົງໂທດສຳລັບ ຄວາມຜິດທີ່ກ່ຽວຂ້ອງກັບຢາເສບຕິດ ແລະ ຂໍຄວາມເມດຕາ ບົນພື້ນຖານວ່າພວກເຂົາເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

**ມິຕິດ້ານເພດ ທີ່ບໍ່ກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ຄວາມອ່ອນໄຫວຂອງເຂົາເຈົ້າ ຕໍ່ກັບການລົງໂທດ:** ໄດ້ມີການຍົກໃຫ້ເຫັນເຖິງຄວາມເປັນກັງວົນຕໍ່ກັບຜູ້ປະຕິບັດຕົວຈິງໃນຂະບວນການຍຸຕິທຳທາງອາຍາ - ຈາກເຈົ້າໜ້າທີ່ຕຳຫຼວດ ເຖິງສະມາຊິກຝ່າຍຕຸລາການ - ອາດມີການຕອບສະໜອງດ້ານລົບຕໍ່ກັບຜູ້ຖືກເຄາະຮ້າຍ, ເຊິ່ງມີຄວາມເປັນໄປໄດ້ທີ່ຈະສົ່ງຜົນຕໍ່ການບໍ່ກຳນົດຕົວເຂົາເຈົ້າ ແລະ ການລົງໂທດທີ່ຕາມມາ. ໂຄງສ້າງທາງສັງຄົມ ໄດ້ຊີ້ໃຫ້ເຫັນວ່າ ອາດຈະສົ່ງຜົນກະທົບຕໍ່ກັບວິທີການທີ່ຜູ້ປະຕິບັດຕົວຈິງດ້ານຍຸຕິທຳທາງອາຍາ ຮັບຮູ້ ແລະ ປະຕິບັດຕໍ່ກັບຜູ້ຖືກເຄາະຮ້າຍທີ່ມີຄວາມຫຼາກຫຼາຍທາງເພດແນວໃດ (LGBTIQ+). ມິຕິທາງດ້ານເພດມີຄວາມສຳຄັນ ທີ່ເຫັນໄດ້ຢ່າງຊັດເຈນໃນສົມມຸດຕິຖານດ້ານລົບ ກ່ຽວກັບຜູ້ຍິງວ່າເຂົາເຈົ້ານຸ່ງຖືແນວໃດ, ພາບລັກ ຫຼື ການຍ່າງ, ຄວາມເປັນໄປໄດ້ທີ່ຈະນຳໄປສູ່ການເປັນຜູ້ຖືກເຄາະຮ້າຍ ທີ່ບໍ່ໄດ້ຮັບການກຳນົດຕົວ. ຜູ້ຕອບບາງທ່ານ ໄດ້ສະແດງໃຫ້ເຫັນເຖິງທັດສະນະຄະຕິດ້ານລົບ ຕໍ່ກັບຜູ້ຍິງ ທີ່ເຕັມໃຈເຮັດວຽກການບໍລິການທາງເພດ. ມິຕິດ້ານເພດ ສົ່ງຜົນກະທົບຕໍ່ການບໍ່ກຳນົດຕົວຜູ້ຖືກເຄາະຮ້າຍທີ່ເປັນເພດຊາຍເຊັ່ນກັນ. ຜູ້ຕອບບາງທ່ານ ໄດ້ຕັ້ງຂໍ້ສັງເກດວ່າຄົນຕ່າງປະເທດ ທີ່ເປັນຜູ້ຍິງ ທີ່ພົບໃນອຸດສາຫະກຳບັນເທີງ ອາດຈະໄດ້ຮັບການກັ່ນກອງ ແລະ ໄດ້ຮັບການປົກປ້ອງ, ຄົນຕ່າງປະເທດທີ່

87 ບົດລາຍງານການຄ້າມະນຸດ ປີ 2020: ອິນໂດເນເຊຍ (ກະຊວງການຕ່າງປະເທດສະຫະລັດອາເມລິກາ, 2020)
88 ບົດລາຍງານການຄ້າມະນຸດ ປີ 2021: ອິນໂດເນເຊຍ (ກະຊວງການຕ່າງປະເທດສະຫະລັດອາເມລິກາ, 2021)

ເປັນຜູ້ຊາຍ (ຕົວຢ່າງ ຂະແໜງການທາງທະເລ) ອາດຈະຖືກສົ່ງໄປສະຖານທີ່ກັກຂັງ ໂດຍບໍ່ມີການກັ່ນກອງ ທີ່ອາດຈະເປັນການຄ້າມະນຸດ. ຄົນອື່ນໆ ທີ່ເຫັນພ້ອມພຽງກັນວ່າ ບໍ່ມີການບໍລິການ ການປົກປ້ອງສຳລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ເປັນເພດຊາຍ ເມື່ອທຽບກັບ ຜູ້ຖືກເຄາະຮ້າຍ ເພດຍິງ.

**ສິ່ງທ້າທາຍໃນການກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດແບບຂ້າມຊາດ:** ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດແບບຂ້າມຊາດ ໄດ້ຖືກລາຍງານວ່າມີຄວາມສ່ຽງເປັນພິເສດ ທີ່ຈະຖືກລົງໂທດ. ເຈົ້າໜ້າທີ່ ທີ່ສະກັດກັ້ນຜູ້ຖືກເຄາະຮ້າຍໃນລະຫວ່າງການເດີນທາງຜ່ານນັ້ນ ອາດຈະບໍ່ໄດ້ກຳນົດຕົວພວກເຂົາໃນຖານະຜູ້ຖືກເຄາະຮ້າຍ ຍ້ອນວ່າພວກເຂົາຍັງບໍ່ໄດ້ຖືກລ່ວງລະເມີດ ແລະ ພຽງແຕ່ນຳໃຊ້ກົດໝາຍວ່າດ້ວຍການເຂົ້າ-ອອກເມືອງເທົ່ານັ້ນ. ໃນຂັ້ນຕອນນີ້ກໍເຊັ່ນກັນ, ຜູ້ຖືກເຄາະຮ້າຍອາດຈະບໍ່ຮັບຮູ້ວ່າພວກເຂົາເອງ ໃນຖານະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ບໍ່ກຳນົດຕົວເອງຕໍ່ເຈົ້າໜ້າທີ່. ຄວາມສາມາດທີ່ຈຳກັດຂອງເຈົ້າໜ້າທີ່ໃນພາກພື້ນຊາຍແດນ ໄດ້ຖືກຍົກຂຶ້ນວ່າເປັນສິ່ງທ້າທາຍຕໍ່ການບໍ່ລົງໂທດ ປະກອບກັບຄວາມສະຫຼັບຊັບຊ້ອນໃນການຈຳແນກຄວາມແຕກຕ່າງຂອງຜູ້ຖືກຄ້າມະນຸດຈາກຜູ້ລັກລອບເຂົ້າ-ອອກເມືອງຢ່າງຜິດກົດໝາຍ. ຄວາມຜິດທີ່ກ່ຽວຂ້ອງກັບເອກະສານ ອາດຈະກ່ຽວຂ້ອງກັບອາຊະຍາກຳທັງສອງປະເພດ. ຄວາມທ້າທາຍໃນການກຳນົດຕົວມີສູງຂຶ້ນ ໃນບໍລິບົດ ແລະ ສະຖານທີ່ທີ່ມີຈຳນວນແຮງງານເຄື່ອນຍ້າຍທີ່ບໍ່ມີເອກະສານຈຳນວນຫຼວງຫຼາຍ. ຜູ້ຕອບໄດ້ແນະນຳວ່າຜູ້ຖືກເຄາະຮ້າຍ ຈຳເປັນຕ້ອງຮັບຮູ້ສິດຂອງຕົນເອງ ທີ່ຈະໄດ້ຮັບການປົກປ້ອງ ແລະ ບໍ່ຖືກລົງໂທດ ເຊິ່ງເປັນສ່ວນໜຶ່ງໃນການເພີ່ມທະວີຄວາມເປັນໄປໄດ້ໃນການກຳນົດຕົວເຂົາເຈົ້າໂດຍໄວ.

**ຄວາມສ່ຽງໃນການລົງໂທດບຸກຄົນທີ່ສາມ ທີ່ພາໃຫ້ເກີດສິ່ງທ້າທາຍໃນການກຳນົດຕົວ:** ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ຖືກບັງຄັບໃຫ້ແຕ່ງງານ (ໂດຍສະເພາະ ໄປປະເທດຈີນ) ໄດ້ເຮັດໃຫ້ມີຄວາມຫຍຸ້ງຍາກສັບສົນຫຼາຍຂຶ້ນ. ໃນກໍລະນີທີ່ພໍ່ແມ່ໄດ້ຮັບເງິນຈຳນວນຫຼາຍ ບົນພື້ນຖານຄຳໝັ້ນສັນຍາວ່າລູກສາວຂອງພວກເຂົາ ຈະມີຊີວິດທີ່ດີຂຶ້ນ, ພວກເຂົາ ຢູ່ໃນຄວາມສ່ຽງທີ່ຈະຖືກດຳເນີນຄະດີ. ຜູ້ຖືກເຄາະຮ້າຍ ອາດຈະມີຄວາມລັງເລທີ່ຈະດຳເນີນຄະດີຕໍ່ຜູ້ຄ້າມະນຸດ ເນື່ອງຈາກຢ້ານວ່າພໍ່ແມ່ຂອງຕົນເອງຈະຖືກລົງໂທດ. ສິ່ງທ້າທາຍແບບດຽວກັນນີ້ ອາດຈະເກີດຂຶ້ນກັບສະຖານະການຄ້າມະນຸດ ອື່ນໆ ໃນກໍລະນີທີ່ຜູ້ຖືກເຄາະຮ້າຍປົກປ້ອງບຸກຄົນອື່ນໆທີ່ຢູ່ອ້ອມຂ້າງ ຫຼື ຜູ້ທີ່ມີສ່ວນຮ່ວມໂດຍກົງ ຕໍ່ກັບສິ່ງທີ່ເກີດຂຶ້ນກັບພວກເຂົາ.

## ການລົງໂທດຜູ້ຖືກເຄາະຮ້າຍໃນພາກປະຕິບັດຕົວຈິງ

**ຜູ້ຖືກເຄາະຮ້າຍທີ່ຖືກລົງໂທດໃນຄວາມຜິດສະຖານຕ່າງໆ:** ຜູ້ປະຕິບັດຕົວຈິງ ໄດ້ຍົກຕົວຢ່າງທີ່ຜູ້ຖືກເຄາະຮ້າຍ ໄດ້ຖືກຕັ້ງຂໍ້ຫາ ຕໍ່ກັບຄວາມຜິດຕ່າງໆ ລວມທັງ ຄວາມຜິດກ່ຽວກັບການເຂົ້າ-ອອກເມືອງ, ຄວາມຜິດທີ່ກ່ຽວຂ້ອງກັບເອກະສານ, ຄວາມຜິດທີ່ກ່ຽວຂ້ອງກັບຢາເສບຕິດ, ການຄ້າຂາຍສິນຄ້າທີ່ຜິດກົດໝາຍ ແລະ ການເຮັດວຽກທີ່ຜິດກົດໝາຍ (ໂສເພນີ) ສັງເກດເຫັນວ່າ ເດັກມີຄວາມສ່ຽງທີ່ຈະຖືກລົງໂທດ ລວມທັງການມີສ່ວນຮ່ວມຂອງເຂົາເຈົ້າໃນການຄ້າເດັກຜູ້ອື່ນໆ, ຫຼື ໃນກໍລະນີທີ່ ພວກເຂົາຖືກຈັດຫາຈາກຕ່າງປະເທດ ມີຄວາມເປັນໄປໄດ້ທີ່ເປັນຜູ້ຖືກເຄາະຮ້າຍ ແລະ ຖືກປະຕິບັດໃນຖານະຜູ້ກະທຳຜິດ ພາຍໃຕ້ກົດໝາຍວ່າດ້ວຍການເຂົ້າ-ອອກເມືອງ. ມີຄະດີໜຶ່ງທີ່ສະເໜີໃຫ້ບຸກຄົນທີ່ຖືກຫາວ່າຄາດຕະກຳ ຫຼົບໜີຈາກໂທດປະຫານຊີວິດ ເພາະວ່າ ລາວໄດ້ຖືກຄົ້ນພົບວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ມີການຍົກຕົວຢ່າງຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຄົນອິນໂດເນເຊຍທີ່ໄດ້ຖືກຕັ້ງຂໍ້ຫາ ສຳລັບອາຊະຍາກຳໃນການປ້ອງກັນຕົນເອງໃນສະຖານນະການທີ່ຖືກລ່ວງລະເມີດໃນຕ່າງປະເທດ; ສິງກະໂປ, ມາເລເຊຍ ແລະ ປະເທດຕາເວັນອອກກາງ ລວມທັງ ອີຣັກ ໄດ້ຖືກກ່າວເຖິງໃນປະເດັນນີ້.

**ການລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນອຸດສາຫະກຳທາງເພດ:** ບົດລາຍງານການຄ້າມະນຸດຂອງສະຫະລັດອາເມລິກາ ປີ 2021 ໄດ້ກ່າວວ່າ ເຖິງຈະບໍ່ມີການລາຍງານກໍລະນີສະເພາະ ທີ່ຜູ້ຖືກເຄາະຮ້າຍຖືກ

ລົງໂທດສຳລັບອາຊະຍາກຳທີ່ຜູ້ຄ້າມະນຸດບັງຄັບໃຫ້ເຂົາເຈົ້າກະທຳ, ແຕ່ຜູ້ໃຫຍ່ໃນທຸລະກິດບໍລິການທາງເພດ ໄດ້ຖືກຕັ້ງຂໍ້ຫາອາຊະຍາກຳທີ່ຂັດກັບສິນທຳ ແລະ ຄວາມເປັນລະບຽບຮຽບຮ້ອຍ; ອາຊະຍາກຳທີ່ກໍ່ໃຫ້ເກີດການລົງໂທດທາງດ້ານຮ່າງກາຍດ້ວຍການຕີດ້ວຍໄມ້ແສ້ຕໍ່ໜ້າສາທາລະນະ ພາຍໃຕ້ກົດໝາຍອິດສະລາມໃນແຂວງອາເຈາະ.[89] ໃນລະຫວ່າງການປຶກສາຫາລື, ຜູ້ຕອບໄດ້ຍົກຕົວຢ່າງເດັກທີ່ເຮັດວຽກໃນອຸດສາຫະກຳທາງເພດ ທີ່ໄດ້ຖືກກຳນົດຕົວໂດຍອົງການ NGO ໄດ້ຮັບການປົກປ້ອງຈາກການຖືກລົງໂທດ ໃນຂະນະທີ່ຜູ້ໃຫຍ່ ທີ່ຢູ່ໃນສະຖານະການດຽວກັນອາດຈະບໍ່ເປັນເຊັ່ນນັ້ນ. ມີການຍົກຕົວຢ່າງກໍລະນີ ທີ່ຜູ້ຖືກເຄາະຮ້າຍ ໄດ້ຈັດຫາ/ຊອກຫາ ຜູ້ຖືກເຄາະຮ້າຍອື່ນອາດຈະຖືກລົງໂທດສຳລັບການຄ້າມະນຸດ ໃນສະຖານການລ່ວງລະເມີດທາງເພດ.

**ການລົງໂທດຜູ້ຖືກເຄາະຮ້າຍ ສຳລັບການລະເມີດກົດໝາຍວ່າດ້ວຍການເຂົ້າ-ອອກເມືອງ:** ມີການລາຍງານວ່າ ຄວາມຜິດທີ່ກ່ຽວຂ້ອງກັບທາງບໍລິຫານ ແລະ ການເຂົ້າ-ອອກເມືອງ ບໍ່ໄດ້ນຳມາປະຕິບັດຕໍ່ກັບກໍລະນີທີ່ຜູ້ຖືກເຄາະຮ້າຍ ທີ່ເປັນຄົນຕ່າງປະເທດ (ລວມທັງແຮງງານເຄື່ອນຍ້າຍທີ່ລັກລອບເຂົ້າເມືອງ), ເຊິ່ງໄດ້ຮັບການປະຕິບັດເປັນກໍລະນີພິເສດໃນກົດ ໝາຍວ່າດ້ວຍການເຂົ້າ-ອອກເມືອງ ແລະ ບໍ່ໄດ້ຖືກກັກຕົວຢູ່ສະຖານທີ່ກັກຕົວໃນດ່ານການກວດຄົນເຂົ້າ-ອອກເມືອງ ແຕ່ໃຫ້ໄປຢູ່ບ່ອນອື່ນແທນ. ເຖິງຢ່າງໃດກໍຕາມ, ໄດ້ມີການຍົກຕົວຢ່າງທີ່ຜູ້ຖືກເຄາະຮ້າຍໄດ້ຖືກລົງໂທດ, ໂດຍຜູ້ຕອບໄດ້ຍົກໃຫ້ເຫັນໃນກໍລະນີທີ່ມີຄວາມເຕັມໃຈຂອງຜູ້ຖືກເຄາະຮ້າຍທີ່ຈະກະທຳຄວາມຜິດທີ່ກ່ຽວຂ້ອງກັບການເຂົ້າ-ອອກເມືອງ ຫຼື ຄວາມຜິດທີ່ກ່ຽວຂ້ອງກັບເອກະສານ ແລະ ເລືອກທີ່ຈະເປັນຜູ້ເຄື່ອນຍ້າຍແຮງງານທີ່ຜິດກົດໝາຍ, ພວກເຂົາຈະຖືກຕັ້ງຂໍ້ຫາ.

**ການລົງໂທດຜູ້ຖືກເຄາະຮ້າຍ ສຳລັບຄວາມຜິດທີ່ກ່ຽວຂ້ອງກັບການກໍ່ການຮ້າຍ:** ຜູ້ຕອບ ໄດ້ກ່າວເຖິງຈຸດຕັດທີ່ສະຫຼັບຊັບ ຊ້ອນກັນລະຫວ່າງການຄ້າມະນຸດ ແລະ ການກໍ່ການຮ້າຍ. ທັງສອງຢ່າງໃຊ້ວິທີການຈັດຫາທີ່ຄ້າຍຄືກັນ ເພື່ອທີ່ຈະລ່ວງລະເມີດ ຫຼື ຂູດຮີດບຸກຄົນອື່ນ - ລວມທັງ ແມ່ຍິງ ແລະ ເດັກ - ໂດຍຜ່ານການປຸກລະດົມດ້ານອຸດົມການ ແລະ ສາສະໜາ ເພື່ອກໍ່ອາຊະຍາກຳ. ໃນກໍລະນີຂອງເດັກ, *ກົດໝາຍວ່າດ້ວຍການປົກປ້ອງເດັກ ຮັບປະກັນວ່າເດັກ* ໃນລະບົບອາຊະຍາກຳ ຖືກຮັບຮູ້ໃນຖານະຜູ້ຖືກເຄາະຮ້າຍຕໍ່ວິທີການທີ່ຈັດການກັບພວກເຂົາ. ແມ່ຍິງ ແລະເດັກຍິງ ທີ່ມີຄວາມສ່ຽງ ຖືກບັງຄັບໃຫ້ແຕ່ງງານກັບຜູ້ກໍ່ການຮ້າຍ ອາດໄດ້ຮັບການຟື້ນຟູ ແທນທີ່ ທີ່ຈະຖືກລົງໂທດ. ເຖິງຢ່າງໃດກໍຕາມ, ມີສິ່ງທ້າທາຍເກີດຂຶ້ນໃນການນຳໃຊ້ຫຼັກການບໍ່ລົງໂທດ ສຳລັບບຸກຄົນທີ່ເຕັມໃຈເຂົ້າຮ່ວມ ໃນຄວາມຜິດທີ່ກ່ຽວຂ້ອງກັບການກໍ່ການຮ້າຍ ເຖິງວ່າຈະມີມຸມມອງຂອງການນຳໃຊ້ລັດທິສັ່ງສອນ ແລະ ການສວຍໃຊ້ຄວາມອ່ອນແອ ມາເປັນເຄື່ອງມື ທີ່ຊີ້ໃຫ້ເຫັນວ່າພວກເຂົາໄດ້ຖືກຄ້າມະນຸດ. ຜູ້ຕອບບາງທ່ານໄດ້ສະແດງຄວາມຄິດເຫັນວ່າ ໃນກໍລະນີບຸກຄົນຊ່ວຍເຫຼືອເຄືອຂ່າຍການກໍ່ການຮ້າຍ ແລະ ບໍ່ຕ້ອງການໄດ້ຮັບການຟື້ນຟູ, ອາດຈະເປັນການເໝາະສົມກວ່າທີ່ຈະດຳເນີນຄະດີພວກເຂົາ ໃນຖານະຜູ້ກໍ່ການຮ້າຍ ຫຼາຍກວ່າທີ່ຈະປົກປ້ອງພວກເຂົາໃນຖານະຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

**ການລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນອຸດສາຫະກຳການປະມົງ:** ໃນຄະດີຄ້າມະນຸດທີ່ຖືກເປີດເຜີຍໃນປີ 2015 ທີ່ເບັນຈີນາ ໃນແຂວງມາລູກູ, ມີການລາຍງານວ່າຜູ້ຖືກເຄາະຮ້າຍ ໃນເບື້ອງຕົ້ນຖືກສົງໄສວ່ານຳໃຊ້ເອກະສານປອມ ຫຼື ໜັງສືເດີນທາງປອມ ແລະ ປຶ້ມປະຈຳຕົວຂອງຜູ້ທີ່ເຮັດວຽກຢູ່ເທິງເຮືອ ຫຼື ບໍ່ມີເອກະສານທັງໝົດເຫຼົ່ານີ້. ແທນທີ່ ທີ່ຈະຖືກດຳເນີນຄະດີ ໃນສະຖານການເຮັດປະມົງ ແລະ ການເຂົ້າ-ອອກເມືອງໂດຍບໍ່ຖືກຕ້ອງຕາມກົດໝາຍ ແຕ່ພວກເຂົາຖືກພິຈາລະນາວ່າເປັນຜູ້ຖືກເຄາະຮ້າຍ ແລະ ຖືກຍົກເວັ້ນຈາກການຖືກລົງໂທດ ແລະ ກັບຄືນປະເທດຕົ້ນກຳເນີດຂອງພວກເຂົາ (ມຽນມາ, ກຳປູເຈຍ ແລະ ສປປ ລາວ). ມາດຕາ 18 ຂອງກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ບໍ່ໄດ້ຖືກນຳມາໃຊ້ຢ່າງຊັດເຈນໃນການຍົກເວັ້ນພວກເຂົາຈາກການລົງໂທດ. ເຖິງຢ່າງໃດກໍຕາມ, ມີການກ່າວເຖິງກໍລະນີອື່ນໆ ທີ່ຄົນຕ່າງປະເທດຖືກຈັບໃນການເຮັດການປະມົງຢ່າງຜິດກົດໝາຍ ໃນ

---

89 ບົດລາຍງານການຄ້າມະນຸດ ປີ 2020: ອິນໂດເນເຊຍ (ກະຊວງການຕ່າງປະເທດສະຫະລັດອາເມລິກາ, 2020)

ນ່ານນ້ຳຂອງອິນໂດເນເຊຍ ເຊິ່ງພວກເຂົາໄດ້ຖືກກັກຂັງໃນສະຖານທີ່ກວດຄົນເຂົ້າ-ອອກເມືອງ, ເຊິ່ງບາງຄັ້ງກໍແກ່ຍາວເວລາອອກໄປ ໂດຍບໍ່ມີການກັ່ນກອງຜູ້ທີ່ອາດຈະເປັນການຄ້າມະນຸດ. ກະຊວງການຕ່າງປະເທດຂອງສະຫະລັດອາເມລິກາ ຍັງລະບຸວ່າ ຜູ້ທີ່ຖືກຂູດຮີດໃນອຸດສາຫະກຳປະມົງ (ລວມທັງ ຊາວປະມົງທີ່ຖືກຄ້າມະນຸດຈາກກຳປູເຈຍ, ໄທ ແລະ ຫວຽດນາມ) ເປັນຜູ້ທີ່ມີຄວາມສ່ຽງສູງທີ່ຈະຖືກໂທດທາງອາຍາ ສຳລັບອາຊະຍາກຳທີ່ພວກເຂົາໄດ້ກະທຳໃນນ່ານນ້ຳອິນໂດເນເຊຍ ແລະ ໃນບ່ອນອື່ນໆ ລວມທັງ ການເຮັດປະມົງທີ່ຜິດກົດໝາຍ, ການລ່ວງລ້ຳ, ການລັກລອບເຂົ້າ-ອອກ ອານາເຂດຂອງລັດອື່ນໆຢ່າງຜິດກົດໝາຍ.[90]

**ການລົງໂທດຜູ້ຖືກເຄາະຮ້າຍ ສຳລັບຄວາມຜິດທີ່ກ່ຽວຂ້ອງກັບຢາເສບຕິດ:** ມີການປຶກສາຫາລືທີ່ສຳຄັນກ່ຽວກັບຄວາມສ່ຽງຂອງການລົງໂທດ ທີ່ຕ້ອງປະເຊີນໜ້າໂດຍຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ຖືກຂູດຮີດ ໃນຖານະຜູ້ທີ່ຖືກຫຼອກລວງໃຫ້ຂົນຢາເສບຕິດໂດຍບໍ່ຖືກຕ້ອງຕາມກົດໝາຍ. ຜູ້ຕອບໄດ້ຍົກໃຫ້ເຫັນສາມເຫດຜົນຫຼັກທີ່ສຳຄັນ ວ່າເປັນຫຍັງບຸກຄົນດັ່ງກ່າວ ອາດຈະຖືກລົງໂທດພາຍໃຕ້ *ກົດໝາຍວ່າດ້ວຍຢາເສບຕິດ ປີ 2009* ແທນທີ່ຈະຖືກດຳເນີນຄະດີພາຍໃຕ້ *ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ.* ເຫດຜົນທຳອິດ, ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ມີຄວາມຄຸ້ນເຄີຍກັບ*ກົດໝາຍວ່າດ້ວຍຢາເສບຕິດ* ຫຼາຍກວ່າ ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ. ເຫດຜົນທີສອງ ການຕັດສິນແມ່ນມີຂໍ້ອນຂ້າງງ່າຍທີ່ຈະບັນລຸ ພາຍໃຕ້ອະດີດ ໂດຍບໍ່ຈຳເປັນຕ້ອງມີອົງປະກອບຂອງເຈດຕະນາ. ດັ່ງນັ້ນ, ຜູ້ທີ່ຖືກເບິ່ງວ່າເປັນຜູ້ກະທຳຜິດ ໃນຄັ້ງທຳອິດ ອາດຈະບໍ່ຖືກເບິ່ງເຫັນໃນຖານະຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ການກໍ່ອາຊະຍາກຳ ຕ້ອງໃຊ້ເວລາຫຼາຍ, ພະລັງງານ ແລະ ທັກສະໃນການສືບສວນ-ສອບສວນ ແລະ ໂອກາດທີ່ຈະສຳເລັດບໍ່ແນ່ນອນ. ເຫດຜົນທີສາມ, ຜົນກະທົບຂອງ 'ສົງຄາມຕໍ່ຕ້ານຢາເສບຕິດ' ເພີ່ມຄວາມສ່ຽງສູງໃນການລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ໃນການນປະນິປານອມການປົກປ້ອງເຂົາເຈົ້າ. ຜູ້ຕອບບາງທ່ານ ໄດ້ຕັ້ງຂໍ້ສັງເກດວ່າ ຜູ້ທີ່ໃຫ້ການສະໜັບສະໜູນ ການປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ຖືກຂູດຮູດຈາກການຖືກຫຼອກລວງໃຫ້ຂົນສົ່ງຢາເສບຕິດ, ອາດຈະຖືກສັງຄົມປະນາມ ຫຼື ຖືກວິຈານ ທີ່ຂັດກັບຜົນປະໂຫຍດຂອງຊາດ ດ້ວຍການບໍ່ສະໜັບສະໜູນ ສົງຄາມຕໍ່ຕ້ານຢາເສບຕິດ.

90

## ຫ້ອງທີ 5: ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ປະເຊີນກັບຄວາມຕາຍ ຍ້ອນການລັກລອບຂົນສິ່ງຢາເສບຕິດ - ແມຣີ ເຈນ ເວໂລໂຊ (Mary Jane Veloso)

ໃນປີ 2010, ແມຣີ ເຈນ ເວໂລໂຊ, ແຮງງານຕ່າງປະເທດຄົນຟີລິບປິນ (OFW), ໄດ້ຖືກຈັບຕົວທີ່ສະໜາມບິນ ຢ໊ອກຢາກາຕາ, ຖືກຕັດສິນ ແລະ ລົງໂທດປະຫານຊີວິດ ໃນສະຖານການລັກລອບຂົນສົ່ງເຮໂລອິນ ຫຼາຍກວ່າ 2 ກິໂລກຣາມ ເຂົ້າປະເທດອິນໂດເນເຊຍ. ນາງ ເວໂລໂຊ ກ່າວສະເໜີວ່າ ລາວຖືກຫຼອກໃຫ້ເອົາກະເປົາເດີນທາງໄປ ຫຼັງຈາກທີ່ລາວສູນເສຍວຽກເຮັດງານທຳທີ່ປະເທດມາເລເຊຍ. ມີຄວາມເປັນກັງວົນເກີດຂຶ້ນກ່ຽວກັບການດຳເນີນການພິຈາລະນາຄະດີ ທີ່ສົ່ງຜົນໃຫ້ ເວໂລໂຊ ຖືກຕັດສິນລົງໂທດ ເຊິ່ງມີການກ່າວວ່າ ບໍ່ໄດ້ມີການຍຶດໝັ້ນຕໍ່ກັບສິດຂອງລາວໃນການພິຈາລະນາຄະດີຢ່າງເປັນທຳ.[91] ໂທດປະຫານຊີວິດດ້ວຍການຍິງເປົ້າ ໄດ້ຖືກເລື່ອນໄປໃນວັນທີ 29 ເມສາ 2015 ພາຍຫຼັງທີ່ ເຈົ້າໜ້າທີ່ຟີລິບປິນ ສະເໜີໃຫ້ມີການດຳເນີນຄະດີຕໍ່ ເພື່ອໃຫ້ນາງ ເວໂລໂຊ ສາມາດໃຫ້ການ ເພື່ອດຳເນີນຄະດີຕໍ່ກັບ ຄຣິດຕີນ່າ ເຊີຈິໂອ (Cristina Sergio) ແລະ ຈູລຽດ ລາຄານິເລົາ (Julius Lacanilao) ທີ່ຖືກຫາວ່າຄ້າມະນຸດ

ນາງ ເວໂລໂຊ ບໍ່ໄດ້ຖືກກຳນົດຕົວໃນຖານະຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນເວລາທີ່ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍໄດ້ພົບລາວ.[92] ແຕ່ສະຖານະການຂອງລາວ ໃນຖານະຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເກີດຂຶ້ນ ຫຼັງຈາກທີ່ຖືກຕັດສິນ ແລະ ລົງໂທດ, ເນື່ອງມາຈາກກຸ່ມຜູ້ສະໜັບສະໜູນຈາກອົງການຈັດຕັ້ງທາງສັງຄົມ ແລະ ບົນພື້ນຖານຂໍ້ເທັດຈິງທີ່ປະກົດຂຶ້ນໃນການພິຈາລະນາຄະດີຕໍ່ກັບ ຄຣິດຕີນ່າ ເຊີຈິໂອ ແລະ ຈູລຽດ ລາຄານິເລົາ ໃນການຈັດຫາງານໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ຖືວ່າເປັນການຄ້າມະນຸດ.

ເຖິງວ່າຈະມີການດຳເນີນຄະດີຂອງສານ ໃນຟີລິປິນ, ໃນເວລາທີ່ກຳລັງຂຽນນີ້, ນາງ ເວໂລໂຊ ຍັງບໍ່ໄດ້ຖືກຮັບຮູ້ໃນຖານະຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໃນອິນໂດເນເຊຍ ແລະ ມາດຕາ 18 ຂອງ *ກົດໝາຍວ່າດ້ວຍການລົບລ້າງອາຊະຍາກຳອາຍາຈາກການຄ້າມະນຸດ* (2007) ຍັງບໍ່ໄດ້ຖືກນຳໃຊ້ ເພື່ອປົກປ້ອງລາວຈາກການຖືກລົງໂທດ. ຄວາມຊັກຊ້າໃນການຮ່ວມມືສອງຝ່າຍ ລະຫວ່າງ ຟີລິບປິນ ແລະ ມາເລເຊຍ ໄດ້ເຮັດໃຫ້ນາງ ເວໂລໂຊ ຍັງບໍ່ໄດ້ໃຫ້ການ ເພື່ອດຳເນີນຄະດີກັບຜູ້ຄ້າມະນຸດ ແລະ ໃນເດືອນທັນວາ 2021 ລາວຍັງຢູ່ໃນຄຸກໃນອິນໂດເນເຊຍ. ການຕັດສິນທີ່ກ່ຽວຂ້ອງກັບກໍລະນີຂອງລາວ ຈະສະທ້ອນເຖິງການຮ່ວມມືສອງຝ່າຍລະຫວ່າງ ຟີລີປິນ ແລະ ອິນໂດເນເຊຍ ລວມທັງຄວາມສາມາດຂອງອິນໂດເນເຊຍໃນການເຂົ້າໃຈ ແລະ ນຳໃຊ້ຫຼັກການບໍ່ລົງໂທດ ຕາມທີ່ກຳນົດໄວ້ໃນມາດຕາ 14(2) ຂອງສົນທິສັນຍາ ACTIP ແລະ ມາດຕາ 18 ຂອງ *ກົດໝາຍວ່າດ້ວຍການລົບລ້າງອາຊະຍາກຳອາຍາຈາກການຄ້າມະນຸດ* (2007).

---

91 ເບິ່ງຕົວຢ່າງ: Wahyu Susilo, Aspek-aspek Ketidakadilan Dalam Proses Peradilan Terhadap Mary Jane Fiesta Veloso (Perspektif Perbandingan) ໃນ Tim Penyusun, *ການພິຈາລະນາທີ່ບໍ່ເປັນທຳ: ການວິເຄາະ Kasus Terpidana Mati di ອິນໂດເນເຊຍ* (Koalisi untuk Hapus Hukuman Mati, 2016) ໜ້າທີ.107-114.

92 Felicity Gerry ແລະ Narelle Sherwill, ການຄ້າມະນຸດ, ການຄ້າຢາເສບຕິດ ແລະ ໂທດປະຫານຊີວິດ *ການທົບທວນກົດໝາຍອິນໂດເນເຊຍ* (2016) 3: 265-282, 271.

**ການລົງໂທດຜູ້ຖືກເຄາະຮ້າຍຄົນອິນໂດເນເຊຍໃນເຂດອຳນາດຂອງສານອື່ນ:** ຜູ້ຕອບໄດ້ຊີ້ໃຫ້ເຫັນເຖິງສິ່ງທ້າທາຍທີ່ເກີດ ຂຶ້ນ ໃນກໍລະນີທີ່ຄົນອິນໂດເນເຊຍ ໄດ້ເຄື່ອນຍ້າຍໄປຕ່າງປະເທດໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ຕໍ່ມາຕົກເປັນຜູ້ຖືກເຄາະຮ້າຍທີ່ຖືກຂູດຮີດ. ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຄົນອິນໂດເນເຊຍ ລວມທັງເດັກນ້ອຍ ໄດ້ມີການລາຍງານວ່າ ຖືກປະຕິບັດໃນຖານະຜູ້ກະທຳຜິດ ໂດຍເຈົ້າໜ້າທີ່ຕຳຫຼວດຂອງບັນດາປະເທດໃນອາຊຽນ ແລະ ໃນບ່ອນອື່ນໆ ສຳລັບຄວາມຜິດທີ່ກ່ຽວຂ້ອງກັບການເຂົ້າ-ອອກເມືອງ, ການປອມແປງເອກະສານ, ຄວາມຜິດກ່ຽວກັບຢາເສບຕິດ ແລະ ແມ້ກະທັ່ງ ການຄາດຕະກຳ. ໄດ້ມີການຍົກຕົວຢ່າງ ຜູ້ຖືກເຄາະຮ້າຍຄົນອິນໂດເນເຊຍ ທີ່ຊອກຫາການຊ່ວຍເຫຼືອຈາກເຈົ້າໜ້າທີ່ຕຳຫຼວດທ້ອງຖິ່ນ ແຕ່ຖືກດຳເນີນຄະດີແທນ ໃນຂໍ້ຫາບໍ່ມີເອກະສານ. ໄດ້ມີການລາຍງານຄະດີດັ່ງກ່າວຂຶ້ນ ໃນກໍລະນີ ທີ່ສະຖານທູດອິນໂດເນເຊຍ ຢູ່ຕ່າງປະເທດ ບໍ່ມີຄວາມຄຸ້ນເຄີຍກັບຫຼັກການບໍ່ລົງໂທດ ແລະ ເຈົ້າໜ້າທີ່ຍຸຕິທຳທາງອາຍາ ໃນເຂດອຳນາດສານເຫຼົ່ານັ້ນ ບໍ່ໄດ້ດຳເນີນການສືບສວນ-ສອບສວນວ່າ ບຸກຄົນດັ່ງກ່າວໄດ້ຖືກຄ້າມະນຸດ ຫຼື ບໍ່.

**ການນຳໃຊ້ການລົງໂທດ ໂດຍຜູ້ຄ້າມະນຸດ:** ໄດ້ມີການຍົກຕົວຢ່າງທີ່ຜູ້ຄ້າມະນຸດ ຫຼື ຜູ້ໃຊ້ແຮງງານທີ່ຂູດຮີດຜູ້ຖືກເຄາະຮ້າຍນັ້ນ ລາຍງານກ່ຽວກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ສຳລັບອາຊະຍາກຳ ເຊັ່ນ ການສໍ້ໂກງ, ການບໍ່ຊື່ສັດ ແລະ ບໍ່ເຊື່ອຟັງກົດລະບຽບຂອງບໍລິສັດ. ສິ່ງນີ້ ເປັນຍຸດທະສາດທີ່ຫັນປ່ຽນຄວາມສົນໃຈຂອງຄວາມຍຸຕິທຳທາງອາຍາ ໄປສູ່ຜູ້ຖືກເຄາະຮ້າຍທີ່ມີຄວາມສ່ຽງ. ບົດລາຍງານການຄ້າມະນຸດຂອງສະຫະລັດອາເມລິກາ ປີ 2021 ໄດ້ລະບຸວ່າ ບໍລິສັດຈັດຫາງານ ໄດ້ມີການຟ້ອງຂໍ້ຫາໝິ່ນປະໝາດ ຕໍ່ກັບຜູ້ຖືກເຄາະຮ້າຍ ທີ່ພະຍາຍາມລາຍງານການຂູດຮີດ ເຊິ່ງຫຼາຍຄົນຂາດວິທີການດ້ານການເງິນໃນການເຂົ້າຮ່ວມການພິຈາລະນາຄະດີ.

ການນຳໃຊ້ການລົງໂທດໂດຍເຈົ້າໜ້າທີ່ລັດ: ຜູ້ຕອບໄດ້ລາຍງານວ່າ ໂດຍສະເພາະໃນພື້ນທີ່ຊາຍແດນ, ເຈົ້າໜ້າທີ່ທີ່ສໍ້ ລາດບັງຫຼວງ ສາມາດໃຊ້ອຳນາດຂົ່ມຂູ່ ເພື່ອໃຫ້ຈ່າຍສິນບົນໃນການອຳນວຍຄວາມສະດວກໃນການຂ້າມຊາຍແດນ, ຂົ່ມຂູ່ທີ່ຈະຈັບຕົວຖ້າຫາກປະຕິເສດບໍ່ຈ່າຍເງິນ.[93] ການລົງໂທດອາດຈະຖືກໃຊ້ ເພື່ອຕອບໂຕ້ການຕ້ານການຄ້າມະນຸດ. ໃນພາກປະຕິບັດຕົວຈິງ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຄົນຕ່າງປະເທດ ທີ່ຜິດກົດໝາຍໃນອິນໂດເນເຊຍ ອາດຈະຖືກກັກຂັງເພື່ອຈຸດປະສົງໃນການກຳນົດວ່າພວກເຂົາເປັນຜູ້ລັກລອບເຂົ້າເມືອງ ຫຼື ຜູ້ຖືກຄ້າມະນຸດ, ຫຼື ຜູ້ຂໍລີ້ໄພ ຫຼື ຜູ້ເຄື່ອນຍ້າຍ. ຜູ້ຕອບຝ່າຍລັດ ໄດ້ອະທິບາຍວ່າ ການນຳເອົາຜູ້ຖືກເຄາະຮ້າຍກັບມາອິນໂດເນເຊຍ ເພື່ອໃຫ້ການ ພາຍຫຼັງທີ່ພວກເຂົາຖືກສົ່ງກັບປະເທດເຂົາເຈົ້າແລ້ວນັ້ນ ເປັນຂະບວນການທີ່ມີຄ່າໃຊ້ຈ່າຍສູງ ເຊິ່ງຕ້ອງໃຊ້ຄວາມພະຍາຍາມຢ່າງສູງ, ເຊິ່ງສາມາດຫຼີກລ້ຽງໄດ້ ຖ້າຫາກພວກເຂົາຖືກຈັບຕົວໃນເບື້ອງຕົ້ນ (ຕົວຢ່າງ ຄວາມຜິດທີ່ກ່ຽວຂ້ອງກັບການໃຊ້ເອກະສານປອມ/ການໃຊ້ບັດປະຈຳຕົວປອມ) ໃນອິນໂດເນເຊຍ ເຊິ່ງພວກເຂົາສາມາດເຂົ້າຮ່ວມ ໃນຖານະພະຍານ ໃນຂະບວນຍຸຕິທຳ.

93 ເບິ່ງທີ່: *ການສໍ້ລາດບັງຫຼວງ ໃນຖານະຜູ້ອຳນວຍຄວາມສະດວກໃຫ້ແກ່ການລັກລອບການເຄື່ອນຍ້າຍແຮງງານ ແລະ ການຄ້າມະນຸດ ໃນພາກພື້ນຂະບວນການບາຫຼີ ໂດຍສຸມໃສ່ອາຊີຕາເວັນອອກສຽງໃຕ້* (UNODC ແລະ RSO, 2021) ໜ້າທີ 26-27

## 2.4. ສປປ ລາວ

ມີການຈັດກອງປະຊຸມປຶກສາຫາລືແບບໂຕະມົນສອງຄັ້ງ ໃນ ສປປ ລາວ ເພື່ອຈຸດປະສົງຂອງການຄົ້ນຄວ້ານີ້, ໂດຍມີຜູ້ເຂົ້າຮ່ວມທັງໝົດ 27 ທ່ານ ທີ່ຕາງໜ້າມາຈາກທັງຝ່າຍລັດ ແລະ ໜ່ວຍງານທີ່ບໍ່ແມ່ນຝ່າຍລັດທີ່ເຮັດວຽກຕ້ານການຄ້າມະນຸດ. ໃນພາກນີ້ ເນັ້ນໃຫ້ເຫັນເຖິງຂໍ້ມູນດ້ານເລິກ ລວມທັງ ເອກະສານ/ຂໍ້ມູນທີ່ເປີດກວ້າງ ທີ່ກ່ຽວຂ້ອງ.

## ຫຼັກການບໍ່ລົງໂທດໃນກົດໝາຍ ແລະ ນະໂຍບາຍ

**ຂໍ້ກຳນົດກ່ຽວກັບຫຼັກການບໍ່ລົງໂທດທີ່ຊັດເຈນ ໃນກົດໝາຍວ່າດ້ວຍການຕ້ານການຄ້າມະນຸດຂອງ ສປປ ລາວ:** ກົດໝາຍລາວມີສອງຂໍ້ກຳນົດທີ່ຊັດເຈນ ທີ່ກ່າວເຖິງຫຼັກການບໍ່ລົງໂທດ. ອີງຕາມມາດຕາ 39(7) ຂອງ *ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ* (2015), ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດມີສິດ 'ໄດ້ຮັບການຍົກເວັ້ນຄວາມຮັບຜິດຊອບຄະດີອາຍາ ແລະ ຈະບໍ່ຖືກກັກຂັງໃນສະຖານການເປັນໂສເພນີ ແລະ ການເຂົ້າ-ອອກເມືອງຢ່າງຜິດກົດໝາຍ.' ນອກນັ້ນ, ມາດຕາ 25(6) ຂອງ *ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ* (2004) ຍັງໃຫ້ສິດແກ່ແມ່ຍິງ ແລະ ເດັກນ້ອຍ 'ຈະບໍ່ຖືກດຳເນີນຄະດີ ແລະ ກັກຂັງໃນຂໍ້ຫາການຄ້າແມ່ຍິງ ແລະ ເດັກ, ການເປັນໂສເພນີ ຫຼື ການເຂົ້າ-ອອກເມືອງຢ່າງຜິດກົດໝາຍ.' ຂໍ້ກຳນົດເຫຼົ່ານີ້ຈຳກັດຂອບເຂດຂອງການປົກປ້ອງສະເພາະບາງການກະທຳຜິດເທົ່ານັ້ນ (ການເປັນໂສເພນີ, ການເຂົ້າ-ອອກເມືອງຢ່າງຜິດກົດໝາຍ ແລະ ການຄ້າແມ່ຍິງ ແລະ ເດັກ) ແລະ ສະເພາະຜູ້ທີ່ເປັນຜູ້ຖືກເຄາະຮ້າຍບາງກຸ່ມເທົ່ານັ້ນ (ແມ່ຍິງ ແລະ ເດັກ).[94] ຜູ້ຕອບ ໄດ້ໃຫ້ຂໍ້ສັງເກດວ່າ ຫຼັກການບໍ່ລົງໂທດ ໄດ້ຖືກກຳນົດໄວ້ໃນກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ປີ 2016 ກ່ອນທີ່ລາວຈະເຂົ້າເປັນພາຄີຂອງສົນທິສັນຍາອາຊຽນວ່າດ້ວຍການຕ້ານການຄ້າມະນຸດ ໃນປີ 2017. ສິ່ງນີ້ໄດ້ຊີ້ໃຫ້ເຫັນເຖິງຄວາມໝັ້ນໝາຍຂອງ ສປປ ລາວ ຕໍ່ກັບຫຼັກການບໍ່ລົງໂທດ.

**ຂໍ້ກຳນົດຂອງປະມວນກົດໝາຍອາຍາ ທີ່ກ່ຽວຂ້ອງກັບການບໍ່ລົງໂທດຜູ້ຖືກເຄາະຮ້າຍ:** *ປະມວນກົດໝາຍອາຍາ* (2017) ກຳນົດຫຼັກການພື້ນຖານໃນມາດຕາ 5: (1) ເມື່ອມີການກະທຳຜິດຕ້ອງມີຄວາມຮັບຜິດຊອບທາງອາຍາ; (2) ມີແຕ່ຜູ້ກະທຳຜິດເທົ່ານັ້ນ ເປັນຜູ້ມີຄວາມຮັບຜິດຊອບຕໍ່ການກະທຳຜິດຂອງຕົນ; (3) ຄວາມຮັບຜິດຊອບຂອງຜູ້ກະທຳຜິດ ຕາມລັກສະນະ ແລະ ລະດັບຄວາມເປັນອັນຕະລາຍຕໍ່ສັງຄົມຂອງການກະທຳຜິດ, ບຸກຄະລິກກະພາບຂອງຜູ້ກະທຳຜິດ ແລະ ສາເຫດທີ່ພາໃຫ້ມີການຫຼຸດຜ່ອນໂທດ ຫຼື ການເພີ່ມຄວາມຮັບຜິດຊອບທາງອາຍາ. ມາດຕາ 33 ຂອງ *ປະມວນກົດໝາຍອາຍາ* ໄດ້ກຳນົດສະຖານະການຕ່າງໆ ທີ່ອາດຈະນຳໄປສູ່ການພົ້ນຈາກຄວາມຮັບຜິດຊອບທາງອາຍາ ລວມທັງ ການຖືກບັງຄັບ ແລະ ການຖືກຂົ່ມຂູ່ ເຊິ່ງອາດຈະຖືກນຳໄປໃຊ້ໃນບໍລິບົດຂອງການຄ້າມະນຸດ. ອີງຕາມມາດຕາ 35 ຂອງ *ປະມວນກົດໝາຍອາຍາ* ໃນກໍລະນີທີ່ບຸກຄົນໃດຫາກໄດ້ກະທຳຜິດດ້ວຍການຖືກບັງຄັບ ຫຼື ຂົ່ມຂູ່ ເຊິ່ງການຖືກບັງຄັບ ຫຼື ການຖືກຂົ່ມຂູ່ນັ້ນ ບໍ່ສາມາດຫຼີກລ້ຽງໄດ້, ບຸກຄົນດັ່ງກ່າວຈະບໍ່ມີຄວາມຮັບຜິດຊອບທາງອາຍາ. ໃນກໍລະນີທີ່ການກະທຳຜິດນັ້ນ ເປັນອາຊະຍາກຳ, ການຖືກບັງຄັບ ຫຼື ການຖືກຂົ່ມຂູ່ນັ້ນເປັນພຽງສາເຫດທີ່ພາໃຫ້ຫຼຸດຜ່ອນໂທດທາງອາຍາເທົ່ານັ້ນ. ຜູ້ເຂົ້າຮ່ວມຍັງກ່າວເຖິງມາດຕາທີ່ກ່ຽວຂ້ອງ ມາດຕາ 12 ຂອງ *ປະມວນກົດໝາຍອາຍາ*, ທີ່ກຳນົດອົງປະກອບຂອງການກະທຳຜິດທາງອາຍາ.

**ຂໍ້ກຳນົດອື່ນໆທີ່ກ່ຽວຂ້ອງໃນກົດໝາຍລາວ:** *ລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ* (2015) ໄດ້ລວມເອົາບາງຂໍ້ກຳນົດ ທີ່ອາດຈະກ່ຽວຂ້ອງໃນກໍລະນີທີ່ ຜູ້ຖືກເຄາະຮ້າຍຄົນລາວ ທີ່ຖືກຕັ້ງຂໍ້ຫາທີ່ກ່ຽວຂ້ອງກັບການກະທຳຜິດ.[95] ມາດຕາ 41 ແລະ 42 ຂອງລັດຖະທຳມະນູນ ປົກປ້ອງພົນລະເມືອງລາວຈາກການຖືກຈັບຕົວ ຫຼື ຈຳຄຸກໂດຍບໍ່ຖືກຕ້ອງຕາມກົດໝາຍ. *ການປະກາດໃຊ້ກົດໝາຍວ່າດ້ວຍການດຳເນີນຄະດີອາຍາສະບັບປັບປຸງ* (2017), ມາດຕາ 14 (ປັບປຸງ) ຮັບປະກັນສິດຂອງຜູ້ຖືກຫາໃນການປົກປ້ອງຕົນເອງ ແລະ ຮັບປະກັນ

---

94 ການຄ້າເດັກ ໄດ້ຖືກພິຈາລະນາວ່າ ເດັກ ຈຳເປັນຕ້ອງໄດ້ຮັບການປົກປ້ອງພິເສດ ໃນມາດຕາ 2(2) ຂອງ *ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ,* ໝາຍຄວາມວ່າມາດຕະການປົກປ້ອງພິເສດ ນຳໃຊ້ພາຍໃຕ້ພາກທີ 2 ຂອງກົດໝາຍ.

95 ເບິ່ງຕົວຢ່າງ ມາດຕາ 41 (ປັບປຸງ), ມາດຕາ (42) ປັບປຸງ ແລະ ມາດຕາ 46.

ສິດໃນການປົກປ້ອງ ແລະ ຜົນປະໂຫຍດອັນຊອບທຳຕາມກົດໝາຍຂອງຜູ້ຖືກຫາ. ມັນຍັງກຳນົດອີກວ່າ ຜູ້ຖືກຫາ 'ຈະບໍ່ຖືກບັງຄັບໃຫ້ຊອກຫາຫຼັກຖານມາຢັ້ງຢືນຄວາມບໍລິສຸດຂອງຕົນເອງ.' ຜູ້ຕອບ ຍັງກ່າວເຖິງມາດຕາ 6 ຂອງ *ກົດໝາຍວ່າດ້ວຍການດຳເນີນຄະດີອາຍາສະບັບປັບປຸງ* ທີ່ກ່າວເຖິງ 9 ສາເຫດທີ່ພາໃຫ້ຄະດີອາຍາຕົກໄປ.[96] ເຊິ່ງຕ່າງຈາກການປົກປ້ອງ ທີ່ກຳນົດໄວ້ໃນ *ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ* (2004) ທີ່ປົກປ້ອງສະເພາະແມ່ຍິງ ແລະ ເດັກເທົ່ານັ້ນ ຈາກການລົງໂທດສຳລັບຄວາມຜິດບາງຢ່າງ, ການປົກປ້ອງທີ່ກຳນົດໄວ້ໃນເຄື່ອງມືເຫຼົ່ານີ້ ນຳໃຊ້ສຳລັບຜູ້ຖືກຫາທຸກຄົນ ລວມທັງ ຜູ້ຊາຍທີ່ເປັນຜູ້ໃຫຍ່.

**ບໍ່ມີນະໂຍບາຍສະເພາະ ທີ່ກ່ຽວຂ້ອງຫຼັກການບໍ່ລົງໂທດ:** ໃນລະດັບນະໂຍບາຍ, *ຄູ່ມືການປົກປ້ອງ, ຊ່ວຍເຫຼືອ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ* (ກະຊວງປ້ອງກັນຄວາມສະຫງົບ, ກອງເລຂາຄະນະກຳມະການຕ້ານການຄ້າມະ ນຸດລະດັບຊາດ, 2020) ບໍ່ໄດ້ກຳນົດຢ່າງຊັດເຈນຕໍ່ກັບຫຼັກການບໍ່ລົງໂທດ. ເຖິງຢ່າງໃດກໍຕາມ, ຄູ່ມືໄດ້ຍຶດໝັ້ນຫຼັກການ ດ້ານສິດທິມະນຸດ, ສິດທິຂອງຜູ້ຖືກເຄາະຮ້າຍໃນການປົກປ້ອງ ແລະ ການປົກປ້ອງ, ຊ່ວຍເຫຼືອ ແລະ ສົ່ງຕໍ່ຜູ້ຖືກເຄາະຮ້າຍ ໂດຍອີງໃສ່ສິດ ແລະ ຜົນປະໂຫຍດສູງສຸດຂອງຜູ້ຖືກເຄາະຮ້າຍ ບົນພື້ນຖານການຍິນຍອມ. ແຜນປະຕິບັດງານແຫ່ງຊາດຂອງລາວ ແລະ ຄູ່ມືການປົກປ້ອງລະດັບຊາດ ໄດ້ຮັບການພິຈາລະນາວ່າກ່ຽວຂ້ອງກັບຫຼັກການບໍ່ລົງໂທດ ເຖິງວ່າຈະບໍ່ມີການອະທິບາຍວ່າກ່ຽວຂ້ອງແນວໃດກໍຕາມ.

## ການຕີຄວາມໝາຍຫຼັກການບໍ່ລົງໂທດ

**ທັດສະນະທີ່ແຕກຕ່າງກັນວ່າ ມີຄວາມເຂົ້າໃຈຫຼັກການບໍ່ລົງໂທດຢ່າງມີປະສິດທິພາບ ຫຼື ບໍ່:** ຜູ້ຕອບໄດ້ເນັ້ນໜັກເຖິງການສະໜັບສະໜູນຢ່າງຫ້າວຫັນຕໍ່ກັບຫຼັກການບໍ່ລົງໂທດ. ເຖິງຢ່າງໃດກໍຕາມ, ມີຫຼາຍທັດສະນະທີ່ແຕກຕ່າງກັນ ວ່າຫຼັກການ ວ່າຫຼັກການບໍ່ລົງໂທດ ມີຄວາມເຂົ້າໃຈທີ່ເປັນເອກະພາບກັນໃນ ສປປ ລາວ ຫຼື ບໍ່. ຜູ້ຕອບຝ່າຍລັດ ພິຈາລະນາວ່າ ມີຄວາມເຂົ້າໃຈຢ່າງກວ້າງຂວາງ ແລະ ເລິກເຊິ່ງ ບວກກັບກົດໝາຍທີ່ພຽງພໍ ໃນການສະໜັບສະໜູນການຕີຄວາມໝາຍຢ່າງມີປະສິດທິພາບ ໂດຍຜູ້ປະຕິບັດຕົວຈິງໃນຂະແໜງຍຸຕິທຳທາງອາຍາ. ພວກເຂົາພິຈາລະນາວ່າ ຫຼັກການດັ່ງກ່າວໄດ້ຮັບການສົ່ງເສີມຢ່າງກວ້າງຂວາງໃນຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງຜ່ານໂຄງສ້າງຂອງຄະນະກຳມະການແຫ່ງຊາດ ໂດຍມີຄູ່ມືແນະນຳ ເພື່ອຮັບປະກັນວ່າທຸກໜ່ວຍງານທີ່ກ່ຽວຂ້ອງມີຄວາມເຂົ້າໃຈເປັນອັນດຽວກັນກ່ຽວກັບຫຼັກການບໍ່ລົງ ໂທດ. ຜູ້ຕອບ ທີ່ບໍ່ແມ່ນໜ່ວຍງານຂອງລັດ ໄດ້ສະແດງຄວາມເຫັນໃນທາງກົງກັນຂ້າມ ເຊິ່ງຊີ້ໃຫ້ເຫັນວ່າມີຄວາມເຂົ້າໃຈ ທີ່ບໍ່ເປັນເອກະພາບກັນ ແລະ ມີຄວາມຈຳເປັນທີ່ຕ້ອງໃຊ້ຄວາມພະຍາຍາມສູງໃນການເຜີຍແຜ່ ເພື່ອສ້າງຄວາມເຂັ້ມແຂງ ໃຫ້ຮັບຮູ້ ແລະ ເຂົ້າໃຈຫຼາຍຂຶ້ນ. ໃນທັດສະນະຂອງເຂົາເຈົ້າ, ເຈົ້າໜ້າທີ່ຕຳຫຼວດ, ໄອຍະການ ແລະ ຜູ້ພິພາກສາ ບໍ່ມີຄວາມ ເຂົ້າໃຈຢ່າງເຕັມສ່ວນ ຫຼື ນຳໃຊ້ຫຼັກການບໍ່ລົງໂທດຢ່າງເປັນເອກະພາບກັນ, ໂດຍສະເພາະໃນຂັ້ນທ້ອງຖິ່ນ ແລະ ຂັ້ນເມືອງ. ຜູ້ເຂົ້າຮ່ວມເຫຼົ່ານັ້ນ ໄດ້ເນັ້ນໜັກເຖິງຄວາມຈຳເປັນຕໍ່ກັບຄວາມພະຍາຍາມຫຼາຍຂຶ້ນ ເພື່ອປ່ຽນແປງທັດສະນະຄະຕິ ແລະ ປ່ຽນແປງທິດທາງ ເພື່ອເອົາຊະນະຄວາມເຂົ້າໃຈທີ່ງ່າຍດາຍ ວ່າໃຜເປັນຜູ້ຖືກເຄາະຮ້າຍ ແລະ ໃຜເປັນຜູ້ກະທຳຜິດ.

96 ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ວັນທີ 15 ພຶດສະພາ 2004, ມາດຕາ 4 ສາເຫດທີ່ພາໃຫ້ການດຳເນີນຄະດີອາຍາຕົກໄປ. ສາຫາດທີ່ບໍ່ພາໃຫ້ເປີດການສືບສວນ-ສອບສວນ ຫຼື ບໍ່ໃຫ້ສືບຕໍ່ການດຳເນີນຄະດີອາຍາ ປະກອບມີ: 1. ຂາດເຫດການຂອງການກະທຳຜິດທາງອາຍາ; 2. ຂາດອົງປະກອບຂອງການກະທຳຜິດທາງອາຍາ; 3. ໝົດອາຍຸຄວາມໃນການຮ້ອງຟ້ອງທາງອາຍາ; 4. ມີການນິລະໂທດກຳ; 5. ເດັກທີ່ມີອາຍາບໍ່ເຖິງສິບຫ້າປີ ມີການກະທຳທີ່ເປັນອັນຕະລາຍຕໍ່ສັງຄົມ. ໃນກໍລະນີນີ້ ເດັກຈະຖືກນຳໄປສຶກສາອົບຮົມ; 6. ມີການຕົກລົງໄກ່ເກ່ຍລະຫວ່າງຜູ້ຖືກເສຍຫາຍ ແລະ ຜູ້ຖືກຫາໃນຄະດີ ທີ່ການກະທຳຜິດບໍ່ເປັນອັນຕະລາຍຮ້າຍແຮງຕໍ່ສັງຄົມ ຕາມທີ່ກຳນົດໄວ້ໃນມາດຕາ 22 ຂອງກົດໝາຍອາຍາ; 7. ຂາດການຮ້ອງຟ້ອງຂອງຜູ້ຖືກເສຍຫາຍ ຫຼື ຜູ້ຖືກເສຍຫາຍຖອນຄຳຕ້ອງຟ້ອງໃນກໍລະນີທີ່ແມ່ນການກະທຳຜິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 ຂອງກົດໝາຍອາຍາ; 8. ຜູ້ກະທຳຜິດໄດ້ເສຍຊີວິດ; 9. ມີຄຳສັ່ງຊັດມ້ຽນ ຫຼື ມີຄຳຕັດສິນຂອງສານປະຊາຊົນທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ກ່ຽວກັບຄະດີດຽວກັນ.

**ສ້າງການເຊື່ອມໂຍງລະຫວ່າງການກະທຳຜິດ ແລະ ການຄ້າມະນຸດ:** ບໍ່ໄດ້ມີການນຳສະເໜີຂໍ້ມູນແບບລົງເລິກ ວ່າການເຊື່ອມໂຍງລະຫວ່າງການກະທຳຜິດຂອງຜູ້ຖືກເຄາະຮ້າຍ ແລະ ການຖືກຄ້າມະນຸດຂອງເຂົາເຈົ້ານັ້ນ ມັນເກີດຂຶ້ນ ຫຼື ຕັດຂາດກັນແນວໃດ ຕໍ່ກັບຫຼັກການບໍ່ລົງໂທດໃນພາກປະຕິບັດຕົວຈິງ. ເຖິງວ່າຈະບໍ່ມີການກ່າວເຖິງຢ່າງຊັດເຈນ, ແຕ່ມີການອ້າງອີງເຖິງມາດຕາ 12 ຂອງ *ປະມວນກົດໝາຍອາຍາ,* ເຊິ່ງໄດ້ກຳນົດສິ່ງປະກອບຂອງການກະທຳຜິດທາງອາຍາ ໃນລາວ (ວັດຖຸກຳ, ພາວະວິໄສ, ອັດຕະວິໄສ ແລະ ເຈົ້າກຳ). ສັນນິຖານວ່າ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ກະທຳຜິດ ຈະພົ້ນຈາກການດຳເນີນຄະດີ ໃນກໍລະນີທີ່ ບໍ່ຄົບອົງປະກອບ ອັດຕະວິໄສ ດ້ວຍ 'ວິທີການ' ທີ່ຜູ້ຄ້າມະນຸດນຳໃຊ້. ເຖິງຢ່າງໃດກໍຕາມ, ບໍ່ມີການປຶກສາຫາລືກັນວ່າ ຂໍ້ກຳນົດການບໍ່ລົງໂທດ ທີ່ນຳໃຊ້ກັບຄວາມຜິດບາງປະເພດ (ສາເຫດ) ມີຄວາມສອດຄ່ອງກັບຂໍ້ກຳນົດທົ່ວໄປທີ່ກ່ຽວຂ້ອງກັບ *ປະມວນກົດໝາຍອາຍາ* ກ່ຽວກັບການບັງຄັບ ຫຼື ຂົ່ມຂູ່ (ບັງຄັບ) ແນວໃດ.

**ຂອບເຂດທີ່ຈຳກັດຂອງການປົກປ້ອງຫຼັກການບໍ່ລົງໂທດ ໃນກົດໝາຍລາວ:** ສັງເກດເຫັນວ່າກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ມີພຽງແຕ່ຄວາມຜິດສອງປະເພດເທົ່ານັ້ນ ທີ່ຈະບໍ່ຖືກລົງໂທດ, ບາງຄົນຮູ້ສຶກວ່າ ມັນຕ້ອງຂະຫຍາຍໃຫ້ຄອບຄຸມອາຊະຍາກຳອື່ນໆ ທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ອາດຈະກະທຳໃນເວລາທີ່ຖືກຄ້າມະນຸດ ເຊິ່ງສອດຄ່ອງກັບທ່າແຮງຂອງການຄ້າມະນຸດ. ຕົວຢ່າງ ການຂາຍຢາເສບຕິດ ການຕັດອະໄວຍະວະຂອງຮ່າງກາຍອອກ, ການບັງຄັບໃຫ້ເປັນຂໍທານ ຫຼື ການເປັນນັກສູ້ຕ່າງປະເທດ. ຜູ້ປະຕິບັດຕົວຈິງ ທ່ານໜຶ່ງໄດ້ກ່າວວ່າການປົກປ້ອງຄວນຈະຂະຫຍາຍ ເພື່ອໃຫ້ຄອບຄຸມເຖິງການກະທຳຜິດອື່ນໆ ທີ່ຜູ້ຖືກຄ້າມະນຸດ ອາດຈະກະທຳ ເຊິ່ງເປັນຜົນໄດ້ຮັບມາຈາກ 'ວິທີການ' ຕາມທີ່ກຳນົດໄວ້ໃນຄຳນິຍາມຂອງການຄ້າມະນຸດ ໃນກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ. ທ່ານອື່ນໆ ບໍ່ສະໜັບສະໜູນການຂະຫຍາຍຂອບເຂດການປົກປ້ອງ, ໂດຍສະແດງຄວາມເປັນກັງວົນວ່າ ຫຼັກການນີ້ ສາມາດນຳໄປໃຊ້ເປັນຜົນປະໂຫຍດ ເພື່ອຫຼີກລ້ຽງຄວາມຮັບຜິດຊອບທາງອາຍາ ແລະ ບໍ່ຄວນຈະປົກປ້ອງຜູ້ກະທຳຜິດເປັນອາຈິນ ຈາກການລົງໂທດ.

**ຄວາມຈຳເປັນ ສຳລັບຄຳແນະນຳທີ່ຈະອະທິບາຍຢ່າງລະອຽດ ໃນການນຳໃຊ້ຫຼັກການບໍ່ລົງໂທດ:** ຜູ້ຕອບໃຫ້ຂໍ້ສັງເກດວ່າ ບໍ່ມີເຄື່ອງມືສຳຮອງທີ່ຈະສະໜັບສະໜູນການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ທີ່ກຳນົດໄວ້ໃນກົດໝາຍຂອງລາວ. ບາງຄົນພິຈາລະນາວ່າ ຄຳແນະນຳທີ່ລະອຽດໃຫ້ກາຍເປັນສ່ວນໜຶ່ງທີ່ສຳຄັນຂອງຫຼັກການບໍ່ລົງໂທດ ແລະ ຫັນປ່ຽນຈາກຂອບເຂດລະດັບພາກພື້ນ ແລະ ສາກົນເຂົ້າມາສູ່ບໍລິບົດຂອງລາວ. ຜູ້ຕອບຈາກຝ່າຍລັດ ແລະ ບໍ່ແມ່ນຝ່າຍລັດ ຮຽກຮ້ອງໃຫ້ມີ ເຄື່ອງມື ແລະ ຄຳແນະນຳທີ່ລະອຽດສຳລັບຜູ້ປະຕິບັດຕົວຈິງໃນຂະແໜງຍຸຕິທຳທາງອາຍາ ເພື່ອໃຫ້ເຂົ້າໃຈບົດບາດຂອງຕົນ ເອງໃນການນຳໃຊ້ຫຼັກການບໍ່ລົງໂທດ ໃນກົດໝາຍທີ່ມີຢູ່. ມີການຍົກໃຫ້ເຫັນເຖິງ ຄວາມຈຳເປັນຂອງຄຳແນະນຳ ສຳລັບໄອຍະການ, ທະນາຍຄວາມຜູ້ປົກປ້ອງ, ທະນາຍຄວາມຊ່ວຍເຫຼືອທາງດ້ານກົດໝາຍ ແລະ ສະພາທະນາຍຄວາມ ແມ່ນຍົກໃຫ້ເຫັນຄວາມຈຳເປັນໃນການເອົາຫຼັກການບໍ່ລົງໂທດ ເປັນສ່ວນໜຶ່ງຂອງວິທີການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ເພື່ອຕ້ານການຄ້າມະນຸດ. ບໍ່ມີການກ່າວເຖິງຂໍ້ມູນແບບລົງເລິກ ກ່ຽວກັບບົດບາດຂອງຄຳແນະນຳຂອງອາຊຽນ ແລະ COMMIT ທີ່ມີຢູ່ ໃນການຈັດຕັ້ງປະຕິບັດຫຼັກການບບໍ່ລົງໂທດ.

**ທັດສະນະກ່ຽວກັບຄວນສະເໜີຄຳແນະນຳອັນໃດ ຕໍ່ກັບຫຼັກການບໍ່ລົງໂທດ:** ຜູ້ປະຕິບັດຕົວຈິງທ່ານໜຶ່ງ ໄດ້ສະເໜີວ່າ ຄຳແນະນຳຄວນຊີ້ແຈງວ່າຫຼັກການບໍ່ລົງໂທດ ຖືກນຳໃຊ້ນັບແຕ່ເວລາທີ່ບຸກຄົນດັ່ງກ່າວໄດ້ຖືກກຳນົດຕົວວ່າອາດຈະເປັນຜູ້ ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ຕໍ່ກັບຄວາມຜິດທີ່ກວ້າງຂວາງກວ່າ ທີ່ກຳນົດໄວ້ໃນຂໍ້ກຳນົດການບໍ່ລົງໂທດປັດຈຸບັນ. ທ່ານອື່ນໆ ກ່າວວ່າ ຄຳແນະນຳຄວນສອດຄ່ອງກັບວິທີການທີ່ແຕກຕ່າງກັນ ລະຫວ່າງກົດໝາຍສາກົນ ທີ່ກຳນົດຫຼັກການບໍ່ລົງໂທດຢ່າງກວ້າງຂວາງ ແລະ ກົດໝາຍຂອງລາວ ທີ່ກຳນົດການນຳໃຊ້ຫຼັກການບໍ່ລົງໂທດສະເພາະບາງອາຊະຍາກຳເທົ່ານັ້ນ. ຍັງມີການແນະນຳໃຫ້ມີການສ້າງຄຳແນະນຳ ທີ່ສະໜັບສະໜູນຄວາມ

ເຂົ້າໃຈຮ່ວມກັນລະຫວ່າງເຈົ້າໜ້າທີ່ ຕຳຫຼວດ, ໄອຍະການ ແລະ ສານກ່ຽວກັບວິທີການຈັດການສິ່ງທ້າທາຍຂອງການກະທຳຜິດຊ້ຳ ຂອງຜູ້ຖືກເຄາະຮ້າຍ. ມີການຕັ້ງຂໍ້ສັງເກດກ່ຽວກັບວ່າ ໃນສະຖານະການທີ່ຜູ້ຖືກເຄາະຮ້າຍ ສືບຕໍ່ຊອກຫາ/ຈັດຫາ ຜູ້ຖືກເຄາະຮ້າຍອື່ນໆ ເປັນຄຳຖາມວ່າ ຫຼັກການບໍ່ລົງໂທດນັ້ນ ຄວນສືບຕໍ່ນຳໃຊ້ຕໍ່ໄປຫຼື ບໍ່.

## ການນຳໃຊ້ຫຼັກການບໍ່ລົງໂທດ

**ການນຳໃຊ້ຫຼັກການບໍ່ລົງໂທດໃນອາຊະຍາກຳທີ່ຮ້າຍແຮງ:** ຜູ້ຕອບຝ່າຍລັດ ໄດ້ເນັ້ນໜັກຫຼາຍຄັ້ງວ່າ ບໍ່ມີກໍລະນີທີ່ຜູ້ຖືກ ເຄາະຮ້າຍຈາກການຄ້າມະນຸດ ຖືກລົງໂທດໃນລາວ. ມີການຍົກຕົວຢ່າງ ກໍລະນີທີ່ຜູ້ຖືກເຄາະຮ້າຍ ໄດ້ຈັດຫາ/ຊອກຫາ ຜູ້ຖືກເຄາະຮ້າຍຜູ້ອື່ນ ໃຫ້ກາຍມາເປັນຜູ້ຄ້າມະນຸດ ເຊິ່ງໃນກໍລະນີດັ່ງກ່າວນີ້ ສະຖານະຜູ້ຖືກເຄາະຮ້າຍຂອງເຂົາເຈົ້າ ຈະຖືວ່າກາຍມາເປັນສະຖານະຜູ້ກະທຳຜິດ. ມັນບໍ່ມີຄວາມຊັດເຈນວ່າ ຜູ້ຖືກເຄາະຮ້າຍ ສາມາດຖືກດຳເນີນຄະດີ ສຳລັບການກະທຳ ຜິດອື່ນໃນເວລາທີ່ຖືກຄ້າມະນຸດ. ບາງທ່ານຮູ້ສຶກວ່າ ແນວຄວາມຄິດທີ່ຈະບໍ່ຕັ້ງຂໍ້ຫາ ຄວາມຜິດທີ່ກ່ຽວຂ້ອງກັບຢາເສບຕິດ ຈະຖືກຕໍ່ຕ້ານ ແລະ ຜູ້ຖືກເຄາະຮ້າຍຈະຖືກປົກປ້ອງຈາກການລົງໂທດໃນ *ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ* ເຊິ່ງມີແນວໂນ້ມວ່າຈະຖືກດຳເນີນຄະດີສຳລັບຄວາມຜິດທີ່ກ່ຽວຂ້ອງກັບຢາເສບຕິດ. ຂໍ້ສັງເກດນີ້ ກ່າວເຖິງຄວາມຈຳເປັນ ທີ່ຕ້ອງມີຄວາມສອດຄ່ອງກັນ ຂອງຫຼັກການບໍ່ລົງໂທດໃນກົດໝາຍວ່າດ້ວຍການຄ້າມະນຸດ ແລະ ກົດໝາຍອື່ນໆ.[97]

**ບົດບາດຂອງຜູ້ປະຕິບັດຕົວຈິງໃນຂະແໜງຍຸຕິທຳທາງອາຍາ ໃນການປົກປ້ອງຜູ້ຖືກເຄາະຮ້າຍຈາກການລົງໂທດ:** ມີການອະທິບາຍວ່າຫຼັກການບໍ່ລົງໂທດ ອີງໃສ່ທັກສະຂອງເຈົ້າໜ້າທີ່ສືບສວນ-ສອບສວນໃນການຮວບຮວມຫຼັກການທີ່ສະແດງ ຕໍ່ໄອຍະການ ແລະ ໄອຍະການສະແດງຕໍ່ຜູ້ພິພາກສາວ່າຜູ້ຖືກເຄາະຮ້າຍຈາກການຄ້າມະນຸດບໍ່ຄວນຈະຖືກລົງໂທດ. ຖ້າຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄດ້ຄົ້ນພົບຕົນເອງຢູ່ຕໍ່ໜ້າສານ ກ່ຽວກັບຂໍ້ກ່າວຫາດັ່ງກ່າວ, ສານສາມາດສົ່ງຄະດີດັ່ງ ກ່າວກັບຄືນຫາໄອຍະການ ເພື່ອສອບສວນ-ສອບສວນເພີ່ມເຕີມ. ໄອຍະການ ສາມາດດຳເນີນການສືບສວນ-ສອບສວນ ຫຼື ສັ່ງໃຫ້ເຈົ້າໜ້າທີ່ຕຳຫຼວດດຳເນີນການສືບສວນ-ສອບສວນ ຜ່ານການສື່ສານຢ່າງເປັນລາຍລັກອັກສອນ. ຜູ້ພິພາກສາ ຍັງສາມາດມີໂອກາດນຳໃຊ້ມາດຕາ 6 ຂອງ *ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ* ທີ່ກຳນົດ 9 ສາເຫດທີ່ພາໃຫ້ຄະດີອາຍາຕົກໄປ. ຜູ້ເຂົ້າຮ່ວມຍັງກ່າວວ່າ ຄວາມຈຳເປັນໃນການຝຶກອົບຮົມ ບໍ່ສະເພາະແຕ່ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍເທົ່າ ນັ້ນ ແຕ່ຍັງລວມໄປເຖິງເຈົ້າໜ້າທີ່ຝ່າຍລັດອື່ນໆ, ນັກສັງຄົມສົງເຄາະ, ຜູ້ສະໜອງການບໍລິການ, ທະນາຍຄວາມ ແລະ ບຸກ ຄົນອື່ນໆທີ່ມີສ່ວນຮ່ວມໃນການປົກປ້ອງຜູ້ຖືກເຄາະຮ້າຍ ບໍ່ສະເພາະແຕ່ຂັ້ນສູນກາງ ແຕ່ຍັງລວມເອົາຂັ້ນແຂວງ ແລະ ຂັ້ນເມືອງດ້ວຍ.

**ບົດບາດຂອງທະນາຍຄວາມໃນການຍຶດໝັ້ນຫຼັກການບໍ່ລົງໂທດ:** ໄດ້ມີການເນັ້ນໜັກວ່າ ທະນາຍຄວາມຕ້ອງມີສ່ວນ ຮ່ວມໃນຂະບວນການຍຸຕິທຳທາງອາຍານັບແຕ່ເລີ່ມຕົ້ນ ເພື່ອຍຶດໝັ້ນ ແລະ ປົກປ້ອງຫຼັກການບໍ່ລົງໂທດ. ຕົວຢ່າງໃນກໍລະ ນີຂອງການຄ້າຢາເສບຕິດ ທີ່ຜູ້ຖືກຫາຕ້ອງປະເຊີນໜ້າກັບໂທດປະຫານຊີວິດ. ໃນກໍລະນີດັ່ງກ່າວນັ້ນ, ຍັງບໍ່ໄດ້ມີການຄົ້ນຄວ້າ ເພື່ອທີ່ຈະນຳໃຊ້ຫຼັກການບໍ່ລົງໂທດ, ເຊິ່ງເນັ້ນໜັກໃຫ້ເຫັນເຖິງຄວາມຈຳເປັນທີ່ຕ້ອງແຕ່ງຕັ້ງທະນາຍຄວາມ ແຕ່ເບື້ອງຕົ້ນ ໃນຂະບວນການດຳເນີນຄະດີທາງອາຍາ ແລະ ມີຄວາມເຂົ້າໃຈວິທີການທີ່ຈະນຳໃຊ້ຫຼັກການບໍ່ລົງໂທດ. ຜູ້ຕອບຝ່າຍລັດ ໄດ້ເນັ້ນໜັກເຖິງບົດບາດຂອງທະນາຍຄວາມ ໃນການຊ່ວຍເຫຼືອທັງຈຳເລີຍ ແລະ ຜູ້ຖືກເຄາະຮ້າຍ ທີ່ເປັນສ່ວນ ສຳຄັນໃນການຈັດຕັ້ງປະຕິບັດ ຫຼັກການບໍ່ລົງໂທດຢ່າງມີປະສິດທິພາບ. ພວກເຂົາ ຍັງຊີ້ໃຫ້ເຫັນເຖິງບົດບາດຂອງສະຫະ ພັນແມ່ຍິງລາວ ໃນການສະໜັບສະໜູນວິທີການທີ່ເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ໃນທົ່ວຂະບວນການດຳເນີນຄະດີ ທາງອາຍາ. ຜູ້ຕອບທີ່ບໍ່ແມ່ນຝ່າຍລັດ ກໍໄດ້ເນັ້ນໜັກເຖິງບົດບາດຂອງທະນາຍຄວາມ ໃນການສົ່ງເສີມວິທີການທີ່ເອົາຜູ້ ຖືກເຄາະຮ້າຍເປັນໃຈກາງ ແລະ ສົ່ງເສີມການນຳໃຊ້ຫຼັກການດັ່ງ

97 ຜູ້ເຂົ້າຮ່ວມບາງທ່ານ ໄດ້ເນັ້ນໜັກເຖິງຄຸນຄ່າໃນການເຂົ້າຮ່ວມກອງປະຊຸມໂຕະມົນ ເພື່ອສົ່ງເສີມຄວາມເຂົ້າໃຈຂອງເຂົາເຈົ້າຕໍ່ກັບຫຼັກການບໍ່ລົງໂທດ ແລະ ນຳເອົາຫຼັກການດັ່ງກ່າວເຂົ້າໃນວຽກງານຕ້ານການຄ້າມະນຸດ.

ກ່າວ ໂດຍບໍ່ຕ້ອງລໍຖ້າຄໍາສັ່ງຈາກຜູ້ຊີ້ນໍາ. ເຖິງຢ່າງໃດກໍຕາມ, ມັນຍັງມີສິ່ງທ້າທາຍໃນພາກປະຕິບັດຕົວຈິງ, ເຖິງວ່າຈະມີສິດໃນການເຂົ້າເຖິງການຊ່ວຍເຫຼືອທາງດ້ານກົດໝາຍ ມັນຍັງເຫັນໄດ້ຊັດເຈນວ່າບໍ່ມີທຶນຢ່າງພຽງພໍ ສໍາລັບວຽກງານຊ່ວຍເຫຼືອທາງດ້ານກົດໝາຍ ເພື່ອທີ່ຈະຊ່ວຍຜູ້ຖືກເຄາະຮ້າຍ-ຈໍາເລີຍ ໃນການເຂົ້າເຖິງໄດ້.[98]

## ສິ່ງທ້າທາຍໃນການຮ່ວມມືລະຫວ່າງປະເທດ

**ຄວາມສໍາຄັນຂອງການຮ່ວມມືສອງຝ່າຍ ໃນການຍຶດໝັ້ນຫຼັກການບໍ່ລົງໂທດ:** ຜູ້ຕອບໄດ້ອ້າງເຖິງການຮ່ວມມືສອງຝ່າຍ ທີ່ມີຄວາມຈໍາເປັນ ເພື່ອຮັບປະກັນວ່າບຸກຄົນທີ່ຖືກຄ້າມະນຸດຈາກປະເທດໜຶ່ງ ໄປອີກປະເທດໜຶ່ງ ແລະ ຖືກບັງຄັບໃຫ້ກະທໍາຜິດ (ຕົວຢ່າງ: ການລັກລອບຄ້າຂາຍຢາເສບຕິດ) ໄດ້ຖືກຮັບຮູ້ວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ຖືກປົກປ້ອງຈາກການລົງໂທດໃນເຂດອໍານາດສານທັງສອງປະເທດ. ໄດ້ເນັ້ນໜັກເຖິງຄວາມສໍາຄັນຂອງການກະກຽມການຮ່ວມມືສອງຝ່າຍລະຫວ່າງ ຕົວຢ່າງ ສປປ ລາວ ແລະ ໄທ, ຫວຽດນາມ ແລະ ຈີນ. ເຖິງຢ່າງໃດກໍຕາມ, ບໍ່ໄດ້ມີການປຶກສາຫາລືການຮ່ວມມືສອງຝ່າຍທີ່ມີຢູ່ແລ້ວ. ສປປ ລາວ ມີບົດບັນທຶກຄວາມເຂົ້າໃຈກ່ຽວກັບການຕ້ານການຄ້າມະນຸດກັບ ຫວຽດນາມ (2010), ຈີນ (2014) ແລະ ໄທ (2017) (ເບິ່ງຫ້ອງທີ 3 ຂ້າງເທິງ). MOU ສະບັບປີ 2010 ກັບຫວຽດນາມ ໄດ້ໃຫ້ຄໍາໝັ້ນໝາຍວ່າຄູ່ພາຄີຈະບໍ່ກັກຂັງ ແລະ/ຫຼື ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ 'ສໍາລັບການເຂົ້າ-ອອກເມືອງຢ່າງຜິດກົດໝາຍ ຫຼື ຄວາມຜິດໃດໜຶ່ງທີ່ກ່ຽວຂ້ອງກັບທາງບໍລິຫານ' (ມາດຕາ 4(1)(a)). MOU ສະບັບປີ 2014 ກັບຈີນ ໄດ້ກໍານົດວ່າຄູ່ພາຄີ 'ຈະບໍ່ລົງໂທດຜູ້ຖືກເຄາະຮ້າຍ ສໍາລັບການເຂົ້າ ຫຼື ອອກຈາກອານາເຂດຂອງຕົນເອງ ຫຼື ສໍາລັບຄວາມຜິດໃດໜຶ່ງທີ່ເກີດຂຶ້ນໂດຍກົງຈາກການຄ້າມະນຸດ' (ມາດຕາ 4(1)).[99] MOU ສະບັບປີ 2017 ກັບປະເທດໄທ ບໍ່ໄດ້ກໍານົດສະເພາະເຈາະຈົງຫຼັກການບໍ່ລົງໂທດ ແຕ່ໄດ້ກ່າວເຖິງຄວາມຍຸຕິທໍາ, ການປົກປ້ອງທາງກົດ ໝາຍ (ມາດຕາ 6) ແລະ ຄວາມຈໍາເປັນທີ່ຈະບໍ່ເຮັດໃຫ້ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຕົກເປັນຜູ້ຖືກເຄາະຮ້າຍເພີ່ມເຕີມອີກ ໃນການດໍາເນີນຄະດີທາງກົດໝາຍອີກ (ມາດຕາ 17).[100] ບໍ່ມີການປຶກສາຫາລືກ່ຽວກັບການນໍາໃຊ້ສັນຍາຮ່ວມມືສອງຝ່າຍນີ້ ຫຼື ການນໍາໃຊ້ຂໍ້ກໍານົດການບໍ່ລົງໂທດທີ່ມີຢູ່ໃນປັດຈຸບັນ ໃຫ້ສອດຄ່ອງກັບກົດໝາຍລາວຄືແນວໃດ. ໂດຍທົ່ວໄປແລ້ວໄດ້ແນະນໍາວ່າ MOU ແລະ ຂັ້ນຕອນການປະຕິບັດຕາມມາດຕະຖານ ຄວນຮັບປະກັນວ່າໜ່ວຍງານທີ່ຈັດຕັ້ງ ປະຕິບັດຂອງທັງສອງປະເທດ ມີຄວາມເຂົ້າໃຈທີ່ເປັນເອກະພາບກັນກ່ຽວກັບວິທີການກໍານົດຕົວ ແລະ ປົກປ້ອງຜູ້ຖືກເຄາະຮ້າຍຈາກການລົງໂທດ.

**ສິ່ງທ້າທາຍໃນການຮ່ວມມືລະຫວ່າງປະເທດໃນຂະແໜງຍຸຕິທໍາທາງອາຍາ:** ມີການລາຍງານກ່ຽວກັບສິ່ງທ້າທາຍໃນການ ຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍ ໃນກໍລະນີທີ່ກົດໝາຍພາຍໃນຂອງສອງປະເທດກ່ຽວກັບກັບຄະດີຄ້າມະ ນຸດຂ້າມຊາດ ບໍ່ສອດຄ່ອງກັນ ແລະ ຂໍ້ມູນຂອງບຸກຄົນທີ່ບໍ່ແມ່ນພົນລະເມືອງໃນລາວ ບໍ່ໄດ້ຮັບການແບ່ງປັນ. ການຮ່ວມ ມືເພື່ອກໍານົດຕົວ ແລະ ສົ່ງຜູ້ຖືກເຄາະຮ້າຍຄົນລາວ ກັບລາວ ກໍໄດ້ຮັບການລາຍງານວ່າມີການຂັດຂວາງເກີດຂຶ້ນ ເນື່ອງຈາກບໍ່ເຫັນດີກ່ຽວກັບສະຖານະຂອງບຸກຄົນທີ່ເປັນຜູ້ຖືກເຄາະຮ້າຍ. ໃນບາງກໍລະນີ, ຜູ້ຖືກເຄາະຮ້າຍອາດຈະໄດ້ກັບຄືນ ມາລາວ (ຕົວຢ່າງ ພາຍຫຼັງທີ່ຖືກຄ້າມະນຸດໄປຈີນ ດ້ວຍການບັງຄັບໃຫ້ແຕ່ງງານ) ໂດຍບໍ່ໄດ້ຖືກລົງໂທດ, ແຕ່ບໍ່ມີການພົວພັນກັນເພີ່ມເຕີມໃນການນໍາເອົາຕົວຜູ້ກະທໍາຜິດເຂົ້າສູ່ຂະບວນການຍຸຕິທໍາ. ໄດ້ມີຂໍ້ສະເໜີແນະນໍາຕໍ່ກະຊວງການຕ່າງປະເທດ ເຊິ່ງເປັນໜ່ວຍງານທີ່ພົວພັນກັບອາຊຽນ, ອົງການສະຫະປະຊາຊາດເພື່ອຕ້ານອາຊະຍາກໍາ ແລະ ຢາເສບຕິດ (UNODC) ແລະ ຜູ້ຊ່ຽວຊານ ໃຫ້ມີສ່ວນຮ່ວມຕໍ່ກັບຄວາມພະຍາຍາມໃນການສ້າງຄວາມເຂັ້ມແຂງການຮ່ວມມືລະ ຫວ່າງປະເທດ ເພື່ອຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ.

---

98 ໄດ້ມີການຕັ້ງຂໍ້ສັງເກດວ່າ ມາດຕາ 90 ແລະ 96 ຂອງ ລັດຖະທໍາມະນູນ ແລະ ມາດາ 19 ແລະ 21 ຂອງ *ກົດໝາຍວ່າດ້ວຍທະນາຍຄວາມ* ລວມທັງ ມາດຕາ 71 ຂອງ ກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ທີ່ໄດ້ກໍານົດສິໃນການມີຜູ້ຕາງໜ້າທາງດ້ານກົດ ໝາຍ

99 *ສັນຍາລະຫວ່າງລັດຖະບານຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານຂອງ ສາທາລະນະລັດ ປະຊາຊົນຈີນ ວ່າດ້ວຍການຮ່ວມມືໃນການປ້ອງກັນ ແລະ ຕ້ານການຄ້າມະນຸດ* (2014)

100 *ບົດບັນທຶກຄວາມເຂົ້າໃຈລະຫວ່າງລັດຖະບານຂອງຣາຊະອານາຈັກໄທ ແລະ ລັດຖະບານຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ວ່າດ້ວຍການຮ່ວມມື ເພື່ອຕ້ານການຄ້າມະນຸດ* (2017)

## ສິ່ງທ້າທາຍໃນການກຳນົດຕົວຜູ້ຖືກເຄາະຮ້າຍ

**ສິ່ງທ້າທາຍໃນການກຳນົດຕົວ ສົ່ງຜົນກະທົບຕໍ່ກັບການນຳໃຊ້ຫຼັກການບໍ່ລົງໂທດ:** ຜູ້ຕອບ ໄດ້ເນັ້ນໜັກວ່າ ການກຳນົດ ຕົວຜູ້ຖືກເຄາະຮ້າຍແມ່ນເປັນຈຸດເລີ່ມຕົ້ນຂອງການນຳໃຊ້ຫຼັກການບໍ່ລົງໂທດ, ເປັນການກຳນົດວ່າບຸກຄົນ ດັ່ງກ່າວ ຈະຖືກ ເບິ່ງເຫັນວ່າເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ກະທຳຜິດ. ຜູ້ຕອບບາງທ່ານຮູ້ສຶກວ່ານິຍາມຂອງການຄ້າ ມະນຸດ ພຽງພໍແລ້ວທີ່ຈະ ບັນລຸຜົນໃນການກຳນົດຕົວຜູ້ຖືກເຄາະຮ້າຍຢ່າງຖືກຕ້ອງ ແລະ ປົກປ້ອງເຂົາເຈົ້າຈາກການ ຖືກລົງໂທດ, ແຕ່ຜູ້ຕອບບາງທ່ານ ໄດ້ສະແດງຄວາມຄິດເຫັນໃນທາງກົງກັນຂ້າມ. ບົດບາດການຍິນຍອມຂອງຜູ້ຖືກ ເຄາະຮ້າຍ ຖືວ່າເປັນສິ່ງຂັດຂວາງ ໃນການກຳນົດຕົວ ແລະ ປົກປ້ອງເຂົາເຈົ້າຈາກການຖືກລົງໂທດ. ໄດ້ມີການແນະ ນຳວ່າພາກສ່ວນຕ່າງໆທີ່ກ່ຽວຂ້ອງ ນອກ ເໜືອຈາກເຈົ້າໜ້າທີ່ຕຳຫຼວດ ແລະ ສະຫະພັນແມ່ຍິງລາວແລ້ວ ກໍສາມາດມີ ສ່ວນຮ່ວມໄດ້ເຊັ່ນກັນ ເພື່ອນຳໃຊ້ວິທີການແບບຫຼາຍພາກສ່ວນ ໃນການກຳນົດຕົວຜູ້ຖືກເຄາະຮ້າຍ.

**'ການບຸກກວດຄົ້ນ' ເປັນອັນຕະລາຍຕໍ່ກັບການກຳນົດຕົວຜູ້ຖືກເຄາະຮ້າຍ:** ບົດລາຍງານການຄ້າມະນຸດຂອງ ສະຫະລັດອາເມລິກາ ປີ 2021 ໄດ້ລະບຸວ່າ ການນຳໃຊ້ການກຳນົດຕົວຜູ້ຖືກເຄາະຮ້າຍ ແລະ ຂະບວນການກັ່ນກອງ ຍັງບໍ່ສອດຄ່ອງ ແລະ ສະໝໍ່າສະເໝີກັນໃນລາວ, ສົ່ງຜົນໃຫ້ເຈົ້າໜ້າທີ່ຕຳຫຼວດລົງໂທດຜູ້ຖືກເຄາະຮ້າຍທີ່ບໍ່ໄດ້ຮັບການ ກຳນົດຕົວຈາກການລ່ວງລະເມີດທາງເພດ ທີ່ກ່ຽວຂ້ອງກັບການລະເມີດການຄ້າປະເວນີ ທີ່ຜູ້ຄ້າມະນຸດບັງຄັບໃຫ້ ພວກເຂົາກະທຳ. ໃນບໍລິບົດນີ້ ໄດ້ມີການສະເໜີແນະນຳໃຫ້ມີການກັ່ນກອງ ແລະ ກຳນົດຕົວຜູ້ທີ່ອາດຈະເປັນຜູ້ຖືກ ເຄາະຮ້າຍຢ່າງຕັ້ງໜ້າ, ລວມທັງ ຜູ້ທີ່ພົບເຫັນໃນເວລາ ທີ່ມີ 'ການບຸກກວດຄົ້ນ' ສະຖານທີ່ ທີ່ອຳນວຍຄວາມສະດວກ ໃຫ້ແກ່ການບໍລິການທາງເພດ ເພື່ອຈຸດປະສົງທາງການຄ້າ. ນອກນີ້ ຍັງມີການລະບຸອີກວ່າ ຜູ້ຖືກເຄາະຮ້າຍທີ່ເປັນ ເດັກນ້ອຍ ແລະ ຜູ້ໃຫຍ່ ອາດຈະຖືກຈັບຕົວ ສຳລັບຄວາມຜິດທີ່ກ່ຽວ ຂ້ອງກັບການຄ້າປະເວນີ ເນື່ອງຈາກເຈົ້າໜ້າທີ່ ບໍ່ສາມາດກຳນົດອາຍຸໄດ້.[101] ຜູ້ຕອບ ຍັງສະແດງຄວາມຄິດເຫັນອີກວ່າ ການກຳນົດຕົວຜູ້ຖືກເຄາະຮ້າຍ ສາມາດປັບປຸງ ໄດ້, ໂດຍສັງເກດເຫັນວ່າບາງຄັ້ງ ຜູ້ຖືກເຄາະຮ້າຍບາງຄົນ ຖືກກຳນົດຕົວຜິດພາດວ່າເປັນ 'ແຮງງານເຄື່ອນຍ້າຍທີ່ຜິດ ກົດໝາຍ' ໂດຍເຈົ້າໜ້າທີ່ຕຳຫຼວດ ແລະ ເຈົ້າໜ້າທີ່ກວດຄົນເຂົ້າ-ອອກເມືອງ. ຍັງມີບົດບາດຂອງການສໍ້ລາດບັງຫຼວງ ເຊິ່ງມີຄົນຖືກ 'ປັບໃໝ' ຫຼື ຖືກຂົ່ມຂູ່ວ່າຈະປັບໃໝ ຖ້າຫາກເດີນທາງໂດຍບໍ່ມີເອກະສານທີ່ຖືກຕ້ອງ ແທນທີ່ຈະຖືກ ກັ່ນກອງ ສຳລັບການຄ້າມະນຸດ.

**ການບໍ່ລົງໂທດ ສ້າງຄວາມເຂັ້ມແຂງໃຫ້ແກ່ການກຳນົດຕົວຜູ້ຖືກເຄາະຮ້າຍ:** ໜ່ວຍງານຂອງລັດໄດ້ຕັ້ງຂໍ້ ສັງເກດວ່າ ສິ່ງທ້າ ທາຍຫຼັກໃນການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດແມ່ນ ຜູ້ຖືກເຄາະຮ້າຍ ປິດບັງຂໍ້ມູນຈາກເຈົ້າ ໜ້າທີ່ຕຳຫຼວດ ເພື່ອປົກປ້ອງໝູ່ສະນິດ ແລະ ຄອບຄົວຂອງເຂົາເຈົ້າຈາກການດຳເນີນຄະດີ. ໜ່ວຍງານທີ່ບໍ່ແມ່ນລັດ ໄດ້ລາຍງານວ່າບາງຄັ້ງຜູ້ຖືກເຄາະຮ້າຍຮູ້ສຶກຢ້ານກົວທີ່ຈະຖືກຈັບຕົວ ແລະ ບໍ່ຂໍການຊ່ວຍເຫຼືອຈາກເຈົ້າໜ້າທີ່ຕຳ ຫຼວດ. ໄດ້ມີການໃຫ້ຂໍ້ສະເໜີແນະນຳ ເພື່ອໃຫ້ຜູ້ຖືກເຄາະຮ້າຍໄດ້ຮັບຂໍ້ມູນກ່ຽວກັບສິດຂອງເຂົາເຈົ້າ ລວມທັງ ການ ບໍ່ຖືກລົງໂທດ ສຳລັບຄວາມຜິດທີ່ພວກເຂົາໄດ້ເຮັດ ເຊິ່ງເປັນຜົນສະທ້ອນໂດຍກົງຈາກການຖືກຄ້າມະນຸດ, ສົ່ງເສີມ ພວກເຂົາໃຫ້ມີການສື່ສານກັບໜ່ວຍງານຂອງລັດ ແລະ ສົ່ງເສີມການກຳນົດຕົວຜູ້ຖືກເຄາະຮ້າຍ. ການສະໜອງການ ຊ່ວຍເຫຼືອທີ່ເໝາະສົມ ຍັງຈຳເປັນໃນຂັ້ນຕອນການກຳນົດຕົວ ລວມທັງ ການນຳໃຊ້ທີມສະຫະວິຊາຊີບ ທີ່ປະກອບ ດ້ວຍນັກສັງຄົມສົງເຄາະ, ຜູ້ສະໜອງການບໍລິການ, ທະນາຍຄວາມ, ຜູ້ພິພາກສາ ແລະ ໃນກໍລະນີທີ່ເໝາະສົມ ມີຜູ້ ປົກຄອງຂອງເດັກທີ່ຕ້ອງມີສ່ວນຮ່ວມນັບແຕ່ເລີ່ມຕົ້ນ.

101 ບົດລາຍງານການຄ້າມະນຸດ ປີ 2021: ລາວ (ກະຊວງການຕ່າງປະເທດສະຫະລັດອາເມລິກາ, 2021)

## ການລົງໂທດຜູ້ຖືກເຄາະຮ້າຍໃນພາກປະຕິບັດຕົວຈິງ

**ຜູ້ຖືກເຄາະຮ້າຍຖືກລົງໂທດໃນສະຖານການເຂົ້າ-ອອກເມືອງຜິດກົດໝາຍ:** ຜູ້ຕອບຝ່າຍລັດບາງຄົນໄດ້ກ່າວວ່າບໍ່ມີກໍລະນີ ໃດ ໃນ ສປປ ລາວ ທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຖືກລົງໂທດ ເຖິງແມ່ນວ່າຈະມີການສະແດງຄວາມຄິດເຫັນທີ່ ແຕກຕ່າງກັນໃນປະເດັນນີ້; ບາງທ່ານໄດ້ກ່າວວ່າ ເຖິງວ່າຜູ້ຖືກເຄາະຮ້າຍທີ່ໄດ້ຮັບການກຳນົດຕົວຢ່າງເປັນທາງການ ໃນຖານະຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ກໍອາດຈະຖືກດຳເນີນຄະດີໄດ້. ມີຄວາມກັງວົນເກີດຂຶ້ນວ່າຜູ້ປະຕິບັດຕົວຈິງ ໃນຂະແໜງຍຸຕິທຳທາງອາຍາ ອາດຈະຮັບຮູ້ກ່ຽວກັບຫຼັກການບໍ່ລົງໂທດ ສິ່ງຜົນເຮັດໃຫ້ຜູ້ຖືກເຄາະຮ້າຍຖືກດຳເນີນຄະດີ ເຖິງແມ່ນວ່າຄວາມຜິດທີ່ກ່ຽວຂ້ອງກັບການເຂົ້າ-ອອກເມືອງ ແລະ ການເປັນໂສເພນີ ໄດ້ກຳນົດໄວ້ຢ່າງຈະແຈ້ງໃນກົດ ໝາຍ. ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ຖືກສະກັດກັ້ນໃນເວລາເຄື່ອນຍ້າຍແຮງງານ ອາດຈະພົບກັບການຖືກຕັ້ງຂໍ້ ຫາໃນສະຖານການເຂົ້າ-ອອກເມືອງຢ່າງຜິດກົດໝາຍ, ໃນເວລາທີ່ພວກເຂົາຖືກພົບເຫັນໃນສະຖານທີ່ເຮັດວຽກ ກໍອາດຈະຖືກຈັບຕົວ ແລະ ດຳເນີນຄະດີໃນສະຖານການເຮັດວຽກໂດຍບໍ່ຖືກຕ້ອງຕາມກົດໝາຍ.

**ຜູ້ຖືກເຄາະຮ້າຍຖືກລົງໂທດໃນສະຖານການເປັນໂສເພນີ ແລະ ການໃຫ້ຖືກພາແທນ:** ຜູ້ຖືກເຄາະຮ້າຍຈາກການຄ້າມະ ນຸດທີ່ຖືກລ່ວງລະເມີດທາງເພດ ມີຄວາມສ່ຽງສະເພາະທີ່ຈະຖືກດຳເນີນຄະດີສຳລັບຄວາມຜິດທີ່ກ່ຽວຂ້ອງກັບການເປັນໂສ ເພນີ. ຄຸນສົມບັດ-ສິນທຳຂອງພາກສ່ວນທີ່ກ່ຽວຂ້ອງ ທີ່ພົບເຫັນບຸກຄົນດັ່ງກ່າວນັ້ນສັງເກດເຫັນວ່າເປັນປັດໄຈໃນການກຳນົດວ່າບຸກຄົນດັ່ງກ່າວເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ກະທຳຜິດ. ການຈຳແນກພື້ນຖານທາງເພດ ຫຼື ບົດບາດດ້ານເພດຍິງ-ຊາຍ ບໍ່ໄດ້ຮັບການພິຈາລະນາວ່າເປັນບັນຫາຢູ່ໃນ ສປປ ລາວ ແຕ່ກໍມີຄວາມກັງວົນວ່າເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ອາດຈະມີອັກຄະຕິຕໍ່ກັບບຸກຄົນທີ່ເຮັດວຽກໃນອຸດສາຫະກຳການບໍລິການທາງເພດ, ເນື່ອງຈາກວ່າຍັງຍຶດຕິດກັບແນວຄິດດັ້ງ ເດີມ ແລະ ບັນຖັດຖານຂອງສັງຄົມ. ອັກຄະຕິດັ່ງກ່າວສິ່ງຜົນເຮັດໃຫ້ບໍ່ສາມາດກຳນົດຕົວຜູ້ຖືກເຄາະຮ້າຍໄດ້ຢ່າງມີປະ ສິດທິພາບ ເຊິ່ງຕໍ່ມາອາດຈະມີຄວາມສ່ຽງທີ່ຈະຖືກດຳເນີນຄະດີສຳລັບຄວາມຜິດທີ່ກ່ຽວຂ້ອງກັບການເປັນໂສເພນີ. ການຄ້າແມ່ຍິງ ເພື່ອໃຫ້ຖືກພາແທນ ຍັງເຮັດໃຫ້ມີຄຳຖາມເກີດຂຶ້ນກ່ຽວຂ້ອງກັບຫຼັກການບໍ່ລົງໂທດ.

**ຜູ້ຖືກເຄາະຮ້າຍຖືກລົງໂທດໃນສະຖານການເຂົ້າ-ອອກເມືອງຢ່າງຜິດກົດໝາຍ:** ຜູ້ເຂົ້າຮ່ວມຊີ້ໃຫ້ເຫັນວ່າສິ່ງທ້າທາຍ ທີ່ຜູ້ຖືກເຄາະຮ້າຍ ຖືກສະກັດກັ້ນຢູ່ທີ່ຊາຍແດນ ກ່ອນທີ່ພວກເຂົາຈະໄປຮອດປະເທດປາຍທາງ ເຊິ່ງບໍ່ໄດ້ຮັບການກຳນົດຕົວວ່າເປັນຜູ້ຖືກເຄາະຮ້າຍ ແຕ່ອາດຈະຖືກຜັກດັນໃຫ້ກັບ ຫຼື ເນລະເທດກັບຈາກປະເທດ ໂດຍບໍ່ໄດ້ຮັບການກຳນົດຕົວ, ສິ່ງຜົນເຮັດໃຫ້ມີຄວາມສ່ຽງທີ່ຈະຖືກລົງໂທດ ສຳລັບການເຂົ້າ-ອອກເມືອງຢ່າງຜິດກົດໝາຍ ຫຼື ອາຊະຍາກຳອື່ນ. ຜູ້ຖືກເຄາະຮ້າຍ ບາງຄົນທີ່ໄດ້ກັບລາວ ໄດ້ຖືກກັ່ນກອງໂດຍຜ່ານຂັ້ນຕອນການກຳນົດຕົວ ແຕ່ກໍ່ມີລາຍງານວ່າ ບາງຄົນບໍ່ໄດ້ຮັບການກັ່ນກອງ ເນື່ອງຈາກວ່າບໍ່ມີກົນໄກການກັ່ນກອງທີ່ເປັນຮູບປະທຳ ສຳລັບຜູ້ທີ່ກັບຄືນມາປະເທດ. ຄວາມສະຫຼັບສັບຊ້ອນຂອງສະຖານະການເຫຼົ່ານີ້ ມີຄຳຖາມເກີດຂຶ້ນທັນທີວ່າຈະນຳໃຊ້ຫຼັກການບໍ່ລົງໂທດແນວໃດ ໃນກໍລະນີທີ່ຜູ້ຖືກເຄາະຮ້າຍຖືກສົ່ງກັບ ຫຼື ເນລະເທດກັບ, ເຂດອຳນາດສານໃດທີ່ນຳໃຊ້ໃນກໍລະນີຂ້າມຊາຍແດນ ແລະ ບົດບາດຂອງບົດບັນທຶກຄວາມເຂົ້າໃຈສອງຝ່າຍໃນກໍລະນີດັ່ງກ່າວ.

**ການດຳເນີນຄະດີຜູ້ຖືກເຄາະຮ້າຍຄົນລາວຢູ່ຕ່າງປະເທດ:** ຜູ້ຕອບບາງທ່ານ ໄດ້ກ່າວວ່າມີຜູ້ຖືກເຄາະຮ້າຍຈາກການຄ້າມະ ນຸດທີ່ເປັນຄົນລາວ ໄດ້ຖືກດຳເນີນຄະດີໃນສະຖານການເປັນແຮງງານເຄື່ອນຍ້າຍທີ່ຜິດກົດໝາຍຢູ່ຕ່າງປະເທດ. ມີກໍລະນີສະເພາະ ທີ່ພົນລະເມືອງລາວຖືກຄ້າມະນຸດເພື່ອໃຫ້ແຕ່ງງານ ເຊິ່ງເປັນກໍລະນີທີ່ຜູ້ຖືກເຄາະຮ້າຍ ໄດ້ເຂົ້າເມືອງ ຫຼື ອາໄສຢູ່ເກີນກຳນົດໃນປະເທດປາຍທາງຢ່າງຜິດກົດໝາຍ ເຊິ່ງມີຄວາມສ່ຽງທີ່ຈະຖືກດຳເນີນຄະດີ. ໃນກໍລະນີດັ່ງກ່າວ, ລາວໄດ້ມີການລາຍງານວ່າ ຜູ້ທີ່ກັບປະເທດ ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເຖິງແມ່ນວ່າພວກເຂົາຖືກພິຈາລະນາວ່າເປັນ ແຮງງານເຄື່ອນຍ້າຍທີ່ຜິດກົດໝາຍໃນຕ່າງປະເທດ. ຕົວຢ່າງຜູ້ຖືກເຄາະຮ້າຍທີ່ຖືກຕັ້ງຂໍ້ຫາສຳລັບອາຊະຍາກຳທີ່ຮ້າຍແຮງກວ່ານັ້ນ ລວມທັງ ການຄາດຕະກຳຢູ່ເທິງເຮືອ, ການຕັດອະໄວຍະວະຂອງຮ່າງກາຍ, ການຄ້າປະເວນີ ແລະ ການໃຫ້ຖືພາແທນ. ມີການລາຍງານວ່າຜູ້ກະທຳຜິດໃນຄະດີເຫຼົ່ານີ້ ບໍ່ໄດ້ຖືກດຳເນີນຄະດີພາຍຫຼັງກັບຄືນມາລາວ ເພາະວ່າພວກເຂົາໄດ້ຮັບການກຳນົດຕົວວ່າເປັນຜູ້ຖືກເຄາະຮ້າຍ. ຄວາມເຂົ້າໃຈທີ່ເປັນເອກະພາບກັນ ໃນເວລາທີ່ບຸກຄົນໃດໜຶ່ງເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເຊິ່ງຊີ້ໃຫ້ເຫັນວ່າເປັນຫົວໃຈ

ສຳຄັນໃນການສະໜັບສະໜູນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຂ້າມຊາດ.

**ຄວາມສ່ຽງໃນການລົງໂທດຜູ້ຖືກເຄາະຮ້າຍທີ່ເປັນເດັກ:** ຜູ້ປະຕິບັດຕົວຈິງບາງທ່ານ ຊີ້ໃຫ້ເຫັນເຖິງຄວາມສ່ຽງຂອງການລົງໂທດທີ່ເດັກຕ້ອງປະເຊີນໜ້າ ລວມທັງ ການມີສ່ວນຮ່ວມພົວພັນໃນຄະດີທີ່ສັບສົນ ຂອງການຄ້າຢາເສບຕິດ. ໃນກໍລະ ນີດັ່ງກ່າວ, ຜູ້ຄ້າມະນຸດ ເປັນຜູ້ທີ່ມີອຳນາດ ທີ່ທ້າທາຍຕໍ່ກັບເຈົ້າໜ້າທີ່ໃນການສືບສວນ-ສອບສວນ. ປະເດັນນີ້ສະແດງໃຫ້ ເຫັນວ່າບຸກຄົນດັ່ງກ່າວ ຈະຖືກກຳນົດວ່າມີອາຍຸຕ່ຳກວ່າ ຫຼື ສູງກວ່າ 18 ປີ ຫຼື ບໍ່ ແລະ ອາດຈະສົ່ງຜົນຕໍ່ມາວ່າພວກເຂົາຈະໄດ້ຮັບການກຳນົດຕົວວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຫຼື ບໍ່ ແລະ ມີຜົນຕາມມາວ່າພວກເຂົາຈະຖືກລົງໂທດ ຫຼື ບໍ່. ຄວາມສຳຄັນໃນການນຳໃຊ້ການສັນນິຖານວ່າເປັນເດັກ ໄດ້ຖືກເນັ້ນໜັກ ໃນກໍລະນີທີ່ບໍ່ສາມາດຢືນຢັນອາຍຸໄດ້.

## 2.5. ມາເລເຊຍ

ເຈົ້າໜ້າທີ່ຂອງມາເລເຊຍ ເລືອກທີ່ຈະບໍ່ເຂົ້າຮ່ວມກອງປະຊຸມປຶກສາຫາລືແບບໂຕະມົນ ສຳລັບຈຸດປະສົງຂອງການຄົ້ນຄວ້ານີ້, ໝາຍຄວາມວ່າ ຂໍ້ມູນກ່ຽວກັບການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ສາມາດໄດ້ຮັບມາຈາກແຫຼ່ງຂໍ້ມູນແບບເປີດກວ້າງ ແລະ ຂໍ້ມູນແບບລົງເລິກຈາກຊ່ຽວຊານເທົ່ານັ້ນ.

**ຂໍ້ກຳນົດຫຼັກການບໍ່ລົງໂທດທີ່ຊັດເຈນໃນກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ພາຍໃນປະເທດ:** ພາກທີ 25 ຂອງ *ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ແລະ ການລັກລອບເຂົ້າ-ອອກເມືອງ* (2007) ໄດ້ກຳນົດວ່າຜູ້ຖືກຄ້າມະນຸດ ຈະບໍ່ມີຄວາມຮັບຜິດຊອບ ໃນການດຳເນີນຄະດີອາຍາ ທີ່ກ່ຽວຂ້ອງກັບການເຂົ້າອອກ-ເມືອງຢ່າງຜິດກົດໝາຍ, ການອາໄສຢູ່ໃນປະເທດຢ່າງຜິດກົດໝາຍ, ການຈັດຫາ ຫຼື ຄອບຄອງເອກະສານເດີນທາງປອມ ຫຼື ເອກະສານລະບຸຕົວຕົນປອມ ເພື່ອເຂົ້າມາປະເທດ ເຊິ່ງການກະທຳດັ່ງກ່າວ ເປັນຜົນສະທ້ອນໂດຍກົງມາຈາກການຖືກຄ້າມະນຸດ.

> *ພາກທີ 25. ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈະບໍ່ມີຄວາມຮັບຜິດຊອບໃນການຖືກດຳເນີນຄະດີອາຍາ ຖ້າຫາກວ່າ—*
>
> *(a) ການເຂົ້າປະເທດຜູ້ຮັບ ແລະ ປະເທດທາງຜ່ານໂດຍຜິດກົດໝາຍ;*
>
> *(b) ໄລຍະເວລາທີ່ອາໄສຢູ່ປະເທດຜູ້ຮັບ ຫຼື ປະເທດທາງຜານໂດຍບໍ່ຖືກຕ້ອງຕາມກົດໝາຍ; ຫຼື*
>
> *(c) ການຈັດຫາ ຫຼື ການຄອບຄອງເອກະສານໂດຍບໍ່ຖືກຕ້ອງຕາມກົດໝາຍ ຫຼື ເອກະສານລະບຸຕົວຕົນ ທີ່ພວກເຂົາໄດ້ຮັບ ຫຼື ທີ່ພວກເຂົາໄດ້ຮັບການສະໜອງໃຫ້, ເພື່ອຈຸດປະສົງຂອງການເຂົ້າປະເທດຜູ້ຮັບ ຫຼື ປະເທດທາງຜ່ານ ເຊິ່ງວ່າກໍລະນີດັ່ງກ່າວເປັນຜົນສະທ້ອນໂດຍກົງຈາກການກະທຳຂອງການຄ້າມະນຸດ ທີ່ຖືກກ່າວຫາວ່າ ໄດ້ກະທຳ ຫຼື ໄດ້ຖືກກະທຳ.*

ມາດຕານີ້ ບໍ່ໄດ້ປ້ອງກັນຈາກການຖືກເປັນຄະດີອາຍາ ສຳລັບຄວາມຜິດທັງໝົດທີ່ກະທຳໂດຍຜູ້ຖືກເຄາະຮ້າຍ ທີ່ເປັນຜົນສະທ້ອນໂດຍກົງຈາກການຖືກຄ້າມະນຸດ.[102] ມັນບໍ່ມີຄວາມຊັດເຈນວ່າເຈົ້າໜ້າທີ່ມາເລເຊຍ ໄດ້ນຳໃຊ້ຫຼັກການບໍ່ລົງໂທດ ຫຼື ກົດໝາຍທີ່ກ່ຽວຂ້ອງ ຫຼື ບໍ່ ຫຼື ແນວໃດ ເພື່ອປົກປ້ອງຜູ້ຖືກເຄາະຮ້າຍຈາກການດຳເນີນຄະດີອາຍາໃນພາກປະຕິບັດຕົວຈິງ.

---

102 ມາດຕາ 44(1) *ຂອງກົດໝາຍມາເລເຊຍ ເພື່ອຕ້ານການຄ້າມະນຸດ ແລະ ການການລັກລອບຂອງແຮງງານເຄື່ອນຍ້າຍ 2007* ອະນຸຍາດໃຫ້ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃຫ້ຢູ່ໃນ ການຄຸ້ມຄອງຊົ່ວຄາວ ໃນໄລຍະການສືບສວນ-ສອບສວນ.

**ຂໍ້ກຳນົດທີ່ກ່ຽວຂ້ອງໃນປະມວນກົດໝາຍອາຍາ:** ຂໍ້ຍົກເວັ້ນທົ່ວໄປທີ່ກຳນົດໃນ *ປະມວນກົດໝາຍອາຍາ* ອາດສະເໜີທາງເລືອກສຳລັບຄວາມຮັບຜິດຊອບສຳລັບຄວາມຜິດອື່ນ ລວມທັງ ໂດຍຜ່ານພາກທີ 94 ເຊິ່ງກຳນົດຂໍ້ຍົກເວັ້ນທົ່ວໄປ ໃນກໍລະນີທີ່ບຸກຄົນຖືກບັງຄັບດ້ວຍການຂົ່ມຂູ່:

> *ການກະທຳ ທີ່ບຸກຄົນຖືກບັງຄັບດ້ວຍການຂົ່ມຂູ່*
>
> *94. ຍົກເວັ້ນການຄາດຕະກຳ, ຄວາມຜິດທີ່ລວມຢູ່ໃນພາກທີ VI ການລົງໂທດປະຫານຊີວິດ ແລະ ຄວາມຜິດທີ່ລວມໃນພາກທີ VIA ບໍ່ມີສິ່ງໃດທີ່ເປັນຄວາມຜິດ ຊຶ່ງກະທຳໂດຍບຸກຄົນທີ່ຖືກບັງຄັບໃຫ້ກະທຳດ້ວຍການຂົ່ມຂູ່ ໂດຍວ່າໃນເວລາກະທຳນັ້ນ, ເປັນສາເຫດທີ່ສົມເຫດສົມຜົນ ທີ່ຢ້ານກົວ ທີ່ຈະກໍ່ໃຫ້ເກີດຄວາມຕາຍໃນທັນທີ ຕໍ່ກັບບຸກຄົນດັ່ງກ່າວ ເຊິ່ງຈະເປັນຜົນຕາມມາ:*
>
> *ໂດຍວ່າບຸກຄົນທີ່ກະທຳນັ້ນ ບໍ່ໄດ້ກະທຳຕາມຄວາມຍິນຍອມຂອງຕົນ ຫຼື ຈາກຄວາມຢ້ານກົວທີ່ສົມເຫດສົມຜົນຕໍ່ກັບໄພອັນຕະລາຍທີ່ຈະກໍ່ໃຫ້ເກີດຄວາມຕາຍແກ່ຕົນທັນທີ, ເຮັດໃຫ້ບຸກຄົນດັ່ງກ່າວ ຕົກຢູ່ໃນສະຖານະການ ຢູ່ພາຍໃຕ້ການບັງຄັບນັ້ນ.*[103]

**ຫຼັກການບໍ່ລົງໂທດ ຢູ່ໃນເອກະສານດ້ານນະໂຍບາຍ:** ບໍ່ມີຄຳແນະນຳດ້ານນະໂຍບາຍທີ່ຊັດເຈນ ເພື່ອໃຫ້ເກີດຜົນຕໍ່ກັບຫຼັກການບໍ່ລົງໂທດ. ໃນລະດັບທົ່ວໄປ, *ແຜນປະຕິບັດງານແຫ່ງຊາດເພື່ອຕ້ານການຄ້າມະນຸດ* 2016-2020 ຢືນຢັນຄຳ ໝັ້ນໝາຍວິທີການທີ່ເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ແລະ ອີງໃສ່ສິດທິມະນຸດ ໃນການປະຕິບັດຕໍ່ຜູ້ຖືກຄ້າມະນຸດ. *ແຜນປະຕິບັດງານແຫ່ງຊາດເພື່ອຕ້ານການຄ້າມະນຸດ* ຂອງມາເລເຊຍ ປີ 2021-2025 ບໍ່ໄດ້ມີການອ້າງອີງຢ່າງຊັດເຈນກ່ຽວ ກັບການບໍ່ລົງໂທດ ແຕ່ໄດ້ເນັ້ນໜັກເຖິງສິດທິມະນຸດ ແລະ ວິທີການທີ່ຕອບສະໜອງບົດບາດດ້ານເພດຍິງ-ຊາຍ ໂດຍສອດຄ່ອງກັບມາດຕະຖານສິດທິມະນຸດສາກົນ ໃນການສົ່ງເສີມ ແລະ ປົກປ້ອງສິດທິມະນຸດໂດຍສະເພາະຜູ້ຖືກເຄາະຮ້າຍ. ໃນບໍລິບົດນີ້, ໄດ້ກ່າວເຖິງຫຼັກການ ການບໍ່ຈຳແນກໂດຍສະເພາະ ບົນພື້ນຖານໃດໜຶ່ງ ລວມທັງ ສະຖານະການເຂົ້າ-ອອກເມືອງ ຫຼື ສະຖານະອື່ນໆ.[104] NAP ຍັງໄດ້ເນັ້ນໜັກເຖິງຄຳໝັ້ນໝາຍຂອງມາເລເຊຍ ຕໍ່ກັບສົນທິສັນຍາ ACTIP ທີ່ມີຜົນບັງຄັບໃຊ້ໃນປີ 2017.

**ຫຼັກການບໍ່ລົງໂທດ ຖືກຮັບຮູ້ໃນການຝຶກອົບຮົມ:** ໃນປີ 2021, ອົງການ ILO ໂດຍການຮ່ວມມືກັບສຳນັກງານຍຸດທະ ສາດແຫ່ງຊາດ ເພື່ອຕ້ານການຄ້າມະນຸດ ແລະ ການລັກລອບເຂົ້າ-ອອກເມືອງ (NSO MAPO) ໄດ້ເຜີຍແຜ່ຄູ່ມືການຝຶກ ອົບຮົມສຳລັບມາເລເຊຍ ໂດຍເນັ້ນໜັກຄວາມຈຳເປັນທີ່ຈະບໍ່ປະຕິບັດຕໍ່ກັບຜູ້ຖືກເຄາະຮ້າຍ ໃນຖານະຜູ້ກະທຳຜິດ.

> *ໃນເວລາເຮັດວຽກກັບຜູ້ຖືກເຄາະຮ້າຍຈາກການບັງຄັບໃຊ້ແຮງງານ ແລະ ການຄ້າມະນຸດ, ສິ່ງໜຶ່ງທີ່ຕ້ອງຄຳນຶງຕະຫຼອດເວລາວ່າ ບຸກຄົນເຫຼົ່ານີ້ເປັນຜູ້ຖືກເຄາະຮ້າຍຈາກອາຊະຍາກຳ, ພວກເຂົາບໍ່ແມ່ນອາຊະຍາກອນເອງ ເຖິງວ່າພວກເຂົາຈະກະທຳຄວາມຜິດ ເຊັ່ນ ການເຂົ້າເມືອງຢ່າງຜິດກົດໝາຍ ຫຼື ອາດຈະບໍ່ມີເອກະສານທີ່ຈຳເປັນໃນການເຂົ້າປະເທດ. ສິ່ງນີ້ອາດເປັນສະຖານະການທີ່ທ້າທາຍ ເນື່ອງຈາກເຈົ້າໜ້າທີ່ຂອງໜ່ວຍງານບັງຄັບໃຊ້ກົດໝາຍ ອາດຈະມີບູລິມະສິດທີ່ແຕກຕ່າງກັນ ຕົວຢ່າງ: ເນື່ອງຈາກຕົວຊີ້ວັດການປະຕິບັດງານທີ່ສຳຄັນ ຫຼື ການດຳເນີນການກວດຄົ້ນ, ພວກເຂົາຈຳເປັນຕ້ອງ*

---

103 ໝາຍເຫດຕໍ່ກັບຄຳອະທິບາຍ ຕໍ່ກັບຂໍ້ກຳນົດນີ້ ຄືກັບກັບທີ່ສະເໜີໃນພາກທີ 94 ຂອງກົດໝາຍອາຍາສິງກະໂປ (ເບິ່ງ 2.8 ທາງລຸ່ມນີ້).
104 ແຜນປະຕິບັດງານແຫ່ງຊາດເພື່ອຕ້ານການຄ້າມະນຸດ (ມາເລເຊຍ, 2021) 4.2.3. ໜ້າທີ 18.

> *ດຳເນີນການຕໍ່ກັບຜູ້ຖືກເຄາະຮ້າຍທີ່ເຂົ້າປະເທດຜິດກົດໝາຍ ແລະ ອື່ນໆ. ວິທີການທີ່ເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ທີ່ເຮັດໃຫ້ຜູ້ຖືກເຄາະຮ້າຍແຕ່ເບື້ອງຕົ້ນ ແລະ ສຸມໃສ່ຄວາມຈຳເປັນ ແລະ ສິດຂອງຜູ້ຖືກເຄາະຮ້າຍຈາກການບັງຄັບໃຊ້ແຮງງານ ແລະ ການຄ້າມະນຸດ.[…]* [105]

**ບົດບາດຂອງການບັງຄັບໃຊ້ກົດໝາຍໃນການຍຶດໝັ້ນຫຼັກການບໍ່ລົງໂທດ:** ບົດລາຍງານການຄ້າມະນຸດຂອງກະຊວງການຕ່າງປະເທດ ສະຫະລັດອາເມລິກາ ປີ 2020 ໄດ້ເຊື່ອມໂຍງການລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດກັບການຂາດການສືບສວນ-ສອບສວນຄະດີຄ້າມະນຸດຢ່າງຕັ້ງໜ້າ, ເຊິ່ງສັງເກດເຫັນວ່າຜູ້ຖືກເຄາະຮ້າຍອາດຈະຖືກອ້າງວ່າລະເມີດການເຂົ້າ-ອອກເມືອງ ຫຼາຍກ່າທີ່ຈະມີການສືບສວນ-ສອບສວນຕໍ່ກັບຜູ້ຄ້າມະນຸດ ສິ່ງຜົນເຮັດໃຫ້ໜ່ວຍງານຕ່າງໆຂອງອົງການຈັດຕັ້ງທາງສັງຄົມ ບໍ່ເຕັມໃຈທີ່ຈະລາຍງານການຄ້າມະນຸດໃຫ້ແກ່ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ຫຼາຍຂຶ້ນ.[106]

**ສິ່ງທ້າທາຍໃນການກຳນົດຕົວ ແລະ ການບຸກກວດຄົ້ນ ສົ່ງຜົນໃຫ້ມີການລົງໂທດຜູ້ຖືກເຄາະຮ້າຍ:** ຂັ້ນຕອນການປະຕິບັດຕາມມາດຕະຖານ (SOP) ໄດ້ຮັບການພັດທະນາໂດຍສະພາ ເພື່ອຕ້ານການຄ້າມະນຸດ ແລະ ການລັກລອບເຂົ້າ-ອອກເມືອງ (MAPO) ເພື່ອສະໜັບສະໜູນໃຫ້ແກ່ການກຳນົດຕົວຜູ້ຖືກເຄາະຮ້າຍ. ເຖິງຢ່າງໃດກໍຕາມ, ບົດລາຍງານການຄ້າມະນຸດຂອງກະຊວງການຕ່າງປະເທດສະຫະລັດອາເມລິກາ ປີ 2021 ໄດ້ກ່າວວ່າລັດຖະບານສືບຕໍ່ຄາດຫວັງໃຫ້ຜູ້ຖືກເຄາະຮ້າຍ ໃນການກຳນົດຕົວເອງ ແລະ ບໍ່ນຳໃຊ້ມາດຕະຖານ SOP ເພື່ອເປັນການກຳນົດຕົວຜູ້ຖືກເຄາະຮ້າຍຢ່າງຕັ້ງໜ້າ ໃນເວລາທີ່ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ 'ບຸກກວດຄົ້ນ' ພົນລະເມືອງທີ່ມີຄວາມສ່ຽງ ເຊິ່ງບໍ່ໄດ້ເອື້ອອຳນວຍໃຫ້ຜູ້ຖືກເຄາະຮ້າຍໄດ້ເວົ້າຕໍ່ກັບເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ຫຼື ການກຳນົດຕົວຂອງເຂົາເຈົ້າ, ສິ່ງຜົນເຮັດໃຫ້ມີການລົງໂທດຜູ້ຖືກເຄາະຮ້າຍຢ່າງຕໍ່ເນື່ອງສຳລັບການລະເມີດການເຂົ້າ-ອອກເມືອງ ແລະ ການເປັນໂສເພນີ.[107] ຄວາມກັງວົນອັນດຽວກັບກ່ຽວກັບການ 'ບຸກກວດຄົ້ນ' ຢ່າງບໍ່ມີປະສິດທິພາບ ໃນການກຳນົດຕົວ ແລະ ຄວາມສ່ຽງທີ່ຜູ້ຖືກເຄາະຮ້າຍຈະຖືກປະຕິບັດຄືກັບອາຊະຍາກອນ ກໍໄດ້ມີການລາຍງານໃນບົດລາຍງານການຄ້າມະນຸດຂອງສະຫະລັດອາເມລິກາ ປີ 2020.[108] ຄວາມເປັນກັງວົນກ່ຽວກັບວ່າ ບໍ່ມີຄວາມເອົາໃຈໃສ່ຢ່າງພຽງພໍຕໍ່ກັບການກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ສຳລັບການບັງຄັບໃຊ້ແຮງງານ ເຖິງວ່າຈະເປັນບັນຫາການຄ້າມະນຸດທີ່ເກີດຂຶ້ນຫຼາຍກວ່າການຄ້າມະນຸດ ເພື່ອການລ່ວງລະເມີດທາງເພດໃນມາເລເຊຍ.[109] ມາເລເຊຍ ບໍ່ສາມາດກຳນົດຕົວຜູ້ທີ່ຖືກຫຼອກໃຫ້ຂົນຢາເສບຕິດ ໃນຖານະຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໄດ້, ສິ່ງຜົນເຮັດໃຫ້ພວກເຂົາຖືກດຳເນີນຄະດີໃນຄວາມຜິດກ່ຽວກັບຢາເສບຕິດ ແທນທີ່ ຈະໄດ້ຮັບການປົກປ້ອງໃນຖານະຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ຕົວຢ່າງ, ມີການລາຍງານວ່າ ມີແມ່ຍິງຈາກຈີນແຜ່ນດິນໃຫຍ່ ໄດ້ຖືກຫຼອກໃຫ້ຄ້າຢາເສບຕິດມາປະເທດມາເລເຊຍ. ໃນທຸກກໍລະນີເຫຼົ່ານີ້, ກຸ່ມຄົນນີ້ບໍ່ໄດ້ຮັບການກຳນົດຕົວວ່າອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ແຕ່ພວກເຂົາຖືກດຳເນີນຄະດີໃນສະຖານການຄ້າຢາເສບຕິດແທນ.[110]

**ການຖືເປັນຄະດີອາຍາຕໍ່ກັບການເຄື່ອນຍ້າຍແຮງງານທີ່ຜິດກົດໝາຍ ມີຄວາມສ່ຽງສູງທີ່ຈະຖືກລົງໂທດ:** ຕໍ່ກັບສະພາບການຂອງການກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຢ່າງບໍ່ພຽງພໍນັ້ນ, ມີການສະແດງຄວາມເປັນກັງວົນກ່ຽວກັບຜົນສະທ້ອນດ້ານລົບ ໃນການຖືເປັນຄະດີອາຍາຕໍ່ກັບການເຄື່ອນຍ້າຍແຮງງານທີ່ເປັນຜິດກົດໝາຍ ມີການລົງໂທດຜູ້ຖືກເຄາະຮ້າຍໃນມາເລເຊຍ. ສັງເກດເຫັນວ່າມີການກັ່ນກອງຢ່າງບໍ່ພຽງພໍຕໍ່ກັບຜູ້ຂໍລີ້ໄພ ແລະ ຜູ້ເຄື່ອນຍ້າຍ ສຳລັບຕົວຊີ້ວັດຂອງການຄ້າມະນຸດ ຄວບຄູ່ກັບການເພີ່ມອຳນາດໃຫ້ແກ່ກຳລັງປະກອບອາວຸດ ໃນການຈັບຕົວຜູ້ເຄື່ອນຍ້າຍແຮງງານທີ່ບໍ່ມີເອກະສານ, ສິ່ງຜົນເຮັດໃຫ້ຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍຈາກ

---

105 ການບັງຄັບໃຊ້ແຮງງານ ແລະ ການຄ້າມະນຸດ: *ຄູ່ມືການຝຶກອົບຮົມສຳລັບເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍຂອງມາເລເຊຍ:* (ILO, 2021) ໜ້າທີ 73
106 ບົດລາຍງານການຄ້າມະນຸດ ປີ 2020: ມາເລເຊຍ (ກະຊວງການຕ່າງປະເທດສະຫະລັດອາເມລິກາ, 2020)
107 ບົດລາຍງານການຄ້າມະນຸດ ປີ 2021: ມາເລເຊຍ (ກະຊວງການຕ່າງປະເທດສະຫະລັດອາເມລິກາ, 2021)
108 ບົດລາຍງານການຄ້າມະນຸດ ປີ 2020: ມາເລເຊຍ (ກະຊວງການຕ່າງປະເທດສະຫະລັດອາເມລິກາ, 2020)
109 ບົດລາຍງານການຄ້າມະນຸດ ປີ 2021: ມາເລເຊຍ (ກະຊວງການຕ່າງປະເທດສະຫະລັດອາເມລິກາ, 2021)
110 ສູນຄວາມຍຸຕິທຳຣິງກົງ, *ສິ່ງໃຫ້ແກ່ຄະນະເຮັດວຽກທີ່ເຮັດການສຶກສາຄົ້ນຄວ້າການກັກຂັງແບບຕາມໃຈ ກ່ຽວກັບການກັກຂັງແບບຕາມໃຈ ທີ່ກ່ຽວຂ້ອງກັບນະໂຍບາຍດ້ານຢາເສບຕິດ* (ມີນາ 2020)

ການຄ້າມະນຸດ ຖືກປະຕິບັດໃນຖານະ 'ແຮງງານເຄື່ອນຍ້າຍທີ່ຜິດກົດໝາຍ'.[111] ໄດ້ມີການລາຍງານກ່ຽວກັບການຖືເປັນຄະດີອາຍາຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ພາຍໃຕ້ ກົດໝາຍວ່າດ້ວຍການເຂົ້າ-ອອກເມືອງ ເນື່ອງມາຈາກທັດສະນະຄະຕິດ້ານລົບຕໍ່ກັບແຮງງານເຄື່ອນຍ້າຍ ແລະ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.[112] ພາຍຫຼັງການປະຕິບັດພາລະກິດໃນມາເລເຊຍ ປີ 2015 ຂອງຜູ້ລາຍງານພິເສດຂອງອົງການສະຫະປະຊາຊາດ ກ່ຽວກັບການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ກໍໄດ້ກ່າວວ່າ

> *...ແນວໂນ້ມທາງດ້ານການເມືອງທີ່ເຂັ້ມແຂງຕໍ່ກັບການລົງໂທດທາງອາຍາ ແລະ ການດຳເນີນຄະດີຕໍ່ກັບແຮງງານເຄື່ອນຍ້າຍທີ່ຜິດກົດໝາຍ ອາດຈະມີຜົນກະທົບດ້ານລົບໂດຍບໍ່ຕັ້ງໃຈຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດເຖິງແມ່ນວ່າຈະມີການປົກປ້ອງການດຳເນີນຄະດີອາຍາກ່ຽວກັບການເຂົ້າ-ອອກເມືອງ ໃນກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ (2007).*

ຜູ້ລາຍງານພິເສດຍັງກ່າວອີກວ່າ ປະຊາຊົນທີ່ຕ້ອງການລາຍງານກ່ຽວກັບການຂູດຮີດ, ລວມທັງ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ມີຄວາມສ່ຽງທີ່ຈະຖືກດຳເນີນຄະດີອາຍາ ສິ່ງຜົນເຮັດໃຫ້ຫຼາຍຄົນຫຼີກລ້ຽງທີ່ຈະຕິດຕໍ່ກັບເຈົ້າໜ້າທີ່ ແລະ ຄົນອື່ນໆທີ່ຖືກດຳເນີນຄະດີອາຍາຢ່າງບໍ່ເໝາະສົມ ສຳລັບອາຊະຍາກຳທີ່ໄດ້ກະທຳ ໃນເວລາທີ່ຖືກຄ້າມະນຸດ ເຊິ່ງພວກເຂົາ ບໍ່ຄວນຈະຮັບຜິດຊອບຕໍ່ກັບອາຊະຍາກຳດັ່ງກ່າວ.[113] ມີຂໍ້ມູນພຽງເລັກນ້ອຍທີ່ຊີ້ໃຫ້ເຫັນວ່າ ສະຖານະການໄດ້ມີການປັບປຸງໃນຫົກປີຜ່ານມາ ນັບແຕ່ມີການອອກບົດລາຍງານຜ່ານມາ. ໃນທາງກົງກັນຂ້າມ, ບົດລາຍງານການຄ້າມະນຸດສະ ບັບຫຼ້າສຸດ, ກະຊວງການຕ່າງປະເທດຂອງສະຫະລັດອາເມລິກາ ໄດ້ກ່າວວ່າ:

> *ລັດຖະບານຍັງສືບຕໍ່ເພິ່ງພາຜູ້ຖືກເຄາະຮ້າຍໃນການ 'ກຳນົດຕົວເອງ' ແລະ ບໍ່ນຳໃຊ້ມາດຕະການ SOP ໃນການກຳນົດຕົວຜູ້ຖືກເຄາະຮ້າຍຢ່າງຕັ້ງໜ້າ ໃນເວລາທີ່ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ມີການບຸກກວດຄົ້ນ ຫຼື ໃນກຸ່ມປະຊາກອນທີ່ມີຄວາມສ່ຽງ ທີ່ເຈົ້າໜ້າທີ່ໄດ້ເຂົ້າມາຕິດຕໍ່ພົວພັນ; ດ້ວຍເຫດນັ້ນ, ເຈົ້າໜ້າທີ່ຍັງສືບຕໍ່ລົງໂທດທາງອາຍາຕໍ່ກັບຜູ້ຖືກເຄາະຮ້າຍຢ່າງບໍ່ເໝາະສົມ ສຳລັບການລະເມີດການເຂົ້າ-ອອກເມືອງ ແລະ ການເປັນໂສເພນີ.[114]*

## 2.6. ມຽນມາ

ບໍ່ມີການຈັດກອງປະຊຸມປຶກສາຫາລືແບບໂຕະມົນໃນມຽນມາ ເພື່ອຈຸດປະສົງຂອງການຄົ້ນຄວ້ານີ້ ເນື່ອງຈາກການລັດຖະປະຫານຂອງທະຫານ ທີ່ເລີ່ມຂຶ້ນໃນວັນທີ 1 ກຸມພາ 2021. ສະນັ້ນ, ຂໍ້ມູນກ່ຽວກັບຫຼັກການບໍ່ລົງໂທດສາມາດໄດ້ມາຈາກແຫຼ່ງຂໍ້ມູນເປີດກ້ວາງ ແລະ ຂໍ້ມູນແບບລົງເລິກຈາກຜູ້ຊ່ຽວຊານເທົ່ານັ້ນ. ຂໍ້ມູນສະເພາະທີ່ຈຳກັດຫຼາຍ ກ່ຽວກັບການຈັດຕັ້ງຫຼັກການບໍ່ລົງໂທດ ເຊິ່ງກໍໄດ້ຮັບການກຳນົດໄວ້.

**ຂໍ້ກຳນົດການບໍ່ລົງໂທດທີ່ຊັດເຈນໃນກົດໝາຍພາຍໃນ:** ໃນໝວດທີ V ຂອງ *ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ* (2005) ປົກປ້ອງສິດທິຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ເຊິ່ງກຳນົດວ່າໜ່ວຍງານຂັ້ນສູນກາງຈະບໍ່ດຳເນີນການກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ສຳລັບຄວາມຜິດໃດໜຶ່ງ ພາຍໃຕ້ *ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ* ແລະ ຈະກຳນົດວ່າມັນເໝາະສົມ ຫຼື ບໍ່ ໃນການດຳເນີນການຕໍ່ເຂົາເຈົ້າ ສຳລັບຄວາມຜິດໃດໜຶ່ງທີ່ເກີດຂຶ້ນ ອັນເປັນຜົນສະທ້ອນໂດຍກົງມາຈາກການຖືກຄ້າມະນຸດ. ອີງຕາມພາກທີ 13 ຂອງກົດໝາຍ:

---

111 ມີການບັນທຶກຮູບແບບອື່ນຂອງການລົງໂທດ ລວມທັງ ຜູ້ຖືກເຄາະຮ້າຍ ທີ່ຖືກນຳໄປສານໂດຍການໃສ່ກະແຈຂໍ້ມື ເພື່ອໃຫ້ການຕໍ່ກັບຜູ້ທີ່ຄ້າມະນຸດ. ບົດລາຍງານການຄ້າມະນຸດ ປີ 2021: ມາເລເຊຍ (ກະຊວງການຕ່າງປະເທດສະຫະລັດອາເມລິກາ, 2021)

112 ເບິ່ງທີ່: http://www.tenaganita.net/news-and-press-releases/press-releases/tenaganita-press-statement-malaysia-needs-to-wake-up-to-its-human-trafficking-problem/ ໄດ້ເຂົ້າໃນວັນທີ 6 ເມສາ 2021.

113 ທີ່ມາ: *ບົດລາຍງານຂອງຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ Maria Grazia Giammarinaro, Addendum, ທີ່ຮັບຜິດຊອບທີ່ມາເລເຊຍ,* ເອກະສານ UN A/HRC/29/38/Add.1, ວັນທີ 1 ມິຖຸນາ 2015 [25]

114 ບົດລາຍງານການຄ້າມະນຸດ ປີ 2021: ມາເລເຊຍ (ກະຊວງການຕ່າງປະເທດສະຫະລັດອາເມລິກາ, 2021)

*13. ໜ່ວຍງານຂັ້ນສູນກາງ:*

*(a) ຈະບໍ່ດຳເນີນການໃດ ຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ສຳລັບຄວາມຜິດ ໃດໜຶ່ງ ພາຍໃຕ້ກົດໝາຍສະບັບນີ້.*

*(b) ຈະກຳນົດວ່າ ມັນເໝາະສົມ ຫຼື ບໍ່ ທີ່ຈະດຳເນີນການຕໍ່ກັບຜູ້ຖືກເຄາະຮ້າຍຈາກການ ຄ້າມະນຸດ ສຳລັບຄວາມຜິດທີ່ເກີດຂຶ້ນ ທີ່ເປັນຜົນສະທ້ອນໂດຍກົງຈາກການຄ້າມະນຸດ.*

ໃນຂະນະທີ່ໜ່ວຍງານຂັ້ນສູນກາງ ບໍ່ດຳເນີນການຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ສຳລັບຄວາມຜິດທີ່ກຳນົດໄວ້ພາຍໃຕ້ *ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ,* ອີງຕາມພາກທີ 13(a), ຜູ້ຖືກເຄາະຮ້າຍ ຍັງອາດຈະຖືກດຳເນີນຄະດີ ສຳລັບຄວາມຜິດອື່ນທີ່ພວກເຂົາໄດ້ກະທຳ ໂດຍອີງຕາມພາກທີ 13(b).

**ການປົກປ້ອງຜູ້ຖືກເຄາະຮ້າຍທີ່ເປັນເດັກຈາກການລົງໂທດ:** ນິຕິກຳ ໄດ້ກຳນົດການປົກປ້ອງບາງຢ່າງສຳລັບຜູ້ຖືກເຄາະຮ້າຍທີ່ເປັນເດັກ ຈາກການດຳເນີນຄະດີ. *ກົດໝາຍວ່າດ້ວຍສິດທິເດັກ* ກຳນົດອາຍຸຕໍ່າສຸດ ສຳລັບການເກນທະຫານດ້ວຍ ຄວາມສະໝັກໃຈ ທີ່ອາຍຸ 18 ປີ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ການປົກປ້ອງເດັກ ທີ່ຢູ່ພາຍໃຕ້ການຈັດຫາ ຫຼື ນຳໃຊ້ໂດຍກອງກຳລັງປະກອບອາວຸດຂອງລັດ ແລະ ບໍ່ແມ່ນຂອງລັດ. ບົດລາຍງານການຄ້າມະນຸດຂອງສະຫະລັດອາເມລິກາ ຊີ້ໃຫ້ເຫັນເຖິງການປົກປ້ອງ ລວມທັງ ການຍົກເລີກການຕັ້ງຂໍ້ກ່າວຫາແບບອັດຕະໂນມັດ ແລະ ສິ່ງຕໍ່ເພື່ອໃຫ້ປົກປ້ອງ ເບິ່ງແຍງ ສຳລັບຜູ້ຖືກເຄາະຮ້າຍຈາກອາຊະຍາກຳ ທີ່ຖືກບັງຄັບໃຫ້ກະທຳ ເຊິ່ງເປັນຜົນສະທ້ອນຈາກການຈັດຫາ ຫຼື ນຳໃຊ້ດັ່ງກ່າວ. ເຖິງຢ່າງໃດກໍຕາມ, ໃນຂະນະທີ່ມີການຊົມເຊີຍຕໍ່ກັບການປົກປ້ອງນີ້, ຍັງສັງເກດເຫັນວ່າ ອາຍຸຄວາມຮັບຜິດ ຊອບທາງອາຍາແມ່ນ 10 ປີ (ເພີ່ມຂຶ້ນຈາກ 7 ປີ) ເຊິ່ງເຫັນວ່າຍັງຕໍ່າເກີນໄປໃນການປົກປ້ອງເດັກຈາກການລົງໂທດຈາກອາຊະຍາກຳອື່ນ.[115]

**ຫຼັກການບໍ່ລົງໂທດໃນນະໂຍບາຍ:** ໃນລະດັບນະໂຍບາຍ *ແຜນປະຕິບັດງານແຫ່ງຊາດເພື່ອຕ້ານການຄ້າມະນຸດ 5 ປີ ປີທີສາມ* ຂອງມຽນມາ (2017-2021) ບໍ່ໄດ້ມີການກ່າວເຖິງຫຼັກການບໍ່ລົງໂທດສະເພາະ ແຕ່ໄດ້ເນັ້ນໜັກເຖິງວິທີການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ໃນການຕ້ານການຄ້າມະນຸດ. ມີການລາຍງານວ່າ ນະໂຍບາຍຂອງລັດຖະບານທີ່ບໍ່ຕັ້ງຂໍ້ຫາຕໍ່ກັບຄົນໂຣຮິງຢາ ສຳລັບຄວາມຜິດທີ່ກ່ຽວຂ້ອງກັບການເຂົ້າ-ອອກເມືອງ ໄດ້ຖືກລຶບລ້າງຖິ້ມ ໂດຍລັດຖະບານທະຫານ ທີ່ມີການລັດຖະປະຫານໃນເດືອນ ກຸມພາ 2021, ໂດຍທີ່ທະຫານ ໄດ້ມີການດຳເນີນການຕໍ່ກັບຄົນໂຣຮິງຢາ ສຳລັບຄວາມຜິດທີ່ກ່ຽວຂ້ອງກັບການເຂົ້າ-ອອກເມືອງ.[116]

**ການນຳໃຊ້ຫຼັກການບໍ່ລົງໂທດແກ່ຜູ້ຖືກເຄາະຮ້າຍໃນພາກປະຕິບັດຕົວຈິງ:** ບົດລາຍງານການຄ້າມະນຸດຂອງກະຊວງການ ຕ່າງປະເທດສະຫະລັດອາເມລິກາ ປີ 2021 ໄດ້ກ່າວວ່າ ຜູ້ຖືກເຄາະຮ້າຍບາງຄົນຖືກລົງໂທດທາງອາຍາ ສຳລັບການກະທຳ ທີ່ຜິດກົດໝາຍ ທີ່ຜູ້ຄ້າມະນຸດບັງຄັບໃຫ້ພວກເຂົາກະທຳ, ສ່ວນໜຶ່ງແມ່ນເນື່ອງມາຈາກຂາດຄວາມຮັບຮູ້ ຫຼື ຂັ້ນຕອນການຈັດຕັ້ງປະຕິບັດການກັ່ນກອງ ໃນລະຫວ່າງເຈົ້າໜ້າທີ່ຕຳຫຼວດ ແລະ ຕຸລາການ ລວມທັງຢ່າງທີ່ໜຶ່ງກໍລະນີທີ່ຜູ້ຖືກ ເຄາະຮ້າຍຖືກຕັ້ງຂໍ້ຫາລັກຊັບ. ເຖິງຢ່າງໃດກໍຕາມ, ໃນກໍລະນີທີ່ປະທານຂອງໜ່ວຍງານຂັ້ນສູນກາງເພື່ອປາບປາມ ການຄ້າມະນຸດ (CBTIP) ຊັດມັ້ຽນຄະດີອາຍາ ເມື່ອເຈົ້າໜ້າທີ່ຮັບຮູ້ວ່າບຸກຄົນດັ່ງກ່າວເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ມັນຍັງບໍ່ມີຄວາມຊັດເຈນວ່າເຫດການທີ່ເກີດຂຶ້ນນີ້ ແມ່ນຜົນສະທ້ອນໂດຍກົງຈາກການນຳໃຊ້ ພາກທີ່ 13 ຂອງ ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ 2005 ຫຼື ບໍ່.[117]

**ບົດບາດໃນການກຳນົດຕົວຜູ້ຖືກເຄາະຮ້າຍໃນການບໍ່ລົງໂທດ:** ການບໍ່ກຳນົດຕົວຜູ້ຖືກເຄາະຮ້າຍ ແມ່ນເປັນອຸປະສັກອັນ ທີ່ສຳຄັນໃນການປົກປ້ອງພວກເຂົາຈາກການຖືກລົງໂທດໃນມຽນມາ. ບົດລາຍງານການຄ້າມະນຸດຂອງ

115 ບົດລາຍງານການຄ້າມະນຸດ ປີ 2020: ມຽນມາ (ກະຊວງການຕ່າງປະເທດສະຫະລັດອາເມລິກາ, 2020)
116 ບົດລາຍງານການຄ້າມະນຸດ ປີ 2021: ມຽນມາ (ກະຊວງການຕ່າງປະເທດສະຫະລັດອາເມລິກາ, 2021)
117 ບົດລາຍງານການຄ້າມະນຸດ ປີ 2021: ມຽນມາ (ກະຊວງການຕ່າງປະເທດສະຫະລັດອາເມລິກາ, 2021)

ກະຊວງການຕ່າງປະເທດຂອງສະຫະລັດອາເມລິກາ ປີ 2020 ໄດ້ລະບຸກ່ຽວກັບຂໍ້ບົກຜ່ອງໃນການກໍານົດຕົວ. ມັນໄດ້ກໍານົດວ່າການກໍານົດຕົວຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍແບບຕັ້ງໜ້າຈາກມຽນມາ 'ລະຫວ່າງທາງໄປປະເທດຈີນເພື່ອຈຸດປະສົງຂອງການແຕ່ງງານ ມີແນວໂນ້ມວ່າຈະສົ່ງຜົນໃຫ້ເກີດການລ່ວງລະເມີດທາງເພດ ແລະ ແຮງງານ ແລະໃນປະເທດໄທ ເພື່ອຈຸດປະສົງການຄ້າທາງເພດທີ່ອາດຈະເກີດຂຶ້ນ', ເຖິງວ່າຈະມີການສະແດງຄວາມກັງວົນວ່າໜ່ວຍງານຂອງລັດ ບໍ່ໄດ້ມີການກໍານົດຕົວຢ່າງຕັ້ງໜ້າໃນທຸກຂະແໜງການກໍຕາມ.[118]

**ການຮ່ວມມືລະຫວ່າງປະເທດ ເພື່ອປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ:** ມຽນມາມີບົດບັນທຶກຄວາມເຂົ້າໃຈ ໂດຍຄູ່ພາຄີຢືນຢັນວ່າ ຜູ້ຖືກເຄາະຮ້າຍຈະຖືກປະຕິບັດໃນຖານະຜູ້ຖືກເຄາະຮ້າຍ ບໍ່ແມ່ນຜູ້ກະທໍາຜິດ ແລະ ເຫັນດີວ່າຈະບໍ່ ລົງໂທດຜູ້ຖືກເຄາະຮ້າຍໃນສະຖານການເຂົ້າ ຫຼື ອອກຈາກອານາເຂດຂອງຕົນ, ຫຼື ການກະທໍາຜິດໃດໜຶ່ງທີ່ເກີດຂຶ້ນໂດຍ ກົງຈາກການຄ້າມະນຸດ. ສັນຍາຮ່ວມມືດັ່ງກ່າວມີກັບ ປະເທດໄທ (2009 ມາດຕາ 8(a)) ແລະ ຈີນ (2009, ມາດຕາ 5(1)). ຍັງບໍ່ມີຄວາມຊັດເຈນວ່າສັນຍາຮ່ວມມືສອງຝ່າຍເຫຼົ່ານີ້ ໄດ້ມີການຈັດຕັ້ງປະຕິບັດໃນພາກປະຕິບັດຕົວຈິງ ເພື່ອປົກປ້ອງຜູ້ຖືກເຄາະຮ້າຍຈາກການລົງໂທດ ຫຼື ບໍ່.

## 2.7. ຟີລິບປິນ

ໄດ້ມີການຈັດກອງປະຊຸມປຶກສາຫາລືແບບໂຕະມົນສອງຄັ້ງທີ່ຟີລິບປິນ ເພື່ອຈຸດປະສົງຂອງການຄົ້ນຄວ້ານີ້, ໂດຍມີຜູ້ເຂົ້າຮ່ວມທັງໝົດ 20 ທ່ານ ທີ່ຕາງໜ້າມາຈາກທັງຝ່າຍລັດ ແລະ ໜ່ວຍງານທີ່ບໍ່ແມ່ນຝ່າຍລັດ ທີ່ເຮັດວຽກຕ້ານການຄ້າມະນຸດ. ໃນພາກນີ້ ເນັ້ນໃຫ້ເຫັນເຖິງຂໍ້ມູນດ້ານເລິກ ລວມທັງ ເອກະສານ/ຂໍ້ມູນທີ່ເປີດກວ້າງທີ່ກ່ຽວຂ້ອງ.

## ຫຼັກການບໍ່ລົງໂທດໃນກົດໝາຍ ແລະ ນະໂຍບາຍ

**ຫຼັກການບໍ່ລົງໂທດທີ່ຊັດເຈນໃນກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ:** ພາກທີ 17 ຂອງ *ກົດໝາຍວ່າດ້ວຍສາທາລະນະ ເລກທີ 9208* (2003) ທີ່ປັບປຸງໂດຍ *RA 10364* (2012) *(ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ສະບັບປັບປຸງ)* ກໍານົດວ່າຜູ້ຖືກຄ້າມະນຸດ ຈະບໍ່ຖືກລົງໂທດ ສໍາລັບການກະທໍາທີ່ຜິດກົດໝາຍ ທີ່ເປັນຜົນໂດຍກົງຈາກ ຫຼື ເປັນເຫດການ ຫຼື ທີ່ກ່ຽວຂ້ອງກັບ ການຖືກຄ້າມະນຸດ ຫຼື ການປະຕິບັດຕາມຄໍາສັ່ງຂອງຜູ້ຄ້າມະນຸດ. ໃນພາກດັ່ງກ່າວຍັງໃຫ້ການປົກປ້ອງຜູ້ຖືກເຄະຮ້າຍຈາກການຄ້າມະນຸດ ເພື່ອຈຸດປະສົງຂອງການຄ້າປະເວນີຈາກການດໍາເນີນຄະດີ, ປັບໃໝ ຫຼື ການລົງໂທດອື່ນ ພາຍໃຕ້ *ປະມວນກົດໝາຍອາຍາສະບັບປັບປຸງ.*

> *ພາກ 17. ການປົກປ້ອງທາງກົດໝາຍຕໍ່ກັບການຄ້າມະນຸດ.*
>
> *----- ຜູ້ຖືກຄ້າມະນຸດທີ່ຖືກຮັບຮູ້ ໃນຖານະຜູ້ຖືກເຄາະຮ້າຍຂອງການກະທໍາ ຫຼື ການກະທໍາຂອງການຄ້າມະນຸດ ແລະ ການກະທໍາດັ່ງກ່າວ ຈະບໍ່ຖືກລົງໂທດ ສໍາລັບການກະທໍາທີ່ຜິດກົດໝາຍ ທີ່ເປັນຜົນໂດຍກົງຈາກ ຫຼື ເປັນເຫດການ ຫຼື ທີ່ກ່ຽວຂ້ອງກັບຖືກຄ້າມະນຸດ ອີງຕາມການກະທໍາຂອງການຄ້າມະນຸດ ຕາມທີ່ກໍານົດໄວ້ໃນກົດໝາຍສະບັບນີ້ ຫຼື ຕາມຄໍາສັ່ງຂອງຜູ້ຄ້າມະນຸດ ທີ່ກ່ຽວຂ້ອງກັບຄໍາ ສັ່ງດັ່ງກ່າວ. ທັງນີ້, ຄວາມຍິນຍອມຂອງຜູ້ຖືກຄ້າມະນຸດ ຕໍ່ກັບການຖືກຂູດຮີດໂດຍເຈດຕະນາ ຕາມທີ່ກໍານົດໄວ້ໃນກົດໝາຍສະບັບນີ້ ແມ່ນບໍ່ມີຄວາມກ່ຽວຂ້ອງກັນ.*
>
> *ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເພື່ອຈຸດປະສົງຂອງການຄ້າປະເວນີ ຕາມທີ່ກໍານົດໄວ້ໃນພາກທີ 4 ຂອງກົດໝາຍສະບັບນີ້ ຈະບໍ່ຖືກຄອບຄຸມໃນມາດຕາ 202 ຂອງ*

---

118 ບົດລາຍງານການຄ້າມະນຸດ ປີ 2020: ມຽນມາ (ກະຊວງການຕ່າງປະເທດສະຫະລັດອາເມລິກາ, 2020)

*ປະມວນກົດໝາຍອາຍາ ສະບັບປັບປຸງ ແລະ ດ້ວຍເຫດນັ້ນ, ຈະບໍ່ຖືກດຳເນີນຄະດີ, ປັບໃໝ ຫຼື ລົງໂທດອື່ນໆ ພາຍໃຕ້ກົດໝາຍສະບັບດັ່ງກ່າວ.*

**ຂໍ້ກຳນົດເພີ່ມເຕີມທີ່ກ່ຽວຂ້ອງກັບການບໍ່ລົງໂທດ:** ຂໍ້ກຳນົດເພີ່ມເຕີມທີ່ກຳນົດໄວ້ໃນ *ກົດລະບຽບ ແລະ ລະບຽບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍສາທາລະນະ ສະບັບປັບປຸງ ເລກທີ 9208 ທີ່ປັບປຸງໂດຍກົດໝາຍວ່າດ້ວຍສາທາລະນະ ເລກທີ 10364.* ພາກທີ 88 'ການປົກປ້ອງການຮ້ອງຟ້ອງ ສຳລັບການກະທຳທີ່ຜິດກົດໝາຍ ທີ່ກ່ຽວຂ້ອງ ກັບການຄ້າມະນຸດ ຫຼື ຕາມຄຳສັ່ງຂອງຜູ້ຄ້າມະນຸດໂດຍກົງ' ກຳນົດໄວ້ວ່າ 'ຄວາມຍິນຍອມຂອງຜູ້ຖືກຄ້າມະນຸດ ຕໍ່ກັບການຖືກຂູດຮີດໂດຍເຈດຕະນາ ບໍ່ກ່ຽວຂ້ອງກັນ. ຜູ້ຖືກຄ້າມະນຸດ ຈະບໍ່ຖືກລົງໂທດສຳລັບການກະທຳທີ່ຜິດກົດໝາຍ ທີ່ເປັນຜົນໂດຍກົງຈາກ, ຫຼື ເປັນເຫດການ ຫຼື ທີ່ກ່ຽວຂ້ອງກັບຖືກຄ້າມະນຸດ ຫຼື ປະຕິບັດຕາມຄຳສັ່ງຂອງຜູ້ຄ້າມະນຸດ ທີ່ກ່ຽວຂ້ອງກັບຄຳສັ່ງດັ່ງກ່າວ.' ນອກນັ້ນ, ພາກທີ 89 ຍັງກຳນົດວ່າ 'ການປົກປ້ອງການຮ້ອງຟ້ອງພາຍໃຕ້ ມາດຕາ 202 ຂອງປະມວນກົດໝາຍອາຍາ ສະບັບປັບປຸງ' ທີ່ກຳນົດໄວ້ວ່າ 'ຜູ້ຖືກຄ້າມະນຸດ ສຳລັບການຄ້າປະເວນີ ຈະບໍ່ຖືກດຳເນີນຄະ ດີ, ປັບໃໝ ຫຼື ລົງໂທດ ພາຍໃຕ້ຂໍ້ກຳນົດຂອງມາດຕາ 202 ຂອງປະມວນກົດໝາຍອາຍາ ສະບັບປັບປຸງ.' ພາກທີ 94 ຍັງເຮັດໃຫ້ພຶດຕິກຳທາງເພດໃນອາດີດ ຫຼື ຄວາມຄິດອັກຄະຕິທາງເພດຂອງຜູ້ຖືກຄ້າມະນຸດ ບໍ່ສາມາດຍອມຮັບໄດ້ ສຳ ລັບຈຸດປະສົງການໃຫ້ຄວາມຍິນຍອມຂອງຜູ້ຖືກເຄາະຮ້າຍ ໃນການມີສ່ວນຮ່ວມໃນກິດຈະກຳທາງເພດ ຫຼື ເພື່ອພິສູດກ່ຽວກັບທາງເພດ ຫຼື ອັກຄະຕິທາງເພດຂອງຜູ້ຖືກຄ້າມະນຸດ.

**ການປົກປ້ອງຜູ້ຖືກເຄາະຮ້າຍທີ່ເປັນເດັກຈາກການລົງໂທດ:** ຜູ້ຖືກເຄາະຮ້າຍທີ່ເປັນເດັກ ໄດ້ຮັບການປົກປ້ອງຈາກ ຄວາມຜິດບາງປະເພດ ລວມທັງ ໂດຍຜ່ານ *ກົດໝາຍວ່າດ້ວຍຍຸຕິທຳເດັກ,* ພາກທີ 58 ເຊິ່ງຫ້າມດຳເນີນຄະດີກັບການເປັນພະເນຈອນ (ບໍ່ມີທີ່ຢູ່) ແລະ ການເປັນໂສເພນີ. ນອກນັ້ນ, ພາກທີ 5 ຂອງ *ກົດໝາຍວ່າດ້ວຍການຕ້ານການລ່ວງລະເມີດເດັກ* ກຳນົດໄວ້ວ່າ ເດັກທີ່ມີສ່ວນຮ່ວມໃນກິດຈະກຳທາງເພດ ເພື່ອຈຸດປະສົງທາງການຄ້າ 'ຖືວ່າເປັນເດັກທີ່ຖືກຂູດຮີດໃນການປະເວນີ ແລະ ການລ່ວງລະເມີດທາງເພດອື່ນໆ.'

**ເຄື່ອງມືດ້ານນິຕິກຳອື່ນໆທີ່ກ່ຽວຂ້ອງກັບການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ:** ສະຖານະການທີ່ໄດ້ຮັບການ ຍົກເວັ້ນໃນ *ປະມວນກົດໝາຍອາຍາສະບັບປັບປຸງ* ໄດ້ກ່າວວ່າ ຄວາມເປັນໄປໄດ້ໃນການເພີ່ມການປ້ອງກັນ, ໂດຍຮັບຮູ້ ວ່າການກະຕຸ້ນການປ້ອງກັນແມ່ນບໍ່ຄືກັນກັບການຍຶດໝັ້ນຫຼັກການບໍ່ລົງໂທດ ເພື່ອປົກປ້ອງຜູ້ຖືກເຄະຮ້າຍຈາກການຖືກ ດຳເນີນຄະດີໃນຕອນຕົ້ນ. *ກົດໝາຍວ່າດ້ວຍອາຊະຍາກຳທາງອິນເຕີເນັດ* ປີ 2012 ໄດ້ກ່າວວ່າ ມີຄວາມກ່ຽວຂ້ອງບາງຢ່າງ ທີ່ອາດຖືກນຳໃຊ້ໃນກໍລະນີທີ *ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ* ຄວນເຂົ້າມາມີບົດບາດ. ໃນກໍລະນີດັ່ງກ່າວ ບຸກຄົນອາດຈະຖືກຕັ້ງຂໍ້ຫາ ພາຍໃຕ້ *ກົດໝາຍວ່າດ້ວຍອາຊະຍາກຳທາງອິນເຕີເນັດ* ແທນທີ່ຈະເປັນການປົກປ້ອງຈາກ ການລົງໂທດຕາມ *ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ,* ໂດຍກ່າວເຖິງຄວາມສຳຄັນຂອງການນຳເອົາຫຼັກການບໍ່ລົງ ໂທດ ມາມີບົດບາດ ໃນກໍລະນີທີ່ມີອົງປະກອບຂອງການຂູດຮີດ.

**ນະໂຍບາຍທີ່ກ່ຽວຂ້ອງຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ:** *ຄູ່ມືວ່າດ້ວຍການປົກປ້ອງສິດທິຂອງແມ່ຍິງທີ່ຖືກຄ້າມະນຸດ* (ຄະນະກຳມາທິການແມ່ຍິງຂອງຟີລິບປິນ ໃນການປະສານງານກັບສະພາລະຫວ່າງໜ່ວຍງານ ເພື່ອຮ້ານການຄ້າມະນຸດ (IACAT) 2013) ໄດ້ເນັ້ນໜັກວ່າ 'ແມ່ຍິງທີ່ຖືກຄ້າມະນຸດ ຄວນຖືກປະຕິບັດໃນຖານະຜູ້ຖືກເຄາະຮ້າຍ ບໍ່ແມ່ນຜູ້ກະທຳຜິດ' (5.3.8.1.1) ນອກນັ້ນ, *ຄູ່ມືວ່າດ້ວຍລະບົບການສົ່ງຕໍ່ ທີ່ກ່ຽວຂ້ອງກັບຄະດີຄ້າມະນຸດ ທີ່ຮັບ ຮອງໂດຍສະພາລະຫວ່າງໜ່ວຍງານເພື່ອຕ້ານການຄ້າມະນຸດ* (IACAT) ຄັ້ງວັນທີ 02 ມີນາ 2017 ໂດຍຜ່ານມະຕິ ເລກທີ 006, ປະຈຳປີ 2017 ລະບຸວ່າຜູ້ຖືກຄ້າມະນຸດ ມີສິດທີ່ຈະ: 'ບໍ່ຖືເປັນຄະດີອາຍາ (ຫຼື ຕັ້ງຂໍ້ຫາ ຫຼື ລົງໂທດ) ສຳລັບການ ມີສ່ວນຮ່ວມໃນການກະທຳ ທີ່ຜິດກົດໝາຍໃນລະຫວ່າງປະສົບການຖືກຄ້າມະນຸດຂອງເຂົາເຈົ້າ.' ບໍ່ມີການກ່າວເຖິງນະໂຍບາຍເຫຼົ່ານີ້ ໃນລະຫວ່າງກອງປະຊຸມປຶກສາຫາລືແບບໂຕະມົນ.

## ການຕີຄວາມໝາຍຫຼັກການບໍ່ລົງໂທດ

**ວິວັດທະນາການຂອງການບໍ່ລົງໂທດໃນກົດໝາຍວ່າດ້ວຍສາທາລະນະ 9208:** ຜູ້ເຂົ້າຮ່ວມໄດ້ຕັ້ງຂໍ້ສັງເກດວ່າ ກົດໝາຍໄດ້ມີການຂະຫຍາຍ ເພື່ອປົກປ້ອງຜູ້ຖືກເຄາະຮ້າຍຈາກການລົງໂທດ ບໍ່ສະເພາະແຕ່ອາຊະຍາກຳ ແຕ່ຍັງປົກປ້ອງຈາກການລະເມີດກົດໝາຍແຮງງານ ແລະ ການຕັ້ງຂໍ້ຫາໃນທາງບໍລິຫານ. ຜູ້ຕອບທ່ານໜຶ່ງກ່າວວ່າ ເບື້ອງຕົ້ນຫຼັກການບໍ່ລົງໂທດກ່ຽວຂ້ອງກັບການກະທຳ 'ທີ່ກ່ຽວຂ້ອງໂດຍກົງ' ກັບການຄ້າມະນຸດ ແຕ່ຕໍ່ມາໄດ້ແກ້ໄຂທີ່ອ້າງເຖິງ 'ທີ່ເປັນຜົນໂດຍກົງ' ຈາກການຄ້າມະນຸດ. ໄດ້ມີການປຶກສາຫາລືກ່ຽວກັບວ່າສິ່ງນີ້ ຄວນຈະມີການຕີຄວາມໝາຍຢ່າງເຄັ່ງຄັດ ໃນການອ້າງເຖິງ 'ບໍ່ຖືກຕັດສິນລົງໂທດ' ຫຼື ບໍ່ ໂດຍໄດ້ຂໍ້ສະຫຼຸບເຖິງເຈດຕະນາລົມຂອງຫຼັກການບໍ່ລົງໂທດ ທີ່ກ່າວເຖິງການຕີຄວາມໝາຍຢ່າງມີເສລີ ເພື່ອໃຫ້ຄວບຄຸມເຖິງທຸກຂັ້ນຕອນໃນຂະບວນຍຸຕິທຳທາງອາຍາ, ທີ່ໝາຍເຖິງການບໍ່ຖືກຈັບຕົວ, ບໍ່ຖືກກັກຂັງ ແລະ ບໍ່ຖືກດຳເນີນຄະດີ. ມັນຍັງບໍ່ມີຄວາມຊັດເຈນວ່າຫຼັກການຈະມີການຕີຄວາມໝາຍແນວໃດ ໃນຂັ້ນຕອນຕ່າງໆຂອງຂະບວນຍຸຕິທຳທາງອາຍາ.

**ຂາດຄວາມຊັດເຈນກ່ຽວກັບການບໍ່ລົງໂທດ ທີ່ນອກເໜືອຈາກຄວາມຜິດທີ່ກ່ຽວຂ້ອງກັບໂສເພນີ:** ຜູ້ສົນທະນາ ໄດ້ພິຈາ ລະນາວ່າກົດໝາຍໄດ້ມີຄວາມເຂົ້າໃຈຢ່າງກວ້າງຂວາງ ແລະ ຖືກນຳໃຊ້ຢ່າງມີປະສິດທິພາບໃນບໍລິບົດຂອງຄວາມຜິດທີ່ ກ່ຽວຂ້ອງກັບໂສເພນີ. ເຖິງຢ່າງໃດກໍຕາມ, ກໍມີຄວາມກັງວົນທີ່ກ່ຽວຂ້ອງກັບຄວາມຜິດອື່ນ ເຊິ່ງຜູ້ຖືກເຄາະຮ້າຍອາດຈະ ບໍ່ໄດ້ຮັບຜົນປະໂຫຍດຈາກການປົກປ້ອງຢ່າງທັນທີ. ຕົວຢ່າງ ຄວາມເປັນໄປໄດ້ທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ອາດຈະຖືກຕັ້ງຂໍ້ຕໍ່ກັບຄວາມຜິດທີ່ກ່ຽວຂ້ອງກັບເອກະສານ (ບໍ່ວ່າຈະໄດ້ມາດ້ວຍການສໍ້ໂກງ ຫຼື ດັດແກ້/ປ່ຽນແປງ). ມີການສະແດງຄວາມກັງວົນວ່າ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດອາດຈະຖືກສັ່ງຟ້ອງຕໍ່ກັບຄວາມຜິດທີ່ກ່ຽວຂ້ອງກັບຢາເສບຕິດ ແລະ ປະປ່ອຍໃຫ້ສະຖານະການຂອງເຂົາເຈົ້າເປັນການປ້ອງກັນແທນທີ່ຈະໄດ້ຮັບການປົກປ້ອງຈາກການຖືກດຳ ເນີນຄະດີໃນແຕ່ເບື້ອງຕົ້ນ. ການຂາດຄວາມຊັດເຈນກ່ຽວກັບຂອບເຂດການປົກປ້ອງຈາກການລົງໂທດ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ອາດຈະມີການຖືກຕັ້ງຂໍ້ຫາ ຖ້າຫາກພວກເຂົາຫາກຄ້າມະນຸດຜູ້ອື່ນ ເປັນຕົ້ນ. ມີຄວາມຈຳເປັນຕ້ອງມີຄຳແນະນຳກ່ຽວກັບນິຕິກຳໃນປະເດັນດັ່ງກ່າວນີ້.

**ການສ້າງການເຊື່ອມໂຍງລະຫວ່າງການຄ້າມະນຸດ ແລະ ຄວາມຜິດ:** ນອກເໜືອຈາກສິ່ງທ້າທາຍໃນພາກປະຕິບັດ ໃນການໄດ້ຮັບຂໍ້ມູນຈາກຜູ້ຖືກເຄາະຮ້າຍກ່ຽວກັບປະສົບການຄ້າມະນຸດຂອງເຂົາເຈົ້າ ແລະ ຄວາມຈຳເປັນທີ່ຕ້ອງຄົ້ນຫາຄຳໃຫ້ການໃນໄລຍະເວລາໃດໜຶ່ງແລ້ວ, ຍັງມີການປຶກສາຫາລືກັນເລັກນ້ອຍລະຫວ່າງຄວາມຜິດ ແລະການຄ້າມະນຸດນັ້ນ ມີການສ້າງການເຊື່ອມໂຍງກັນແນວໃດ. ເຖິງຢ່າງໃດ, ເຖິງວ່າກົດໝາຍຂອງຟີລິບປິນ ໄດ້ຮັບຮອງເອົາຮູບແບບຂອງສາເຫດ ທີ່ມີກອບຢ່າງກວ້າງຂວາງກໍຕາມ, ແຕ່ມີຕົວຊີ້ບອກບາງຢ່າງວ່າການກໍ່ອາຊະຍາກຳເປັນສິ່ງທີ່ເຂົ້າໃຈວ່າເກີດຂຶ້ນຈາກການບັງຄັບໂດຍຜູ້ຄ້າມະນຸດ ແລະ ຄວາມສຳພັນລະຫວ່າງອຳນາດຂອງພວກເຂົາ.

**ຄວາມຈຳເປັນຂອງນະໂຍບາຍກ່ຽວກັບຄວາມໝາຍຂອງການບໍ່ລົງໂທດ:** ຜູ້ປະຕິບັດຕົວຈິງ ເນັ້ນໜັກເຖິງຄວາມຈຳເປັນ ຂອງນະໂຍບາຍທີ່ຊັດເຈນ ເພື່ອສົ່ງເສີມກົດໝາຍ, ເນັ້ນໜັກເຖິງການນຳໃຊ້ກົດໝາຍຕໍ່ກັບຄວາມຜິດທີ່ນອກເໜືອຈາກ ໂສເພນີ. ມີການຮຽກຮ້ອງໃຫ້ມີການຊີ້ແຈງເຖິງຂໍ້ກຳນົດດ້ານກົດໝາຍທີ່ຜູ້ຖືກເຄາະຮ້າຍ 'ບໍ່ຄວນຈະຖືກລົງໂທດ'. ໂດຍ ສະເພາະຢ່າງຍິ່ງ ໄດ້ມີຄຳຖາມເກີດຂຶ້ນ ໝາຍວ່າຄວາມບຸກຄົນດັ່ງກ່າວຈະບໍ່ຖືກຕັດສິນລົງໂທດ ແຕ່ຍັງສາມາດຖືກຕັ້ງຂໍ້ ຫາ ແລະ ດຳເນີນຄະດີສຳລັບການກະທຳທີ່ຜິດກົດໝາຍ ຫຼື ບໍ່ ຫຼືວ່າ ການປົກປ້ອງຢ່າງກວ້າງຂວາງເປັນການຄາດຄະເນ. ຜູ້ຕອບໄດ້ຊີ້ໃຫ້ເຫັນເຖິງຄວາມຈຳເປັນສຳລັບຄຳແນະນຳດ້ານນະໂຍບາຍ ແລະຂໍ້ສະເໜີແນະນຳທີ່ອີງໃສ່ບັນທັດຖານ ແລະ ມາດຕະຖານສາກົນ ເພື່ອແຈ້ງຜູ້ປະຕິບັດຕົວຈິງ ຕໍ່ກັບການຕີຄວາມໝາຍຂອງພາກທີ 17 ຂອງ *ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ* ຢ່າງ 'ຖືກຕ້ອງ', ສະໜັບສະໜູນດ້ວຍການເຜີຍແຜ່, ການຝຶກອົບຮົມ ແລະ ກອງປະຊຸມປຶກສາຫາລື ແບບໂຕະມົນ ເພື່ອເຮັດໃຫ້ຜູ້ທີ່ມີໜ້າທີ່ຮັບຜິດຊອບມີຄວາມຕື່ນຕົວ

ໄວ ຕໍ່ກັບການນຳໃຊ້ຫຼັກການບໍ່ລົງໂທດໃນພາກປະຕິ ບັດ, ລວມທັງ ໂດຍຜ່ານການກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຕັ້ງແຕ່ທຳອິດ ໂດຍຜູ້ທີ່ພົບເຫັນເຂົາເຈົ້າ.

**ຄວາມຈຳເປັນຕໍ່ກັບຄຳແນະນຳ ເພື່ອແກ້ໄຂຄວາມບໍ່ສອດຄ່ອງທາງດ້ານກົດໝາຍ:** ໄດ້ມີການເນັ້ນຢໍ້າເຖິງຄວາມຈຳເປັນ ຕໍ່ກັບຄຳແນະນຳວ່າຈະເອົາຊະນະຄວາມຂັດແຍ່ງລະຫວ່າງເຄື່ອງມືທາງດ້ານກົດໝາຍຕ່າງໆໄດ້ແນວໃດ. ໄດ້ມີການສະເໜີ ທັດສະນະຄະດີໃນການຫຼຸດຜ່ອນຂອບເຂດຂອງດຸນພິນິດໃນການນຳໃຊ້ຫຼັກການບໍ່ລົງໂທດ ແລະ ຮັບປະກັນວ່າ ມັນສາມາດນຳໃຊ້ຢ່າງກວ້າງຂວາງ ລວມທັງ ໃນກໍລະນີທີ່ຜູ້ຖືກເຄາະຮ້າຍຖືກດຳເນີນຄະດີ. ໜ່ວຍງານທີ່ບໍ່ແມ່ນລັດຖະບານ ໄດ້ເນັ້ນວ່າຄຳແນະນຳຈະຕ້ອງບໍ່ແກ້ໄຂສະເພາະແຕ່ໜ່ວຍງານບັງຄັບໃຊ້ກົດໝາຍເທົ່ານັ້ນ ແຕ່ຍັງລວມເຖິງ ໜ່ວຍງານດ້ານ ແຮງງານ ແລະ ໜ່ວຍງານອື່ນໆ ລວມທັງ ໜ່ວຍງານຂອງລັດຖະບານຂັ້ນທ້ອງຖິ່ນ (LGU), ເພື່ອສ້າງຄວາມຮັບຮູ້ຢ່າງກວ້າງຂວາງ ແລະ ຮັບປະກັນວ່າໃຫ້ມີຫຼາຍກໍລະນີທີ່ອ້າງເຖິງໜ່ວຍງານຕ້ານການຄ້າມະນຸດຫຼາຍຂຶ້ນ. ນອກນີ້ ສິ່ງສຳຄັນຂອງການລົງທຶນ ໃນກົມສະຫວັດດີການສັງຄົມ ແລະ ການພັດທະນາ (DSWD) ເພື່ອໃຫ້ເຂົາເຈົ້າມີສ່ວນຮ່ວມຢ່າງກວ້າງຂຶ້ນອີກໃນຫຼັກການບໍ່ລົງໂທດ.

## ການນຳໃຊ້ຫຼັກການບໍ່ລົງໂທດ

**ປະໂຫຍດຂອງນິຕິກຳໃນການປົກປ້ອງຜູ້ຖືກເຄາະຮ້າຍຈາກການລົງໂທດຈາກຄວາມຜິດທີ່ກ່ຽວຂ້ອງກັບໂສເພນີ:** ມີຄວາມເປັນເອກະພາບກັນວ່າ ພາກທີ 17 ມີພື້ນຖານດ້ານກົດໝາຍທີ່ເຂັ້ມແຂງໃນການປົກປ້ອງຈາກການລົງໂທດ ເຖິງວ່າ ຈະມີຄວາມຄິດເຫັນທີ່ແຕກຕ່າງກັນວ່າການນຳໄປໃຊ້ໃນພາກປະຕິບັດຕົວຈິງ ຈະມີປະສິດທິພາບແນວໃດ. ຜູ້ຕອບຝ່າຍລັດ ພິຈາລະນາວ່າມັນມີປະສິດທິພາບໃນການນຳໃຊ້ ໂດຍຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຖືກຕັ້ງຂໍ້ຫາກະທຳຄວາມຜິດໃນກໍລະນີທີ່ຍົກເວັ້ນເທົ່ານັ້ນ. ພວກເຂົາເນັ້ນໜັກວ່າ ກົດໝາຍສາມາດເຮັດໃຫ້ຈັບຕົວເຈົ້າໜ້າທີ່, ໄອຍະການ ແລະ ຜູ້ພິພາກສາ ເພື່ອບໍ່ໃຫ້ອາງ ຫຼື ຕັ້ງຂໍ້ຫາຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ນີ້ແມ່ນຄຸນລັກສະນະທີ່ຄຸ້ນເຄີຍກັບບັນດາ ຂໍ້ກຳນົດຫຼາຍກວ່າຫຼັກການບໍ່ລົງໂທດ ທີ່ມີການຍຶດໝັ້ນນັ້ນ.

**ການນຳໃຊ້ຫຼັກການບໍ່ລົງໂທດຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໃນອຸດສາຫະກຳທາງເພດ:** ກົດໝາຍຖືກຕັ້ງຂໍ້ສັງເກດ ວ່າມີຄຸນຄ່າສະເພາະໃນການຮັບປະກັນວ່າຜູ້ຖືກເຄາະຮ້າຍຈະບໍ່ຖືກຕັ້ງຂໍ້ຫາ ແລະ ບໍ່ໄດ້ມີການດຳເນີນຄະດີ ທີ່ກ່ຽວຂ້ອງກັບ ຄວາມຜິດທີ່ກ່ຽວຂ້ອງກັບໂສເພນີ. ມີການຍົກໃຫ້ເຫັນເຖິງການຍົກເວັ້ນບາງປະເພດ ເຊັ່ນກໍລະນີທີ່ອະດີດຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ທີ່ຈັດຫາເດັກເຂົ້າສູ່ການຂູດຮີດ. ໃນກໍລະນີນີ້, ພິຈາລະນາວ່າບໍ່ມີທາງເລືອກ ແຕ່ຕ້ອງຕັ້ງຂໍ້ຫາຕໍ່ຜູ້ຖືກ ເຄາະຮ້າຍ-ຜູ້ກະທຳຜິດ. ຜູ້ປະຕິບັດຕົວຈິງທ່ານໜຶ່ງ ພິຈາລະນາວ່າ ມັນສົມເຫດສົມຜົນແລ້ວທີ່ຈະປະຖິ້ມຫຼັກການບໍ່ລົງໂທດ ໃນຈຸດທີ່ຜູ້ຖືກເຄາະຮ້າຍ ສິ້ນສຸດການເປັນຜູ້ຖືກເຄະຮ້າຍ ແລະ ໄດ້ກາຍມາເປັນຜູ້ຄ້າມະນຸດເອງ ໂດຍສະເພາະ ໃນກໍລະນີທີ່ມີການຈັດຫາເດັກ. ຈຸດນີ້ ໄດ້ມີການຍົກໃຫ້ເຫັນເຖິງສິ່ງທ້າທາຍຕໍ່ກັບຄວາມດຸ່ນດ່ຽງດ້ານຜົນປະໂຫຍດຂອງ ອະດີດ ແລະ ປັດຈຸບັນຂອງຜູ້ຖືກເຄາະຮ້າຍ. ໄດ້ມີການຍົກໃຫ້ເຫັນເຖິງມິຕິດ້ານບົດບາດຍິງ-ຊາຍເຊັ່ນກັນ ຈາກຄວາມອ່ອນແອຂອງແມ່ຍິງ ຈະຖືກດຳເນີນຄະດີສຳລັບຄວາມຜິດທີ່ຄ້າຜູ້ອື່ນເຂົ້າໃນອຸດສາຫະກຳທາງເພດ ໃນບ່ອນທີ່ເຂົາເຈົ້າເລີ່ມເປັນຜູ້ຖືກເຄາະຮ້າຍເອງ ເນື່ອງຈາກແມ່ຍິງໄດ້ຮັບຜົນກະທົບຈາກການຄ້າມະນຸດປະເພດນີ້ຫຼາຍຂຶ້ນ.

**ບົດບາດຂອງຜູ້ບັງຄັບໃຊ້ກົດໝາຍ ແລະ ໄອຍະການ ໃນການຍຶດໝັ້ນຫຼັກການບໍ່ລົງໂທດ:** ຜູ້ປະຕິບັດຕົວຈິງໃນຂະແໜງ ຍຸຕິທຳທາງອາຍາ ມີບົດບາດສຳຄັນໃນການນຳໃຊ້ຫຼັກການບໍ່ລົງໂທດ. ເຈົ້າໜ້າທີ່ສືບສວນ-ສອບສວນ ແນະນຳວ່າ ຂໍ້ຫາໃດ,ຖ້າມີ ເພື່ອວາງຂໍ້ຫາ ແລະ ອາດຈະລວມເອົາຂໍ້ມູນກ່ຽວກັບສະຖານະພາບຂອງບຸກຄົນ ຜູ້ຖືກເຄາະຮ້າຍຈາກການຄ້າມະ ນຸດ ເພື່ອຫຼຸດຜ່ອນຄວາມຮັບຜິດຊອບຂອງເຂົາເຈົ້າ. ໄອຍະການກຳນົດວ່າມີເຫດຜົນທີ່ເປັນໄປໄດ້ ຫຼື ເຫດຜົນທີ່ເປັນໄປ ບໍ່ໄດ້ ຫຼື ຂັດມັ່ງຽນ ຫຼື ຂໍໃຫ້ມີການສືບສວນ-ສອບສວນ. ຜູ້ຕອບໃຫ້ຂໍ້ສັງເກດວ່າ ການບໍ່ລົງໂທດແມ່ນສິດ ທີ່ບໍ່ຄວນຈະຂຶ້ນ ກັບດຸນພິນິດຂອງໄອຍະການ. ມີການຍົກຄວາມກັງວົນຂຶ້ນວ່າ ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ, ໄອຍະການ ແລະ ຜູ້ພິພາກ ສາຫຼາຍທ່ານ ບໍ່ມີຄວາມຄຸ້ນເຄີຍກັບຫຼັກການບໍ່ລົງໂທດ. ໄອຍະການທ່ານໜຶ່ງໄດ້ຍົກຕົວຢ່າງວ່າ ເຈົ້າໜ້າທີ່ບັງຄັບໃຊ້ກົດ ໝາຍ ແນະນຳໃຫ້ຕັ້ງຂໍ້ຫາການເປັນໂສເພນີຕໍ່ກັບບຸກຄົນສອງຄົນ (ຍິງໜຶ່ງຄົນ ແລະ ຊາຍໜຶ່ງຄົນ); ໄອຍະການ ໃນຄະດີດັ່ງກ່າວ ໄດ້ບອກໃຫ້ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ອ່ານພາກທີ 17 ຢ່າງດັ່ງ ແລະ ຈາກນັ້ນ ປ່ຽນຄຳແນະນຳຂອງລາວ.

**ບົດບາດຂອງຜູ້ພິພາກສາໃນການຍຶດໝັ້ນຫຼັກການບໍ່ລົງໂທດ:** ຜູ້ພິພາກສາ ມີອຳນາດໃນການຕັດສິນບົນພື້ນຖານຂໍ້ເທັດ ຈິງ ແລະ ໄດ້ຮັບການຊີ້ນຳໂດຍຫຼັກການ ແລະ ຂໍ້ກຳນົດກົດໝາຍ ລວມທັງພາກທີ 17 ທີ່ກຳນົດວ່າຜູ້ຖືກເຄາະຮ້າຍ 'ບໍ່ຄວນຈະຖືກລົງໂທດ'. ໃນປະເດັນນີ້, ຜູ້ຕອບໄດ້ອະທິບາຍວ່າພວກເຂົາບໍ່ເຄີຍເຫັນກໍລະນີທີ່ຜູ້ພິພາກສາ ບໍ່ຕັດສິນລົງໂທດ,ເຖິງວ່າໃນພາກທິດສະດີແລ້ວ ພວກເຂົາມີດຸນພິນິດ ທີ່ຈະບໍ່ລົງໂທດ ຫຼື ຫຼຸດຜ່ອນໂທດ. ມັນບໍ່ມີຄວາມຊັດເຈນວ່າ ສາມາດ ປະທັບຕາບັນທຶກໃນກໍລະນີທີ່ຕັດສິນລົງໂທດຜູ້ໃຫຍ່ ຄືກັບທີ່ພວກເຂົາສາມາດເຮັດໄດ້ໃນກໍລະນີຂອງເດັກ ຫຼື ບໍ່. ທາງເລືອກໃນການຂໍໃຫ້ຜູ້ພິພາກສາປ່ອຍຜູ້ຖືກເຄາະຮ້າຍ ທີ່ກຳລັງປະສົບກັບຂໍ້ຫາກໍໄດ້ຖືກຍົກຂຶ້ນມາ ວ່າເປັນທາງເລືອກເຊັ່ນກັນ ໂດຍຜູ້ຕອບທ່ານໜຶ່ງ ໄດ້ປະສົບຜົນສຳເລັດໃນການຂໍໃຫ້ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ຖືກຕັ້ງຂໍ້ຫາໃນການ ຂົນສົ່ງຢາເສບຕິດ ເພື່ອໃຫ້ສານຍົກເລີກຂໍ້ຫາດັ່ງກ່າວ.

## ສິ່ງທ້າທາຍໃນການຮ່ວມມືລະຫວ່າງປະເທດ

**ສິ່ງທ້າທາຍໃນເຂດອຳນາດຂອງສານ ທີ່ກ່ຽວຂ້ອງກັບການຄ້າມະນຸດຂ້າມຊາດ:** ຜູ້ປະຕິບັດຕົວຈິງກ່າວວ່າ ແຮງງານຟີລິບ ປິນຢູ່ຕ່າງປະເທດທີ່ຖືກຄ້າມະນຸດ (OFW) ມັກຈະຖືກລົງໂທດກ່ອນຜູ້ຄ້າມະນຸດ - ລວມທັງບໍລິສັດຈັດຫາງານ ຫຼື ຈະຖືກນຳຕົວເຂົ້າສູ່ຂະບວນການຍຸຕິທຳ. ໄດ້ມີການຍົກປະເດັນສິ່ງທ້າທາຍຂຶ້ນ ໂດຍສະເພາະໃນກໍລະນີທີ່ຜູ້ຖືກເຄາະຮ້າຍ ຖືກຄ້າມະນຸດໄປປະເທດປາຍທາງ (ຊີເຣຍ, ຊາອຸດີ ອາຣະເບຍ ຫຼື UAE ເປັນຕົ້ນ) ເຖິງແມ່ນວ່າພວກເຂົາອາດຈະຖືກຈັດຫາໂດຍຄົນຟີລິບປິນກໍຕາມ. ສິ່ງທ້າທາຍໃນການຍຶດໝັ້ນຫຼັກການບໍ່ລົງໂທດໃນເຂດອຳນາດສານຕ່າງໆໄດ້ຖືກຍົກຂຶ້ນ ໃນບໍລິບົດທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຄົນຟີລິປິນ ໃນອຸດສາຫະກຳການປະມົງ ໄດ້ຖືກດຳເນີນຄະດີນອກປະເທດຟີລິບ ປິນ, ສິ່ງຜົນໃຫ້ເກີດສິ່ງທ້າທາຍຕໍ່ກັບຜູ້ບັງຄັບໃຊ້ກົດໝາຍ ແລະ ໄອຍະການທ້ອງຖິ່ນ. ຄຽງຄູ່ກັນນັ້ນ, ການປະຕິບັດທີ່ ເປັນຕົວແບບທີ່ດີ ກໍໄດ້ຖືກຍົກຂຶ້ນ ໃນຂະບວນການທີ່ຜູ້ຖືກເຄາະຮ້າຍຄົນຟີລິບປິນໃນປະເທດຊີເຣຍ ທີ່ກັບບ້ານພ້ອມກັບ ຄຳໃຫ້ການທີ່ໄດ້ກະກຽມໄວ້, ເຊິ່ງມັນຊ່ວຍໃນການຫຼຸດພາລະຂອງເຂົາເຈົ້າໃນເວລາກັບຄືນບ້ານ. ໄດ້ມີການເນັ້ນໜັກຕໍ່ ກັບການສ້າງຄວາມເຂັ້ມແຂງໃຫ້ແກ່ການຮ່ວມມື - ລວມທັງໃນລະດັບເຈົ້າໜ້າທີ່ຕຳຫຼວດ-ຕໍ່-ເຈົ້າໜ້າທີ່ຕຳຫຼວດ ລະຫວ່າງ ຟີລິບປິນ ແລະ ບັນດາປະເທດທີ່ສຳຄັນເຊັ່ນ ມາເລເຊຍ ແລະ ສິງກະໂປ ເພື່ອຍຶດໝັ້ນຫຼັກການບໍ່ລົງໂທດ.

## ສິ່ງທ້າທາຍໃນການກຳນົດຕົວຜູ້ຖືກເຄາະຮ້າຍ

**ການກຳນົດຕົວຜູ້ຖືກເຄາະຮ້າຍ ແລະ ການບໍ່ລົງໂທດ:** ມີການຍອມຮັບຢ່າງກວ້າງຂວາງຕໍ່ກັບຂໍ້ເທັດຈິງທີ່ວ່າ ຜູ້ຖືກເຄາະ ຮ້າຍທີ່ໄດ້ຮັບການກຳນົດຕົວ ບໍ່ຄວນຈະຖືກລົງໂທດສຳລັບຄວາມຜິດ ໂດຍການກຳນົດຕົວຜູ້ຖືກເຄາະ ຮ້າຍໃນເບື້ອງຕົ້ນ ມີຄວາມສຳຄັນຕໍ່ກັບສິ່ງນີ້. ໄດ້ມີການຍົກໃຫ້ເຫັນສອງສາມຕົວຢ່າງທີ່ຜູ້ຖືກເຄາະຮ້າຍທີ່ໄດ້ຮັບການ ກຳນົດຕົວ ຖືກດຳເນີນຄະດີສຳລັບຄວາມຜິດ ແຕ່ມີຄວາມກັງວົນ (ໂດຍສະເພາະໜ່ວຍງານທີ່ບໍ່ແມ່ນລັດຖະບານ) ກ່ຽວກັບຜູ້ຖືກເຄາະຮ້າຍ ບໍ່ໄດ້ຮັບການກຳນົດຕົວຢ່າງມີປະສິດທິພາບ ແລະ ບໍ່ໄດ້ຮັບການປົກປ້ອງຈາກການລົງໂທດ.

**ຄວາມຈຳເປັນໃນການເອົາຊະນະສິ່ງທ້າທາຍໃນການກຳນົດຕົວຜູ້ຖືກເຄາະຮ້າຍ:** ມີການຍົກໃຫ້ເຫັນສິ່ງ ທ້າທາຍ ຕໍ່ກັບຂໍ້ເທັດຈິງທີ່ວ່າຜູ້ຖືກເຄາະຮ້າຍມັກຈະບໍ່ກຳນົດຕົນເອງໃນຖານະຜູ້ຖືກເຄາະຮ້າຍ ແລະ ອາດຈະກຳ ນົດໃນຖານະຜູ້ກະທຳຜິດ ສຳລັບຄວາມຜິດທີ່ພວກເຂົາໄດ້ກະທຳໃນເວລາທີ່ຖືກຄ້າມະນຸດ. ຕໍ່ກັບປະເດັນນີ້, ຜູ້ ປະຕິບັດຕົວຈິງ ຕ້ອງມີຄວາມເຂົ້າໃຈ ຢ່າງເລິກເຊິ່ງວ່າ ຜູ້ຄ້າມະນຸດ ໄດ້ມີການລ່ວງລະເມີດຄວາມສ່ຽງ ຫຼື ຄວາມ ອ່ອນແອຂອງຜູ້ຖືກເຄາະຮ້າຍແນວໃດ, ເພື່ອໃຫ້ ພວກເຂົາສາມາດກຳນົດຕົວຜູ້ຖືກເຄາະຮ້າຍ ຜູ້ທີ່ຖືກຄ້າມະນຸດ ດ້ວຍວິທີການທີ່ລະອຽດອ່ອນທີ່ບໍ່ມີການນຳໃຊ້ການບັງຄັບ ຫຼື ຄວາມຮຸນແຮງໄດ້ດີຂຶ້ນ. ຄວາມສຳຄັນໃນການແນະ ນຳ ເພື່ອສະໜັບສະໜູນການກຳນົດຕົວຢ່າງມີປະສິດທິພາບ ແລະ ທັນທີ ໄດ້ຖືກເນັ້ນໜັກວ່າເປັນຫົວໃຈສຳຄັນຂອງ ຫຼັກການບໍ່ລົງໂທດ ຄຽງຄູ່ກັບຄວາມຈຳເປັນຂອງຜູ້ທີ່ມີໜ້າທີ່ຮັບຜິດ ຊອບໃນການສື່ສານກັບຜູ້ຖືກເຄາະຮ້າຍຢ່າງມີ ປະສິດທິພາບກ່ຽວກັບການປົກປ້ອງທາງດ້ານກົດໝາຍ ລວມທັງ ການບໍ່ ລົງໂທດ. ໄດ້ມີການກ່າວເຖິງສິ່ງທ້າທາຍທີ່ ສຳຄັນໃນການກັ່ນກອງຄົນຕ່າງປະເທດທີ່ລະເມີດການເຂົ້າ-ອອກເມືອງ; ບົດ ບາດຫຼັກຂອງໜ່ວຍງານກວດຄົນເຂົ້າ- ອອກເມືອງ ແມ່ນການກຳນົດຕົວຜູ້ທີ່ລະເມີດການເຂົ້າ-ອອກເມືອງ ບໍ່ແມ່ນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ເຮັດ ໃຫ້ບໍ່ມີຄວາມຊັດເຈນວ່າຈຸດໃດທີ່ຜູ້ທີ່ອາດຈະເປັນຜູ້ກະທຳຜິດໃນການເຂົ້າ-ອອກເມືອງ ຖືກສົ່ງຕໍ່ໄປຫາໜ່ວຍງານ ບັງຄັບໃຊ້ກົດໝາຍ ເພື່ອກັ່ນກອງຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

**ການກຳນົດຕົວຜູ້ຖືກເຄາະຮ້າຍໃນໄລຍະຂະບວນການຍຸຕິທຳທາງອາຍາ ແລະ ການນຳໃຊ້ຫຼັກການບໍ່ ລົງໂທດ:** ໄດ້ມີຄຳ ຖາມຈຸດໃດທີ່ມີການກຳນົດຕົວຜູ້ຖືກເຄາະຮ້າຍ ແລະ ໃຜມີໜ້າທີ່ຮັບຜິດຊອບໃນການກຳນົດຕົວ ເຂົາເຈົ້າຢ່າງເປັນທາງການ. ຕົວຢ່າງ ມີສະຖານະການເກີດຂຶ້ນໃນບໍລິບົດທີ່ມີການໄຕ່ສວນຄະດີ ທີ່ຊີ້ໃຫ້ເຫັນວ່າມີບາງ ອົງປະກອບຂອງການຄ້າມະນຸດ, ບຸກຄົນທີ່ຖືກໄຕ່ສວນໃນທີ່ປະຊຸມສານ ພິຈາລະນາວ່າ 'ໄດ້ຖືກກຳນົດຕົວ' ແລ້ວບໍ່ ໃນຈຸດນີ້? ຕົວຢ່າງ ກໍລະນີເດັກ ທີ່ຖືກຕັ້ງຂໍ້ຫາຄວາມຜິດທີ່ກ່ຽວຂ້ອງກັບຢາເສບຕິດ ເຊິ່ງຍັງບໍ່ໄດ້ຮັບການກຳນົດຕົວ ໃນຖານະຜູ້ຄ້າ ແຕ່ວ່າໃນລະຫວ່າງໄຕ່ ສວນເຂົາເຈົ້ານັ້ນ ປາກົດວ່າພວກເຂົາເຄີຍຖືກຄ້າມະນຸດ. ພວກເຂົາໄດ້ຖືກໂຈະ ການລົງໂທດ ແຕ່ມີຄວາມຢ້ານກົວຫຼາຍ ທີ່ຈະຍື່ນຟ້ອງ ແລະ ຕັ້ງຂໍ້ຫາຕໍ່ກັບຜູ້ຄ້າມະນຸດ. ມີການຕັ້ງຄຳຖາມກ່ຽວກັບ ສິ່ງທ້າທາຍ ຂອງຄວາມສົມດູນຂອງສົມມຸດຕິຖານວ່າບຸກຄົນທີ່ເປັນຜູ້ຖືກເຄາະຮ້າຍຈາກມຸມມອງທີ່ໄດ້ຮັບການ ປົກປ້ອງຕາມກົດໝາຍ ແລະ ການຊອກຫາສາເຫດທີ່ ເປັນໄປໄດ້ຂອງການຄ້າມະນຸດຈາກມູມມອງຂອງໄອຍະການ ແລະ ໃຜເປັນຜູ້ຕັດສິນເຫຼົ່ານີ້. ມີການຍົກໃຫ້ເຫັນເຖິງການປະຕິບັດທີ່ເປັນຕົວແບບທີ່ດີ ຜູ້ປະຕິບັດຕົວຈິງ ມີຄວາມ ຜິດພາດໃນການນຳໃຊ້ສົມມຸດຕິຖານທີ່ວ່າບຸກຄົນດັ່ງກ່າວເປັນຜູ້ຖືກເຄາະຮ້າຍ ເພື່ອບໍ່ໃຫ້ລົງໂທດພວກເຂົາ ໂດຍບໍ່ ເຮັດໃຫ້ການລົງໂທດເຂົາເຈົ້ານັ້ນ ຂຶ້ນກັບການລົງໂທດຜູ້ຄ້າມະນຸດ.

## ການລົງໂທດຜູ້ຖືກເຄາະຮ້າຍໃນພາກປະຕິບັດຕົວຈິງ

ການດຳເນີນຄະດີຜູ້ຖືກເຄາະຮ້າຍສຳລັບຄວາມຜິດກ່ຽວກັບການຄ້າມະນຸດ: ມີການສະເໜີໃຫ້ເຫັນວ່າບາງກໍລະນີທີ່ ຜູ້ທີ່ ອາດຈະເປັນຜູ້ຖືກເຄາະຮ້າຍ ຖືກດຳເນີນຄະດີສຳລັບຄວາມຜິດທີ່ກ່ຽວຂ້ອງກັບການຄ້າມະນຸດ. ໃນປະຊາຊົນ ທຽບໃສ່ ຣູດ ເດລາ ໂຣຊາ ອາຍ ລິກິໂນ (Ruth Dela Rosa y Likino) ທີ່ຮ້ອງວ່າ “ແຊລລີ (Sally)”, ຄະດີອາຍາ ເລກທີ 13-9820 ແລະ 13-9821 ປີ 2013, ການດຳເນີນຄະດີ ມີການນຳສະເໜີຫຼັກຖານທີ່ຈຳກັດສະເພາະ ຄຳໃຫ້

ການຂອງຜູ້ຖືກເຄາະຮ້າຍ ແລະ ຫຼັກຖານທາງນິຕິວິທະຍາວ່າການມີເພດສຳພັນເກີດຂຶ້ນ ແຕ່ກັບບໍ່ມີນຳເອົາຫຼັກຖານທີ່ອາດຈະຕົກເປັນຜູ້ຖືກເຄາະຮ້າຍຂອງຈຳເລີຍ ລວມທັງ ຫຼັກຖານຂອງການຂົ່ມຂູ່ ຫຼື ນຳໃຊ້ ຫຼື ບັງຄັບ ຫຼື ການບັງຄັບອື່ນໆ ເພື່ອໃຫ້ມີການພົວພັນກັບຜູ້ຖືກເຄາະຮ້າຍ-ຈຳເລີຍ.[119] ໃນປະຊາຊົນ ທຽບໃສ່ ເຈເນັດ ຈາວາ ໂອໄນດາ (Janet Java Onida) ຄະດີອາຍາເລກທີ Q-08-151971, 2013 ທີ່ກ່ຽວຂ້ອງກັບການຄ້າມະນຸດຈາກຟີລິບປິນໄປສິງກະໂປ, ສານຮັບຮູ້ການເປັນຜູ້ຖືກເຄາະຮ້າຍຂອງຈຳເລີຍ, ແຕ່ກໍຍັງດຳເນີນຄະດີຕໍ່ກັບລາວ. ໃນຄະດີດັ່ງກ່າວ, ຈຳເລີຍທີ່ເປັນຜູ້ຖືກເຄາະຮ້າຍ ໄດ້ຄ້າເດັກຍິງອີກຄົນ ໃນຂະນະທີ່ລາວກໍຖືກລ່ວງລະເມີດ. ສານໄດ້ຕັດສິນໃຫ້ຈຳເລີຍຕິດຄຸກ 20 ປີ ເຖິງຈະມີການກ່າວ: "ເຖິງວ່າສານຈະຮູ້ສຶກວ່າຜູ້ຖືກຫາເປັນຜູ້ຖືກເຄາະຮ້າຍທີ່ຖືກລ່ວງລະເມີດ, ຫຼັກຖານທີ່ຖືກນຳສະເໜີສະແດງໃຫ້ເຫັນຊັດເຈນວ່າ ໃນສ່ວນທີ່ກ່ຽວຂ້ອງກັບຜູ້ຮ້ອງຟ້ອງ [ບໍ່ລະບຸຊື່] ຜູ້ຖືກຫາ ເຈເນັດ ຈາວາ ໂອໄນດາ ເປັນໜຶ່ງໃນຜູ້ລ່ວງລະເມີດ ແລະ ເປັນການກະທຳທີ່ລະເມີດກົດໝາຍ."[120]

**ການດຳເນີນຄະດີຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ຜູ້ອື່ນໆໃນອຸດສາຫະກຳການບໍລິການທາງເພດ:** ມີຫຼາຍຄວາມຄິດເຫັນກ່ຽວກັບປະໂຫຍດຂອງກົດໝາຍໃນການປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດສຳລັບອາຊະຍາກຳທີ່ກ່ຽວຂ້ອງກັບໂສເພນີ. ໜ່ວຍງານທີ່ບໍ່ແມ່ນລັດຖະບານ ໄດ້ຊົມເຊີຍຕໍ່ກັບພາກທີ 17 ແຕ່ກໍຊີ້ໃຫ້ເຫັນເຖິງຄວາມສາມາດຂອງຜູ້ປະຕິບັດຕົວຈິງທີ່ຍັງບໍ່ພຽງພໍໃນການນຳໃຊ້ຫຼັກການດັ່ງກ່າວໃນພາກປະຕິບັດຕົວຈິງ ແລະ ຕຳນິການດຳເນີນຄະດີກັບແມ່ຍິງທີ່ມີສ່ວນຮ່ວມໃນອຸດສາຫະກຳການບໍລິການທາງເພດ. ການຂາດການຮັບຮູ້ຫຼັກການບໍ່ລົງໂທດ ໄດ້ຖືກພິຈາລະນາ ໂດຍຜູ້ຕອບທີ່ບໍ່ແມ່ນຝ່າຍລັດບາງທ່ານ ເຊິ່ງເປັນສິ່ງທີ່ແຜ່ຫຼາຍ ໂດຍມີການກ່າວ 'ຕຳນິຜູ້ຖືກເຄາະຮ້າຍ' ຢ່າງຫຼວງຫຼາຍ. ມີການຕຳນິແນວຄວາມຄິດຂອງເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ຜູ້ທີ່ກະທຳຄວາມຜິດເອງ ຕໍ່ກັບແມ່ຍິງໃນອຸດສາຫະກຳການບໍລິການທາງເພດ ລວມທັງ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໃນລະຫວ່າງກຸ່ມຄົນຂອງເຂົາເຈົ້ານຳ. ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ໄດ້ຖືກພິຈາລະນາວ່າ ເປັນການຫຼຸດຈຳນວນເຫດການຂອງແມ່ຍິງໃນອຸດສາຫະກຳການບໍລິການທາງເພດ ທີ່ໄດ້ຖືກຕັ້ງຂໍ້ຫາການເປັນໂສເພນີ; ມີການລາຍງານອາຊະຍາກຳທີ່ຮຸນແຮງ ທີ່ເກີດຂຶ້ນກ່ອນປີ 2015 ທີ່ເຈົ້າໜ້າທີ່ຕຳຫຼວດ ຈະກະທຳຕໍ່ກັບແມ່ຍິງໃນອຸດສາຫະກຳການບໍລິການທາງເພດ ລວມທັງການຂົ່ມຂູ່ເຂົາເຈົ້າດ້ວຍການຈຳຄຸກ ເວັ້ນແຕ່ພວກເຂົາຈະຍອມມີເພດສຳພັນ. ເຖິງຢ່າງໃດກໍຕາມ ມີຄວາມກັງວົນວ່າຍັງມີວັດທະນະທຳ ການຕັ້ງຂໍ້ຫາແມ່ຍິງໃນອຸດສາຫະກຳການບໍລິການທາງເພດ, ຖ້າບໍ່ແມ່ນສຳລັບການເປັນໂສເພນີ ຫຼາຍກວ່າ ຄວາມຜິດໃນສະຖານອື່ນໆ.

**ການລົງໂທດແຮງງານຟີລິບປິນຢູ່ຕ່າງປະເທດ () ທີ່ກັບຄືນປະເທດ:** ມີການລາຍງານວ່າ OFW ທີ່ກັບຄືນປະເທດ ໂດຍທົ່ວໄປແລ້ວບໍ່ໄດ້ຖືກຕັ້ງຂໍ້ຫາການລະເມີດການເຂົ້າ-ອອກເມືອງ ໃນເວລາທີ່ພວກເຂົາກັບຄືນປະເທດ ເຖິງແມ່ນວ່າ ພວກເຂົາໄດ້ກະທຳຄວາມຜິດພາຍໃຕ້ *ກົດໝາຍວ່າດ້ວຍໜັງສືເດີນທາງ ປີ 1996* ເຖິງວ່າຈະມີຂໍ້ຍົກເວັ້ນ. ຍັງມີຄວາມ ຄິດເຫັນວ່າມີເຈົ້າຫນ້າທີ່ບັງຄັບໃຊ້ກົດໝາຍທີ່ໃຈຮ້ອນບາງທ່ານນັ້ນ ອາດໃຊ້ອຳນາດໃນການຂົ່ມຂູ່ ການວາງຄວາມຜິດທີ່ກ່ຽວຂ້ອງກັບໜັງສືເດີນທາງຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເພື່ອຮັບປະກັນການຮ່ວມມືຂອງເຂົາເຈົ້າ, ເປັນການຂົ່ມຂູ່ຂອງການລົງໂທດທີ່ກ່ຽວຂ້ອງ ຫຼາຍກວ່າການລົງໂທດຕົວຈິງ. ແຕ່ວ່າ ນອກຈາກບັນດາຂໍ້ຍົກເວັ້ນເຫຼົ່ານີ້ແລ້ວ ຍັງມີຄວາມເປັນເອກະພາບທົ່ວໄປທີ່ວ່າ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ກັບຄືນປະເທດຈະບໍ່ຖືກຕັ້ງຂໍ້ຫາສຳລັບຄວາມຜິດທີ່ກ່ຽວຂ້ອງກັບການເຂົ້າ-ອອກເມືອງ ແລະ ຄວາມຜິດທີ່ກ່ຽວຂ້ອງກັບເອກະສານ, ເຖິງວ່າບາງຄົນເຄີຍຖືກລົງໂທດໃນເຂດອຳນາດສານຕ່າງປະເທດກ່ອນກັບຄືນບ້ານກໍຕາມ.

**ການລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຄົນຟີລິບປິນໃນຕ່າງປະເທດ:** ຜູ້ເຂົ້າຮ່ວມໄດ້ກ່າວເຖິງໃນກໍລະນີທີ່ແຮງງານຟີລິບປິນຢູ່ຕ່າງປະເທດ OFW ທີ່ຖືກດຳເນີນຄະດີໃນປະເທດຕາເວັນອອກກາງ, ລວມທັງ ຄວາມ

---

119 ອົງການສະຫະປະຊາຊາດເພື່ອຕ້ານຢາເສບຕິດ ແລະ ອາຊະຍາກຳ, *ຜູ້ຖືກເຄາະຮ້າຍແມ່ຍິງ ສຳລັບການລ່ວງລະເມີດທາງເພດ ໃນຖານະຈຳເລີຍ: ການວິເຄາະກໍລະນີທາງດ້ານກົດໝາຍ* (ອົງການສະຫະປະຊາຊາດ, ວຽນນາ 2020) 15.

120 ອົງການສະຫະປະຊາຊາດເພື່ອຕ້ານຢາເສບຕິດ ແລະ ອາຊະຍາກຳ, *ຜູ້ຖືກເຄາະຮ້າຍແມ່ຍິງ ສຳລັບການລ່ວງລະເມີດທາງເພດ ໃນຖານະຈຳເລີຍ: ການວິເຄາະກໍລະນີທາງດ້ານກົດໝາຍ* (ອົງການສະຫະປະຊາຊາດ, ວຽນນາ 2020) 96.

ຜິດທີ່ກ່ຽວຂ້ອງກັບ ສັນຍາ ຫຼື ການລະເມີດຄວາມເປັນສ່ວນຕົວ, ການຫຼົບໜີ ແລະ ອາຊະຍາກຳທີ່ກ່ຽວຂ້ອງກັບການເຂົ້າ-ອອກເມືອງ ລວມທັງ ການຄ້າມະນຸດ. ແຮງງານຟີລິບປິນຢູ່ຕ່າງປະເທດ OFW ໄດ້ຖືກຕັ້ງຂໍ້ຫາການຄ້າມະນຸດ ແລະ ຖືກກັກຂັງໃນຟີລິບປິນ ເຖິງແມ່ນວ່ານາຍຈ້າງຂອງລາວໄດ້ນຳໃຊ້ຮູບໂປຟາຍ ໃນສັງຄົມອອນລາຍຂອງລາວ ເພື່ອຈັດຫາ/ຊອກຫາ ຜູ້ອື່ນໆຈາກຟີ ລິບປິນ. ຄວາມສ່ຽງຂອງການດຳເນີນຄະດີ ສຳລັບຄວາມຜິດທີ່ກ່ຽວຂ້ອງກັບການເຂົ້າ-ອອກເມືອງ ໂດຍສະເພາະ ໃນກໍລະນີທີ່ OFW ຕົກຢູ່ໃນສະຖານະທີ່ຜິດກົດໝາຍ (ດັ່ງທີ່ເກີດຂຶ້ນໃນຊ່ວງວິກິດຂອງໂຄວິດ) ແລະ ບໍ່ສາມາດໄປຫາເຈົ້າໜ້າທີ່ໄດ້ ເນື່ອງຈາກຢ້ານກົວທີ່ຈະຖືກລົງໂທດ. ໃນບາງກໍລະນີ, ນາຍຈ້າງໄດ້ໃຊ້ການຄຸກຄາມຂອງຂໍ້ຫາເຫຼົ່ານີ້ ລວມທັງ ໜີ້ສິນຈຳນວນຫຼາຍທີ່ OFW ຕ້ອງແບກຫາບ ເພື່ອຄວບຄຸມເຂົາເຈົ້າ. ຄະດີຍັງມີການກ່າວເຖິງບຸກຄົນທີ່ຖືກຄ້າມະນຸດ ໃນການປະມົງ ທີ່ອິນໂດເນເຊຍ ທີ່ຖືກດຳເນີນຄະດີ ແລະ ຖືກເນລະເທດກັບປະເທດຟີລິບປິນ; ບຸກຄົນຖືກລ່ວງລະເມີດ ໃນຖານະທີ່ຖືກຫຼອກໃຫ້ຂົນສິ່ງຢາເສບຕິດ ເຊິ່ງປະເຊີນໜ້າກັບຄວາມຜິດທີ່ກ່ຽວຂ້ອງກັບຢາເສບຕິດ ດ້ວຍການກຳນົດ ຕົວໃນທາງບວກຂອງບຸກຄົນໜຶ່ງ ສິ່ງຜົນໃຫ້ມີການຫຼຸດຜ່ອນໂທດເທົ່ານັ້ນແຕ່ບໍ່ແມ່ນການພົ້ນຜິດ. ກໍລະນີທີ່ສຳຄັນ ແມ່ນກໍລະນີຂອງ ແມຣີ ເຈນ ເວໂລໂຊ ທີ່ຖືກຕັດສິນໂທດປະຫານຊີວິດ ສຳລັບຄວາມຜິດໃນການລັກລອບນຳເຂົ້າຢາເຮໂລອິນ ເຂົ້າປະເທດອິນໂດເນເຊຍ (ເບິ່ງຕາຕະລາງທີ 5 ຂ້າງເທິງ). OFW ຍັງຖືກຕັ້ງຂໍ້ສັງເກດວ່າ ຕ້ອງປະເຊີນໜ້າກັບການຖືກຕັ້ງຂໍ້ຫາໝິ່ນປະໝາດໃນຕ່າງປະເທດ ໃນບາງປະເທດ ແລະ ມີບັນຫາກັບເຈົ້າໜ້າທີ່ຕຳຫຼວດສາສະໜາ ໃນປະເທດຕາເວັນ ອອກກາງ ສຳລັບການລະເມີດບັນຖັດຖານທາງສາສະໜາ ເຖິງວ່າມັນຍັງບໍ່ມີຄວາມຊັດເຈນ ທີ່ OFW ໃນກໍລະນີເຫຼົ່ານີ້ ທີ່ຕົກເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

**ຜູ້ຖືກເຄາະຮ້າຍທີ່ເປັນເດັກ ເປັນກຸ່ມສ່ຽງທີ່ຈະຖືກລົງໂທດ:** ມີການຍົກໃຫ້ເຫັນເຖິງຄວາມສ່ຽງທີ່ອາດຈະເກີດຂຶ້ນໃນການລົງໂທດ ໂດຍສະເພາະທີ່ກ່ຽວຂ້ອງກັບການຂູດຮີດທາງເພດຂອງເດັກ ທາງອອນລາຍ (OSEC) ເຊິ່ງເປັນການມີສ່ວນຮ່ວມຂອງເດັກ ໃນການຈັດຫາ/ຊອກຫາ ເດັກຄົນອື່ນ ເພື່ອເຮັດກິດຈະກຳທາງເພດໃນທາງອອນລາຍ, ຜູ້ທີ່ບໍ່ຮູ້ວ່າເປັນເດັກ ຈົນກວ່າພາຍຫຼັງທີ່ຖືກກັກຂັງ.[121] ເຊັ່ນດຽວກັບເດັກ ທີ່ມີອາຍຸລະຫວ່າງ 15 ຫາ 18 ປີ ທີ່ມີສ່ວນຮ່ວມກັບ ການຄ້າຢາເສບຕິດ ກໍຖືກລະບຸວ່າມີຄວາມສ່ຽງສະເພາະ ເນື່ອງຈາກວ່າກົດໝາຍໄດ້ຍົກເວັ້ນເດັກທີ່ອາຍຸຕ່ຳກວ່າ 15 ປີ ຈາກຄວາມຮັບຜິດຊອບທາງອາຍາ ເຊິ່ງເຮັດໃຫ້ເດັກທີ່ອາຍຸລະຫວ່າງ 15 ຫາ 18 ປີ ມີຄວາມສ່ຽງທີ່ຈະຖືກລົງໂທດ. ຄວາມ ສ່ຽງນີ້ຖືກຕັ້ງຂໍ້ສັງເກດວ່າມັນຮຸນແຮງຂຶ້ນຈາກ ‘ສົງຄາມຢາເສບຕິດ’ ຂອງລັດຖະບານ ທີ່ອາດເຮັດໃຫ້ເຈົ້າໜ້າທີ່ແຂງກະດ້າງ ຕໍ່ກັບແນວຄວາມຄິດທີ່ວ່າຜູ້ກະທຳຜິດ ໃນຂໍ້ເທັດຈິງວ່າທີ່ເປັນ ‘ຜູ້ຖືກເຄາະຮ້າຍ’ ມີສິດທີ່ຈະບໍ່ຖືກລົງໂທດ. ໃນຈຸດນີ້, ຜູ້ຕອບ ໄດ້ຊີ້ໃຫ້ເຫັນວ່າ ກົດໝາຍວ່າດ້ວຍສາທາລະນະ 9344 ວ່າດ້ວຍເດັກມີທ່າແຮງບົນພື້ນຖານທີ່ຈະບໍ່ດຳເນີນຄະດີ ຕໍ່ກັບເດັກ.

**ເດັກທີ່ໄດ້ຮັບການປະຕິບັດທີ່ຂັດແຍ່ງກັບກົດໝາຍ ຫຼາຍກວ່າ ທີ່ຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ:** ຜູ້ຕອບທ່ານໜຶ່ງ ໄດ້ປະສົບກັບຄະດີເດັກທີ່ຖືກຄ້າມະນຸດສຳລັບການຂູດຮີດແຮງງານ ທີ່ກະທຳຄວາມຜິດໃນສະຖານການລັກຊັບ ເນື່ອງຈາກຄວາມຫິວໂຫຍຂອງເຂົາເຈົ້າ, ເຊິ່ງຕໍ່ມາໄດ້ຖືກພິຈາລະນາວ່າ ເດັກນັ້ນມີຄວາມຂັດແຍ່ງໃນກົດໝາຍ ຫຼາຍກວ່າ ທີ່ຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ຄວາມແຕກຕ່າງນີ້ເກີດຂຶ້ນຈາກຜູ້ສະໜອງການດ້ານສະຫວັດດີການສັງຄົມ ຂັ້ນທ້ອງຖິ່ນ, ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ແລະ ໄອຍະການ ບໍ່ຮູ້ວິທີການເຊື່ອມໂຍງກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ (ກົດໝາຍວ່າດ້ວຍສາທາລະນະ 9208) ແລະ ກົດໝາຍທີ່ກ່ຽວຂ້ອງກັບເດັກ (ກົດໝາຍວ່າດ້ວຍສາທາລະນະ 9344) ເພື່ອນຳໃຊ້ກົດໝາຍວ່າດ້ວຍການປົກປ້ອງຢ່າງມີປະສິດທິພາບ. ຍັງມີການຍົກໃຫ້ເຫັນເຖິງສິ່ງທ້າທາຍໃນການນຳໃຊ້ບັນດາເຄື່ອງມືເຫຼົ່ານີ້ ເພື່ອປົກປ້ອງເດັກທີ່ຖືກຄ້າມະນຸດ ເຂົ້າໃນຂໍ້ຂັດແຍ່ງດ້ານອາວຸດ/ກຳລັງປະກອບອາວຸດໃນພາກໃຕ້ ໂດຍມີເດັກບາງຄົນຖືກຈຳຄຸກໃນຖານະຜູ້ກະທຳຜິດ ຫຼາຍກວ່າທີ່ຈະຖືກປົກປ້ອງ ໃນຖານະຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

121 ໄດ້ມີການສັງເກດເຖິງຄວາມສະລັບຊັບຊ້ອນໃນບໍລິບົດຂອງ OSEC ໃນສະຖານະການທີ່ຜູ້ຖືກເຄາະຮ້າຍທີ່ເປັນເດັກ ທີ່ສ້າງຮູບພາບດ້ວຍຕົນເອງ ແລະ ແຈກຢາຍດ້ວຍຕົນເອງ. ໃນກໍລະນີດັ່ງກ່າວ ມັນງ່າຍກວ່າໃນການພິຈາລະວ່າຜູ້ທີ່ອາຍຸ 15 ປີ ເປັນເດັກ, ໃນຂະນະທີ່ຜູ້ທີ່ອາຍຸແກ່ ຕົກຢູ່ໃນພື້ນທີ່ສີເທົາ ໃນກໍລະນີທີ່ວ່າພວກເຂົາຄວນຈະຖືກຍົກເວັ້ນຈາກການດຳເນີນຄະດີ ຫຼື ບໍ່.

### ຫ້ອງທີ 6: ຄວາມສ່ຽງທີ່ຈະຖືກໂທດປະຫານຊີວິດ ສໍາລັບຜູ້ຖືກເຄາະຮ້າຍ ທີ່ເຫັນປ່ຽນຕົນເອງເປັນຜູ້ຄ້າມະນຸດ ໃນຟີລິບປິນ

ປັດຈຸບັນໂທດປະຫານຊີວິດ ບໍ່ໄດ້ຖືກນໍາໃຊ້ໃນຟີລິບປິນ ສໍາລັບຄວາມຜິດທີ່ກ່ຽວຂ້ອງກັບການຄ້າມະນຸດ. ເຖິງຢ່າງໃດກໍຕາມ, ສະພາທະນາຍຄວາມລະຫວ່າງປະເທດ (IBA) ໄດ້ຍົກໃຫ້ເຫັນເຖິງຄວາມກັງວົນກ່ຽວກັບຮ່າງກົດໝາຍວ່າດ້ວຍສະເພາະ (House Bill) ເລກທີ 1239 ທີ່ສະເໜີໃຫ້ມີການປັບປຸງກົດໝາຍວ່າດ້ວຍສາທາລະນະ ເລກທີ 9208 ເພື່ອໃຫ້ມີໂທດປະຫານຊີວິດສໍາລັບຄະດີຄ້າມະນຸດ ຕາມທີ່ກໍານົດໄວ້ໃນພາກທີ 6. IBA ຊີ້ໃຫ້ເຫັນວ່າການສະເໜີດັ່ງກ່າວຂັດກັບຄໍາໝັ້ນໝາຍຂອງລັດຖະບານຟີລິບປິນ ພາຍໃຕ້ສົນທິສັນຍາສະບັບທີສອງ ຕໍ່ກັບສົນທິສັນຍາວ່າດ້ວຍສິດທິທາງການເມືອງ ແລະ ພົນລະເມືອງ (ICCPR) ທີ່ຈະບໍ່ນໍາເອົາໂທດປະຫານຊີວິດມານໍາໃຊ້ອີກ. ພວກເຂົາຍັງລະບຸ ອີກວ່າຮ່າງກົດໝາຍ ບໍ່ໄດ້ສະທ້ອນໃຫ້ເຫັນເຖິງຄວາມສະຫຼັບຊັບຊ້ອນໃນການຄ້າມະນຸດ. ເປັນທີ່ໜ້າສັງເກດວ່າ ມາດຕະການໃນຟີລິບປິນ ເພື່ອປົກປ້ອງຜູ້ຖືກເຄາະຮ້າຍຈາກການລົງໂທດ ມີຄວາມສ່ຽງຈາກການນໍາສະເໜີຮ່າງກົດໝາຍສະບັບນີ້ ໃນກໍລະນີທີ່ຜູ້ຖືກເຄາະຮ້າຍ ໂດຍສະເພາະແມ່ຍິງ ທີ່ກາຍມາເປັນຜູ້ກະທໍາຜິດໃນສະຖານການຄ້າມະນຸດ. ນອກນັ້ນ ມັນຍັງເປັນການເປີດເຜີຍ ຕໍ່ກັບບຸກຄົນຜູ້ທີ່ບໍ່ກະທໍາຜິດຢ່າງຮ້າຍແຮງດ້ວຍຕົວເຂົາເຈົ້າເອງນັ້ນ ແຕ່ເປັນພຽງຜູ້ທີ່ມີບົດບາດເລັກນ້ອຍເທົ່ານັ້ນ ມີຄວາມສ່ຽງຕໍ່ກັບໂທດປະຫານຊີວິດ. ສະຫຼຸບແລ້ວ, ການປະກາດໃຊ້ຮ່າງກົດໝາຍ ຈະເປັນການຕໍ່ຕ້ານ ຄວາມພະຍາຍາມຢ່າງກວ້າງຂວາງໃນຟີລີປິນ ໃນການຕ້ານການຄ້າມະນຸດ ແລະ ປົກປ້ອງຜູ້ຖືກເຄາະຮ້າຍ.[122]

---

122 Gerry QC, Felicity., Karen Gomez Dumpit, Sara Kowal, Courtney Keefe, ການຄ້າມະນຸດ ແລະ ການນໍາສະເໜີໂທດປະຫານຊີວິດອີກຄັ້ງ, ວັນທີ 3 ເມສາ 2020, ສະພາທະນາຍຄວາມສາກົນ, ວັນທີ 3 ເມສາ 2020. www.ibanet.org ໄດ້ເຂົ້າໃນວັນທີ 30 ກັນຍາ 2021

## 2.8. ສິງກະໂປ

ເຈົ້າໜ້າທີ່ຂອງສິງກະໂປ ເລືອກທີ່ຈະບໍ່ເຂົ້າຮ່ວມກອງປະຊຸມປຶກສາຫາລືແບບໂຕະມົນ ສໍາລັບຈຸດປະສົງຂອງການຄົ້ນຄວ້ານີ້, ໝາຍຄວາມວ່າ ຂໍ້ມູນກ່ຽວກັບການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ສາມາດໄດ້ຮັບມາຈາກແຫຼ່ງຂໍ້ມູນແບບເປີດກວ້າງ ແລະ ຂໍ້ມູນແບບບລົງເລິກຈາກຊ່ຽວຊານເທົ່ານັ້ນ.

### ຫຼັກການບໍ່ລົງໂທດໃນກົດໝາຍ ແລະ ນະໂຍບາຍ

**ບໍ່ມີຂໍ້ກໍານົດການບໍ່ລົງໂທດທີ່ຊັດເຈນໃນກົດໝາຍ:** *ກົດໝາຍວ່າດ້ວຍການປ້ອງກັນການຄ້າມະນຸດ* ປີ 2014 (ເລກທີ 45 ຂອງປີ 2014) ບໍ່ມີຂໍ້ກໍານົດທີ່ສະເພາະໃນການປົກປ້ອງຜູ້ຖືກເຄາະຮ້າຍຈາກການລົງໂທດ ຫຼື ການດໍາເນີນຄະດີ. *ກົດໝາຍວ່າດ້ວຍເດັກ ແລະ ໄວໜຸ່ມ* (ເຊິ່ງກໍານົດໃຫ້ການຄ້າເດັກເປັນອາຊະຍາກໍາ ໃນມາດຕາ 12) ເຊິ່ງບໍ່ມີຂໍ້ກໍານົດທີ່ກ່ຽວຂ້ອງ. ບົດລາຍງານການຄ້າມະນຸດຂອງກະຊວງການຕ່າງປະເທດສະຫະລັດອາເມລິກາ ປີ 2020 ໄດ້ແນະນໍາວ່າສິງກະໂປຕ້ອງສ້າງຄວາມເຂັ້ມແຂງໃຫ້ແກ່ກອບກົດໝາຍຂອງຕົນ ເພື່ອສົ່ງເສີມການປົກປ້ອງຜູ້ຖືກເຄາະຮ້າຍຈາກການລົງໂທດສໍາລັບການກະທໍາທີ່ຜິດກົດໝາຍ ທີ່ພວກເຂົາຖືກບັງຄັບໃຫ້ກະທໍາ.[123]

**ການປ້ອງກັນຕາມກົດໝາຍທີ່ອາດຈະເກີດຂຶ້ນ ແລະ ຄວາມເຂົ້າໃຈກ່ຽວກັບການບັງຄັບ:** *ປະມວນກົດໝາຍອາຍາ* ປີ 2008 ກໍານົດຂໍ້ຍົກເວັ້ນທົ່ວໄປໃນພາກທີ IV ລວມທັງບາງກໍລະນີທີ່ອາດຈະກ່ຽວຂ້ອງກັບຄວາມຜິດ ທີ່ໄດ້ກະທໍາໂດຍ ຜູ້ຖືກຄ້າມະນຸດ ລວງທັງ ກໍລະນີມີຄວາມຢ້ານກົວກ່ຽວຂ້ອງ (ມາດຕາ 90) ຫຼື ກໍລະນີມີການບັງຄັບ (ມາດຕາ 94).

> *ການໃຫ້ຄວາມຍິນຍອມ ພາຍໃຕ້ຄວາມຢ້ານກົວ ຫຼື ໂດຍຄວາມເຂົ້າໃຈຜິດ ໂດຍບຸກຄົນທີ່ມີສະພາບ ຈິດໃຈທີ່ບໍ່ປົກກະຕິ ແລະ ອື່ນໆ; ແລະ ໃຫ້ໂດຍເດັກ*
>
> *90. ຄວາມຍິນຍອມ ທີ່ບໍ່ແມ່ນການຍິນຍອມ ຕາມເຈດຈໍານົງ ໃນພາກໃດໜຶ່ງຂອງປະມວນກົດ ໝາຍນີ້-------*
>
> *(a) ຖ້າຫາກຄວາມຍິນຍອມ ໄດ້ມອບໃຫ້ໂດຍບຸກຄົນ —*
>
> *(i) ຢູ່ພາຍໃຕ້ຄວາມຢ້ານກົວຕໍ່ການບາດເຈັບ ຫຼື ໃນສະພາວະຄວບຄຸມຕົນເອງແບບຜິດພາດ ຕໍ່ກັບບຸກຄົນ ຫຼື ບຸກຄົນອື່ນ ຫຼື*
>
> *(ii) ຢູ່ພາຍໃຕ້ຄວາມເຂົ້າໃຈຜິດຕໍ່ກັບຂໍ້ເທັດຈິງ ແລະ ບຸກຄົນທີ່ກະທໍາຮູ້ ຫຼື ມີເຫດຜົນທີ່ເຊື່ອໄດ້ວ່າ ການໃຫ້ຄວາມຍິນຍອມດັ່ງກ່າວ ເນື່ອງຈາກຄວາມຢ້ານກົວ ຫຼື ຄວາມເຂົ້າໃຈຜິດ;*
>
> *(b) ຖ້າຫາກການໃຫ້ຄວາມຍິນຍອມໂດຍບຸກຄົນ ຜູ້ທີ່ມີສະພາວະຈິດໃຈທີ່ບໍ່ປົກກະຕິ, ຄວາມບົກຜ່ອງທາງດ້ານຈິດໃຈ, ມຶນເມົາ ຫຼື ອິດທິພົນມາຈາກຢາເສບຕິດ ຫຼື ສານກະຕຸ້ນອື່ນ, ບໍ່ສາມາດເຂົ້າໃຈລັກສະນະ ແລະ ຜົນສະທ້ອນຂອງການໃຫ້ຄວາມຍິນຍອມ ຫຼື*
>
> *(c) ເວັ້ນແຕ່ສິ່ງທີ່ເກີດຂຶ້ນນັ້ນກົງກັນຂ້າມກັບບໍລິບົດ ຖ້າຫາກການໃຫ້ຄວາມຍິນຍອມໂດຍບຸກຄົນທີ່ອາຍຸຕໍ່າກວ່າ 12 ປີ.*
>
> *ການກະທໍາທີ່ບຸກຄົນຖືກບັງຄັບດ້ວຍການຂົ່ມຂູ່*
>
> *94. ຍົກເວັ້ນການຄາດຕະກໍາ ແລະ ຄວາມຜິດຕໍ່ລັດທີ່ມີໂທດປະຫານຊີວິດ, ບໍ່ມີສິ່ງໃດທີ່ແມ່ນຄວາມຜິດ ທີ່ກະທໍາໂດຍບຸກຄົນທີ່ຖືກບັງຄັບໃຫ້ກະທໍາ ໂດຍການຂົ່ມຂູ່, ເຊິ່ງໃນເວລາກະທໍານັ້ນ ມີສາເຫດອັນສົມເຫດສົມຜົນ ທີ່ເຮັດໃຫ້ເກີດຄວາມເຂົ້າໃຈວ່າ ຈະ*

---

123 ບົດລາຍງານການຄ້າມະນຸດ ປີ 2020: ສິງກະໂປ (ກະຊວງການຕ່າງປະເທດສະຫະລັດອາເມລິກາ 2020)

*ມີຄວາມຕາຍເກີດຂຶ້ນທັນທີແກ່ບຸກຄົນດັ່ງກ່າວ ຫຼື ບຸກຄົນອື່ນໃດທີ່ຈະເປັນຜົນສະທ້ອນທີ່ຕາມມາ;*

*ໂດຍວ່າບຸກຄົນທີ່ກະທຳນັ້ນ ບໍ່ໄດ້ກະທຳຕາມຄວາມຍິນຍອມຂອງຕົນເອງ ຫຼື ຈາກເຫດຜົນທີ່ເຮັດ ໃຫ້ເຂົ້າໃຈເຖິງອັນຕະລາຍຕໍ່ຕົນເອງຢ່າງສົມເຫດສົມຜົນ ຈົນເຖິງແກ່ຄວາມຕາຍທັນທີ, ເຮັດໃຫ້ບຸກຄົນດັ່ງກ່າວຢູ່ໃນສະຖານະການ ທີ່ຕົກຢູ່ພາຍໃຕ້ການບັງຄັບດັ່ງກ່າວ.*

*ສິດໃນການປ້ອງກັນສ່ວນຕົວຂອງຮ່າງກາຍ ແລະ ຊັບສິນ*

*97. ແຕ່ລະຄົນ ມີສິດພາຍໃຕ້ຂໍ້ຈຳກັດທີ່ກຳນົດໃນພາກທີ 99 ໃນການປ້ອງກັນຕົວ —*

*(a) ຮ່າງກາຍຂອງຕົນເອງ ແລະ ຂອງບຸກຄົນອື່ນ ຕໍ່ກັບການກະທຳຄວາມຜິດໃດ ໜຶ່ງທີ່ມີຜົນກະທົບຕໍ່ກັບຮ່າງກາຍມະນຸດ;*

*(b) ຕໍ່ຊັບສິນ ບໍ່ວ່າຈະເປັນສັງຫາລິມະຊັບ ຫຼື ອະສັງຫາລິມະຊັບຂອງຕົນເອງ ຫຼື ຂອງບຸກຄົນອື່ນ ຕໍ່ກັບການກະທຳ ເຊິ່ງເປັນຄວາມຜິດຕາມທີ່ກຳນົດໄວ້ໃນນິຍາມຂອງການລັກຊັບ, ການຍາດຍິງຊັບ, ການກໍ່ຄວາມເສຍຫາຍ ຫຼື ການລ່ວງລະເມີດທາງອາຍາ ຫຼື ທີ່ເປັນຄວາມພະຍາຍາມໃນການລັກຊັບ, ຍາດຊິງຊັບ, ກໍ່ຄວາມເສຍຫາຍ ຫຼື ການລ່ວງລະເມີດທາງອາຍາ.*

*ປະມວນກົດໝາຍອາຍາ* ໄດ້ໃຫ້ຄຳອະທິບາຍຕໍ່ກັບຂໍ້ກຳນົດຕໍ່ກັບຂໍ້ກຳນົດກ່ຽວກັບການບັງຄັບ ເຊິ່ງເອົາມາຈາກປະມວນກົດໝາຍຂອງອິນເດຍ 1860, ພາກທີ 94.

*ຄຳອະທິບາຍ 1. — ບຸກຄົນທີ່ ຕາມການຍິນຍອມຂອງຕົນເອງ ຫຼື ໂດຍເຫດຜົນຂອງການຂົ່ມຂູ່ ທີ່ຖືກທຸບຕີ, ການເຂົ້າຮ່ວມກຸ່ມແກ້ງໂຈນ ໂດຍຮູ້ລັກສະນະຂອງເຂົາເຈົ້າ, ບໍ່ມີສິດໄດ້ຮັບຜົນປະ ໂຫຍດຈາກການຍົກເວັ້ນນີ້ ເນື່ອງຈາກການຖືກບັງຄັບໂດຍກຸ່ມຄົນຂອງຕົນເອງ ໃຫ້ກະທຳສິ່ງໃດໜຶ່ງ ອັນເປັນຄວາມຜິດຕາມກົດໝາຍ.*

*ຄຳອະທິບາຍ 2. — ບຸກຄົນທີ່ ທີ່ຖືກໂດຍກຸ່ມແກ້ງໂຈນ ແລະ ຖືກບັງຄັບດ້ວຍການຂົ່ມຂູ່ເຖິງແກ່ ຄວາມຕາຍ ເພື່ອໃຫ້ກະທຳສິ່ງທີ່ເປັນຄວາມຜິດຕາມກົດໝາຍ — ຕົວຢ່າງ ຊ່າງຕີເຫຼັກ ຖືກບັງຄັບໃຫ້ນຳເອົາເຄື່ອງມືຂອງລາວ ແລະ ທຸບປະຕູເຮືອນໃຫ້ແກ່ກຸ່ມແກ້ງໂຈນ ເພື່ອໃຫ້ເຂົ້າໄປເຮືອນ ແລະ ປຸ້ນຈີ້ຊັບ — ມີສິດໄດ້ຮັບຜົນປະໂຫຍດຈາກການຍົກເວັ້ນນີ້.*

*[ປະມວນກົດໝາຍອາຍາຂອງອິນເດຍ 1860, s. 94]*

**ບໍ່ມີຫຼັກການບໍ່ລົງໂທດໃນນະໂຍບາຍ:** ເຖິງວ່າຈະບໍ່ມີຂໍ້ກຳນົດຫຼັກການບໍ່ລົງໂທດທີ່ຊັດເຈນໃນກົດໝາຍ, *ວິທີການແຫ່ງຊາດເພື່ອຕ້ານການຄ້າມະນຸດ ປີ 2016-2026* (ຄະນະສະເພາະກິດລະຫວ່າງໜ່ວຍງານຂອງສິງກະໂປເພື່ອຕ້ານການຄ້າມະນຸດ) ໄດ້ກຳນົດໄວ້ໃນພາກທີ່ກ່ຽວຂ້ອງກັບການປົກປ້ອງຜູ້ຖືກເຄາະຮ້າຍ: 'ພວກເຂົາບໍ່ຄວນຈະຖືກດຳເນີນຄະດີສຳລັບ ການລະເມີດກົດໝາຍວ່າດ້ວຍແຮງງານ/ຫຼື ກົດໝາຍວ່າດ້ວຍການເຂົ້າອອກ-ເມືອງ ຫຼື ການກະທຳໃດໜຶ່ງທີ່ພວກເຂົາ ໄດ້ມີສ່ວນຮ່ວມ ເຊິ່ງເປັນຜົນສະທ້ອນໂດຍກົງຂອງການຖືກຄ້າມະນຸດ.'[124] ບົດຖະແຫຼງດ້ານນະໂຍບາຍນີ້ ໄດ້ສະທ້ອນເຖິງວິທີການທີ່ອີງໃສ່ສາເຫດ ຕໍ່ກັບການບໍ່ລົງໂທດຜູ້ຖືກເຄາະຮ້າຍ ໃນຂະນະທີ່ໃນກົດໝາຍໄດ້ເອື່ອຍອີງເຖິງຮູບແບບຂອງການບັງຄັບ.

124 *ວິທີການແຫ່ງຊາດເພື່ອຕ້ານການຄ້າມະນຸດ 2016-2026* (ຄະນະເຮັດວຽກລະຫວ່າງໜ່ວຍງານຂອງສິງກະໂປເພື່ອຕ້ານການຄ້າມະນຸດ) 14. ສາມາດດາວໂຫຼດໄດ້ທີ່: https://www.mha.gov.sg/what-we-do/combating-trafficking-in-persons

## ການຕີຄວາມໝາຍຂອງຫຼັກການບໍ່ລົງໂທດ

**ຄວາມເຂົ້າໃຈກ່ຽວກັບຫຼັກການບໍ່ລົງໂທດ:** ເຖິງວ່າ *ກົດໝາຍວ່າດ້ວຍການປ້ອງກັນການຄ້າມະນຸດ ປີ 2014* ຈະບໍ່ມີຄວາມຊັດເຈນໃນການປົກປ້ອງຈາກການດຳເນີນຄະດີ ແຕ່ມີຄວາມເຂົ້າໃຈບາງປະການຕໍ່ກັບຂໍ້ເທັດຈິງທີ່ວ່າ ບຸກຄົນບໍ່ສາມາດ ມີຄວາມຮັບຜິດຊອບຕໍ່ກັບຄວາມຜິດ ຖ້າຂາດອົງປະກອບທາງດ້ານຈິດໃຈທີ່ຈຳເປັນ ໃນກໍລະນີທີ່ພວກເຂົາ ຖືກບັງຄັບໃຫ້ກະທຳຄວາມຜິດນັ້ນ. ໃນການຄົ້ນຄວ້າໃນປີ 2017 ອົງການເສລີພາບແຫ່ງອາຊີ (Liberty Asia) ໄດ້ກ່າວເຖິງການໂຕ້ວາທີຂອງລັດຖະສະພາ ທີ່ນຳໄປສູ່ການຜ່ານກົດໝາຍ, ຄວາມຄິດເຫັນຂອງທານ ຄຣິດໂຕເຟີ ເດີ ສູຊາ (Christopher de Souza, (ຜູ້ທີ່ວາງກົດໝາຍ ໃຫ້ເປັນຮ່າງກົດໝາຍ)), ໃນການຕອບສະໜອງຂອງຄຳແນະນຳ ທີ່ເປັນຄວນໃຫ້ມີການຍົກເວັ້ນຈາກການດຳເນີຄະດີ:

> *ໃນພາກປະຕິບັດຕົວຈິງ, ຂ້າພະເຈົ້າ ເຂົ້າໃຈວ່າເຈົ້າໜ້າທີ່ຂອງພວກເຮົາ ປົກກະຕິແລ້ວບໍ່ດຳເນີນຄະດີ ຜູ້ຖືກເຄາະຮ້າຍ ສຳລັບຄວາມຜິດທີ່ພວກເຂົາຖືກບັງຄັບໃຫ້ກະທຳ ທີ່ເປັນຜົນສະທ້ອນໂດຍກົງຈາກການຖືກຄ້າມະນຸດ ທີ່ຕົກເປັນຜູ້ຖືກເຄາະຮ້າຍ, ຂ້ອນຂ້າງງ່າຍດາຍ ເນື່ອງຈາກວ່າພວກເຂົາ ບໍ່ໄດ້ ຍອມຮັບ ຫຼື ຍິນຍອມ ແລະ ພວກເຂົາອາດຈະບໍ່ມີອົງປະກອບທາງດ້ານຈິດໃຈທີ່ຈຳເປັນ ຫຼື ການກະທຳທີ່ເປັນເຈດຕະນາຮ້າຍ (mens rea) ທີ່ໄດ້ກະທຳພາຍໃຕ້ການຖືກບັງຄັບ. ສະນັ້ນ, ຂ້າພະເຈົ້າ ຄິດວ່າຄວາມສະດວກສະບາຍບາງຢ່າງ ສາມາດໄດ້ມາຈາກບັນດາຫຼັກການທາງກົດໝາຍເຫຼົ່ານີ້. ພະນັກງານໄອຍະການໄດ້ເຮັດການປະເມີນໂດຍລະອຽດ ໂດຍອີງໃສ່ຂໍ້ເທັດຈິງທັງໝົດຂອງແຕ່ລະຄະດີ ຢ່າງນ້ອຍກໍລະດັບຂອງຄວາມຮັບຜິດຊອບທີ່ກ່ຽວຂ້ອງ. ຂະບວນການນີ້ນຳໃຊ້ໃນອາຊະຍາກຳທຸກ ປະເພດຢ່າງສະເໝີພາບ ແລະ ຮ່າງກົດໝາຍບໍ່ຄວນຈະຜູກມັດການນຳໃຊ້ດຸນພິນິດ ແລະ ການຕັດສິນໃຈຂອງໄອຍະການ.*[125]

**ການສ້າງການເຊື່ອມໂຍງລະຫວ່າງ ຄວາມຜິດຂອງຜູ້ຖືກເຄາະຮ້າຍ ແລະ ການຄ້າມະນຸດ:** ດັ່ງທີ່ໄດ້ກ່າວໄວ້ແລ້ວ, ຂໍ້ກຳນົດທາງກົດໝາຍ ທີ່ອາດນຳໄປໃຊ້ໃນການປ້ອງກັນຂອງຜູ້ຖືກເຄາະຮ້າຍ ໃນການກະທຳຄວາມຜິດ ນຳໃຊ້ໃນຮູບແບບຂອງການບັງຄັບ ເຊິ່ງກົງກັນຂ້າມຕໍ່ວິທີການຂອງສາເຫດທີ່ກວ້າງກວ່າ ທີ່ນຳມາໃຊ້ໃນ *ວິທີການແຫ່ງຊາດເພື່ອຕ້ານການຄ້າມະນຸດ ປີ 2016-2026.* ບໍ່ມີຄວາມຊັດເຈນວ່າຜູ້ຄ້າມະນຸດ ໃຊ້ວິທີການທີ່ລະອຽດອ່ອນກວ່ານີ້ ຈະພຽງພໍທີ່ຈະພິສູດວ່າຜູ້ຖືກເຄາະຮ້າຍ ໄດ້ຖືກ 'ບັງຄັບ' ສຳລັບຈຸດປະສົງຂອງການປ້ອງກັນເຫຼົ່ານີ້ ຫຼື ບໍ່.

**ມີການປ້ອງກັນສຳລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ຖືກບັງຄັບໃຫ້ກະທຳຄວາມຜິດ:** ສາມາດພິຈາລະນາວ່າ ພາກທີ 94 ຂອງ *ປະມວນກົດໝາຍອາຍາ* ຈະຖືກຕີຄວາມໄດ້ຢ່າງກວ້າງຂວາງ ເພື່ອຄອບຄຸມເຖິງການນຳໃຊ້ວິທີການ ທີ່ລະອຽດອ່ອນກວ່າ ທີ່ນຳໃຊ້ໂດຍຜູ້ຄ້າມະນຸດຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຫຼື ບໍ່ ລວມທັງ ໃນສະຖານະ ການທີ່ຜູ້ຖືກເຄາະຮ້າຍໄດ້ໃຫ້ຄວາມຍິນຍອມໃນການຂູດຮີດຕໍ່ເຂົາເຈົ້າເອງ. ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ອາດໄດ້ຮັບການຊ່ວຍເຫຼືອເພື່ອປ້ອງກັນ ໃນກໍລະນີທີ່ການກະທຳ ຖືກບັງຄັບດ້ວຍການຂົ່ມຂູ່ ໂດຍມີເຫດອັນສົມຄວນທີ່ເຮັດໃຫ້ເຂົ້າໃຈວ່າການຂົ່ມຂູ່ຈະເຖິງແກ່ຄວາມຕາຍຕໍ່ກັບເຂົາເຈົ້າ ຫຼື ບຸກອື່ນ. ການປ້ອງກັນນີ້ ບໍ່ໄດ້ນຳໃຊ້ສຳລັບຄວາມຜິດທີ່ມີໂທດປະຫານຊີວິດ ເຊັ່ນ ການຄາດຕະກຳ, ການໃຊ້ການເທັດ ແລະ ການປຸ້ນຊັບທາງທະເລ ໃນ *ປະມວນກົດໝາຍອາຍາ* ຕະຫຼອດເຖິງຄວາມຜິດທີ່ກ່ຽວຂ້ອງກັບຢາເສບຕິດ ຕາມທີ່ກຳນົດໄວ້ໃນ *ກົດໝາຍວ່າດ້ວຍ ການນຳໃຊ້ຢາເສບຕິດໃນທາງທີ່ບໍ່ຖືກຕ້ອງ.* ໃນກໍລະນີຫຼັງ, ສານຈະນຳໃຊ້ດຸນພິນິດທີ່ຈະບໍ່ລົງໂທດປະຫານຊີວິດໃນບາງກໍລະນີ ໂດຍອາໄສພາກທີ 33B. ພາກທີ 97 ຍັງກຳນົດສິດໃນການປ້ອງກັນສ່ວນຕົວ ສຳລັບການກະທຳ ເພື່ອປົກປ້ອງຮ່າງກາຍ ຫຼື ຊັບສິນຂອງຕົນ. ເຖິງຢ່າງໃດກໍຕາມ, ບໍ່ມີສິດໃນການປ້ອງກັນສ່ວນຕົວ ຕໍ່ກັບການກະທຳ ທີ່ບໍ່ມີ

---

125 ASEAN & ACTIP: ການນຳໃຊ້ກອບກົດໝາຍໃນພາກພື້ນ ເພື່ອຕໍ່ສູ້ກັບອາຊະຍາກຳໂລກ (Liberty Asia, 2017) 1139. ເບິ່ງໄດ້ທີ່ https://www.todayonline.com/singapore/anti-human-trafficking-laws-passed-parliament

ສາເຫດອັນສົມຄວນທີ່ເຮັດໃຫ້ເຂົ້າໃຈວ່າມີເຫດແກ່ຄວາມຕາຍ ຫຼື ໄພອັນຕະລາຍຢ່າງຮ້າຍແຮງ, ຫຼື ຖ້າຜູ້ກະທຳຜິດມີເວລາທີ່ຈະໄດ້ຮັບການປົກປ້ອງຈາກໜ່ວຍງານຂອງລັດ. ດ້ວຍເຫດນັ້ນ, ການນຳໃຊ້ການປ້ອງກັນດັ່ງກ່າວ ຈຶ່ງມີຄວາມສະເພາະເຈາະຈົງຫຼາຍຕໍ່ກັບກໍລະນີຂອງແຕ່ລະບຸກຄົນ ແລະ ມີທ່າອ່ຽງທີ່ຈະໃຊ້ສະເພາະກັບຄວາມຜິດທີ່ກະທຳໂດຍຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດທີ່ຮຸນແຮງທີ່ສຸດເທົ່ານັ້ນ.

## ການນຳໃຊ້ຫຼັກການ ການບໍ່ລົງໂທດ

**ຂັ້ນຕອນທາງອາຍາ ໃນການນຳໃຊ້ຫຼັກການບໍ່ລົງໂທດ:** ນະໂຍບາຍການດຳເນີນຄະດີໃນສິງກະໂປ ບໍ່ໄດ້ກຳນົດສະຖານະພາບຂອງບຸກຄົນ ຜູ້ທີ່ຈະບໍ່ຖືກດຳເນີນຄະດີໃນການກະທຳທີ່ພວກເຂົາ ໄດ້ຖືກບັງຄັບໃຫ້ກະທຳ. ແທນທີ່ຂໍ້ເທັດຈິງ ແລະ ສະຖານະການທັງໝົດຂອງຄະດີ ໄດ້ຮັບການພິຈາລະນາຕາມດຸນພິນິດຂອງໄອຍະການ ໂດຍມີເຈົ້າໜ້າທີ່ສືບສວນ-ສອບສວນກວດສອບການກະທຳຜິດທີ່ໄດ້ກະທຳ ໂດຍໃຫ້ຄວາມເປັນມາຂອງການພິຈາລະນາວ່າຈະດຳເນີນຄະດີ ຫຼື ບໍ່. ສະພາຂອງໄອຍະການສູງສຸດ ມີດຸນພິນິດໃນການຈັດຕັ້ງ, ປະຕິບັດ ຫຼື ຍຸດຕິການດຳເນີນຄະດີໃດໜຶ່ງທາງອາຍາ. ໃນການຕັດສິນໃຈດັ່ງກ່າວ ການປະເມີນຢ່າງລະອຽດ ຄວນເຮັດຂຶ້ນບົນພື້ນຖານຂອງຂໍ້ເທັດຈິງຂອງຄະດີ ລວມທັງ ຄວາມຮັບຜິດຊອບ ຂອງຄູ່ກໍລະນີກ່ຽວຂ້ອງ. ດ້ວຍເຫດນັ້ນ, ບຸກຄົນທີ່ຖືກກຳນົດໂດຍຂະບວນການເຫຼົ່ານີ້ວ່າຖືກບັງຄັບໃຫ້ກະທຳ ທີ່ເປັນຜົນສະທ້ອນໂດຍກົງຈາກການຄ້າມະນຸດ ຈະບໍ່ຖືກດຳເນີນຄະດີ.

## ສິ່ງທ້າທາຍໃນການຮ່ວມມືລະຫວ່າງປະເທດ

**ສິ່ງທ້າທາຍໃນການຮ່ວມມືລະຫວ່າງປະເທດ ແລະ ເຂດອຳນາດຂອງສານ:** ມີການລະບຸສິ່ງທ້າທາຍໃນກຸ່ມຜູ້ຊ່ຽວຊານ ທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຂ້າມຊາດໃນສິງກະໂປ ອາດຈະໄດ້ຮັບການກຳນົດຕົວໃນຖານະຜູ້ຖືກເຄາະຮ້າຍໂດຍປະ ເທດຕົ້ນທາງຂອງເຂົາເຈົ້າ (ບໍ່ວ່າຈະໂດຍສະຖານທູດ ຫຼື ເມື່ອມີການສົ່ງກັບປະເທດ) ແຕ່ບໍ່ໄດ້ຖືກຮັບຮູ້ໂດຍໜ່ວຍງານຂອງສິງກະໂປ ສິ່ງຜົນເຮັດໃຫ້ພວກເຂົາອາດຈະຖືກລົງໂທດໃນສິງກະໂປ.

## ສິ່ງທ້າທາຍໃນການກຳນົດຕົວຜູ້ຖືກເຄາະຮ້າຍ

**ຄວາມຈຳເປັນໃນການສ້າງຄວາມເຂັ້ມແຂງໃນການກຳນົດຕົວ ເພື່ອປົກປ້ອງຜູ້ຖືກເຄາະຮ້າຍຈາກການລົງໂທດ:** ໄດ້ມີການກ່າວເຖິງຄວາມຈຳເປັນໃນການສົ່ງເສີມຄວາມຮັບຮູ້ກ່ຽວກັບການຄ້າມະນຸດ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຂະບວນການກຳນົດຕົວ ແລະ ເພື່ອແກ້ໄຂອຸປະສັກທີ່ຜູ້ຖືກເຄາະຮ້າຍໄດ້ເຂົ້າໄປຫາເຈົ້າໜ້າທີ່ເພື່ອຂໍການຊ່ວຍເຫຼືອ. ຂໍ້ກັງວົນເຊັ່ນດຽວກັນນີ້ກ່ຽວກັບຂໍ້ບົກຜ່ອງໃນການກຳນົດຕົວ ກໍຍັງໄດ້ຖືກລະບຸໃນບົດລາຍງານການຄ້າມະນຸດຂອງກະຊວງການຕ່າງປະເທດສະຫະລັດອາເມລິກາ ປີ 2020 ເຊິ່ງຊີ້ໃຫ້ເຫັນເຖິງຄວາມກັງວົນຂອງອົງການ NGO ທີ່ເຈົ້າ ໜ້າທີ່ບໍ່ມີຄວາມເຂົ້າໃຈຢ່າງພຽງພໍຕໍ່ກັບຜົນກະທົບຂອງໜີ້ສິນ ແລະ ການບັງຄັບດ້ານຈິດໃຈຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ສິ່ງຜົນເຮັດໃຫ້ອາດຈະມີການລົງໂທດຜູ້ຖືກເຄາະຮ້າຍທີ່ບໍ່ໄດ້ຮັບການກຳນົດຕົວ.[126]ຜົນໄດ້ຮັບນີ້ ກໍໄດ້ສະແດງອອກອີກຄັ້ງໃນບົດລາຍງານການຄ້າມະນຸດປີ 2021 ທີ່ກ່າວເຖິງຄວາມເປັນກັງວົນຂອງອົງການ NGO ທີ່ເຈົ້າ ໜ້າທີ່ຕຳຫຼວດບໍ່ໄດ້ກັ່ນກອງຢ່າງສະໝ່ຳສະເໝີກ່ຽວກັບຕົວຊີ້ວັດການຄ້າມະນຸດໃນລະຫວ່າງການ 'ບຸກກວດຄົ້ນ' ຮ້ອງໂສເພນີທີ່ບໍ່ໄດ້ຮັບອະນຸຍາດ, ອາດຈະສົ່ງຜົນເຮັດໃຫ້ ມີການລົງໂທດຜູ້ຖືກເຄາະຮ້າຍທີ່ບໍ່ໄດ້ຮັບການກຳນົດຕົວ ຈາກການລະເມີດການເຂົ້າ-ອອກ ເມືອງ ຫຼື ຈາກການຊັກຊວນຂອງປະຊາຊົນ.[127]

---

126 ບົດລາຍງານການຄ້າມະນຸດ ປີ 2020: ສິງກະໂປ (ກະຊວງການຕ່າງປະເທດສະຫະລັດອາເມລິກາ 2020)
127 ບົດລາຍງານການຄ້າມະນຸດ ປີ 2021: ສິງກະໂປ (ກະຊວງການຕ່າງປະເທດສະຫະລັດອາເມລິກາ 2021)

## ການລົງໂທດຜູ້ຖືກເຄາະຮ້າຍໃນພາກປະຕິບັດຕົວຈິງ

**ການບໍ່ກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ສົ່ງຜົນໃຫ້ລົງໂທດຜູ້ຖືກເຄາະຮ້າຍໃນພາກປະຕິບັດຕົວຈິງ:** ມີການລາຍງານເຫດການທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ບໍ່ໄດ້ຮັບການກຳນົດຕົວຢ່າງເປັນທາງການ ຖືກຄະດີອາຍາ ສຳລັບການເຮັດວຽກໂດຍບໍ່ຖືກຕ້ອງຕາມກົດໝາຍ ຫຼື ເຮັດວຽກໂດຍບໍ່ມີເອກະສານຢ່າງເໝາະສົມ. ສະຖານະການດັ່ງກ່າວພົບເຫັນໃນກຸ່ມແມ່ຍິງທີ່ເຮັດວຽກໃນອຸດສາຫະກຳການບໍລິການທາງເພດ ໂດຍສະເພາະແມ່ຍິງຄົນຕ່າງປະເທດ ຜູ້ທີ່ຊອກຫາການຊ່ວຍເຫຼືອຈາກເຈົ້າໜ້າທີ່ຕຳຫຼວດ ພາຍຫຼັງການຖືກທຳຮ້າຍຮ່າງກາຍ, ລ່ວງລະເມີດ ຫຼື ຂູດຮີດ, ເຊິ່ງຕໍ່ມາຖືກດຳເນີນຄະດີອາຍາສຳລັບການເຮັດວຽກໂດຍບໍ່ມີວີຊາ. ມີການຍົກຕົວຢ່າງທີ່ຜູ້ຊາຍທີ່ບໍ່ໄດ້ຮັບການກຳນົດຕົວ ທີ່ໄດ້ຖືກຄ້າມະນຸດໄປຍັງການກໍ່ສ້າງ ແລະ ການຂົນສົ່ງ ຖືກຕັ້ງຂໍ້ຫາການເຮັດວຽກໂດຍບໍ່ຖືກຕ້ອງຕາມກົດໝາຍ.

**ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ຖືກນຳໃຊ້ໃນທາງທີ່ບໍ່ຖືກຕ້ອງ ເພື່ອລົງໂທດຜູ້ຖືກເຄາະຮ້າຍ ແລະ ຜູ້ອື່ນໆ:** ລັກສະນະການລົງໂທດທີ່ຮຸນແຮງໃນເຄື່ອງມືດ້ານກົດໝາຍບາງສະບັບ ອາດຈະມີຜົນກະທົບຕໍ່ກັບການລົງໂທດຜູ້ຖືກເຄາະ ຮ້າຍຈາກການຄ້າມະນຸດ. ຕົວຢ່າງ: ອຳນາດບັງຄັບທີ່ກຳນົດໄວ້ໃນພາກທີ 8 ຂອງ *ກົດໝາຍວ່າດ້ວຍການປ້ອງກັນການຄ້າມະນຸດ* ອະນຸຍາດໃຫ້ເຈົ້າໜ້າທີ່ຕຳຫຼວດເຂົ້າໄປໃນສະຖານທີ່ໃດໆ ໂດຍບໍ່ມີຄຳສັ່ງຈັບຕົວ ໃນກໍລະນີທີ່ມີເຫດອັນສົມ ຄວນ ທີ່ເຊື່ອໄດ້ວ່າມີການກະທຳຜິດພາຍໃຕ້ກົດໝາຍສະບັບນີ້ ແລະ ເພື່ອກັກຂັງ ຫຼື ກວດສອບບຸກຄົນໃດໜຶ່ງ. ພາກທີ 8 ໄດ້ໃຫ້ອຳນາດໃນການຈັບຕົວໂດຍບໍ່ຄຳສັ່ງຈັບຕົວ ໃນກໍລະນີທີ່ເຈົ້າໜ້າທີ່ມີເຫດຜົນອັນສົມຄວນ ທີ່ສົງໄສບຸກຄົນກະທຳ ຄວາມຜິດ ຫຼື ຜູ້ທີ່ກະທຳຄວາມຜິດ ຕາມທີ່ກຳນົດໄວ້ໃນພາກທີ 2 ຂອງກົດໝາຍ. ບຸກຄົນໃດທີ່ຢູ່ໃນສະຖານທີ່ ທີ່ຂັດຂວາງເຈົ້າໜ້າທີ່ຕຳຫຼວດ ຫຼື ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ຕໍ່ກັບເຫດການນີ້ ຖືວ່າມີເຈດຕະນາຂັດຂວາງພວກເຂົາ ເພື່ອຈຸດປະສົງໃນພາກທີ 17. ພາກທີ 20 ຍັງຫ້າມບໍ່ໃຫ້ຂໍ້ມູນ ຫຼື ຂໍ້ຄວາມທີ່ເປັນເທັດ. ທັງສອງການກະທຳຜິດນີ້ ມີໂທດປັບໃໝບໍ່ເກີນ 10,000 ໂດລາສະຫະລັດ ຫຼື ຈຳຄຸກບໍ່ເກີນ 12 ເດືອນ ຫຼື ທັງສອງ. ຄວາມສ່ຽງທີ່ຂໍ້ກຳນົດນີ້ຈະຖືກນຳໃຊ້ຕໍ່ກັບຜູ້ຖືກເຄາະຮ້າຍ ແທນທີ່ຈະໃຊ້ກັບຜູ້ຄ້າມະນຸດ, ເຊິ່ງຊີ້ໃຫ້ເຫັນເຖິງຄວາມສຳຄັນໃນການຝຶກອົບຮົມສະເພາະດ້ານໃຫ້ແກ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງໃນການບັງຄັບໃຊ້ຂໍ້ກຳນົດເຫຼົ່ານີ້.

**ຄວາມສ່ຽງທີ່ຈະລົງໂທດແມ່ຍິງ ແລະ ເດັກຍິງທີ່ຖືກຄ້າມະນຸດສຳລັບການຂູດຮີດທາງເພດ:** ມີການກ່າວເຖິງການປະຕິບັດທີ່ເປັນຕົວແບບທີ່ດີໃນສິງກະໂປ ລວມທັງ ໃນກໍລະນີທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໃນອຸດສາຫະກຳການບໍລິການ ທາງເພດ ທີ່ຖືກຳນົດຕົວຢ່າງເປັນທາງການໃນຖານະຜູ້ຖືກເຄາະຮ້າຍ ແລະ ບໍ່ໄດ້ຕັ້ງຂໍ້ຫາໃນສະຖານການເຮັດວຽກນອກ ເໜືອຈາກເງື່ອນໄຂຂອງວີຊາໃນການເຮັດວຽກຂອງລາວ. ແທນທີ່ທີ່ຈະຖືກຕັ້ງຂໍ້ຫາ, ລາວໄດ້ຮັບການປົກປ້ອງ ແລະ ໃຫ້ໂອກາດໃນການເຮັດວຽກຢູ່ນອກສູນພັກເຊົາທີ່ລາວອາໄສຢູ່. ເຖິງຢ່າງໃດກໍຕາມ, ຜູ້ຊ່ຽວຊານຍັງໄດ້ກ່າວເຖິງຄວາມສ່ຽງຂອງການລົງໂທດຜູ້ຖືກເຄາະຮ້າຍ ສຳລັບຄວາມຜິດທີ່ກ່ຽວຂ້ອງກັບໂສເພນີ; ຜູ້ທີ່ໄດ້ລາຍງານເຫດການຂອງແມ່ຍິງຈາກ ຟີລິບປິນ, ໄທ ແລະ ອິນໂດເນເຊຍ ຖືກດຳເນີນຄະດີອາຍາພາຍຫຼັງທີ່ຂໍຄວາມຊ່ວຍເຫຼືອຈາກເຈົ້າໜ້າທີ່ຕຳຫຼວດ. *ກົດບັດຂອງແມ່ຍິງສິງກະໂປ ປີ 1997 ກ່ຽວກັບຄວາມຜິດຕໍ່ກັບແມ່ຍິງ ແລະ ເດັກຍິງ* ລວມທັງຂໍ້ກຳນົດຫຼາຍອັນທີ່ກ່ຽວຂ້ອງກັບໂສເພນີ ແລະ ອຳນາດໃນການກັກຂັງແມ່ຍິງ ແລະ ເດັກຍິງໃນສະຖານທີ່ປອດໄພ ເຊິ່ງຢູ່ໃນໄລຍະການພິຈາລະນາຄະດີ (ມາດຕາ 155); ເຄື່ອນຍ້າຍ ແລະ ກັກຂັງໃນສະຖານທີ່ປອດໄພ ຂອງແມ່ຍິງ ຫຼື ເດັກຍິງທີ່ອາຍຸຕໍ່າກວ່າ 21 ປີ ຜູ້ທີ່ໄດ້ຮັບ 'ການຝຶກອົມຮົມ ຫຼື ນຳໃຊ້ເພື່ອຈຸດປະສົງທີ່ຜິດສິນລະທຳ' (ມາດຕາ 159) ແລະ ຄະດີອື່ນໆ (ມາດຕາ 160); ເຄື່ອນຍ້າຍເຂົາເຈົ້າໄປມາເລເຊຍ, ບຣູໄນ ດາຣູຊາລຳ ຫຼື ຮົງກົງ (ມາດຕາ 165) ຫຼື ໄດ້ຮັບຈາກສະຖານທີ່ ແລະ ການກັກຂັງໃນສິງກະໂປ (ມາດຕາ 167) ແລະ ຖືກຈັບຕົວໃນຂໍ້ຫາການໜີຈາກສະຖານທີ່ກັກຂັງ (ມາດຕາ 169).

**ຄວາມສ່ຽງໃນການລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ສຳລັບການບັງຄັບໃຊ້ແຮງງານ:** ນອກຈາກການຂູດຮີດແມ່ຍິງ ແລະ ເດັກຍິງໃນອຸດສາຫະກຳການບໍລິການທາງເພດ, ໄດ້ມີການຍົກໃຫ້ເຫັນຕົວຢ່າງທີ່ຜູ້ຖືກເຄາະຮ້າຍຜູ້ຊາຍທີ່ຖືກຄ້າມະນຸດໃນສະຖານທີ່ກໍ່ສ້າງ ແລະ ອູ່ບ່ອນຈອດເຮືອ ໄດ້ຖືກກັກຂັງໃນສະຖານການເຮັດວຽກໂດຍບໍ່ຖືກຕ້ອງຕາມກົດໝາຍ ຫຼື ໂດຍບໍ່ມີວີຊາທີ່ເໝາະສົມ ຫຼື ໃນບາງກໍລະນີ ສຳລັບການໃຫ້ການເທັດ. ສິງກະໂປ ຍັງຖືກຮັບຮູ້ວ່າເປັນສະ ຖານທີ່ສຳລັບທາງຜ່ານ ສຳລັບຜູ້ຖືກເຄາະຮ້າຍຈາກບັນດາປະເທດອາຊຽນ ທີ່ຖືກຄ້າມະນຸດໃນອຸດສາຫະກຳການປະມົງ.

**ຄວາມສ່ຽງໃນການລົງໂທດຜູ້ຖືກເຄາະຮ້າຍທີ່ບໍ່ແມ່ນພົນລະເມືອງຕົນ:** *ກົດໝາຍວ່າດ້ວຍການເຂົ້າ-ອອກເມືອງ* ໄດ້ກ່າວເຖິງ 'ຜູ້ເຄື່ອນຍ້າຍແຮງງານທີ່ຖືກຫ້າມ' ລວມທັງ 'ບຸກຄົນທີ່ເປັນສະມາຊິກໃນຊົນຊັ້ນທີ່ຖືກຫ້າມ' ລວມທັງ 'ບຸກຄົນໃດໜຶ່ງ ຜູ້ທີ່ບໍ່ສາມາດສະແດງວ່າຕົນເອງມີວິທີການໃນການສະໜັບສະໜູນຕົນເອງ', ແລະ 'ໂສເພນີ ຫຼື ບຸກຄົນໃດໜຶ່ງ ຜູ້ທີ່ອາໄສຢູ່ ຫຼື ຮັບເອົາ ຫຼື ບຸກຄົນ, ກ່ອນທີ່ຈະເຂົ້າມາສິງກະໂປ, ໄດ້ອາໄສຢູ່ ຫຼື ໄດ້ຮັບລາຍໄດ້ຈາກໂສເພນີ' ຫຼື 'ບຸກຄົນໃດໜຶ່ງ ຜູ້ທີ່.....ບໍ່ໄດ້ຄອບຄອງ [ເອກະສານເດີນທາງ] ທີ່ຖືກຕ້ອງຕາມກົດໝາຍ ຫຼື ຄອບຄອງເອກະສານປອມ ຫຼື ເອກະສານທີ່ມີການດັດແກ້;'[128] ພາລະໜ້າທີ່ໃນການພິສູດໃນກໍລະນີນີ້ ຂຶ້ນກັບບຸກຄົນທີ່ຈະພິສູດວ່າ ເຂົາບໍ່ແມ່ນຜູ້ເຄື່ອນຍ້າຍແຮງງານທີ່ຖືກຫ້າມ. ມີຄວາມເປັນໄປໄດ້ທີ່ມີຄວາມສ່ຽງຫຼາຍ ທີ່ຂໍ້ກຳນົດນີ້ສາມາດຄອບຄຸມຫຼາຍທີ່ສຸດ ຖ້າຫາກບໍ່ແມ່ນຜູ້ຖືກເຄາະຮ້າຍທັງໝົດ ໂດຍເນັ້ນໜັກເຖິງຄວາມສຳຄັນຂະບວນການກຳນົດຕົວຜູ້ຖືກເຄາະຮ້າຍທີ່ມີປະສິດທິ ພາບອີກຄັ້ງ.[129]

---

128 ກົດໝາຍວ່າດ້ວຍການເຂົ້າ-ອອກເມືອງ c. 133 (M. Ordinance 12 ຂອງ 1959, revd ed. ວັນທີ 1 ມັງກອນ 2008) pt. II

129 Marija Jovanovi, ກົດໝາຍລະຫວ່າງປະເທດ ແລະ ບັນຖັດຖານລະດັບພາກພື້ນໃນການລັກລອບເຂົ້າ-ອອກເມືອງ: ສະຫະພາບເອີລົບ ແລະ ອາຊຽນ ໄດ້ມີການກຳນົດນິຍາມຄືນໃໝ່ກ່ຽວກັບການປົກຄອງທົ່ວໂລກກ່ຽວກັບການຄ້າມະນຸດ, *ວາລະສານກົດໝາຍລະຫວ່າງປະເທດຂອງອາເມລິກາ*, Vol. XX, 1, 20

## 2.9. ປະເທດໄທ

ມີການຈັດກອງປະຊຸມປຶກສາຫາລືແບບໂຕະມົນສອງຄັ້ງ ໃນປະເທດໄທ ເພື່ອຈຸດປະສົງຂອງການຄົ້ນຄວ້ານີ້, ໂດຍມີຜູ້ເຂົ້າຮ່ວມທັງໝົດ 38 ທ່ານ ທີ່ຕາງໜ້າມາຈາກທັງຝ່າຍລັດ ແລະ ໜ່ວຍງານທີ່ບໍ່ແມ່ນຝ່າຍລັດທີ່ເຮັດວຽກຕ້ານການຄ້າມະ ນຸດ. ໃນພາກນີ້ ເນັ້ນໃຫ້ເຫັນເຖິງຂໍ້ມູນດ້ານເລິກ ລວມທັງ ເອກະສານ/ຂໍ້ມູນທີ່ເປີດກວ້າງ ທີ່ກ່ຽວຂ້ອງ.

### ຫຼັກການບໍ່ລົງໂທດໃນກົດໝາຍ ແລະ ນະໂຍບາຍ

**ຂໍ້ກຳນົດທີ່ຊັດເຈນກ່ຽວກັບຫຼັກການບໍ່ລົງໂທດໃນກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ:** ອີງຕາມພາກທີ 41 ຂອງ ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ B.E. 2551 (2008), ເຊິ່ງຕໍ່ມາໄດ້ມີການປັບປຸງໃນປີ 2015 (BE 2558) ແລະ 2017 (BE 2560), ຜູ້ຖືກເຄາະຮ້າຍ ບໍ່ສາມາດຖືກດຳເນີນຄະດີສຳລັບການເຂົ້າ-ອອກເມືອງທີ່ຜິດກົດໝາຍ ຫຼື ຢູ່ອາໄສ, ໂດຍໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ, ຄວາມຜິດທີ່ກ່ຽວຂ້ອງກັບເອກະສານ, ຄວາມຜິດທີ່ກ່ຽວຂ້ອງກັບໂສເພນີ ຫຼື ຄວາມຜິດທີ່ກ່ຽວຂ້ອງກັບການເຮັດວຽກ ເວັ້ນແຕ່ ລັດຖະມົນຕີກະຊວງຍຸຕິທຳ ໄດ້ອະນຸຍາດໃຫ້ເປັນລາຍລັກອັກສອນ:

> *ເວັ້ນແຕ່ ລັດຖະມົນຕີກະຊວງຍຸຕິທຳ ອະນຸຍາດຢ່າງເປັນລາຍລັກອັກສອນ, ຫ້າມເຈົ້າໜ້າທີ່ສືບສວນ - ສອບສວນ ດຳເນີນຄະດີອາຍາຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ສຳລັບຄວາມຜິດໃນການເຂົ້າມາ, ອອກໄປ ຫຼື ອາໄສຢູ່ໃນຣາຊະອານາຈັກໂດຍບໍ່ໄດ້ຮັບອະນຸຍາດ ຕາມກົດໝາຍວ່າດ້ວຍການເຂົ້າ-ອອກເມືອງ, ການໃຫ້ຂໍ້ມູນໂດຍບໍ່ຖືກຕ້ອງແກ່ເຈົ້າໜ້າທີ່, ການປອມແປງ ຫຼື ນຳໃຊ້ເອກະສານເດີນທາງປອມພາຍໃຕ້ປະມວນກົດໝາຍອາຍາ, ຄວາມຜິດພາຍໃຕ້ກົດໝາຍວ່າດ້ວຍການປ້ອງກັນ ແລະ ປາບປາມການຄ້າປະເວນີ ໂດຍສະເພາະການຕິດຕໍ່, ການຊັກຊວນ, ການແນະນຳ ແລະ ຊັກຊວນບຸກຄົນເພື່ອຈຸດປະສົງຂອງການຄ້າປະເວນີ ແລະ ການລວມກຸ່ມກັນໃນສະຖານທີ່ຄ້າປະເວນີ ເພື່ອຈຸດປະສົງຂອງການຄ້າປະເວນີ ຫຼື ຄວາມຜິດໃນສະຖານການເປັນຄົນຕ່າງດ້າວ ທີ່ເຮັດວຽກໂດຍບໍ່ໄດ້ຮັບອະນຸຍາດ ພາຍໃຕ້ກົດໝາຍການເຮັດວຽກຂອງຄົນຕ່າງດ້າວ.*

**ຂໍ້ຈຳກັດຂອງການບໍ່ລົງໂທດ ແລະ ຜູ້ປະຕິບັດຕົວຈິງໄດ້ແນະນຳໃຫ້ມີການປັບປຸງ:** ອີງຕາມພາກທີ 41 ຂອງ ກົດໝາຍ, ການດຳເນີນຄະດີທາງດ້ານຍຸຕິທຳທາງອາຍາ *ສາມາດ* ດຳເນີນຄະດີຕໍ່ກັບຜູ້ຖືກຄ້າມະນຸດ ໂດຍມີການອະນຸຍາດຢ່າງເປັນ ລາຍລັກອັກສອນຂອງລັດຖະມົນຕີກະຊວງຍຸຕິທຳ ໂດຍມີຄວາມເປັນກັງວົນວ່າຂໍ້ກຳນົດດັ່ງກ່າວນີ້ຈະຖືກນຳໃຊ້ສະເພາະຜູ້ຖືກເຄາະຮ້າຍ ທີ່ໄດ້ຮັບການກຳນົດຕົວຢ່າງເປັນທາງການ ໂດຍເຈົ້າໜ້າທີ່ທີ່ມີໜ້າທີ່ຮັບຜິດຊອບ ຜູ້ທີ່ບໍ່ມີພັນທະໃນການກຳນົດ ແລະ ຂາດທາງເລືອກ ທີ່ທ້າທາຍຕໍ່ການຕັດສິນໃຈນີ້, ຊຶ່ງຊ່ວຍໃຫ້ສາມາດໃຊ້ດຸນພິນິດທີ່ສຳຄັນໃນການປົກປ້ອງ.[130] ນອກນັ້ນ, ມັນຍັງນຳໃຊ້ຈຳກັດສະເພາະບາງປະເພດຂອງການກະທຳຜິດເທົ່ານັ້ນ. ຂໍ້ຈຳກັດເຫຼົ່ານີ້ ໄດ້ຖືກກ່າວໂດຍ ຜູ້ປຶກສາຫາລືໃນກອງປະຊຸມໂຕະມົນ ແລະ ບາງທ່ານກໍໄດ້ແນະນຳວ່າຂໍ້ກຳນົດດັ່ງກ່າວນີ້ ຄວນຈະເຮັດໃຫ້ກວ້າງຂຶ້ນ ເພື່ອໃຫ້ສາມາດຄວບຄຸມຕໍ່ການກະທຳຜິດເພີ່ມເຕີມ ເຊັ່ນ ການປອມແປງຂໍ້ມູນປະຈຳຕົວ. ບາງທ່ານຮູ້ສຶກວ່າຄວນຮ່າງ ກົດໝາຍ ເພື່ອເຮັດໃຫ້ມີຄວາມຊັດເຈນຕໍ່ເຈົ້າໜ້າທີ່ສືບສວນ-ສອບສວນ ຕໍ່ກັບຂອບເຂດທີ່ຜູ້ຖືກເຄາະຮ້າຍໄດ້ຮັບການ ປົກປ້ອງຈາກການລົງໂທດ. ນອກນັ້ນ ຍັງມີການແນະນຳອີກວ່າ ກົດໝາຍດັ່ງກ່າວສາມາດຮັບປະກັນຢ່າງຊັດເຈນວ່າກະຊວງມະຫາດໄທ ສາມາດປົກປ້ອງຜູ້ຖືກເຄາະຮ້າຍ ທີ່ຢູ່ໃນບັນຊີດຳ ຫຼື ຢູ່ພາຍໃຕ້ການບັນທຶກໃນໜັງສືເດີນທາງສຳລັບ ຄວາມຜິດນັ້ນ.

---

130 Marija Jovanovi, ກົດໝາຍລະຫວ່າງປະເທດ ແລະ ບັນຖັດຖານລະດັບພາກພື້ນໃນການລັກລອບເຂົ້າ-ອອກເມືອງ: ສະຫະພາບເອີລົບ ແລະ ອາຊຽນ ໄດ້ມີການກຳນົດນິຍາມຄືນໃໝ່ກ່ຽວກັບການປົກຄອງທົ່ວໂລກກ່ຽວກັບການຄ້າມະນຸດ, *ວາລະສານກົດໝາຍລະຫວ່າງປະເທດຂອງອາເມລິກາ*, Vol. XX, 1, 20

**ຄໍາໝັ້ນໝາຍຕໍ່ກັບການບໍ່ລົງໂທດຜູ້ຖືກເຄາະຮ້າຍ-ຜູ້ກະທໍາຜິດ ທີ່ຜູ້ຖືກບັງຄັບ ຫຼື ແຮງງານແບບບັງຄັບ:** ປະເທດໄທໄດ້ ລົງນາມໃນສົນທິສັນຍາ ILO ປີ 2017 ຂອງສົນທິສັນຍາວ່າດ້ວຍແຮງງານແບບບັງຄັບ, ໂດຍໃຫ້ລັດພາຄີ "ໃຊ້ມາດຕະ ການທີ່ຈໍາເປັນເພື່ອຮັບປະກັນວ່າໜ່ວຍງານທີ່ມີສິດອໍານາດມີສິດທີ່ຈະບໍ່ດໍາເນີນຄະດີ ຫຼື ກໍານົດການລົງໂທດຕໍ່ກັບຜູ້ຖືກເຄາະຮ້າຍທີ່ຖືກບັງຄັບ ຫຼື ເປັນແຮງງານບັງຄັບສໍາລັບການມີສ່ວນຮ່ວມໃນການກະທໍາທີ່ຜິດກົດໝາຍ ເຊິ່ງພວກເຂົາຖືກ ບັງຄັບໃຫ້ກະທໍາ ທີ່ເປັນຜົນສະທ້ອນໂດຍກົງຈາກການຖືກບັງຄັບ ຫຼື ເປັນແຮງງານບັງຄັບ." ການຈັດຕັ້ງປະຕິບັດຂໍ້ກໍານົດນີ້ໃນກົດໝາຍພາຍໃນ ບໍ່ໄດ້ມີການກ່າວເຖິງ.

**ຂໍ້ກໍານົດອື່ນໆທີ່ກ່ຽວຂ້ອງໃນກົດໝາຍ:** ນອກຈາກພາກທີ 41 ຂອງ *ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ* B.E. 2551 (2008), ພາກທີ 31 ຂອງກົດໝາຍສະບັບດຽວກັນ ໄດ້ກ່າວເຖິງຄວາມກ່ຽວຂ້ອງກັນ; ໂດຍອະນຸຍາດໃຫ້ໄອຍະການ ນໍາເອົາຕົວບຸກຄົນໃດກໍໄດ້ ລວມທັງ ຜູ້ຖືກຄ້າມະນຸດມາຂຶ້ນສານເພື່ອໃຫ້ການ, ເຊິ່ງຮູ້ສຶກວ່າຄວາມສ່ຽງຂອງຜູ້ຖືກ ເຄາະຮ້າຍທີ່ຈະຖືກລົງໂທດນັ້ນຫຼຸດລົງ, ສັນນິຖານໄດ້ດ້ວຍການອະນຸຍາດໃຫ້ສະພາບການທັງໝົດຂອງຄວາມຜິດທາງ ອາຍາທີ່ຜູ້ຖືກເຄາະຮ້າຍອາດຈະໄດ້ມີສ່ວນຮ່ວມ ເພື່ອນໍາມາເປີດເຜີຍ ແລະ ພິຈາລະນາ.

**ການລຶບລ້າງປະຫວັດອາຊະຍາກໍາທີ່ບໍ່ສາມາດເຮັດໄດ້ທາງກົດໝາຍ:** ນອກຈາກບໍລິບົດທີ່ຈໍາກັດ *ຂອງກົດໝາຍວ່າດ້ວຍ ການໃຫ້ອະໄພຍະໂທດ ແລະ ການຟື້ນຟູຜູ້ກະທໍາຜິດ* ທີ່ສາມາດລຶບປະຫວັດອາຊະຍາກໍາຂອງຜູ້ກະທໍາຜິດ, ບໍ່ມີໂອກາດໃນກົດໝາຍສໍາລັບປະຫວັດອາຊະຍາກໍາ ທີ່ຈະໄດ້ຮັບການລຶບລ້າງ. ເຖິງຢ່າງໃດກໍຕາມ, ມີການອ້າງເຖິງກໍລະນີທີ່ອົງການໄອຍະການສູງສຸດ ທີ່ເຮັດວຽກຮ່ວມກັບກະຊວງການຕ່າງປະເທດ ແລະ UNHCR ໃນການລຶບລ້າງປະຫວັດອາຊະຍາກໍາ ຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ຖືກສົ່ງໄປປະເທດທີສາມ.

**ບໍ່ມີຖະແຫຼງການ ການບໍ່ລົງໂທດໃນນະໂຍບາຍ:** ໃນພາກນະໂຍບາຍ, *ນະໂຍບາຍແຫ່ງຊາດຄັ້ງທີສອງ, ຍຸດທະສາດ ແລະ ມາດຕະການໃນການປ້ອງກັນ ແລະ ປາບປາມການຄ້າມະນຸດ* (2017-2021) ຂອງກະຊວງສະຫວັດດີການສັງຄົມ ແລະ ການພັດທະນາ (MSDHS) ແມ່ນບໍ່ມີຫຼັກການບໍ່ລົງໂທດ ແຕ່ໄດ້ກໍານົດ ການເສີມສ້າງຄວາມເຂັ້ມແຂງໃນການກໍານົດຕົວຜູ້ຖືກເຄາະຮ້າຍ.

## ການຕີຄວາມໝາຍຂອງຫຼັກການບໍ່ລົງໂທດ

**ຄວາມເຂົ້າໃຈກ່ຽວກັບຈຸດປະສົງຂອງຫຼັກການບໍ່ລົງໂທດ:** ຜູ້ປະຕິບັດຕົວຈິງໄດ້ສະເໜີສອງເຫດຜົນໃນການຍຶດໝັ້ນຕໍ່ກັບຫຼັກການບໍ່ລົງໂທດ. ເຫດຜົນທີໜຶ່ງ, ບໍ່ຕັ້ງຂໍ້ຫາຜູ້ຖືກເຄາະຮ້າຍສໍາລັບຄວາມຜິດ ແມ່ນເພື່ອສ້າງແຮງຈູງໃຈໃຫ້ແກ່ຜູ້ຖືກເຄາະຮ້າຍ ໃນການຮ່ວມມືກັບເຈົ້າໜ້າທີ່ ແລະ ເຂົ້າຮ່ວມໃນຂະບວນການດໍາເນີນຄະດີຍຸຕິທໍາທາງອາຍາ ໃນຖານະພະຍານ. ເຫດຜົນທີສອງ, ຫຼັກການບໍ່ລົງໂທດເປັນສ່ວນໜຶ່ງຂອງວິທີການທີ່ເອົາຜູ້ຖືກເຄາະຮ້າຍເປັນໃຈກາງໃນການຕ້ານການຄ້າມະນຸດ. ຄວາມເຂົ້າໃຈທີ່ແຕກຕ່າງກັນສອງປະການ ກ່ຽວກັບຈຸດປະສົງຂອງຫຼັກການບໍ່ລົງໂທດສົ່ງຜົນກັນໃຫ້ມີການຕີຄວາມໝາຍແນວໃດ.

**ຄວາມຄິດເຫັນທີ່ແຕກຕ່າງກັນວ່າ ຜູ້ຖືກເຄາະຮ້າຍທີ່ບໍ່ໃຫ້ການຮ່ວມມື ຄວນຖືກປົກປ້ອງຈາກການລົງໂທດ ຫຼື ບໍ່:** ຜູ້ຕອບໄດ້ຕັ້ງຄໍາຖາມວ່າຜູ້ຖືກເຄາະຮ້າຍທີ່ *ບໍ່* ເຂົ້າຮ່ວມໃນການດໍາເນີນຄະດີຕໍ່ກັບຜູ້ຄ້າມະນຸດ ຄວນຈະໄດ້ຮັບການປົກປ້ອງພາຍໃຕ້ພາກທີ 41 ຫຼື ບໍ່. ຄວາມຄິດເຫັນໃນຈຸດນີ້ມີຄວາມແຕກຕ່າງກັນ. ບາງທ່ານກ່າວວ່າວິທີການທີ່ເອົາຜູ້ຖືກເຄາະ ຮ້າຍເປັນໃຈກາງ ຢືນຢັນວ່າຜູ້ຖືກເຄາະຮ້າຍບໍ່ຄວນຈະຖືກລົງໂທດ ເຖິງວ່າ ຜູ້ຖືກເຄາະຮ້າຍເລືອກທີ່ຈະບໍ່ເຂົ້າຮ່ວມໃນ ການດໍາເນີນຄະດີທາງອາຍາ. ບັນດາຜູ້ທີ່ໃຊ້ວິທີການເຫຼົ່ານີ້ຮູ້ສຶກວ່າການລົງໂທດຜູ້ຖືກເຄາະຮ້າຍຍ້ອນອາຊະຍາກໍາຍ້ອນຫຼັງ ເນື່ອງຈາກວ່າພວກເຂົາຖອນຕົວຈາກການຮ່ວມມືນັ້ນ ຈະບໍ່ເປັນໄປຕາມ

ເຈດຈຳນົງຂອງຂໍ້ກຳນົດນີ້, ແລະ ຜູ້ຖືກເຄາະຮ້າຍ ຄວນທີ່ຈະສາມາດປະຕິເສດການຮ່ວມມືໂດຍບໍ່ມີການລົງໂທດສຳລັບທາງເລືອກນັ້ນ. ຄົນອື່ນໆໄດ້ສະແດງຄວາມ ຄິດເຫັນໃນທາງກົງກັນຂ້າມ, ເຈດຈຳນົງຂອງພາກທີ 41 ແມ່ນເພື່ອສົ່ງເສີມຜູ້ຖືກເຄາະຮ້າຍໃຫ້ຮ່ວມມືໃນຂະບວນຍຸຕິທຳ ທາງອາຍາ ແລະ ເພື່ອສະໜັບສະໜູນຜູ້ປະຕິບັດຕົວຈິງເຂົ້າຫາຜູ້ຖືກເຄາະຮ້າຍໃນຖານະພະຍານຫຼາຍກວ່າໃນຖານະຜູ້ກະທຳຜິດ. ດ້ວຍເຫດຜົນນີ້, ຜູ້ຖືກເຄາະຮ້າຍທີ່ບໍ່ໃຫ້ການຮ່ວມມືໃນຖານະພະຍານ ບໍ່ຄວນທີ່ຈະໄດ້ຮັບການປົກປ້ອງ ແລະ ການລົງທຶນດ້ານຊັບພະຍາກອນຄືກັບຜູ້ຖືກເຄາະຮ້າຍຄົນອື່ນໆ. ມີຄວາມກັງວົນວ່າ ການໃຫ້ການປົກປ້ອງຈາກການລົງໂທດ ເພື່ອໃຫ້ເຂົ້າເຖິງຜູ້ຖືກເຄາະຮ້າຍທຸກຄົນບໍ່ວ່າພວກເຂົາຈະໃຫ້ຄວາມຮ່ວມມື ຫຼື ບໍ່ກໍຕາມ, ອາດຈະເປັນຜົນປະໂຫຍດທາງອ້ອມຕໍ່ຜູ້ຄ້າມະນຸດ ດ້ວຍການໃຫ້ໂອກາດພວກເຂົາໃນການຈ່າຍເງິນ ຫຼື ແຮງຈູງໃຈອື່ນແກ່ຜູ້ຖືກເຄາະຮ້າຍ ທີ່ບໍ່ໃຫ້ການຮ່ວມມື.

**ການສ້າງການເຊື່ອມໂຍງລະຫວ່າງຄວາມຜິດ ແລະ ການຄ້າມະນຸດ:** ອີງຕາມກົດໝາຍໄທ, ຄວາມຮັບຜິດຊອບທາງອາຍາ ຈະຜູກພັນສະເພາະກໍລະນີທີ່ບຸກຄົນໄດ້ກະທຳ ໂດຍເຈດຕະນາເທົ່ານັ້ນ (ພາກທີ 59). ບຸກຄົນຈະບໍ່ຖືກລົງໂທດ ໃນກໍລະນີ ທີ່ພວກເຂົາໄດ້ກະທຳ ເພາະຄວາມຈຳເປັນ, ລວມທັງ 'ກໍລະນີທີ່ບຸກຄົນຢູ່ພາຍໃຕ້ການບັງຄັບ ຫຼື ພາຍໃຕ້ການອິດທິພົນ ຂອງການບັງຄັບ ໂດຍທີ່ບຸກຄົນດັ່ງກ່າວບໍ່ສາມາດຫຼີກລ້ຽງ ຫຼື ຕໍ່ຕ້ານໄດ້' (ພາກທີ 67(1)) ຫຼື 'ໃນເວລາທີ່ບຸກຄົນດັ່ງກ່າວ ກະທຳ ເພື່ອເຮັດໃຫ້ຕົນເອງ ແລະ ບຸກຄົນອື່ນ ຫຼຸດພົ້ນຈາກໄພອັນຕະລາຍເຊິ່ງບໍ່ສາມາດຫຼີກລ້ຽງໄດ້ດ້ວຍວິທີການອື່ນໃດ, ແລະ ບຸກຄົນດັ່ງກ່າວ ບໍ່ໄດ້ເປັນສາເຫດເຮັດໃຫ້ເກີດຂຶ້ນ ເພາະຄວາມຜິດຂອງຕົນເອງ. ໂດຍວ່າຈະຕ້ອງບໍ່ໄດ້ກະທຳ ເກີນກວ່າຄວາມຈຳເປັນຢ່າງສົມເຫດສົມຜົນ ພາຍໃຕ້ສະພາບການນັ້ນ' (ພາກທີ 67(2)).

ຜູ້ປະຕິບັດຕົວຈິງບາງທ່ານ ໄດ້ອະທິບາຍວ່າ ຖ້າຫາກບໍ່ສາມາດພິສູດໄດ້ວ່າຜູ້ຖືກເຄາະຮ້າຍ ໄດ້ກະທຳຄວາມຜິດເຊັ່ນການປ້ອງກັນຕົນເອງ ພາກທີ 41 ບໍ່ສາມາດນຳໃຊ້ໄດ້. ທ່ານອື່ນໆ ໄດ້ເບິ່ງໃນມຸມມອງທີ່ແຕກຕ່າງອອກໄປ ໂດຍແນະນຳວ່າການຍົກເວັ້ນທີ່ກ່ຽວຂ້ອງນີ້ກວ້າງຂວາງຫຼາຍຂຶ້ນ ໃນຂອບເຂດທີ່ຄວາມຜິດນັ້ນ ກ່ຽວຂ້ອງກັບການກະທຳຂອງຜູ້ຄ້າມະນຸດ. ມັນໄດ້ມີການອະທິບາຍວ່າ ກໍລະນີທີ່ບຸກຄົນສະໝັກໃຈເຂົ້າປະເທດໄທໂດຍບໍ່ຖືກຕ້ອງຕາມກົດໝາຍ ໄດ້ເຂົ້າຮ່ວມໃນການເປັນໂສເພນີ, ປອມແປງເອກະສານຂອງຕົນເອງເພື່ອກະທຳສິ່ງດັ່ງກ່າວ, ພາກທີ 41 *ບໍ່* ນຳໃຊ້ ຍ້ອນວ່າຜູ້ຄ້າມະນຸດບໍ່ໄດ້ກະທຳສິ່ງໃດ ເພື່ອໃຫ້ຜູ້ກ່ຽວກະທຳຄວາມຜິດ. ມີການຕັ້ງຂໍ້ສັງເກດວ່າ ເຈົ້າໜ້າທີ່ສືບສວນ-ສອບສວນ ປະເຊີນໜ້າກັບສິ່ງທ້າທາຍທີ່ໜັກໜ່ວງ ກໍລະນີທີ່ບຸກຄົນສະໝັກໃຈເຂົ້າມາປະເທດໄທ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ຕໍ່ມາໄດ້ຕົກເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເຊິ່ງມີຄຳຖາມເກີດຂຶ້ນວ່າ ພາກທີ 41 ປົກປ້ອງການດຳເນີນຄະດີໃນກໍລະນີດັ່ງກ່າວ ຫຼື ບໍ່.

**ການບໍ່ລົງໂທດ ຜູກມັດກັບສະຖານະພາບຂອງຜູ້ຖືກເຄາະຮ້າຍ:** ຜູ້ປະຕິບັດຕົວຈິງບາງທ່ານ ໄດ້ເບິ່ງມຸມມອງຂອງຂອບເຂດຫຼັກການບໍ່ລົງໂທດກວ້າງຂຶ້ນ, ໂດຍຍຶດຕິດກັບສະຖານະພາບຂອງບຸກຄົນ ໃນຖານະຜູ້ຖືກເຄາະຮ້າຍຫຼາຍກວ່າທີ່ຈະກຳນົດວ່າຄວາມຜິດນັ້ນ ກ່ຽວຂ້ອງໂດຍກົງກັບການຄ້າມະນຸດ. ໄດ້ມີການຍົກໃຫ້ເຫັນເຖິງຕົວຢ່າງຂອງຜູ້ຖືກເຄາະຮ້າຍ (ລວມທັງເດັກນ້ອຍ) ໃນສະຖານທີ່ກັກຂັງຄົນເຂົ້າ-ອອກເມືອງ ຫຼື ໃນສູນພັກເຊົາທີ່ຂັດກັບເຈດຈຳນົງຂອງເຂົາເຈົ້າ, ຜູ້ທີ່ທຳລາຍຊັບສິນ, ລັກຊັບ ແລະ ທຳຮ້າຍພະນັກງານ. ຕາມລາຍງານ ເຫັນວ່າເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ໄດ້ຕັ້ງຂໍ້ຫາຜູ້ ຖືກເຄາະຮ້າຍສຳລັບຄວາມຜິດເຫຼົ່ານີ້ໃນບາງກໍລະນີ ແຕ່ບໍ່ແມ່ນກໍລະນີອື່ນ. ສະຫຼຸບແລ້ວ, ຂອບເຂດຂອງຫຼັກການບໍ່ລົງໂທດ ບໍ່ມີຄວາມເຂົ້າໃຈເປັນເອກະພາບກັນ ໂດຍຜູ້ປະຕິບັດຕົວຈິງ.

## ການນຳໃຊ້ຫຼັກການບໍ່ລົງໂທດ

**ຄຸນຄ່າຂອງຂໍ້ກຳນົດການບໍ່ລົງໂທດໃນກົດໝາຍໄທ:** ໄດ້ມີການລາຍງານວ່າ ຍັງບໍ່ມີການຂໍອະນຸຍາດ ພາຍໃຕ້ພາກທີ 41 ບໍ່ວ່າຈະເປັນສຳນັກງານຕຳຫຼວດແຫ່ງຊາດ ຫຼື ໜ່ວຍງານກວດຄົນເຂົ້າ-ອອກເມືອງ ເພື່ອດຳເນີນຄະດີຜູ້ຖືກເຄາະຮ້າຍຈາກ ການຄ້າມະນຸດ. ຜູ້ປະຕິບັດຕົວຈິງຊີ້ໃຫ້ເຫັນວ່າ ຂໍ້ກຳນົດ ເປັນຫົວໃຈສຳຄັນໃນການປັບປຸງການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດໃນປະເທດໄທ ໃນພາກປະຕິບັດຕົວຈິງ, ໂດຍໄດ້ມີການລາຍງານຕົວຢ່າງໃນການດຳເນີນຄະດີຜູ້ຖືກເຄາະຮ້າຍ ກ່ອນການອອກກົດໝາຍ. ໄດ້ມີການຍົກໃຫ້ເຫັນຕົວຢ່າງທີ່ຜູ້ຖືກເຄາະຮ້າຍ ໃນອຸດສາຫະກຳການປະມົງ ໄດ້ຖືກດຳເນີນ ຄະດີ ໃນສະຖານການປອມແປງເອກະສານ ລວມທັງ ປຶ້ມຂອງພະນັກງານເທິງເຮືອໄທ. ພວກເຂົາໄດ້ຮັບການຍົກເວັ້ນ ການຖືກຕັດສິນລົງໂທດ ຜ່ານຄວາມພະຍາຍາມໃນການຮ່ວມມືໂດຍໜ່ວຍງານຂອງລັດຖະບານ ແລະ ໜ່ວຍງານທີ່ບໍ່ແມ່ນລັດຖະບານ, ແລະ ຕໍ່ມາ SOP ກໍໄດ້ຖືກແນະນຳໃນການກອບກູ້ ແລະ ສົ່ງກັບ ຄົນລາວ, ມຽນມາ ຫຼື ກຳປູເຈຍ ແລະ ນຳເອົາພວກເຂົາອອກຈາກການດຳເນີນຄະດີ ແລະ ນຳເຂົ້າສູ່ການປົກປ້ອງ.

### ຫ້ອງທີ 7: ກໍລະນີສຶກສາ: ການນຳໃຊ້ຫຼັກການບໍ່ລົງໂທດທີ່ບໍ່ເປັນເອກະພາບກັນໃນພາກປະຕິບັດຕົວຈິງ

ເຖິງວ່າ ຫຼັກການບໍ່ລົງໂທດ ອາດຈະກຳນົດໄວ້ໃນກົດໝາຍ, ມັນອາດຈະບໍ່ມີການນຳໃຊ້ເປັນເອກະພາບກັນໃນພາກປະຕິບັດຕົວຈິງ. ສິ່ງນີ້ອາດຈະເປັນຈິງໄດ້ ລະຫວ່າງລັດ ໃນເສັ້ນທາງການຄ້າມະນຸດ ຫຼື ພາຍໃນລັດດຽວ. ໃນສະຖານະການໜຶ່ງ, ແມ່ຍິງໄວໜຸ່ມສອງຄົນທີ່ຖືກຄ້າມະນຸດຈາກປະເທດອຸສເບກິສຖານ ໂດຍໃຫ້ສັນຍາທີ່ບໍ່ເປັນຈິງວ່າຈະໃຫ້ເຮັດວຽກເປັນພະນັກງານເສີບໃນປະເທດໄທ. ເມື່ອມາຮອດ ພວກເຂົາຖືກບັງຄັບໃຫ້ເປັນໂສເພນີ ເປັນເວລາຫົກເດືອນ ກ່ອນທີ່ຈະຖືກຂາຍໃຫ້ແກ່ແກ້ງຊາວຈີນ ທີ່ສັນຍາວ່າຈະປ່ອຍເຂົາເຈົ້າຖ້າຫາກພວກເຂົານຳເອົາ 'ສິນຄ້າ' ເຂົ້າໄປ. ພວກເຂົາທັງສອງ ຕົກລົງຕໍ່ກັບຂໍ້ສະເໜີນັ້ນ ແລະ ເດີນທາງຈາກປາກິດສະຖານ ໄປປະເທດໄທເພື່ອລັກລອບຂົນຢາເສບຕິດໃນກະເປົາເດີນທາງຂອງເຂົາເຈົ້າ. ພວກເຂົາໄດ້ຖືກຈັບຕົວໃນບາງກອກ, ຖືກດຳເນີນຄະດີ, ຖືກຕັດສິນ ແລະ ລົງໂທດຈຳຄຸກ 32 ປີ ແລະ 25 ປີ. ຕໍ່ມາ ຄົນໜຶ່ງໄດ້ຮັບການອະໄພຍະໂທດ ແລະ ຖືກສົ່ງກັບປະເທດດ້ວຍການສະໜັບສະໜູນຈາກອົງການ NGO, ໃນຂະນະທີ່ອີກຄົນໜຶ່ງຍັງຢູ່ໃນຄຸກ. ຕົວຢ່າງນີ້ສະແດງໃຫ້ເຫັນວ່າຫຼັກການບໍ່ລົງໂທດ ອາດຈະບໍ່ຖືກນຳໃຊ້ເປັນ ເອກະພາບກັນ ແລະ ສິ່ງຜົນໄດ້ຮັບທີ່ແຕກຕ່າງກັນ ສຳລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

ແຫຼ່ງທີ່ມາ: *ຂໍ້ສະເໜີແນະນຳດ້ານນະໂຍບາຍ ແລະ ກົດໝາຍ ຕໍ່ກັບການຈັດຕັ້ງປະຕິບັດຂໍ້ກຳນົດຫຼັກການບໍ່ລົງໂທດຢ່າງມີປະສິດທິພາບ ຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ* (OSCE, ວຽນນາ 2013) 25

**ການຈັດຕັ້ງປະຕິບັດບົດບັນຍັດວ່າດ້ວຍ ການບໍ່ດໍາເນີນຄະດີ ຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຢູ່ໃນຂັ້ນຕອນການດໍາເນີນຄະດີອາຍາ:** ໂດຍທົ່ວໄປແລ້ວ, ຜູ້ຕອບຄໍາຖາມ ມີທັດສະນະວ່າ ເຈົ້າໜ້າທີ່ໄທ ນໍາໃຊ້ມາດຕາ 41 ຂອງ *ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ,* ປີ ພ.ສ. 2551 (2008) ຢ່າງເຄັ່ງຄັດ. ບາງຄົນ ຮູ້ສຶກວ່າ ຂໍ້ກໍານົດ ສໍາລັບຂໍອະນຸຍາດ ຈາກ ກະຊວງ ເພື່ອດໍາເນີນຄະດີຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນຂໍ້ຫາການເຂົ້າເມືອງຜິດກົດໝາຍ ຫຼື ການຂາຍໂສເພນີ, ກໍານົດ ມາດຕະຖານການປົກປ້ອງທີ່ສູງກວ່າ ສົນທິສັນຍາອາຊຽນ. ອີງຕາມທັດສະນະນີ້, ມັນເປັນໄປບໍ່ໄດ້ ຖ້າອີງຕາມຂັ້ນຕອນ ທີ່ຜູ້ຖືກເຄາະຮ້າຍທີ່ຖືກລະບຸຕົວມາແລ້ວ ຈະຖືກດໍາເນີນຄະດີ, ເມື່ອເຈົ້າໜ້າທີ່ສືບສອບ-ສອບສວນ, ໄອຍະການ ແລະ ສານ ບໍ່ມີດູນພິນິດ ທີ່ຈະດໍາເນີນຄະດີຜູ້ຖືກເຄາະຮ້າຍ; ມີພຽງແຕ່ລັດຖະມົນຕີເທົ່ານັ້ນ ທີ່ມີສິດອໍານາດ ໃນການອະນຸຍາດໃຫ້ມີການດໍາເນີນຄະດີຕໍ່ເຂົາເຈົ້າ.

**ເມື່ອໃດ ຄວນຈະນໍາໃຊ້ ຫຼັກການການບໍ່ລົງໂທດຕໍ່ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ:** ເຈົ້າໜ້າທີ່ປະຕິບັດກົດໝາຍໜຶ່ງທ່ານໄດ້ອະທິບາຍວ່າ ການປະຕິບັດຫຼັກການການບໍ່ລົງໂທດ ບໍ່ຄວນຂຶ້ນກັບຂະບວນການທີ່ຍືດເຍື້ອຍາວນານ ທີ່ຮຽກຮ້ອງໃຫ້ມີການກໍານົດຕົວຜູ້ຖືກເຄາະຮ້າຍຢ່າງເປັນທາງການ. ຄໍາແນະນໍາ ທີ່ຈະເຮັດໃຫ້ການກໍານົດຕົວຜູ້ຖືກເຄາະຮ້າຍ ຫຼື ຜົນຈາກການດໍາເນີນຄະດີຜູ້ຄ້າມະນຸດເປັນພື້ນຖານສໍາຄັນ ສໍາລັບນໍາໃຊ້ຫຼັກການ, ໄດ້ຮັບການພິຈາລະນາ ໂດຍຂັດກັບ ຈຸດປະສົງຂອງມັນ, ທີ່ເປັນການປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ສໍາລັບທັດສະນະຂອງບຸກຄົນດັ່ງກ່າວ, ມັນຄວນຈະພຽງພໍແລ້ວ ສໍາລັບການຕັ້ງຂໍ້ຫາຕໍ່ກັບຜູ້ຄ້າມະນຸດ.

**ບົດບາດຂອງເຈົ້າໜ້າທີ່ສືບສວນສອບສວນ ໃນການປະຕິບັດໃຫ້ສອດຄ່ອງກັບຫຼັກການການບໍ່ລົງໂທດ:** ມາດຕາ 41 ໄດ້ອະທິບາຍວ່າ ເຈົ້າໜ້າທີ່ສືບສວນ-ສອບສວນ ເປັນຜູ້ບັງຄັບໃຊ້; ບໍ່ແມ່ນໄອຍະການ ຫຼື ເຈົ້າໜ້າທີ່ຂອງສານ. ສັງເກດເຫັນວ່າ ສິ່ງທ້າທາຍໃນການຈັດຕັ້ງປະຕິບັດເກີດຂຶ້ນ ເມື່ອຜູ້ບັງຄັບໃຊ້ກົດໝາຍ ບໍ່ມີຄວາມເຂົ້າໃຈ ແລະຄວາມອາດສາມາດເທົ່າທີ່ຄວນ ໃນການເຂົ້າໃຈວ່າເປັນຫຍັງຜູ້ຖືກເຄາະຮ້າຍ ຈຶ່ງອາດຈະຕົວະ ຫຼື ບໍ່ສະໜອງຂໍ້ມູນຄວາມຈິງ ກ່ຽວກັບການຕົກເປັນຜູ້ຖືກເຄາະຮ້າຍຂອງເຂົາເຈົ້າ, ຊຶ່ງເຮັດໃຫ້ເຂົາເຈົ້າຮັບຜິດຊອບຕໍ່ຄວາມຜິດທີ່ຕົນໄດ້ກະທໍາ.[131] ແຕ່ເຖິງຢ່າງໃດກໍຕາມ, ຜູ້ຕອບຄໍາຖາມ ໄດ້ສະແດງຄວາມເຊື່ອໝັ້ນວ່າ ຕໍາຫຼວດໄດ້ປັບປຸງການນໍາໃຊ້ຫຼັກການຂອງຕົນ, ຊຶ່ງບໍ່ພຽງແຕ່ຫຼີກລ້ຽງການຕັ້ງຂໍ້ຫາແກ່ການກະທໍາຜິດທີ່ເກີດຂຶ້ນເທົ່ານັ້ນ, ແຕ່ກໍຍັງບໍ່ຕັ້ງຂໍ້ຫາແກ່ຜູ້ຖືກເຄາະຮ້າຍ ສໍາລັບຄວາມຜິດທີ່ນອນຢູ່ໃນປະມວນກົດໝາຍອາຍາ, ຊຶ່ງກວມເອົາ ແມ້ກະທັ້ງ ການກະທໍາຜິດທີ່ບໍ່ໄດ້ຖືກຍົກເວັ້ນ ຈາກມາດຕາ 41 ຢ່າງເຫັນໄດ້ແຈ້ງ. ຕົວຢ່າງທີ່ຖືກສະເໜີ ແມ່ນຜູ້ບັງຄັບໃຊ້ກົດໝາຍ ນໍາໃຊ້ດູນພິນິດເພື່ອບໍ່ຕັ້ງຂໍ້ຫາແກ່ຜູ້ຖືກເຄາະຮ້າຍ ສໍາລັບການກະທໍາຜິດ ທີ່ກ່ຽວຂ້ອງກັບເອກະສານ ຫຼື ການປອມແປງເອກະສານ, ການຕົວະກ່ຽວກັບຕົວຕົນ, ວີຊາທີ່ຢູ່ເກີນກໍານົດ, ຫຼື ມີສ່ວນຮ່ວມໃນການຄ້າມະນຸດ. ເຖິງຢ່າງໃດກໍຕາມ, ກໍໄດ້ສັງເກດເຫັນສິ່ງທ້າທາຍຢູ່ໃນນີ້ເຊັ່ນກັນ. ຄວາມຈິງທີ່ວ່າ ຕໍາຫຼວດຖືກວັດແທກຜົນງານ ດ້ວຍການທີ່ເຂົາເຈົ້າຕັ້ງຂໍ້ຫາ ແລະ ຈັບກຸມຜູ້ກະທໍາຜິດ ແລະ ອາດຈະຕ້ອງຮັບຜິດຊອບຕໍ່ການລະເລີຍ ໜ້າທີ່ຂອງຕົນ ຖ້າເຂົາເຈົ້າບໍ່ຕັ້ງຂໍ້ຫາ, ສັງເກດເຫັນວ່າອາດຈະບໍ່ເປັນສິ່ງຈູງໃຈ ໃຫ້ນໍາໃຊ້ຫຼັກການການບໍ່ລົງໂທດ (ໃຫ້ເບິ່ງຂ້າງລຸ່ມນີ້ ຢູ່ພາຍໃຕ້ການລະບຸຕົວຜູ້ຖືກເຄາະຮ້າຍ).

**ບົດບາດຂອງໄອຍະການ ແລະ ທະນາຍຄວາມຝ່າຍຈໍາເລີຍ ໃນການສະໜັບສະໜູນຫຼັກການການບໍ່ລົງໂທດ:** ຖ້າຜູ້ສືບສວນ ກ່າວຫາຜູ້ຖືກເຄາະຮ້າຍ ຈົນເຮັດໃຫ້ຜູ້ກ່ຽວ ກາຍເປັນຜູ້ຖືກກ່າວຫາກ່ອນຂຶ້ນສານ, ໄດ້ມີການອະທິບາຍວ່າ ໄອຍະການຄວນດໍາເນີນຄະດີ ກໍຕໍ່ເມື່ອເຂົາເຈົ້າແນ່ໃຈວ່າ ຜູ້ຕ້ອງສົງໄສບໍ່ແມ່ນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ນອກຈາກນັ້ນ, ຍັງໄດ້ລະບຸຢູ່ໃນນີ້ວ່າ ໄອຍະການມີໂອກາດທີ່ຈະດໍາເນີນຄະດີເຂົາເຈົ້າ ຢູ່ໃນລະດັບທີ່ໜ້ອຍສຸດເທົ່ານັ້ນ. ຕົວຢ່າງໜຶ່ງທີ່ສະເໜີແມ່ນ ຄະດີກ່ຽວກັບການຖືພາແທນຜູ້ອື່ນ, ຊຶ່ງວ່າໃນນັ້ນ ແມ່ຖືພາແທນຜູ້ອື່ນ ຢ້ານການຖືກໃສ່ຄວາມວ່າເປັນອາຊະຍາກໍາ ທີ່ກ່ຽວຂ້ອງກັບເທັກໂນໂລຍີການຈະເລີນພັນ, ຖ້າມີຂໍ້ມູນບໍ່ພຽງພໍ ໃນການຈັດປະເພດຜູ້ກ່ຽວວ່າເປັນຜູ້ຖືກເຄາະຮ້າຍ. ເຖິງຢ່າງໃດກໍ່ຕາມ, ຈະບໍ່ມີການກ່າວຫາໃດໆຕໍ່

131 *ບົດວິເຄາະ ການຄ້າມະນຸດ ທີ່ປະເທດໄທ* (Liberty Asia, ປີ 2017) 30

ຜູ້ກ່ຽວ, ຊຶ່ງວ່າໄອຍະການ ມີທາງເລືອກທີ່ຈະປົກປ້ອງຜູ້ກ່ຽວ ໃຫ້ເປັນພະຍານຕໍ່ສູ້ກັບຜູ້ທີ່ກໍ່ຄະດີຂູດຮີດລາວ. ໃນນີ້, ໄດ້ສັງເກດເຫັນ ຢູ່ໃນຄະດີດັ່ງກ່າວວ່າ ເມື່ອຜູ້ເປັນແມ່ບໍ່ແມ່ນເຈົ້າຂອງໄຂ່, ອາດຈະມີການລະເມີດຂອງອາຊະຍາກຳ ທີ່ກ່ຽວຂ້ອງກັບເຕັກໂນໂລຢີການຈະເລີນພັນ, ແຕ່ການດຳເນີນຄະດີກັບຜູ້ທີ່ຖືພາແທນຈະມີຄວາມສ່ຽງຕໍ່ການໄດ້ຮັບຄວາມຮ່ວມມືຈາກເຂົາເຈົ້າ. ທະນາຍຄວາມຝ່າຍຈຳເລີຍ ຍັງມີບົດບາດຢູ່ໃນເລື່ອງນີ້ ໂດຍໃຫ້ການປົກປ້ອງຢ່າງເຕັມທີ່ແກ່ຜູ້ຖືກດຳເນີນຄະດີໃນສານ, ລວມທັງການດຶງເອົາມາດຕະການ 41 ຂຶ້ນມານຳໃຊ້ ຖ້າຫາກວ່າມັນກ່ຽວຂ້ອງກັບການກະທຳຜິດ ທີ່ຜູ້ຖືກເຄາະຮ້າຍໄດ້ຖືກກ່າວຫາ.

**ບົດບາດຂອງສານ ໃນການຢືນຢັນທີ່ຈະສືບຕໍ່ປະຕິບັດ ຫຼັກການການບໍ່ລົງໂທດ:** ຜູ້ຕອບຄຳຖາມ ໄດ້ອະທິບາຍວ່າ, ໃນທາງຂອງວິຊາການ, ສານບໍ່ມີອຳນາດທີ່ຈະຍົກຟ້ອງຄະດີ ຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຖ້າເຈົ້າໜ້າທີ່ສືບສວນ-ສອບສວນ ແລະ ໄອຍະການ ເລືອກທີ່ຈະດຳເນີນຄະດີເຂົາເຈົ້າ. ຂໍ້ຍົກເວັ້ນ ແມ່ນມີຢູ່ໃນ *ປະມວນກົດໝາຍອາຍາ* ຊຶ່ງແມ່ນຢູ່ໃນກໍລະນີເປັນ*ເຫດສຸດວິໄສ*, ເມື່ອຜູ້ຖືກເຄາະຮ້າຍ ຖືກສະຖານະການທີ່ຜິດປົກກະຕິບີບບັງຄັບໃຫ້ປົກປ້ອງຕົນເອງ, ເຊັ່ນວ່າ, ຈາກການທຳຮ້າຍຮ່າງກາຍທີ່ກຳລັງຈະເກີດຂຶ້ນ. ຖ້າບໍ່ແມ່ນໃນກໍລະນີດັ່ງກ່າວ, ສານອາດສາມາດເຮັດວຽກກັບໄອຍະການເພື່ອເຮັດໃຫ້ຂໍ້ກ່າວຫາຫຼຸດລົງ. ມີການລາຍງານວ່າ ມີຄະດີທີ່ຖືກຍົກຟ້ອງ ເມື່ອຄົ້ນພົບວ່າ ຜູ້ກະທຳຜິດເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ຄະນະລູກຂຸນ ຫລື ບັນດາຜູ້ພິພາກສາທີ່ຕັດສິນຄະດີ ມີດູນພິນິດ ທີ່ຈະລືມກັບຄູ່ກໍລະນີໂດຍກົງໃນເວລາໄຕ່ສວນຄະດີ, ແຕ່ເຂົາເລືອກທີ່ຈະບໍ່ປະຕິບັດເຊັ່ນນັ້ນ ຫລືບໍ່ຖາມຄຳຖາມໃດໆ ທີ່ອາດເປີດເຜີຍວ່າ ຜູ້ຕ້ອງຫາກະທຳຜິດ ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

## ສິ່ງທ້າທາຍ ໃນການຮ່ວມມືລະຫວ່າງປະເທດ

**ຫຼັກການການບໍ່ລົງໂທດ ຢູ່ໃນຂໍ້ຕົກລົງລະຫວ່າງສອງຝ່າຍ:** ໄທ ມີ MOU ທີ່ຢືນຢັນວ່າ ຜູ້ຖືກເຄາະຮ້າຍຈະຕ້ອງຖືກປະຕິບັດ ໃນຖານະເປັນຜູ້ຖືກເຄາະຮ້າຍ ບໍ່ແມ່ນຜູ້ກະທຳຜິດ, ແລະ ຕົກລົງທີ່ຈະບໍ່ລົງໂທດຜູ້ຖືກເຄາະຮ້າຍໃນການທີ່ເຂົາເຈົ້າ ເຂົ້າ-ອອກຈາກປະເທດຂອງຕົນແບບຜິດກົດໝາຍ, ຫຼື ທຸກການກະທຳຜິດອື່ນໆ ທີ່ເກີດຂຶ້ນໂດຍກົງ ຂອງການຄ້າມະນຸດ ລວມທັງກັບປະເທດມຽນມາ (ປີ 2009) (ມາດຕາ 8(a)); ກັບປະເທດຈີນ (ປີ 2018) (ມາດຕາ 5); ແລະ ສຳລັບແມ່ຍິງ ແລະ ເດັກນ້ອຍເທົ່ານັ້ນ, ກັບປະເທດກຳປູເຈຍ (ປີ 2014) (ມາດຕາ 6) ແລະກັບປະເທດຫວຽດນາມ (2008) (ມາດຕາ 6). ບົດບັນທຶກຄວາມເຂົ້າໃຈ (MOU) ປີ 2017 ລະຫວ່າງ ລາວ ແລະໄທ ບໍ່ໄດ້ກ່າວເຖິງ ການບໍ່ລົງໂທດ ແບບສະເພາະເຈາະຈົງ ແຕ່ເວົ້າເຖິງການປົກປ້ອງທາງກົດໝາຍ (ມາດຕາ 6) ແລະຄວາມຈຳເປັນທີ່ຈະບໍ່ເຮັດໃຫ້ ຜູ້ຖືກເຄາະຮ້າຍຕົກເປັນຜູ້ຖືກເຄາະຮ້າຍຄືນອີກ ຢູ່ໃນການດຳເນີນຄະດີທາງກົດໝາຍ (ມາດຕາ 17). ບໍ່ໄດ້ມີການປຶກສາຫາລື ກ່ຽວກັບການນຳໃຊ້ບັນດາຂໍ້ຕົກລົງເຫຼົ່ານີ້ ໃນທາງປະຕິບັດ ນອກເໜືອຈາກປະເທດທີ່ໃຫ້ການສຳພາດ ໂດຍສັງເກດວ່າ ເຈົ້າໜ້າທີ່ຝ່າຍໄທໄດ້ປະຕິບັດຕາມຫຼັກການການບໍ່ລົງໂທດ ຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍປະສານສົມທົບກັບເຈົ້າໜ້າທີ່ຂອງປະເທດອື່ນໆ ໂດຍບໍ່ໄດ້ກຳນົດຢ່າງຈະແຈ້ງໄວ້ ຢູ່ໃນຂໍ້ຕົກລົງການຮ່ວມມືຕ່າງໆ.

**ວິທີການທີ່ບໍ່ສອດຄ່ອງກັບ ຫຼັກການການບໍ່ລົງໂທດ ຢູ່ໃນປະເທດທີ່ແຕກຕ່າງກັນ:** ຜູ້ຕອບຄຳຖາມ ໄດ້ເນັ້ນໜັກໃຫ້ເຫັນເຖິງຄວາມສຳຄັນ ຂອງວິທີການທີ່ສອດຄ່ອງກັນໃນການຕ້ານການຄ້າມະນຸດ ເພື່ອໃຫ້ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ລະຫວ່າງປະເທດ ໄດ້ຮັບການປົກປ້ອງຈາກການລົງໂທດໃນປະເທດຕ່າງໆ. ຈຸດນີ້ໄດ້ຮັບການເນັ້ນໜັກ ບໍ່ພຽງແຕ່ສຳລັບບັນດາປະເທດອາຊຽນເທົ່ານັ້ນ, ແຕ່ກໍຍັງສຳລັບນອກເໜືອບັນດາປະເທດ ທີ່ມີພົນລະເມືອງໄທຖືກຄ້າມະນຸດ, ທີ່ຈຳເປັນຈະຕ້ອງຍອມນຳໃຊ້ຫຼັກການບໍ່ລົງໂທດ ຢູ່ໃນສະພາບການຂອງເຂົາເຈົ້າ. ປະເທດທີ່ໃຫ້ການສຳພາດໄດ້ກ່າວວ່າ, ເຈົ້າໜ້າທີ່ໄທ ເຮັດວຽກຮ່ວມກັບບັນດາປະເທດຕົ້ນທາງ ໃນການແລກປ່ຽນຂໍ້ມູນຂ່າວສານ ເພື່ອຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ, ແລະ ໄດ້ຊີ້ໃຫ້ເຫັນເຖິງຄວາມສຳຄັນຂອງ ວຽກງານຂອງແຜນງານ ASEAN-ACT ແລະ ບັນດາອົງການຈັດຕັ້ງອື່ນໆທີ່ບໍ່ຂຶ້ນກັບລັດຖະບານ ໃນການສື່ສານຫຼັກການປະຕິບັດທີ່ດີທີ່ສຸດ.

## ສິ່ງທ້າທາຍໃນການກຳນົດຕົວຜູ້ຖືກເຄາະຮ້າຍ

**ການກຳນົດຕົວຜູ້ຖືກເຄາະຮ້າຍທີ່ມີຄວາມສຳຄັນ ຕໍ່ການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ:** ບັນດາຜູ້ທີ່ປຶກສາຫາລືໃນໂຕະມົນໄດ້ເນັ້ນໜັກວ່າ: ສໍາລັບການທີ່ຫຼັກການບໍ່ລົງໂທດຈະມີຜົນນຳໃຊ້ໄດ້, ກ່ອນອື່ນໝົດ ຕ້ອງກຳນົດຕົວຜູ້ຖືກເຄາະຮ້າຍໃຫ້ໄດ້ເສຍກ່ອນ. ຖ້າບໍ່ສາມາດເຮັດເຊັ່ນນັ້ນໄດ້, ເຖິງແມ່ນວ່າ ໃນຄວາມເປັນຈິງຈະມີຫຼັກຖານທີ່ສາມາດລະບຸວ່າເຂົາເຈົ້າເປັນຜູ້ຖືກເຄາະຮ້າຍກໍຕາມ, ແຕ່ເມື່ອໃດທີ່ເຂົາເຈົ້າໄດ້ເຂົ້າສູ່ລະບົບຍຸຕິທຳທາງອາຍາ, ເຂົາເຈົ້າຈະບໍ່ສາມາດໄດ້ຮັບການປົກປ້ອງຈາກການລົງໂທດ ທີ່ເຂົາເຈົ້າໄດ້ມີສ່ວນພົວພັນຢູ່ໃນນັ້ນແລ້ວ. ໄດ້ມີການຮຽກຮ້ອງໃຫ້ຂະບວນການລະບຸຕົວຜູ້ຖືກເຄາະຮ້າຍມີຄວາມໂປ່ງໃສ. ດັ່ງນັ້ນ, ເຫດຜົນທີ່ວ່າ ເຂົາເຈົ້າຖືກກຳນົດຕົວເປັນຜູ້ຖືກເຄາະຮ້າຍຫຼືບໍ່ນັ້ນ ຈະສາມາດເຂົ້າໃຈໄດ້ດີຂຶ້ນ ແລະ ມີການແກ້ໄຂທຸກຂໍ້ຜິດພາດ. ບົດລາຍງານປະຈຳປີ 2020 ວ່າດ້ວຍການຄ້າມະນຸດຂອງກະຊວງການຕ່າງປະເທດ ແຫ່ງປະເທດສະຫາລັດອາເມລິກາ ໄດ້ເວົ້າເຖິງ ຄວາມຜິດພາດຢູ່ໃນຂະບວນການກຳນົດຕົວຕົນ ຊຶ່ງເປັນຜົນເສຍແກ່ ການຈັດຕັ້ງປະຕິບັດນິຕິກຳວ່າດ້ວຍການບໍ່ລົງໂທດຂອງໄທ, ແລະ ເປັນການເພີ່ມຄວາມສ່ຽງທີ່ຜູ້ຖືກເຄາະຮ້າຍຈະຖືກລົງໂທດ ລວມທັງ ຕໍ່ການລັກລອບເຂົ້າ-ອອກເມືອງ ແລະ ການຄ້າປະເວນີ.[132]

**ການທີ່ຜູ້ຖືກເຄາະຮ້າຍມັກທີ່ຈະເລືອກຖືກລົງໂທດທາງອາຍາ ຫຼາຍກວ່າທີ່ຈະຖືກກຳນົດຕົວ ແລະ ໄດ້ຮັບການປົກປ້ອງ:** ໃນບາງກໍລະນີ, ໄດ້ມີການລາຍງານວ່າ ຜູ້ຖືກເຄາະຮ້າຍມັກຈະຍອມຮັບວ່າ ຕົນໄດ້ກະທຳຜິດ ແລະ ຈ່າຍຄ່າປັບໄໝ ສຳລັບຄວາມຜິດທີ່ກ່ຽວຂ້ອງກັບການເຂົ້າເມືອງຜິດກົດໝາຍ ຫຼື ການເປັນໂສເພນີ, ຫຼາຍກວ່າທີ່ຈະຖືກກຳນົດຕົວຕົນ ແລະ ໄດ້ຮັບການປົກປ້ອງ ໃນນາມເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.[133] ຕົວຢ່າງແມ່ນການສະເໜີໃຫ້ແມ່ຍິງ ທີ່ຖືກຈັບໃນຂໍ້ຫາຊັກຊວນຄ້າປະເວນີ ທີ່ຈ່າຍຄ່າປັບໃໝ 500 ບາດ ແລະ ຍອມຮັບວ່າມີຄວາມຜິດຍ້ອນເຫດໃຫ້ຄວາມສະດວກ, ແລະ ຕໍ່ມາໄດ້ຖືກກັກຕົວເພື່ອເນລະເທດອອກປະເທດ ເຖິງແມ່ນວ່າ ນາງຈະໄດ້ຮັບການປົກປ້ອງຈາກກົດໝາຍກໍຕາມ ຖ້າຫາກນາງຖືກກຳນົດໃນເບື້ອງຕົ້ນວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ໄດ້ສັງເກດເຫັນວ່າ ປະເພດການດຳເນີນຄະດີ ‘ລະດັບຕໍ່າ’ ນີ້ ແມ່ນເປັນເລື່ອງປົກກະຕິ, ຊຶ່ງຜູ້ຖືກເຄາະຮ້າຍບາງຄົນຖືກກຳນົດຕົວ ກໍຕໍ່ເມື່ອເຂົາເຈົ້າໄດ້ໃຊ້ເວລາເພີ່ມ ຢູ່ໃນການກັກຂັງ ທີ່ລໍຖ້າການເນລະເທດອອກປະເທດ.

**ບົດບາດຂອງນາຍພາສາ ໃນການກຳນົດຕົວ ແລະ ການກະທຳຜິດທາງອາຍາ ຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ:** ການເຂົ້າເຖິງນາຍພາສາທີ່ໄດ້ຜ່ານການຝຶກອົບຮົມຢ່າງເໝາະສົມ ຖືວ່າເປັນສິ່ງທ້າທາຍຕົ້ນຕໍ ໃນການກຳນົດຕົວຜູ້ຖືກເຄາະຮ້າຍ. ອົງການຈັດຕັ້ງທີ່ບໍ່ສັງກັດລັດ ໄດ້ລາຍງານວ່າ ນາຍພາສາທີ່ໄດ້ເຂົ້າຮ່ວມການສຳພາດການກຳນົດຕົວຜູ້ຖືກເຄາະຮ້າຍ ແລະ ການດຳເນີນຄະດີຂອງສານ ບໍ່ໄດ້ຮັບການຝຶກອົບຮົມ ຢ່າງເໝາະສົມສະເໝີໄປ, ແລະ ແມ້ກະທັ້ງ ບາງຄັ້ງ ກໍ່ພະຍາຍາມຊັກຊວນໃຫ້ຜູ້ຖືກເຄາະຮ້າຍສາລະພາບການກະທຳທີ່ຜິດກົດໝາຍ ທີ່ຜູ້ຄ້າມະນຸດບັງຄັບໃຫ້ເຂົາເຈົ້າເຮັດ.[134]

**ບົດບາດ ແລະ ຄວາມອາດສາມາດຂອງຕຳຫຼວດ ໃນການກຳນົດຕົວຜູ້ຖືກເຄາະຮ້າຍ ແລະ ນຳໃຊ້ດູນພິນິດ ເພື່ອທີ່ຈະບໍ່ລົງໂທດເຂົາເຈົ້າ:** ຜູ້ຕອບຄຳຖາມ ໄດ້ໃຫ້ຂໍ້ສັງເກດວ່າ ເຈົ້າໜ້າທີ່ດ່ານໜ້າອາດຈະມີຄວາມພ້ອມໃນການລະບຸຕົວຂອງການຄ້າມະນຸດ ຢູ່ໃນຄະດີທີ່ມີສ່ວນຮ່ວມຂອງເດັກນ້ອຍ ຫຼື ມີການໃຊ້ຄວາມຮຸນແຮງ, ແຕ່ນັ້ນກໍຍັງຂາດຄວາມອາດສາມາດ ໃນການກຳນົດຕົວຂອງການຄ້າມະນຸດ ເມື່ອມີການນຳໃຊ້ວິທີການອັນລະອຽດອ່ອນ. ຜູ້ຕອບຄຳຖາມ ໄດ້ໃຫ້ຂໍ້ສັງເກດວ່າ ຜົນງານຂອງເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ອາດຈະຖືກວັດແທກດ້ວຍຈຳນວນການຈັບກຸມ ທີ່ເຂົາເຈົ້າໄດ້ປະຕິບັດ ແລະ ຂໍ້ກ່າວຫາທີ່ເຂົາເຈົ້າໄດ້ຍື່ນ. ສິ່ງດັ່ງກ່າວນີ້ ໄດ້ຖືກແນະນຳວ່າ ເປັນສິ່ງທີ່ບໍ່ສ້າງແຮງຈູງໃຈ ແກ່ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ໃນການກຳນົດຕົວຜູ້ຖືກເຄາະຮ້າຍ ໃນບັນດາຄົນທີ່ເຂົາເຈົ້າໄດ້ປະເຊີນໜ້າທີ່ເປັນຜູ້ກະທຳຜິດ, ຊຶ່ງ ໝາຍຄວາມວ່າ ຜູ້ຖືກເຄາະຮ້າຍອາດຈະຕົກຢູ່ໃນ ‘ພື້ນທີ່ສີຂີ້ເທົ່າ’ ແລະ ຈະ

---

132 ບົດລາຍງານ ປະຈຳປີ 2020 ວ່າດ້ວຍການຄ້າມະນຸດ: ປະເທດໄທ (ການຊວງການຕ່າງປະເທດ ແຫ່ງປະເທດສະຫາລັດອາເມລິກາ, 2020).

133 ສຳລັບຂໍ້ມູນເພີ່ມຕື່ມ ກ່ຽວກັບສິ່ງທ້າທ້າຍທີ່ວ່າ ຜູ້ຖືກເຄາະຮ້າຍ ຢູ່ໃນການໄດ້ຮັບ ການປົກປ້ອງ ໃນນາມເປັນຜູ້ຖືກເຄາະຮ້າຍ ຂອງການຄ້າມະນຸດ, ໃຫ້ເບິ່ງ: ບົດຂຽນ ຂອງທ່ານ McAdam, Marika., ຫົວຂໍ້: *ສິດເສລີພາບໃນການເຄື່ອນຍ້າຍ ຂອງບຸກຄົນທີ່ຖືກລະບຸຕົວວ່າເປັນຜູ້ຖືກເຄາະຮ້າຍ ຂອງການຄ້າມະນຸດ: ການວິເຄາະກົດໝາຍ, ນະໂຍບາຍ ແລະ ຫຼັກການປະຕິບັດ ໃນພາກພື້ນອາຊຽນ* (ASEAN-ACT, 2021)

134 ບົດລາຍງານການຄ້າມະນຸດ ປະຈຳປີ 2021: ປະເທດໄທ (ກະຊວງການຕ່າງປະເທດ ແຫ່ງ ປະເທດສະຫາລັດອາເມລິກາ, ປີ 2021). ກະຊວງການຕ່າງປະເທດ ລາຍງານວ່າ ກົດໝາຍວ່າດ້ວຍການໝິ່ນປະໝາດທາງອາຍາ ຂອງປະເທດໄທ ໄດ້ຖືກນຳໃຊ້ ໂດຍບໍລິສັດຕ່າງໆ ໃນທາງຍຸດທະສາດ ເພື່ອດຳເນີນການກ່າວຫາແກ່ຜູ້ທີ່ອາດຈະເປັນ ຜູ້ຖືກເຄາະຮ້າຍ ແລະ ຜູ້ສະໜັບສະໜູນ.

ບໍ່ຖືກກຳນົດຕົວເລີຍ, ແລະ ກໍຈະບໍ່ໄດ້ນຳໃຊ້ ຫຼັກການການບໍ່ລົງໂທດ ແກ່ເຂົາເຈົ້າ. ການປ່ຽນແປງວິທີທາງ ໃນການວັດແທກຜົນງານຂອງຕຳຫຼວດ ແລະ ການດຳເນີນການຝຶກອົບຮົມ ກ່ຽວກັບການກວດກາໄດ້ຖືກເນັ້ນໜັກວ່າ ເປັນມາດຕະການທີ່ສຳຄັນ ເພື່ອນຳໄປສູ່ການຮັບປະກັນວ່າ ເຈົ້າໜ້າທີ່ໄດ້ຮັບສິດອຳນາດ ໃນການກຳນົດຕົວຜູ້ຖືກເຄາະຮ້າຍ ແລະ ໄດ້ຮັບແຮງຈູງໃຈ ໃນການນຳໃຊ້ດຸນພິນິດຂອງຕົນ ເພື່ອບໍ່ກ່າວຫາເຂົາເຈົ້າວ່າ ເປັນຜູ້ກະທຳຜິດ.

**ບົດບາດຂອງ ອົງການຈັດຕັ້ງທີ່ບໍ່ສັງກັດລັດ (NGO) ໃນການຊ່ວຍເຫຼືອການກຳນົດຕົວຜູ້ຖືກເຄາະຮ້າຍ ແລະ ການປົກປ້ອງຈາກການລົງໂທດ:** ການມີສ່ວນຮ່ວມຂອງຕຳຫຼວດ ແລະ ອົງການ NGO ຢູ່ໃນຂະບວນການກຳນົດຕົວ ຖືວ່າເປັນຫຼັກການປະຕິບັດທີ່ດີໃນການກຳນົດຕົວ. ມີການລາຍງານວ່າ ການມີສ່ວນຮ່ວມຂອງອົງການ NGO ຢູ່ໃນຂະບວນການກວດກາໄດ້ສົ່ງຜົນເຮັດໃຫ້ການກຳນົດຕົວຜູ້ຖືກເຄາະຮ້າຍ ມີປະສິດທິພາບຫຼາຍຂຶ້ນ, ໂດຍມີການສະໜັບສະໜູນ ການສ້າງຄວາມເຊື່ອໝັ້ນກັບຜູ້ຖືກເຄາະຮ້າຍ ທີ່ບໍ່ເຫັນວ່າຕົນເອງເປັນຜູ້ຖືກເຄາະຮ້າຍ ແລະ ບໍ່ໄວ້ວາງໃຈຕຳຫຼວດ. ຜູ້ຕອບຄຳຖາມ ທີ່ເປັນອົງການ NGO ຍັງໄດ້ອ້າງເຖິງກໍລະນີ ທີ່ເຂົາເຈົ້າໄດ້ຈັດການ ເພື່ອໃຫ້ຄົນທີ່ຢູ່ໃນລະບົບຍຸຕິທຳທາງອາຍາ ຖືກຮັບຮູ້ວ່າເປັນຜູ້ຖືກເຄາະຮ້າຍ ແລະ ໃຫ້ການຊ່ວຍເຫຼືອຕາມຄວາມເປັນຈິງ.

**ຄວາມສຳຄັນ ຂອງການກຳນົດຕົວ ແລະ ການປົກປ້ອງ ຜູ້ຖືກເຄາະຮ້າຍ ທີ່ເປັນເດັກນ້ອຍ:** ຜູ້ເຂົ້າຮ່ວມ ໄດ້ໃຫ້ການສັງເກດວ່າ ອາຍຸຂອງຄົນໆໜຶ່ງ ມັກຈະເປັນຄວາມແຕກຕ່າງກັນລະຫວ່າງເຂົາເຈົ້າ ໃນການຖືກກຳນົດຕົວ ແລະ ໄດ້ຮັບການປົກປ້ອງໃນນາມເປັນຜູ້ຖືກເຄາະຮ້າຍ ຫຼື ຖືກຈັດປະເພດ ແລະ ດຳເນີນຄະດີໃນນາມເປັນຜູ້ກະທຳຜິດ. ມີຕົວຢ່າງໜຶ່ງກໍຄືວ່າ, ບຸກຄົນໜຶ່ງ ທີ່ຖືກຈັບກຸມ ຍ້ອນຜະລິດ ແລະ ຂາຍ ຮູບພາບການລ່ວງລະເມີດທາງເພດເດັກນ້ອຍ ຕໍ່ມາໄດ້ຖືກກຳນົດຕົວວ່າ ເປັນເດັກນ້ອຍທີ່ມີອາຍຸຕ່ຳກວ່າ 15 ປີ. ເນື່ອງຈາກວ່າ ຜູ້ກ່ຽວຖືກກຳນົດຕົວວ່າເປັນເດັກນ້ອຍ, ຜູ້ກ່ຽວຈຶ່ງບໍ່ໄດ້ຮັບຂໍ້ກ່າວຫາ, ລວມທັງການກະທຳຜິດທີ່ບໍ່ໄດ້ນອນຢູ່ໃນມາດຕາ 41. ອີກຄະດີໜຶ່ງ ແມ່ນພົວພັນກັບກຸ່ມຄົນຈຳນວນ 14 ຄົນ ທີ່ຖືກກຳນົດຕົວວ່າ ອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ; ໃນຈຳນວນດັ່ງກ່າວ, ຜູ້ໃຫຍ່ໄດ້ຖືກດຳເນີນຄະດີ ໃນຂໍ້ຫາຄ້າປະເວນີ ແລະ ຖືກເນລະເທດ ຍ້ອນເຂົາເຈົ້າບໍ່ຍອມໃຫ້ຄວາມຮ່ວມມື. ສຳລັບເດັກນ້ອຍ, *ກົດໝາຍວ່າດ້ວຍການປົກປ້ອງເດັກ* ມີຜົນນຳໃຊ້ ເຖິງແມ່ນວ່າເຂົາເຈົ້າບໍ່ຕ້ອງການໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ ຫຼື ຖືກກຳນົດຕົວ ແລະ ໄດ້ຮັບການຊ່ວຍເຫຼືອ ໃນນາມເປັນຜູ້ຖືກເຄາະຮ້າຍກໍຕາມ. ໄດ້ສັງເກດເຫັນວ່າ ຜູ້ເຄື່ອນຍ້າຍທີ່ເປັນເດັກນ້ອຍ ທີ່ຕົກເປັນເຫຍື່ອຂອງການຄ້າມະນຸດ ເພື່ອຂູດຮີດທາງເພດມີຄວາມສ່ຽງທີ່ຈະຖືກລົງໂທດ ເມື່ອເຈົ້າໜ້າທີ່ບໍ່ຮູ້ວ່າເອກະສານມີການປອມແປງອາຍຸ. ໃນກໍລະນີດັ່ງກ່າວ, ເຂົາເຈົ້າອາດຈະຖືກກຳນົດຕົວຜິດວ່າ ເປັນຜູ້ກະທຳຜິດ ທີ່ພົວພັນກັບການຄ້າປະເວນີ ແທນທີ່ຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ບົດຮຽນທີ່ດີທີ່ໄດ້ກຳນົດໄວ້ນະທີ່ນີ້ກໍຄື ການກຳນົດອາຍຸຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດແມ່ນໄດ້ອີງໃສ່ວິທີການທາງວິທະຍາສາດ ແລະ ສັງຄົມທີ່ເອົາຜູ້ຖືກເຄາະຮ້າຍເປັນຈຸດໃຈກາງ.

**ການກຳນົດຕົວຜິດວ່າ ຜູ້ທີ່ບໍ່ຖືກເຄາະຮ້າຍເປັນຜູ້ຖືກເຄາະຮ້າຍ:** ນອກເໜືອຈາກການທີ່ ຜູ້ຖືກເຄາະຮ້າຍບໍ່ຖືກກຳນົດຕົວ ຢ່າງມີປະສິດທິພາບແລ້ວ, ກໍຍັງມີຄວາມເປັນຫ່ວງ ທີ່ຖືກຍົກຂຶ້ນມາ ຊຶ່ງກ່ຽວຂ້ອງກັບວ່າ ຜູ້ບໍ່ຖືກເຄາະຮ້າຍຖືກກຳນົດຕົວຜິດວ່າເປັນຜູ້ຖືກເຄາະຮ້າຍ. ຕົວຢ່າງໜຶ່ງ ແມ່ນການສະເໜີບຸກຄົນໜຶ່ງ ທີ່ຖືກກຳນົດຕົວວ່າ ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ຊຶ່ງຕໍ່ມາ ກໍຖືກສານກຳນົດວ່າບໍ່ແມ່ນຜູ້ຖືກເຄາະຮ້າຍ. ໃນກໍລະນີນີ້, ໄອຍະການ ໄດ້ຖາມສານວ່າ ຜູ້ກ່ຽວຈະຖືກລົງໂທດ ຫຼືບໍ່ ສຳລັບການເຂົ້າເມືອງຜິດກົດໝາຍ ແລະ ຈະຖືກຮຽກຮ້ອງໃຫ້ທົດແທນຄືນຄ່າໃຊ້ຈ່າຍທີ່ເກີດຂຶ້ນໂດຍກະຊວງພັດທະນາສັງຄົມ ແລະ ຄວາມປອດໄພຂອງມະນຸດ (MSDHS) ບໍ ສຳລັບການສະໜັບສະໜູນຜູ້ກ່ຽວ ໃນນາມເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ໃນເວລາຕອນທີ່ໄດ້ຂຽນ, ກໍລະນີນີ້ ຍັງບໍ່ທັນໄດ້ຮັບການແກ້ໄຂເທື່ອ. ຜູ້ຕອບຄຳຖາມບາງຄົນ ໄດ້ຊີ້ແຈງຢູ່ໃນຈຸດນີ້ວ່າ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄດ້ຮັບການປົກປ້ອງໃນລັກສະນະທີ່ວ່າ ຜູ້ຖືກເຄາະຮ້າຍຈາກອາດຊະຍາກຳອື່ນ ແລະ ຢູ່ໃນສະຖານະພາບອື່ນ (ເຊັ່ນ ຊາວອົບພະຍົບ ແລະ ຄົນທີ່ລັກລອບເຂົ້າເມືອງ) ບໍ່ໄດ້ຮັບການປົກປ້ອງແບບນີ້, ແລະ ການທີ່ນຳໃຊ້ຫຼັກການບໍ່ລົງໂທດ ໃນທາງທີ່ຜິດຈະຕ້ອງໄດ້ປ້ອງກັນ.

## ການລົງໂທດຜູ້ຖືກເຄາະຮ້າຍ ໃນທາງປະຕິບັດ

**ຄວາມສ່ຽງອັນສະເພາະຂອງຜູ້ຖືກເຄາະຮ້າຍທີ່ເປັນຄົນຕ່າງປະເທດ ຕໍ່ກັບການລົງໂທດ:** ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ເປັນຄົນຕ່າງປະເທດ ຊຶ່ງວ່າມີເດັກນ້ອຍລວມຢູ່ໃນນັ້ນ – ໄດ້ຖືກລະບຸວ່າ ມີຄວາມສ່ຽງທີ່ຈະ

ຖືກດຳເນີນຄະດີ, ປັບໃໝ, ຖືກກັກຂັງ ແລະ ສົ່ງອອກນອກປະເທດ. ຜູ້ທີ່ຖືກຂູດຮີດ ຢູ່ໃນຮູບແບບຂອງແຮງງານທີ່ບໍ່ແມ່ນການຂູດຮີດທາງເພດ ໄດ້ຖືກຕັ້ງຂໍ້ຫາເປັນການກະທຳຜິດໃນການເຂົ້າເມືອງແບບຜິດປົກກະຕິ, ການກະທຳຜິດທີ່ກ່ຽວຂ້ອງກັບເອກະສານ (ຊຶ່ງກ່ຽວຂ້ອງກັບຫນັງສືຜ່ານແດນ, ໃບອະນຸຍາດ ຫຼື ປຶ້ມປະຈຳຕົວຄົນເຮັດວຽກຢູ່ເທິງເຮືອ) ແລະ ການເຮັດວຽກ ໂດຍບໍ່ມີໃບອະນຸຍາດ. ໃນຂະນະດຽວກັນ, ຜູ້ທີ່ຖືກຂູດຮີດຢູ່ໃນອຸດສາຫະກຳໃຫ້ບໍລິການທາງເພດ ປະເຊີນກັບຄວາມສ່ຽງທີ່ຈະຖືກຕັ້ງຂໍ້ຫາເພີ່ມຕື່ມ ຢູ່ໃນ*ປະມວນກົດໝາຍອາຍາ ສະບັບປີ ພ.ສ. 2499 ແລະ ກົດໝາຍວ່າດ້ວຍການປ້ອງກັນ ແລະ ປາບປາມການຄ້າປະເວນີ ສະບັບປີ ພ.ສ. 2539.* ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ເປັນຄົນຕ່າງປະເທດ ທີ່ຖືກຂູດຮີດທາງເພດ ໄດ້ຖືກຕັ້ງຂໍ້ກ່າວຫາວ່າກະທຳຜິດທີ່ກ່ຽວຂ້ອງກັບການຄ້າປະເວນີ ແລະ ການເຂົ້າເມືອງແບບຜິດປົກກະຕິ. ເມື່ອຜູ້ຖືກເຄາະຮ້າຍຖືກເນລະເທດອອກປະເທດ ເປັນຜູ້ເຄື່ອນຍ້າຍຜິດກົດໝາຍ, ການຕົກເປັນຜູ້ຖືກເຄາະຮ້າຍຂອງເຂົາເຈົ້າ ອາດຈະມີຫຼັກຖານພຽງພໍ ກໍຕໍ່ເມື່ອຫຼັງຈາກເຂົາເຈົ້າ ໄດ້ກັບຄືນບ້ານ.

**ຄວາມສ່ຽງອັນສະເພາະຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ສຳລັບຈຸດປະສົງຂອງການຂູດຮີດທາງເພດ:** ຫົວຂໍ້ກ່ຽວກັບການກະທຳຜິດ *ທີ່ນອນຢູ່ໃນປະມວນກົດໝາຍອາຍາ ສະບັບປີ ພ.ສ. 2499* (ປີ ຄ.ສ. 1956) ທີ່ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ສຳລັບຈຸດປະສົງເພື່ອຂູດຮີດທາງເພດອາດຈະຂຶ້ນກັບ, ປະກອບມີ 'ການກະທຳຜິດ ທີ່ພົວພັນກັບການລ່ວງລະເມີດທາງເພດ' (ມາດຕາ 276 ຫາ ມາດຕາ 287); ການກະທຳຜິດຕໍ່ຊີວິດ ແລະ ຮ່າງກາຍ (ມາດຕາ 288-300) ແລະ ການກະທຳຜິດ ຕໍ່ສິດເສລີພາບ (ມາດຕາ 309-321). ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ສຳລັບຈຸດປະສົງເພື່ອການຂູດຮີດທາງເພດ ລວມທັງເດັກນ້ອຍ ສາມາດ ແລະ ຖືກລົງໂທດທາງອາຍາໂດຍ*ກົດໝາຍວ່າດ້ວຍການປ້ອງກັນ ແລະ ປາບປາມການຄ້າປະເວນີ* ສະບັບປີ ພ.ສ. 2539, ໂດຍສະເພາະ, ມາດຕາ 5 ແລະ 6:

> *ມາດຕາ 5. ບຸກຄົນໃດ ທີ່ຂໍຮ້ອງ, ຊັກນຳ, ແນະນຳຕົນເອງ ເພື່ອຕິດຕາມ ຫຼື ຊັກຊວນບຸກຄົນໃດ ໜຶ່ງຕາມທ້ອງຖະໜົນ, ສະຖານທີ່ສາທາລະນະ ຫຼື ສະຖານທີ່ອື່ນໆ ໃນລັກສະນະທີ່ເປີດເຜີຍ ແລະ ບໍ່ອາຍ ຫຼື ສ້າງຄວາມວຸ້ນວາຍແກ່ສາທາລະນະຊົນ ເພື່ອຈຸດປະສົງໃນການຄ້າປະເວນີ ຈະຕ້ອງຮັບຜິດຊອບຕໍ່ຄ່າປັບໃໝ ຊຶ່ງບໍ່ເກີນໜຶ່ງພັນບາດ.*
>
> *ມາດຕາ 6. ບຸກຄົນໃດທີ່ພົວພັນກັບຜູ້ອື່ນ ຢູ່ໃນສະຖານປະກອບອາຊີບໂສເພນີ ເພື່ອຈຸດປະສົງໃນການຂາຍໂສເພນີຂອງຕົນເອງ ຫຼື ຂອງຜູ້ອື່ນ ຈະຕ້ອງຮັບຜິດຊອບ ຕໍ່ການຖືກຕັດອິດສະລະພາບໃນໄລຍະທີ່ບໍ່ເກີນໜຶ່ງເດືອນ ຫຼື ປັບໄໝບໍ່ເກີນໜຶ່ງພັນບາດ ຫຼື ທັງຖືກຕັດອິດສະຫຼະພາບ ແລະ ທັງເສຍຄ່າປັບໄໝ.*

**ການດຳເນີນຄະດີຕໍ່ຄົນທີ່ຢູ່ໃນອຸດສາຫະກຳການບໍລິການທາງເພດ ຊຶ່ງເປັນຜົນມາຈາກຄວາມພະຍາຍາມໃນການຕ້ານການຄ້າມະນຸດ:** ກົດໝາຍໄທ ປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ຊຶ່ງເຮັດໃຫ້ຜູ້ທີ່ບໍ່ຖືກກຳນົດຕົວເປັນຜູ້ຖືກເຄາະຮ້າຍ ມີຄວາມສ່ຽງທີ່ຈະຖືກລົງໂທດທາງອາຍາ. ມີການອະທິບາຍວ່າ ຜູ້ທີ່ມີສ່ວນຮ່ວມຢູ່ໃນອຸດສະຫາກຳການບໍລິການທາງເພດ ອາດຖືກດຳເນີນຄະດີໃນຂໍ້ຫາຂໍຮ້ອງໃຫ້ມີເພດສຳພັນ, ຊຶ່ງຈະຖືກປັບໃໝ 1500 ບາດ ແລະ ຖືກກັກຂັງໄວ້ໃນຄຸກ 48 ຊົ່ວໂມງ. ຜູ້ທີ່ຢູ່ໃນສະພາບການ ທີ່ບໍ່ປົກກະຕິອາດຈະຖືກສົ່ງໃຫ້ເຈົ້າໜ້າທີ່ກວດຄົນເຂົ້າ-ອອກເມືອງ ແລະ ຖືກເນລະເທດອອກນອກປະເທດ. ແມ້ກະທັ່ງຄວາມຜິດເລັກໆນ້ອຍໆ ກໍສົ່ງຜົນໃຫ້ມີການບັນທຶກຄະດີອາຍາ. ຜູ້ເຂົ້າຮ່ວມຄົນນຶ່ງ ໄດ້ສະແດງຄວາມບໍ່ສະບາຍໃຈ ຢ່າງເລິກເຊິ່ງກ່ຽວກັບຄວາມພະຍາຍາມໃນການກອບກູ້ຊ່ວຍເຫຼືອຂອງຕົນ ທີ່ສົ່ງຜົນເຮັດໃຫ້ເກີດມີການລົງໂທດທາງອາຍາ ແກ່ຜູ້ທີ່ບໍ່ຖືກກຳນົດຕົວວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ຊຶ່ງເປັນຜູ້ທີ່ຖາມລາວວ່າ ເປັນຫຍັງ ເຂົາເຈົ້າຈຶ່ງຈະຕ້ອງເຂົ້າຄຸກ ຍ້ອນບາງສິ່ງບາງຢ່າງທີ່ແຜ່ລາມໄປທົ່ວປະເທດໄທ, ເຂົາເຈົ້າບໍ່ຮູ້ວ່າ ມັນເປັນເລື່ອງຜິດກົດໝາຍ. ລາວໄດ້ສັງເກດເຫັນວ່າ ລາວບໍ່ມີຄຳຕອບ ທີ່ໜ້າພໍໃຈຕໍ່ຄຳຖາມນີ້ ແລະ ໄດ້ແນະນຳວ່າ ຄວນແນະນຳກົດໝາຍມາຄວບຄຸມວຽກງານການບໍລິການທາງເພດຂອງຜູ້ໃຫຍ່ ເພື່ອຮັບປະກັນວ່າ ຄວາມພະຍາຍາມໃນການກອບກູ້ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈະບໍ່ສົ່ງຜົນເຮັດໃຫ້ເກີດມີການຕິດຄຸກ ແລະ ການດູຖູກຄົນທີ່ມີສ່ວນຮ່ວມໃນວຽກງານການບໍລິການທາງເພດ. ດ້ວຍວິທີນີ້, ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ອາດສາມາດສຸມໃສ່ຄວາມພະຍາຍາມຂອງຕົນໃນການແກ້ໄຂການຄ້າມະນຸດ, ດີກວ່າຈະລົງໂທດທາງອາຍາ ຜູ້ທີ່ເຮັດວຽກບໍລິການທາງເພດ.

**ຫ້ອງທີ 8: ການບຸກກວດຄົ້ນ ແລະ ການກອບກູ້ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດສົ່ງຜົນໃຫ້ຜູ້ບໍລິການທາງເພດມີ ໂທດທາງອາຍາ**

'ຮູບແບບ ການບຸກ ແລະ ການເຂົ້າໄປກອບກູ້ຊ່ວຍເຫຼືອ' ການກຳນົດຕົວ ແລະ ການປົກປ້ອງຜູ້ຖືກເຄາະຮ້າຍ ໄດ້ຖືກວິພາກວິຈານຢ່າງກວ້າງຂວາງ ແລະ ໜັກໜ່ວງ. ມັນອາດຈະກ່ຽວຂ້ອງກັບການດຳເນີນງານທີ່ຖືກດຳເນີນ ເພື່ອດັກຈັບຕົວຜູ້ທີ່ກ່ຽວຂ້ອງກັບອຸດສາຫະກຳການບໍລິການທາງເພດ, ຊຶ່ງວ່າໃນນັ້ນ, ຕຳຫຼວດ ແລະ ບັນດາຜູ້ຕາງໜ້າຈາກອົງການ NGO ທີ່ເຮັດວຽກຕ້ານການຄ້າມະນຸດທຳທ່າຕົວເປັນລູກຄ້າ ແລະ ໃນບາງກໍລະນີ ໄດ້ຮັບການບໍລິການທາງເພດຈາກຜູ້ທີ່ສົງໃສວ່າຖືກຄ້າມະນຸດ ຫຼື ກະທຳຜິດ ທີ່ກ່ຽວຂ້ອງກັບການຄ້າປະເວນີ. ເມື່ອເຊື່ອວ່າມີຫຼັກຖານພຽງພໍ ກ່ຽວກັບສະຖານະການໃດໜຶ່ງ, ເຈົ້າໜ້າທີ່ຈາກຫຼາຍອົງການຈັດຕັ້ງ, ບາງຄັ້ງກໍ່ປະກອບອາວຸດ, ແລະ ແມ້ກະທັ້ງ ບາງຄັ້ງກໍ່ມີຜູ້ຕ່າງໜ້າສື່ມວນຊົນເຂົ້າຮ່ວມ, ຈະໄດ້ 'ເຂົ້າໄປກອບກູ້ຊ່ວຍເຫຼືອ' ຜູ້ເຮັດວຽກບໍລິການທາງເພດ ທີ່ເຊື່ອວ່າມີອາຍຸຕໍ່າກວ່າ 18 ປີ ແລະ ຜູ້ທີ່ກຳນົດຕົນເອງວ່າຖືກຄ້າມະນຸດທີ່ມີອາຍຸເກີນ 18 ປີ. ໂດຍທົ່ວໄປແລ້ວ, ຜູ້ທີ່ຖືກກຳນົດຕົວວ່າເປັນຜູ້ຖືກເຄາະຮ້າຍ ແມ່ນຈະຖືກສົ່ງໄປທີ່ພັກ (ບາງຄັ້ງກໍຂັດກັບຄວາມຕ້ອງການຂອງເຂົາເຈົ້າ) ຊຶ່ງມັກຈະມີໄລຍະເວລາທີ່ບໍ່ມີກຳນົດ ແລະ ບໍ່ສາມາດເຮັດວຽກໄດ້ ແລະ ມີຂໍ້ຈຳກັດ ຫຼື ບໍ່ມີການຕິດຕໍ່ກັບຄອບຄົວຂອງເຂົາເຈົ້າ. ຜູ້ທີ່ບໍ່ຖືກກຳນົດຕົວວ່າເປັນຜູ້ຖືກເຄາະຮ້າຍ ຂອງການຄ້າມະນຸດອາດຈະຖືກຈັບ, ກັກຂັງ ແລະ ສົ່ງອອກນອກປະເທດ ຖ້າເຂົາເຈົ້າບໍ່ມີເອກະສານ, ແລະ ຈ້ຳກາໜັງສືຜ່ານແດນຂອງເຂົາເຈົ້າ ເພື່ອລະບຸຕົວວ່າ ເຂົາເຈົ້າໄດ້ລະເມີດກົດໝາຍວ່າດ້ວຍ ການຫ້າມຄ້າປະເວນີ.[135]

**ການດຳເນີນຄະດີຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ເປັນເດັກນ້ອຍ:** ອາຍຸ ທີ່ມີຄວາມຮັບຜິດຊອບທາງອາຍາ ໃນປະເທດໄທ ແມ່ນ 10 ປີ, ອີງຕາມມາດຕາ 73 ຂອງ *ປະມວນກົດໝາຍອາຍາ ສະບັບປີ ພ.ສ. 2499* (ຄ.ສ. 1956). ໃນເດືອນມິຖຸນາ ປີ 2020, ຄະນະລັດຖະມົນຕີໄທ ໄດ້ໃຫ້ການສະໜັບສະໜູນໂດຍທົ່ວໄປ ເພື່ອເພີ່ມອາຍຸຄວາມຮັບຜິດຊອບທາງອາຍາໄປເປັນ 12 ປີ. ຕົວຢ່າງທີ່ສະເໜີ ແມ່ນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ເປັນເດັກນ້ອຍ ຖືກດຳເນີນຄະດີໃນຂໍ້ຫາກະທຳຜິດທີ່ພົວພັນກັບການຄ້າປະເວນີ, ການຂູດຮີດທາງເພດຜ່ານລະບົບອອນລາຍ ແລະ ການຄ້າມະນຸດ, ຊຶ່ງເຂົາເຈົ້າມີບົດບາດໃນການຈ້າງຄົນອື່ນໆ. ໃນບາງກໍລະນີ, ເຂົາເຈົ້າໄດ້ຮັບຜົນປະໂຫຍດທາງການເງິນຈາກການຈ້າງໝູ່ເພື່ອນຂອງຕົນ, ແຕ່ເດັກນ້ອຍໄດ້ຖືກດຳເນີນຄະດີ ເຖິງແມ່ນວ່າ ເຂົາເຈົ້າບໍ່ໄດ້ຮັບຜົນປະໂຫຍດກໍຕາມ. ຜູ້ຕອບຄຳຖາມໄດ້ອະທິບາຍວ່າ ເຖິງແມ່ນວ່າເຂົາເຈົ້າບໍ່ແມ່ນພະຍານ, ເດັກນ້ອຍ ຄວນໄດ້ຮັບການປົກປ້ອງທັງພາຍໃຕ້ *ກົດໝາຍວ່າດ້ວຍການຄ້າມະນຸດ ແລະ ກົດໝາຍວ່າດ້ວຍການປົກປ້ອງເດັກນ້ອຍ.* ຍັງມີທັດສະນະກົງກັນຂ້າມ ທີ່ໄດ້ສະແດງອອກມາ ກໍຄືວ່າ ຜູ້ຖືກເຄາະຮ້າຍທີ່ເປັນເດັກນ້ອຍ ທີ່ມີຜົນປະໂຫຍດຈາກການຈ້າງຄົນອື່ນໆ ຄວນໄດ້ຮັບຂໍ້ກ່າວຫາຕໍ່ການກະທຳຜິດ ເພື່ອຢຸດຕິບໍ່ໃຫ້ເຂົາເຈົ້າສືບຕໍ່ປະຕິບັດເຊັ່ນນີ້ອີກຕໍ່ໄປ.

---

135 *ການຈັດຕັ້ງ ຜູ້ເຮັດວຽກໃຫ້ການບໍລິການທາງເພດ ສຳລັບການປ່ຽນແປງ: ພາບພົດຂອງຕົນເອງ, ການປຸກລະດົມຊຸມຊົນ, ແລະ ສະພາບເງື່ອນໄຂການເຮັດວຽກ* (ກຸ່ມພັນທະມິດໂລກ ຕ້ານການຄ້າມະນຸດທີ່ເປັນເພດຍິງ (GAATW, 2018) 50; ນອກຈາກນັ້ນ ຍັງໃຫ້ເບິ່ງ *ຊົນ ແລະ ແລ່ນ: ຜົນ ຂອງນະໂຍບາຍຕ້ານການຄ້າມະນຸດ ແລະ ຫຼັກການປະຕິບັດ ວ່າດ້ວຍ ສິດທິມະນຸດ ຂອງຜູ້ເຮັດວຽກໃຫ້ບໍລິການທາງເພດ ຢູ່ ປະເທດໄທ* (ທີມງານ RATS-W, Empower, ປີ 2012).

**ຍຸດທະສາດ ການເຮັດໃຫ້ຜູ້ຖືກເຄາະຮ້າຍເປັນຜູ້ກະທຳຜິດທາງອາຍາ ເພື່ອປົກປ້ອງຜູ້ຄ້າມະນຸດ / ຜູ້ຂູດຮີດ:** ຕົວຢ່າງທີ່ສະເໜີ ແມ່ນນາຍຈ້າງຮ້ອງຟ້ອງຄືນຕໍ່ຜູ້ຖືກເຄາະຮ້າຍ ທີ່ຍື່ນຄຳຮ້ອງຟ້ອງຕໍ່ເຂົາເຈົ້າ, ຊຶ່ງກ່າວຫາພວກເຂົາເຈົ້າໃນຂໍ້ຫາອາດຊະຍາກຳ ເຊັ່ນ ການເປັນຂີ້ລັກ, ທີ່ບໍ່ນອນຢູ່ໃນການປົກປ້ອງ ຂອງມາດຕາ 41. ອີກຕົວຢ່າງໜຶ່ງທີ່ໄດ້ສະເໜີ ແມ່ນວ່າ ຢູ່ໃນນັ້ນຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄດ້ໃຊ້ສື່ສັງຄົມອອນລາຍເພື່ອເຕືອນຜູ້ອື່ນກ່ຽວກັບບຸກຄົນໃດໜຶ່ງ, ແມ່ນເປັນຜູ້ຖືກຟ້ອງຮ້ອງໃນຂໍ້ຫາໝິ່ນປະໝາດ. ກົນລະຍຸດເຫຼົ່ານີ້ ຖືກສັງເກດວ່າເປັນຍຸດທະສາດ ທີ່ນາຍຈ້າງໃຊ້ ເພື່ອຂົ່ມຂູ່ຜູ້ຖືກເຄາະຮ້າຍ ແລະ ເພື່ອຫຼີກລ້ຽງຄວາມຮັບຜິດຊອບ. ບົດລາຍງານການຄ້າມະນຸດປະຈຳປີ 2020 ຂອງສະຫະລັດອາເມລິກາ ຍັງໄດ້ນຳສະເໜີທັງສອງຕົວຢ່າງເຫຼົ່ານີ້ ກ່ຽວກັບນາຍຈ້າງທີ່ກົດຂີ່ຂູດຮີດ ທີ່ເຮັດໃຫ້ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ຕັ້ງຂໍ້ຫາວ່າເປັນຂີ້ລັກຕໍ່ຄົນງານທີ່ຖືກຂູດຮີດ ທີ່ໄດ້ພະຍາຍາມໜີອອກຈາກວຽກ ຫຼື ປ່ຽນວຽກ, ພ້ອມທັງໃຊ້ກົດໝາຍວ່າດ້ວຍການໝິ່ນປະໝາດທາງອາຍາ ເພື່ອເຮັດໃຫ້ຜູ້ສະໜັບສະໜູນສິດ ຂອງຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍ ແລະ ຄົນງານມິດງຽບລົງ.[136]

**ຮູບແບບການລົງໂທດຜູ້ຖືກເຄາະຮ້າຍ ນອກເໜືອຈາກການດຳເນີນຄະດີ:** ຜູ້ເຂົ້າຮ່ວມໄດ້ຍົກຕົວຢ່າງ ກ່ຽວກັບມາດຕະການດ້ານການບໍລິຫານ ແລະ ດ້ານອື່ນໆ ທີ່ສາມາດສະແດງໃຫ້ເຫັນວ່າເປັນການລົງໂທດ ຜູ້ໄດ້ຮັບເຄາະຮ້າຍ ນອກເໜືອຈາກການດຳເນີນຄະດີທາງອາຍາ. ການກັກຂັງຜູ້ເຄື່ອນຍ້າຍ ກ່ອນການສົ່ງກັບຄືນປະເທດໄດ້ຖືກກ່າວເຖິງວ່າ ເປັນຕົວຢ່າງຂອງການລົງໂທດທີ່ບໍ່ມີການດຳເນີນຄະດີ, ຊຶ່ງຫຼຸດຄວາມສາມາດຂອງພາກສ່ວນກ່ຽວຂ້ອງໃນການກຳນົດ ແລະ ຊ່ວຍເຫຼືອຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍ. ການຂາດການທົດແທນຄ່າເສຍຫາຍຍັງສະແດງໃຫ້ເຫັນວ່າ ເປັນຮູບແບບໜຶ່ງ ຂອງການລົງໂທດຜູ້ຖືກເຄາະຮ້າຍ, ແລະ ເປັນການປະຕິບັດຈຳແນກ ເມື່ອຜູ້ຖືກເຄາະຮ້າຍຖືກປະຕິເສດ ການເຂົ້າຫາທຶນຊ່ວຍເຫຼືອ ເນື່ອງຈາກວ່າເຂົາເຈົ້າຢູ່ໃນສະຖານະການທີ່ບໍ່ປົກກະຕິ. ອີກຕົວຢ່າງໜຶ່ງ ແມ່ນການປະຕິບັດການບັນທຶກການກະທຳຜິດທີ່ກ່ຽວຂ້ອງກັບການຄ້າປະເວນີລົງໃນໜັງສືຜ່ານແດນ; ຮູບແບບການລົງໂທດທີ່ເຮັດໃຫ້ຜູ້ຖືໜັງສືຜ່ານແດນ ຮູ້ສຶກອັບອາຍ ແລະ ກີດກັນບໍ່ໃຫ້ເຂົາເຈົ້າກັບຄືນປະເທດໄທໄດ້. ເຖິງຈະມີລາຍງານວ່າ ຜູ້ທີ່ຖືກກຳນົດວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຖືກເນລະເທດອອກນອກປະເທດ ໂດຍມີການຈ້ຳກາລົງໃນໜັງສືຜ່ານແດນຂອງເຂົາເຈົ້າ ທີ່ລະບຸວ່າເຂົາເຈົ້າມີການພົວພັນກັບການຄ້າປະເວນີກໍຕາມ, ມັນກໍບໍ່ຈະແຈ້ງວ່າການປະຕິບັດເຊັ່ນນີ້ ຍັງສືບຕໍ່ປະຕິບັດ ຫຼື ບໍ່; ຜູ້ຕອບຄຳຖາມບາງຄົນໄດ້ມີທັດສະນະວ່າ ທຸກການຈ້ຳກາດັ່ງກ່າວ ລົງໃນໜັງສືຜ່ານແດນຂອງຜູ້ຖືກເຄາະຮ້າຍ ເບິ່ງຄືກັບວ່າ ຈະກ່ຽວຂ້ອງກັບການກະທຳຜິດທີ່ໄດ້ລົງມືປະຕິບັດກ່ອນທີ່ເຂົາເຈົ້າໄດ້ຖືກກຳນົດຕົວວ່າ ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ຫຼື ຍ້ອນຄວາມຜິດພາດຂອງຕຳຫຼວດທ້ອງຖິ່ນ ທີ່ບໍ່ໄດ້ກຳນົດຕົວຕົນຂອງເຂົາເຈົ້າວ່າເປັນຜູ້ຖືກເຄາະຮ້າຍ.

**ການດຳເນີນຄະດີຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ເປັນຄົນໄທຢູ່ຕ່າງປະເທດ:** ເຈົ້າໜ້າທີ່ປະຕິບັດກົດໝາຍ ໄດ້ເນັ້ນໜັກເຖິງຄວາມຈຳເປັນ ທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ເປັນຄົນໄທຈະໄດ້ຮັບການປົກປ້ອງຈາກການດຳເນີນຄະດີຢູ່ຕ່າງປະເທດ. ຕົວຢ່າງທີ່ສະເໜີ ແມ່ນຜູ້ຖືກເຄາະຮ້າຍທີ່ເປັນຄົນໄທ ທີ່ໄດ້ຂ້າຜູ້ຂູດຮີດຕົນ ໃນຊ່ວງໄລຍະການຫຼົບໜີ. ປະເທດທີ່ມີບັນຫານີ້ ບໍ່ທັນໄດ້ມີກົດໝາຍຕ້ານການຄ້າມະນຸດຢູ່ໃນຂະນະນັ້ນ ເພື່ອຮັບຮູ້ຜູ້ກ່ຽວວ່າເປັນຜູ້ຖືກເຄາະຮ້າຍ, ຊຶ່ງສົ່ງຜົນໃຫ້ຜູ້ກ່ຽວຖືກດຳເນີນຄະດີທັງໃນຂໍ້ຫາການເຄື່ອນຍ້າຍແບບຜິດປົກກະຕິ ແລະ ການຄາດຕະກຳ. ຕົວຢ່າງເພີ່ມຕື່ມທີ່ໄດ້ສະເໜີ ແມ່ນຜູ້ຖືກເຄາະຮ້າຍທີ່ເປັນຄົນໄທ ທີ່ຖືກກັກຂັງຢູ່ໃນຕາເວັນອອກກາງ ເພື່ອເຂົ້າຮ່ວມການດຳເນີນຂະບວນການຍຸຕິທຳທາງອາຍາ ແກ່ລູກເຮືອປະມົງໄທ ທີ່ຖືກຈັບຢູ່ເຂດນ່ານນ້ຳຂອງປະເທດອື່ນ ແລະ ໄດ້ຖືກດຳເນີນຄະດີ ໂດຍບໍ່ມີການກວດສອບເລື່ອງການຄ້າມະນຸດ. ຜູ້ຖືກເຄາະຮ້າຍຈາກການບັງຄັບໃຊ້ແຮງງານ ທີ່ໃນປັດຈຸບັນແມ່ນມີການກຳນົດໄວ້ຢູ່ໃນ *ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ສະບັບປີ ພ.ສ. 2551* (ຄ.ສ. 2008) – ໄດ້ຮັບລາຍງານວ່າ ຖືກລົງໂທດຢູ່ຕ່າງປະເທດ. ຜູ້ຕອບຄຳຖາມໄດ້ແນະນຳວ່າ ເຈົ້າໜ້າທີ່ປະຕິບັດກົດໝາຍ ສ່ອງແສງໃຫ້ເຫັນເຖິງ ການນຳໃຊ້ຫຼັກການບໍ່ລົງໂທດ ຢູ່ໃນສະພາບການຂອງແຮງງານ ແລະ ກົດໝາຍອື່ນໆຂອງປະເທດອື່ນໆ, ທີ່ສົ່ງຜົນກະທົບຕໍ່ແຮງງານຄົນງານໄທທີ່ເຄື່ອນຍ້າຍໄປຕ່າງປະເທດ.

---

136 ບົດລາຍງານປະຈຳປີ 2020 ວ່າດ້ວຍການຄ້າມະນຸດ: ປະເທດໄທ (ກະຊວງການຕ່າງປະເທດ ສະຫາລັດ ອາເມລິກາ, ປີ 2020).

## 2.10. ຫວຽດນາມ

ກອງປະຊຸມປຶກສາຫາລືໂຕະມົນສອງຄັ້ງ ໄດ້ຖືກຈັດຂຶ້ນຢູ່ຫວຽດນາມ ໂດຍມີຜູ້ເຂົ້າຮ່ວມທັງໝົດ 52 ທ່ານ ຊຶ່ງເປັນຜູ້ຕ່າງໜ້າຈາກອົງການຕ້ານການຄ້າມະນຸດຂອງລັດ ແລະ ທີ່ບໍ່ແມ່ນລັດ. ວາລະນີ້ ໄດ້ອີງໃສ່ ມຸມມອງຄວາມເຂົ້າໃຈຂອງເຂົາເຈົ້າ ແລະ ແຫຼ່ງຂໍ້ມູນທີ່ກ່ຽວຂ້ອງທີ່ເປີດກວ້າງ.

### ຫຼັກການການບໍ່ລົງໂທດ ທີ່ຢູ່ໃນກົດໝາຍ ແລະນະໂຍບາຍ

**ບໍ່ມີຂໍ້ກຳນົດທີ່ຈະແຈ້ງ ກ່ຽວກັບ ການບໍ່ລົງໂທດ:** ບໍ່ມີຂໍ້ກຳນົດ ທີ່ກ່ຽວຂ້ອງກັບ ການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຢູ່ໃນນິຕິກຳ ຂອງຫວຽດນາມ. ກົດໝາຍ ວ່າດ້ວຍການປ້ອງກັນ, ແລະ ປາບປາມການຄ້າມະນຸດ ສະບັບເລກທີ 66/2011/QH12 ແມ່ນບໍ່ເວົ້າເຖິງ ບັນຫາການບໍ່ລົງໂທດ. ເຈົ້າໜ້າທີ່ລັດ ໄດ້ອະທິບາຍວ່າ ຂໍ້ກຳນົດ ວ່າດ້ວຍການບໍ່ລົງໂທດ ບໍ່ໄດ້ນອນຢູ່ໃນ ກົດໝາຍ ວ່າດ້ວຍການຕ້ານການຄ້າມະນຸດ ສະບັບປີ 2011 ເພາະມັນບໍ່ໄດ້ຮັບການພິຈາລະນາ ວ່າສອດຄ່ອງກັບ ຂໍ້ກຳນົດອື່ນໆ. ເຖິງແນວໃດກໍຕາມ, ເຂົາເຈົ້າ ໄດ້ສະແດງຄວາມຄິດເຫັນວ່າ ຫຼັກການດັ່ງກ່າວ ແມ່ນນອນຢູ່ໃນເອກະສານນິຕິກຳອື່ນໆ, ລວມທັງດຳລັດວ່າດ້ວຍການປົກປ້ອງຜູ້ຖືກເຄາະຮ້າຍ. ດຳລັດ ສະບັບເລກທີ 62/2012/ ND-CP, ລົງວັນທີ 13 ສິງຫາ 2012, ກຳນົດເຫດຜົນ ສຳລັບການກຳນົດຕົວ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ແລະ ການປົກປ້ອງຄວາມປອດໄພ ຂອງຜູ້ຖືກເຄາະຮ້າຍ ແລະ ຍາດພີ່ນ້ອງ ຂອງເຂົາເຈົ້າ., ແລະ ດຳລັດ ສະບັບເລກທີ 09/2013/ND-CP ກຳນົດ ລາຍລະອຽດ ແກ່ ຫຼາຍມາດຕາ ຂອງ ກົດໝາຍວ່າດ້ວຍຕ້ານການຄ້າມະນຸດ, ແຕ່ບໍ່ໄດ້ຍົກໃຫ້ເຫັນການບໍ່ລົງໂທດ. ເຖິງຢ່າງໃດກໍຕາມ, ໃນທັດສະນະ ຂອງຜູ້ຕອບຄຳຖາມບາງຄົນ, ການຂາດ ຂໍ້ກຳນົດ ທີ່ເວົ້າສະເພາະກ່ຽວກັບການບໍ່ລົງໂທດ ຢູ່ໃນກົດໝາຍ ແມ່ນຖືກຊົດເຊີຍ ດ້ວຍເອກະສານນິຕິກຳອື່ນ ທີ່ຍຶດຖືຫຼັກການການບໍ່ລົງໂທດ, ລວມທັງ ຢູ່ໃນສະພາບຕົວຈິງ ເຈົ້າໜ້າທີ່ຕຳຫຼວດ ແລະ ເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງ ແມ່ນເຮັດໜ້າທີ່ປົກປ້ອງ ຫຼາຍກວ່າທີ່ຈະລົງໂທດ ຜູ້ຖືກເຄາະຮ້າຍ.

**ການປົກປ້ອງທີ່ກ່ຽວຂ້ອງອື່ນໆ ຢູ່ໃນນິຕິກຳ:** ຜູ້ຕອບຄຳຖາມ ໄດ້ອ້າງເຖິງ ສິດທິມະນຸດ ທີ່ກຳນົດໄວ້ ຢູ່ໃນລັດຖະທຳມະນູນ ຊຶ່ງເປັນພື້ນຖານຂັ້ນຕໍ່າສຸດ ສຳລັບການປົກປ້ອງຜູ້ຖືກເຄາະຮ້າຍ ຢູ່ໃນກົດໝາຍສະເພາະວ່າດ້ວຍການຄ້າມະນຸດ ແລະ ສັນຍາລະຫວ່າງສອງຝ່າຍ ທີ່ປະກອບມີ ຫຼັກການບໍ່ລົງໂທດ (ໃຫ້ເບິ່ງຂ້າງລຸ່ມນີ້ ຢູ່ພາຍໃຕ້ການຮ່ວມມືສາກົນ). ກົດໝາຍເຫຼົ່ານີ້ ໄດ້ຖືກຢໍ້າວ່າ ມີຄວາມສອດຄ່ອງກັບ ກົດໝາຍສາກົນ, ເຖິງແມ່ນວ່າ ມັນໄດ້ຖືກຮັບຮູ້ວ່າ ອາດສາມາດນຳ ໃຊ້ຄວາມພະຍາຍາມຕື່ມອີກ ເພື່ອຮັບປະກັນ ການຈັດຕັ້ງປະຕິບັດ ຂອງພວກມັນ. ເຈົ້າໜ້າທີ່ປະຕິບັດກົດໝາຍ ຍັງໄດ້ຊີ້ໃຫ້ເຫັນເຖິງ ປະມວນກົດໝາຍອາຍາ ແລະ ກົດໝາຍ ວ່າດ້ວຍຂັ້ນຕອນການດຳເນີນຄະດີອາຍາ ທີ່ພົວພັນກັບ ການບັງຄັບ ແລະ ປັດໃຈຜ່ອນຜັນອື່ນໆ ເພື່ອປົກປ້ອງ ຜູ້ຖືກເຄາະຮ້າຍ ຈາກການລົງໂທດ ຕໍ່ ການກະທຳຜິດ, ຊຶ່ງບໍ່ແມ່ນບົນພື້ນຖານ ທີ່ເຂົາເຈົ້າເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ, ແຕ່ຢູ່ບົນພື້ນຖານ ການບໍ່ຮັບຜິດຊອບ ຕໍ່ ການກະທຳ ທີ່ບໍ່ມີອົງປະກອບຂອງຄວາມຜິດ, ແລະ ການປ້ອງກັນ ທີ່ກຳນົດໄວ້ໃນນັ້ນ.

**ບັນດາຂໍ້ກຳນົດ ທີ່ກ່ຽວຂ້ອງກັບ ປະມວນກົດໝາຍອາຍາ:** ມາດຕາ 46 ຂອງປະມວນກົດໝາຍອາຍາ (ສະບັບເລກທີ 15/1999/QH10) ກຳນົດ 'ສະພາບເງື່ອນໄຂ ທີ່ຜ່ອນຜັນ ຄວາມຮັບຜິດຊອບທາງອາຍາ', ສຳລັບສານ ທີ່ອາດຈະເລືອກນຳໃຊ້ ການລົງໂທດໜ້ອຍກວ່າທີ່ກຳນົດໄວ້. ບາງຢ່າງ ສຳລັບສິ່ງເຫຼົ່ານີ້ ອາດຈະກ່ຽວຂ້ອງກັບ ອາດຊະຍາກຳ ທີ່ກະທຳໂດຍ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ຊຶ່ງເປັນຜົນໂດຍກົງ ຈາກການຄ້າມະນຸດ, ລວມທັງ: (e) ອາດຊະຍາກຳ ຖືກກໍ່ຂຶ້ນ ໃນກໍລະນີ ທີ່ຜູ້ກະທຳຜິດ ໄດ້ຮັບການກະຕຸ້ນທາງຈິດໃຈ ໂດຍການກະທຳຜິດກົດໝາຍຂອງຜູ້ຖືກເຄາະຮ້າຍ ຫຼື ບຸກຄົນອື່ນ; (f) ອາດຊະຍາກຳ ຖືກກໍ່ຂຶ້ນ ຍ້ອນສະພາບການທີ່ຫຍຸ້ງຍາກໃດໜຶ່ງ ຊຶ່ງບໍ່ໄດ້ເກີດຂຶ້ນຈາກມັນເອງ; (i) ອາດຊະຍາກຳ ຖືກກໍ່ຂຶ້ນ ຍ້ອນການຂົ່ມຂູ່ ແລະ/ຫຼື ການບີບບັງຄັບ ໂດຍບຸກຄົນອື່ນ; ແລະ (j) ອາດຊະຍາກຳ ຖືກກໍ່ຂຶ້ນ ຍ້ອນຄວາມຮູ້ເທົ່າບໍ່ເຖິງການ.

**ການບໍ່ລົງໂທດ ບໍ່ຖືກຍົກໃຫ້ເຫັນ ຢ່າງຈະແຈ້ງ ຢູ່ໃນບັນດານະໂຍບາຍຕ້ານການຄ້າມະນຸດ:** *ມາດຕະຖານ*

*ຕໍ່າສຸດ ທີ່ຢູ່ໃນຂໍ້ກຳນົດ ວ່າດ້ວຍການບໍລິການ ແກ່ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ* (ກະຊວງແຮງງານ, ທະຫານເສຍອົງຄະ ແລະ ສັງຄົມ, ປີ 2011), *ແຜນປະຕິບັດງານແຫ່ງຊາດ ຕ້ານການຄ້າມະນຸດ* ປີ 2016 – 2020 ແມ່ນບໍ່ໄດ້ເວົ້າເຖິງ ຫຼັກການການບໍ່ລົງໂທດ. *ແຜນງານແຫ່ງຊາດ ຕ້ານການຄ້າມະນຸດ ໄລຍະ ປີ 2021-2025, ໂດຍມີວິໄສທັດຮອດປີ 2030* ບໍ່ໄດ້ລວມເອົາ ຫຼັກການການບໍ່ດຳເນີນຄະດີຕໍ່ຜູ້ຖືກເຄາະຮ້າຍ ຢ່າງຈະແຈ້ງ ແຕ່ໄດ້ກຳນົດລາຍລະອຽດ ໃນການສະໜັບສະໜູນຜູ້ຖືກເຄາະຮ້າຍ ຢ່າງຊັດເຈນ , ນອກຈາກນັ້ນ ຍັງໄດ້ກ່າວເຖິງ ກົນໄກການສົ່ງຕໍ່ ສຳລັບຜູ້ທີ່ຍັງບໍ່ທັນໄດ້ຖືກກຳນົດວ່າເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ.

## ການຕີຄວາມໝາຍ ຂອງຫຼັກການການບໍ່ລົງໂທດ

ຄວາມບໍ່ມັກ ຕໍ່ກັບ ການນຳໃຊ້ການລະເວັ້ນຈາກຄວາມຮັບຜິດຊອບ ໃນທາງທີ່ຜິດ: ຜູ້ຕອບຄຳຖາມບາງຄົນ ໄດ້ສະແດງຄວາມບໍ່ສະບາຍໃຈ ໃນການນຳໃຊ້ຫຼັກການການບໍ່ລົງໂທດ ແບບທົ່ວໄປ ແລະ ໄດ້ເນັ້ນຫນັກເຖິງ ຄວາມຈຳເປັນ ທີ່ຈະຕ້ອງເອົາໃຈໃສ່ເບິ່ງ ເຈດຕະນາ ຂອງ ຜູ້ກະທຳຜິດ-ທີ່ເປັນຜູ້ຖືກເຄາະຮ້າຍ, ອົງປະກອບຂອງການເຮັດອາຊະຍາກຳ, ແລະ ຄວາມຈຳເປັນ ສຳລັບປັດໃຈຜ່ອນຜັນ ຢູ່ໃນກົດໝາຍອາຍາ ແລະ ບໍລິຫານ ທີ່ຈະຕ້ອງໄດ້ຮັບການພິຈາລະນາ. ຜູ້ມີບົດບາດ ທັງຈາກພາກລັດ ແລະ ທີ່ບໍ່ແມ່ນລັດ ໄດ້ເນັ້ນໜັກເຖິງ ວຽກງານອັນສຳຄັນ ຂອງ ເຈົ້າໜ້າທີ່ປະຕິບັດຄວາມຍຸຕິທຳທາງອາຍາ ໃນການນຳໃຊ້ກົດໝາຍ ແລະ ປະຕິບັດຫຼັກການ. ຄວາມກັງວົນ ກ່ຽວກັບການນຳໃຊ້ ຫຼັກການການບໍ່ລົງໂທດ ໃນທາງທີ່ຜິດ ໄດ້ສັງເກດເຫັນຢູ່ບ່ອນອື່ນ; ບົດລາຍງານການຄ້າມະນຸດ ຂອງ ກະຊວງການຕ່າງປະເທດ ຂອງ ສະຫະລັດ ປີ 2021 ໄດ້ໃຫ້ຂໍ້ສັງເກດວ່າ ເຈົ້າໜ້າທີ່ ຂອງລັດ ໄດ້ແນະນຳວ່າ ຜູ້ຖືກເຄາະຮ້າຍເພີ່ມທະວີການລ່ວງລະເມີດ ເພື່ອຫຼີກເວັ້ນ ການລະເມີດການເຂົ້າອອກເມືອງ.[137]

**ຄວາມກ່ຽວຂ້ອງ ກ່ຽວກັບ ລະດັບຄວາມຮຸນແຮງ ຂອງການກະທຳຜິດ ຈາກຜູ້ຖືກເຄາະຮ້າຍ ໃນການນຳໃຊ້ ຫຼັກການການບໍ່ລົງໂທດ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ:** ເຈົ້າໜ້າທີ່ລັດ ໄດ້ຢໍ້າວ່າ ຄວາມຮຸນແຮງຂອງການກະທຳຜິດ ແມ່ນກ່ຽວຂ້ອງກັບ ການຕີຄວາມໝາຍ ຫຼັກການການບໍ່ລົງໂທດ. ບາງຄົນ ໄດ້ສະແດງທັດສະນະວ່າ ການກະທຳຜິດທີ່ຮ້າຍແຮງ ເຊັ່ນ ການຄາດຕະກຳ, ການຄ້າຢາເສບຕິດ ຫຼື ການຄ້າມະນຸດ ບໍ່ຄວນໄດ້ຮັບການຍົກເວັ້ນ ຈາກການດຳເນີນຄະດີ. ໄດ້ມີຄຳແນະນຳວ່າ ໃຫ້ມີຂໍ້ກຳນົດໜຶ່ງ ນອນຢູ່ໃນ ນິຕິກຳວ່າດ້ວຍການຕ້ານການຄ້າມະນຸດ ເພື່ອກຳນົດມາດຖານເງື່ອນໄຂວ່າ ຜູ້ຖືກເຄາະຮ້າຍ ຈະຖືກລົງໂທດ ແລະ ບໍ່ຖືກລົງໂທດ ເມື່ອໃດ. ເຈົ້າໜ້າທີ່ປະຕິບັດກົດໝາຍທ່ານໜຶ່ງ ໄດ້ສະແດງຄວາມມັກວ່າ ສິ່ງດັ່ງກ່າວນີ້ ບໍ່ໄດ້ເອີ້ນວ່າເປັນ ຫຼັກການການບໍ່ລົງໂທດ ຢູ່ໃນໂຕຂອງມັນເອງ, ແຕ່ເປັນ 'ຫຼັກການ ສຳລັບຈັດການກັບການກະທຳຜິດ ໂດຍຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ' ຫຼາຍກວ່າ, ເພື່ອໃຫ້ຜູ້ໄດ້ຮັບເຄາະຮ້າຍຈາກການຄ້າມະນຸດ ໄດ້ຮັບການປົກປ້ອງ ທາງກົດໝາຍ, ແຕ່ກໍຍັງຖືກດຳເນີນຄະດີ ເມື່ອເຂົາເຈົ້າໄດ້ກະທຳຜິດຢ່າງຮ້າຍແຮງ.

**ການສ້າງການເຊື່ອມໂຍງ ລະຫວ່າງ ການກະທຳຜິດຂອງຜູ້ຖືກເຄາະຮ້າຍ ແລະ ການຄ້າມະນຸດຂອງຕົນ ໃນການນຳໃຊ້ຫຼັກການການບໍ່ລົງໂທດ:** ເຈົ້າໜ້າທີ່ລັດ ໄດ້ອະທິບາຍວ່າ ເມື່ອກຳນົດອົງປະກອບຂອງອາຊະຍາກຳຂອງຜູ້ຖືກເຄາະຮ້າຍແລ້ວ, ຜູ້ກ່ຽວ ແມ່ນຈະຮັບຜິດຊອບຕໍ່ການດຳເນີນຄະດີ, ທີ່ຂຶ້ນກັບ ການນຳໃຊ້ ທຸກການປ້ອງກັນ ທີ່ຖືກຕ້ອງຕາມກົດໝາຍ. ໄດ້ມີການອະທິບາຍວ່າ ຜູ້ຖືກເຄາະຮ້າຍ ທີ່ກາຍເປັນຜູ້ກະທຳຜິດ ຄວນຖືກດຳເນີນຄະດີ, ເວັ້ນເສຍແຕ່ວ່າ ຜູ້ຄ້າມະນຸດ ໄດ້ບັງຄັບໃຫ້ຜູ້ກ່ຽວ ມີສ່ວນກ່ຽວຂ້ອງໃນການກະທຳຜິດ ທີ່ເປັນຜົນໂດຍກົງ ມາຈາກການເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ, ເມື່ອເຂົາເຈົ້າຖືກກັກຂັງ, ກົດດັນ ແລະ ບັງຄັບໃຫ້ກະທຳຜິດທາງອາຍາ. ແຕ່ຖ້າວ່າ ຜູ້ຖືກເຄາະຮ້າຍ ກໍ່ອາຊະຍາກຳ ທີ່ບໍ່ເປັນຜົນໂດຍກົງມາຈາກ ການເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ແລະ ມີທາງເລືອກ ທີ່ຈະບໍ່ກະທຳຜິດ, ຜູ້ກ່ຽວ ຄວນຈະປະເຊີນກັບການດຳເນີນຄະດີ, ໂດຍພິຈາລະນາເຖິງປັດໃຈຜ່ອນຜັນ ທີ່ມີຄວາມເປັນໄປໄດ້.

ເຈົ້າໜ້າທີ່ລັດ ໄດ້ຊີ້ໃຫ້ເຫັນເຖິງ *ປະມວນກົດໝາຍອາຍາ* ແລະ *ກົດໝາຍວ່າດ້ວຍຂັ້ນຕອນການດຳເນີນຄະດີອາຍາ* ທີ່ພົວພັນກັບ ການພິຈາລະນາ ກ່ຽວກັບການບັງຄັບ ແລະ ການຜ່ອນຜັນອື່ນໆ ເພື່ອປົກປ້ອງ ຜູ້ຖືກເຄາະຮ້າຍ ທີ່ບໍ່ໄດ້ອີງ

137 ບົດລາຍງານການຄ້າມະນຸດ ປະຈຳປີ 2020: ປະເທດຫວຽດນາມ (ກະຊວງການຕ່າງປະເທດສະຫາລັດອາເມລິກາ, ປີ 2020)

ໃສ່ ການທີ່ເຂົາເຈົ້າ ເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ, ແຕ່ອີງໃສ່ ອົງປະກອບຂອງຄວາມຜິດ ແລະ ຄວາມບໍ່ຮັບຜິດຊອບ ຕໍ່ ການກະທຳທີ່ເຂົາເຈົ້າບໍ່ໄດ້ຕັ້ງໃຈເຮັດ, ແລະ ການປົກປ້ອງ ທີ່ຖືກກຳນົດຢູ່ໃນນັ້ນ. ຫຼື ເວົ້າອີກຢ່າງໜຶ່ງ ແມ່ນວ່າ, ຜູ້ຖືກເຄາະຮ້າຍບໍ່ຄວນຖືກດຳເນີນຄະດີ ສຳລັບການກະທຳຜິດ ທີ່ເຂົາເຈົ້າບໍ່ໄດ້ຕັ້ງໃຈກະທຳ, ແຕ່ຄວນຈະຖືກລົງໂທດ ສຳລັບອາຊະຍາກຳທີ່ເຂົາເຈົ້າສະໝັກໃຈເຮັດ. ການພິຈາລະນາເວລາ ກ່ຽວກັບຈຸດ ທີ່ຜູ້ຖືກເຄາະຮ້າຍ ບໍ່ຄວນໄດ້ຮັບການປົກປ້ອງຕໍ່ໄປອີກ ຈາກການລົງໂທດ ໄດ້ຖືກຍົກຂຶ້ນມາ, ໂດຍມີມຸມມອງທີ່ສະແດງອອກໃຫ້ເຫັນວ່າ, ຜູ້ທີ່ໄດ້ອາໃສຢູ່ຕ່າງປະເທດ ແບບບໍ່ປົກກະຕິ ໃນຊ່ວງໄລຍະໜຶ່ງ ພາຍຫຼັງທີ່ໄດ້ຫຼົບໜີອອກຈາກ ຜູ້ຄ້າມະນຸດ ແລະ ໄດ້ຢູ່ຄົງທີ່, ບໍ່ຄວນຫຼຸດພົ້ນຈາກ ການລົງໂທດ ຕໍ່ການກະທຳຜິດ ທີ່ເຂົາເຈົ້າໄດ້ກະທຳ.

## ການນຳໃຊ້ ຫຼັກການ ການບໍ່ລົງໂທດ

**ການນຳໃຊ້ ຫຼັກການການບໍ່ລົງໂທດ ທີ່ອາດຈະບໍ່ສອດຄ່ອງ:** ເຈົ້າໜ້າທີ່ປະຕິບັດກົດໝາຍ ຂອງລັດບາງຄົນ ໄດ້ຮູ້ສຶກວ່າ ຫຼັກການໄດ້ຖືກຍຶດຖື ຢ່າງກວ້າງຂວາງ ໃນພາກປະຕິບັດ, ເຖິງແມ່ນວ່າບໍ່ມີຂໍ້ກຳນົດທີ່ເປັນນິຕິກຳ ຢ່າງຈະແຈ້ງ. ເຖິງຢ່າງໃດກໍຕາມ, ອີກທັດສະນະອື່ນ ທີ່ຜູ້ມີບົດບາດ ທັງຈາກພາກລັດ ແລະ ທີ່ບໍ່ແມ່ນລັດ ໄດ້ສະແດງອອກມາ ແມ່ນວ່າ ການທີ່ບໍ່ມີຫຼັກການ ກຳນົດໄວ້ຢ່າງຈະແຈ້ງ ຢູ່ໃນກົດໝາຍ ຂອງຫວຽດນາມ ອາດຈະເຮັດໃຫ້ການນຳໃຊ້ຫຼັກການ ລະຫວ່າງ ຂັ້ນສູນກາງ ແລະ ຂັ້ນແຂວງບໍ່ສອດຄ່ອງກັບຄວາມຈຳເປັນ ທີ່ຢາກຈະເຮັດໃຫ້ກົດໝາຍ ແລະ ນະໂຍບາຍ ມີຄວາມຈະແຈ້ງ, ໂດຍມີ ບົດແນະນຳ ແລະ ສົນທິສັນຍາຕ່າງໆ ມາຊ່ວຍອ້າງອີງ. ໄດ້ສັງເກດເຫັນວ່າ ເຈົ້າໜ້າທີ່ທ້ອງຖິ່ນບາງຄົນ ອາດຈະບໍ່ຮູ້ກ່ຽວກັບຫຼັກການການບໍ່ລົງໂທດ. ໄດ້ມີການແນະນຳວ່າ ການມີຂໍ້ກຳນົດຢູ່ໃນກົດໝາຍ, ຍັງອາດຈະຮັບປະກັນຫຼາຍຂຶ້ນ ໃຫ້ຜູ້ໄດ້ຮັບເຄາະຮ້າຍ ໄດ້ຮັບການປົກປ້ອງ ຈາກການລົງໂທດ, ແລະ ເຮັດໃຫ້ເຂົາເຈົ້າຮູ້ສຶກສະບາຍໃຈຂຶ້ນຕື່ມ ໃນການມີສ່ວນຮ່ວມກັບເຈົ້າໜ້າທີ່. ເພື່ອໃຫ້ໄດ້ຕາມຄາດໝາຍ, ບັນດາຜູ້ມີບົດບາດ ທີ່ບໍ່ແມ່ນພາກລັດ ໄດ້ສະເໜີໃຫ້ຊ່ວຍຜູ້ໄດ້ຮັບເຄາະຮ້າຍຫຼາຍຂຶ້ນ ໃນການທຳຄວາມເຂົ້າໃຈ ຫຼັກການການບໍ່ລົງໂທດ (ລວມທັງຢູ່ບັນດາປະເທດປາຍທາງ), ເຊັ່ນດຽວກັນກັບ ແຮງງານຫວຽດນາມ ກ່ອນທີ່ເຂົາເຈົ້າ ຈະຖືກສົ່ງໄປຕ່າງປະເທດ.

**ການລົງໂທດ ແບບຜ່ອນຜັນ ໃນນາມເປັນວິທີການ ກ້າວໄປສູ່ ການບໍ່ລົງໂທດ:** ເຈົ້າໜ້າທີ່ລັດ ໄດ້ຊີ້ໃຫ້ເຫັນເຖິງ ການນຳໃຊ້ ການລົງໂທດແບບຜ່ອນຜັນ ແກ່ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ທີ່ກະທຳຜິດ. ມາດຕາ 51 ຂອງ *ປະມວນກົດໝາຍອາຍາ* ອະນຸຍາດໃຫ້ ເຈົ້າໜ້າທີ່ປະຕິບັດກົດໝາຍ ຊີ້ໃຫ້ເຫັນສະພາບເງື່ອນໄຂ ສຳລັບການຜ່ອນຜັນ ຊຶ່ງລວມມີ ທີ່ໄປທີ່ມາຂອງບຸກຄົນ, ການທີ່ບໍ່ມີປະຫວັດການກະທຳຜິດທາງອາຍາ ແລະ ບຸກຄົນນັ້ນໆ ໄດ້ໃຫ້ການຮ່ວມມືກັບເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ຫຼືບໍ່?. ຜູ້ຕອບຄຳຖາມທີ່ບໍ່ໄດ້ມາຈາກພາກລັດ ໄດ້ຊີ້ໃຫ້ເຫັນເຖິງສະຖານະພາບຜ່ານມາ ຂອງພວກຄ້າມະນຸດ ໃນນາມເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ທີ່ອາດຈະທຳໜ້າທີ່ເປັນປັດໄຈຫຼຸດພົ້ນອອກຈາກຄວາມຜິດ.

**ການຕອບສະໜອງ ຕໍ່ ສິ່ງທ້າທາຍຕ່າງໆ ໃນການນຳໃຊ້ ຫຼັກການການບໍ່ລົງໂທດ ໃນທາງປະຕິບັດຕົວຈິງ:** ຜູ້ຕອບຄຳຖາມ ໄດ້ສະເໜີສາມຈຸດ ທີ່ຈະນຳໄປສູ່ ການສ້າງຄວາມເຂັ້ມແຂງ ແກ່ການນຳໃຊ້ ຫຼັກການການບໍ່ລົງໂທດ ໃນທາງປະຕິບັດຕົວຈິງ. ກ່ອນອື່ນໝົດ, ໃນຂະນະທີ່ ຫວຽດນາມ ໄດ້ໃຫ້ຄຳໝັ້ນສັນຍາທີ່ຈະປະຕິບັດ ຫຼັກການດັ່ງກ່າວ ຜ່ານທາງສົນທິສັນຍາ ແລະ ຂໍ້ຕົກລົງອື່ນໆ, ການລວມເຂົ້າໃສໃນນິຕິກຳຕ່າງໆພາຍໃນປະເທດ ຂອງຫວຽດນາມ ໄດ້ຮັບການພິຈາລະນາ ໂດຍທີ່ບາງອັນຈະເປັນຈຸດສຳຄັນ ໃນການຈັດຕັ້ງປະຕິບັດຕົວຈິງ ຂອງຫວຽດນາມ. ອັນທີສອງ ແມ່ນວ່າ ຜູ້ເຂົ້າຮ່ວມ ໄດ້ເນັ້ນໜັກເຖິງຄວາມຈຳເປັນ ໃນການເສີມຂະຫຍາຍຄວາມຮູ້, ສ້າງຄວາມອາດສາມາດ ແລະ ຮັດແໜ້ນສາຍພົວພັນ ລະຫວ່າງ ອົງການສືບສວນ, ໄອຍະການ ແລະ ອົງການທີ່ຕັດສິນຄະດີ ເພື່ອນຳໃຊ້ຫຼັກການການບໍ່ລົງໂທດ, ແລະ ຝຶກຝົນຫຼໍ່ຫຼອມພະນັກງານກວດກາແຮງງານ ຕາມຫຼັກການການບໍ່ລົງໂທດ. ຢູ່ໃນນີ້, ກໍຍັງໄດ້ໃຫ້ຂໍ້ສັງເກດເຊັ່ນດຽວກັນວ່າ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ອົງການຊ່ວຍເຫຼືອທາງດ້ານກົດໝາຍ ຄວນມີບົດບາດໃນຂະບວນການຍຸຕິທຳທາງອາຍາ ເພື່ອສ້າງຄວາມເຂົ້າໃຈໃຫ້ເຂັ້ມແຂງ. ອັນທີສາມແມ່ນ, ຄຸນຄ່າຂອງການປຶກສາຫາລືໂຕະມົນ - ເຊັ່ນ ກອງປະຊຸມທີ່ໄດ້ຈັດຂຶ້ນ ເພື່ອລາຍງານບົດສຶກສານີ້ - ໄດ້ຖືກຊີ້ໃຫ້ເຫັນວ່າ ເປັນເວທີສົນທະນາທີ່ເປັນປະໂຫຍດ ເພື່ອສ້າງຄວາມເຂັ້ມແຂງ ແກ່ ວິທີການທີ່ອີງໃສ່ສິດທິມະນຸດ ຕໍ່ກັບການຄ້າມະນຸດ.

## ສິ່ງທ້າທາຍ ໃນການຮ່ວມມືສາກົນ

**ຂໍ້ຕົກລົງລະຫວ່າງສອງຝ່າຍ ທີ່ມີແລ້ວ ທີ່ຍົກໃຫ້ເຫັນເຖິງ ການບໍ່ລົງໂທດ:** ຫວຽດນາມ ໄດ້ລົງນາມໃນ MOU ກັບໄທ (ປີ 2013) ແລະ ກຳປູເຈຍ (ປີ 2004) ທີ່ຢືນຢັນວ່າ ຜູ້ຖືກເຄາະຮ້າຍ ຕ້ອງໄດ້ຮັບການປະຕິບັດ ໃນຖານະເປັນຜູ້ຖືກເຄາະຮ້າຍ ຫຼາຍກວ່າເປັນຜູ້ກະທຳຜິດ, ແລະ ໃນນັ້ນ ບັນດາປະເທດທີ່ລົງນາມ ເຫັນດີບໍ່ລົງໂທດຜູ້ໄດ້ຮັບເຄາະຮ້າຍ ທີ່ເປັນແມ່ຍິງ ແລະ ເດັກນ້ອຍ ສຳລັບ ການເຂົ້າ ຫຼື ອອກຈາກປະເທດ ຫຼື ທຸກການກະທຳຜິດອື່ນໆ ທີ່ເກີດຂຶ້ນໂດຍກົງ ຈາກການຄ້າມະນຸດ. MOU ລະຫວ່າງ ລາວ ແລະ ຫວຽດນາມ (ປີ 2010) ໃຫ້ຄຳໝັ້ນສັນຍາແກ່ຝ່າຍຕ່າງໆ ເພື່ອຮັບປະກັນວ່າ ຜູ້ຖືກເຄາະຮ້າຍ 'ຈະບໍ່ຖືກກັກຂັງ ແລະ/ຫຼື ຖືກລົງໂທດ ຍ້ອນການເຂົ້າເມືອງຜິດກົດໝາຍ ຫຼື ການກະທຳຜິດອື່ນໆທາງດ້ານບໍລິຫານ' (ມາດຕາ 4(1)(a)). ຢູ່ໃນ MOU ກັບຈີນ (ປີ 2010), ຝ່າຍຕ່າງໆ ຕົກລົງເຫັນດີ ທີ່ຈະບໍ່ລົງໂທດ ຜູ້ຖືກເຄາະຮ້າຍ ທີ່ເຂົ້າ ຫຼື ອອກຈາກປະເທດຂອງເຂົາເຈົ້າ ແບບຜິດກົດໝາຍ, ຫຼື ການກະທຳອື່ນໆທີ່ຜິດກົດໝາຍ ຊຶ່ງເປັນຜົນທີ່ເກີດຂຶ້ນທັນທີ ຈາກ ການຕົກເປັນຜູ້ຖືກເຄາະຮ້າຍ ຈາກ ການຄ້າມະນຸດ (ມາດຕາ 2A). ຜູ້ຕອບຄຳຖາມ ບໍ່ສາມາດສະໜອງຕົວຢ່າງ ແບບສະເພາະເຈາະຈົງ ກ່ຽວກັບການຊ່ວຍເຫຼືອເຊິ່ງກັນແລະກັນ ທາງກົດໝາຍ ເພື່ອລະບຸຕົວຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ທີ່ຖືກສະໜອງ ຫຼື ໄດ້ຮັບການຊ່ວຍເຫຼືອ ບົນພື້ນຖານ ຂອງທຸກຂໍ້ຕົກລົງ, ສົນທິສັນຍາ ລະຫວ່າງສອງຝ່າຍ ຫຼື ບົນພື້ນຖານ ຕ່າງຝ່າຍຕ່າງມີຜົນປະໂຫຍດ.

**ສິ່ງທ້າທາຍ ໃນການຮ່ວມມືສາກົນ ຕໍ່ການປົກປ້ອງ ຜູ້ຖືກເຄາະຮ້າຍ ຈາກການດຳເນີນຄະດີ ຢູ່ຕ່າງປະເທດ:** ຜູ້ຕອບຄຳຖາມ ທີ່ບໍ່ໄດ້ມາຈາກພາກລັດ ໄດ້ຊີ້ໃຫ້ເຫັນຄວາມເຂົ້າໃຈ ທີ່ບໍ່ສອດຄ່ອງກັນ ລະຫວ່າງບັນດາປະເທດຕ່າງໆ ກ່ຽວກັບວ່າ ສິ່ງໃດທີ່ເຮັດໃຫ້ການຄ້າມະນຸດ ເປັນອຸປະສັກ ຕໍ່ ຫຼັກການການບໍ່ລົງໂທດ. ເຈົ້າໜ້າທີ່ຂອງລັດ ໄດ້ກ່າວວ່າ ຂໍ້ກຳນົດ ສຳລັບເຮັດໃຫ້*ການບັນທຶກຄຳເວົ້າ* ສາມາດຮັບປະກັນ ການລົງມືປະຕິບັດ ຢູ່ໃນປະເທດອື່ນໄດ້ປະກອບສ່ວນເຮັດໃຫ້ ຜູ້ຖືກເຄາະຮ້າຍ ມີຄວາມສ່ຽງ ທີ່ຈະບໍ່ຖືກລະບຸຕົວ ແລະ ຖືກດຳເນີນຄະດີ. ຄວາມເປັນໄປໄດ້ ຂອງ ຂະບວນການ COMMIT ໃນນາມເປັນເສັ້ນທາງທີ່ເປັນໄປໄດ້ ທີ່ຈະກໍ່ໃຫ້ເກີດມີຫຼັກການການບໍ່ລົງໂທດຢູ່ພາຍໃນພາກພື້ນ ໄດ້ຖືກຍົກຂຶ້ນມາ. ການຮ່ວມມື ທີ່ແໜ້ນແຟ້ນຂຶ້ນ ກັບ ບັນດາອົງການບັງຄັບໃຊ້ກົດໝາຍ ຢູ່ໃນສະຫະພາບເອີລົບ ໄດ້ຖືວ່າເປັນຈຸດໃຈກາງ ໃນການປົກປ້ອງຜູ້ໄດ້ຮັບເຄາະຮ້າຍ ທີ່ເປັນຄົນຫວຽດນາມ, ລວມທັງຜ່ານທາງ MOU ກ່ຽວກັບ ການຊ່ວຍເຫຼືອ ຜູ້ຖືກເຄາະຮ້າຍ.

## ສິ່ງທ້າທາຍ ໃນການກຳນົດຕົວຜູ້ຖືກເຄາະຮ້າຍ

**ຈຸດສຳຄັນ ໃນການກຳນົດຕົວຜູ້ຖືກເຄາະຮ້າຍ ເພື່ອປົກປ້ອງເຂົາເຈົ້າ ຈາກ ການລົງໂທດ:** ໄດ້ເນັ້ນໜັກໃສ່ຄວາມຈຳເປັນ ໃນການເສີມຂະຫຍາຍ ທັກສະການລະບຸຕົວຜູ້ຖືກເຄາະຮ້າຍ ໃນນາມເປັນຈຸດໃຈກາງ ເພື່ອປົກປ້ອງຜູ້ຖືກເຄາະຮ້າຍ ຈາກການລົງໂທດ. ມີທັດສະນະທົ່ວໄປ ທີ່ເວົ້າວ່າ ຜູ້ຖືກເຄາະຮ້າຍ ທີ່ຖືກລະບຸຕົວວ່າເປັນຜູ້ຖືກເຄາະຮ້າຍ - ແລະ ທີ່ໄດ້ຮັບ ໃບຢັ້ງຢືນສະຖານະພາບການເປັນຜູ້ຖືກເຄາະຮ້າຍ ທີ່ຍົກເວັ້ນເຂົາເຈົ້າ ຈາກການດຳເນີນຄະດີ ແລະ ການລົງໂທດ ລວມທັງການປັບໄໝດ້ານການບໍລິຫານ ສຳລັບການເຂົ້າເມືອງ ແບບຜິດປົກກະຕິ - ແມ່ນໄດ້ຮັບການປົກປ້ອງ ເປັນຢ່າງດີ ຈາກການດຳເນີນຄະດີ. ຜູ້ຕ່າງໜ້າທີ່ບໍ່ແມ່ນພາກລັດ ໄດ້ຊົມເຊີຍ ຄວາມພະຍາຍາມ ຂອງລັດຖະບານ ໃນການລະບຸຕົວ ຜູ້ຖືກເຄາະຮ້າຍ ແລະ ໄດ້ເນັ້ນໜັກເຖິງ ວຽກງານທີ່ສຳຄັນແລະຈຳເປັນ ຂອງບັນດາເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ໃນການສືບສວນ ສະພາບການ ທີ່ວ່າໃນນັ້ນ, ຜູ້ກະທຳຜິດ ທີ່ເປັນຜູ້ໄດ້ຮັບເຄາະຮ້າຍໄດ້ຖືກບັງຄັບ ໃຫ້ກະທຳຄວາມຜິດທາງອາຍາ,ທັງຢູ່ ຫວຽດນາມ ແລະ ຕ່າງປະເທດ. ເຖິງຢ່າງໃດກໍ່ຕາມ, ໄດ້ສັງເກດເຫັນວ່າ ບາງຂໍ້ບົກຜ່ອງ ໃນຂັ້ນຕອນການລະບຸຕົວ ອາດຈະສົ່ງຜົນ ເກີດມີການລົງໂທດ ຫຼາຍກວ່າການປົກປ້ອງຜູ້ຖືກເຄາະຮ້າຍ.

**ຂອບເຂດ ໃນການປັບປຸງ ຂັ້ນຕອນການກຳນົດຕົວຜູ້ຖືກເຄາະຮ້າຍ:** ບົດລາຍງານການຄ້າມະນຸດ ສະບັບປີ 2021 ຂອງ ກະຊວງການຕ່າງປະເທດ ແຫ່ງປະເທດສະຫາລັດ ໄດ້ໃຫ້ຂໍ້ສັງເກດວ່າ ຂະບວນການລະບຸຕົວຜູ້ຖືກເຄາະຮ້າຍ ຍັງ 'ຫຍຸ້ງຍາກ ແລະ ສັບສົນເກີນໄປ'. ການທີ່ບໍ່ສາມາດ ປະຕິບັດຂັ້ນຕອນການລະບຸຕົວ ຢ່າງເປັນລະບົບ ໝາຍເຖິງວ່າ ຜູ້ຖືກເຄາະຮ້າຍ ບໍ່ໄດ້ຖືກລະບຸຕົວ ຢ່າງຈິງຈັງ - ລວມທັງບັນດາການຄ້າທາງເພດຕໍ່ ແມ່ຍິງ ແລະ ເດັກນ້ອຍ

- ໄດ້ສົ່ງຜົນໃຫ້ຜູ້ຖືກເຄາະຮ້າຍບາງຄົນ ອາດຖືກລົງໂທດ ຍ້ອນການກະທຳທີ່ຜິດກົດໝາຍ ຂອງພວກຄ້າມະນຸດ ທີ່ໄດ້ບັງຄັບໃຫ້ເຂົາເຈົ້າກະທຳ. ອີງຕາມບົດລາຍງານດັ່ງກ່າວ, ອົງການ NGO ໄດ້ລາຍງານວ່າ, ຜູ້ຖືກເຄາະຮ້າຍ ທີ່ເປັນຄົນຕ່າງປະເທດ ບໍ່ມີທ່າທີ ທີ່ຈະອອກມາປະເຊີນໜ້າ ຍ້ອນຢ້ານກົວເຈົ້າໜ້າທີ່ຈັບ ໃນຂໍ້ຫາການເຂົ້າປະເທດ ແບບຜິດປົກກະຕິ ແລະ ຍ້ອນແນວນັ້ນ ຜູ້ໄດ້ຮັບເຄາະຮ້າຍຊາວຫວຽດນາມ ຈຶ່ງຢ້ານກົວວ່າຈະຖືກລົງໂທດ ໃນຂໍ້ຫາເຂົ້າເມືອງ ແບບຜິດປົກກະຕິ, ຊຶ່ງເປັນການກະທຳຜິດກົດໝາຍ ເນື່ອງຈາກຕົກເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ, ຫຼື ຖືກວິພາກວິຈານ ຈາກ ລັດຖະບານ.[138]

**ອັດຕາສ່ວນ ຂອງ ຍິງ-ຊາຍ ໃນການທີ່ບໍ່ຖືກກຳນົດຕົວ ແລະ ຄວາມສ່ຽງຕໍ່ການລົງໂທດ:** ຜູ້ຖືກເຄາະຮ້າຍທີ່ເປັນເພດຍິງ ໂດຍສະເພາະການຄ້າມະນຸດ ເພື່ອການຂູດຮີດທາງເພດ ໄດ້ຖືກພິຈາລະນາວ່າ ມີຄວາມສ່ຽງສູງ ຕໍ່ການຖືກລົງໂທດ ເພາະເຂົາເຈົ້າກວມອັດຕາສ່ວນໃຫຍ່ ໃນຈຳນວນບຸກຄົນທີ່ຖືກຄ້າມະນຸດ. ຜູ້ຖືກເຄາະຮ້າຍທີ່ເປັນເພດຍິງ ໃນຮູບແບບການຂູດຮີດແຮງງານ ທີ່ບໍ່ແມ່ນການຂູດຮີດທາງເພດ ອາດຈະຖືກລະບຸຕົວ ແບບສະໝັກໃຈ ທີ່ໜ້ອຍກວ່າ ຜູ້ທີ່ຖືກຂູດຮີດທາງເພດ, ແລະ ດັ່ງນັ້ນຈຶ່ງມີຄວາມສ່ຽງ ຕໍ່ ການຖືກດຳເນີນຄະດີ ສຳລັບຂໍ້ຫາ ການກະທຳຜິດທີ່ກ່ຽວຂ້ອງກັບການເຂົ້າເມືອງ. ຄວາມຈິງທີ່ວ່າ ມີການຍອມຮັບຜູ້ຍິງທີ່ເປັນຜູ້ຖືກເຄາະຮ້າຍ ໜ້ອຍກວ່າຜູ້ຊາຍ ແມ່ນໄດ້ສັງເກດເຫັນວ່າ ອາດເປັນອຸປະສັກ ຕໍ່ ການລະບຸຕົວ ຂອງເຂົາເຈົ້າ ທີ່ສົ່ງຜົນເຮັດໃຫ້ເກີດມີຄວາມສ່ຽງ ຕໍ່ ການລົງໂທດ.

**ບັນດາສິ່ງທ້າທາຍ ໃນການກຳນົດຕົວ ຜູ້ຖືກເຄາະຮ້າຍ ທີ່ເປັນຄົນຫວຽດນາມ ຢູ່ຕ່າງປະເທດ:** ຜູ້ຕອບຄຳຖາມ ທັງຈາກພາກລັດ ແລະ ທີ່ບໍ່ແມ່ນລັດ ໄດ້ເວົ້າເຖິງ ສິ່ງທ້າທາຍ ໃນການພິສູດໃຫ້ເຫັນວ່າ ພົນລະເມືອງຫວຽດນາມ ແມ່ນເປັນຜູ້ຖືກເຄາະຮ້າຍ ຂອງ ການຄ້າມະນຸດ ຢູ່ ຕ່າງປະເທດ. ພົນລະເມືອງຫວຽດນາມ ທີ່ຕົກຢູ່ໃນສະພາບການຜິດປົກກະຕິນັ້ນ ແມ່ນປະເຊີນກັບອຸປະສັກທາງດ້ານພາສາ ແລະ ໄດ້ເພີ່ມຄວາມສ່ຽງ ຕໍ່ ການຖືກເນລະເທດອອກນອກປະເທດ ໂດຍທີ່ບໍ່ຖືກລະບຸຕົວ ແລະ ບໍ່ໄດ້ຮັບການຊ່ວຍເຫຼືອ.

## ການລົງໂທດຜູ້ຖືກເຄາະຮ້າຍ ໃນທາງປະຕິບັດ

**ການດຳເນີນຄະດີ ຜູ້ຖືກເຄາະຮ້າຍ ທີ່ເປັນຄົນຫວຽດນາມ ຢູ່ຕ່າງປະເທດ:** ຜູ້ເຂົ້າຮ່ວມ ໄດ້ໃຫ້ຂໍ້ສັງເກດວ່າ ຜູ້ຖືກເຄາະຮ້າຍ ຈາກການບັງຄັບໃຫ້ເປັນໂສເພນີ ຫຼື ການບັງຄັບໃຫ້ແຕ່ງງານ ໃນປະເທດຈີນ ອາດຈະຫລົບໜີອອກຈາກ ສະຖານະການຂອງຕົນ ແລະ ຖືກຈັບ ແລະ ຈຳຄຸກ ໃນຂໍ້ຫາ ການກະທຳຜິດ ທີ່ກ່ຽວຂ້ອງກັບ ການເຂົ້າເມືອງ ຫຼື ທີ່ກ່ຽວຂ້ອງກັບເອກະສານ ຫຼາຍກວ່າທີ່ຈະໄດ້ຮັບການຊ່ວຍເຫຼືອ ໃນນາມເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ. ສິ່ງດັ່ງກ່າວນີ້ ອາດຈະເກີດຂຶ້ນໄດ້ ເຖິງແມ່ນວ່າ ຈະມີຂໍ້ມູນຈາກເຈົ້າໜ້າທີ່ຫວຽດນາມ ທີ່ຢືນຢັນວ່າ ເຂົາເຈົ້າ ແມ່ນເປັນຜູ້ຖືກເຄາະຮ້າຍ ຈາກ ການຄ້າມະນຸດ. ຕົວຢ່າງທີ່ໄດ້ສະເໜີ ແມ່ນຜູ້ຖືກເຄາະຮ້າຍ ຂອງການຄ້າມະນຸດ ທີ່ເປັນຄົນຫວຽດນາມ ທີ່ເຂົ້າໄປໃນບ່ອນປູກກັນຊາ ປະເຊີນໜ້າກັບ ການກະທຳຜິດທາງອາຍາ; ອັນທີ່ຈິງແລ້ວ, ການຄ້າມະນຸດທີ່ເປັນພົນລະເມືອງ ຂອງປະເທດຫວຽດນາມ ເຂົ້າໄປໃນກິດຈະກຳທີ່ເປັນອາຊະຍາກຳ ໄດ້ຖືກບັນທຶກໄວ້ ເປັນຢ່າງດີ.[139] ບົດລາຍງານ ສະບັບປີ 2014 ກ່ຽວກັບການຂູດຮີດ ຢູ່ໃນກິດຈະກຳ ທີ່ເປັນອາຊະຍາກຳ ໃນ ເອີຣົບ ເຮັດໃຫ້ເຫັນພາບ ປະເທດຫວຽດນາມ ໃນຖານະເປັນປະເທດແຫຼ່ງທີ່ສຳຄັນ ສຳລັບຜູ້ຖືກເຄາະຮ້າຍ ຂອງການຄ້າມະນຸດ, ລວມທັງເດັກນ້ອຍ.[140] ການດຳເນີນຄະດີ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ທີ່ເປັນຄົນຫວຽດນາມ ໃນປະເທດສະຫະລາດຊະອານາຈັກອັງກິດ ໄດ້ເປັນຈຸດສຸມ ຂອງຄຳຕັດສິນທີ່ໂດດເດັ່ນ ໃນກໍລະນີ ຂອງສານສິດທິມະນຸດເອີຣົບ ຂອງ *V.C.L ແລະ A.N. v ສະຫະລາດຊະອານາຈັກອັງກິດ* (ໃຫ້ເບິ່ງຫ້ອງ 4).

---

138 ບົດລາຍງານການຄ້າມະນຸດ ສະບັບປີ 2021: ປະເທດຫວຽດນາມ (ກະຊວງການຕ່າງປະເທດ ສະຫາລັດອາເມລິກາ, 2021)

139 *ການຄ້າມະນຸດ ສຳລັບກິດຈະກຳທີ່ເປັນອາຊະຍາກຳ ທີ່ຖືກບັງຄັບ ແລະ ການຂໍທານ ໃນເອີຫຼົບ: ການສຶກສາຄົ້ນຄ້ວ ແລະ ຫຼັກການປະຕິບັດທີ່ດີ* (ອົງການ ອົງການສາກົນ ຕ້ານການເປັນທາດ, ປີ 2014) 50, 57.

140 ອັນທີ່ຈິງແລ້ວ, ຫວຽດນາມ ແມ່ນເປັນປະເທດດຽວ ທີ່ເປັນແຫຼ່ງໃຫຍ່ທີ່ສຸດ ສຳລັບ ການຄ້າມະນຸດທີ່ເປັນເດັກນ້ອຍ ເຂົ້າໄປ ສະຫະລາດຊະອານາຈັກອັງກິດ, ໂດຍມີກຸ່ມແກ໊ງຄົນຫວຽດນາມ ທີ່ຄ້າເດັກນ້ອຍ ເປັນແຮງງານທີ່ມີຄ່າຈ້າງຕໍ່າ. ໄດ້ມີການລາຍງານວ່າ ໃນຈຳນວນ ເດັກນ້ອຍ 308 ຄົນ ໄດ້ຖືກຈັບ ຍ້ອນການປູກກັນຊາ ໃນປະເທດສະຫະລາດຊະອານາຈັກອັງກິດ ລະຫວ່າງ ປີ 2011 ແລະ 2014, 245 ຄົນ ແມ່ນມີສັນຊາດຫວຽດນາມ, ຫຼື ເທົ່າກັບ 79.5% ຂອງຈຳນວນເດັກນ້ອຍຕ່າງປະເທດທັງໝົດ ທີ່ຖືກຈັບ ສຳລັບ ການກະທຳຜິດດັ່ງກ່າວ, ເຂົາເຈົ້າສ່ວນໃຫຍ່ ເບິ່ງເໝືອນກັບວ່າ ເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ. *ການຄ້າມະນຸດ ສຳລັບກິດຈະກຳທີ່ເປັນອາຊະຍາກຳ ທີ່ຖືກບັງຄັບ ແລະ ການຂໍທານ ໃນເອີຫຼົບ: ການສຶກສາຄົ້ນຄ້ວ ແລະ ຫຼັກການປະຕິບັດທີ່ດີ* (ອົງການ ອົງການສາກົນ ຕ້ານການເປັນທາດ, ປີ 2014) 17-19.

**ການດຳເນີນຄະດີ ຜູ້ໄດ້ຮັບເຄາະຮ້າຍ ທີ່ເປັນຄົນຫວຽດນາມ ທີ່ກັບຄືນປະເທດຫວຽດນາມ:** ບັນດາຜູ້ຕອບຄຳຖາມ ທີ່ບໍ່ໄດ້ມາຈາກພາກລັດ ໃຫ້ຂໍ້ສັງເກດ ກ່ຽວກັບສິ່ງທ້າທາຍ ທີ່ໄດ້ປະເຊີນ ໃນການສົ່ງພົນລະເມືອງຫວຽດນາມກັບຄືນປະເທດ, ຊຶ່ງເປັນຜູ້ທີ່ໄດ້ຖືກຍອມຮັບວ່າ ເປັນຜູ້ຖືກເຄາະຮ້າຍ ຢູ່ໃນປະເທດປາຍທາງ, ແຕ່ບໍ່ແມ່ນຕອນທີ່ເຂົາເຈົ້າກັບຄືນໄປຫວຽດນາມ ບ່ອນທີ່ເຂົາເຈົ້າຈະຖືກປັບໃໝ ສຳລັບອອກນອກປະເທດ ແລະ ເຮັດວຽກ ແບບຜິດກົດໝາຍ. ເຈົ້າໜ້າທີ່ປະຕິບັດກົດໝາຍ ໄດ້ອ້າງເຖິງ ກໍລະນີ ທີ່ຜູ້ຖືກເຄາະຮ້າຍຄົນວຽດນາມ ຖືກບັງຄັບໃຫ້ຄ້າປະເວນີ ຢູ່ປະເທດຈີນ ຊຶ່ງເປັນຜູ້ຄາດຕະກຳ ເຈົ້າຂອງຮ້ານສາວບໍລິການ ບ່ອນທີ່ຕົນຖືກສວຍໃຊ້, ຕໍ່ມາຜູ້ກ່ຽວ ກໍໄດ້ຖືກຈຳຄຸກ 15 ປີ ໃນຕອນທີ່ຕົນກັບຄືນຫວຽດນາມ. ຜູ້ຖືກເຄາະຮ້າຍໄດ້ອະທິບາຍວ່າ ໃນກໍລະນີນີ້ ຜູ້ຖືກເຄາະຮ້າຍ ໄດ້ກໍ່ອາຊະຍາກຳ ທີ່ເປັນຜົນມາຈາກການຄ້າມະນຸດໂດຍກົງ, ທີ່ຊີ້ໃຫ້ເຫັນເຖິງຄວາມຈຳເປັນ ທີ່ຈະຕ້ອງພິຈາລະນາວ່າ ຜູ້ກ່ຽວຖືກບັງຄັບໃຫ້ກະທຳຜິດ ຫຼື ຍັງມີທາງເລືອກອີກ ເຊັ່ນ. , ການປ້ອງກັນຕົນເອງ ທີ່ບໍ່ໄດ້ເຮັດໃຫ້ເກີດການເສຍຊີວິດ.

**ການດຳເນີນຄະດີ ຜູ້ໄດ້ຮັບເຄາະຮ້າຍ ຂອງການຄ້າມະນຸດ ທີ່ເປັນຄົນຕ່າງປະເທດ ໃນປະເທດຫວຽດນາມ ແລະ ການພິຈາລະນາ ສະຖານະພາບການເຂົ້າເມືອງ:** ຄວາມຄິດເຫັນ ກໍແຕກຕ່າງກັນໄປກ່ຽວກັບວ່າ ຜູ້ໄດ້ຮັບເຄາະຮ້າຍ ທີ່ເປັນຄົນຕ່າງປະເທດ ຖືກລົງໂທດ ໃນຂໍ້ຫາການກະທຳຜິດ ທີ່ເຂົາເຈົ້າອາດຈະໄດ້ກະທຳ ໃນຊ່ວງໄລຍະຖືກຄ້າມະນຸດ ຢູ່ຫວຽດນາມ. ໄດ້ສັງເກດເຫັນວ່າ ຄົນທີ່ບໍ່ແມ່ນພົນລະເມືອງຂອງປະເທດ ມີຄວາມຫຍຸ້ງຍາກຫຼາຍກວ່າ ໃນການລະບຸຕົວ ແລະ ໜ້ອຍໜັກ ທີ່ຈະກຳນົດຕົວຕົນເອງ ຕໍ່ເຈົ້າໜ້າທີ່, ດັ່ງນັ້ນ ຈຶ່ງມີຄວາມສ່ຽງສູງຂຶ້ນ ທີ່ຈະຖືກດຳເນີນຄະດີ.

**ການດຳເນີນຄະດີ ຜູ້ຄ້າມະນຸດ-ທີ່ຫັນປ່ຽນຈາກ-ການເປັນຜູ້ຖືກເຄາະຮ້າຍ: ຕົວຢ່າງທີ່ນຳສະເໜີແມ່ນວ່າ ຜູ້ຖືກເຄາະຮ້າຍ ຖືກຄ້າມະນຸດ ທີ່ຖືກສົ່ງຈາກຫວຽດນາມ ໄປປະເທດອື່ນ ເຊັ່ນ:** ມາເລເຊຍ ຫຼືຈີນ, ຊຶ່ງເປັນຜູ້ທີ່ຮຽນຮູ້ ກ່ຽວກັບເສັ້ນທາງ ແລະ ການຕິດຕໍ່ພົວພັນ, ສະນັ້ນ ຈຶ່ງເປັນຜູ້ຄ້າມະນຸດ ໃນເວລາກັບຄືນໄປຫວຽດນາມ. ໃນກໍລະນີດັ່ງກ່າວ, ຜູ້ຕອບຄຳຖາມ ທີ່ມາຈາກພາກລັດ ໄດ້ອະທິບາຍວ່າ ເຂົາເຈົ້າ ຈະຖືກດຳເນີນຄະດີ ເມື່ອມີຫຼັກຖານຄົບ ທີ່ສາມາດເພື່ອພິສູດວ່າ ເຂົາເຈົ້າມີສ່ວນຮ່ວມ ໃນການຄ້າມະນຸດ. ຜູ້ມີບົດບາດ ທີ່ບໍ່ໄດ້ມາຈາກພາກລັດ ກໍໄດ້ຍົກຕົວຢ່າງໜຶ່ງຂຶ້ນມາ ກ່ຽວກັບ ຜູ້ຄ້າມະນຸດ-ທີ່ຫັນປ່ຽນຈາກ-ການເປັນຜູ້ຖືກເຄາະຮ້າຍ; ໃນອີກກໍລະນີໜຶ່ງ ແມ່ນວ່າ ຜູ້ຖືກເຄາະຮ້າຍ ໄດ້ຖືກປ່ອຍໃຫ້ກັບຄືນປະເທດຫວຽດນາມ ຖ້າວ່າ ຜູ້ກ່ຽວໄດ້ຮັບເອົາຜູ້ຖືກເຄາະຮ້າຍອີກຄົນໜຶ່ງເຂົ້າເຮັດວຽກ ຢູ່ໃນບ່ອນຂອງຕົນ, ແລະ ໄດ້ຖືກຕັດສິນລົງໂທດຈຳຄຸກ 3 ປີ ສຳລັບການປະຕິບັດເຊັ່ນນັ້ນ. ອີກຕົວຢ່າງໜຶ່ງ ໄດ້ພົວພັນກັບ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ເພື່ອເອົາອະໄວຍະວະອອກຈາກໂຕ, ຊຶ່ງຕໍ່ມາໄດ້ຮັບເອົາຄົນອື່ນມາຂາຍອະໄວຍະວະຂອງເຂົາເຈົ້າຄືກັນກັບທີ່ຕົນໄດ້ເຮັດ.



# 3

# ຄຳແນະນຳ

ຄວາມແຕກຕ່າງ ໃນດ້ານນິຕິກຳ, ໜ້າທີ່ ແລະ ອຳນາດ ຂອງ ຕຳຫຼວດ, ໄອຍະການ ແລະ ສານ, ລວມທັງ ຄຸນຄ່າ ແລະ ປະເພນີ ຂອງ ລະບົບຍຸຕິທຳທາງອາຍາ, ລ້ວນແຕ່ມີອິດທິພົນ ຕໍ່ ວິທີການຕີຄວາມໝາຍ ຫຼັກການການບໍ່ລົງໂທດ ແລະ ຜົນນຳໃຊ້ ໃນປະເທດທີ່ແຕກຕ່າງກັນ.[141] ແຕ່ຖ້າບໍ່ຄຳນຶງເຖິງຄວາມແຕກຕ່າງດັ່ງກ່າວນີ້, ເຈົ້າໜ້າທີ່ປະຕິບັດຄວາມຍຸຕິທຳທາງອາຍາ - ນັບຕັ້ງແຕ່ ຜູ້ສືບສວນສອບສວນ ຈົນໄປເຖິງ ໄອຍະການ, ທະນາຍຄວາມຝ່າຍຈຳເລີຍ ແລະ ຄະນະລູກຂຸນ ຫລື ບັນດາຜູ້ພິພາກສາທີ່ຕັດສິນຄະດີ - ທັງໝົດ ມີບົດບາດໃນການປົກປ້ອງ ຜູ້ຖືກເຄາະຮ້າຍ ຈາກການລົງໂທດ.

ຖ້າຈະດີແທ້, ເຈົ້າໜ້າທີ່ ຜູ້ທີ່ປະເຊີນກັບ ຜູ້ທີ່ອາດໄດ້ຮັບເຄາະຮ້າຍ ຈາກການຄ້າມະນຸດ ເປັນຄັ້ງທຳອິດ ຈະເປັນຜູ້ຫັນເຂົາເຈົ້າ ອອກຈາກ ຂະບວນການຍຸຕິທຳທາງອາຍາ ໄປສູ່ ຊ່ອງທາງການປົກປ້ອງ. ເມື່ອການປົກປ້ອງນີ້ລົ້ມເຫລວ ແລະ ຜູ້ບັງຄັບໃຊ້ກົດໝາຍ ວາງຂໍ້ກ່າວຫາ ຕໍ່ ຜູ້ຖືກເຄາະຮ້າຍ, ການປ້ອງກັນຕໍ່ໄປ ແມ່ນການບໍ່ດຳເນີນຄະດີເຂົາເຈົ້າ. ແມ້ແຕ່ຢູ່ໃນປະເທດ ການດຳເນີນຄະດີ ແມ່ນສິ່ງທີ່ບັງຄັບ, ໄອຍະການ ອາດຍັງສາມາດສັ່ງ ຫຼື ຮ້ອງຂໍໃຫ້ຢຸດເຊົາການດຳເນີນຄະດີ ແລະ ເປີດການດຳເນີນຄະດີ ຕໍ່ ຜູ້ຄ້າມະນຸດແທນ. ໃນທີ່ສຸດ, ເມື່ອການປົກປ້ອງທັງສອງ ບໍ່ສາມາດປົກປ້ອງ ຜູ້ຖືກເຄາະຮ້າຍ ຈາກການລົງໂທດໄດ້, ສານ ອາດຈະສາມາດຍຶດຫມັ້ນຫຼັກການ ໂດຍການບໍ່ຕັດສິນລົງໂທດຜູ້ຖືກເຄາະຮ້າຍ, ຫຼື ວິທີສຸດທ້າຍ, ດ້ວຍການຜ່ອນຜັນ ການຕັດສິນລົງໂທດ.[142]

ພາກນີ້ ນຳສະເໜີ 26 ຄຳແນະນຳ ກ່ຽວກັບການນຳໃຊ້ ການປົກປ້ອງ ແບບບໍ່ລົງໂທດ ຕະຫຼອດຂະບວນຄວາມຍຸຕິທຳທາງອາຍາ. ພາກສ່ວນກ່ຽວຂ້ອງ - ຜູ້ສ້າງກົດໝາຍ ແລະ ນະໂຍບາຍ ແລະ ເຈົ້າໜ້າທີ່ປະຕິບັດກົດໝາຍ - ຖືກເຊີນໃຫ້ພິຈາລະນາ ຄຳແນະນຳເຫຼົ່ານີ້, ດັດປັບພວກມັນ ໃຫ້ເຂົ້າກັບສະພາບການ ຂອງເຂົາເຈົ້າ, ແລະ ວາງກົນໄກໃນການຕິດຕາມ ການຈັດຕັ້ງປະຕິບັດ, ທີ່ກ້າວໄປສູ່ ການຍຶດໝັ້ນ ຫຼັກການການບໍ່ລົງໂທດໃນພາກປະຕິບັດ.

---

141 *ບົດແນະນຳ ກ່ຽວກັບ ບັນຫາການຕອບສະໜອງຄວາມຍຸຕິທຳທາງອາຍາທີ່ເໝາະສົມ ຕໍ່ ຜູ້ຖືກເຄາະຮ້າຍ ທີ່ຖືກບັງຄັບໃຫ້ກະທຳຜິດ ຍ້ອນເຂົາເຈົ້າຖືກຄ້າມະນຸດ: ເອກະສານປະຫວັດຄວາມເປັນມາ ທີ່ຖືກກະກຽມໂດຍ ກອງເລຂາ ຂອງ ຄະນະປະຕິບັດງານ ກ່ຽວກັບການຄ້າມະນຸດ, ນະຄອນວຽນນາ,* ວັນທີ 10 ແລະ 11 ກັນຍາ 2020, ເອກະສານ ຂອງ UN. CTOC/COP/WG.4/2020/2 (15 ມິຖຸນາ 2020), ວັກທີ 36.

142 *ຄວາມສຳຄັນ ຂອງການຈັດຕັ້ງປະຕິບັດ ຂໍ້ກຳນົດ ວ່າດ້ວຍການບໍ່ລົງໂທດ: ພັນທະໃນການປົກປ້ອງຜູ້ຖືກເຄາະຮ້າຍ,* ທ່ານ Maria Grazia Giammarinaro, ຜູ້ລາຍງານພິເສດ ກ່ຽວກັບ ການຄ້າມະນຸດ, ໂດຍສະເພາະແມ່ນແມ່ຍິງ ແລະ ເດັກນ້ອຍ, ອົງການສະຫະປະຊາຊາດ, ນະຄອນເຈນີວາ, 30 ມິຖຸນາ 2020, ໜ້າ 9-10

### ຫ້ອງທີ 9: ກອບການວິເຄາະ ຫຼັກການການບໍ່ລົງໂທດ ໃນການປະຕິບັດພາຍໃນປະເທດ

ໃນການເຂົ້າໃຈວ່າ ຫຼັກການການບໍ່ລົງໂທດ ປະຕິບັດແນວໃດ ຢູ່ໃນປະເທດຂອງເຂົາເຈົ້າ ຫຼື ຢູ່ໃນປະເທດ ບ່ອນທີ່ພົນລະເມືອງຂອງເຂົາເຈົ້າ ຖືກຄ້າມະນຸດ, ຜູ້ປະຕິບັດຄວາມ ຍຸຕິທຳທາງອາຍາ ອາດຈະເບິ່ງຄຳຖາມຕໍ່ໄປນີ້ ຊຶ່ງເປັນປະໂຫຍດ ສຳລັບການພິຈາລະນາ:

ຫຼັກການການບໍ່ລົງໂທດແມ່ນມີຢູ່ໃນກົດໝາຍ ຫຼື ນະໂຍບາຍ ຢ່າງຈະແຈ້ງບໍ?

ຫຼັກການການບໍ່ລົງໂທດ ມີຜົນນຳໃຊ້ກັບ ອາຊະຍາກຳອັນໃດ? ມັນມີຜົນນຳໃຊ້ກັບການກະທຳຜິດທັງໝົດບໍ ຫຼື ພຽງແຕ່ບາງການກະທຳຜິດເທົ່ານັ້ນ?

ສາຍພົວພັນໃດ ທີ່ເປັນສາເຫດ ລະຫວ່າງ ປະສົບການ ຂອງຜູ້ຖືກເຄາະຮ້າຍ ກ່ຽວກັບການຄ້າມະນຸດ ແລະ ການກະທຳຜິດຂອງຜູ້ກ່ຽວ ທີ່ພາໃຫ້ເກີດມີການນຳໃຊ້ຫຼັກການ (ເຊັ່ນ: ການເຄື່ອນໄຫວທີ່ເປັນສາເຫດ ຫຼື ການບີບບັງຄັບ)?

ໃຜມີໜ້າທີ່ຢືນຢັນສາຍພົວພັນດັ່ງກ່າວນັ້ນ? ດ້ວຍມາດຕະຖານການຢືນຢັນໃດ?

ມີຜົນທາງກົດໝາຍຫຍັງແດ່ ສຳລັບຫຼັກການ ທີ່ມີຕໍ່ຄວາມຮັບຜິດຊອບ ຂອງ ຜູ້ຖືກເຄາະຮ້າຍ? ມັນຍົກເວັ້ນຄວາມຮັບຜິດຊອບ ຂອງ ເຂົາເຈົ້າທັງໝົດບໍ ຫຼື ພຽງແຕ່ຜ່ອນຜັນເທົ່ານັ້ນ?

ດັດແກ້ມາຈາກ: ທ່ານ Marija Jovanovi, 'ຫຼັກການການບໍ່ລົງໂທດ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ໃນຄວາມເປັນມະນຸດ: ຄຳຖາມ ສຳລັບເຫດຜົນ ແລະ ບົດແນະນຳສຳລັບພາກປະຕິບັດ' *ວາລະສານ ການຄ້າມະນຸດ ແລະ ການຂູດຮີດມະນຸດ,* 2017, ສະບັບທີ 1 ເລກທີ 1, 41-76 ຢູ່ໜ້າ 58 ແລະ 62.

## ແຜນວາດທີ 1:
## ການຖືເປັນຄະດີອາຍາ ແລະ ບໍ່ເປັນຄະດີອາຍາຂອງຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ

| ການຖືເປັນຄະດີອາຍາ | ຂະບວນການຍຸຕິທຳທາງອາຍາ | ການບໍ່ຖືເປັນຄະດີອາຍາ |
|---|---|---|
| ຜູ້ຖືກເຄາະຮ້າຍ ທີ່ບໍ່ຖືກກຳນົດຕົວວ່າເປັນຜູ້ທີ່ອາດຈະໄດ້ຮັບເຄາະຮ້າຍ ຈາກການຄ້າມະນຸດ<br>ຜູ້ຖືກເຄາະຮ້າຍ ທີ່ຖືກກຳນົດຕົວ, ຖືກສືບສວນ-ສອບສວນ ແລະ ຖືກປະຕິບັດເປັນສະເໝືອນຜູ້ກະທຳຜິດ | **ການກຳນົດຕົວ / ການສືບສວນ** | ຜູ້ຖືກເຄາະຮ້າຍ ທີ່ຖືກກຳນົດຕົວ ໃນຈຳນວນຜູ້ທີ່ອາດຈະກະທຳຜິດ<br>ຜູ້ຖືກເຄາະຮ້າຍ ທີ່ຖືກຫັນປ່ຽນອອກຈາກຂະບວນການຍຸຕິທຳທາງອາຍາ ໄປສູ່ ການໄດ້ຮັບການປົກປ້ອງ ແລະ ຊ່ວຍເຫຼືອ<br>ບັນດາກົດໝາຍ ທີ່ຫ້າມການດຳເນີນຄະດີ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ |
| ຂໍ້ກຳນົດວ່າດ້ວຍການບໍ່ລົງໂທດ ບໍ່ທັນມີ / ບໍ່ທັນມີຜົນນຳໃຊ້<br>ການຕັ້ງຂໍ້ຫາ ໃສ່ຜູ້ຖືກເຄາະຮ້າຍ<br>ໄພຂົ່ມຂູ່ ຈາກການຈັບກຸມ ທີ່ຖືກນຳໃຊ້ ເພື່ອບັງຄັບໃຫ້ຜູ້ຖືກເຄາະຮ້າຍໃຫ້ການຮ່ວມມື | **ການຈັບກຸມ / ຕັ້ງຂໍ້ຫາ** | ສ້າງສາຍພົວພັນກັບ ຜູ້ຖືກເຄາະຮ້າຍ ເພື່ອຜັກດັນໃຫ້ມີການຮ່ວມມື<br>ບໍ່ມີການຕັ້ງຂໍ້ກ່າວຫາ / ຜູ້ຖືກເຄາະຮ້າຍ ໄດ້ຫັນປ່ຽນໄປສູ່ ສານສຳລັບການຄ້າມະນຸດໂດຍສະເພາະ |
| ຜູ້ຖືກເຄາະຮ້າຍ ຖືກດຳເນີນຄະດີ<br>ຂໍ້ກຳນົດວ່າດ້ວຍ ການບໍ່ລົງໂທດ ບໍ່ທັນມີ / ບໍ່ມີຜົນນຳໃຊ້<br>ການປ້ອງກັນຕົນ ບໍ່ໄດ້ຮຽກຮ້ອງ ໃຫ້ມີການພິສູດດ້ວຍພະຍານທີ່ມີຄວາມຊ່ຽວຊານ ກ່ຽວກັບ ຜົນກະທົບ ຈາກການຄ້າມະນຸດ | **ການດຳເນີນຄະດີ/ການປ້ອງກັນຕົນ** | ໄອຍະການ ບໍ່ສືບຕໍ່ / ພະຍາຍາມຊອກຫາ ການບໍ່ສືບຕໍ່ ໂດຍສານ<br>ຂໍ້ກຳນົດ ວ່າດ້ວຍການບໍ່ລົງໂທດ / ການປ້ອງກັນຕົນ ໄດ້ມີຜົນນຳໃຊ້<br>ການປ້ອງກັນຕົນ ນຳເອົາການພິສູດ ດ້ວຍພະຍານທີ່ມີຄວາມຊ່ຽວຊານ ເຂົ້າມາພິສູດຜົນກະທົບຈາກການຄ້າມະນຸດ |
| ຜູ້ຖືກເຄາະຮ້າຍ ທີ່ຖືກຕັດສິນວ່າເປັນຜູ້ກະທຳຜິດ | **ການຕັດສິນວ່າໄດ້ກະທຳຜິດ** | ການດຳເນີນຄະດີ ເປີດຄະດີ ຕ້ານກັບຜູ້ຄ້າມະນຸດ<br>ຜູ້ຖືກເຄາະຮ້າຍ ບໍ່ໄດ້ຖືກຕັດສິນວ່າໄດ້ກະທຳຜິດ<br>ການດຳເນີນຄະດີ ເປີດຄະດີ ຕ້ານກັບຜູ້ຄ້າມະນຸດ<br>ຜູ້ຖືກເຄາະຮ້າຍ ບໍ່ໄດ້ຖືກຕັດສິນວ່າໄດ້ກະທຳຜິດ<br>ຊອກຫາທາງເລືອກ ມາປ່ຽນແທນ ການຕັດສິນວ່າໄດ້ກະທຳຜິດ |
| ຜູ້ໄດ້ຮັບເຄາະຮ້າຍ ຖືກປັບໃໝ ແລະ/ຫຼື ຈຳຄຸກສຳລັບການກະທຳຜິດ ທີ່ກ່ຽວຂ້ອງກັບ ການຄ້າມະນຸດ ຂອງເຂົາເຈົ້າ<br>ເມື່ອຢູ່ໃນລະບົບ ຂອງຄຸກ, ຄາດວ່າ ຜູ້ທີ່ຖືກຕັດສິນວ່າໄດ້ກະທຳຜິດ ຈະເປັນຜູ້ກະທຳຜິດ | **ການຕັດສິນລົງໂທດ** | ການຕັດສິນລົງໂທດ ໄດ້ຖືກຍົກເລີກ ຫຼື ລຶບລ້າງ<br>ທາງເລືອກ ເພື່ອມາປ່ຽນແທນ ການເຂົ້າຄຸກ (ການອະໄພໂທດ/ ການບໍລິການຊ່ວຍເຫຼືອຊຸມຊົນ) |
| ການຕັດສິນວ່າໄດ້ກະທຳຜິດ ປ້ອງກັນການເຊື່ອມໂຍງກັບຄືນ ຂອງຜູ້ຖືກເຄາະຮ້າຍ ແລະ ການເຂົ້າເຖິງວຽກງານ/ການສຶກສາ/ທີ່ພັກ<br>ຜູ້ໄດ້ຮັບເຄາະຮ້າຍ ມີຄວາມສ່ຽງ ທີ່ຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຄືນໃໝ່ | **ພາຍຫລັງການຕັດສິນວ່າໄດ້ກະທຳຜິດ** | ການຕັດສິນວ່າໄດ້ກະທຳຜິດ ຖືກເອົາເຂົ້າກັນເພື່ອປົກປ້ອງຄວາມເປັນສ່ວນຕົວ ຂອງຜູ້ຖືກເຄາະຮ້າຍ<br>ການຕັດສິນວ່າໄດ້ກະທຳຜິດ ຖືກຍົກເລີກ / ລຶບລ້າງ |

## 3.1. ການກຳນົດຕົວ ແລະ ການສືບສວນ-ສອບສວນ

### ຂໍ້ສະເໜີແນະນຳ 1: ການສ້າງຂີດຄວາມສາມາດໃຫ້ແກ່ເຈົ້າໜ້າທີ່ດ່ານໜ້າ ເພື່ອກຳນົດຕົວຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນກຸ່ມຄົນທີ່ປະເຊີນໜ້າວ່າເປັນຜູ້ກະທຳຜິດ.

ມີສາຍພົວພັນທີ່ຫຼໍ່ແຫຼມ ລະຫວ່າງການບໍ່ລະບຸຕົວຜູ້ຖືກເຄາະຮ້າຍ ແລະ ການລົງໂທດ ສໍາລັບເຂົາເຈົ້າ.[143] ການກຳນົດຕົວຜູ້ຖືກເຄາະຮ້າຍ ໃນເບື້ອງຕົ້ນ ແລະ ຢ່າງມີປະສິດທິພາບ ແມ່ນມີຄວາມຫຼໍ່ແຫຼມ ຕໍ່ ການປົກປ້ອງເຂົາເຈົ້າ ຈາກການລົງໂທດ ການກະທຳທີ່ຜິດກົດໝາຍ ທີ່ເຂົາເຈົ້າໄດ້ກະທຳ ຊຶ່ງເປັນຜົນໂດຍກົງມາຈາກ ການຖືກຄ້າມະນຸດ. ການທີ່ບໍ່ສາມາດລະບຸຕົວຜູ້ຖືກເຄາະຮ້າຍ ອາດໝາຍເຖິງວ່າ ເຂົາເຈົ້າຈະຖືກຈັບ ແລະ ຖືກດຳເນີນຄະດີ ຫຼື ຖືກກັກຂັງ ແລະ ເນລະເທດອອກນອກປະເທດ ຍ້ອນການກະທຳຜິດ ທີ່ເຂົາເຈົ້າໄດ້ກະທຳ ໃນຊ່ວງໄລຍະທີ່ຖືກຄ້າມະນຸດ. ຜົນຕໍ່ຜູ້ຖືກເຄາະຮ້າຍ ແມ່ນວ່າ ເຂົາເຈົ້າ ອາດຈະກາຍເປັນຜູ້ຖືກເຄາະຮ້າຍອີກຄັ້ງ, ມີຄວາມເຈັບຊ້ຳ ແລະ ອັບອາຍ ໃນປະສົບການ ຂອງຕົນ ທີ່ຖືກໂຈມຕີ, ຈັບກຸມ, ກັກຂັງ, ດຳເນີນຄະດີໃນສານ ແລະ ເຂົ້າຄຸກ. ຜົນຕໍ່ເຈົ້າໜ້າທີ່ ແມ່ນວ່າ ເຂົາເຈົ້າພາດໂອກາດ ໃນການກຳນົດຕົວ ຜູ້ຖືກເຄາະຮ້າຍ ແລະ ເປີດເຜີຍຂໍ້ມູນ ກ່ຽວກັບກຸ່ມທີ່ກໍ່ອາດຊະຍາກຳ ທີ່ມີສ່ວນກ່ຽວຂ້ອງກັບການຄ້າມະນຸດ. ວົງຈອນທີ່ຫາຍານະ ຂອງການບໍ່ກຳນົດຕົວ ແລະ ການລົງໂທດຜູ້ຖືກເຄາະຮ້າຍ ແມ່ນການສືບຕໍ່ເກີດຂຶ້ນເອງ ແບບບໍ່ຊິ້ນສຸດ.

**ແຜນວາດທີ 2:**

**ວົງຈອນ ການລົງໂທດ ຜູ້ຖືກເຄາະຮ້າຍ**




143 ກອງປະຊຸມ ຂອງປະເທດພາຄີ ຕໍ່ UNTOC, ບົດລາຍງານ ຜົນກອງປະຊຸມ ຂອງກຸ່ມປະຕິບັດງານ ການຄ້າມະນຸດ (1415 ເມສາ 2009), ເອກະສານ ຂອງ UN CTOC/COP/WG.4/2009/2, ລົງວັນທີ 21 ເມສາ 2009, ວັກ 12.

ເພື່ອຢຸດຕິວົງຈອນນີ້, ຕ້ອງໄດ້ພະຍາຍາມຮັບປະກັນວ່າ ຜູ້ຖືກເຄາະຮ້າຍ ສາມາດເຂົ້າເຖິງຄວາມຍຸຕິທໍາ ແລະ ລາຍງານເຈົ້າໜ້າ ຢ່າງປອດໄພ ໂດຍບໍ່ມີຄວາມຢ້ານກົວວ່າຈະຖືກລົງໂທດ, ບໍ່ວ່າຈະເປັນການກັກຂັງ, ການເນລະເທດອອກນອກປະເທດ ຫຼື ການລົງໂທດ.[144] ບັນດາເຈົ້າໜ້າທີ່ໜ້າດ່ານ ລວມທັງຕໍາຫຼວດ, ເຈົ້າໜ້າທີ່ກວດຄົນເຂົ້າ-ອອກເມືອງ ແລະ ເຈົ້າໜ້າທີ່ຈາກຂະແໜງແຮງງານ, ຕ້ອງໄດ້ຮັບການຝຶກອົບຮົມ ຢ່າງເປັນປົກກະຕິ ເພື່ອລະບຸຕົວຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ໃນຈໍານວນຄົນ ທີ່ເຂົາເຈົ້າພົບພໍ້ ໃນຊ່ວງໄລຍະການເຮັດວຽກ ຂອງເຂົາເຈົ້າ. ການຝຶກອົບຮົມ ຄວນຈະຄໍານຶງເຖິງບົດບາດຍິງຊາຍ, ແລະ ຮັບຮູ້ຂໍ້ມູນທີ່ໄປທີ່ມາຂອງຄວາມເຈັບຊໍ້າ ເພື່ອຍົກໃຫ້ເຫັນວ່າເປັນຫຍັງ ຄົນໆໜຶ່ງ ຈຶ່ງອາດຈະບໍ່ລະບຸຕົວເອງວ່າເປັນຜູ້ຖືກເຄາະຮ້າຍ ແລະ ບໍ່ຕ້ອງການໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່. ທີ່ສໍາຄັນ, ການຝຶກອົບຮົມ ຄວນຈະບໍ່ພຽງແຕ່ສະໜອງໃຫ້ ເຈົ້າໜ້າທີ່ໜ້າດ່ານ ທີ່ຢູ່ຂັ້ນສູນກາງ ແລະ ໃນເຂດຕົວເມືອງເທົ່ານັ້ນ, ແຕ່ກໍຍັງຄວນສະໜອງໃຫ້ແກ່ ເຈົ້າໜ້າທີ່ ທີ່ຢູ່ໃນແຂວງ ແລະ ເຂດຫ່າງໄກສອກຫຼີກ ບ່ອນທີ່ມີການຄ້າມະນຸດເກີດຂຶ້ນ. ການຝຶກອົບຮົມດັ່ງກ່າວ ບໍ່ພຽງແຕ່ສະໜອງໃຫ້ແກ່ ຜູ້ທີ່ເຮັດວຽກສະເພາະດ້ານການສືບສວນການຄ້າມະນຸດເທົ່ານັ້ນ, ແຕ່ຄວນເລັ່ງໃສ່ ເຈົ້າໜ້າທີ່ ຜູ້ທີ່ອາດປະເຊີນກັບ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນຊ່ວງໄລຍະ ການສືບສວນ ອາດຊະຍາກໍາອື່ນໆ.

ເຈົ້າໜ້າທີ່ໜ້າດ່ານ ຄວນຈະໄດ້ຮັບການສະໜອງອຸປະກອນ ເພື່ອສະໜັບສະໜູນ ເຂົາເຈົ້າໃນການລະບຸຕົວ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ, ລວມທັງ ວັດສະດຸອຸປະກອນ ທີ່ອີງໃສ່ຫຼັກຖານ ເພື່ອແກ້ໄຂ ອຸປະສັກໃນການລະບຸຕົວຕົນ;[145] ຕົວຊີ້ວັດ ທີ່ໄດ້ຮັບການປັບປຸງ ຢ່າງເປັນປົກກະຕິ ແລະ ກ່ຽວຂ້ອງສະເພາະກັບສະພາບການ ຂອງການຄ້າມະນຸດ; ແລະ ລາຍຊື່ການກະທໍາຜິດ ທີ່ບໍ່ມີຂອບເຂດຈໍາກັດ ແລະ ບໍ່ທັນຄົບຖ້ວນ ຊຶ່ງມັກຈະກ່ຽວຂ້ອງກັບ ການຄ້າມະນຸດ ທີ່ຜູ້ຖືກເຄາະຮ້າຍ ອາດຈະກະທໍາ.[146]

## ຂໍ້ສະເໜີແນະນໍາ 2: ເສີມສ້າງຄວາມເຂັ້ມແຂງຕໍ່ກັບຄວາມເຂົ້າໃຈ ວິທີການທີ່ຜູ້ຄ້າມະນຸດນໍາໃຊ້ຕໍ່ກັບຜູ້ຖືກເຄາະຮ້າຍ ແລະ ຜົນກະທົບຕໍ່ກັບຜູ້ຖືກເຄາະຮ້າຍ.

ຜູ້ບັງຄັບໃຊ້ກົດໝາຍ ມັກຈະປະເມີນ ຄວາມສາມາດ ແລະ ຄວາມພະຍາຍາມອັນສໍາຄັນ ທີ່ຈໍາເປັນຕໍ່ການສືບສວນການຄ້າມະນຸດ ໃຫ້ມີປະສິດທິພາບ. ທ່ານ John Cotton Richmond, ເອກອັກຄະລັດຖະທູດສະຫາລັດອາເມລິກາ ທີ່ໄດ້ຮັບມອບໝາຍໜ້າທີ່ພິເສດ ໄດ້ໃຫ້ຂໍ້ສັງເກດວ່າ ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ຄຸ້ນເຄີຍກັບ ການສືບສວນອາດຊະຍາກໍາ ທີ່ອີງໃສ່ເຫດການ, ຊຶ່ງບໍ່ແມ່ນອາດຊະຍາກໍາ ທີ່ອີງຕາມຂະບວນການ.'[147] ດັ່ງນັ້ນ: ເຂົາເຈົ້າອາດຈະມອງຂ້າມ ຄວາມສະຫຼັບສັບຊ້ອນ ຂອງການຄ້າມະນຸດ ແລະ ພາດໂອກາດ ໃນການກໍານົດຕົວ ຜູ້ຖືກເຄາະຮ້າຍ ແລະ ສືບສວນ ຜູ້ທີ່ຄ້າມະນຸດ.

ຜູ້ສືບສວນ ຄວນມີຄວາມອ່ອນໄຫວ ຕໍ່ກັບກົນອຸບາຍບີບບັງຄັບ ແລະ ວິທີການເຮັດວຽກ ຂອງພວກຄ້າມະນຸດ, ແລະ ແຮງຜັກດັນ ຈາກ ຄວາມເຈັບຊໍ້າ ແລະ ຄວາມອັບອາຍຂາຍໜ້າ ທີ່ອາດສົ່ງຜົນ ເຮັດໃຫ້ຜູ້ຖືກເຄາະຮ້າຍ ບໍ່ບອກຄວາມຈິງ ກ່ຽວກັບສິ່ງທີ່ໄດ້ເກີດຂຶ້ນກັບເຂົາເຈົ້າ ໃນໂອກາດທໍາອິດທີ່ມີ. ໂດຍສະເພາະ, ຄວາມບໍ່ກ່ຽວຂ້ອງກັນ ຂອງການຍິນຍອມ ຂອງຜູ້ຖືກເຄາະຮ້າຍ ເມື່ອຜູ້ຄ້າມະນຸດນໍາໃຊ້ 'ວິທີການ',[148] ແລະ ມີການນໍາໃຊ້ວິທີການ ທີ່ລະອຽດອ່ອນ ເຊັ່ນ ການລ່ວງລະເມີດຕໍາແໜ່ງ ຄວາມອ່ອນແອ, ອາດພິສູດສິ່ງທ້າທາຍ ສໍາລັບຜູ້ສືບສວນ ໃນການເຂົ້າໃຈ ແລະ ຕໍ່ຫຼັກຖານ ໃນຊ່ວງໄລຍະ ການສືບສວນ ຂອງເຂົາເຈົ້າ. ຍ້ອນແນວນັ້ນ, ຜູ້ບັງຄັບໃຊ້ກົດໝາຍ ຄວນໄດ້ຮັບການ

---

144 ການຕໍ່ສູ້ ຂອງໂລກ ສໍາລັບການເຂົ້າອອກເມືອງທີ່ປອດໄພ, ເປັນລະບຽບຮຽບຮ້ອຍ ແລະ ບໍ່ຜິດປົກກະຕິ, ຈຸດປະສົງ 10 ວັກ 26(e)

145 *ຕົວຢ່າງ: ການລະບຸຕົວຜູ້ຖືກເຄາະຮ້າຍ ຂອງການຄ້າມະນຸດ: ບົດແນະນໍາ ສໍາລັບເຈົ້າໜ້າທີ່ປະຕິບັດກົດໝາຍ (ສະຖາບັນ NEXUS ແລະ ຫ້ອງການສະຫນັບສະຫນູນປະຈໍາພາກພື້ນ ສໍາລັບຂະບວນການ Bali* (ສະຖາບັນ NEXUS / ຫ້ອງການສະຫນັບສະຫນູນປະຈໍາພາກພື້ນ ສໍາລັບຂະບວນການ Bali, 2021). ເອກະສານສະບັບນີ້ ຄົ້ນຄ້ວາສຶກສາ ໃຫ້ແກ່ເຈົ້າໜ້າທີ່ປະຕິບັດກົດໝາຍ ຢູ່ໃນພາກພື້ນອາຊຽນ, ຊຶ່ງຍົກໃຫ້ເຫັນບັນດາສິ່ງທ້າທາຍ ແລະ ອຸປະສັກ ໃນການລະບຸຕົວ ຜູ້ຖືກເຄາະຮ້າຍ ຢ່າງມີປະສິດທິພາບ.

146 ໃຫ້ເບິ່ງ: *ການຈັດຕັ້ງປະຕິບັດ ຫຼັກການການບໍ່ລົງໂທດ: ບົດລາຍງານ ຂອງຜູ້ລາຍງານພິເສດ ກ່ຽວກັບການຄ້າມະນຸດ, ໂດຍສະເພາະແມ່ນ ແມ່ຍິງ ແລະ ເດັກນ້ອຍ, ໂດຍ ທ່ານ Siobhán Mullaly,* ເອກະສານ ຂອງ UN. A/HRC/47/34 (17 ພຶດສະພາ 2021), ວັກທີ 54(c). ນອກຈາກນັ້ນ, ໃຫ້ເບິ່ງຕື່ມ ເອກະສານຊ້ອນທ້າຍ 1 ສໍາລັບບັນຊີລາຍຊື່ລວມ ຂອງການກະທໍາຜິດ ທີ່ຜູ້ຖືກເຄາະຮ້າຍ ຂອງການຄ້າມະນຸດອາດຈະກະທໍາ.

147 ການສົນທະນາ ຂອງ ຄະນະກໍາມະການຄວາມຍຸຕິທໍາ ສໍາລັບ ຜູ້ລອດຊີວິດ, ທ່ານ Dressember ແລະ ທ່ານ Karana Rising, 7 ໂມງແລງ ET, ວັນທີ 30 ເມສາ 2021. ປຶ້ມບັນທຶກຂອງຜູ້ຂຽນ.

148 ການບັງຄັບ ແລະ ຮູບແບບອື່ນໆ ຂອງການບີບບັງຄັບ, ການລັກພາຕົວ, ການສໍ້ໂກງ, ການຫຼອກລວງ, ການໃຊ້ອໍານາດ ຫຼື ຕໍາແໜ່ງ ໃນທາງທີ່ຜິດ ທີ່ຈຸດອ່ອນ, ແລະ ການໃຫ້ ຫຼື ການຮັບເງິນ ຫຼື ຜົນປະໂຫຍດ ເພື່ອບັນລຸການຍິນຍອມຂອງບຸກຄົນ ທີ່ມີການຄວບຄຸມຜູ້ອື່ນ ແມ່ນເປັນ 'ວິທີການ' ທີ່ໄດ້ລະບຸໄວ້ ໃນມາດຕາ 3(a) ຂອງ ອະນຸສັນຍາ ວ່າດ້ວຍການຄ້າມະນຸດ ແລະມາດຕາ 2(a) ຂອງ ACTIP

ສະໜັບສະໜູນ ເພື່ອເຂົ້າໃຈຄໍານິຍາມ ຂອງການຄ້າມະນຸດ ຢູ່ໃນກົດໝາຍສາກົນ, ພາກພື້ນ ແລະ ພາຍໃນປະເທດ ແລະ ສິ່ງທ້າທາຍ ທີ່ກ່ຽວຂ້ອງກັບຫຼັກຖານ ໄດ້ມີສ່ວນຮ່ວມ ໃນການພິສູດ ອົງປະກອບພື້ນຖານ ຂອງການຄ້າມະນຸດ ສໍາລັບທັງຜູ້ຖືກເຄາະຮ້າຍ ທີ່ເປັນຜູ້ໃຫຍ່ ແລະ ທີ່ເປັນເດັກນ້ອຍ.

## ຂໍ້ສະເໜີແນະນໍາ 3: ທ້າທາຍຕໍ່ກັບຄວາມເຂົ້າໃຈຜິດ ແລະ ສົມມຸດຖານກ່ຽວກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ກ່ຽວກັບ ອຸດົມຄະຕິ ຫຼື ເໝາະສົມ

ຈຸດໜຶ່ງທີ່ສໍາຄັນແມ່ນວ່າ, ການສົມມຸດຖານ ກ່ຽວກັບວ່າ ໃຜເປັນຄົນ "ດີ" ແລະ ໃຜເປັນຄົນ "ບໍ່ດີ", ແລະ ໃຜເປັນຜູ້ຖືກເຄາະຮ້າຍ "ຕົວຈິງ" ຫຼື "ບໍ່ຮູ້ຈັກຫຍັງເລີຍ" ແລະ ໃຜບໍ່ແມ່ນ, ເຮັດໃຫ້ຄວາມອາດສາມາດ ຂອງເຈົ້າໜ້າທີ່ບັງຄັບໃຊ້ກົດ ໝາຍ ໃນການລະບຸຕົວຜູ້ຖືກເຄາະຮ້າຍ ແລະ ສືບສວນ ຜູ້ຄ້າມະນຸດ ມີປະສິດທິພາບຫຼຸດລົງ. ຍ້ອນແນວນັ້ນ, ຜູ້ຖືກເຄາະຮ້າຍ ຈຶ່ງມີຄວາມສ່ຽງ ທີ່ຈະຖືກດໍາເນີນຄະດີ ໃນຂະນະທີ່ ຜູ້ຄ້າມະນຸດ ແມ່ນຈະຖືກປ່ອຍໃຫ້ຫລົບໜີ ອອກຈາກຂະບວນການຍຸຕິທໍາ. ການເຮັດໃຫ້ ຜູ້ຖືກເຄາະຮ້າຍ ມີມົນທິນ ແລະ ມີຄວາມລໍາອຽງ ຕໍ່ກັບ ຜູ້ທີ່ ບໍ່ 'ສົມຄວນ' ທີ່ຈະໄດ້ຮັບການກະທໍາດັ່ງກ່າວ ເມື່ອທຽບໃສ່ກັບຜູ້ອື່ນ, ອາດຈະເຮັດໃຫ້ ຜູ້ຖືກເຄາະຮ້າຍບາງຄົນໄດ້ຮັບຜົນປະໂຫຍດ ຈາກຫຼັກການການບໍ່ລົງໂທດ ຕໍ່ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ (ເຊັ່ນ: ຜູ້ທີ່ຖືກບັງຄັບ ຫຼື ຫຼອກລວງ) ໃນຂະນະທີ່ ຜູ້ຖືກເຄາະຮ້າຍຄົນອື່ນ ອາດບໍ່ໄດ້ຮັບຜົນປະໂຫຍດດັ່ງກ່າວ, ຍົກຕົວຢ່າງເຊັ່ນ, ຜູ້ທີ່ໄດ້ເດີນທາງເຂົ້າອອກປະເທດ ແບບໄປໆມາໆ ເພື່ອໄປເຮັດວຽກສະເພາະໃດໜຶ່ງ ແລະ ສຸດທ້າຍກໍຖືກຂູດຮີດ.

ອາດຈະມີ ບັນຫາບົດບາດຍິງຊາຍ ຢູ່ໃນຄວາມເຂົ້າໃຈຜິດ ຂອງ ເຈົ້າໜ້າທີ່ປະຕິບັດຄວາມຍຸຕິທໍາທາງອາຍາ ທີ່ໃຫ້ຂໍ້ສະຫຼຸບ ດ້ອຍຄວາມອາດສາມາດ ຂອງຕົນ ໃນການລະບຸຕົວ ຜູ້ຖືກເຄາະຮ້າຍ ແລະ ໃນການກາສືບສວນ ຜູ້ຄ້າມະນຸດຢ່າງມີປະສິດທິພາບ. ຄວາມລໍາອຽງ ທາງດ້ານເພດຍິງຊາຍ ສາມາດເຫັນໄດ້ ໃນລັກສະນະທີ່ແຕກຕ່າງກັນ, ຊຶ່ງລວມມີ ການສົມມຸດຖານວ່າ ແມ່ຍິງທັງໝົດ ທີ່ຢູ່ໃນອຸດສາຫະກໍາບໍລິການທາງເພດ ແມ່ນຕົກເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ, ໃນຂະນະທີ່ ຜູ້ຊາຍທີ່ຢູ່ໃນອຸດສາຫະກໍາບໍລິການທາງເພດ ບໍ່ແມ່ນຜູ້ຖືກເຄາະຮ້າຍ. ຄວາມບໍ່ເທົ່າທຽມກັນນີ້ ສາມາດເຮັດໃຫ້ພວກຄ້າມະນຸດ ໄດ້ປຽບ. ນອກຈາກນັ້ນ, ຂັ້ນຕອນການລະບຸຕົວ ຄວນເປັນຂັ້ນຕອນ ທີ່ຄໍານຶງເຖິງຄວາມພິການ ແລະ ການມີສ່ວນຮ່ວມ, ດັ່ງນັ້ນ, ຄວາມພິການຂອງຜູ້ຖືກເຄາະຮ້າຍ - ບໍ່ວ່າຈະເປັນທາງດ້ານຈິດໃຈ, ສະຕິປັນຍາ ຫຼື ຮ່າງກາຍ - ຈະບໍ່ເຮັດໃຫ້ມີຄວາມຫຍຸ້ງຍາກ ໃນການລະບຸຕົວຕົນ ຂອງຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ, ແລະ ການນໍາໃຊ້ຫຼັກ ການການບໍ່ລົງໂທດ ຕໍ່ ການກະທໍາທີ່ຜິດກົດໝາຍ ທີ່ຄົນພິການອາດຈະໄດ້ຍ້ອນເປັນຜົນມາຈາກການຖືກຄ້າມະນຸດ.

ເຈົ້າໜ້າທີ່ປະຕິບັດຄວາມຍຸຕິທໍາທາງອາຍາ ຄວນຈະໄດ້ຮັບການສ້າງຄວາມອາດສາມາດ ໃນການເຂົ້າໃຈວ່າ ຫຼັກການການບໍ່ລົງໂທດ ມີຜົນນໍາໃຊ້ກັບ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດທັງໝົດ ບົນພື້ນຖານການບໍ່ຈໍາແນກ, ບໍ່ວ່າຈະເປັນ ເຊື້ອຊາດ, ສີຜິວ, ເພດ, ບົດບາດຍິງຊາຍ, ຕົວຕົນທາງເພດ, ພາສາ, ຄວາມພິການ, ສາດສະໜາ, ແນວຄວາມຄິດທາງດ້ານການເມືອງ ຫຼື ແນວຄວາມຄິດອື່ນໆ, ຕົ້ນກໍາເນີດຂອງຊາດ ຫຼື ສັງຄົມ, ຊັບສິນ, ການເກີດ ຫຼື ສະຖານະພາບອື່ນໆ[149] ໃນກໍລະນີ ຂອງຜູ້ຖືກເຄາະຮ້າຍ ທີ່ມີຄວາມພິການ, ບໍ່ວ່າຈະເປັນທາງດ້ານຈິດໃຈ, ສະຕິປັນຍາ ຫຼື ທາງດ້ານຮ່າງກາຍ, ຮຽກຮ້ອງໃຫ້ມີການບໍ່ຈໍາແນກ ຊຶ່ງວ່າ ທີ່ພັກອາໄສທີ່ສົມເຫດສົມຜົນ ແມ່ນຈະຕ້ອງມີ ເພື່ອຮັບປະກັນວ່າ ຄົນພິການ ສາມາດເຂົ້າເຖິງ ຂັ້ນຕອນການກໍານົດຕົວ ແລະ ປົກປ້ອງ ບົນພື້ນຖານທີ່ເທົ່າທຽມກັນກັບຜູ້ອື່ນ.[150] ໃນຂະນະດຽວກັນ, ການຝຶກອົບຮົມ ແລະ ມາດຕະການສ້າງຄວາມອາດສາມາດອື່ນໆ ຄວນແກ້ໄຂ ວິທີການ ທີ່ຄົນໃນກຸ່ມອາຍຸ, ເພດ, ບົດບາດຍິງຊາຍ ແລະ ຄຸນລັກສະນະອື່ນໆ ທີ່ແຕກຕ່າງກັນ ສາມາດ ໄດ້ຮັບຜົນສະເພາະ ຈາກ ການຕອບໂຕ້ ດ້ານການຄ້າມະນຸດ ແລະ ດ້ານການຕ້ານການຄ້າມະນຸດ. ເຈົ້າໜ້າທີ່ປະຕິບັດຄວາມຍຸຕິທໍາທາງອາຍາ ຄວນໄດ້ຮັບການຊຸກຍູ້ ໃນການສ້າງສິ່ງທ້າທາຍ ຕໍ່ ຂໍ້ສົມມຸດຖານ ທີ່ເຂົາເຈົ້າອາດຈະມີ ກ່ຽວກັບວ່າ ໃຜເປັນຜູ້ຖືກເຄາະຮ້າຍ ທີ່ສົມຄວນໄດ້ຮັບການປົກປ້ອງ. ການຝຶກອົບຮົມ ກ່ຽວກັບ ສິດຂອງຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ຄວນປະກອບມີ ອົງປະກອບກ່ຽວກັບ ບົດບາດຍິງຊາຍ ແລະ ອົງປະກອບອື່ນໆ ທີ່ພົວພັນກັບການຄ້າມະນຸດ ແລະ ຄວາມລໍາອຽງ ທີ່ບໍ່ຮູ້ຈັກ ທີ່ອາດຈະມີສ່ວນກ່ຽວຂ້ອງ ຢູ່ໃນການຕອບໂຕ້ຄວາມຍຸຕິທໍາທາງອາຍາ. ນອກຈາກນັ້ນ, ມັນຍັງ

149 ໃຫ້ເບິ່ງມາດຕາ 26 ຂອງ *ສົນທິສັນຍາສາກົນ ວ່າດ້ວຍ ສິດທິພົນລະເຮືອນ ແລະ ທາງດ້ານການເມືອງ, ແລະ ມາດຕາ 2 ຂອງ ຖະແຫຼງການ ວ່າດ້ວຍສິດທິມະນຸດອາຊຽນ. ໃຫ້ເບິ່ງຕື່ມ ສົນທິສັນຍາ ວ່າດ້ວຍ ການລົບລ້າງ ການຈໍາແນກ ຕໍ່ແມ່ຍິງ ແລະ ສົນທິສັນຍາ ວ່າດ້ວຍ ສິດທິ ຂອງຄົນພິການ*

150 ສົນທິສັນຍາ ວ່າດ້ວຍ ສິດທິ ຂອງຄົນພິການ, ມາດຕາ 2

ຄວນຈະເພີ່ມເສີມຕື່ມອີກວ່າ ຫຼັກການການບໍ່ລົງໂທດ ມີຜົນນຳໃຊ້ໄດ້ກັບ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດໝົດທຸກຄົນ, ເມື່ອມີສາຍພົວພັນກັນ ລະຫວ່າງ ການກະທຳຜິດ ກັບ ການຄ້າມະນຸດ.

## ຂໍ້ສະເໜີແນະນຳ 4: ຮັບປະກັນວ່າຜູ້ກະທຳຜິດ ທີ່ອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄດ້ຖືກສົ່ງຕໍ່ເພື່ອກັ່ນກອງຢ່າງມີປະສິດທິພາບ ແລະ ປະສິດທິຜົນ

ເຈົ້າໜ້າທີ່ ຄວນນຳໃຊ້ ຫຼັກການການບໍ່ລົງໂທດ ທັນທີ ທີ່ເຂົາເຈົ້າມີພື້ນຖານທີ່ສົມເຫດສົມຜົນ ທີ່ຈະເຊື່ອວ່າ ບຸກຄົນໜຶ່ງ ເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ, ບໍ່ວ່າຜູ້ຖືກເຄາະຮ້າຍ ຈະຖືກກຳນົດຕົວ ຢ່າງເປັນທາງການ ຫຼື ມີການຕັ້ງຂໍ້ຫາ ຕໍ່ ຜູ້ຄ້າມະນຸດ.[151] ເມື່ອສະພາບການເຮັດໃຫ້ເກີດຄວາມສົງໃສ ທີ່ໜ້າເຊື່ອຖືໄດ້ວ່າ ບຸກຄົນທີ່ຖືກສົງໃສວ່າໄດ້ກະທຳຜິດທາງອາຍາ ອາດຖືກຄ້າມະນຸດ, ຜູ້ກ່ຽວ ຄວນຖືກປະເມີນໂດຍໄວ ໂດຍ ບຸກຄົນທີ່ໄດ້ຮັບການຝຶກອົບຮົມ ແລະ ມີຄຸນສົມບັດ, ເພື່ອກຳນົດວ່າ ບຸກຄົນດັ່ງກ່າວ ຖືກຄ້າມະນຸດ ຕາມທີ່ໄດ້ກຳນົດໄວ້ ຢູ່ໃນເຄື່ອງມືສາກົນ, ພາກພື້ນແລະ ພາຍໃນປະເທດ ຫຼື ບໍ່. ຫຼັກການການບໍ່ລົງໂທດ ບໍ່ຄວນຖືກນຳໃຊ້ໃນທາງທີ່ຜິດ ໂດຍຜູ້ບັງຄັບໃຊ້ກົດໝາຍ, ເພື່ອບັນລຸການມີສ່ວນຮ່ວມ ຂອງຜູ້ຖືກເຄາະຮ້າຍ ຢູ່ໃນຂະບວນການຍຸຕິທຳທາງອາຍາ; ຜົນການນຳໃຊ້ແບບຮີບດ່ວນ ຂອງມັນ ບໍ່ສາມາດມີເງື່ອນໄຂຂຶ້ນກັບ ການຮ່ວມມື ຂອງຜູ້ຖືກເຄາະຮ້າຍ.

ໃນກໍລະນີ ຜູ້ກະທຳຜິດເປັນເດັກນ້ອຍ ທີ່ອາດຕົກເປັນເຫຍື່ອ ຂອງການຄ້າມະນຸດ, ເຈົ້າໜ້າທີ່ໜ້າດ່ານ ຄວນມີສ່ວນຮ່ວມ ແລະ ສົມທົບກັບເຈົ້າໜ້າທີ່ປົກປ້ອງເດັກນ້ອຍ ຕາມໂອກາດທີ່ເປັນໄປໄດ້ໄວທີ່ສຸດ. ການສົມມຸດຖານວ່າເປັນເດັກນ້ອຍ ຄວນນຳໃຊ້ໃນການປະຕິບັດກັບຜູ້ທີ່ອາດຈະເປັນເດັກນ້ອຍ ໃນກໍລະນີທີ່ບໍ່ມີຫຼັກຖານຢັ້ງຢືນອາຍຸ.

ຄວນມີຂັ້ນຕອນ ເພື່ອຮັບປະກັນວ່າ ເຈົ້າໜ້າທີ່ຕຳຫຼວດ, ເຈົ້າໜ້າທີ່ກວດຄົນເຂົ້າອອກເມືອງ ແລະ ເຈົ້າໜ້າທີ່ແຮງງານຮັບຮູ້ເຖິງ ກົນໄກການສົ່ງຕໍ່ແຫ່ງຊາດ ທີ່ມີຜົນນຳໃຊ້. ດັ່ງນັ້ນ, ເຂົາເຈົ້າຈຶ່ງສາມາດສົ່ງຕໍ່ ຜູ້ທີ່ອາດໄດ້ຮັບເຄາະຮ້າຍ ໄປສູ່ການໄດ້ຮັບຄວາມຊ່ວຍເຫຼືອ. ເມື່ອກົນໄກການສົ່ງຕໍ່ແຫ່ງຊາດ ບໍ່ໄດ້ຖືກນຳໃຊ້ ຢ່າງມີປະສິດທິພາບ ແລະ ມີຜົນນຳໃຊ້ເພື່ອປົກປ້ອງຜູ້ຖືກເຄາະຮ້າຍ ຈາກການລົງໂທດ, ຈຳເປັນຈະຕ້ອງກຳນົດ ແລະ ຍົກໃຫ້ເຫັນອຸປະສັກ, ບໍ່ວ່າຈະດ້ວຍການເຜີຍແຜ່ຂໍ້ມູນ, ການຝຶກອົບຮົມທັກສະ, ຫຼື ນຳໃຊ້ມາດຕະການອື່ນໆ ເພື່ອປັບປຸງ ກົນໄກການສົ່ງຕໍ່.

## ຂໍ້ສະເໜີແນະນຳ 5: ການສືບສວນ-ສອບສວນຢ່າງຕັ້ງໜ້າ ກ່ຽວກັບຄວາມເຊື່ອມໂຍງລະຫວ່າງ ການກະທຳຜິດຂອງຜູ້ທີ່ອາດຈະເປັນຜູ້ກະທຳຜິດ-ທີ່ເປັນຜູ້ຖືກເຄາະຮ້າຍ ແລະ ພຶດຕິກຳຂອງຜູ້ທີ່ອາດຈະເປັນຜູ້ຄ້າມະນຸດ.

ພວກຄ້າມະນຸດ ອາດຈະໃຊ້ ຜູ້ຖືກເຄາະຮ້າຍ ເປັນຕົວແທນໃນການກໍ່ອາຊະຍາກຳ, ຊຶ່ງເປັນສ່ວນໜຶ່ງ ຂອງ ວິທີການປະຕິບັດງານ ຂອງເຂົາເຈົ້າ ເພື່ອຫັນ ຄວາມສົນໃຈດ້ານຄວາມຍຸຕິທຳທາງອາຍາ ອອກໄປຈາກຕົນເອງ ແລະ ໄປຫາ ຜູ້ຖືກເຄາະຮ້າຍ, ດັ່ງນັ້ນ, ຜູ້ທີ່ຕົກຢູ່ໃນຄວາມສ່ຽງຈະຖືກຈັບກຸມ ແມ່ນ ຜູ້ຖືກເຄາະຮ້າຍ.[152] ນີ້ແມ່ນຍຸດທະສາດທີ່ມີຄວາມລະມັດລະວັງ ຂອງພວກຄ້າມະນຸດ; ດ້ວຍການປ່ຽນຜູ້ຖືກເຄາະຮ້າຍ ໃຫ້ກາຍເປັນອາດຊະຍາກອນທີ່ ຢ້ານກົວການດຳເນີນຄະດີ ແລະ ການລົງໂທດ, ດັ່ງນັ້ນ, ຈຶ່ງເບິ່ງເໝືອນກັບວ່າ ເຂົາເຈົ້າ ຈະບໍ່ລາຍງານ ຜູ້ຄ້າມະນຸດ ຂອງຕົນ ຕໍ່ຜູ້ບັງຄັບໃຊ້ກົດໝາຍ.[153] ພວກຄ້າມະນຸດ ອາດຈະເລັ່ງເປົ້າໝາຍໃສ່ ຜູ້ທີ່ມີບັນຫາກັບກົດໝາຍ ຫຼື ມີການພົວພັນ ທີ່ສະຫຼັບສັບຊ້ອນກັບ ເຈົ້າໜ້າທີ່, ຊຶ່ງເຮັດໃຫ້ເຂົາເຈົ້າງ່າຍ ຕໍ່ ການໝູນໃຊ້. ພວກຄ້າມະນຸດ ອາດຈະບອກ ຜູ້ຖືກເຄາະຮ້າຍວ່າ ເຈົ້າໜ້າທີ່ ຈະບໍ່ມີວັນເຊື່ອເຂົາເຈົ້າເດັດຂາດ, ມີແຕ່ຈະຖືວ່າເຂົາເຈົ້າເປັນອາດຊະຍາກອນ ສຳລັບສິ່ງທີ່ເຂົາເຈົ້າໄດ້ກະທຳຜິດ. ເມື່ອເຈົ້າໜ້າທີ່ ປະຕິບັດກັບ ຜູ້ຖືກເຄາະຮ້າຍເໝືອນກັບ ຜູ້ທີ່ອາດຈະກະທຳຜິດ, ສະແດງວ່າ ສິ່ງທີ່ຜູ້ຄ້າມະນຸດບອກກັບຜູ້ຖືກເຄາະຮ້າຍ ແມ່ນຖືກຕ້ອງ ແລະ ຈະເຮັດໃຫ້ຄວາມໄວ້ເນື້ອເຊື່ອໃຈ ຂອງຜູ້ຖືກເຄາະຮ້າຍ ທີ່ມີຕໍ່ເຈົ້າໜ້າທີ່ ຖືກທຳລາຍລົງ.

---

151 ໃຫ້ເບິ່ງ: *ການຈັດຕັ້ງປະຕິບັດ ຫຼັກການການບໍ່ລົງໂທດ: ບົດລາຍງານ ຂອງຜູ້ລາຍງານພິເສດ ກ່ຽວກັບ ການຄ້າມະນຸດ, ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ, ທ່ານ Siobhán Mullaly*, ເອກະສານ ຂອງ UN. A/HRC/47/34 (17 ພຶດສະພາ 2021), ວັກທີ 58

152 *ບົດລາຍງານ ຂອງຜູ້ລາຍງານພິເສດ ກ່ຽວກັບ ການຄ້າມະນຸດ, ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ, ທ່ານ Maria Grazia Giammarinaro*, 6 ເມສາ 2020, ເອກະສານ ຂອງ UN A/HRC/44/45, ວັກທີ 29.

153 *ບົດລາຍງານ ການຄ້າມະນຸດ ໃນທົ່ວໂລກ ປີ 2020* (UNODC, 2021) ໜ້າ.51

ຜູ້ບັງຄັບໃຊ້ກົດໝາຍ ຕ້ອງເຂົ້າໃຈເຖິງ ແຮງຜັກດັນເຫຼົ່ານີ້ ແລະ ສືບສວນຝ່າຍຕ່າງໆ ຢ່າງຕັ້ງໜ້າ ຊຶ່ງອາດຈະເປັນຜູ້ທີ່ມີສ່ວນຮ່ວມ ໃນການຄວບຄຸມ ຫຼື ຄຸ້ມຄອງ ຜູ້ຖືກເຄາະຮ້າຍ ຫຼື ຊັບສິນ ຫຼື ການຈັດຕັ້ງ ບ່ອນທີ່ໄດ້ພົບເຫັນ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ, ເພື່ອກຳນົດຕົວວ່າ ເຂົາເຈົ້າ ແມ່ນເປັນຜູ້ຄ້າມະນຸດ ຫຼື ຜູ້ຖືກເຄາະຮ້າຍ.[154] ການປະຕິບັດງານຕົວຈິງ ຂອງຕຳຫຼວດ ຄວນໄດ້ຮັບການທົບທວນຄືນ ເພື່ອພິຈາລະນາ ວິທີການຊຸກຍູ້ ແລະ ສ້າງແຮງຈູງໃຈ ໃຫ້ເຈົ້າໜ້າທີ່ສືບສວນ ນຳໃຊ້ເວລາ, ທັກສະ ແລະ ຄວາມພະຍາຍາມ ໃນການສືບສວນ ຄະດີຕ່າງໆ ທີ່ຮຸນແຮງ ແລະ ສັບສົນ, ແທນທີ່ຈະສ້າງຄວາມງ່າຍດາຍ ໃນການຈັບກຸມ ຜູ້ກະທຳຜິດລະດັບຕ່ຳ ຊຶ່ງເປັນຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ. ກ່ຽວກັບຈຸດນີ້, ບັນດານັກສືບສວນ ຄວນມີຄວາມຮູ້ສຶກໄວ ຕໍ່ກັບ ຂໍ້ຜູກມັດທາງບອກຂອງລັດ ໃນການສືບສວນ ການຄ້າມະນຸດທີ່ອາດຈະເປັນໄປໄດ້.

## 3.2 ການຈັບຕົວ ແລະ ການຕັ້ງຂໍ້ຫາ

### ຂໍ້ສະເໜີແນະນຳ 6: ຮັບປະກັນວ່າເຈົ້າໜ້າທີ່ດ່ານໜ້າ ມີຄວາມເຂົ້າໃຈຕໍ່ກັບຜົນກະທົບຈາກການຈັບຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ການຕອບໂຕ້ຍຸຕິທຳທາງອາຍາຕໍ່ກັບການຄ້າມະນຸດ

ເຄີຍມີຕົວຢ່າງ ຂອງ ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ແລະ ເຈົ້າໜ້າທີ່ຜູ້ປະຕິບັດຄວາມຍຸຕິທຳທາງອາຍາອື່ນໆ ທີ່ແນະນຳວ່າ ການຈັບກຸມຜູ້ຖືກເຄາະຮ້າຍ ແມ່ນເປັນຜົນປະໂຫຍດຂອງເຂົາເຈົ້າ, ເພື່ອໃຫ້ເຂົາເຈົ້າໜີອອກຈາກພວກຄ້າມະນຸດ ແລະ ໄດ້ຮັບການປົກປ້ອງ. ເຖິງຢ່າງໃດກໍ່ຕາມ, ການຈັບກຸມຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ແມ່ນກົງກັນຂ້າມກັບ ວິທີການທີ່ເອົາຜູ້ຖືກເຄາະຮ້າຍເປັນຈຸດໃຈກາງ ແລະ ບໍ່ສາມາດໃຫ້ເຫດຜົນ ດ້ວຍການອ້າງວ່າ ເປັນການປົກປ້ອງ ແລະ ຊ່ວຍເຫຼືອເຂົາເຈົ້າ.[155]

ເຈົ້າໜ້າທີ່ໜ້າດ່ານ ຕ້ອງມີຄວາມຮູ້ສຶກໄວ ຕໍ່ກັບຜົນກະທົບ ຂອງການຈັບກຸມ ຕໍ່ຜູ້ຖືກຈັບ, ລວມທັງ ຜູ້ຖືກຄ້າມະນຸດ, ລວມທັງ ການຕົກເປັນຜູ້ຖືກເຄາະຮ້າຍຄືນອີກຄັ້ງ ຂອງເຂົາເຈົ້າ ຢູ່ໃນກຳມືຂອງລັດ ແລະ ຄວາມອັບອາຍ ຂອງການຖືກຈັບ, ຖືກຖ່າຍຮູບ, ຖືກຈ້ຳລາຍນີ້ວມື, ຖືກໃສ່ກັບມື ແລະ ແມະກະທັ້ງບາງຄັ້ງ ກໍ່ປະເຊີນກັບ ກວດສອບທາງການແພດ ໂດຍບໍ່ມີຄວາມຍິນຍອມ ທີ່ມີການແຈ້ງຂໍ້ມູນໃຫ້ຮູ້. ຂອງການຍິນຍອມເຫັນດີ. ເຂົາເຈົ້າ ຍັງຈະຕ້ອງເຂົ້າໃຈວ່າ ການຈັບກຸມ ເຮັດໃຫ້ຜູ້ຖືກເຄາະຮ້າຍມີຄວາມອັບອາຍຂາຍໜ້າ ແລະ ຈຳກັດການຟື້ນຕົວ ຂອງເຂົາເຈົ້າ ແນວໃດ.

ນອກຈາກນີ້, ເຈົ້າໜ້າທີ່ແນວໜ້າ ຕ້ອງໄດ້ຮັບຮູ້ວ່າ ການຈັບກຸມຜູ້ຖືກເຄາະຮ້າຍ ມີຜົນຮ້າຍ ຕໍ່ ການຕອບໂຕ້ຄວາມຍຸຕິທຳທາງອາຍາ ຕໍ່ການຄ້າມະນຸດ ແນວໃດ. ຜູ້ຖືກເຄາະຮ້າຍ ມັກຈະເປັນຫຼັກຖານຕົ້ນຕໍ ຫຼື ພຽງຢ່າງດຽວເທົ່ານັ້ນ ຢູ່ໃນຄະດີການຄ້າມະນຸດ; ເມື່ອຜູ້ຖືກເຄາະຮ້າຍ ສູນເສຍຄວາມໄວ້ວາງໃຈ ຕໍ່ ເຈົ້າໜ້າທີ່, ເບິ່ງເໝືອນກັບວ່າ ເຂົາເຈົ້າຈະບໍ່ໃຫ້ການຮ່ວມມືກັບເຈົ້າໜ້າທີ່ ຢູ່ໃນຂະບວນຄວາມຍຸຕິທຳທາງອາຍາ ຕ້ານ ພວກຄ້າມະນຸດ.

### ຂໍ້ສະເໜີແນະນຳ 7: ຮັບປະກັນວ່າເຈົ້າໜ້າທີ່ດ່ານໜ້າ ມີຄວາມເຂົ້າໃຈຕໍ່ກັບດຸນພິນິດຂອງເຂົາເຈົ້າ ແລະ ວິທີການທີ່ຈະນຳໃຊ້ດຸນພິນິດດັ່ງກ່າວ

ຢູ່ໃນບາງປະເທດ, ເຈົ້າໜ້າທີ່ສືບສວນ ມີດູນພິນິດ ກ່ຽວກັບວ່າ ເຂົາເຈົ້າ ຈະດຳເນີນການຕັ້ງຂໍ້ຫາ ແລະ/ຫຼື ແນະນຳການຕັ້ງຂໍ້ຫາ. ດູນພິນິດ ທີ່ຈະບໍ່ຈັບກຸມ ແລະ ບໍ່ຕັ້ງຂໍ້ຫານີ້ ອາດຈະມີຢູ່ໃນກົດໝາຍ ແລະ ບັນດານະໂຍບາຍ ທີ່ອະທິບາຍເຖິງ ດູນພິນິດ ແລະ ການພິຈາລະນາ ທີ່ອາດຈະມີຂໍ້ມູນດັ່ງກ່າວ, ຊຶ່ງລວມທັງວ່າ ການຕັ້ງຂໍ້ຫາແກ່ບຸກຄົນໜຶ່ງນັ້ນ ແມ່ນເປັນຜົນປະໂຫຍດ ຂອງສາທາລະນະຊົນ ຫຼືບໍ່. ຢູ່ໃນປະເທດອື່ນ, ເຈົ້າໜ້າທີ່ສືບສວນ ອາດຈະມີ ດູນພິນິດ ທີ່ຈຳກັດ ຫຼື ບໍ່ມີເລີຍ, ແຕ່ຈະມີພັນທະ ໃນການຈັບກຸມ, ຕັ້ງຂໍ້ຫາ ແລະ ກັກຂັງບຸກຄົນ ສຳລັບ ອາດຊະຍາກຳ

---

154 ທ່ານ Marcelo Colombo, ຫົວໜ້າໄອຍະການ, ຫ້ອງການສະເພາະການສືບສວນ ຄະດີລັກພາຕົວ ແລະ ການຄ້າມະນຸດ (PROTEX), ປະເທດອາກຊັງຕິນ, ຊຶ່ງເວົ້າເຖິງ ຫຼັກການການບໍ່ລົງໂທດ ຜູ້ຖືກເຄາະຮ້າຍ ຂອງການຄ້າມະນຸດ, ໃນງານທີ່ຈັດຂຶ້ນ ຄູ່ກັບກັບ ວາລະທີ 47 ຂອງ ສະພາສິດທິມະນຸດ ໃນວັນທີ 30 ມິຖຸນາ 2021, 13:00 14:30 CET. ບັນທຶກ ຂອງຜູ້ຂຽນ ໃນຟາຍເອກະສານ.

155 *ການດຳເນີນຄະດີໂດຍມີຄ່າໃຊ້ຈ່າຍແມ່ນບໍ? ຜົນກະທົບຂອງການຢັ້ງຢືນທີ່ສຳຄັນຂອງພະຍານໃນຄະດີຄ້າມະນຸດຂອງລັດຖະບານກາງ* (ສູນບໍລິການກົດໝາຍດ້ານການຄ້າມະນຸດ, ປີ 2020) 23

ທີ່ໄດ້ສົງໃສ. ດັ່ງນັ້ນ, ການຕັດສິນໃຈ ກ່ຽວກັບວ່າ ຈະດຳເນີນຄະດີ ຫຼືບໍ່ນັ້ນ ແມ່ນຖືກສົ່ງຜ່ານໃຫ້ໄອຍະການ ຫຼື ສານ.

ຢູ່ໃນໝົດທຸກປະເທດ, ມັນເປັນສິ່ງສຳຄັນ ແລະ ຈຳເປັນ ທີ່ເຈົ້າໜ້າທີ່ສືບສວນ ຈະຕ້ອງເຂົ້າໃຈວ່າ ເຂົາເຈົ້າມີ ແລະ ບໍ່ມີ ດູນພິນິດ ແບບໃດ ໃນການຈັບກຸມ ຫຼື ບໍ່ຈັບກຸມ ບຸກຄົນ ແລະ ເຂົາເຈົ້າຕັ້ງຂໍ້ກ່າວຫາຫຍັງ. ຖ້າບໍ່ສົນວ່າ ເຈົ້າໜ້າທີ່ສືບສວນ ມີ ຫຼື ນຳໃຊ້ ດູນພິນິດ ຫຼືບໍ່, ມັນມີຄວາມສຳຄັນ ແລະ ຈຳເປັນ ທີ່ເຈົ້າໜ້າທີ່ສືບສວນທັງໝົດ ຈະຕ້ອງປະຕິບັດໜ້າທີ່ຂອງຕົນ ເພື່ອເກັບກຳ ຫຼັກຖານການກະທຳຜິດທີ່ສົງໃສທັງໝົດ ທີ່ມີຢູ່, ລວມທັງ ທຸກສະພາບການອ້ອມຂ້າງ ທີ່ອາດເວົ້າເຖິງຄວາມຈິງທີ່ວ່າ ຜູ້ກະທຳຜິດ ໄດ້ຕົກເປັນເຫຍື່ອ ຂອງການຄ້າມະນຸດ. ຫຼັກຖານດັ່ງກ່າວ ອາດຈະມີຄວາມກ່ຽວຂ້ອງກັບ ການພິສູດ ການປ້ອງກັນ ທີ່ຜູ້ຖືກເຄາະຮ້າຍ ທີ່ຖືກພິຈາລະນາຄະດີຢູ່ສານ ອາດຈະມີທາງເລືອກ.[156]

## ຂໍ້ສະເໜີແນະນຳ 8: ສ້າງແຮງຈູງໃຈຂອງເຈົ້າໜ້າທີ່ບັງຄັບປະຕິບັດກົດໝາຍ ໃນການນຳໃຊ້ຫຼັກການບໍ່ລົງໂທດ

ເມື່ອການປະຕິບັດງານ ຂອງຕຳຫຼວດ ຖືກວັດແທກ ດ້ວຍຈຳນວນການຈັບກຸມ ແລະ ການຕັ້ງຂໍ້ກ່າວຫາ ທີ່ເຂົາເຈົ້າປະຕິບັດ, ຕຳຫຼວດ ອາດຈະບໍ່ໄດ້ຮັບສິ່ງຈູງໃຈ ໃນການນຳໃຊ້ ຫຼັກການການບໍ່ລົງໂທດ ຕໍ່ ຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ທີ່ເຂົາເຈົ້າໄດ້ພົບພໍ້ ໃນນາມເປັນຜູ້ກະທຳຜິດ. ສະນັ້ນ, ຄວນພິຈາລະນາວ່າ ຕຳຫຼວດສາມາດໄດ້ຮັບສິ່ງຈູງໃຈໄດ້ແນວໃດ ເພື່ອໃຫ້ເຂົາເຈົ້ານຳໃຊ້ ຫຼັກການການບໍ່ລົງໂທດ, ລວມທັງ ໂດຍມາດຕະການການປະຕິບັດງານ ທີ່ສະທ້ອນໃຫ້ເຫັນເຖິງ ການນຳໃຊ້ຫຼັກການດັ່ງກ່າວ ຂອງເຂົາເຈົ້າ ໃນພາກປະຕິບັດຕົວຈິງ. ຍົກຕົວຢ່າງ, ການສົ່ງຕໍ່ຄົນ ສຳລັບການກວດສອບ ຜູ້ທີ່ຕໍ່ມາຖືກຢືນຢັນວ່າ ເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ອາດສາມາດເປັນລະບົບການວັດແທກ ທີ່ຖືກນຳໃຊ້ວັດແທກ ການປະຕິບັດງານ ຂອງ ຕຳຫຼວດ ໃນທາງບວກ.

ມາດຕະການຕ່າງໆ ອາດຍັງສາມາດຖືກນຳໃຊ້ ເພື່ອຮັບປະກັນວ່າ ຜູ້ບັງຄັບໃຊ້ກົດໝາຍ ຜູ້ທີ່ບໍ່ຈັບກຸມ ແລະ ຕັ້ງຂໍ້ຫາໃສ່ ຜູ້ຖືກເຄາະຮ້າຍ ຂອງການຄ້າມະນຸດ ບົນພື້ນຖານ ຫຼັກການການບໍ່ລົງໂທດ, ແມ່ນຈະບໍ່ມີຄວາມຮັບຜິດຊອບ ຕໍ່ການປ່ອຍປະລະເລີຍ ການປະຕິບັດໜ້າທີ່ຂອງຕົນ, ແຕ່ ໄດ້ຮັບການຍ້ອງຍໍຊົມເຊີຍ ຕໍ່ ການນຳໃຊ້ ຫຼັກການການບໍ່ລົງໂທດ ຂອງເຂົາເຈົ້າ. ສິ່ງຈູງໃຈດັ່ງກ່າວ ຕ້ອງຖືກອອກແບບອອກມາ ໃນລັກສະນະທີ່ບໍ່ບ່ຽງເບນຈາກ ພັນທະການບັງຄັບໃຊ້ກົດໝາຍທີ່ກວ້າງຂວາງກວ່າ ເພື່ອສືບສວນ ແລະ ຈັບກຸມ ຜູ້ກະທຳຜິດທາງອາຍາ; ດັ່ງນັ້ນ, ການພິຈາລະນາສາມາດໃຫ້ລາງວັນແກ່ຕຳຫຼວດ ສຳລັບການກໍ່ສ້າງຫຼັກຖານ ຕ້ານກັບ ປະເພດອາດຊະຍາກຳທີ່ຮ້າຍແຮງ, ລວມທັງການຄ້າມະນຸດ, ແລະ ວິທີການສືບສວນທີ່ຊຳນິຊຳນານ ຂອງເຂົາເຈົ້າ ຕໍ່ກັບ ຜູ້ກະທຳຜິດ ທີ່ອາດຈະເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ.

## ຂໍ້ສະເໜີແນະນຳ 9: ຮັບປະກັນວ່າ ເຈົ້າໜ້າທີ່ຜູ້ຈັບຕົວ ມີຄວາມເຂົ້າໃຈຕໍ່ກັບພັນທະຂອງເຂົາເຈົ້າໃນການຈັບຕົວບຸກຄົນ

ຜູ້ຖືກຈັບ – ລວມທັງ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ – ມີສິດ ທີ່ຜູ້ບັງຄັບໃຊ້ກົດໝາຍມີໜ້າທີ່ ທີ່ຈະຕ້ອງຍຶດຖື. ສິ່ງເຫຼົ່ານີ້ ລວມມີ ສິດທີ່ຈະໄດ້ຮັບການແຈ້ງໃຫ້ຮູ້ເຖິງ ເຫດຜົນ ສຳລັບ ການຈັບກຸມ ຂອງເຂົາເຈົ້າ ແລະ ທຸກຂໍ້ກ່າວຫາທີ່ໄດ້ວາງໄວ້, ແລະ ທີ່ຈະຖືກນຳເຂົ້າມາທັນທີ ກ່ອນຜູ້ພິພາກສາ ຫຼື ເຈົ້າໜ້າທີ່ອື່ນໆ.[157] ມາດຕາ 36 ຂອງສົນທິສັນຍາວຽນນາ ກ່ຽວກັບການພົວພັນກົງສຸນຮຽກຮ້ອງໃຫ້ຊາວຕ່າງປະເທດ ທີ່ຖືກຈັບກຸມ ຫຼື ກັກຂັງ ຕ້ອງໄດ້ຮັບການແຈ້ງໃຫ້ຮູ້ເຖິງ ສິດຂອງເຂົາເຈົ້າ ທີ່ຈະໃຫ້ມີການແຈ້ງຫາ ສະຖານທູດຂອງເຂົາເຈົ້າ, ດັ່ງນັ້ນ, ເຂົາເຈົ້າຈຶ່ງສາມາດໄດ້ຮັບ ຄຳແນະນຳ ແລະ ການສະຫນັບສະຫນູນ ດ້ານກົງສຸນ. ການປະຕິບັດສິດເຫຼົ່ານີ້ ໂດຍ ເຈົ້າໜ້າທີ່ທີ່ຈັບກຸມ ແມ່ນມີຄວາມສຳຄັນ ແລະ ຈຳເປັນ ທີ່ຈະຮັບປະກັນວ່າ ຜູ້ຖືກເຄາະຮ້າຍ ໄດ້ຮັບຄຳແນະນຳ ແລະ ການສະຫນັບສະຫນູນທີ່ເໝາະສົມ ຈາກເຈົ້າໜ້າທີ່ ແລະ ໄດ້ຮັບສິດ ທີ່ຈະຫລີກລ້ຽງການລົງໂທດ ສຳລັບອາຊະຍາກຳ ທີ່ເຂົາເຈົ້າ ເຂົາໄດ້ກະທຳ ຍ້ອນເປັນຜົນມາຈາກ ການຖືກຄ້າມະນຸດ. ດັ່ງນັ້ນ, ເຈົ້າໜ້າທີ່ໜ້າດ່ານ ຕ້ອງມີ ຄວາມອາດສາມາດພຽງພໍ ໃນການປະຕິບັດ ພັນທະດ້ານສິດທິມະນຸດ ຂອງຕົນ ຕໍ່ກັບ ຜູ້ທີ່ຖືກຈັບກຸມ, ລວມທັງ ຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ.

---

156 *ຄຳແນະນຳ ກ່ຽວກັບບັນຫາ ການຕອບສະໜອງຄວາມຍຸຕິທຳທາງອາຍາ ທີ່ເໝາະສົມ ຕໍ່ ຜູ້ຖືກເຄາະຮ້າຍ ທີ່ຖືກບັງຄັບໃຫ້ກະທຳຜິດ ຍ້ອນເປັນຜົນມາຈາກການທີ່ເຂົາເຈົ້າຖືກຄ້າມະນຸດ: ເອກະສານປະຫວັດຄວາມເປັນມາ ທີ່ໄດ້ຖືກກະກຽມ ໂດຍກອງເລຂາ ກຸ່ມປະຕິບັດງານ ກ່ຽວກັບການຄ້າມະນຸດ,* ນະຄອນວຽນນາ 10 ແລະ ວັນທີ 11 ກັນຍາ 2020, ເອກະສານ ຂອງ ເອກະສານ ຂອງ UN CTOC/COP/WG.4/2020/2 (15 ມິຖຸນາ 2020), ວັກທີ 40-42.

157 ມາດຕາ 9(2) *ສົນທິສັນຍາສາກົນ ວ່າດ້ວຍ ສິດທິຂອງພົນລະເຮືອນ ແລະ ດ້ານການເມືອງ*

## 3.3 ການດຳເນີນຄະດີ

### ຂໍ້ສະເໜີແນະນຳ 10: ປັບປຸງກົດໝາຍເພື່ອຫຼຸດຜ່ອນຄວາມສ່ຽງໃນການດຳເນີນຄະດີຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຢ່າງບໍ່ເໝາະສົມ

ການດຳເນີນຄະດີ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ແມ່ນເປັນຮູບແບບການລົງໂທດ ທີ່ບໍ່ຄຳນຶງເຖິງວ່າ ມັນຈະສົ່ງຜົນ ເຮັດໃຫ້ເກີດມີການຕັດສິນວ່າໄດ້ກະທຳຜິດ ຫຼືບໍ່. ຢູ່ໃນສະພາບການ ຂອງເອີຣົບ, ໄດ້ມີການອະທິບາຍວ່າ 'ບັນດາລັດ ທີ່ມີການເຄົາລົບ [ສິດທິມະນຸດ ຂອງຜູ້ຖືກເຄາະຮ້າຍ] ຫຼາຍທີ່ສຸດ ພາກັນຈັດຕັ້ງປະຕິບັດ ມາດຕະການ ທີ່ບໍ່ພຽງແຕ່ຍົກເວັ້ນ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ຈາກ ຄວາມຮັບຜິດຊອບທາງອາຍາເທົ່ານັ້ນ, ແຕ່ກໍຍັງບໍ່ດຳເນີນຄະດີ ເຂົາເຈົ້າເລີຍ ສຳລັບການກະທຳຜິດເຫຼົ່ານີ້.'[158] ລັດຕ່າງໆ ຄວນພິຈາລະນາ ປັບປຸງນິຕິກຳ ເພື່ອຫຼຸດຜ່ອນ ຄວາມສ່ຽງ ທີ່ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ຈະຖືກດຳເນີນຄະດີ ຢ່າງບໍ່ເໝາະສົມ ສຳລັບການກະທຳຜິດ ທີ່ເຂົາເຈົ້າໄດ້ກະທຳ ຍ້ອນເປັນຜົນມາຈາກການຖືກຄ້າມະນຸດ. ມີຫຼາຍວິທີ ທີ່ສາມາດບັນລຸ ສິ່ງດັ່ງກ່າວນີ້ໄດ້. ຕົວຢ່າງ, ນິຕິກຳວ່າດ້ວຍການຄ້າມະນຸດ ສາມາດໄດ້ຮັບການປັບປຸງ ເພື່ອໃຫ້ລວມເອົາ ປະເດັນການກະທຳຜິດທາງອາຍາແບບຖືກບັງຄັບ ໃນຮູບແບບການຂູດຮີດ ໃສ່ໃນຄຳນິຍາມ ຂອງການຄ້າມະນຸດ ຢ່າງຈະແຈ້ງ. ຂໍ້ກຳນົດທີ່ຈະແຈ້ງ ວ່າດ້ວຍການບໍ່ລົງໂທດ ຍັງສາມາດຖືກລວມເຂົ້າໃສ່ໃນນິຕິກຳ (ໃຫ້ເບິ່ງຂໍ້ສະເໜີແນະນຳ 16 ຢູ່ທີ່ 3.4). ຄວນມີກົດໝາຍໄວ້ ສຳລັບອະນຸຍາດໃຫ້ການຕັດສິນວ່າໄດ້ກະທຳຜິດ ຖືກຍົກເລີກ (ໃຫ້ເບິ່ງຄຳແນະນຳທີ 25 ຢູ່ທີ່ 3.6).

ລັດ ອາດຍັງຈະຢາກດັດແກ້ ນິຕິກຳ ທີ່ເຮັດໃຫ້ ຜູ້ຖືກເຄາະຮ້າຍ ມີຄວາມສ່ຽງ ທີ່ຈະຖືກດຳເນີນຄະດີ. ຍົກຕົວຢ່າງ, ສາມາດໃຫ້ການພິຈາລະນາ ຕໍ່ ຜົນກະທົບ ທີ່ການກະທຳຜິດ ທີ່ມີຄວາມຮັບຜິດຊອບຢ່າງເຄັ່ງຄັດ, ລວມທັງ ການກະທຳຜິດ ທີ່ພົວພັນກັບຢາເສບຕິດ, ອາດຈະເຮັດໃຫ້ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ມີຄວາມສ່ຽງ ທີ່ຈະຖືກດຳເນີນຄະດີ, ຊຶ່ງອາດຈະເຮັດໃຫ້ເກີດມີການລົງໂທດທາງຮ່າງກາຍ ຫຼື ການລົງໂທດປະຫານຊີວິດ. ນອກຈາກນັ້ນ, ລັດຄວນພິຈາລະນາ ຜົນກະທົບ ຂອງກົດໝາຍ ທີ່ຫ້າມການເຮັດວຽກບໍລິການທາງເພດ ຕໍ່ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ແລະ ກຸ່ມອື່ນໆ ທີ່ມີຄວາມສ່ຽງ ແລະ ຖືກມອງຂ້າມ ແລະ ພິຈາລະນາ ໃຫ້ມີການປັບປຸງ ຢ່າງເໝາະສົມ. ຍົກຕົວຢ່າງ, ສະເພາະກ່ຽວກັບເດັກນ້ອຍ, ຍັງອາດສາມາດພິຈາລະນາ ການເຮັດໃຫ້ອາຍຸຂອງເດັກນ້ອຍ ກາຍເປັນອົງປະກອບ ຂອງການກະທຳຜິດ ທີ່ກ່ຽວຂ້ອງກັບ ອຸດສາຫະກຳການບໍລິການທາງເພດ, ດັ່ງນັ້ນ ມັນຈຶ່ງເປັນໄປບໍ່ໄດ້ ໃນດ້ານກົດໝາຍ ທີ່ຈະດຳເນີນຄະດີເດັກນ້ອຍ (ລວມທັງ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ) ສຳລັບ ການມີສ່ວນຮ່ວມຂອງເຂົາເຈົ້າ.[159]

ສຳລັບທີ່ກ່ຽວຂ້ອງສະເພາະກັບ ນິຕິກຳ ສຳລັບປົກປ້ອງ ຜູ້ຖືກເຄາະຮ້າຍ ທີ່ເປັນເດັກນ້ອຍ ຈາກການດຳເນີນຄະດີ, *ຄຳຄິດເຫັນທົ່ວໄປ ສະບັບເລກທີ 24 (2019) ກ່ຽວກັບສິດທິເດັກ ຢູ່ໃນລະບົບຍຸຕິທຳເດັກ* ເນັ້ນໜັກເຖິງຄວາມຈຳເປັນໃນການກຳນົດອາຍຸຕໍ່າສຸດທີ່ເໝາະສົມ ສຳລັບຄວາມຮັບຜິດຊອບທາງອາຍາ ແລະ ຮັບປະກັນ ການປະຕິບັດຕໍ່ເດັກທີ່ເໝາະສົມ ຕໍ່ກັບ ຝ່າຍໃດໜຶ່ງ ທີ່ມີອາຍຸດັ່ງກ່າວນັ້ນ, ທີ່ຫັນເດັກນ້ອຍ ອອກຈາກຂະບວນການຍຸຕິທຳທາງອາຍາ ແລະ ກ້າວໄປຫາ ແຜນງານສະຫນັບສະຫນູນທີ່ມີປະສິດທິພາບ.[160] ມາດຕາ 40 ຂອງ ສົນທິສັນຍາ ວ່າດ້ວຍສິດທິຂອງເດັກ ບໍ່ໄດ້ລະບຸ ອາຍຸຕໍ່າສຸດ ທີ່ມີຄວາມຮັບຜິດຊອບທາງອາຍາ, ເຖິງແມ່ນວ່າ ຄະນະກຳມະການສິດທິເດັກນ້ອຍຊຸກຍູ້ໃຫ້ລັດຕ່າງໆ ເອົາໃຈໃສ່ຫຼັກຖານທາງວິທະຍາສາດ ແລະ ເພີ່ມອາຍຸຄວາມຮັບຜິດຊອບທາງອາຍາ ໄປເປັນ 14 ປີ, ແລະ ໃຫ້ເຂົາເຈົ້າ ໄດ້ຮັບຜົນປະໂຫຍດ ຈາກຄວາມສົງໃສ ຖ້າຫາກວ່າ ອາຍຸຂອງເດັກ ບໍ່ສາມາດພິສູດໄດ້.[161]

---

158 ທ່ານ Carolina Villacampa ແລະ ທ່ານ Nria Torres, ການຄ້າມະນຸດ ເພື່ອການຂູດຮີດທາງອາຍາ: ຜົນກະທົບ ທີ່ປະເຊີນ ໂດຍຜູ້ຖືກເຄາະຮ້າຍ ຢູ່ໃນເສັ້ນທາງ ຜ່ານ ລະບົບຍຸຕິທຳທາງອາຍາ, *ການທົບທວນຄືນຂອງສາກົນ ຕໍ່ກັບ ວິທະຍາສາດການສຶກສາຜູ້ຖືກເຄາະຮ້າຍ,* 2019, ສະບັບທີ 25(1) 318, ທີ່ 5

159 ເອກອັກຄະລັດຖະທູດທີ່ໄດ້ຮັບມອບໝາຍໜ້າທີ່ພິເສດ, ທ່ານ John Cotton Richmond, ທີ່ກ່າວໃນການສົນທະນາ ຂອງ ຄະນະກຳມະການຄວາມຍຸຕິທຳ ຂອງ ຜູ້ລອດຊີວິດ, ທ່ານ Dressember ແລະ ທ່ານ Karana Rising, 7ໂມງແລງ ET, 30 ເມສາ 2021. ເອກະສານບັນທຶກ ຂອງຜູ້ຂຽນ.

160 ຄວາມຄິດເຫັນທົ່ວໄປ ສະບັບເລກທີ 24 (2019) ກ່ຽວກັບ ສິດທິຂອງເດັກນ້ອຍ ຢູ່ໃນລະບົບຍຸຕິທຳ ຂອງເດັກນ້ອຍ, ເອກະສານ ຂອງ UN CRC/C/GC/24, 18 ກັນຍາ 2019 [6]

161 ຄວາມຄິດເຫັນທົ່ວໄປ ສະບັບເລກທີ 24 (2019) ກ່ຽວກັບ ສິດທິຂອງເດັກນ້ອຍ ຢູ່ໃນລະບົບຍຸຕິທຳ ຂອງເດັກນ້ອຍ, ເອກະສານ ຂອງ UN CRC/C/GC/24, 18 ກັນຍາ 2019 [22-24]

## ຂໍ້ສະເໜີແນະນຳ 11: ຮັບປະກັນວ່າ ການຕັດສິນໃດໆ ເພື່ອດຳເນີນຄະດີຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄດ້ຖືກດຳເນີນການພາຍຫຼັງທີ່ໄດ້ມີຂະບວນການກຳນົດຕົວຢ່າງເປັນທາງການເທົ່ານັ້ນ ແລະ ໄດ້ມີການອະທິບາຍໄວ້ຢ່າງຊັດເຈນ

ບໍ່ມີຂໍ້ຫ້າມທົ່ວໄປ ກ່ຽວກັບການດຳເນີນຄະດີ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ. ສຳລັບຜູ້ຖືກເຄາະຮ້າຍ ທີ່ຈະໄດ້ຮັບຜົນປະໂຫຍດ ຈາກ ຫຼັກການການບໍ່ລົງໂທດ, ຕ້ອງມີການເຊື່ອມໂຍງກັນ ລະຫວ່າງ ການກະທຳຜິດ ແລະ ການຄ້າມະນຸດ, ບໍ່ວ່າຈະເປັນຍ້ອນວ່າ ຜູ້ຖືກເຄາະຮ້າຍ ຖືກບັງຄັບຈາກ ຜູ້ຄ້າມະນຸດ ໃຫ້ກະທຳຜິດ (ການບັງຄັບ) ຫຼື ການກະທຳຜິດ ແມ່ນເປັນຜົນໂດຍກົງ ມາຈາກ ການທີ່ ຜູ້ຖືກເຄາະຮ້າຍ. ຖືກຄ້າມະນຸດ (ສາເຫດ). ແມ້ແຕ່ ເມື່ອບໍ່ມີສາຍພົວພັນກັນ ລະຫວ່າງ ການກະທຳຜິດ ແລະ ການຄ້າມະນຸດ ກໍ່ຕາມ, ລັດຍັງອາດຈະຖືວ່າ ການດຳເນີນຄະດີ ຜູ້ຖືກເຄາະຮ້າຍ ແມ່ນຂັດກັບ ພັນທະຂອງຕົນ ໃນການປົກປ້ອງ ຜູ້ຖືກເຄາະຮ້າຍ ແລະ ສືບສວນ ແລະ ດຳເນີນຄະດີ ຕໍ່ ຜູ້ຄ້າມະນຸດ.

ໄອຍະການ ບໍ່ຄວນຕັດສິນໃຈໃດໆ ວ່າ ຈະດຳເນີນຄະດີຫຼືບໍ່, ຈົນກ່ວາ ໄດ້ມີການປະເມີນການຄ້າມະນຸດ ຢ່າງເປັນທາງການ ໂດຍເຈົ້າໜ້າທີ່ ທີ່ມີສິດອຳນາດ, ທີ່ສອດຄ່ອງກັບ ເງື່ອນໄຂທີ່ກຳນົດໄວ້ ຢູ່ໃນອະນຸສັນຍາ ວ່າດ້ວຍ ການຄ້າມະນຸດ ແລະ ACTIP. ຕາມທີ່ສານສິດທິມະນຸດ ຂອງ ເອີຣົບ ໄດ້ກ່າວໄວ້ ຢູ່ໃນຄະດີ ຂອງ *V.C.L ແລະ A.N. V ທີ່ປະເທດ ສະຫະລາຊະອານາຈັກ ແມ່ນວ່າ*

> *...ເມື່ອສະຖານະພາບ ຂອງບຸກຄົນໜຶ່ງ ຕົກເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ອາດຈະສົ່ງຜົນກະທົບບ່ອນວ່າ ມີຫຼັກຖານພຽງພໍ ທີ່ຈະດຳເນີນຄະດີ ຫຼື ບໍ່ ແລະ ມັນເປັນຜົນປະໂຫຍດ ຂອງສາທາລະນະຊົນ ຫຼື ບໍ ທີ່ຈະເຮັດແນວນັ້ນ, ທຸກການຕັດສິນໃຈທີ່ຈະດຳເນີນຄະດີ ຕໍ່ ຜູ້ທີ່ອາດຈະໄດ້ຮັບເຄາະຮ້າຍຈາກການຄ້າມະນຸດ ຫຼື ບໍ່ ນັ້ນ ຄວນຈະຖືກປະຕິບັດ ກໍ່ຕໍ່ເມື່ອມີການປະເມີນການຄ້າມະນຸດ ໂດຍ ຜູ້ມີຄຸນວຸດທິ - ເທົ່າທີ່ເປັນໄປໄດ້. ສິ່ງດັ່ງກ່າວນີ້ ມີຄວາມສຳຄັນ ໂດຍສະເພາະ ເມື່ອກ່ຽວຂ້ອງກັບເດັກນ້ອຍ.*[162]

ແມ່ນແຕ່ ເມື່ອບຸກຄົນໜຶ່ງ ຖືກກຳນົດຕົວວ່າ ເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ຢ່າງເປັນທາງການແລ້ວ, ໄອຍະການ ກໍ່ຄືງອາດຈະຕັດສິນໃຈ ດຳເນີນຄະດີ ຜູ້ກ່ຽວ ສຳລັບ ການກະທຳຜິດ ທີ່ຜູ້ກ່ຽວໄດ້ກະທຳ, ແຕ່ຄວນກຳນົດເຫດຜົນໃຫ້ຈະແຈ້ງ ກ່ຽວກັບວ່າ ເປັນຫຍັງຈຶ່ງໄດ້ຕັດສິນແບບນີ້, ບໍ່ວ່າຈະເປັນຍ້ອນອີງໃສ່ ການທີ່ບໍ່ມີຄວາມກ່ຽວຂ້ອງກັນ ລະຫວ່າງ ການກະທຳຜິດ ແລະ ການຄ້າມະນຸດ, ຫຼື ຍ້ອນວ່າ ການດຳເນີນຄະດີ ຜູ້ຖືກເຄາະຮ້າຍ ແມ່ນເປັນຜົນປະໂຫຍດ ຂອງສາທາລະນະຊົນ. ສິ່ງສຳຄັນເຊັ່ນດຽວກັນກໍຄືວ່າ, ຂະບວນການ ແລະ ການຕັດສິນ ຂອງສານຄວນອະທິບາຍໃຫ້ ຜູ້ຖືກເຄາະຮ້າຍຮູ້. ສານ ຄວນສະໜອງຂໍ້ມູນ ແລະ ວັດຖຸ ໃຫ້ແກ່ ຜູ້ຖືກເຄາະຮ້າຍ, ດ້ວຍຄຳສັບທີ່ງ່າຍດາຍ, ບໍ່ແມ່ນຄຳສັບກົດໝາຍ ແລະ ເປັນພາສາ ທີ່ເຂົາເຈົ້າເຂົ້າໃຈໄດ້, ລວມທັງ ກ່ຽວກັບ ຫຼັກການການບໍ່ລົງໂທດ, ເພື່ອໃຫ້ເຂົາເຈົ້າ ເຂົ້າໃຈວ່າ ເຂົາເຈົ້າບໍ່ຄວນຖືກລົງໂທດ ສຳລັບທຸກອາຊະຍາກຳ ທີ່ກ່ຽວຂ້ອງກັບ ການຄ້າມະນຸດ ຂອງເຂົາເຈົ້າ.[163]

## ຂໍ້ສະເໜີແນະນຳ 12: ຊີ້ແຈງຄວາມສຳພັນລະຫວ່າງສະຖານະຂອງຜູ້ຖືກເຄາະຮ້າຍ ແລະ ການບໍ່ດຳເນີນຄະດີ

ຢູ່ໃນຫຼາຍປະເທດ, ມັນບໍ່ຈະແຈ້ງວ່າ ອັນໃດທີ່ສົ່ງຜົນກະທົບ ຕໍ່ ການກຳນົດ ສະຖານະພາບ ຂອງຜູ້ຖືກເຄາະຮ້າຍ ທີ່ມີຕໍ່ ຂະບວນຄວາມຍຸຕິທຳທາງອາຍາ ທີ່ຕ້ານກັບ ເຂົາເຈົ້າ.[164] ດັ່ງນັ້ນ, ແມ້ແຕ່ ຜູ້ຖືກເຄາະຮ້າຍ ທີ່ຖືກລະບຸຕົວ ຢ່າງ

---

162 *V.C.L ແລະ A.N. v ສະຫະລາຊະອານາຈັກ* [ຜົນນຳໃຊ້ເລກທີ 77587/12 ແລະ 74603/12], ສານສິດທິມະນຸດ ແຫ່ງ ເອີຣົບ, 16 ກຸມພາ 2021, ວັກ 161.

163 ຕົວຊີ້ວັດການດຳເນີນຄະດີຄ້າມະນຸດຢູ່ສານ ທີ່ເອົາຜູ້ຖືກເຄາະຮ້າຍເປັນຈຸດໃຈກາງ, ໂຄງການ ASEAN-ACT, 4.1(b)

164 ຍົກຕົວຢ່າງ, ບົດລາຍງານ ປີ 2019 ກ່ຽວກັບ ການຕ້ານການຄ້າມະນຸດ ຢູ່ໃນປະເທດ ສະຫະລາຊະອານາຈັກ ໄດ້ຄົ້ນພົບວ່າ ໃນຂະນະທີ່ ກົນໄກການສົ່ງຕໍ່ແຫ່ງຊາດ ບັນລຸຂໍ້ຕົກລົງທີ່ວ່າ ບຸກຄົນໜຶ່ງ ເປັນຜູ້ຖືກເຄາະຮ້າຍ ຂອງການຄ້າມະນຸດ ໂດຍອີງໃສ່ ຄວາມສົມດູນ ຂອງຄວາມເປັນໄປໄດ້, ການຕັດສິນໃຈດັ່ງກ່າວ ບໍ່ມີສະຖານະພາບທີ່ເປັນທາງການ ຢູ່ໃນສານອາຍາ ທີ່ເຮັດໃຫ້ຄຳຕັດສິນ ທີ່ຕ້ອງໄດ້ບັນລຸ ເປັນມາດຕະຖານ ຂອງຄວາມຊັດເຈນ ໂດຍບໍ່ມີຂໍ້ສົງໃສ. *ການທົບທວນຄືນກົດໝາຍ ວ່າດ້ວຍການເປັນຂ້າທາດ ໃນຍຸກໃໝ່ ປີ 2015 ຢ່າງເປັນເອກະລາດ: ບົດລາຍງານສະບັບສຸດທ້າຍ* (ລັດຖະມົນຕີ ກະຊວງພາຍໃນ, ປີ 2019) 18

ເປັນທາງການວ່າ ເປັນຜູ້ຖືກເຄາະຮ້າຍ ກໍຍັງອາດຈະຖືກດຳເນີນຄະດີ ສຳລັບອາຊະຍາກຳ ທີ່ຕົນໄດ້ກະທຳ ທີ່ເປັນຜົນມາຈາກ ການຖືກຄ້າມະນຸດ. ດັ່ງນັ້ນ ລັດຕ້ອງກຳນົດວ່າ ເປັນຄວາມສຳພັນແບບໃດ ລະຫວ່າງ ສະຖານະພາບ ຂອງບຸກຄົນ ທີ່ຕົກເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ແລະ ຄວາມເປັນໄປໄດ້ ຫຼື ເປັນໄປບໍ່ໄດ້ ທີ່ຜູ້ກ່ຽວ ຈະຖືກດຳເນີນຄະດີ. ສິ່ງທີ່ສຳຄັນ ແມ່ນວ່າ, ການບໍ່ລົງໂທດ ຂອງເຂົາເຈົ້າ ໃນເບື້ອງຕົ້ນ ບໍ່ຄວນຂຶ້ນກັບ ການລະບຸຕົວຕົນຢ່າງເປັນທາງການ ຂອງ ຜູ້ຖືກເຄາະຮ້າຍ ຫຼື ຜູ້ຄ້າມະນຸດ ຂອງຜູ້ຖືກເຄາະຮ້າຍ; ເກນລະດັບສຳລັບ ຜົນນຳໃຊ້ໃນເບື້ອງຕົ້ນຂອງມັນ ຄວນຈະເປັນພື້ນຖານ ທີ່ສົມເຫດສົມຜົນ ທີ່ຈະເຊື່ອໄດ້ວ່າ ການຄ້າມະນຸດ ໄດ້ເກີດຂຶ້ນແລ້ວ.

ກົດໝາຍ, ນະໂຍບາຍ ແລະ ເອກະສານແນະນຳ ອາດຈຳເປັນຈະຕ້ອງ ລະບຸຢ່າງຈະແຈ້ງວ່າ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ແມ່ນຈະບໍ່ຖືກດຳເນີນຄະດີ ສຳລັບການກະທຳຜິດ ທີ່ໄດ້ກະທຳ ຍ້ອນເປັນຜົນໂດຍກົງ ມາຈາກການທີ່ເຂົາເຈົ້າ ຖືກຄ້າມະນຸດ. ມາດຕະການ ຍັງອາດຈຳເປັນຈະຕ້ອງໄດ້ຖືກນຳໃຊ້ ເພື່ອແຈ້ງໃຫ້ໄອຍະການ ຮູ້ເຖິງຈຸດປະສົງ ແລະ ຫຼັກການປະຕິບັດ ການບໍ່ດຳເນີນຄະດີ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ, ຜ່ານທາງ ການເຜີຍແຜ່ຂໍ້ມູນ ທີ່ເໝາະສົມ ກ່ຽວກັບຫຼັກການ. ສຳລັບບາດກ້າວເບື້ອງຕົ້ນ, ພາກສ່ວນກ່ຽວຂ້ອງກັບວຽກງານຕ້ານການຄ້າມະນຸດ ຄວນເຮັດໃຫ້ຕົນເອງ ຄຸ້ນເຄີຍກັບ ບັນດາຂໍ້ກຳນົດ ກ່ຽວກັບການບໍ່ລົງໂທດ ທີ່ມີຢູ່ໃນ ກົດໝາຍ, ນະໂຍບາຍ ແລະ ເອກະສານແນະນຳ ທີ່ມີຢູ່ແລ້ວ.

ເຈົ້າໜ້າທີ່ ຄວນເຮັດໃຫ້ຕົນເອງ ຄຸ້ນເຄີຍກັບ ຂໍ້ຕົກລົງລະຫວ່າງສອງຝ່າຍ ທີ່ມີຢູ່ແລ້ວ ແລະ ບັນດາຂໍ້ກຳນົດ ກ່ຽວກັບການບໍ່ລົງໂທດ ທີ່ມີຢູ່ໃນນັ້ນ, ທີ່ນຳໄປສູ່ ການຈັດຕັ້ງປະຕິບັດ ໃນພາກປະຕິບັດ. ຂໍ້ຕົກລົງລະຫວ່າງສອງຝ່າຍ ແລະລະດັບພາກພື້ນ ລະຫວ່າງປະເທດ ຄວນຮັບປະກັນວ່າ ສະຖານະພາບ ຂອງ ຜູ້ຖືກເຄາະຮ້າຍ ທີ່ສະໜອງໃຫ້ ຢູ່ໃນປະເທດໜຶ່ງ ແມ່ນຈະໄດ້ຮັບການເຄົາລົບ ຈາກ ຝ່າຍອື່ນໆ ທີ່ຢູ່ໃນຂໍ້ຕົກລົງ, ດັ່ງນັ້ນ, ການປົກປ້ອງການບໍ່ລົງໂທດແມ່ນຈະມີຜົນນຳໃຊ້ໄດ້ ຢູ່ທົ່ວປະເທດຕ່າງໆ. ຂໍ້ກຳນົດ ວ່າດ້ວຍການບໍ່ລົງໂທດ ທີ່ຢູ່ໃນຂໍ້ຕົກລົງ ລະຫວ່າງສອງຝ່າຍ ແລະ ລະດັບພາກພື້ນ ບໍ່ຄວນຖືກຈຳແນກ, ຍົກຕົວຢ່າງວ່າ ມີຜົນນຳໃຊ້ ສະເພາະກັບ ຜູ້ຖືກເຄາະຮ້າຍບາງຄົນ (ເຊັ່ນ: ຜູ້ຍິງ ແລະ ເດັກຍິງ), ທີ່ປ່ອຍເຮັດໃຫ້ ຜູ້ຖືກເຄາະຮ້າຍຄົນອື່ນໆ (ເຊັ່ນ: ຜູ້ໃຫຍ່ທີ່ເປັນເພດຊາຍ) ມີຄວາມສ່ຽງ ຕໍ່ການຖືກລົງໂທດ. ແລະ ພວກມັນກໍບໍ່ຄວນຈຳກັດ ການລົງໂທດແບບບໍ່ໄດ້ຮັບການປົກປ້ອງ ສະເພາະກັບບາງປະເພດການກະທຳຜິດເທົ່ານັ້ນ (ເຊັ່ນ: ການເຂົ້າອອກເມືອງ ແລະ ການກະທຳຜິດທີ່ກ່ຽວຂ້ອງກັບໂສເພນີ).

## ຂໍ້ສະເໜີແນະນຳ 13: ຮັບປະກັນວ່າໄອຍະການເຂົ້າໃຈດຸນພິນິດຂອງເຂົາເຈົ້າ ແລະ ວິທີການນຳໃຊ້ດຸນພິນິດ

ດູນພິນິດ ຂອງໄອຍະການ ແມ່ນເປັນການປົກປ້ອງ ທີ່ບໍ່ໜ້າເຊື່ອຖື ຕໍ່ກັບການດຳເນີນຄະດີ ຜູ້ຖືກເຄາະຮ້າຍ, ແລະດັ່ງນັ້ນ ຈຶ່ງບໍ່ສາມາດອີງໃສ່ ການປົກປ້ອງ ແລະ ຍຶດໝັ້ນ ຫຼັກການການບໍ່ລົງໂທດ, ແຕ່ມັນສາມາດມີບົດບາດທີ່ສຳຄັນ. ຢູ່ໃນບາງປະເທດ, ມັນອາດຈະເປັນຂໍ້ບັງຄັບໃຫ້ເລີ່ມການດຳເນີນຄະດີຕໍ່ບຸກຄົນທີ່ຖືກກ່າວຫາວ່າໄດ້ກະທຳຜິດ. ແຕ່ຢູ່ໃນປະ ເທດອື່ນ, ໄອຍະການ ອາດຈະມີດູນພິນິດ ທີ່ຈະບໍ່ເລີ່ມ ດຳເນີນຄະດີທາງອາຍາ ຕໍ່ ຜູ້ຖືກເຄາະຮ້າຍ, ຫຼື ເມື່ອການດຳເນີນຄະດີ ເກີດຂຶ້ນແລ້ວ, ກໍຢຸດການດຳເນີນຄະດີ ຖ້າມີຫຼັກຖານ ຊີ້ໃຫ້ເຫັນວ່າ ບຸກຄົນ ທີ່ຖືກດຳເນີນຄະດີໃນສານ ແມ່ນເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.[165]

ມັນເປັນສິ່ງສຳຄັນ ແລະ ຈຳເປັນ ທີ່ໄອຍະການ ເຂົ້າໃຈ ດູນພິນິດ ທີ່ຕົນມີ, ແລະ ມີຄວາມສາມາດພຽງພໍ ໃນການນຳໃຊ້ດູນພິນິດດັ່ງກ່າວ. ຢູ່ບາງປະເທດ ທີ່ໄອຍະການ ມີດູນພິນິດ ດັ່ງກ່າວ, ເຂົາເຈົ້າ ຄວນຈະຢູ່ພາຍໃຕ້ ໜ້າທີ່ທີ່ຈະແຈ້ງ ທີ່ຈະຢຸດການດຳເນີນຄະດີ ຕໍ່ ຜູ້ຖືກເຄາະຮ້າຍ ສຳລັບ ການກະທຳຜິດ ທີ່ກ່ຽວຂ້ອງກັບການຄ້າມະນຸດ. ໃນການພິຈາລະນາວ່າ ຈະດຳເນີນຄະດີ ຫຼື ບໍ່, ໄອຍະການ ອາດຈະປະເມີນເບິ່ງວ່າ ຕົນເອງເຊື່ອວ່າມີຫຼັກຖານພຽງພໍແລ້ວບໍ ເພື່ອຮັບປະກັນ ການດຳເນີນຄະດີ ບົນພື້ນຖານ ອົງປະກອບ ຂອງ ອາຊະຍາກຳ ທີ່ກຳລັງພິຈາລະນາຢູ່ (ລວມທັງ

---

165 ກຸ່ມປະສານງານລະຫວ່າງອົງການຈັດຕັ້ງ ເພື່ອຕ້ານການຄ້າມະນຸດ, *ການບໍ່ລົງໂທດ ຜູ້ຖືກເຄາະຮ້າຍ ຂອງການຄ້າມະນຸດ* (ICAT, ສະບັບຫຍໍ້ 8/2020) 4; *ຄຳແນະນຳ ກ່ຽວກັບ ບັນຫາການຕອບສະໜອງຄວາມຍຸຕິທຳທາງອາຍາ ທີ່ເໝາະສົມ ຕໍ່ ຜູ້ຖືກເຄາະຮ້າຍ ທີ່ຖືກບັງຄັບ ໃຫ້ກະທຳຜິດ ຍ້ອນຜົນຂອງການຖືກຄ້າມະນຸດ: ເອກະສານຄວາມເປັນມາ ທີ່ຖືກກະກຽມໂດຍ ກອງເລຂາ ກຸ່ມປະຕິບັດງານ ກ່ຽວກັບ ການຄ້າມະນຸດ,* ນະຄອນວຽນນາ 10 ແລະ 11 ກັນຍາ 2020, ເອກະສານ ຂອງ UN CTOC/COP/WG.4/2020/2 (15 ມິຖຸນາ 2020), ວັກ 44-45.

ອົງປະກອບຂອງຄວາມຜິດ), ໂດຍຄໍານຶງເຖິງ ຂໍ້ກ່າວຫາທີ່ມີຢູ່ ແລະ ພິຈາລະນາຜົນປະໂຫຍດ ຂອງສາທາລະນະ ທີ່ເຫັນດີ ຫຼື ບໍ່ເຫັນດີ ຕໍ່ກັບ ການດໍາເນີນຄະດີ.

ໄອຍະການ ຄວນໄດ້ຮັບການຝຶກອົບຮົມ ຢ່າງເຕັມທີ່ ເພື່ອໃຫ້ເຂົ້າໃຈ ອົງປະກອບຂອງການກະທໍາຜິດທາງອາຍາ ໂດຍເຈດຕະນາ ແລະ ເພື່ອກວດກາ ອົງປະກອບ ສໍາລັບທຸກອາຊະຍາກໍາ ທີ່ເຈດຕະນາ ທີ່ເຂົາເຈົ້າດໍາເນີນຄະດີ, ເພື່ອກໍານົດວ່າ ມີການນໍາໃຊ້ວິທີການໃດໜຶ່ງບໍ (ເຊັ່ນ: ການບັງຄັບ, ການບີບບັງຄັບ, ການສວຍໃຊ້ຕໍາແໜ່ງທີ່ເປັນຈຸດອ່ອນ ແລະ ວິທີການອື່ນໆ ທີ່ລະບຸໄວ້ໃນມາດຕາ 3(a) ຂອງ ອະນຸສັນຍາ ວ່າດ້ວຍການຄ້າມະນຸດ ແລະ ມາດຕາ 2(a) ຂອງ ACTIP), ອາດຈະທໍາລາຍ ຄວາມຕັ້ງໃຈ ທີ່ຈະກະທໍາອາດຊະຍາກໍາ. ການກວດສອບນີ້ ອາດຈະຫລີກລ້ຽງ ສະຖານະການ ທີ່ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ຖືກນໍາໄປພິຈາລະນາຄະດີ ຢູ່ສານ ແລະ ຖືກດໍາເນີນຄະດີ ສໍາລັບອາຊະຍາກໍາ ທີ່ເຂົາເຈົ້າບໍ່ໄດ້ຕັ້ງໃຈທີ່ຈະກະທໍາ. ເພື່ອທີ່ຈະສ້າງສິ່ງຈູງໃຈ ໃຫ້ແກ່ ໄອຍະການ, ການປະຕິບັດງານຂອງເຂົາເຈົ້າ ອາດສາມາດຖືກວັດແທກ ໂດຍທຽບກັບວ່າ ເຂົາເຈົ້າ ມີການດໍາເນີນການກວດສອບນີ້ ບໍ.[166] ນອກຈາກນັ້ນ, ເຂົາເຈົ້າ ຍັງຄວນໄດ້ຮັບມອບໝາຍ ໃຫ້ຮັບຜິດຊອບ ການດໍາເນີນຄະດີ ອາຊະຍາກໍາ ທີ່ບໍ່ມີເຈດຕະນາທາງອາຍາ ຢ່າງພຽງພໍ.

## ຂໍ້ສະເໜີແນະນໍາ 14: ຈັດການຝຶກອົບຮົມວຽກງານຕ້ານການຄ້າມະນຸດໃຫ້ແກ່ ໄອຍະການ ໂດຍສະພາະຜູ້ທີ່ຊ່ຽວຊານໃນການດໍາເນີນຄະດີຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທົ່ວໄປ.

ຢູ່ທົ່ວອາຊຽນ ແລະ ບ່ອນອື່ນໆ, ໄອຍະການຈໍານວນຫຼາຍ ໄດ້ຮັບການຝຶກອົບຮົມກ່ຽວກັບ ວິທີການດໍາເນີນຄະດີການຄ້າມະນຸດ. ເຖິງຢ່າງໃດກໍ່ຕາມ, ໄອຍະການ ສໍາລັບອາຊະຍາກໍາອື່ນໆ ບໍ່ຄ່ອຍໄດ້ຮັບການຝຶກອົບຮົມ ໃນການກໍານົດຕົວ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ໃນຈໍານວນບັນດາ ຜູ້ທີ່ເຂົາເຈົ້າກໍາລັງດໍາເນີນການຕັດສິນວ່າໄດ້ກະທໍາຜິດ ຕໍ່ ການກະທໍາຜິດທາງອາຍາອື່ນໆ, ແລະ ກ່ຽວກັບວິທີການຕອບສະໜອງຕົວຊີ້ວັດ ຂອງການຄ້າມະນຸດ.

ໄອຍະການ ສໍາລັບອາຊະຍາກໍາ ທີ່ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ມັກກະທໍາ, ຄວນທໍາຄວາມເຂົ້າໃຈ ກັບຄວາມເປັນໄປໄດ້ ໃນການຢຸດຕິຄະດີ ບົນພື້ນຖານ ຂອງ ຫຼັກການການບໍ່ລົງໂທດ. ເຂົາເຈົ້າຍັງຄວນຈະຄຸ້ນເຄີຍກັບ ຄໍານິຍາມ ຂອງການຄ້າມະນຸດ, ຜົນກະທົບ ຈາກຄວາມເຈັບຊໍ້າ ຕໍ່ ຜູ້ຖືກເຄາະຮ້າຍ, ການໃຊ້ວິທີການຕ່າງໆ ຂອງພວກຄ້າມະນຸດ, ແລະ ຄວາມບໍ່ກ່ຽວຂ້ອງກັນ ຂອງການຍິນຍອມເຫັນດີ ເມື່ອວິທີການໄດ້ຖືກນໍາໃຊ້. ເຂົາເຈົ້າ ຄວນໄດ້ຮັບການຝຶກອົບຮົມ ເພື່ອຮັບຮູ້ ຕົວຊີ້ວັດຂອງການຄ້າມະນຸດ ແລະ ກົນໄກການສົ່ງຕໍ່ ທີ່ມີໄວ້ແລ້ວ ໃນການປ່ອຍໃຫ້ ຜູ້ຖືກເຄາະຮ້າຍ ອອກຈາກ ລະບົບຍຸຕິທໍາທາງອາຍາ ແລະ ຖືກສົ່ງໄປຫາເຈົ້າໜ້າທີ່ທີ່ມີສິດອໍານາດ ສໍາລັບການກໍານົດຕົວ ຢ່າງເປັນທາງການ.

## ຂໍ້ສະເໜີແນະນໍາ 15: ເສີມສ້າງຄວາມເຂົ້າໃຈກ່ຽວກັບຄວາມຍິນຍອມຂອງຜູ້ຖືກເຄາະຮ້າຍ ທີ່ບໍ່ກ່ຽວຂ້ອງກັບການຄ້າມະນຸດ, ໂດຍນໍາເອົາຫຼັກການບໍ່ລົງໂທດໄປນໍາໃຊ້.

ການໂຕ້ຖຽງທີ່ວ່າ ຜູ້ຖືກເຄາະຮ້າຍ ມີຄວາມພໍໃຈ ກະທໍາຜິດ ຈະຕ້ອງບໍ່ຖືກນໍາໃຊ້ ໃນການປະຕິເສດ ຜູ້ຖືກເຄາະຮ້າຍ ບໍ່ໃຫ້ເຂົ້າເຖິງ ການປົກປ້ອງ ຈາກການລົງໂທດ. ເມື່ອບຸກຄົນໃດໜຶ່ງ ມີຕົວແທນ ຢ່າງເຕັມຕົວ ສໍາລັບ ການກະທໍາຂອງຜູ້ກ່ຽວ, ແນ່ນອນ, ຜູ້ກ່ຽວຈະມີຄວາມຮັບຜິດຊອບ ຕໍ່ ການກະທໍາຜິດ. ເຖິງແນວໃດກໍ່ຕາມ, ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ຕາມຄໍານິຍາມ ແມ່ນເປັນບຸກຄົນ ທີ່ຄວາມຍິນຍອມ ຂອງຕົນ ຖືກທໍາລາຍ ໂດຍ ການນໍາໃຊ້ ວິທີການຂອງຜູ້ຄ້າມະນຸດ, ຕາມທີ່ໄດ້ກໍານົດໄວ້ ໃນມາດຕາ 3(b) ຂອງ ອະນຸສັນຍາ ວ່າດ້ວຍການຄ້າມະນຸດ ແລະ ມາດຕາ 2(b) ຂອງ ACTIP. ດັ່ງນັ້ນ, ຄວາມຍິນຍອມ ຂອງ ຜູ້ຖືກເຄາະຮ້າຍ ໃນການກະທໍາຜິດ ບໍ່ຄວນ

166 ເອກອັກຄະລັດຖະທູດທີ່ໄດ້ຮັບມອບໝາຍໜ້າທີ່ພິເສດ, ທ່ານ John Cotton Richmond, ເວົ້າຢູ່ໃນ ການສົນທະນາ ຂອງ ຄະນະກໍາມະການຄວາມຍຸຕິທໍາ ຂອງ ຜູ້ລອດຊີວິດ, ທ່ານ Dressember ແລະ ທ່ານ Karana Rising, 7ໂມງແລງ ET, 30 ເມສາ 2021. ເອກະສານບັນທຶກ ຂອງຜູ້ຂຽນ.

ຖືກພິຈາລະນາວ່າມີຄວາມກ່ຽວຂ້ອງກັນ ເມື່ອຜູ້ຄ້າມະນຸດ ໄດ້ໃຊ້ວິທີການ ຂົ່ມຂູ່ ຫຼື ນຳໃຊ້ກຳລັງ ຫຼື ຮູບແບບອື່ນໆ ຂອງການບີບບັງຄັບ, ການລັກພາຕົວ, ການສໍ້ໂກງ, ການຫຼອກລວງ, ການລ່ວງລະເມີດອຳນາດ ຫຼື ຕຳແໜ່ງທີ່ມີຈຸດອ່ອນ, ຫຼື ມອບໃຫ້ ຫຼື ໄດ້ຮັບ ການຊຳລະເງິນ ຫຼື ຜົນປະໂຫຍດ ຕໍ່ ບຸກຄົນທີ່ມີການຄວບຄຸມຜູ້ຖືກເຄາະຮ້າຍ, ສຳລັບຈຸດປະສົງ ທີ່ຈະເຮັດໃຫ້ເຂົາເຈົ້າ ກະທຳຜິດ ຢູ່ໃນເຫດການ.

ເຈົ້າໜ້າທີ່ປະຕິບັດຄວາມຍຸຕິທຳທາງອາຍາ ແລະ ໂດຍສະເພາະ ແມ່ນໄອຍະການ ທີ່ອາດຈະດຳເນີນການຕັດສິນວ່າໄດ້ກະທຳຜິດ ຕໍ່ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ສຳລັບຄວາມຜິດ ທີ່ເຂົາເຈົ້າໄດ້ກະທຳ ຍ້ອນເປັນຜົນໂດຍກົງມາຈາກ ການຖືກຄ້າມະນຸດ, ຄວນຈະໄດ້ຮັບ ຂໍ້ມູນ ແລະ ຝຶກອົບຮົມ ກ່ຽວກັບ ບົດບາດ ຂອງຄວາມບໍ່ກ່ຽວຂ້ອງກັນ ຂອງ ການຍິນຍອມ ໃນການຄ້າມະນຸດ ເມື່ອມີການນຳໃຊ້ວິທີການຕ່າງໆ, ເພື່ອໃຫ້ເຂົ້າໃຈການກະທຳຜິດ ຂອງຜູ້ຖືກເຄາະຮ້າຍ ໃນການຄ້າມະນຸດ ໃຫ້ດີຂຶ້ນ.[167]

## 3.4 ການປົກປ້ອງ ທາງກົດໝາຍ

### ສະເໜີແນະນຳ 16: ຮ່າງ ຫຼື ປັບປຸງກົດໝາຍ ເພື່ອກຳນົດການປົກປ້ອງຕາມກົດໝາຍທີ່ຊັດເຈນ ເພື່ອໃຫ້ມີຜົນຕໍ່ກັບຫຼັກການບໍ່ລົງໂທດ.

ການປະກາດໃຊ້ ບັນດາຂໍ້ກຳນົດກົດໝາຍ ທີ່ຈະແຈ້ງ ແລະ ຊັດເຈນ ແມ່ນເປັນ ຫຼັກການປະຕິບັດທີ່ດີ ທີ່ຖືກຮັບຮູ້ສຳລັບຈັດຕັ້ງປະຕິບັດ ຫຼັກການການບໍ່ລົງໂທດ.[168] ໃນຂະນະທີ່ ການປົກປ້ອງທົ່ວໄປ ໃນທາງກົດໝາຍ, ເຊັ່ນ: ການບັງຄັບ ແລະ ຄວາມຈຳເປັນ, ເປັນໂຈດ ໃນການປົກປ້ອງ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ຈາກການລົງໂທດ, ມັນຖືກຈຳກັດໃຫ້ນຳໃຊ້ ສະເພາະແຕ່ ເມື່ອຜູ້ຖືກເຄາະຮ້າຍ ຖືກພິຈາລະນາຄະດີໃນສານເທົ່ານັ້ນ. ຂໍ້ກຳນົດການບໍ່ລົງໂທດ ທີ່ມີການຢືນຢັນ ມີຜົນນຳໃຊ້ ເພື່ອປົກປ້ອງ ຜູ້ຖືກເຄາະຮ້າຍ ຈາກການຖືກນຳໄປດຳເນີນຄະດີຢູ່ສານ ຂັ້ນຕົ້ນ. ນອກເໜືອຈາກນັ້ນ, ການປົກປ້ອງ ທົ່ວໄປ ໃນທາງກົດໝາຍ ອາດຈະຜ່ອນຜັນ ການລົງໂທດ ຫຼາຍກວ່າທີ່ຈະສົ່ງຜົນເຮັດໃຫ້ຜູ້ຖືກກ່າວຫາ ທີ່ຖືກຈັບ, ຕັ້ງຂໍ້ຫາ ແລະ ຖືກນຳໄປພິຈາລະນາຄະດີໃນສານ ແບບບໍ່ເປັນທຳ ພົ້ນຈາກໂທດ: ຊຶ່ງຕາມປະສົບການຂອງ ເຂົາເຈົ້າເອງ ແມ່ນເປັນການລົງໂທດ ທີ່ຂັດກັບຫຼັກການການບໍ່ລົງໂທດ.

ສະນັ້ນ ຜູ້ສ້າງນິຕິກຳ ຄວນໃຫ້ການພິຈາລະນາ ຮ່າງ ຫຼື ປັບປຸງ ຂໍ້ກຳນົດກົດໝາຍ ທີ່ຈະແຈ້ງ. ຢູ່ໃນປະເທດ ທີ່ມີການດຳເນີນຄະດີແບບບັງຄັບ, ກົດໝາຍ ຄວນໄດ້ຮັບການປັບປຸງ ເພື່ອຮຽກຮ້ອງໃຫ້ມີ ການບໍ່ດຳເນີນຄະດີ ຕໍ່ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ຫຼື ຢຸດຕິການດຳເນີນຄະດີ ໃນຂັ້ນຕົ້ນ. ຢູ່ໃນປະເທດ ທີ່ມີການດຳເນີນຄະດີ ຕາມດູນພິນິດ, ກົດໝາຍ ຄວນຮັບປະກັນວ່າ ໄອຍະການ ບໍ່ດຳເນີນຄະດີ, ຫຼື ຢຸດຕິ ການດຳເນີນຄະດີ ທີ່ໄດ້ເລີ່ມແລ້ວ ໂດຍທັນທີ.

---

167 ແຫຼ່ງຂໍ້ມູນທີ່ແນະນຳ: *ເອກະສານກ່ຽວກັບເລື້ອງຕ່າງໆ: ບົດບາດ ຂອງ 'ຄວາມຍິນຍອມ' ຢູ່ໃນອະນຸສັນຍາ ວ່າດ້ວຍ ການຄ້າມະນຸດ* (UNODC, ປີ 2014) ມີຢູ່ທີ່: https://www.unodc.org/documents/human-trafficking/2014/UNODC_2014_Issue_Paper_Consent.pdf

168 *ຄຳແນະນຳ ກ່ຽວກັບ ບັນຫາ ການຕອບສະໜອງ ຄວາມຍຸຕິທຳ ທາງອາຍາ ທີ່ເໝາະສົມ ຕໍ່ ຜູ້ຖືກເຄາະຮ້າຍ ທີ່ຖືກບັງຄັບໃຫ້ກະທຳຜິດ ຍ້ອນເປັນຜົນມາຈາກການທີ່ເຂົາເຈົ້າ ຖືກຄ້າມະນຸດ: ເອກະສານຄວາມເປັນມາ ຖືກກະກຽມ ໂດຍ ກອງເລຂາ ຂອງ ກຸ່ມປະຕິບັດງານ ກ່ຽວກັບ ການຄ້າມະນຸດ,* ນະຄອນວຽນນາ 10 ແລະ 11 ກັນຍາ 2020, ເອກະສານ ຂອງ UN CTOC/COP/WG.4/2020/2 (15 ມິຖຸນາ 2020), ວັກ 46.

**ຫ້ອງທີ 10: ຮູບແບບຂໍ້ກຳນົດຕາມກົດໝາຍ ໃນຫຼັກການບໍ່ລົງໂທດ**

**ຮູບແບບການບັງຄັບ (Compulsion Model)**

ບຸກຄົນໜຶ່ງ ແມ່ນຈະບໍ່ມີຄວາມຜິດ ຈາກການກະທຳຜິດ, ຖ້າຫາກວ່າ:

(a) ເຂົາເຈົ້າໄດ້ລົງມືກະທຳການ ທີ່ກໍ່ໃຫ້ເກີດ ການກະທຳຜິດ ເນື່ອງຈາກວ່າ ເຂົາເຈົ້າໄດ້ຖືກບັງຄັບໃຫ້ເຮັດ ແລະ ການບັງຄັບ ແມ່ນເປັນເນື່ອງມາຈາກການຄ້າມະນຸດ; ຫຼື

(b) ການກະທຳ ທີ່ກໍ່ໃຫ້ເກີດເປັນ ການກະທຳຜິດ ທີ່ໄດ້ຖືກກະທຳ ຍ້ອນເປັນຜົນໂດຍກົງມາຈາກ ສະຖານະການ ທີ່ເຂົາເຈົ້າເປັນຜູ້ຖືກຄ້າມະນຸດ.

**ຮູບແບບຕາມສາເຫດ (Causation Model)**

**(UNODC)**

ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ຈະບໍ່ຮັບຜິດຊອບ ທາງອາຍາ ຫຼື ບໍລິຫານ ຫຼື ຮັບຜິດຊອບ ພາຍໃຕ້ ກົດໝາຍແພ່ງ [ຖືກລົງໂທດ] [ຖືກຄຸມຂັງ, ຖືກປັບໄໝ ຫຼື ບໍ່ດັ່ງນັ້ນ ກໍຖືກລົງໂທດ ຢ່າງບໍ່ເໝາະສົມ] ສຳລັບການກະທຳຜິດ [ການກະທຳຜິດກົດໝາຍ] ທີ່ເຂົາເຈົ້າໄດ້ກະທຳ, ໃນຂອບເຂດທີ່ ການມີສ່ວນຮ່ວມດັ່ງກ່າວ ເປັນຜົນໂດຍກົງ ມາຈາກ ສະຖານະການ ທີ່ເຂົາເຈົ້າ ເປັນຜູ້ຖືກຄ້າມະນຸດ.

ຂໍ້ກຳນົດ ຂອງມາດຕານີ້ ຈະບໍ່ມີການລຳອຽງ ຕໍ່ກັບ ການປ້ອງກັນທົ່ວໄປ ທີ່ມີຢູ່ໃນກົດໝາຍ ຕໍ່ກັບ ຜູ້ຖືກເຄາະຮ້າຍ.[169]

**(ຜູ້ລາຍງານພິເສດ)**

ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ຈະບໍ່ຮັບຜິດຊອບ ພາຍໃຕ້ ກົດໝາຍອາຍາ, ແພ່ງ ຫຼືບໍລິຫານ ສຳລັບ ການກະທຳຜິດກົດໝາຍ ຫຼື ການກະທຳຜິດ ໃນການເຂົ້າອອກເມືອງ ທີ່ເຂົາເຈົ້າໄດ້ເຮັດ, ໃນຂອບເຂດທີ່ ການມີສ່ວນຮ່ວມດັ່ງກ່າວ ເປັນຜົນໂດຍກົງ ມາຈາກ ສະຖານະການ ທີ່ເຂົາເຈົ້າ ເປັນຜູ້ຖືກຄ້າມະນຸດ.

ຜູ້ຖືກເຄາະຮ້າຍ ຂອງການຄ້າມະນຸດທີ່ເປັນເດັກນ້ອຍ ຈະບໍ່ຖືກດຳເນີນຄະດີ ຫຼື ລົງໂທດ ສຳລັບການກະທຳຜິດກົດໝາຍ ທີ່ກ່ຽວຂ້ອງເຖິງ ການຄ້າມະນຸດ ກັບເຂົາເຈົ້າ.[170]

---

169 *ຂໍ້ກຳນົດນິຕິກຳຕົວແບບ ຕ້ານ ການຄ້າມະນຸດ,* (ອົງການສະຫະປະຊາຊາດ, ນະຄອນວຽນນາ, ປີ 2020) 44. ໃຫ້ເບິ່ງຕື່ມ ມາດຕາ 10 *ຂອງກົດໝາຍຕົວແບບ ຕ້ານ ການຄ້າມະນຸດ* (UNODC, 2009) ໜ້າ.40-42

170 *ຄວາມສຳຄັນ ຂອງ ການຈັດຕັ້ງປະຕິບັດ ຂໍ້ກຳນົດ ວ່າດ້ວຍ ການບໍ່ລົງໂທດ: ພັນທະໃນການປົກປ້ອງ ຜູ້ຖືກເຄາະຮ້າຍ,* ທ່ານ Maria Grazia Giammarinaro, ຜູ້ລາຍງານພິເສດ ກ່ຽວກັບ ການຄ້າມະນຸດ, ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ, ອົງການສະຫະປະຊາຊາດ, ນະຄອນເຈັນນີວາ, 30 ມິຖຸນາ 2020, 5 ທີ່ [29]

ຫຼັກການການບໍ່ລົງໂທດ ແມ່ນມີຜົນນຳໃຊ້ກັບ ຜູ້ຖືກເຄາະຮ້າຍໝົດທຸກຄົນ ບົນພື້ນຖານການບໍ່ຈຳແນກ, ແລະ ບໍ່ສົນວ່າ ເຂົາເຈົ້າຈະຕົກຢູ່ໃນການຄ້າມະນຸດປະເພດໃດ, ຫຼືເຂົາເຈົ້າໄດ້ກະທຳຜິດປະເພດໃດ ທີ່ເປັນຜົນມາຈາກ ການຄ້າມະນຸດ.ເຖິງແນວໃດກໍ່ຕາມ, ໃນຄວາມເປັນຈິງແລ້ວ, ຄວາມຜິດ ຂອງຜູ້ຖືກເຄາະຮ້າຍ ຍິ່ງຮ້າຍແຮງຂຶ້ນເທົ່າໃດ, ແລະ ວິທີການ ທີ່ຜູ້ຄ້າມະນຸດນຳໃຊ້ ຍິ່ງລະອຽດອ່ອນຫຼາຍເທົ່າໃດ, ຍິ່ງເຮັດໃຫ້ຫຼັກການການບໍ່ລົງໂທດ ເພື່ອປົກປ້ອງຜູ້ຖືກເຄາະຮ້າຍ ຈາກການລົງໂທດ ເບິ່ງຈະມີຜົນນຳໃຊ້ໜ້ອຍລົງເທົ່ານັ້ນ. ຢູ່ໃນບາງປະເທດ, ບົດບັນຍັດ ວ່າດ້ວຍການບໍ່ລົງໂທດ ອາດຈະມີຜົນນຳໃຊ້ ສະເພາະກັບ ການກະທຳຜິດ ໃນຂອບເຂດຈຳກັດເທົ່ານັ້ນ, ຍົກຕົວຢ່າງເຊັ່ນ ການເຂົ້າ-ອອກເມືອງ ຫຼື ການກະທຳຜິດທີ່ກ່ຽວຂ້ອງກັບໂສເພນີ.[171] ດັ່ງນັ້ນ, ບົດບັນຍັດ ອາດຈະປົກປ້ອງ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈຳນວນໜຶ່ງ ຈາກການລົງໂທດ ສຳລັບການກະທຳຜິດບາງຢ່າງ (ເຊັ່ນ: ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ທີ່ຖືກຂູດຮີດທາງເພດ ສຳລັບການກະທຳຜິດ ທີ່ກ່ຽວຂ້ອງກັບການຄ້າປະເວນີ), ແຕ່ ອາດຈະບໍ່ຊ່ວຍ ການປ້ອງກັນເຂົາເຈົ້າ ຕໍ່ກັບ ອາຊະຍາກຳອື່ນໆ (ເຊັ່ນ: ການລັກຂະໂມຍ ຫຼື ການກະທຳຜິດທີ່ກ່ຽວຂ້ອງກັບຢາເສບຕິດ), ຫຼື ອາດຈະບໍ່ຊ່ວຍເຫຼືອ ຜູ້ຖືກເຄາະຮ້າຍຈາກ ໝົດທຸກຮູບແບບ ຂອງ ການຂູດຮີດ, ລວມທັງ ຮູບແບບທີ່ບໍ່ແມ່ນທາງເພດ.

## ແຜນວາດທີ 3: ການຈັດຕັ້ງປະຕິບັດ ຫຼັກການ ການບໍ່ລົງໂທດ

### ຫຼັກການ ການບໍ່ລົງໂທດ ຄວນຈະມີຜົນນຳໃຊ້ກັບ

**ຜູ້ຖືກເຄາະຮ້າຍໝົດທຸກຄົນ...**

- ຜູ້ໃຫຍ່
- ເດັກນ້ອຍ
- ຜູ້ຊາຍ
- ຜູ້ຍິງ
- ອື່ນໆ

**ການຄ້າມະນຸດ ໝົດທຸກປະເພດ**

- ການຂູດຮີດທາງເພດ
- ການຂູດຮີດທີ່ບໍ່ແມ່ນທາງເພດ
- ແຮງງານທີ່ຖືກບັງຄັບ
- ອາຊະຍາກຳທີ່ຖືກບັງຄັບ
- ການຄ້າມະນຸດ ຢູ່ໃນການກໍການຮ້າຍ ແລະ ການກະທຳຜິດ ທີ່ກ່ຽວຂ້ອງກັບຂໍ້ຂັດແຍ່ງ
- ອື່ນໆ

**ສຳລັບໝົດທຸກການກະທຳຜິດ**

- ການຂູດຮີດທາງເພດ
- ການຂູດຮີດທີ່ບໍ່ແມ່ນທາງເພດ
- ແຮງງານທີ່ຖືກບັງຄັບ
- ອາຊະຍາກຳທີ່ຖືກບັງຄັບ
- ການຄ້າມະນຸດ ຢູ່ໃນການກໍການຮ້າຍ ແລະ ການກະທຳຜິດ ທີ່ກ່ຽວຂ້ອງກັບຂໍ້ຂັດແຍ່ງ
- ອື່ນໆ

....ເມື່ອສາມາດກຳນົດ ການເຊື່ອມໂຍງກັນ ລະຫວ່າງ ການຄ້າມະນຸດ ແລະ ການກະທຳຜິດ ຂອງຜູ້ຖືກເຄາະຮ້າຍ, ບົນພື້ນຖານ ຂອງການບີບບັງຄັບ ຫຼື ສາເຫດ, ທີ່ສອດຄ່ອງກັບ ບັນດາກົດໝາຍພາຍໃນ, ນະໂຍບາຍ ແລະ ຄຳໝັ້ນສັນຍາສາກົນ...

ບົດບັນຍັດຕາມລະບຽບກົດໝາຍ ຄວນນຳໃຊ້ກັບ ການກະທຳຜິດ ທາງແພ່ງ, ທາງອາຍາ, ທາງປົກຄອງ, ທາງດ້ານການເຂົ້າ-ອອກເມືອງຜິດກົດໝາຍ ຢ່າງກວ້າງຂວາງ ຫຼື ຫຼາກຫຼາຍ, ແລະ ມີຜົນນຳໃຊ້ໄດ້ກັບ ຜູ້ຖືກເຄາະຮ້າຍທັງໝົດ ບົນພື້ນຖານການບໍ່ຈຳແນກ, ແລະ ໂດຍບໍ່ໄດ້ຄຳນຶງເຖິງ ປະເພດ ຂອງການຂູດຮີດ ທີ່ເຂົາເຈົ້າໄດ້ຖືກຄ້າມະນຸດ, ແລະ ໂດຍບໍ່ໄດ້ຄຳນຶງເຖິງ ຄວາມຮ້າຍແຮງ ຫຼື ຂະໜາດ ຂອງການກະທຳຜິດ ທີ່ຕົນໄດ້ກະທຳ.172 ດ້ວຍເຫດນັ້ນ, ແຕ່ລະປະເທດ ຄວນຮັບຮູ້ ຢ່າງຈະແຈ້ງວ່າ ການຄ້າມະນຸດ ໄດ້ກາຍເປັນການບັງຄັບໃຫ້ກະທຳຜິດທາງອາຍາ ໃນຮູບແບບຂອງການຂູດຮີດ, ຫຼື ໃນກໍລະນີ ທີ່ນິຕິກຳ ໄດ້ລະບຸລາຍການ ຂອງ ການກະທຳຜິດ ທີ່ຂໍ້ກຳນົດ ຂອງນິຕິກຳ ມີຜົນນຳໃຊ້, ຊຶ່ງຄວນກຳນົດວ່າ "ຍັງມີການກະທຳຜິດອື່ນໆອີກ".[173]

---

171 ໃຫ້ເບິ່ງຕົວຢ່າງ, ທ່ານ Susan Coppedge (ອະດີດ ເອກອັກຄະລັດຖະທູດທີ່ໄດ້ຮັບມອບໝາຍໜ້າທີ່ພິເສດ ຂອງ ສະຫາລັດ, ທີ່ປຶກສາອາວຸໂສ ກັບ ທ່ານ Kreສະບັບທີin ແລະ Horst, ແລະ ທະນາຍຄວາມ ສຳລັບ Tiffany Simpson), *ຄວາມຍຸຕິທຳ ເປັນສ່ວນໜຶ່ງ ຂອງ ການພື້ນຟູ ຜູ້ຖືກເຄາະຮ້າຍ ຈາກ ການຄ້າມະນຸດ,* ເວັບໄຊ law.com, 18 ກຸມພາ 2021, https://www.law.com/dailyreportonline/2021/02/18/justice-is-a-part-of-healing-for-victims-of-human-trafficking/?slreturn=20210405034616 ໄດ້ເຂົ້າເບິ່ງ ໃນວັນທີ 5 ພຶດສະພາ 2021.

172 ໃນບັນດາຂໍ້ມູນອື່ນໆ, ໃຫ້ເບິ່ງ *ການຈັດຕັ້ງປະຕິບັດ ຫຼັກການການບໍ່ລົງໂທດ: ບົດລາຍງານ ຂອງຜູ້ລາຍງານພິເສດ ກ່ຽວກັບ ການຄ້າມະນຸດ ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ, ທ່ານ Siobhán Mullaly,* ເອກະສານ ຂອງ UN A/HRC/47/34 (17 ພຶດສະພາ 2021), ວັກ. 37.

173 *ການຈັດຕັ້ງປະຕິບັດ ຫຼັກການການບໍ່ລົງໂທດ: ບົດລາຍງານ ຂອງຜູ້ລາຍງານພິເສດ ກ່ຽວກັບ ການຄ້າມະນຸດ ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ, ທ່ານ Siobhán Mullaly,* ເອກະສານ ຂອງ UN A/HRC/47/34 (17 ພຶດສະພາ 2021) ວັກ 37 ແລະ 38.

ການນຳໃຊ້ຫຼັກການການບໍ່ລົງໂທດ ແມ່ນກະທັ່ງ ຕໍ່ກັບ ການກະທຳຜິດທີ່ຮ້າຍແຮງ ຫຼື ໜັກໜ່ວງ ແມ່ນເປັນຫຼັກການປະຕິບັດທີ່ດີທີ່ຖືກຮັບຮູ້. ດັ່ງທີ່ຜູ້ຊ່ຽວຊານທ່ານໜຶ່ງ ໃຫ້ຂໍ້ສັງເກດວ່າ:

> *ບໍ່ມີເຫດຜົນ ຢູ່ໃນຫຼັກການ ທີ່ວ່າ ເປັນຫຍັງ ພັນທະທີ່ຈະບໍ່ລົງໂທດ ຈຶ່ງບໍ່ຄວນມີຜົນນຳໃຊ້ກັບ ການກະທຳຜິດສ່ວນໃຫຍ່. ຖ້າເນື້ອແທ້ຂອງຄວາມຮັບຜິດຊອບ ແມ່ນອີງໃສ່ຄວາມຈິງທີ່ວ່າ ຜູ້ທີ່ຖືກຄ້າມະນຸດ ບໍ່ແມ່ນບຸກຄົນອິດສະຫຼະ ແລະ ຈຶ່ງບໍ່ມີທາງເລືອກທີ່ແທ້ຈິງ ຍົກເວັ້ນຈະຕ້ອງກະທຳຜິດ, ດັ່ງນັ້ນ, ເຂົາເຈົ້າຈຶ່ງບໍ່ຄວນຮັບຜິດຊອບທາງອາຍາ, ຊຶ່ງກໍເໝືອນກັນກັບບຸກຄົນໜຶ່ງ ທີ່ອາດຈະບໍ່ມີຄຮັບຜິດຊອບ ເພາະວ່າ ເຂົາເຈົ້າ ຂາດຄວາມອາດສາມາດ ໃນການຮັບຜິດຊອບຢ່າງເຕັມທີ່ ສຳລັບການກະທຳຂອງເຂົາເຈົ້າ.*[174]

ໃນການນຳໃຊ້ຫຼັກການ ໃນພາກປະຕິບັດ ຕໍ່ກັບ ການກະທຳຜິດ ທີ່ຮ້າຍແຮງ, ອະດີດຜູ້ລາຍງານພິເສດ ກ່ຽວກັບການຄ້າມະນຸດ ໄດ້ອະທິບາຍວ່າ ການອະນຸຍາດໃຫ້ນຳໃຊ້ຫຼັກການ ຢ່າງກວ້າງຂວາງ ບໍ່ໄດ້ສົ່ງຜົນເຮັດໃຫ້ມີການປົກປ້ອງ ຫຼື ຍົກເວັ້ນຈາກທຸກກໍລະນີ, ແຕ່ແມ່ນເປັນມາດຕະຖານ ຂອງການສອບສວນ:

> *ການກະທຳຜິດ ຍິ່ງຮ້າຍແຮງຂຶ້ນເທົ່າໃດ, ການສອບສວນ ຍິ່ງຈະລົງເລິກຫຼາຍຂຶ້ນເທົ່ານັ້ນ ຊຶ່ງຈຳເປັນຈະຕ້ອງໄດ້ກຳນົດສະພາບເງື່ອນໄຂ ທີ່ໄດ້ມີການກະທຳຜິດ ແລະ ກຳນົດວ່າ ສິດຕໍ່ການບໍ່ລົງໂທດ ສາມາດມີຜົນນຳໃຊ້ໄດ້ ຢ່າງຖືກຕ້ອງ ຫຼື ບໍ່. ນອກຈາກ ການປະກອບເປັນ ປະເພດ 'ການຍົກເວັ້ນ ຫຼື ການປົກປ້ອງຈາກຄວາມຜິດທຸກກໍລະນີ', ການປົກປ້ອງດັ່ງກ່າວ ຕອບສະໜອງໃຫ້ແກ່ (1) ຄວາມຈຳເປັນ ໃນການກຳນົດສະພາບການທີ່ແທ້ຈິງ ທີ່ມີການກະທຳຜິດ, (2) ເຮັດໃຫ້ຜູ້ຖືກເຄາະຮ້າຍ ສາມາດຫັນໄປສູ່ ລັກສະນະການປົກປ້ອງ ແລະ ການຊ່ວຍເຫຼືອ ຊຶ່ງເຂົາເຈົ້າມີສິດທີ່ຈະໄດ້ຮັບ ແລະ (3) ຊຸກຍູ້ໃຫ້ເກີດມີການສືບສວນ ອາຊະຍາກຳ ການຄ້າມະນຸດດຳເນີນໄປ, ທີ່ສົ່ງຜົນເຮັດໃຫ້ການດຳເນີນຄະດີ ພວກຄ້າມະນຸດເພີ່ມຂຶ້ນ ແລະ ຫຼຸດການດຳເນີນຄະດີ ຕໍ່ ຜູ້ຖືກເຄາະຮ້າຍ ຈາກການກະທຳຜິດ ທີ່ເຂົາເຈົ້າໄດ້ກະທຳ ໃນຕອນທີ່ເຂົາເຈົ້າ ຕົກຢູ່ໃນອິດທິພົນ ຫຼື ການຂູດຮີດ ຂອງຜູ້ອື່ນ. ນອກຈາກນີ້, ຫຼັກການການບໍ່ລົງໂທດ ຍັງຈະດຳເນີນການ ໂດຍບໍ່ມີການລຳອຽງ ຕໍ່ ທຸກການປ້ອງກັນ ຢູ່ໃນກົດໝາຍແຫ່ງຊາດ.*[175]

ສິ່ງສຳຄັນກໍຄືວ່າ, ການນຳໃຊ້ ຫຼັກການການບໍ່ລົງໂທດ ຕ້ອງບໍ່ມີເງື່ອນໄຂ ຕໍ່ກັບ ການດຳເນີນຄະດີ ຜູ້ທີ່ຖືກກ່າວຫາວ່າເປັນຜູ້ຄ້າມະນຸດ, ຫຼື ຕໍ່ ການຮ່ວມມືກັບ ຜູ້ຖືກເຄາະຮ້າຍ ໃນການດຳເນີນຄະດີທາງອາຍາ.[176]

## ຂໍ້ສະເໜີແນະນຳ 17: ຈັດຝຶກອົບຮົມ ແລະ ແນະນຳຜູ້ປະຕິບັດຕົວຈິງກ່ຽວກັບວິທີການສ້າງຄວາມເຊື່ອມໂຍງລະຫວ່າງການກະທຳຜິດຂອງຜູ້ຖືກເຄາະຮ້າຍ ແລະ ການຄ້າມະນຸດຂອງເຂົາເຈົ້າ.

ຢູ່ໃນຫຼາຍປະເທດ - ລວມທັງໃນພາກພື້ນອາຊຽນ - ມັນບໍ່ຈະແຈ້ງ ສຳລັບເຈົ້າໜ້າທີ່ປະຕິບັດຄວາມຍຸຕິທຳທາງອາຍາ ກ່ຽວກັບ ວິທີການສ້າງ ຄວາມເຊື່ອມໂຍງກັນ ລະຫວ່າງ ການກະທຳຜິດ ຂອງ ຜູ້ຖືກເຄາະຮ້າຍ ແລະ ການມີສ່ວນກ່ຽວຂ້ອງໃນການຄ້າມະນຸດ ຂອງຜູ້ກ່ຽວ ເພື່ອນຳໃຊ້ ຫຼັກການການບໍ່ລົງໂທດ. ລັດໄດ້ໃຊ້ວິທີການ ທີ່ແຕກຕ່າງກັນ ໂດຍທີ່ ມີບາງວິທີການ ນຳໃຊ້ຮູບແບບການບັງຄັບ (compulsion), ບາງວິທີກໍ່ໃຊ້ເຫດຜົນ (causation) ແລະ

---

174 ທ່ານ Ryszard Piotrowicz, ມາດຕາ 26, ຂໍ້ກຳນົດ ວ່າດ້ວຍການບໍ່ລົງໂທດ ຢູ່ໃນ ບົດຂຽນ ຂອງ ທ່ານ Julia Planitzer ແລະ ທ່ານ Helmut Sax (ສະບັບປັບປຸງ) *ບົດຄິດເຫັນ ກ່ຽວກັບສົນທິສັນຍາ ຂອງສະພາເອີຣົບ ກ່ຽວກັບ ການຕ້ານການຄ້າຄວາມເປັນມະນຸດ* (ທ່ານ Edward Elgar, ປີ 2020) ໜ້າ 320

175 *ຄວາມສຳຄັນ ຂອງການຈັດຕັ້ງປະຕິບັດ ຂໍ້ກຳນົດ ວ່າດ້ວຍການບໍ່ລົງໂທດ: ພັນທະໃນການປົກປ້ອງ ຜູ້ຖືກເຄາະຮ້າຍ,* ທ່ານ Maria Grazia Giammarinaro, ຜູ້ລາຍງານພິເສດ ກ່ຽວກັບການຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະເດັກນ້ອຍ, ສະຫະປະຊາຊາດ, ນະຄອນເຈັນນີວາ, 30 ມິຖຸນາ 2020, 11 ທີ່ [41]

176 ໃຫ້ເບິ່ງ: *ການຈັດຕັ້ງປະຕິບັດ ຫຼັກການການບໍ່ລົງໂທດ: ບົດລາຍງານ ຂອງ ຜູ້ລາຍງານພິເສດ ກ່ຽວກັບ ການຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, ທ່ານ Siobhán Mullaly,* ເອກະສານ ຂອງ UN A/HRC/47/34 (17 ພຶດສະພາ 2021), ວັກ. 58

ບາງເທື່ອ ກໍ່ອາດຈະນໍາໃຊ້ ການປະສົມປະສານກັນທັງສອງຢ່າງ ຫຼື ອາດໃຊ້ທັງສອງວິທີຮ່ວມກັນ ຫຼື ແຕກຕ່າງກັນ ໂດຍສິ້ນເຊີງ. ຖ້າບໍ່ສົນວ່າ ວິທີການ ຖືກປະຕິບັດ ຢູ່ໃນກົດໝາຍພາຍໃນ, ມັນເປັນສິ່ງສໍາຄັນທີ່ ເຈົ້າໜ້າທີ່ປະຕິບັດ ກົດໝາຍ ຈະຕ້ອງເຂົ້າໃຈມັນ.

**ຢູ່ໃນປະເທດ ທີ່ນໍາໃຊ້ ຮູບແບບການບັງຄັບ (compulsion) (ນັ້ນກໍຄື: ຜູ້ຖືກເຄາະຮ້າຍ ໄດ້ຖືກບັງຄັບ ໃຫ້ກະທໍາຜິດ ໂດຍຜູ້ຄ້າມະນຸດ):** ໃນກໍລະນີ ມີການນໍາໃຊ້ຮູບແບບບັງຄັບ, ມັນມີຄວາມສໍາຄັນ ສໍາລັບ ເຈົ້າໜ້າທີ່ ປະຕິບັດກົດໝາຍ ທີ່ຈະຕ້ອງເຂົ້າໃຈ ຢ່າງຄົບຖ້ວນ ຕໍ່ກັບ ວິທີການທີ່ຫຼາກຫຼາຍ ຊຶ່ງ ຄວາມສະໝັກໃຈ ຂອງຜູ້ຖືກ ເຄາະຮ້າຍ ອາດຖືກລະເມີດ ໂດຍ ຜູ້ຄ້າມະນຸດ, ລວມທັງ ຜ່ານ 'ວິທີການ'ຕ່າງໆ ທີ່ຖືກກໍານົດໄວ້ ຢູ່ໃນນິຍາມຂອງ ສາກົນ ແລະ ຂອງພາກພື້ນ ກ່ຽວກັບການຄ້າມະນຸດ, ລວມທັງ ການຂົ່ມຂູ່ ຫຼື ການໃຊ້ກໍາລັງ ຫຼື ຮູບແບບອື່ນໆ ຂອງ ການບີບບັງຄັບ, ການລັກພາຕົວ, ການສໍ້ໂກງ, ການຫຼອກລວງ, ການສວຍໃຊ້ອໍານາດ ຫຼື ຕໍາແໜ່ງ ທີ່ເປັນຈຸດອ່ອນ ຫຼື ການໃຫ້ ຫຼື ການຮັບເງິນ ຫຼື ຜົນປະໂຫຍດ ແກ່ ຜູ້ທີ່ຄວບຄຸມ ຜູ້ຖືກເຄາະຮ້າຍ.[177] ການປ້ອງກັນ ໃນທາງກົດໝາຍ ຄວນມີຜົນນໍາໃຊ້ກັບ ເດັກນ້ອຍທຸກຄົນ ໂດຍບໍ່ສົນວ່າ 'ວິທີການ' ໄດ້ຖືກນໍາໃຊ້ ໃນການຄ້າເຂົາເຈົ້າ ຫຼື ບໍ່. ຕົວແບບ ແມ່ນກວ້າງກວ່າ ການປ້ອງກັນການຂົ່ມເຫັງ ແບບດັ້ງເດີມ ແລະ ບໍ່ຄວນຮຽກຮ້ອງໃຫ້ມີ ຫຼັກຖານອັນດຽວກັນ, ເນື່ອງ ຈາກວ່າ ມາດຕະຖານດັ່ງກ່າວ ເມື່ອມີຜົນບັງຄັບໃຊ້ ອາດຈະປະຕິເສດ ຜູ້ຖືກເຄາະຮ້າຍ ຕໍ່ກັບ ການປົກປ້ອງ ຂອງ ຫຼັກການ.178 ອະດີດຜູ້ລາຍງານພິເສດ ຂອງ ອົງການສະຫະປະຊາຊາດ ກ່ຽວກັບການຄ້າມະນຸດ, ໂດຍສະເພາະແມ່ນ ແມ່ຍິງ ແລະ ເດັກນ້ອຍ, ໄດ້ກ່າວວ່າ ຂອບເຂດ ໃນການນໍາໃຊ້ກັບ ການກະທໍາຜິດ 'ບໍ່ຄວນຮຽກຮ້ອງໃຫ້ມີຫຼັກຖານ ທີ່ ຈະແຈ້ງ', ແຕ່ໃຫ້ມີພື້ນຖານ ທີ່ສົມເຫດສົມຜົນ ທີ່ຈະເຊື່ອວ່າ ການຄ້າມະນຸດ ແມ່ນກໍາລັງເກີດຂຶ້ນຢູ່.'[179]

**ຢູ່ໃນປະເທດ ທີ່ນໍາໃຊ້ ຮູບແບບຕາມ 'ສາເຫດ (causation)' (ນັ້ນກໍຄື ການກະທໍາຜິດ ຂອງ ຜູ້ຖືກເຄາະ ຮ້າຍ ແມ່ນຜົນໂດຍກົງ ຈາກການຖືກຄ້າມະນຸດ):** ຢູ່ໃນປະເທດ ທີ່ນໍາໃຊ້ ຮູບແບບຕາມ ສາເຫດ (causation), ເຈົ້າໜ້າທີ່ ຄວນຮັບປະກັນວ່າ ຄວາມເຊື່ອມໂຍງກັນ ລະຫວ່າງ ການຄ້າມະນຸດ ແລະ ການກະທໍາຜິດ ແມ່ນເປັນທີ່ ເຂົ້າໃຈ ຢ່າງກວ້າງຂວາງ ຜ່ານທາງ ຄວາມເຂົ້າໃຈ ທີ່ໄດ້ຮັບຂໍ້ມູນ ກ່ຽວກັບ ບົດບາດ ທີ່ຕໍ່ເນື່ອງ ຊຶ່ງມີຄວາມຢ້ານກົວ ແລະ ມີມິນທິນ, ເພື່ອຮັບປະກັນວ່າ ຄໍາສັບຕ່າງໆ ເຊັ່ນ 'ຜົນສະທ້ອນໂດຍກົງ' ຫຼື 'ຜົນໄດ້ຮັບໂດຍກົງ' ແລະ 'ກ່ຽວຂ້ອງ ກັບ' ແມ່ນເປັນທີ່ເຂົ້າໃຈ ຢ່າງຊັດເຈນ ແລະ ກວ້າງຂວາງ. ຄໍາຖາມທີ່ອາດຈະເກີດຂຶ້ນໃນໄລຍະສັ້ນໆ ແມ່ນກ່ຽວກັບ ວ່າ ແມ່ນຫຼືບໍ່ ແລະ ເມື່ອໃດ ທີ່ຊ່ອງທາງເວລາ ຫຼື ການປ່ຽນແປງສະພາບການ ຈະແຍກການເຊື່ອມໂຍງກັນ ລະຫວ່າງ ການກະທໍາຜິດທາງອາຍາ ທີ່ໄດ້ຖືກກ່າວຫາ ແລະ ການຄ້າມະນຸດຂອງບຸກຄົນໜຶ່ງ. ຄວາມເຂົ້າໃຈຢ່າງກວ້າງຂວາງບໍ່ ຮຽກຮ້ອງໃຫ້ມີການເຊື່ອມໂຍງກັນ 'ໂດຍກົງ ແລະ ທັນທີ', ແຕ່ໃຫ້ຮັບຮູ້ວ່າ ການເຊື່ອມໂຍງ ອາດຈະຍັງມີຢູ່ລະຫວ່າງ ການຄ້າມະນຸດ ແລະ ການກະທໍາຜິດ ທີ່ຖືກກ່າວຫາ, ຍົກຕົວຢ່າງ ຍ້ອນຄວາມຢ້ານກົວ ແລະ ບັນຫາການບີບບັງຄັບ ທີ່ມີຢ່າງຕໍ່ເນື່ອງ.[180] ໃນທາງກົງກັນຂ້າມ, ຜູ້ຖືກເຄາະຮ້າຍ ທີ່ຍັງຕົກຢູ່ໃນສະພາບການ ຂອງການຄ້າມະນຸດ ອາດຈະ ກະທໍາຜິດ ໂດຍທີ່ບໍ່ກ່ຽວຂ້ອງກັບ ການຄ້າມະນຸດແລະ ດັ່ງນັ້ນ ຈຶ່ງບໍ່ນອນຢູ່ໃນຂອບເຂດ ຂອງການປົກປ້ອງ ຈາກ ການລົງໂທດ.

---

177 ໃຫ້ເບິ່ງ ອະນຸສັນຍາ ວ່າດ້ວຍການຄ້າມະນຸດ, ມາດຕາ 3(a) ແລະ ACTIP 2(a). ຍັງໃຫ້ຂໍ້ສັງເກດວ່າ ການການ ໃນການພິສູດຄວາມຜິດທາງອາຍາ ຂອງ ພວກຄ້າມະນຸດ, ການຍິນຍອມ ຂອງຜູ້ຖືກເຄາະຮ້າຍ ແມ່ນບໍ່ກ່ຽວຂ້ອງກັນ ເມື່ອໜຶ່ງໃນວິທີການເຫຼົ່ານີ້ ຖືກສ້າງຂຶ້ນ, ໃນກໍລະນີ ຂອງຜູ້ຖືກເຄາະຮ້າຍ ທີ່ເປັນຜູ້ໃຫຍ່. (ມາດຕາ 3(b) ຂອງ ອະນຸສັນຍາ ວ່າດ້ວຍການຄ້າມະນຸດ; ແລະ ມາດຕາ 2(b) ຂອງ ACTIP) ແລະ ທຸກຄັ້ງ ຢູ່ໃນກໍລະນີ ຂອງເດັກນ້ອຍ, ສໍາລັບຜູ້ທີ່ ບໍ່ຮຽກຮ້ອງ ໃຫ້ມີ ອົງປະກອບ ຂອງວິທີການ (ມາດຕາ 3(c) of the ອະນຸສັນຍາ ວ່າດ້ວຍການຄ້າມະນຸດ ແລະ ມາດຕາ 2(c) of ACTIP).

178 *ຄໍາແນະນໍາ ກ່ຽວກັບ ບັນຫາ ການຕອບສະໜອງຄວາມຍຸຕິທໍາທາງອາຍາ ທີ່ເໝາະສົມ ແກ່ ຜູ້ຖືກເຄາະຮ້າຍ ທີ່ໄດ້ຖືກບັງຄັບ ໃຫ້ກະທໍາຜິດ ຍ້ອນເປັນຜົນ ມາຈາກ ການທີ່ເຂົາເຈົ້າຖືກຄ້າມະນຸດ: ເອກະສານຄວາມເປັນມາ ທີ່ຖືກກະກຽມ ໂດຍ ກອງເລຂາ ຂອງ ກຸ່ມປະຕິບັດງານ ກ່ຽວກັບ ການຄ້າມະນຸດ,* ນະຄອນວຽນນາ 10 ແລະ 11 ກັນຍາ 2020, ເອກະສານ ຂອງ UN CTOC/COP/WG.4/2020/2 (15 ມິຖຸນາ 2020), ວັກ 60.

179 *ການຄ້າມະນຸດ, ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ,* ບົດລາຍງານ ຂອງ ຜູ້ລາຍງານພິເສດ ກ່ຽວກັບ ການຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, ເອກະສານ ຂອງ UN A/HRC/44/45 (6 ເມສາ 2020) [36]

180 ທ່ານ Ryszard Piotrowicz, ພວກເຮົາ ສາມາດ ຜັນຂະຫຍາຍ ຫຼັກການການບໍ່ລົງໂທດ ອອກຫຼາຍປານໃດ? La Strada, 21 ເມສາ 2021, https://www.lastradainternທີional.org/blog/how-far-can-we-extend-the-non-punishment-principle/

ບໍ່ວ່າຈະຢູ່ໃນກົດໝາຍ ຫຼື ເອກະສານຄໍາແນະນໍາ ທີ່ຄັດຕິດມາພ້ອມກົດໝາຍ, ພື້ນຖານ ທີ່ບິດບັນຍັດກົດໝາຍ ແລະ ການປ້ອງກັນສາມາດຖືກຮຽກຮ້ອງໄດ້ ຄວນຈະຖືກອະທິບາຍໃຫ້ ເຈົ້າໜ້າທີ່ປະຕິບັດກົດໝາຍຜ່ານທາງຄໍາແນະນໍາທີ່ຈະແຈ້ງ ແລະ ສາມາດເຂົ້າເຖິງໄດ້. ລັດຄວນພັດທະນາ ແລະ ເຜີຍແຜ່ຄໍາແນະນໍາ, ລວມທັງຜ່ານທາງກິດຈະກໍາການຝຶກອົບຮົມ ແລະ ສ້າງຄວາມອາດສາມາດ, ເພື່ອແຈ້ງໃຫ້ເຈົ້າໜ້າທີ່ປະຕິບັດຄວາມຍຸຕິທໍາທາງອາຍາໄດ້ຮູ້ກ່ຽວກັບບົດບັນຍັດ ວ່າດ້ວຍການບໍ່ລົງໂທດຢູ່ໃນປະເທດຂອງເຂົາເຈົ້າວ່າມັນເວົ້າເຖິງຫຍັງ ແລະ ມີຄວາມໝາຍແນວໃດ, ແລະ ອະທິບາຍຢ່າງຈະແຈ້ງກ່ຽວກັບວິທີການນໍາເອົາຫຼັກຖານມາກໍານົດວ່າການກະທໍາຜິດຂອງຜູ້ຖືກເຄາະຮ້າຍມີຄວາມເຊື່ອມໂຍງ ຫຼື ບໍ່ເຊື່ອມໂຍງກັບການຄ້າມະນຸດ.

## ຂໍ້ສະເໜີແນະນໍາ 18: ຈັດຝຶກອົບຮົມ ແລະ ຄໍາແນະນໍາໃຫ້ແກ່ຜູ້ປະຕິບັດຕົວຈິງໃນຂະແໜງຍຸຕິທໍາທາງອາຍາ ໃນການນໍາໃຊ້ການປົກປ້ອງທົ່ວໄປ ສໍາລັບຜູ້ຖືກເຄາະຮ້າຍ ທີ່ໄດ້ກະທໍາຜິດ ເນື່ອງຈາກຜົນສະທ້ອນໂດຍກົງຈາກການຄ້າມະນຸດ.

ໂດຍສະເພາະ ຢູ່ໃນປະເທດ ທີ່ບໍ່ລວມເອົາ ບົດບັນຍັດ ທີ່ເວົ້າສະເພາະເຖິງ ການບໍ່ລົງໂທດ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ຢູ່ໃນນິຕິກໍາ ຂອງເຂົາເຈົ້າ, ເຈົ້າໜ້າທີ່ປະຕິບັດຄວາມຍຸຕິທໍາທາງອາຍາ ຕ້ອງອີງໃສ່ ການປ້ອງກັນທົ່ວໄປ ທີ່ຖືກກໍານົດໄວ້ ຢູ່ໃນນິຕິກໍາທາງອາຍາຂອງເຂົາເຈົ້າ. ການປ້ອງກັນທີ່ອາດຈະກ່ຽວຂ້ອງກັບການປ້ອງກັນຜູ້ໄດ້ຮັບເຄາະຮ້າຍ ຈາກການຄ້າມະນຸດ ລວມມີ ການຂົ່ມຂູ່, ການກັກຂັງ, ຄວາມຈໍາເປັນ ແລະ ການປ້ອງກັນຕົວເອງ.

ມາດຕະຖານທີ່ເຄັ່ງຄັດ ໃນການນໍາໃຊ້ ການປ້ອງກັນທົ່ວໄປ ຕໍ່ກັບ 'ການຂົ່ມຂູ່' ແລະ 'ຄວາມຈໍາເປັນ' ອາດຈະບໍ່ສາມາດ ກວມເອົາ ຄວາມສະຫຼັບສັບຊ້ອນ ຂອງ ການຄ້າມະນຸດ ແລະ ພິສູດວ່າ ເປັນອຸປະສັກ ຕໍ່ ການບໍ່ລົງໂທດ.181 ຍົກຕົວຢ່າງ, ມັນອາດຈະເວົ້າເຖິງສະເພາະ ສະຖານະການ ເມື່ອຜູ້ຖືກເຄາະຮ້າຍ ລົງມືປະຕິບັດ ຍ້ອນຖືກຂົ່ມຂູ່ ແບບຮ້າຍແຮງ ຫຼື ໃກ້ຈະເກີດຂຶ້ນແລ້ວ, ແຕ່ບໍ່ໄດ້ເວົ້າເຖິງ ວິທີການທີ່ລະອຽດອ່ອນຂຶ້ນ ທີ່ຜູ້ຄ້າມະນຸດນໍາໃຊ້ ເພື່ອບີບບັງຄັບ ແລະ ຫຼອກລວງ ຜູ້ຖືກເຄາະຮ້າຍ ຂອງຕົນ, ຊຶ່ງຂຶ້ນກັບວ່າ ການປ້ອງກັນການຂົ່ມເຫັງ ຈະຖືກສະແດງອອກ ແລະ ຕີຄວາມໝາຍແນວໃດ. ພາລະ ຂອງການພິສູດ ອາດຈະຢູ່ກັບ ຜູ້ຖືກເຄາະຮ້າຍ ທີ່ຈະພິສູດ ການປ້ອງກັນ ດ້ວຍການນໍາເອົາຫຼັກຖານ ກ່ຽວກັບການຂົ່ມຂູ່ເຂົ້າມາ.[182] ດັ່ງນັ້ນ, ການປ້ອງກັນເຫຼົ່ານີ້ ແມ່ນຈະມີຂໍ້ຈໍາກັດ ຫຼາຍກ່ວາ ຫຼັກການ ການບໍ່ລົງໂທດ ທີ່ມີຄວາມກວ້າງຂວາງຫຼາຍກວ່າ.[183] ຍ້ອນແນວນັ້ນ, ການປ້ອງກັນທົ່ວໄປ ຄວນຈະຖືກຕີຄວາມໝາຍຢ່າງກວ້າງຂວາງ ຢູ່ໃນສະພາບເງື່ອນໄຂ ຂອງການຄ້າມະນຸດ, ເພື່ອຮັບປະກັນວ່າ ມີການລວມເອົາ ຮູບແບບການບີບບັງຄັບ ທີ່ມີຄວາມລະອຽດອ່ອນ (ລວມທັງ 'ວິທີການ' ທັງໝົດ ທີ່ຖືກກໍານົດໄວ້ ຢູ່ໃນຄໍານິຍາມ ຂອງການຄ້າມະນຸດ ໃນມາດຕາ 3 ຂອງ ອະນຸສັນຍາ ວ່າດ້ວຍການຄ້າມະນຸດ ແລະ ມາດຕາ 2(a) ຂອງ ACTIP).[184] ໃນກໍລະນີຂອງເດັກນ້ອຍ, ການປ້ອງກັນຕາມກົດໝາຍ ຄວນມີຜົນນໍາໃຊ້ກັບເດັກນ້ອຍທຸກຄົນ ໂດຍບໍ່ສົນວ່າ ໄດ້ນໍາໃຊ້ «ວິທີການ» ໃດໜຶ່ງ ຫຼື ບໍ ໃນການຄ້າມະນຸດ .

ເຈົ້າໜ້າທີ່ປະຕິບັດຄວາມຍຸຕິທໍາທາງອາຍາ ຄວນໄດ້ຮັບການສະໜັບສະໜູນ ໂດຍມີການຝຶກອົບຮົມ ແລະ ຄໍາແນະນໍາ ກ່ຽວກັບ ວິທີການກໍານົດຕົວ ແລະ ນໍາໃຊ້ ການປ້ອງກັນທົ່ວໄປ ໃນການປົກປ້ອງ ຜູ້ກະທໍາຜິດ ທີ່ເປັນຜູ້ຖືກເຄາະຮ້າຍ ຈາກການລົງໂທດ. ມັນເປັນສິ່ງສໍາຄັນ ແລະ ຈໍາເປັນ ທີ່ການຝຶກອົບຮົມ ແລະ ຄໍາແນະນໍາ ບໍ່ພຽງແຕ່ຈະຖືກສະໜອງໃຫ້ແກ່ ເຈົ້າໜ້າທີ່ປະຕິບັດກົດໝາຍ ຕ້ານການຄ້າມະນຸດເທົ່ານັ້ນ, ແຕ່ກໍຍັງສະໜອງໃຫ້ ບຸກຄົນທົ່ວໄປ ທີ່ດໍາເນີນຄະດີ ຫຼື ປ້ອງກັນຝ່າຍຕ່າງໆ ທີ່ພົວພັນກັບ ການກະທໍາຜິດ ທີ່ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ອາດຈະກະທໍາ.

---

181 ຫ້ອງການສະຫະປະຊາຊາດ ວ່າດ້ວຍ ຢາເສບຕິດ ແລະ ອາຊະຍາກໍາ, *ຜູ້ຖືກເຄາະຮ້າຍ ຂອງການຄ້າມະນຸດ ສໍາລັບການຂູດຮີດທາງເພດ ທີ່ເປັນເພດຍິງ ທີ່ຕົກເປັນຈໍາເລີຍ: ການວິເຄາະກົດໝາຍຄະດີ* (ອົງການສະຫະປະຊາຊາດ, ນະຄອນວຽນນາ, 2020) 6, 76-93

182 *ທ່ານ Christine Anchan,* ການປົກປ້ອງ ຜູ້ຖືກເຄາະຮ້າຍທີ່ມີຄວາມຜິດ: ການຂະຫຍາຍ ທ່າເຮືອທີ່ປອດໄປ ສໍາລັບ ຜູ້ຖືກເຄາະຮ້າຍ ຂອງການຄ້າມະນຸດ ເພື່ອບໍລິການທາງເພດ ທີ່ເປັນຜູ້ໃຫຍ່ ທ່ານ William ແລະ Mary, ວາລະສານ ກ່ຽວກັບ ເຊື້ອຊາດ, ບົດບາດຍິງຊາຍ ແລະ ຄວາມຍຸຕິທໍາ ຂອງສັງຄົມ, ສະບັບທີ 23 (2016-2017) ພະຈິກ 2016, 127-128

183 ຍົກຕົວຢ່າງ, ຜູ້ລາຍງານພິເສດ ກ່ຽວກັບການຄ້າມະນຸດ ຊີ້ໃຫ້ຄວາມແຕກຕ່າງກັນ ລະຫວ່າງ ການປ້ອງກັນການຂົ່ມເຫັງ ທີ່ກໍານົດຢູ່ໃນ ກົດໝາຍ Rome ຂອງ ສານອາຍາສາກົນ, ແລະຜົນການນໍາໃຊ້ຂອງມັນ ໃນຄະດີ ໄອຍະການ v ທ່ານ Dominic Ongwen ກັບ ຫຼັກການການບໍ່ລົງໂທດ ທີ່ກວ້າງຂຶ້ນ. ໃຫ້ເບິ່ງ *ການຈັດຕັ້ງປະຕິບັດ ຫຼັກການການບໍ່ລົງໂທດ: ບົດລາຍງານ ຂອງ ຜູ້ລາຍງານພິເສດ ກ່ຽວກັບ ການຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, ທ່ານ Siobhán Mullaly,* ເອກະສານ ຂອງ UN A/HRC/47/34 (17 ພຶດສະພາ 2021) ວັກ 51.

184 ໃຫ້ເບິ່ງ: *ການຈັດຕັ້ງປະຕິບັດ ຫຼັກການການບໍ່ລົງໂທດ: ບົດລາຍງານ ຂອງ ຜູ້ລາຍງານພິເສດ ກ່ຽວກັບ ການຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, ທ່ານ Siobhán Mullaly,* ເອກະສານ ຂອງ UN A/HRC/47/34 (17 ພຶດສະພາ 2021), ວັກ 58

## ຂໍ້ສະເໜີແນະນຳ 19: ຮັບປະກັນວ່າພາລະການພິສູດຫຼັກຖານເປັນຂອງພາກລັດ ບໍ່ແມ່ນຂອງຜູ້ຖືກເຄາະຮ້າຍ

ຂໍ້ກຳນົດ ວ່າດ້ວຍການບໍ່ລົງໂທດ ອາດຈະຖືກຮ່າງຂຶ້ນ ໃນລັກສະນະທີ່ ເອົາພາລະໃນການພິສູດ ໄປໄວ້ນຳ ຈຳເລີຍທີ່ເປັນຜູ້ໄດ້ຮັບເຄາະຮ້າຍ ເພື່ອນຳເອົາຫຼັກຖານມາພິສູດວ່າ ຕົນເອງໄດ້ຕົກເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ແຕ່ສິ່ງດັ່ງກ່າວນີ້ ອາດມີຄວາມຫຍຸ້ງຍາກທີ່ຈະບັນລຸໄດ້, ໂດຍສະເພາະແມ່ນ ຢູ່ໃນປະເທດ ບ່ອນທີ່ການຂູດຮີດທາງອາຍາ ບໍ່ຖືກຮັບຮູ້ວ່າ ເປັນຮູບແບບການຄ້າມະນຸດ ຢູ່ໃນກົດໝາຍພາຍໃນ.[185] ການເອົາ ພາລະໃນການພິສູດ ໄປໄວ້ນຳຜູ້ຖືກເຄາະຮ້າຍ ແມ່ນຍັງຂັດກັບ ຫຼັກການປະຕິບັດທີ່ດີທີ່ສຸດ ໃນການຮັບປະກັນວ່າ ພາລະດັ່ງກ່າວ ແມ່ນຈະຕ້ອງຢູ່ນຳລັດ ຊຶ່ງສອດຄ່ອງກັບ ພັນທະຂອງລັດ ໃນການກຳນົດ ແລະ ປົກປ້ອງ ຜູ້ຖືກເຄາະຮ້າຍ ຢ່າງຈິງຈັງ.

ຍ້ອນແນວນັ້ນ, ການປ່ຽນແປງນິດຕິກຳ ອາດຈະຮຽກຮ້ອງ ໃຫ້ຮັບປະກັນວ່າ ພາລະໃນການພິສູດ ແມ່ນຈະຕ້ອງຢູ່ນຳລັດທຸກຄັ້ງ ເພື່ອພິສູດໃຫ້ເຫັນວ່າ ການປ້ອງກັນທາງກົດໝາຍ *ບໍ່ມີຜົນນຳໃຊ້,* ເພາະວ່າ ຜູ້ຖືກເຄາະຮ້າຍ ມີເຈດຕະນາທາງອາຍາທີ່ຈຳເປັນ ແລະ ເຈດຕະນາທາງອາຍາ ກໍບໍ່ໄດ້ທຳລາຍ ຈາກ ການນຳໃຊ້ວິທີການ ຂອງພວກຄ້າມະນຸດ.[186] ກ່ຽວກັບມາດຕະຖານໃນການພິສູດ ທີ່ຮຽກຮ້ອງໃຫ້ມີ, ຄຳແນະນຳ ທີ່ອອກໃຫ້ ກຸ່ມທີ່ເຮັດວຽກ ກ່ຽວກັບການຄ້າມະນຸດ ໄດ້ກຳນົດອອກວ່າ:

> *ບໍ່ຄວນຮຽກຮ້ອງໃຫ້ຜູ້ທີ່ຖືກກ່າວຫາ ພິສູດການເກີດຂຶ້ນ ຂອງການປ້ອງກັນ ນອກເໜືອຈາກ ຄວາມສົງໃສທີ່ສົມເຫດສົມຜົນ ຫຼື ແມ່ນກະທັ້ງ ຄວາມສົມດຸນ ຂອງຄວາມເປັນໄປໄດ້, ເນື່ອງຈາກວ່າ ການເຮັດເຊັ່ນນັ້ນອາດຈະເປັນການລະເມີດ ການສົມມຸດຖານຄວາມບໍລິສຸດ. ເມື່ອການປ້ອງກັນ ໄດ້ກາຍເປັນບັນຫາ ທີ່ຍັງມີຊີວິດຊີວາ ໃນການພິຈາລະນາຄະດີຢູ່ສານ, ໄອຍະການຄວນຈະສະແດງໃຫ້ເຫັນວ່າ ມັນບໍ່ມີຜົນນຳໃຊ້.[187] ນອກເຫນືອຈາກຄວາມສົງໃສ ທີ່ສົມເຫດສົມຜົນ.*

ຄວນມີ ຄຳແນະນຳທີ່ຈະແຈ້ງ ເພື່ອສະແດງໃຫ້ເຫັນວ່າ ໃຜເປັນຜູ້ແບກຫາບພາລະ ໃນການພິສູດ ເພື່ອຍົກລະດັບການປ້ອງກັນ. ເຈົ້າໜ້າປະຕິບັດຄວາມຍຸຕິທຳທາງອາຍາ ຄວນຈະຮັບຮູ້ວ່າ ເມື່ອມີການຮຽກຮ້ອງໃຫ້ມີການປ້ອງກັນ, ມັນແມ່ນລັດ (ໄອຍະການ) ທີ່ຈະຕ້ອງສະແດງໃຫ້ເຫັນວ່າມັນບໍ່ມີຜົນນຳໃຊ້.

## ສະເໜີແນະນຳ 20: ປ້ອງກັນການນຳໃຊ້ຫຼັກການບໍ່ລົງໂທດໃນທາງທີ່ບໍ່ຖືກຕ້ອງ

ຄວາມສ່ຽງ ທີ່ຫຼັກການການບໍ່ລົງໂທດ ອາດສາມາດ ຖືກນຳໃຊ້ໃນທາງທີ່ຜິດ ໂດຍອາຊະຍາກຳທີ່ຮ້າຍແຮງ ເພື່ອຫຼີກເວັ້ນ ຄວາມຮັບຜິດຊອບທາງອາຍາ, ສາມາດຫຼຸດລົງໄດ້ ກໍຕໍ່ເມື່ອ ດ້ວຍການນຳໃຊ້ກົດໝາຍ ທີ່ມີຄວາມຊຳນິຊຳນານ ແລະ ຊື່ສັດເທົ່ານັ້ນ. ດັ່ງນັ້ນ, ລັດຕ່າງໆ ຄວນສ້າງຄວາມອາດສາມາດ ໃນດ້ານຄວາມຍຸຕິທຳທາງອາຍາ ຢ່າງຕໍ່ເນື່ອງ ເພື່ອນຳໃຊ້ ການທົດສອບສາມອົງປະກອບ ເພື່ອລະບຸວ່າ ບຸກຄົນຫນຶ່ງ ຕົກເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ (ຫຼື ສອງ ເມື່ອຜູ້ຖືກເຄາະຮ້າຍ ແມ່ນເປັນເດັກນ້ອຍ), ແລະ ເພື່ອກຳນົດ ຫຼື ພິສູດໃຫ້ເຫັນຄວາມຜິດທີ່

---

185 ຫ້ອງການສະຫະປະຊາຊາດ ວ່າດ້ວຍ ຢາເສບຕິດ ແລະ ອາຊະຍາກຳ, ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ສຳລັບການຂູດຮີດທາງເພດ ທີ່ເປັນເພດຍິງ ທີ່ຕົກເປັນຈຳເລີຍ: ການວິເຄາະກົດໝາຍຄະດີ (ອົງການສະຫະປະຊາຊາດ, ນະຄອນວຽນນາ, 2020) 6, 76-93

186 ການຕັດສິນ ໃນປີ 2018 ໂດຍ ສານອຸທອນ ແຫ່ງ ສະຫະລາຊະອານາຈັກ ໄດ້ກຳນົດວ່າ ພາລະຂອງການພິສູດ ຄວນຢູ່ນຳສານສູງ, ຊຶ່ງຫມາຍຄວາມວ່າ ມັນຄວນຈະຕົກຢູ່ກັບ ໄອຍະການ ທີ່ຈະພິສູດໃຫ້ເຫັນຄວາມຜິດ ໃນການນຳໃຊ້ ການປ້ອງກັນທາງກົດໝາຍ ນອກເໜືອ ຄວາມສົງໃສທີ່ສົມເຫດສົມຜົນ. *ການທົບທວນຄືນແບບເອກະລາດ ຂອງກົດໝາຍ ວ່າດ້ວຍການເປັນຂ້າທາດ ໃນຍຸກທັນສະໄໝ 2015: ບົດລາຍງານສະບັບສຸດທ້າຍ* (ລັດຖະມົນຕີ ກະຊວງພາຍໃນ, ປີ 2019) 18, ໂດຍອີງໃສ່ MK v R [2018] EWCA Crim 667

187 ຄຳແນະນຳ ກ່ຽວກັບ ບັນຫາ ການຕອບສະໜອງຄວາມຍຸຕິທຳທາງອາຍາ ທີ່ເໝາະສົມ ແກ່ ຜູ້ຖືກເຄາະຮ້າຍ ທີ່ໄດ້ຖືກບັງຄັບ ໃຫ້ກະທຳຜິດ ຍ້ອນເປັນຜົນມາຈາກ ການທີ່ເຂົາເຈົ້າຖືກຄ້າມະນຸດ: ເອກະສານຄວາມເປັນມາ ທີ່ຖືກກະກຽມ ໂດຍ ກອງເລຂາ ຂອງ ກຸ່ມປະຕິບັດງານ ກ່ຽວກັບ ການຄ້າມະນຸດ, ນະຄອນວຽນນາ 10 ແລະ 11 ກັນຍາ 2020, ເອກະສານ ຂອງ UN CTOC/COP/WG.4/2020/2 (15 ມິຖຸນາ 2020), ວັກ 65.

ວ່າ ມີການເຊື່ອມໂຍງກັນ ລະຫວ່າງ ການກະທຳຜິດ ຂອງຜູ້ຖືກເຄາະຮ້າຍ ແລະ ການຕົກເປັນຜູ້ຖືກເຄາະຮ້າຍ ຂອງຜູ້ກ່ຽວ. ວິທີການນີ້ ແມ່ນຈະໄດ້ຮັບຂໍ້ມູນ ໂດຍ ຄຳນິຍາມ ຂອງການຄ້າມະນຸດ ທີ່ໄດ້ກຳນົດໄວ້ ຢູ່ໃນອະນຸສັນຍາການຄ້າມະນຸດ ແລະ ACTIP, ແລະ ສອດຄ່ອງກັບ ລະບົບນິຕິກຳ ຢູ່ໃນປະເທດທີ່ກ່ຽວຂ້ອງ.

## 3.5 ການຕັດສິນໂທດ ແລະ ການລົງໂທດ

### ສະເໜີແນະນຳ 21: ເຮັດໃຫ້ສະມາຊິກຂອງຕຸລາການມີຄວາມຮູ້ສຶກໄວຕໍ່ກັບຫຼັກການບໍ່ລົງໂທດ ແລະ ບົດບາດຂອງເຂົາເຈົ້າໃນການນຳໃຊ້ຫຼັກການດັ່ງກ່າວ.

ເມື່ອການປົກປ້ອງ ລວມທັງ ບົດບັນຍັດກົດໝາຍ ແລະ ການນຳໃຊ້ ດູນພິນິດ ໃນການສືບສວນ ຫຼື ດຳເນີນຄະດີ ບໍ່ສາມາດປົກປ້ອງ ຜູ້ຖືກເຄາະຮ້າຍ ຈາກການດຳເນີນຄະດີໄດ້, ອາດຈະມີໂອກາດ ຢູ່ໃນຂັ້ນຕອນ ການຕັດສິນວ່າໄດ້ກະທຳຜິດ (ການຕັດສິນໂທດ) ແລະ ການລົງໂທດ ເພື່ອປົກປ້ອງ ຜູ້ຖືກເຄາະຮ້າຍ ຈາກການຖືກລົງໂທດຕື່ມອີກ. ສະມາຊິກຂອງອົງການຕຸລາການ ຫຼື ຄະນະລູກຂຸນ ມີບົດບາດສຳຄັນ. ສິ່ງທ້າທາຍເກີດຂຶ້ນ ໃນເວລາທີ່ ຜູ້ພິພາກສາບໍ່ຮູ້ກ່ຽວກັບ ຫຼັກການການບໍ່ລົງໂທດ ແລະ ການປ້ອງກັນທາງກົດໝາຍທີ່ມີຢູ່.[188] ຍ້ອນແນວນັ້ນ, ບັນດາສະມາຊິກຂອງ ອົງການຕຸລາການ ຫຼື ຄະນະລູກຂຸນ ຈຳເປັນຈະຕ້ອງ ໄດ້ຮັບແຈ້ງ ກ່ຽວກັບ ຫຼັກການການບໍ່ລົງໂທດ ແລະ ຜົນການນຳໃຊ້ຂອງມັນ ຕໍ່ ຜູ້ກະທຳຜິດ ໃນການພິຈາລະນາຄະດີໃນສານ ຊຶ່ງເປັນຜູ້ຕົກເປັນ ຜູ້ຖືກເຄາະຮ້າຍ ຂອງການຄ້າມະນຸດ. ມັນເປັນຫຼັກການປະຕິບັດທີ່ດີ ສຳລັບສານ ທີ່ຈະພິຈາລະນາ ການປ້ອງກັນທີ່ກ່ຽວຂ້ອງ ທີ່ອາດມີໃຫ້ແກ່ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ, ແມ່ນກະທັ້ງ ໃນເວລາທີ່ ການປ້ອງກັນ ຫຼື ການດຳເນີນຄະດີ ບໍ່ໄດ້ຍົກມັນຂຶ້ນມາກໍຕາມ.[189] ນິຕິກຳ ອາດຈະຕ້ອງໄດ້ຮັບການປັບປຸງ ເພື່ອຊີ້ແຈງ ຄວາມຮັບຜິດຊອບນີ້.

### ຂໍ້ສະເໜີແນະນຳ 22: ຫຼີກລ້ຽງ ຫຼື ຫຼຸດຜ່ອນໂທດສຳລັບການຕັດສິນລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ

ໃນທາງປະຕິບັດ, ມີທ່າອ່ຽງ ທີ່ຈະເຮັດໃຫ້ ຫຼັກການການບໍ່ລົງໂທດ ຈຳກັດແຄບລົງ ເພື່ອມາເປັນການພິຈາລະນາໃນການວາງໂທດ ຫຼາຍກວ່າທີ່ຈະປົກປ້ອງ ບໍ່ໃຫ້ມີການຕັດສິນວ່າໄດ້ກະທຳຜິດ (ການຕັດສິນໂທດ).[190] ແຕ່ການຕັດສິນລົງໂທດທີ່ຖືກຜ່ອນຜັນ ໄດ້ເປັນທາງເລືອກສຸດທ້າຍ ເມື່ອຜູ້ຖືກເຄາະຮ້າຍ ບໍ່ໄດ້ຮັບການປົກປ້ອງ ຈາກການດຳເນີນຄະດີ ແລະ ການຕັດສິນວ່າໄດ້ກະທຳຜິດ. ເຖິງແມ່ນວ່າ ໄດ້ຮັບໃຊ້ໂທດ ເປັນເວລາດົນນານມາແລ້ວກໍຕາມ, ປະສົບການໃນການຖືກດຳເນີນຄະດີອາຍາ ອາດເປັນອຸປະສັກ ຕໍ່ການ ຟື້ນຟູຜູ້ຖືກເຄາະຮ້າຍ ແລະ ການກັບຄືນສູ່ພູມລຳເນົາ. ເມື່ອມີປະຫວັດຄະດີອາຍາ - ເຖິງແມ່ນວ່າຈະເປັນການກະທຳຜິດເບົາບາງກໍຕາມ - ມັນມີຜົນເສຍ ຕໍ່ ຄວາມສາມາດ ຂອງຜູ້ຖືກເຄາະຮ້າຍ ໃນການເຄື່ອນຍ້າຍ ແລະ ເດີນທາງ; ອາດເປັນຜົນກະທົບ ຕໍ່ ໂອກາດໃນການຈະມີວຽກເຮັດງານທຳ ແລະ ການສຶກສາ; ເຮັດໃຫ້ບໍ່ສາມາດເຂົ້າເຖິງທີ່ພັກອາໄສ, ຜົນປະໂຫຍດ ແລະ ແມ່ນກະທັ້ງ ສິດໃນການເບິ່ງແຍງດູແລລູກຂອງຕົນເອງ. ດັ່ງນັ້ນ, ມັນເປັນສິ່ງຈຳເປັນ ທີ່ເຈົ້າໜ້າທີ່ປະຕິບັດກົດໝາຍ ເຂົ້າໃຈວ່າ ການຫຼຸດຜ່ອນໂທດ ບໍ່ໝາຍຄວາມວ່າ ມັນຈະທົດແທນ ຫຼັກການການບໍ່ລົງໂທດ ຕໍ່ກັບ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ.

---

188 ສຳລັບ ຄວາມເຂົ້າໃຈອັນເລິກເຊິ່ງ ຢູ່ໃນປະເທດສະຫະລາຊະອານາຈັກ, ໃຫ້ເບິ່ງ ທ່ານ Ofer, Nogah, ການຈັດຕັ້ງປະຕິບັດ ຫຼັກການການບໍ່ລົງໂທດ ຢູ່ໃນປະເທດອັງກິດ: ເປັນຫຍັງຜູ້ເຄາະຮ້າຍ ຂອງການຄ້າມະນຸດ ຈຶ່ງບໍ່ໄດ້ຮັບຜົນປະໂຫຍດ ຈາກການປົກປ້ອງ ຈາກການດຳເນີນຄະດີ ຕາມກົດໝາຍສາກົນ? *ວາລະສານການປະຕິບັດສິດທິມະນຸດ,* 11, 2019, 486507 ທີ່ 492-494.

189 ຄຳແນະນຳ ກ່ຽວກັບ ບັນຫາ ການຕອບສະໜອງຄວາມຍຸຕິທຳທາງອາຍາ ທີ່ເໝາະສົມ ແກ່ ຜູ້ຖືກເຄາະຮ້າຍ ທີ່ໄດ້ຖືກບັງຄັບ ໃຫ້ກະທຳຜິດ ຍ້ອນເປັນຜົນມາຈາກ ການທີ່ເຂົາເຈົ້າຖືກຄ້າມະນຸດ: ເອກະສານຄວາມເປັນມາ ທີ່ຖືກກະກຽມ ໂດຍ ກອງເລຂາ ຂອງ ກຸ່ມປະຕິບັດງານ ກ່ຽວກັບ ການຄ້າມະນຸດ, ນະຄອນວຽນນາ 10 ແລະ 11 ກັນຍາ 2020, ເອກະສານ ຂອງ UN CTOC/COP/WG.4/2020/2 (15 ມິຖຸນາ 2020), ວັກ 66.

190 ໃຫ້ເບິ່ງ: *ຄຳແນະນຳ ທາງດ້ານນະໂຍບາຍ ແລະ ນິຕິກຳ ຕໍ່ ການຈັດຕັ້ງປະຕິບັດ ກົດບັນຍັດ ວ່າດ້ວຍການບໍ່ລົງໂທດ ຢ່າງມີປະສິດທິພາບ ທີ່ກ່ຽວຂ້ອງກັບ ການຄ້າມະນຸດ* (OSCE, 2013) 26, ອີງໃສ່ຄະດີ R v N, R v LE, EWCA Crim 189 (2012), ວັກ 13, 91 ແລະ 113

ເຖິງແນວໃດກໍຕາມ, ເມື່ອຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ຖືກຕັດສິນວ່າກະທຳຜິດ, ສານ ອາດຈະສາມາດໃຫ້ການຜ່ອນຜັນບາງຢ່າງແກ່ເຂົາເຈົ້າ ຈາກການລົງໂທດ ຜ່ານທາງ ວິທີການລົງໂທດ ຂອງສານ. ເມື່ອບໍ່ມີຫຼັກການການບໍ່ລົງໂທດເກີດຂຶ້ນ ຫຼື ການເປັນຈຳເລີຍທົ່ວໄປ ບໍ່ມີຜົນນຳໃຊ້, ກົດລະບຽບ ທີ່ກ່ຽວຂ້ອງກັບ ການແກ້ໄຂການລົງໂທດຈະເປັນເຄື່ອງມືທີ່ເປັນປະໂຫຍດໂດຍສະເພາະ ເພື່ອຍຶດໝັ້ນຫຼັກການ ໃນພາກປະຕິບັດ.[191] ສະມາຊິກ ຂອງອົງການຕຸລາການ ຫຼື ຄະນະລູກຂຸນ ອາດຈະມີການນຳໃຊ້ກົດລະບຽບ ທີ່ອະນຸຍາດໃຫ້ເຂົາເຈົ້າ *ບໍ່* ລົງໂທດ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເຖິງແມ່ນວ່າ ຄວາມຮັບຜິດຊອບ ຂອງເຂົາເຈົ້າ ໄດ້ຖືກກຳນົດແລ້ວກໍຕາມ. ຢູ່ໃນປະເທດອື່ນ, ກົດລະບຽບທົ່ວໄປ ສາມາດມີຜົນນຳໃຊ້ ເພື່ອສະທ້ອນໃຫ້ເຫັນເຖິງ ຄວາມຜິດ ຂອງຜູ້ກະທຳຜິດ ຢູ່ໃນການລົງໂທດ. ກຸ່ມປະສານງານລະຫວ່າງອົງການຈັດຕັ້ງ ເພື່ອຕ້ານການຄ້າມະນຸດ (ICAT) ເນັ້ນໜັກວ່າ ເມື່ອຜູ້ຖືກເຄາະຮ້າຍ ຖືກຄົ້ນພົບວ່າ ມີຄວາມຜິດໃນຂໍ້ຫາອາຊະຍາກຳ ແລະ ແມ່ນແຕ່ຢູ່ໃນກໍລະນີ ເມື່ອການເປັນຈຳເລີຍບໍ່ເກີດຂຶ້ນ, ການລົງໂທດທີ່ວາງອອກ ທຸກຄັ້ງຄວນສະທ້ອນໃຫ້ເຫັນລະດັບຄວາມຮັບຜິດຊອບຂອງຜູ້ກະທຳຜິດ ທີ່ເປັນຜູ້ຖືກເຄາະຮ້າຍ ແລະ ຄວາມຮ້າຍແຮງຂອງອາຊະຍາກຳທີ່ໄດ້ກະທຳ.[192]

ໃນການກຳນົດ ລະດັບຄວາມຮັບຜິດຊອບຕໍ່ຄວາມຜິດ ຢູ່ໃນສະຖານະການດັ່ງກ່າວ, ມັນສົມເຫດສົມຜົນ ທີ່ຈະສັນນິຖານວ່າ ຍິ່ງຄວາມເຊື່ອມໂຍງ ລະຫວ່າງ ການກະທຳຜິດ ແລະ ການຄ້າມະນຸດ ມີຄວາມເຂັ້ມແຂງຂຶ້ນເທົ່າໃດ, ຍິ່ງເຮັດໃຫ້ຄົນໆໜຶ່ງ ຄວນຈະຖືກປະນາມໜ້ອຍລົງເທົ່ານັ້ນ. ເຖິງຢ່າງໃດກໍຕາມ, ໃນທາງປະຕິບັດ, ຜູ້ພິພາກສາອາດຈະມີປະສົບການກ່ຽວກັບການຄ້າມະນຸດກັບຜູ້ກະທຳຜິດ ທີ່ເປັນຜູ້ຖືກເຄາະຮ້າຍ ແລະ ກຳນົດການລົງໂທດທີ່ຮຸນແຮງ ຕໍ່ບຸກຄົນ ໂດຍອີງໃສ່ພື້ນຖານທີ່ ຜູ້ກ່ຽວ 'ຄວນຈະຮູ້ຈັກ'.[193] ດັ່ງນັ້ນ, ຜູ້ປະຕິບັດຄວາມຍຸຕິທຳທາງອາຍາ ລວມທັງ ຜູ້ພິພາກສາ ຄວນໄດ້ຮັບການຝຶກອົບຮົມ ເພື່ອສຸມໃສ່ ການພິຈາລະນາ ຄວາມຮັບຜິດຊອບຕໍ່ການກະທຳຜິດ ແລະ ເພື່ອສອບສວນ ຄວາມລຳອຽງຂອງເຂົາເຈົ້າຕໍ່ກັບການສົມມຸດຖານ ກ່ຽວກັບ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ.

## ຂໍ້ສະເໜີແນະນຳ 23: ພິຈາລະນາ ການຟື້ນຟູຄວາມຍຸຕິທຳ ແທນທີ່ຈະເປັນແກ້ແຄ້ນທາງຄວາມຍຸຕິທຳ ສຳລັບຜູ້ກະທຳຜິດ-ທີ່ເປັນຜູ້ຖືກເຄາະຮ້າຍ

ຢູ່ໃນບາງປະເທດ, ແມ່ນມີຕົວແບບໄວ້ແລ້ວ ສຳລັບທາງເລືອກ ໃນການຕັດສິນໂທດ ແລະ ການກັກຂັງ ສຳລັບຜູ້ທີ່ໄດ້ກະທຳຜິດບາງປະເພດ. ເປົ້າໝາຍຢູ່ໃນນີ້ ແມ່ນເພື່ອສະເໜີໃຫ້ນຳໃຊ້ ຄວາມຍຸຕິທຳທີ່ເນັ້ນໃສ່ການຟື້ນຟູໃຫ້ກັບສູ່ສະພາບເດີມ ຫຼາຍກວ່າຈະເປັນຄວາມຍຸຕິທຳທີ່ເນັ້ນໃສ່ການລົງໂທດ ແລະ ການທົດແທນ, ແລະ ເພື່ອຫັນຜູ້ກະທຳຜິດບາງປະເພດອອກຈາກຂະບວນການຍຸຕິທຳທາງອາຍາໄປສູ່ການປົກປ້ອງ ແລະ ການຊ່ວຍເຫຼືອ ແທນ. ຕົວແບບດັ່ງກ່າວໄດ້ຖືກນຳໃຊ້ໂດຍມີຜົນສຳເລັດໃນລະດັບໜຶ່ງ, ດ້ວຍວິທີການສານທີ່ປະຈຳຢູ່ຊຸມຊົນເພື່ອຫຼຸດຜ່ອນການກະທຳຜິດທາງອາຍາຂອງຜູ້ຖືກເຄາະຮ້າຍຈຳນວນໜຶ່ງຈາກການຄ້າມະນຸດສຳລັບການຄ້າມະນຸດບາງປະເພດ, ໂດຍສະເພາະຢູ່ໃນສະພາບການຂູດຮີດທາງເພດ (ໃຫ້ເບິ່ງຫ້ອງ 11 ຂ້າງລຸ່ມນີ້). ປະເທດຕ່າງໆຄວນພິຈາລະນາຂອບເຂດທີ່ສານ ແລະ ຂະບວນການຂອງສານສາມາດຖືກປະເມີນເພື່ອສະໜັບສະໜູນຫຼາຍກວ່າລົງໂທດຜູ້ກະທຳຜິດທີ່ເປັນຜູ້ຖືກເຄາະຮ້າຍ.

---

191 ຄຳແນະນຳ ກ່ຽວກັບ ບັນຫາ ການຕອບສະໜອງຄວາມຍຸຕິທຳທາງອາຍາ ທີ່ເໝາະສົມ ແກ່ ຜູ້ຖືກເຄາະຮ້າຍ ທີ່ໄດ້ຖືກບັງຄັບ ໃຫ້ກະທຳຜິດ ຍ້ອນເປັນຜົນມາຈາກ ການທີ່ເຂົາເຈົ້າຖືກຄ້າມະນຸດ: ເອກະສານຄວາມເປັນມາ ທີ່ຖືກກະກຽມ ໂດຍ ກອງເລຂາ ຂອງ ກຸ່ມປະຕິບັດງານ ກ່ຽວກັບ ການຄ້າມະນຸດ, ນະຄອນວຽນນາ 10 ແລະ 11 ກັນຍາ 2020, ເອກະສານ ຂອງ UN CTOC/COP/WG.4/2020/2 (15 ມິຖຸນາ 2020), ວັກ 46.

192 ICAT ແມ່ນເປັນເວທີສົນທະນານະໂຍບາຍ ທີ່ຖືກສ້າງຕັ້ງຂຶ້ນໃນເດືອນມີນາ 2017, ໂດຍອີງຕາມມະຕິກອງປະຊຸມໃຫຍ່ 61/180, ທີ່ປະກອບດ້ວຍ 25 ຫົວໜ່ວຍການຈັດຕັ້ງ ທີ່ໄດ້ຮັບມອບໝາຍ ຈາກ ກອງປະຊຸມໃຫຍ່ ເພື່ອປັບປຸງການປະສານງານ ລະຫວ່າງ ອົງການສະຫະປະຊາຊາດ ແລະ ອົງການສາກົນອື່ນໆທີ່ກ່ຽວຂ້ອງ ເພື່ອຕອບໂຕ້ ການຄ້າມະນຸດ.

193 ສຳນັກງານ ຢາເສບຕິດ ແລະ ອາດຊະຍາກຳ ຂອງອົງການສະຫະປະຊາຊາດ, *ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ທີ່ເປັນເພດຍິງ ທີ່ຖືກຂູດຮີດທາງເພດໃນນາມເປັນຈຳເລີຍ: ການວິເຄາະກົດໝາຍຄະດີ* (ອົງການສະຫະປະຊາຊາດ, ນະຄອນວຽນນາ, ປີ 2020) 7.

## **ຫ້ອງທີ 11: ສານການຄ້າມະນຸດ ທີ່ປະຈຳຢູ່ຊຸມຊົນ ໃນປະເທດສະຫະລັດອາເມລິກາ**

ຕົວແບບສານທີ່ປະຈຳຢູ່ໃນຊຸມຊົນ ໂດຍທົ່ວໄປແມ່ນຖືກນຳໃຊ້ກັບ ຜູ້ທີ່ໄດ້ມີປະສົບການ ຢູ່ໃນອຸດສາຫະກຳ ການບໍລິການທາງເພດ. ເຂົາເຈົ້າຮັບຟັງ ແລະ ຕັດສິນຄະດີກ່ຽວກັບການຄ້າປະເວນີ ແລະ ການຢືນຖ້າກວັກລູກຄ້າ ແລະ ໃຫ້ທາງເລືອກໃນການລົງໂທດທາງອາຍາ, ແລະ ອາດຈະຊ່ວຍກຳນົດຕົວ ແລະ ໃຫ້ການສະໜັບສະໜູນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ສານບາງບ່ອນອາດຈະໃຊ້ຊື່ທີ່ເປັນພາສາ ‘ການຄ້າບໍລິການທາງເພດ’ ຫຼື ‘ການຄ້າມະນຸດ’, ເຊັ່ນ ສານແຊກແຊງການຄ້າປະເວນີ ແລະ ການຄ້າມະນຸດ ແຫ່ງ ນະຄອນຊິກາໂກ້, ສານຫຼຸດຜ່ອນການຂູດຮີດທາງເພດ ແລະ ການຄ້າມະນຸດ (RESET) ຢູ່ໃນເມືອງແຊະເຄີຣເມັນໂຕ, ລັດຄາລິຟໍເນຍ ແລະ ສານແຊກແຊງການຄ້າມະນຸດ (HTIC) ໃນເມືອງຄຣີນ, ນະຄອນນິວຢອກ.[194] ເຖິງແນວໃດກໍຕາມ, ຊື່ຂອງສານອື່ນໆ ແນະນຳໃຫ້ເນັ້ນໜັກ ຍົກໃຫ້ເຫັນ ການເຄື່ອນໄຫວ ແລະ ການປ່ຽນພຶດຕິກຳ ຂອງ ຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍ ຫຼາຍກວ່າ ຜູ້ຄ້າມະນຸດ ທີ່ຖືກກ່າວຫາ ເຊັ່ນວ່າ, ສານປ່ຽນແປງການປະພຶດ ເພື່ອປ່ຽນແປງນິໄສ (CATCH) ຢູ່ໃນເມືອງແຟຣັງລິນ, ລັດໂອໄຮໂອ; ສານປະສົບຄວາມສຳເລັດ ຜ່ານທາງ ການບັນລຸ ແລະ ຄວາມສາມາດໃນການປັບຕົວ (STAR) ໃນເມືອງລັອດແອນເຈວລິດ, ລັດຄາລິຟໍເນຍ; ແລະ ສານບັນລຸຄວາມເປັນເອກະລາດ ຜ່ານທາງ ການສ້າງຄວາມເຂັ້ມແຂງດ້ວຍຕົນເອງ (RISE) ໃນເມືອງຕາຣັນ, ລັດເທັກຊັດ.

ສານດັ່ງກ່າວ ປະກອບດ້ວຍ ຜູ້ພິພາກສາ ທີ່ຖືກມອບໝາຍ ແລະ ໄອຍະການ ທີ່ໄດ້ຮັບອະນຸຍາດໃຫ້ກຳນົດວ່າ ຈຳເລີຍມີສິດໄດ້ຮັບທາງເລືອກ ໃນການຈຳຄຸກ ຫຼື ບໍ່, ລວມທັງ ທະນາຍຄວາມຝ່າຍຈຳເລີຍ ທີ່ໄດ້ອຸທິດຕົນ ແລະ ຜູ້ໃຫ້ບໍລິການ ເພື່ອຊ່ວຍຈຳເລີຍ.[195] ສານໄດ້ສະແດງໃຫ້ເຫັນ ຄວາມສຳເລັດ ໃນການຫຼຸດຜ່ອນ ການກໍ່ອາຊະຍາກຳ ຂອງປະຊາຊົນ ສຳລັບປະເພດອາຊະຍາກຳປະເພດໃດໜຶ່ງ - ລວມທັງຜູ້ທີ່ອາດຈະຖືກຄ້າມະນຸດ ໃນຈຳນວນດັ່ງກ່າວ. ເຖິງຢ່າງໃດກໍ່ຕາມ, ມີຂໍ້ຈຳກັດຫຼາຍຢ່າງ ສຳລັບ ສານດັ່ງກ່າວ ໃນການປົກປ້ອງຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ຈາກການລົງໂທດ.

---

194 ທ່ານ Teresa C. Kulig ແລະ ທ່ານ Leah C. Butler (ປີ 2019) ຈາກ ໂສເພນີ ໄປເປັນ ຜູ້ຖືກເຄາະຮ້າຍ: ການເກີດຂຶ້ນ ແລະ ສະຖານະພາບ ຂອງ ສານການຄ້າມະນຸດທາງເພດ, *ຜູ້ຖືກເຄາະຮ້າຍ ແລະ ຜູ້ກະທຳຜິດ,* 14:3, 299-321 ທີ່ 309.
195 *ການສະສາງ: ການຊອກຫາ ຂໍ້ແກ້ໄຂທີ່ມີປະສິດທິພາບ ສຳລັບ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ທີ່ໄດ້ກະທຳຜິດທາງອາຍາ,* ຄຼີນິກສິດທິມະນຸດ ຂອງແມ່ຍິງສາກົນ (IWHRC) ຢູ່ທີ່ ມະຫາວິທະຍາໄລ ນະຄອນນິວຢອກ, ໂຮງຮຽນກົດໝາຍ, ພຶດສະພາ 2015, 29

ສານເຫຼົ່ານີ້ ໄດ້ຖືກວິຈານ ຍ້ອນ ລວມວຽກບໍລິການທາງເພດ ເຂົ້າກັບ ການຄ້າມະນຸດ ແລະ ຜູ້ໃຫ້ບໍລິການທາງເພດ ເຂົ້າກັບ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ. ເຂົາເຈົ້າ ຍັງບໍ່ມີສ່ວນກ່ຽວຂ້ອງ ໃນການປົກປ້ອງຜູ້ທີ່ຖືກຄ້າມະນຸດ ເຂົ້າໃນຮູບແບບ ການຂູດຮີດ ທີ່ບໍ່ແມ່ນການບໍລິການທາງເພດ. ຢູ່ໃນບາງຄະດີ, ເຂົາເຈົ້າ ນໍາໃຊ້ສະເພາະກັບຜູ້ຍິງ ແລະ ບໍ່ແມ່ນຜູ້ຊາຍ, ຫຼື ສະເພາະກັບເດັກນ້ອຍ ແລະ ບໍ່ແມ່ນຜູ້ໃຫຍ່, ຊຶ່ງສະແດງໃຫ້ເຫັນ ຄວາມເຂົ້າໃຈ ທີ່ບໍ່ພຽງພໍ ກ່ຽວກັບ ການດໍາເນີນ 'ວິທີການ' ທີ່ຖືກນໍາໃຊ້ ໂດຍ ຜູ້ຖືກຄ້າມະນຸດ ເພື່ອທໍາລາຍ ຄວາມຍິນຍອມ ແລະ ຄວາມເປັນອິດສະຫຼະ ຂອງຜູ້ຖືກເຄາະຮ້າຍ.[196] ນອກຈາກນັ້ນ, ຍັງມີຄວາມກັງວົນວ່າ ຢູ່ໃນບາງຄະດີ, ວິທີການ ແມ່ນເປັນການບີບບັງຄັບ, ຊຶ່ງໃນນັ້ນ, ຄົນທີ່ປະກອບອາຊີບ ໃນອຸດສາຫະກໍາໃຫ້ບໍລິການທາງເພດ ແມ່ນຈະໄດ້ຮັບທາງເລືອກ ທີ່ຈະຖືກດໍາເນີນຄະດີ ຫຼື ຕົກລົງເຫັນດີ ທີ່ຈະເຂົ້າຮ່ວມ ໃນໂຄງການບໍລິການ, ຊຶ່ງບາງອັນແມ່ນໄດ້ການສະໜອງຈາກ ຫຼື ພົວພັນກັບ ກຸ່ມສາສະໜາ.[197] ວິທີການບີບບັງຄັບ ສໍາລັບ ຄວາມຍຸຕິທໍາທີ່ເນັ້ນໃສ່ການຟື້ນຟູໃຫ້ກັບສູ່ສະພາບເດີມ (Restorative Justice) ບໍ່ໄດ້ເຕີມເຕັມ ຫຼັກການການບໍ່ລົງໂທດ ທີ່ບໍ່ຄວນມີເງື່ອນໄຂ; ໃນເບື້ອງຕົ້ນ, ຜູ້ຖືກເຄາະຮ້າຍ ບໍ່ຄວນຖືກຂົ່ມຂູ່ ດ້ວຍການຕັດສິນໂທດ. ຍິ່ງໄປກວ່ານັ້ນ, ສານເຫຼົ່ານີ້ ອາດຈະມອງຂ້າມ ຄົນທີ່ມີການຕັດສິນໂທດກ່ອນໜ້ານີ້, ຊຶ່ງເປັນການສະໜັບສະໜູນ ຄວາມແບ່ງແຍກ ລະຫວ່າງຄໍາວ່າ 'ຜິດ' ແລະ 'ບໍລິສຸດ', ເຊັ່ນວ່າ '[a] ການຮ້ອງຂໍ ການຍົກເວັ້ນ ເບິ່ງເໝືອນກັບວ່າ ຈະເຮັດໃຫ້ ຕົວແທນສ່ວນບຸກຄົນ ມີຄວາມສໍາຄັນໜ້ອຍກວ່າທີ່ຄວນຈະເປັນ ເພື່ອໃຫ້ໄດ້ຕາມ ຂໍ້ໂຕ້ຖຽງທີ່ວ່າ ບຸກຄົນໄດ້ຖືກບີບບັງຄັບ ຫຼື ຖືກຫລອກລວງ ໃຫ້ເຂົ້າໄປໃນ ກິດຈະກໍາ ທີ່ຜິດກົດໝາຍ.[198] ອີກເທື່ອໜຶ່ງ, ຄວາມເຂົ້າໃຈຜິດ ກ່ຽວກັບຜູ້ຖືກເຄາະຮ້າຍ 'ທີ່ເໝາະສົມ (ideal)' ແລະ 'ທີ່ສົມຄວນ (deserving)' ປະກົດຂຶ້ນ ເພື່ອສ້າງຄວາມທ້າທາຍ ຕໍ່ ການຈັດຕັ້ງປະຕິບັດ ຫຼັກການການບໍ່ລົງໂທດ ໃນພາກປະຕິບັດ.

---

196 *ທ່ານ Christine Anchan,* ການປົກປ້ອງ ຜູ້ຖືກເຄາະຮ້າຍທີ່ມີຄວາມຜິດ: ການຂະຫຍາຍ ທ່າເຮືອທີ່ປອດໄພ ໄປຫາ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດເພື່ອບໍລິການທາງເພດ ທີ່ເປັນຜູ້ຫໃຫຍ່ ທ່ານ William ແລະ ທ່ານ Mary ວາລະສານເຊື້ອຊາດ, ບົດບາດຍິງຊາຍ ແລະ ຄວາມຍຸຕິທໍາໃນສັງຄົມ, ສະບັບທີ 23 (2016-2017) ພະຈິກ 2016, 123-125; ທ່ານ Dempsey, Michelle Madden, *ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ເພື່ອການບໍລິການທາງເພດ ທີ່ກະທໍາຜິດທາງອາຍາ,* ບົດທົບທວນກົດໝາຍອາຍາຂອງອາເມລິການ, 2015, ສະບັບທີ 52:207, 223-224

197 ທ່ານ Teresa C. Kulig & ທ່ານ Leah C. Butler (2019) ຈາກ ໂສເພນີ ໄປເປັນ *"ຜູ້ຖືກເຄາະຮ້າຍ": ການເກີດຂຶ້ນ ແລະ ສະຖານະພາບ ຂອງ ສານການຄ້າມະນຸດທາງເພດ, ຜູ້ຖືກເຄາະຮ້າຍ ແລະ ຜູ້ກະທໍາຜິດ,* 14:3, 299-321 ທີ່ 305.

198 ທ່ານ Sabrina Balgamwalla, ເລື່ອງເລົ່າການຄ້າມະນຸດ: *ການກໍານົດແນວຄວາມຄິດ ແລະ ການປັບປຸງຫຼໍ່ຫຼອມ ຜູ້ຖືກເຄາະຮ້າຍ, ຜູ້ກະທໍາຜິດ, ແລະ ຜູ້ກູ້ໄພ ໃນສິງຄາມການຄ້າມະນຸດ,* ບົດທົບທວນກົດໝາຍ Denver Law ສະບັບທີ 94:1, ມັງກອນ 2016, 28

ຄວາມຍຸຕິທຳທີ່ເນັ້ນໃສ່ການຟື້ນຟູໃຫ້ກັບສູ່ສະພາບເດີມ (Restorative Justice) ແມ່ນມີຄວາມສຳຄັນ ໂດຍສະເພາະ ໃນການປົກປ້ອງ ເດັກທີ່ກໍ່ອາດຊະຍາກຳ ຢູ່ໃນສະພາບການ ທີ່ຖືກຄ້າມະນຸດ. ສຳລັບອັນທີ່ກ່ຽວຂ້ອງສະເພາະກັບ ເດັກນ້ອຍ ທີ່ຖືກຄ້າມະນຸດ ເຂົ້າໄປໃນການປະທະກັນ ດ້ວຍອາວຸດ ແລະ ການກໍ່ການຮ້າຍ ທີ່ມີຄວາມສ່ຽງຫຼໍ່ແຫຼມ ທີ່ຈະຖືກລົງໂທດ, ມະຕິຕົກລົງ ຂອງ ສະພາຄວາມໝັ້ນຄົງ ສະບັບເລກທີ 2388 (2017) ຮຽກຮ້ອງໃຫ້ປະເທດສະມາຊິກ ບໍ່ລົງໂທດເດັກນ້ອຍ ທີ່ຖືກເຄາະຮ້າຍ ຈາກການຄ້າມະນຸດ; ມະຕິຕົກລົງ ສະບັບເລກທີ 2427 (2018) ກ່າວເຖິງ ການປະຕິບັດ ກັບເດັກນ້ອຍ ທີ່ພົວພັນກັບ ກຸ່ມປະກອບອາວຸດ ທີ່ບໍ່ຂຶ້ນກັບລັດ, ລວມທັງ ຜູ້ທີ່ກະທຳການກໍ່ການຮ້າຍ, ແລະ ຮຽກຮ້ອງ ໃຫ້ມີການສ້າງຕັ້ງ ຂັ້ນຕອນການປະຕິບັດງານ ທີ່ເປັນມາດຕະຖານ ເພື່ອຮັບປະກັນ ການປະຕິບັດ ທີ່ເໝາະສົມ ຂອງເຂົາເຈົ້າ. ມາດຕະການ ທີ່ບໍ່ແມ່ນທາງຕຸລາການ ແມ່ນຍັງຖືກແນະນຳໃຫ້ສຸມໃສ່ ການຟື້ນຟູ ແລະ ການເຊື່ອມໂຍງກັນຄືນໃໝ່ ຂອງຕົວເດັກນ້ອຍ ໃນນາມເປັນທາງເລືອກ ຂອງການດຳເນີນຄະດີ, ແລະ ຄວາມຈຳເປັນ ສຳລັບຂະບວນການທີ່ດີທີ່ສຸດ ຕໍ່ ເດັກນ້ອຍໝົດທຸກຄົນ ທີ່ພົວພັນກັບ ກຳລັງ ແລະ ກຸ່ມປະກອບອາວຸດ. ຫຼັກການການບໍ່ລົງໂທດ ແມ່ນມີຄວາມເອົາຈິງເອົາຈັງເທົ່າກັບ ຂະບວນການທີ່ດີທີ່ສຸດ ທີ່ຢູ່ໃນເລື່ອງນີ້.[199]

## ຂໍ້ສະເໜີແນະນຳ 24: ປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈາກການຖືກລົງໂທດທາງດ້ານຮ່າງກາຍ ແລະ ໂທດປະຫານຊີວິ

ບາງປະເທດ ກຳນົດການລົງໂທດທາງຮ່າງກາຍ ເຊັ່ນ: ການຂ້ຽນຕີດ້ວຍໄມ້ແສ້ ແລະ ການຕີດ້ວຍເຊືອກ ສຳລັບການກະທຳຜິດບາງຢ່າງ, ລວມທັງການກະທຳຜິດ ທີ່ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ອາດຈະກະທຳ ຍ້ອນເປັນຜົນມາຈາກ ການທີ່ເຂົາເຈົ້າຖືກຄ້າມະນຸດ. ຢູ່ບາງບ່ອນ, ສິ່ງດັ່ງກ່າວນີ້ ອາດຈະລວມເຖິງ ການລະເມີດການເຂົ້າອອກເມືອງ. ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ຍັງອາດຈະມີຄວາມສ່ຽງ ທີ່ຈະປະເຊີນກັບ ການຖືກລົງໂທດປະຫານຊີວິດ ສຳລັບການກະທຳຜິດ ທີ່ເຂົາເຈົ້າເຮັດ ຍ້ອນຖືກຄ້າມະນຸດ. ອັນທີ່ຈິງແລ້ວ, ໃນເວລາທີ່ບົດສຶກສານີ້ ໄດ້ຖືກຂຽນ, ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ກຳລັງລໍຖ້າການລົງໂທດປະຫານຊີວິດ ສຳລັບການກະທຳຜິດ ທີ່ເຂົາເຈົ້າໄດ້ເຮັດ ອັນເປັນຜົນມາຈາກ ການຖືກຄ້າມະນຸດ. (ໃຫ້ເບິ່ງ ຫ້ອງ 5).

ເມື່ອການລົງໂທດປະຫານຊີວິດ ຖືກວາງໄວ້ ພາຍຫຼັງ ການພິຈາລະນາຄະດີໃນສານ ບໍ່ມີຄວາມຍຸຕິທຳ, ທັງສິດຕໍ່ ການພິຈາລະນາຄະດີໃນສານ ຢ່າງເປັນທຳ (ມາດຕາ 14, *ສົນທິສັນຍາສາກົນ ວ່າດ້ວຍ ສິດທິພົນລະເຮືອນ ແລະ ທາງດ້ານການເມືອງ* (ICCPR) ແລະ ສິດທິໃນການມີຊີວິດ (ມາດຕາ 6, ICCPR; ມາດຕາ 20 *ຖະແຫຼງການ ສິດທິມະນຸດ ຂອງອາຊຽນ*) ແມ່ນຖືກລະເມີດ.[200] ສິ່ງທີ່ສຳຄັນ ແລະ ຈຳເປັນ ແມ່ນວ່າ, ໃນກໍລະນີຂອງເດັກນ້ອຍ ທີ່ຂັດກັບກົດໝາຍ, ມາດຕາ 37 ຂອງ *ສົນທິສັນຍາ ວ່າດ້ວຍສິດທິຂອງເດັກ* (CRC) ລະບຸວ່າ 'ຈະຕ້ອງບໍ່ມີການ ການລົງໂທດປະຫານຊີວິດ ຫຼື ເຂົ້າຄຸກຕະຫຼອດຊີວິດ ໂດຍບໍ່ມີຄວາມເປັນໄປໄດ້ທີ່ຈະຖືກປ່ອຍຕົວ ສຳລັບການກະທຳຜິດທີ່ບຸກຄົນ ທີ່ມີອາຍຸຕ່ຳກວ່າ 18 ປີ ໄດ້ກະທຳ. ການປະຕິບັດຕາມ ພັນທະສິດທິມະນຸດເຫຼົ່ານີ້ ແມ່ນເປັນສິ່ງທີ່ສຳຄັນ ແລະ ຈຳເປັນ ສຳລັບປະເທດຕ່າງໆ ໃນການເຂົ້າເຖິງ ກໍລະນີ ທີ່ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ຖືກຕັດສິນໂທດສຳລັບການກະທຳຜິດທີ່ຮ້າຍແຮງ.

ການວາງໂທດປະຫານຊີວິດ ຫຼຸດຜ່ອນ ຄວາມອາດສາມາດ ທາງດ້ານຄວາມຍຸຕິທຳທາງອາຍາ ຂອງລັດ ຕໍ່ ການຄ້າມະນຸດ ໃນວິທີທາງທີ່ສຳຄັນ. ກ່ອນອື່ນໝົດ, ຄວາມຢ້ານກົວ ເຮັດໃຫ້ຜູ້ຖືກເຄາະຮ້າຍ ບໍ່ຢາກສະແຫວງຫາ ການສະໜັບສະໜູນ ແລະ ບໍ່ຢາກສະແດງຕົວຕົນ ຂອງຕົນເອງ ແລະ ຜູ້ຄ້າມະນຸດຂອງຕົນ ຕໍ່ ເຈົ້າໜ້າທີ່. ອັນທີສອງ

---

199 *ການຈັດຕັ້ງປະຕິບັດ ຫຼັກການການບໍ່ລົງໂທດ: ບົດລາຍງານ ຂອງ ຜູ້ລາຍງານພິເສດ ກ່ຽວກັບ ການຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, ທ່ານ Siobhán Mullaly,* ເອກະສານ ຂອງ UN A/HRC/47/34 (17 ພຶດສະພາ 2021) ວັກ 39.

200 ການລົງໂທດປະຫານຊີວິດ ແມ່ນເປັນສິ່ງທີ່ຫ້າມ ສຳລັບປະເທດພາຄີຂອງ *ອະນຸສັນຍາ ທາງເລືອກທີສອງ ຂອງ ສົນທິສັນຍາສາກົນ ວ່າດ້ວຍ ສິດທິທາງດ້ານການເມືອງ ແລະ ສິດທິພົນລະເຮືອນ (ICCPR), ທີ່ເລັງໃສ່ ການຍົກເລີກ ການລົງໂທດປະຫານຊີວິດ* ທີ່ໄດ້ຮັບຮອງເອົາໃນປີ 1989. ຢູ່ໃນພາກພື້ນອາຊຽນ, ມີພຽງແຕ່ປະເທດຟີລິບປິນເທົ່ານັ້ນ ທີ່ເປັນພາຄີ ຂອງສົນທິສັນຍານີ້.

ແມ່ນວ່າ, ມັນຕົກຢູ່ໃນກຳມື ຂອງພວກຄ້າມະນຸດ, ເນື່ອງຈາກວ່າ ຫຼັກຖານທີ່ສຳຄັນ ຕໍ່ກັບ ພວກຄ້າມະນຸດ ແມ່ນຖືກລຶບລ້າງຢ່າງແທ້ຈິງ. ອັນທີສາມ ແມ່ນວ່າ, ມັນຈຳກັດໂອກາດ ສຳລັບ ການຊ່ວຍເຫຼືອກັນ ທາງກົດໝາຍ, ການສົ່ງຜູ້ຮ້າຍຂ້າມແດນ ແລະ ຮູບແບບອື່ນໆ ຂອງການຮ່ວມມືສາກົນ ທີ່ອາດຈະຖືກຮຽກຮ້ອງ ໃຫ້ປະເຊີນໜ້າກັບ ການຄ້າມະນຸດຂ້າມປະເທດ ຢ່າງປະສົບຜົນສຳເລັດ. ອັນທີສີ່ແມ່ນວ່າ, ມັນເຮັດໃຫ້ເກີດອຸປະສັກ ແກ່ ບັນດາອົງການຈັດຕັ້ງສາກົນ ແລະ ບັນດາປະເທດທີ່ໃຫ້ທຶນຊ່ວຍເຫຼືອ ທີ່ກຳລັງເຮັດວຽກຊ່ວຍເຫຼືອ ປະເທດຕ່າງໆ ໃນການສ້າງຄວາມເຂັ້ມແຂງ ແກ່ ລະບົບຍຸຕິທຳທາງອາຍາຂອງປະເທດນັ້ນໆ ແລະ ອາດຈະຮຽກຮ້ອງໃຫ້ເຂົາເຈົ້າ ຫຼຸດຜ່ອນ ຫຼື ຖອນການສະໜັບສະໜູນອອກຈາກປະເທດນັ້ນໆ.[201] ເມື່ອການລົງໂທດທາງຮ່າງກາຍ ແລະ ການລົງໂທດປະຫານຊີວິດ ຖືກວາງໄວ້ ແກ່ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ, ປະເທດຕ່າງໆ ຄວນມີຄວາມໂປ່ງໃສ ກ່ຽວກັບວ່າ ຫຼັກການການບໍ່ລົງໂທດ ໄດ້ຖືກພິຈາລະນາ ຫຼື ບໍ ແລະ ແນວໃດ ແລະ ເປັນຫຍັງຈຶ່ງບໍ່ມີຜົນນຳໃຊ້.

## 3.6 ການຢຽວຢາ ພາຍຫຼັງການຕັດສິນໂທດ

### ຂໍ້ສະເໜີແນະນຳ 25: ສຶກສາໂອກາດໃນການອອກກົດໝາຍ ເພື່ອລຶບລ້າງປະຫວັດອາຊະຍາກຳຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

ເມື່ອການປົກປ້ອງ ໃນທົ່ວລະບົບຍຸຕິທຳທາງອາຍາ ບໍ່ສາມາດປົກປ້ອງ ຜູ້ຖືກເຄາະຮ້າຍ ຈາກການລົງໂທດ, ຜົນໄດ້ຮັບ ອາດຈະແມ່ນວ່າ ເຂົາເຈົ້າ ຖືກຕັດສິນໂທດ, ເຂົ້າຄຸກ, ມີມົນທິນຄົ້ນອີກ ແລະ ການຟື້ນຕົວ ແລະ ການລວມຕົວຂອງເຂົາເຈົ້າ ຕົກຢູ່ໃນຄວາມສ່ຽງ.[202] ເຖິງແມ່ນວ່າ ການຕັດສິນໂທດ ສຳລັບການກະທຳຜິດຂະໜາດທີ່ນ້ອຍຫຼາຍ ກໍສາມາດມີຜົນກະທົບອັນຍາວນານ ຕໍ່ ຜູ້ຖືກເຄາະຮ້າຍ. ພາຍຫຼັງທີ່ຖືກຕັດສິນລົງໂທດ ເປັນເວລາດົນນານ, ປະຫວັດໂທດທາງອາຍາ ສາມາດເປັນອຸປະສັກ ຕໍ່ ຄວາມສາມາດຂອງບຸກຄົນໜຶ່ງ ໃນການເຂົ້າເຖິງການສຶກສາ, ວຽກເຮັດງານທຳ, ທີ່ພັກ, ການກູ້ຢືມເງິນ, ວີຊາການເຂົ້າອອກເມືອງ ແລະ ການປົກປ້ອງ, ປະກັນສັງຄົມ, ໃບອະນຸຍາດ, ແລະ ແມ້ແຕ່ ການເບິ່ງແຍງຮັກສາລູກຂອງເຂົາເຈົ້າ.[203] ດັ່ງນັ້ນ, ການລຶບລ້າງ ປະຫວັດ (ບັນທຶກ) ຄະດີທາງອາຍາ ຂອງຜູ້ຖືກເຄາະຮ້າຍ ສາມາດເປັນສ່ວນຫນຶ່ງ ເພື່ອຫຼີກເວັ້ນຜົນສະທ້ອນ ທາງລົບ ໃນໄລຍະຍາວ.[204]

ຢູ່ໃນບາງປະເທດ, ນິຕິກຳ ມີໄວ້ເພື່ອອະນຸຍາດໃຫ້ພິຈາລະນາຍົກເລີກ ຂໍ້ມູນປະຫວັດທາງອາຊະຍາກຳ ຂອງຜູ້ຖືກເຄາະຮ້າຍ (ໃນກໍລະນີ ຍັງບໍ່ທັນມີການລົງຄຳຕັດສິນ), ຫຼື ລຶບລ້າງ (ການຕັດສິນໂທດ ຍັງຄົງຢູ່ ແຕ່ໄດ້ເອົາອອກຈາກຂໍ້ມູນປະຫວັດທາງອາຊະຍາກຳ ຂອງຜູ້ຖືກເຄາະຮ້າຍ) ຫຼື ມີການປົກປິດໄວ້ (ໃນກໍລະນີ ຄຳຕັດສິນໂທດຍັງຢູ່, ແຕ່ຖ້າຢາກເຂົ້າເຖິງ, ຕ້ອງໄດ້ຂໍຄຳສັ່ງຂອງສານ).[205] ສຳລັບຜູ້ຖືກເຄາະຮ້າຍ ຈຳນວນຫຼາຍ, ຜົນມາຈາກ ການທີ່ ບັນທຶກຄະດີອາຍາ ຂອງເຂົາເຈົ້າ ຖືກຍົກເລີກ, ລຶບອອກ ຫຼື ປິດ (ປົກປິດ) ແມ່ນວ່າ ເຂົາເຈົ້າ ໄດ້ຮັບການປົດປ່ອຍ ຈາກມົນທິນຂອງການຕັດສິນໂທດໃນອະດີດ ທີ່ຈຳກັດໂອກາດ ໃນຊີວິດຂອງເຂົາເຈົ້າ ຫລັງຈາກ ການຄ້າມະນຸດ.

---

201 *ຊຸດເຄື່ອງມື ຂອງ UNODC ສຳລັບລວມເອົາ ສິດທິມະນຸດ ແລະ ຄວາມສະເໝີພາບຍິງຊາຍ ເຂົ້າໃສ່ໃນ ສົນທິສັນຍາຄວາມຍຸຕິທຳທາງອາຍາ ເພື່ອແກ້ໄຂການຄ້າມະນຸດ ແລະ ການລັກລອບໄປມາຂອງຜູ້ເຄື່ອນຍ້າຍ* (UNODC, 2021) ໜ້າ 75

202 ບົດລາຍງານ ຂອງ ຜູ້ລາຍງານພິເສດ ກ່ຽວກັບ ການຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, Joy Ngozi Ezeilo, 6 ມິຖຸນາ 2012, ເອກະສານ ຂອງ UN A/HRC/20/18, [7]

203 ໃຫ້ເບິ່ງອື່ນໆອີກ, ຄຳແນະນຳ ກ່ຽວກັບ ບັນຫາ ການຕອບສະໜອງຄວາມຍຸຕິທຳທາງອາຍາ ທີ່ເໝາະສົມ ແກ່ ຜູ້ຖືກເຄາະຮ້າຍ ທີ່ໄດ້ຖືກບັງຄັບ ໃຫ້ກະທຳຜິດ ຍ້ອນເປັນຜົນມາຈາກ ການທີ່ເຂົາເຈົ້າຖືກຄ້າມະນຸດ: ເອກະສານຄວາມເປັນມາ ທີ່ຖືກກະກຽມ ໂດຍ ກອງເລຂາ ຂອງ ກຸ່ມປະຕິບັດງານ ກ່ຽວກັບ ການຄ້າມະນຸດ, ນະຄອນວຽນນາ 10 ແລະ 11 ກັນຍາ 2020, ເອກະສານ ຂອງ UN CTOC/COP/WG.4/2020/2 (15 ມິຖຸນາ 2020), **ວັກ** 48; *ການລຶບປະຫວັດ: ໃຫ້ເບິ່ງ ການແກ້ໄຂທີ່ມີປະສິດທິພາບ ຂອງກະສັດ ສຳລັບ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ທີ່ຖືກລົງໂທດທາງອາຍາ,* ຄູີກນິກສິດທິມະນຸດ ຂອງແມ່ຍິງສາກົນ (IWHRC) ທີ່ ມະຫາວິທະຍາໄລ City ຂອງ ໂຮງຮຽນກົດໝາຍນິວຢັອກ, ພຶດສະພາ 2015, 15-16, 21-25; ທ່ານ Christine Anchan, ການປົກປ້ອງ ຜູ້ຖືກເຄາະຮ້າຍທີ່ກະທຳຜິດ: ການຂະຫຍາຍ ທ່າເຮືອທີ່ປອດໄພ ໄປຫາ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ເປັນຜູ້ໃຫຍ່ ທ່ານ William & ທ່ານ Mary ວາລະສານ ເຊື້ອຊາດ, ບົດບາດຍິງຊາຍ ແລະ ຄວາມຍຸຕິທຳໃນສັງຄົມ, ສະບັບທີ 23 (2016-2017) ພະຈິກ 2016, 127-128; *ຄຳແນະນຳ ກ່ຽວກັບຫຼັກການປະຕິບັດ ການບໍ່ລົງໂທດທາງອາຍາ* (ກຸ່ມ Warnath, ນະຄອນວໍຊິງຕັນ ດີຊີ, ປີ 2021)

204 ກຸ່ມປະສານງານລະຫວ່າງອົງການຈັດຕັ້ງ ຕ້ານ ການຄ້າມະນຸດ, ການບໍ່ລົງໂທດ ຜູ້ຖືກເຄາະຮ້າຍ ຈາກ ການຄ້າມະນຸດ (ICAT, ສັງລວມບັນຫາຫຍໍ້ 8/2020) 4

205 ໃຫ້ເບິ່ງຕົວຢ່າງ, *ການສະໜັບສະໜູນ ພາຍຫຼັງມີການຕັດສິນໂທດ ສຳລັບ ຜູ້ລອດຊີວິດ ຈາກການຄ້າມະນຸດ: ຄຳແນະນຳ ສຳລັບໄອຍະການ* (ສະມາຄົມທະນາຍຄວາມ ແຫ່ງ ອາເມລິກາ, ປີ 2016) ໜ້າ 9

ໃນຂະນະທີ່ ກົດໝາຍດັ່ງກ່າວ ເປັນວິທີການແກ້ໄຂ ທີ່ສຳຄັນເພື່ອໃຫ້ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ສາມາດດຳເນີນຊີວິດຕໍ່ໄປ, ແຕ່ຍັງບໍ່ພຽງພໍ ທີ່ຈະຍຶດໝັ້ນ ຫຼັກການການບໍ່ລົງໂທດ ໃນພາກປະຕິບັດ; ຄວາມເສຍຫາຍ ອາດຈະເກີດຂຶ້ນແລ້ວໂດຍການຈັບກຸມ, ການດຳເນີນຄະດີ ແລະ ການຕັດສິນລົງໂທດ. ເຖິງຢ່າງໃດກໍ່ຕາມ, ການຍົກເລີກການຕັດສິນໂທດ ຍັງສາມາດໄປບາງທາງ ເພື່ອຟື້ນຟູ ຄວາມສັດທາ ຂອງເຂົາເຈົ້າ ໃນລະບົບຍຸຕິທຳທາງອາຍາ ທີ່ເຄີຍປະຕິບັດຕໍ່ເຂົາເຈົ້າ ຄືກັບອາຊະຍາກຳ.[206] ຜູ້ຖືກເຄາະຮ້າຍ ມີສິດໄດ້ຮັບການແກ້ໄຂ ຢ່າງມີປະສິດທິຜົນ ແລະ ມີຜົນບັງຄັບໃຊ້ ສຳລັບ ທຸກການລະເມີດ ສິດຂອງຕົນ ທັງຢູ່ໃນກົດໝາຍສາກົນ, ແລະ ໂດຍອີງຕາມມາດຕາ 5 ຂອງຖະແຫຼງການອາຊຽນ ກ່ຽວກັບສິດທິມະນຸດ. ລັດ ຄວນພິຈາລະນາ ສະເໜີນິຕິກຳ ເພື່ອອະນຸຍາດໃຫ້ ການຕັດສິນໂທດຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ຖືກຍົກເລີກ, ລົບລ້າງ ຫຼື ປົກປິດໄວ້, ຫຼືກຳນົດນິຕິກຳທີ່ມີຢູ່ແລ້ວ ແລະ ປັບປຸງ ການຈັດຕັ້ງ ໃນພາກປະຕິບັດ.

### ຫ້ອງທີ 12: ຄຳແນະນຳທີ່ເປັນຕົວແບບທີ່ດີສຳລັບກົດໝາຍ vacatur

ການສຶກສາ ທີ່ດຳເນີນຢູ່ໃນ ສະຫະລັດອາເມລິການ ໄດ້ມາຮອດ ຊຸດຄຳແນະນຳ ກ່ຽວກັບຫຼັກການປະຕິບັດ ທີ່ດີທີ່ສຸດ ສຳລັບກົດໝາຍ vacatur, ລວມທັງ ສິ່ງທີ່ກຳນົດໄວ້ຂ້າງລຸ່ມນີ້.[207]

| **ກົດໝາຍ Vacatur ຄວນ...** | **ກົດໝາຍ Vacatur ຄວນ...** |
|---|---|
| ນຳໃຊ້ ຄຳນິຍາມ ແບບກວ້າງຂວາງ ກ່ຽວກັບ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ | *ບໍ່* ຮຽກຮ້ອງໃຫ້ມີ ການພິສູດ ທີ່ບໍ່ສົມເຫດສົມຜົນ ຫຼື ຫຼັກຖານຢືນຢັນ ການກະທຳຜິດທາງອາຍາ ຂອງເຂົາເຈົ້າ |
| ນຳໃຊ້ ການຕັດສິນໂທດ ທີ່ຫຼາກຫຼາຍກວ້າງຂວາງ ສຳລັບ ການກະທຳ ທີ່ຫຼາກຫຼາຍກວ້າງຂວາງ | *ບໍ່* ໃຫ້ມີເງື່ອນໄຂກ່ຽວກັບ ການຮ່ວມມື ກ່ຽວກັບ ການບັງຄັບໃຊ້ກົດໝາຍ |
| ລວມມີບົດບັນຍັດ ກ່ຽວກັບ ການຮັກສາຄວາມລັບ ເພື່ອປົກປ້ອງ ຕົວຕົນ ຂອງຜູ້ຖືກເຄາະຮ້າຍ | *ບໍ່* ກຳນົດຂໍ້ຈຳກັດເວລາ ທີ່ບໍ່ສົມເຫດສົມຜົນ ສຳລັບການຊອກຫາ ການຍົກເລີກ ການຕັດສິນໂທດ |
| ສິ່ງຜົນໃຫ້ການຕັດສິນໂທດ ຖືກລົບລ້າງ ຢ່າງມີປະສິດທິພາບ | |
| ກຳນົດໃຫ້ມີ ດູນພິນິດ ຂອງອົງການຕຸລາການ ຫຼື ຄະນະລູກຂຸນ ເພື່ອດຳເນີນການເພີ່ມຕື່ມ ໃນການຍົກເລີກ ການຕັດສິນໂທດ | |
| ກຳນົດ ການສະໜອງທຶນ ສຳລັບ ການສະໜັບສະໜູນ ທາງດ້ານນິຕິກຳ ແກ່ ຜູ້ຖືກເຄາະຮ້າຍ ທີ່ພະຍາຍາມໃຫ້ການຕັດສິນໂທດ ຂອງເຂົາເຈົ້າ ຖືກຍົກເລີກ | |

206 *ການລົບປະຫວັດ:* ໃຫ້ເບິ່ງການແກ້ໄຂທີ່ມີປະສິດທິພາບ ຂອງກະສັດ ສຳລັບ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ທີ່ຖືກລົງໂທດທາງອາຍາ, ຄຼີກນິກສິດທິມະນຸດ ຂອງແມ່ຍິງສາກົນ (IWHRC) ທີ່ ມະຫາວິທະຍາໄລ City ຂອງ ໂຮງຮຽນກົດໝາຍນິວຢອກ, ພຶດສະພາ 2015, 26-27

207 ການລົບປະຫວັດ: ໃຫ້ເບິ່ງການແກ້ໄຂທີ່ມີປະສິດທິພາບ ຂອງກະສັດ ສຳລັບ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ທີ່ຖືກລົງໂທດທາງອາຍາ, ຄຼີກນິກສິດທິມະນຸດ ຂອງແມ່ຍິງສາກົນ (IWHRC) ທີ່ ມະຫາວິທະຍາໄລ City ຂອງ ໂຮງຮຽນກົດໝາຍນິວຢອກ, ພຶດສະພາ 2015, 31-32

## ສະເໜີແນະນຳ 26: ກຳນົດ ແລະ ແກ້ໄຂສິ່ງທ້າທາຍຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ປະເຊີນກັບການລຶບລ້າງຄຳຕັດສິນ.

ສຳລັບ ການຕັດສິນໂທດ ທີ່ຈະຖືກຍົກເລີກໄດ້, ຜູ້ຖືກເຄາະຮ້າຍ ຈະຕ້ອງຍື່ນຄຳສະເໜີ ໄປຫາສານ ເພື່ອໃຫ້ລຶບລ້າງຄຳຕັດສິນລົງໂທດ, ແລະ ຖ້າຫາກປະສົບຜົນສຳເລັດ, ແມ່ນໝາຍຄວາມວ່າ ສານຮັບຮູ້ເຖິງ ການຕັດສິນໂທດທີ່ຜິດພາດ ແລະ ກໍຖອນຄຳຕັດສິນໂທດ.[208] ຢູ່ໃນບາງປະເທດ, ຜົນຂອງການຖອນຄຳຕັດສິນໂທດນີ້ ຈະເປັນການໃຫ້ສິດແກ່ ຜູ້ຖືກເຄາະຮ້າຍ ໂດຍລະບຸວ່າ ຜູ້ກ່ຽວບໍ່ໄດ້ຖືກຕັ້ງຂໍ້ກ່າວຫາ ຫຼື ຖືກຕັດສິນໂທດ. ຢູ່ໃນປະເທດອື່ນ, ການຕັ້ງຂໍ້ກ່າວຫາ ອາດຈະຖືກລຶບລ້າງ ອອກຈາກ ບັນທຶກ ຂອງຜູ້ຖືກເຄາະຮ້າຍ, ແຕ່ການຕັດສິນໂທດ ແມ່ນຍັງຄົງຢູ່ເໝືອນເດີມ.[209]

ມີຂໍ້ຈຳກັດ ສຳລັບ ກົດໝາຍ vacatur. ບາງອັນ ອາດຈະນຳໃຊ້ສະເພາະກັບ ການເລືອກການກະທຳຜິດ (ເຊັ່ນ: ການກະທຳຜິດ ທີ່ກ່ຽວຂ້ອງກັບ-ການຄ້າປະເວນີ) ແລະ ບໍ່ໄດ້ກັບ ອາຊະຍາກຳອື່ນໆ ທີ່ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ອາດຈະໄດ້ກະທຳເປັນ ຍ້ອນເປັນຜົນມາຈາກ ການຄ້າມະນຸດ, ສະນັ້ນ ບາງທີ ອາດຈະບໍ່ລວມເອົາ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ໃນຮູບແບບການຂູດຮີດທັງໝົດ ທີ່ບໍ່ແມ່ນທາງເພດ. ເຖິງຢ່າງໃດກໍຕາມ, ໃນບາງກໍລະນີ, ສານໄດ້ຈັດກັບ ການຕີຄວາມໝາຍ ກົດໝາຍ vacatur ຢ່າງກວ້າງຂວາງ.210 ການພິສູດວ່າ ການຕັດສິນໂທດ ມີຄວາມຜິດພາດ ແມ່ນເປັນພາລະໜ້າທີ່ຂອງຜູ້ຖືກເຄາະຮ້າຍ ທີ່ຈະຕ້ອງພິສູດວ່າ ການຕັດສິນໂທດ ໄດ້ເປັນຜົນມາຈາກການຖືກຄ້າມະນຸດ.211 ເມື່ອສັງເກດເບິ່ງສິ່ງທ້າທາຍ ແລະ ໂອກາດເຫຼົ່ານີ້, ເຈົ້າໜ້າທີ່ປະຕິບັດຄວາມຍຸຕິທຳທາງອາຍາຄວນທຳຄວາມຄຸ້ນເຄີຍກັບ ບັນດາທາງເລືອກຕ່າງໆ ທີ່ມີຢູ່ໃນກົດໝາຍ, ສະພາບເງື່ອນໄຂ ທີ່ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ມີສິດທີ່ຈະນຳໃຊ້, ແລະ ຂະບວນການ ໃນການນຳໃຊ້ທາງເລືອກນີ້. ຜູ້ມີສ່ວນກ່ຽວຂ້ອງ ໃນການຕ້ານການຄ້າມະນຸດ ຄວນກຳນົດ ແລະ ແກ້ໄຂ ນິຕິກຳ, ລະບຽບການ ແລະ ອຸປະສັກອື່ນໆ ທີ່ຜູ້ເຄາະຮ້າຍ ໄດ້ປະເຊີນ ໃນການເຮັດໃຫ້ບັນທຶກທາງອາຍາຂອງເຂົາເຈົ້າ ໄດ້ຖືກຍົກເລີກ ຫຼື ລຶບລ້າງ. ຄວນຈັດສັນທຶນໃຫ້ພຽງພໍ ເພື່ອໃຫ້ສານ ສາມາດປະຕິບັດ ກົດໝາຍ vacatur ໄດ້, ລວມທັງ ສະໜອງການຊ່ວຍເຫຼືອທາງດ້ານນິຕິກຳ ເພື່ອຫຼຸດຜ່ອນພາລະທີ່ບໍ່ເໝາະສົມ ແກ່ຜູ້ຖືກເຄາະຮ້າຍ.212 ຄວນພິຈາລະນາ ການກຳຈັດອຸປະສັກຕ່າງໆ ທີ່ຜູ້ຖືກເຄາະຮ້າຍບາງຄົນ ອາດຈະມີ ໃນເວລາເຂົ້າເຖິງ ວິທີການແກ້ໄຂ, ລວມທັງໂດຍການຮັບປະກັນວ່າ ການແກ້ໄຂຫຼັງການຕັດສິນໂທດແມ່ນເປັນຜົນດີກັບເດັກ ແລະ ສາມາດເຂົ້າເຖິງເດັກນ້ອຍ ແລະໄວໜຸ່ມໄດ້, ແລະ ມີການຄຳນຶງເຖິງ ຄວາມພິການ ທີ່ສອດຄ່ອງກັບບົດບັນຍັດຂອງກົດໝາຍພາຍໃນ ທີ່ກ່ຽວຂ້ອງກັບ ການເຂົ້າເຖິງ ລະບົບຄວາມຍຸຕິທຳ ແລະ ການແກ້ໄຂທີ່ມີປະສິດທິພາບ.

---

208 ຄຳແນະນຳ ກ່ຽວກັບ ບັນຫາ ການຕອບສະໜອງຄວາມຍຸຕິທຳທາງອາຍາ ທີ່ເໝາະສົມ ແກ່ ຜູ້ຖືກເຄາະຮ້າຍ ທີ່ໄດ້ຖືກບັງຄັບ ໃຫ້ກະທຳຜິດ ຍ້ອນເປັນຜົນມາຈາກ ການທີ່ເຂົາເຈົ້າຖືກຄ້າມະນຸດ: ເອກະສານຄວາມເປັນມາ ທີ່ຖືກກະກຽມ ໂດຍ ກອງເລຂາ ຂອງ ກຸ່ມປະຕິບັດງານ ກ່ຽວກັບ ການຄ້າມະນຸດ, ນະຄອນວຽນນາ 10 ແລະ 11 ກັນຍາ 2020, ເອກະສານ ຂອງ UN CTOC/COP/WG.4/2020/2 (15 ມິຖຸນາ 2020), ວັກ 50.

209 ສັງລວມຫຍໍ້ບັນຫາການຄ້າມະນຸດ: ການຍົກເລີກ ຄຳຕັດສິນໂທດ (Polaris, ປີ 2015) 1

210 ຍົກຕົວຢ່າງ, ຢູ່ໃນຄະດີ New York v. G.M. 32 Misc. 3d 274 (ສານອາຍາ ຂອງນະຄອນນິວຢອກ, ເມືອງຄຣີນ, ເມສາ 29, 2011), ສານ ໄດ້ຍົກເລີກ ຂໍ້ຫາ ສຳລັບ ການບຸກລຸກ ແລະ ການຄອບຄອງ ສານທີ່ຢູ່ໃນການຄວບຄຸມ, ພ້ອມກັບ ຂໍ້ຫາໂສເພນີ ທີ່ກຳນົດວ່າ ການຕັ້ງຂໍ້ຫາເຫຼົ່ານີ້ ຍັງໄດ້ເປັນຜົນມາຈາກການຖືກຄ້າມະນຸດ ແລະ ລັດຖະບັນຍັດ ໄດ້ອະນຸຍາດໃຫ້ສານ ອອກຄຳສັ່ງ ລົງມືປະຕິບັດເພີ່ມຕື່ມ ທີ່ເໝາະສົມ ພາຍໃຕ້ສະພາບການ. ຄະດີ ທີ່ໄດ້ກ່າວເຖິງຢູ່ໃນສັງລວມຫຍໍ້ບັນຫາການຄ້າມະນຸດ: ການຍົກເລີກ ຄຳຕັດສິນໂທດ (Polaris, ປີ 2015) 1

211 ສັງລວມຫຍໍ້ບັນຫາການຄ້າມະນຸດ: ການຍົກເລີກ ຄຳຕັດສິນໂທດ (Polaris, ປີ 2015) 1

212 *ການຈັດຕັ້ງປະຕິບັດ ຫຼັກການການບໍ່ລົງໂທດ: ບົດລາຍງານ ຂອງ ຜູ້ລາຍງານພິເສດ ກ່ຽວກັບ ການຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, ທ່ານ Siobhán Mullaly,* ເອກະສານ ຂອງ UN A/HRC/47/34 (17 ພຶດສະພາ 2021) ວັກ 50.

## ຫ້ອງທີ 13: ກົດໝາຍ Vacatur ໃນການສະໜັບສະໜູນ ຜູ້ຖືກເຄາະຮ້າຍ ທີ່ມີໂທດທາງອາຍາ

ໃນປີ 2016, ເອກອັກຄະລັດຖະທູດພິເສດ ຂອງ ສະຫາລັດອາເມລິກາ ປະຈຳ ສຳນັກງານ ຕິດຕາມ ແລະ ຕ້ານ ການຄ້າມະນຸດ ທີ່ ກະຊວງການຕ່າງປະເທດ ຂອງ ສະຫາລັດອາເມລິກາ ໄດ້ປະກອບສ່ວນ ບາງທັດສະນະ ຕໍ່ກັບ ໂຄງການ CNN Freedom Project, ຕໍ່ກັບ ຄຸນຄ່າ ຂອງ ກົດໝາຍ Vacatur.

ໃນຂະນະທີ່ ຄວາມພະຍາຍາມ ຂອງລັດຖະບານ ຈະບໍ່ສາມາດແກ້ໄຂມົນທິນໃຫ້ກັບມາຄືນສູສະພາບເດີມໄດ້ ທີ່ເປັນຜົນມາຈາກ ການຄ້າມະນຸດ, ພວກເຮົາ ສາມາດເລີ່ມຕົ້ນ ດ້ວຍ ການປັບປຸງກົດໝາຍ ແລະ ນະໂຍບາຍຂອງພວກເຮົາ ເພື່ອຮັບປະກັນວ່າ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ຈະບໍ່ຖືກດຳເນີນຄະດີ ສຳລັບອາຊະຍາກຳ ທີ່ເຂົາເຈົ້າໄດ້ຖືກບັງຄັບໃຫ້ກະທຳ ໃນເບື້ອງຕົ້ນ. ຖ້າຖືກດຳເນີນຄະດີ ແລະ ຖືກຕັດສິນໂທດ, ພວກເຮົາ ຕ້ອງມີລະບົບໜຶ່ງໄວ້ ສຳລັບຍົກເລີກ, ຫຼື ລຶບລ້າງ ບັນທຶກຄະດີອາຊະຍາກຳ ຂອງຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ. ໃນປີ 2010, ນິວຢອກ ໄດ້ກາຍເປັນລັດທຳອິດ ທີ່ຜ່ານກົດໝາຍ ທີ່ອະນຸຍາດໃຫ້ ຜູ້ລອດຊີວິດຈາກ ການຄ້າມະນຸດ ຍົກເລີກການຕັດສິນໂທດ ຂອງເຂົາເຈົ້າ ຄວາມຜິດໃນການຄ້າປະເວລາ. ໃນປີ 2013, ກົດໝາຍ ຂອງລັດຟໍລີດ້າ ໄດ້ໄປໄກກວ່ານັ້ນອີກ, ທີ່ກຳນົດ ການລຶບລ້າງ «ທຸກຄຳຕັດສິນລົງໂທດ ສຳລັບຄວາມຜິດ ທີ່ໄດ້ກະທຳ ໃນຂະນະທີ່ ... ຕົກເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ.» ກົດໝາຍ Vacatur ກຳນົດໃຫ້ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ບໍ່ພຽງແຕ່ມີໂອກາດແກ້ໄຂ ຄວາມບໍ່ຍຸຕິທຳໃນອະດີດເທົ່ານັ້ນ, ແຕ່ກໍຍັງຊ່ວຍໃຫ້ເຂົາເຈົ້າ ຟື້ນຟູຊີວິດຂອງເຂົາ ອີກດ້ວຍ.[213]

---

213 ທ່ານ Susan Coppedge, "ຢຸດການລົງໂທດທາງອາຍາ ແກ່ ຜູ້ຖືກເຄາະຮ້າຍ", ໂຄງການ CNN Freedom 17 March 2016 ມີຢູ່ທີ່: https://edition.cnn.com/2016/03/17/opinions/coppedge-freedom-project-new-lives/index.html

# ເອກະສານຊ້ອນທ້າຍ

## ເອກະສານຊ້ອນທ້າຍ 1: ຄວາມຜິດທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄດ້ກະທຳຜິດທາງອາຍາ

ເອກະສານຊ້ອນທ້າຍສະບັບນີ້ ກຳນົດ ລາຍຊື່ຕົວຢ່າງການກະທຳຜິດ ທີ່ບໍ່ໝົດພຽງເທົ່ານີ້ ທີ່ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ໄດ້ຖືກລົງໂທດ.[214]

## ການກະທຳຜິດ ທີ່ກ່ຽວຂ້ອງກັບ ການເຂົ້າອອກເມືອງແລະ ກ່ຽວກັບເອກະສານ

ຢູ່ໃນປະເທດທີ່ມີທ່າອ່ຽງທີ່ເຂັ້ມແຂງ ທີ່ຈະກຳນົດໃຫ້ມີຄວາມຜິດທາງອາຍາ ສຳລັບ ການເຂົ້າອອກເມືອງ ແບບໄປໆມາໆ ແລະ ດຳເນີນຄະດີກັບຜູ້ເຄື່ອນຍ້າຍ ທີ່ໄປໆມາໆ, ບຸກຄົນທີ່ຖືກຄ້າມະນຸດ ກໍຍັງຖືກລົງໂທດທາງອາຍາ ເຊັ່ນດຽວກັນ.[215] ການກະທຳຜິດ ທີ່ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ໄດ້ຖືກດຳເນີນຄະດີ ອາດກວມເອົາ ການອອກເດີນທາງໂດຍບໍ່ໄດ້ຮັບອະນຸຍາດ, ການເຂົ້າເມືອງຜິດກົດໝາຍ, ການພັກເຊົາ ທີ່ຜິດກົດໝາຍ, ການສໍ້ໂກງ ຫຼື ປອມແປງເອກະສານ, ການຄອບຄອງ ຫຼື ນຳໃຊ້ເອກະສານປອມ, ແລະ ການກະທຳຜິດທີ່ກ່ຽວຂ້ອງ. ພາກພື້ນອາຊຽນ ໄດ້ຖືກຊີ້ວ່າ ເປັນພາກພື້ນທີ່ມີການລວມ ລະບຽບການ ຕ້ານການຄ້າມະນຸດ ແລະ ການເຂົ້າອອກເມືອງ ເຂົ້າເປັນລະບຽບການດຽວ, ທີ່ສົ່ງຜົນໃຫ້ມີ ຄວາມສ່ຽງສູງ ທີ່ຜູ້ຖືກເຄາະຮ້າຍ ຈະຖືກກຳນົດຕົວ ແລະ ເນລະເທດອອກນອກປະເທດ ໃນນາມເປັນ ເປັນຜູ້ເຂົ້າ-ອອກເມືອງ ແບບໄປໆມາໆ. ດັ່ງທີ່ບົດສຶກສາໜຶ່ງ ໃນປີ 2021 ທີ່ໃຫ້ຂໍ້ສັງເກດວ່າ:

> *ກົດໝາຍອາຍາພາຍໃນປະເທດ ແລະ ນິຕິກຳຕ້ານການຄ້າມະນຸດຢູ່ໃນບັນດາປະເທດສະມາຊິກອາຊຽນ ແມ່ນມີຄວາມແຕກຕ່າງກັນ ຢ່າງຫຼວງຫຼາຍ. ຂອບເຂດ ຂອງການຄ້າມະນຸດ ແມ່ນບໍ່ຊັດເຈນ, ໂດຍທີ່ມີນິຕິກຳພາຍໃນບາງສະບັບ ທີ່ກຳນົດບໍ່ຈະແຈ້ງລະຫວ່າງ ການຄ້າມະນຸດ ແລະ ການລັກລອບເຄື່ອນຍ້າຍ. ສະນັ້ນ, ການລົງມືປະຕິບັດຕ້ານການຄ້າມະນຸດ ໂດຍທົ່ວໄປ ແມ່ນຕິດພັນກັບ ແລະ ນອນຢູ່ໃນ ລະບຽບການການເຂົ້າອອກເມືອງ, ໂດຍສະເພາະ ແມ່ນຢູ່ໃນບັນດາປະເທດ ທີ່ຮັບເອົາຜູ້ເຄື່ອນຍ້າຍເຂົ້າເມືອງ.*[216]

---

214 ຜູ້ລາຍງານພິເສດ ກ່ຽວກັບ ການຄ້າມະນຸດ ແນະນຳວ່າ ປະເທດຕ່າງໆ ຮັບຮອງເອົາ ບັນຊີລາຍຊື່ການກະທຳຜິດ ແບບປາຍເປີດ ແລະ ບໍ່ຈຳກັດເທົ່ານັ້ນ ທີ່ມັກຈະກ່ຽວຂ້ອງກັບ ການຄ້າມະນຸດ, ທີ່ຄວນຖືກເຜີຍແຜ່ ແລະ ປະກອບເຂົ້າໃນການຝຶກອົບຮົມ ແລະ ໃນຄຳແນະນຳ ທີ່ຖືກຕີແຜ່ ໃຫ້ແກ່ ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ແລະ ບຸກຄົນທັງໝົດ ທີ່ອາດຈະພົວພັນກັບການຄ້າມະນຸດ. ໃຫ້ເບິ່ງ: *ການຈັດຕັ້ງປະຕິບັດ ຫຼັກການການບໍ່ລົງໂທດ: ບົດລາຍງານ ຂອງ ຜູ້ລາຍງານພິເສດ ກ່ຽວກັບການຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, ທ່ານ Siobhán Mullaly,* ເອກະສານ ຂອງ UN A/HRC/47/34 (17 ພຶດສະພາ 2021), ວັກ. 54(c).

215 *ບົດລາຍງານ ຂອງ ຜູ້ລາຍງານພິເສດ ກ່ຽວກັບ ການຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, ທ່ານ Maria Grazia Giammarinaro,* 6 ເມສາ 2020, ເອກະສານ ຂອງ UN A/HRC/44/45, 35.

216 ທ່ານ Marija Jovanović, ກົດໝາຍສາກົນ ແລະ ການລັກລອບທົ່ວໄປພາຍໃນພາກພື້ນ: EU ແລະ ASEAN ກຳນົດຄືນ ລະບອບການຄ້າມະນຸດໂລກ, ວາລະສານກົດໝາຍສາກົນ ແຫ່ງອາເມລິກາ, 2021, ສະບັບທີ. XX, 1, 19

ສິ່ງດຽວກັນນີ້ ແມ່ນເປັນຄວາມຈິງ ຢູ່ໃນພາກພື້ນອື່ນໆ. ຍົກຕົວຢ່າງ, ຜູ້ເຄື່ອນຍ້າຍສັນຊາດໄນຈີເຣຍ ທີ່ພົວພັນໃນການຂາຍບໍລິການທາງເພດ ຢູ່ເອີຣົບ ໄດ້ຖືກກຳນົດຕົວວ່າ ເປັນ 'ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ' ຫຼື ເປັນ 'ອາຊະຍາກອນ' ຫຼື 'ຜູ້ເຄື່ອນຍ້າຍ ທີ່ບໍ່ມີເອກະສານ' ຢູ່ໃນປະເທດປາຍທາງ ແລະ ໃນເວລາທີ່ເຂົາເຈົ້າກັບຄືນໄປປະເທດໄນຈີເຣຍ. ຄວາມເປັນຈິງດັ່ງກ່າວ ແມ່ນຍັງບໍ່ຈະແຈ້ງ ລະຫວ່າງ ຫຼັກການດ້ານມະນຸດສະທຳ ເພື່ອຊ່ວຍເຫຼືອກອບກູ້ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ, ແລະ ໃນເວລາດຽວກັນ ກໍຄຳນຶງເຖິງຜົນປະໂຫຍດ ໃນການດຳເນີນຄະດີ ເພື່ອທັບມ້າງເຄືອຂ່າຍ «ຜູ້ເຄື່ອນຍ້າຍເພື່ອຜົນປະໂຫຍດທາງເສດຖະກິດ» ທີ່ລະເມີດ ກົດໝາຍການເຂົ້າອອກເມືອງ. ຖ້າເຮົາອີງໃສ່ຫຼັງການທຳອິດ ຈະໄດ້ມີການກຳນົດຕົວ ເປັນຜູ້ຖືກເຄາະຮ້າຍ ສຳລັບ ຜູ້ທີ່ຖືກກ່າວຫາວ່າ ເປັນຜູ້ຄ້າມະນຸດ, ແລະ ໄດ້ກັບຄືນ ສູ່ປະເທດຕົ້ນທາງ ຂອງຕົນ, ໃນຂະນະທີ່ ຖ້າອີງໃສ່ຫຼັກການທີສອງ ຜູ້ກ່ຽວ ຈະ'ຖືກເນລະເທດ', ເຖິງແມ່ນວ່າ ຄວາມແຕກຕ່າງ ທີ່ສຳຄັນ ສຳລັບບຸກຄົນດັ່ງກ່າວ ອາດບໍ່ແມ່ນປະເດັນ.[217]

ອາດຈະມີຄວາມສ່ຽງ ທີ່ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ຈະຖືກດຳເນີນຄະດີ ຍ້ອນມີສ່ວນກ່ຽວຂ້ອງກັບ ການແຕ່ງງານແບບປອມແປງ ເພື່ອອຳນວຍຄວາມສະດວກໃຫ້ແກ່ການເຂົ້າອອກເມືອງ ແບບໄປໆມາໆ. ຍົກຕົວຢ່າງ, ຢູ່ໃນເອີຣົບ ໄດ້ມີກໍລະນີຂອງປະຊາຊົນ, ຊຶ່ງປົກກະຕິແລ້ວ ແມ່ນເປັນເພດຍິງ, ທີ່ຖືກບັງຄັບ, ລັກພາຕົວ ຫຼື ຂົນສົ່ງ ແລະ ບັງຄັບໃຫ້ແຕ່ງງານກັບ ຄົນຂອງປະເທດທີສາມ ເພື່ອຈຸດປະສົງໃຫ້ເຂົາເຈົ້າ ໄດ້ຮັບສະຖານະພາບ ໃນສະຫະພາບເອີຣົບ. ຜູ້ຄ້າມະນຸດ ຈະໄດ້ຮັບເງິນ ສຳລັບການຈັດການເລື້ອງນີ້. ແມ່ຍິງຈຳນວນຫຼາຍ ທີ່ເຂົ້າຮ່ວມການຈັດຕັ້ງດັ່ງກ່າວ ມີລາຍງານວ່າ ມີຄວາມພິການທາງຈິດ, ແມ່ນຕົກເປັນເຫຍື່ອ ຂອງການລ່ວງລະເມີດທາງເພດ ແລະ ຖືກຄວບຄຸມຢ່າງເຄັ່ງຄັດ.[218]

## ການກະທຳຜິດ ທີ່ກ່ຽວຂ້ອງກັບ ໂສເພນີ

ຢູ່ໃນປະເທດ ທີ່ກຳນົດໃຫ້ ການຄ້າປະເວນີ ມີຄວາມຜິດທາງອາຍາ, ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ສາມາດຖືກດຳເນີນຄະດີ ສຳລັບການເຄື່ອນໄຫວກິດຈະກຳຕ່າງໆ ເຊັ່ນ: ການຊັກຊວນ ແລະ ການຢືນຖ້າກວັກລູກຄ້າ ໃຫ້ໃຊ້ບໍລິການທາງເພດ.[219] ຢູ່ໃນປະເທດ ທີ່ມີການຄວບຄຸມການຄ້າປະເວນີ, ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ອາດຈະຖືກລົງໂທດ ຍ້ອນດຳເນີນການ ນອກຈາກທີ່ກຳນົດໄວ້ໃນ ຂໍ້ກຳນົດຂອງລະບຽບການ.[220] ການລວມເຂົ້າກັນ ລະຫວ່າງ ການຄ້າປະເວນີແບບບໍ່ໄດ້ບັງຄັບ ແລະ ການຄ້າມະນຸດ ສຳລັບຈຸດປະສົງ ໃນການຂູດຮີດທາງເພດ ໄດ້ສົ່ງຜົນໃຫ້ເກີດຄວາມສັບສົນ ຢ່າງໃຫຍ່ຫຼວງ ກ່ຽວກັບວ່າ ໃຜທີ່ແມ່ນ ແລະ ໃຜທີ່ບໍ່ແມ່ນ ຜູ້ຖືກເຄາະຮ້າຍ.[221] GAATW ສະເໜີຕົວຢ່າງ ຂອງການຄ້າມະນຸດ ສຳລັບການຂູດຮີດທາງເພດ ທີ່ຖືກເປີດເຜີຍໂດຍ ອົງການຜູ້ໃຫ້ບໍລິການທາງເພດ (ປະເທດອາຟຣິກາໃຕ້) ແລະ ຫຼາຍໆກໍລະນີ ຈາກປະເທດອິນເດຍ ເມື່ອແມ່ຍິງໄວໜຸ່ມ ໄດ້ຖືກສົ່ງໄປຮ້ານຜູ້ສາວ ແລະ ອົງການຜູ້ໃຫ້ບໍລິການທາງເພດ ສາມາດກຳນົດໄດ້ວ່າ ເຂົາເຈົ້າ ໄດ້ມາຮອດສະຖານທີ່ ຜ່ານທາງ ການຄ້າມະນຸດ.[222] ໄດ້ມີການລາຍງານວ່າ ໄດ້ມີການລວມແບບດຽວກັນ ຢູ່ໃນຢູໂຣບ, ເມື່ອຜູ້ໃຫ້ບໍລິການທາງເພດທີ່ເປັນຜູ້ເຄື່ອນຍ້າຍ ໄດ້ຮັບຜົນກະທົບ.[223]

ຄວາມກັງວົນ ກ່ຽວກັບການນຳໃຊ້ ອະນຸສັນຍາການຄ້າມະນຸດ ໃນທາງທີ່ຜິດ ໃນລັກສະນະທີ່ແບ່ງ 'ຜູ້ຖືກເຄາະຮ້າຍທີ່ມີຄວາມບໍລິສຸດ' ແລະ 'ຜູ້ເຄື່ອນຍ້າຍທີ່ມີຄວາມຜິດ' ອອກແບບຄ້າວໆ ໄດ້ກ້າວໄປສູ່ ການສົນທະນາ ຕ້ານການຄ້າ

---

217 ທ່ານ Sine Plambech, ລະຫວ່າງ ຜູ້ຖືກເຄາະຮ້າຍ ແລະ ອາຊະຍາກຳ: ການກອບກູ້, ການເນລະເທດ ແລະ ຄວາມຮຸນແຮງທີ່ເກີດຂຶ້ນທຸກວັນ ຂອງ ຜູ້ເຄື່ອນຍ້າຍ, *ການເມືອງສັງຄົມ.* ສະບັບທີ. 24. No. 3, 2014, 382-402 ທີ່ 384-385.

218 ຍົກຕົວຢ່າງ, ຢູ່ໃນປະເທດສະຫະລາຊະອານາຈັກ, *ການຄ້າມະນຸດ ສຳລັບກິດຈະກຳອາຊະຍາກຳ ທີ່ຖືກບັງຄັບ ແລະ ການຂໍທານ ໃນເອີຣົບ: ບົດສຶກສາລະອຽດ ແລະ ຫຼັກການປະຕິບັດ* (ອົງການສາກົນ ຕ້ານການເປັນທາດ, 2014) 64, 72-73

219 *ບົດລາຍງານ ຂອງ ຜູ້ລາຍງານພິເສດ ກ່ຽວກັບ ການຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, ທ່ານ Maria Grazia Giammarinaro,* 6 ເມສາ 2020, ເອກະສານ ຂອງ UN A/HRC/44/45, 35.

220 ຄຳແນະນຳ ກ່ຽວກັບ ບັນຫາ ການຕອບສະໜອງຄວາມຍຸຕິທຳທາງອາຍາ ທີ່ເໝາະສົມ ແກ່ ຜູ້ຖືກເຄາະຮ້າຍ ທີ່ໄດ້ຖືກບັງຄັບ ໃຫ້ກະທຳຜິດ ຍ້ອນເປັນຜົນມາຈາກ ການທີ່ເຂົາເຈົ້າຖືກຄ້າມະນຸດ: ເອກະສານຄວາມເປັນມາ ທີ່ຖືກກະກຽມ ໂດຍ ກອງເລຂາ ຂອງ ກຸ່ມປະຕິບັດງານ ກ່ຽວກັບ ການຄ້າມະນຸດ, ນະຄອນວຽນນາ 10 ແລະ 11 ກັນຍາ 2020, ເອກະສານ ຂອງ UN CTOC/COP/WG.4/2020/2 (15 ມິຖຸນາ 2020), ວັກ 7.

221 ໃຫ້ເບິ່ງ ອື່ນໆອີກ, ທ່ານ Parmanand, Sharmila (2021). *ການຫຼຸດພົ້ນຈາກຄວາມຮຸນແຮງ: ການຕ້ານການຄ້າມະນຸດ ແລະ ການຟື້ນຟູ ແມ່ຍິງຄົນຟີລິປິນທີ່ຖືກກອບກູ້ຊ່ວຍເຫຼືອ ເຂົ້າສູ່ຫົວຂໍ້ສົນລະທຳ.* ວາລະສານ ການສຶກສາ ຂອງແມ່ຍິງສາກົນ, 22(2), 78-91

222 ທ່ານ Borislav Gerasimov, ການເວົ້າຢູ່ທີ່ ການສຳມະນາ ISRSE ທາງອອນລາຍ ກ່ຽວກັບ ການເຮັດວຽກບໍລິການທາງເພດ, ການເຄື່ອນທີ່, ການຂູດຮີດ ແລະ ການຄ້າມະນຸດ ໃນເອີຣົບ, 17 ພຶດສະພາ 2021.

223 *ຈາກ ຄວາມອ່ອນແອ ໄປສູ່ ຄວາມສາມາດໃນການປັບຕົວ: ການຈັດຕັ້ງ ຂອງ ຜູ້ເຮັດວຽກບໍລິການທາງເພດ ໃນການຈັບການຂູດຮີດ* (ຄະນະກຳມະການສາກົນ ກ່ຽວກັບ ສິດທິ ຂອງຜູ້ເຮັດວຽກບໍລິການທາງເພດ ໃນເອີຣົບ, ພຶດສະພາ 2021) 8

ມະນຸດ ເປັນເວລາດົນນານ. ໂດຍສະເພາະ, ການທຳການ ‘ບຸກໂຈມຕີ ແລະ ກອບກູ້’ ທີ່ຖືກດຳເນີນ ພາຍໃຕ້ຂໍ້ອ້າງວ່າ ‘ເປັນການຊ່ວຍກອບກູ້ຊ່ວຍເຫຼືອ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ’ ໄດ້ຖືກວິພາກວິຈານ ຢ່າງກວ້າງຂວາງ ວ່າພາໃຫ້ເກີດຄວາມອັນຕະລາຍ ທີ່ເກີດຂຶ້ນກັບຄົນ ທີ່ຢູ່ໃນສະຖານທີ່, ທີ່ສິດຂອງເຂົາເຈົ້າ ຖືກລ່ວງລະເມີດ ໂດຍເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ແລະ ຜູ້ອື່ນໆ ທີ່ໄດ້ເຂົ້າຮ່ວມໃນການບຸກໂຈມຕີ, ລວມທັງ ແຕ່ບໍ່ພຽງແຕ່, ຜູ້ທີ່ຕົກເປັນເຫຍື່ອຂອງການຄ້າມະນຸດ. ໃນຂະນະທີ່ ໄດ້ສ້າງຄວາມຄືບໜ້າ ທີ່ມີຄວາມສຳຄັນ ຕໍ່ ການເສີມສ້າງຄວາມເຂົ້າໃຈ ກ່ຽວກັບການນຳໃຊ້ວິທີການ ແລະ ຄວາມສະຫຼັບສັບຊ້ອນ ຂອງການຍິນຍອມ ຢູ່ໃນສະພາບການ ການຄ້າມະນຸດ, ການນຳໃຊ້ກອບວຽກຕ້ານການຄ້າມະນຸດ ໃນທາງທີ່ບໍ່ຖືກຕ້ອງ ເຮັດໃຫ້ມີການສືບຕໍ່ ສິ່ງຜົນກະທົບທາງລົບ ຕໍ່ ກຸ່ມຄົນທີ່ຖືກມອງຂ້າມ, ລວມທັງຜູ້ທີ່ໄດ້ມີສ່ວນຮ່ວມ ຢູ່ໃນອຸດສາຫະກຳການໃຫ້ບໍລິການທາງເພດ.[224] ຜົນໄດ້ຮັບອັນໜຶ່ງ ທີ່ມີຄວາມແຕກຕ່າງກັນບໍ່ພໍເທົ່າໃດ ກ່ຽວກັບ ບັນຫາເຫຼົ່ານີ້ ແມ່ນວ່າ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ສຳລັບການຂູດຮີດທາງເພດ ອາດຈະຖືກລົງໂທດທາງອາຍາ ຍ້ອນມີສ່ວນຮ່ວມ ຢູ່ໃນອຸດສະຫະກຳໃຫ້ບໍລິການທາງເພດ, ໂດຍສະເພາະ ເມື່ອວິທີການທີ່ມີຄວາມລະອຽດອ່ອນຫຼາຍຂຶ້ນ ໄດ້ຖືກນຳໃຊ້ ໂດຍ ຜູ້ຄ້າມະນຸດ ເພື່ອເອົາເຂົາເຈົ້າ ໄປໄວ້ ແລະ ປະໄວ້ທີ່ນັ້ນ. ໃນບາງກໍລະນີ, ແມ່ນແຕ່ເດັກນ້ອຍ ກໍຍັງຖືກດຳເນີນຄະດີ ສຳລັບການກະທຳຜິດ ກ່ຽວກັບການເປັນໂສເພນີ.

**ກໍລະນີສຶກສາ: ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ທີ່ເປັນເດັກນ້ອຍ ທີ່ຖືກຈັບຍ້ອນຄ້າປະເວນີ**

ຂ້ອຍອາຍຸ 13 ປີ ແລະ ຢູ່ຕາມຖະໜົນຫົນທາງຂອງ D.C. ຜູ້ຄ້າມະນຸດຂອງຂ້ອຍໄດ້ໃຫ້ໄວລຸ້ນຍິງອາຍຸ 16 ປີ ຄົນໜຶ່ງ ສະແດງໃຫ້ຂ້ອຍຮູ້ວ່າ ຈະເຮັດແນວໃດເມື່ອມີຜູ້ຊາຍມາຊື້ຕົວຂ້ອຍ ເພື່ອເອົາຂຶ້ນລົດໄປນຳ. ມັນແມ່ນຄືນທີສາມ ຂອງພວກເຂົາ ທີ່ຂາຍຕົວຂ້ອຍ ໃນຕົວເມືອງ ຊຶ່ງຂັ້ນກັນກັບ ທຳນຽບຂາວ. ຂ້ອຍຮູ້ສຶກໜາວ, ຫິວ ແລະ ບໍ່ຮູ້ວ່າຈະເຮັດຫຍັງ. ຫຼັງຈາກນັ້ນ, ຕຳຫຼວດໄດ້ປະກົດຕົວ,” [...] “ລົດຕຳຫຼວດ ຢູ່ທົ່ວທຸກແຫ່ງ ແລະ ເຈົ້າໜ້າທີ່ຫ້າຄົນ ໄດ້ເລີ່ມຖາມຂ້ອຍ. ຂ້ອຍຮູ້ສຶກຢ້ານ. ຂ້ອຍ ພະຍາຍາມເວົ້າຕົວະເຈົ້າໜ້າທີ່ຕຳຫຼວດຍິງ ແລະ ເວົ້າວ່າ ຂ້ອຍອາຍຸ 18 ປີ. ມີຫຼາຍກົດລະບຽບ ໃນເວລາທີ່ທ່ານຖືກຄ້າບໍລິການທາງເພດ ແລະ ການເວົ້າຕົວະກ່ຽວກັບອາຍຸຂອງເຈົ້າ ແມ່ນຫນຶ່ງໃນນັ້ນ. ການລະເມີດກົດລະບຽບ ອາດຈະຖືກລົງໂທດດ້ວຍການຖືກຂ້ຽນຕີ, ຫຼືຮ້າຍແຮງກວ່າເກົ່າ. ໃນນາມເປັນເດັກນ້ອຍ, ຂ້ອຍຄິດວ່າ ການຈັບກຸມແມ່ນບໍ່ໂຫດຮ້າຍເທົ່າການຖືກທຸບຕີ.” [...] “ເປັນເວລາຫຼາຍຊົ່ວໂມງ, ທີ່ຂ້ອຍ ຢູ່ທ່າມກາງການຖືກຕັກເຕືອນກ່ຽວກັບຄວາມຜິດ ຊຶ່ງວ່າຂ້ອຍໄດ້ຖືກສອບສວນ ຕະຫຼອດ ແລະ ລວມທັງໄດ້ຖືກຖາມ ກ່ຽວກັບ ຜູ້ຄ້າມະນຸດ ຂອງຂ້ອຍ. ຂ້ອຍຮູ້ສຶກຢ້ານຫຼາຍ ຈົ່ນບໍ່ຢາກເວົ້າ. ຕຳຫຼວດ ໄດ້ຈັບຂ້ອຍໃນຂໍ້ຫາຄ້າປະເວນີ ແລະ ໄດ້ສົ່ງຂ້ອຍໄປບ່ອນກັກຂັງ. ມັນເຮັດໃຫ້ຂ້ອຍອັບອາຍ. ທັງໝົດນີ້ ສຳລັບເດັກຍິງຜູ້ອື່ນໆ ແມ່ນຢູ່ທີ່ນັ້ນ ຍ້ອນຂໍ້ຫາເລັກໆນ້ອຍໆເຊັ່ນ ການໜີຮຽນ ແລະ ຢູ່ທີ່ນັ້ນ ຂ້າພະເຈົ້າ ຖືກຈັບໃນຂໍ້ຫາຄ້າປະເວນີ.” [...] “ແມ່ນແຕ່ຜູ້ພິພາກສາ ກໍບໍ່ໄດ້ແນມເບິ່ງຂ້ອຍເລີຍ ໃນຂະນະທີ່ລາວກຳນົດວ່າ ຂ້ອຍຄວນຖືກສົ່ງໄປສະຖານທີ່ ເພື່ອກັກໄວ້ສຳລັບການພື້ນຟູຮັກສາ. ຂ້ອຍ ຢາກຖາມລາວວ່າ ເປັນຫຍັງ ຈຶ່ງຕ້ອງແມ່ນຂ້ອຍ ທີ່ຖືກກັກຕົວ ເມື່ອຜູ້ຊາຍ ທີ່ເປັນຜູ້ໃຫຍ່ທັງໝົດເຫຼົ່ານີ້ ທີ່ມີເພດສຳພັນກັບເດັກນ້ອຍ ຈຶ່ງຍ່າງໜີ ແບບອິດສະຫຼະ?[225]

224 ໃຫ້ເບິ່ງຕົວຢ່າງ, *ຊົນ ແລະ ແລ່ນ: ຜົນກະທົບ ຈາກ ນະໂຍບາຍຕ້ານການຄ້າມະນຸດ ແລະ ຫຼັກການປະຕິບັດ ກ່ຽວກັບ ສິດທິມະນຸດ ຂອງຜູ້ເຮັດວຽກບໍລິການທາງເພດ ໃນປະເທດໄທ* (ທີມງານ RatS-W, Empower, ປີ 2012).

225 ທ່ານ Ashley Lowe, ໄດ້ກ່າວຢູ່ໃນ ໄວເດັກທີ່ຖືກຈັບ: ການເດີນທາງ ຂອງ Ashley Lowe ໃນຖານະເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດທີ່ຖືກຂູດຮີດທາງເພດ ທີ່ໄດ້ເຂົ້າຄຸກ, ໂດຍ Andrea Powell, ຜູ້ຮ່ວມກໍ່ຕັ້ງ ແລະ ຜູ້ບໍລິຫານ, ທ່ານ Karana Rising ກັບ ທ່ານ Ashley Lowe, ຜູ້ນຳ ຂອງຜູ້ລອດຊີວິດ ແລະ ຜູ້ອຳນວຍການສະຫນັບສະຫນູນ, ທ່ານ Karana Rising, https://www.dressember.org/blog/ashleylowejourney

ການສົມມຸດຖານບົດບາດຍິງຊາຍ ແມ່ນເປັນສິ່ງທີ່ຊ່ວຍ ບຳບັດຮັກສາ ຜູ້ຖືກເຄາະຮ້າຍ ທີ່ເປັນຜູ້ກະທຳຜິດ, ຊຶ່ງສາມາດສົ່ງຜົນ ເຮັດໃຫ້ເພດຍິງ ຖືກຕັດສິນ ບົນພື້ນຖານ ຄວາມຄາດຫວັງ ກ່ຽວກັບວ່າ ມັນໝາຍເຖິງຫຍັງ ຄຳວ່າ ເດັກຍິງ ຫຼື ແມ່ຍິງ 'ທີ່ດີ' ຫຼື 'ບໍ່ດີ'. ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ໂດຍສະເພາະແມ່ນແມ່ຍິງ ທີ່ຖືກຂູດຮີດທາງເພດ ອາດຈະຖືກຈັບຍ້ອນ ທັດສະນະກ່ຽວກັບຂໍ້ຈຳກັດທາງດ້ານຄວາມອິດສະຫຼະພາບ ຂອງຜູ້ທີ່ຢູ່ໃນການປົກຄອງຂອງຜູ້ໃຫຍ່ທີ່ວ່າ ການຈັບກຸມ ແລະ ການເຂົ້າຄຸກ ແມ່ນເປັນຜົນປະໂຫຍດສູງສຸດ ຂອງຜູ້ຖືກເຄາະຮ້າຍ.[226] ຂະບວນການປ່ຽນແປງ ທາງດ້ານບົດບາດຍິງ-ຊາຍນີ້ ອາດຍັງຈະດຳເນີນໄປ ເພື່ອສົ່ງຜົນໃຫ້ ຜູ້ຖືກເຄາະຮ້າຍ ທີ່ເປັນເພດຊາຍ ຖືກປະຕິບັດສະເໝືອນ ເປັນຜູ້ກະທຳຜິດ ຫຼາຍກວ່າທີ່ຈະເປັນ ຜູ້ຖືກເຄາະຮ້າຍ. ຍົກຕົວຢ່າງ, ໃນກໍລະນີຂອງຜູ້ຊາຍ ທີ່ຕົກເປັນເຫຍື່ອ ຂອງການຄ້າມະນຸດ ໃນຮູບແບບຂອງການຂູດຮີດທາງເພດ, ການສົມມຸດຖານ ອາດຈະແມ່ນວ່າ ເດັກຊາຍບໍ່ແມ່ນ ຜູ້ຖືກເຄາະຮ້າຍຈາກການຂູດຮີດທາງເພດ, ບໍ່ແມ່ນຜູ້ຖືກເຄາະຮ້າຍ ຍ້ອນວ່າເດັກຊາຍ 'ຕ້ອງການທາງເພດ'.[227]

## ການກະທຳຜິດ ທີ່ກ່ຽວຂ້ອງກັບຢາເສບຕິດ

**ການໃຊ້ຢາເສບຕິດ:** ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ອາດຈະໃຊ້ຢາເສບຕິດ ທີ່ຜິດກົດໝາຍ, ບໍ່ວ່າຈະເປັນຍ້ອນ ຜູ້ຄ້າມະນຸດ ໄດ້ວາງເປົ້າໝາຍ ໃຫ້ເຂົາເຈົ້າເປັນບ່ອນເພິ່ງພາອາໄສ ຫຼື ເປັນຍ້ອນໄດ້ສ້າງ ທີ່ເພິ່ງພາອາໄສດັ່ງກ່າວທີ່ເປັນວິທີການຄວບຄຸມ. ເມື່ອຂະບວນການປ່ຽນແປງເຫຼົ່ານີ້ ບໍ່ເປັນທີ່ເຂົ້າໃຈ, ຜູ້ຖືກເຄາະຮ້າຍ ອາດຈະມີຄວາມສ່ຽງຕໍ່ການຖືກລົງໂທດທາງອາຍາ ສຳລັບການນຳໃຊ້ຢາເສບຕິດ; ຢູ່ໃນຫຼາຍປະເທດ ລວມທັງ ພາກພື້ນອາຊຽນ, ການລົງໂທດອາດຈະຮ້າຍແຮງຫຼາຍ.

**ການປູກຢາເສບຕິດ:** ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ທີ່ປູກຢາເສບຕິດ ໄດ້ຖືກລົງໂທດທາງອາຍາ ຢູ່ໃນບາງປະເທດ ເຖິງວ່າ ເຂົາເຈົ້າ ໄດ້ຖືກກຳນົດຕົວວ່າ ເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ກໍຕາມ. ຜົນອອກມາ ແມ່ນວ່າ: ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ທີ່ໄດ້ປູກຢາເສບຕິດ ໄດ້ຖືກດຳເນີນຄະດີ ໃນຂໍ້ຫາກະທຳຜິດທີ່ກ່ຽວຂ້ອງກັບຢາເສບຕິດ, ໃນຂະນະທີ່ ຜູ້ຄ້າມະນຸດ ບໍ່ຖືກດຳເນີນຄະດີ ໃນຂໍ້ຫາຄ້າມະນຸດ ເຂົ້າໃນການປູກຢາເສບຕິດ.[228]

---

226 ທ່ານ Sabrina Balgamwalla, *ເລື່ອງເລົ່າການຄ້າມະນຸດ: ການໃຫ້ແນວຄວາມຄິດ ແລະ ການຖາຍທອດ ຈາກ ຜູ້ຖືກເຄາະຮ້າຍ, ຜູ້ກະທຳຜິດ, ແລະ ຜູ້ກອບກູ້ຊ່ວຍເຫຼືອ ໃນສົງຄາມ ການຄ້າມະນຸດ,* ບົດທົບທວນກົດໝາຍ Denver ສະບັບທີ 94:1, ມັງກອນ 2016, 33-34

227 ການສົນທະນາ ຂອງ ຄະນະກຳມະການຄວາມຍຸຕິທຳ ຂອງ ຜູ້ລອດຊີວິດ, ທ່ານ Dressember ແລະ ທ່ານ Karana Rising, 7 ໂມງແລງ ET, 30 ເມສາ 2021. ເອກະສານບັນທຶກ ຂອງຜູ້ຂຽນ.

228 ໃຫ້ເບິ່ງຕົວຢ່າງ, ທ່ານ ປ.ອ Patrick Burland, *ຄົນຮ້າຍ ບໍ່ແມ່ນຜູ້ຖືກເຄາະຮ້າຍບໍ? ການກວດສອບ ການລົງໂທດຄົນຫວຽດນາມ ທີ່ຖືກຄ້າມະນຸດ ເພື່ອການປູກກັນຊາ ຢູ່ໃນປະເທດສະຫະລາຊະອານາຈັກ,* ປີ 2016.

**ກໍລະນີສຶກສາ: ການລົງໂທດທາງອາຍາ ຕໍ່ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ສໍາລັບ ການກະທໍາຜິດ ທີ່ກ່ຽວຂ້ອງກັບຢາເສບຕິດ**

ທ່ານ Son Van Trinh (39) ແລະ ຄອບຄົວຂອງລາວ ຕົກຢູ່ໃນຄວາມລໍາບາກ ທາງດ້ານການເງິນ ແລະ ມີຄວາມຫຍຸ້ງຍາກ ທີ່ຈະຊອກຫາອາຫານມາກິນ. ພ້ອມກັບຄອບຄົວ, ລາວໄດ້ຕັດສິນໃຈ ດ້ວຍຄວາມລໍາບາກ ທີ່ຈະໜີອອກຈາກ ປະເທດຫວຽດນາມ ເພື່ອໄປຊອກຫາວຽກເຮັດງານທໍາ ແລະ ຊອກຫາວິທີລ້ຽງຄອບຄົວ. ລາວໄດ້ຈ່າຍເງິນຈໍານວນ 25,000 ປອນ ເພື່ອລັກລອບລີ້ໃນທ້າຍລົດບັນທຸກ ທີ່ແລ່ນຜ່ານ ເຊັດສ໌ເນຍ ແລະ ເຂົ້າໄປໃນປະເທດຝຣັ່ງ ກ່ອນທີ່ຈະໄປຮອດປະເທດອັງກິດ. ລາວ ໄດ້ຖືກພາຕົວໄປເຮືອນຫຼັງໃຫຍ່ ຢູ່ທີ່ເມືອງແລັງເກົເຊຍ ຊຶ່ງເປັນບ່ອນທີ່ລາວໄດ້ຖືກບອກວ່າ ລາວຈະຕ້ອງຮັບຜິດຊອບພືດ ຈໍານວນ 319 ຕົ້ນ ແລະ ໄດ້ຮັບພຽງແຕ່ເຊື່ອນອນໜຶ່ງອັນ ທີ່ປູຢູ່ເທິງພື້ນ ເພື່ອນອນ ແລະ ໄດ້ຮັບອາຫານຈໍານວນໜຶ່ງ. ເມື່ອເຈົ້າໜ້າທີ່ຕໍາຫຼວດໄດ້ບຸກໂຈມຕີເຂົ້າໄປໃນເຮືອນຫຼັງນັ້ນ, ລາວໄດ້ຢູ່ໃນສະພາບ ທີ່ຢ້ານກົວ ແລະ ສັບສົນ, ລາວບໍ່ຮູ້ວ່າ ລາວຢູ່ປະເທດໃດ. ລາວຖືກຕັ້ງຂໍ້ຫາວ່າ ໄດ້ກະທໍາຜິດກ່ຽວກັບຢາເສບຕິດ ແລະ ຖືກຕັດສິນຈໍາຄຸກ 16 ເດືອນ. ຜູ້ພິພາກສາ, ໃນເວລາຕັດສິນລົງໂທດຜູ້ກ່ຽວ ໄດ້ກ່າວວ່າ 'ເຈົ້າໄດ້ມີສ່ວນຮ່ວມ ຊຶ່ງອາດຈະຍ້ອນຖືກກົດດັນ ແລະ ຖືກບີບບັງຄັບ, ແຕ່ບາງທີ ມັນເປັນສິດທີ່ຈະຕ້ອງເວົ້າວ່າ ເຈົ້າໄດ້ມີສ່ວນຮ່ວມ ຜ່ານທາງ ການທີ່ບໍ່ຮູ້ຫຍັງເລີຍ ແລະ ການຂູດຮີດ.'

ແຫຼ່ງຂໍ້ມູນ: *ຄັດມາຈາກ ການຄ້າມະນຸດ ສໍາລັບກິດຈະກໍາອາຊະຍາກໍາ ທີ່ຖືກບັງຄັບ ແລະ ການຂໍທານ ໃນເອີຣົບ: ການສຶກສາຄົ້ນຄວ້າລາຍລະອຽດ ແລະ ຫຼັກການປະຕິບັດທີ່ດີ* (Anti-Slavery International, ປີ 2014) 29 ທີ່ກ່າວເຖິງ ໜັງສືພິມ Lancashire Evening Post, ລົງວັນທີ 18 ທັນວາ 2013, ຜູ້ປູກກັນຊາ ຖືກກັກຂັງຫຼັງຈາກມີປາກສຽງ). ມີຢູ່ທີ່; lep.co.uk/news/local/cannabis-farmer-gets-locked-up-after-bust-1-6323095

ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ – ທີ່ເປັນຜູ້ໃຫຍ່ ແລະ ເດັກນ້ອຍ – ໄດ້ຖືກຂູດຮີດ ໃຫ້ປູກກັນຊາ (cannabis). ນອກຈາກນັ້ນ, ຍັງມີການລາຍງານ ກ່ຽວກັບຜູ້ຖືກຄ້າມະນຸດ ທີ່ໄດ້ພົວພັນກັບ ການຜະລິດຢາບ້າ (crystal meth).[229] ການສຶກສາຄົ້ນຄວ້າ ທີ່ໄດ້ດຳເນີນໃນປີ 2014 ໄດ້ສະແດງໃຫ້ເຫັນວ່າ ໃນບັນດາຜູ້ທີ່ຖືກຄົ້ນພົບວ່າ ຖືກຂູດຮີດໃຫ້ປູກກັນຊາ ໃນປະເທດອັງກິດ ໃນປີ 2011 ຫາ 2012, 96% ແມ່ນມາຈາກ ປະເທດຫວຽດນາມ, ໃນນັ້ນ 81% ແມ່ນເປັນເດັກນ້ອຍ.[230] ໃນປີ 2016, ເດັກນ້ອຍຈຳນວນ 142 ຄົນ ທີ່ອາດຕົກເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ໄດ້ລາຍງານວ່າ ເປັນການຂູດຮີດທາງອາຊະຍາກຳ ຢູ່ປະເທດອັງກິດ, 71 ຄົນ (50%) ໄດ້ຖືກຂູດຮີດ ໂດຍອ້າງວ່າມີຜົນປະໂຫຍດ, 29 (21%) ສຳລັບ ການປູກຊາ, ໃນນັ້ນ 25 ຄົນ ເປັນຄົນຫວຽດນາມ.[231] ມີຄວາມກັງວົນທີ່ສຳຄັນວ່າ ຜູ້ທີ່ມີສ່ວນຮ່ວມ ໃນການປູກຊາ ໄດ້ຖືກປະຕິບັດເປັນຜູ້ກະທຳຜິດ ຫຼາຍກ່ວາເປັນຜູ້ຖືກເຄາະຮ້າຍ ທີ່ກົງກັນຂ້າມກັບ ຫຼັກການການບໍ່ລົງໂທດ, ລວມທັງຢູ່ໃນອັງກິດ, ໄອແລນ, ເນເທີແລນ.[232] ການສຶກສາໜຶ່ງ ໃນເອີຣົບ ຍັງພົບວ່າ ໃນເວລາທີ່ນະໂຍບາຍຂອງລັດຖະບານ ກຳລັງດຳເນີນ «ສົງຄາມກັບຢາເສບຕິດ» ບັນຫາການລົງໂທດທາງອາຍາ ຕໍ່ ຜູ້ຖືກເຄາະຮ້າຍ ອາດຈະສືບຕໍ່ເກີດຂຶ້ນ ໂດຍບໍ່ໄດ້ຕັ້ງໃຈ.[233] ບັນຫາການລົງໂທດທາງອາຍາ ຕໍ່ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ສຳລັບການກະທຳຜິດ ທີ່ກ່ຽວຂ້ອງກັບຢາເສບຕິດ ໄດ້ເພີ່ມຂຶ້ນຢ່າງໂດດເດັ່ນ ຜ່ານທາງ ຄຳຕັດສິນທີ່ສຳຄັນ ຂອງສານສິດທິມະນຸດ ແຫ່ງ ເອີຣົບ ລະຫວ່າງ *V.C.L ແລະ A.N. v ປະເທດສະຫະລາດຊະອານາຈັກ* [ຜົນນຳໃຊ້ເລກທີ. 77587/12 ແລະ 74603/12] ຊຶ່ງໄດ້ເວົ້າຢູ່ໃນຫ້ອງ 4.

---

229 ຍົກຕົວຢ່າງ, ຢູ່ໃນປະເທດອັງກິດ, *ການຄ້າມະນຸດ ສຳລັບກິດຈະກຳອາຊະຍາກຳ ທີ່ຖືກບັງຄັບ ແລະ ການຂໍທານ ໃນເອີຣົບ: ບົດສຶກສາລະອຽດ ແລະ ຫຼັກການປະຕິບັດ* (ອົງການສາກົນ ຕ້ານການເປັນທາດ, ປີ 2014) 64

230 *ການຄ້າມະນຸດ ສຳລັບກິດຈະກຳອາຊະຍາກຳ ທີ່ຖືກບັງຄັບ ແລະ ການຂໍທານ ໃນເອີຣົບ: ບົດສຶກສາລະອຽດ ແລະ ຫຼັກການປະຕິບັດ* (ອົງການສາກົນ ຕ້ານການເປັນທາດ, 2014) 18

231 ອົງການ Unicef, ຜູ້ຖືກເຄາະຮ້າຍ, ບໍ່ແມ່ນອາຊະຍາກຳ: *ເດັກທີ່ຖືກຄ້າມະນຸດ ແລະ ຫຼັກການການບໍ່ລົງໂທດ ໃນ ປະເທດອັງກິດ* (Unicef, ປີ 2017) 3

232 *ການຄ້າມະນຸດ ສຳລັບກິດຈະກຳອາຊະຍາກຳ ທີ່ຖືກບັງຄັບ ແລະ ການຂໍທານ ໃນເອີຣົບ: ບົດສຶກສາລະອຽດ ແລະ ຫຼັກການປະຕິບັດ* (ອົງການສາກົນ ຕ້ານການເປັນທາດ, 2014) 5-6; ທ່ານ Ofer, Nogah, ການຈັດຕັ້ງປະຕິບັດ ຫຼັກການການບໍ່ລົງໂທດ ຢູ່ໃນປະເທດອັງກິດ: ເປັນຫຍັງຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ຈຶ່ງບໍ່ໄດ້ຮັບຜົນປະໂຫຍດ ຈາກການປົກປ້ອງ ຈາກການດຳເນີນຄະດີ ຕາມກົດໝາຍສາກົນ? ວາລະສານຫຼັກການປະຕິບັດສິດທິມະນຸດ, 11, 2019, 486507 ທີ່ 489.

233 *ການຄ້າມະນຸດ ສຳລັບກິດຈະກຳອາຊະຍາກຳ ທີ່ຖືກບັງຄັບ ແລະ ການຂໍທານ ໃນເອີຣົບ: ບົດສຶກສາລະອຽດ ແລະ ຫຼັກການປະຕິບັດ* (ອົງການສາກົນ ຕ້ານການເປັນທາດ, 2014) 9

**ກໍລະນີສຶກສາ: ການຄ້າມະນຸດ ສໍາລັບ ແຮງງານທີ່ຖືກບັງຄັບ ໃນການປູກກັນຊາ**

ທ້າວໄຮ ອາຍຸ 15 ປີ ເກີດໃຫຍ່ຢູ່ໃນໝູ່ບ້ານແຫ່ງໜຶ່ງ ໃນປະເທດຫວຽດນາມ ແລະ ບໍ່ໄດ້ໄປໂຮງຮຽນ. ເມື່ອພໍ່ຂອງລາວເສຍຊີວິດ, ທ້າວໄຮ ໄດ້ພະຍາຍາມຫາເງິນ ຢູ່ນະຄອນຫຼວງ ດ້ວຍການຂາຍຕຸກກະຕາຢາງ ເພື່ອນໍາໄປຜະລິດຄືນ. ມີຜູ້ຊາຍຄົນຫນຶ່ງ ໄດ້ເຂົ້າມາຫາລາວ ແລະ ໄດ້ເວົ້າວ່າ ລາວ ອາດສາມາດຫາເງິນໄດ້ຫຼາຍ ໃນເອີຣົບ. ທ້າວໄຮ ຈະຕ້ອງຫາເງິນຫຼາຍພັນໂດລາ ເພື່ອຈ່າຍໃຫ້ຕົວແທນ ທີ່ຈະພາລາວໄປ. ແມ່ຂອງລາວ ໄດ້ກູ້ຢືມເງິນ ໂດຍເອົາເຮືອນຂອງຕົນໄປຈໍາ ແລະ ລຸງກໍ່ຕື່ມໃສ່ສ່ວນທີ່ເຫຼືອ.

ຫຼັງຈາກໃຊ້ເວລາ 14 ເດືອນ ຂອງການເດີນທາງ, ທ້າວໄຮ ໄດ້ຖືກຖິ້ມຢູ່ທີ່ ສະຖານີບໍລິການ ໃນປະເທດອັງກິດ. ຢູ່ບ່ອນນີ້ເອງ ລາວໄດ້ພົບກັບຄົນຫວຽດນາມອີກຄົນໜຶ່ງ ຊື່ວ່າ ກຸງ ທີ່ໄດ້ຂັບລົດພາລາວໄປເຮືອນຫຼັງໜຶ່ງ ຢູ່ທີ່ສະກັອດແລນ. ເຂົາໄດ້ບອກ ທ້າວໄຮ ວ່າ ຕອນນີ້ ລາວໄດ້ເປັນໜີ້ຕື່ມ ສໍາລັບ ຄ່າເດີນທາງ ບວກກັບ ດອກເບ້ຍ. ລາວຈະຕ້ອງຫົດນໍ້າຕົ້ນກັນຊາ ເພື່ອຊໍາລະຫນີ້ສິນຂອງລາວ ແລະ ສາມາດສົ່ງເງິນໄປໃຫ້ແມ່ ແລະ ເອື້ອຍ ຂອງລາວ. ທ້າວໄຮ ໄດ້ຖາມວ່າ ເປັນຫຍັງ ລາວຈຶ່ງບໍ່ສາມາດເຮັດວຽກໃນຮ້ານອາຫານໄດ້, ຕາມທີ່ໄດ້ສັນຍາ, ແຕ່ ກຸງໄດ້ເວົ້າວ່າ ນີ້ແມ່ນເປັນພຽງທາງເລືອກດຽວ ຂອງລາວ.

ກຸງ ປ່ອຍໃຫ້ ທ້າວໄຮ ຢູ່ຄົນດຽວ ຢູ່ໃນເຮືອນ ໂດຍມີຄໍາແນະນໍາ ແລະ ໄດ້ລັອກປະຕູ ຈາກພາຍນອກ. ທ້າວກຸງ ກັບຄືນໄປເຮືອນ ທຸກໆສອງສາມວັນ ດ້ວຍອາຫານ ແລະ ນໍ້າຈໍານວນໜຶ່ງ. ທ້າວໄຮ ໄດ້ຖາມທ້າວກຸງວ່າ ລາວສາມາດກັບບ້ານໄດ້ບໍ, ແຕ່ ທ້າວກຸງ ຕີລາວ ແລະ ໄດ້ເວົ້າວ່າລາວໄປໃສບໍ່ໄດ້, ຖ້າບໍ່ດັ່ງນັ້ນ, ຕໍາຫຼວດຈະຈັບ ແລະ ຕີລາວ.

ສາມເດືອນຕໍ່ມາ, ຕໍາຫຼວດ ໄດ້ບຸກເຂົ້າໄປໃນເຮືອນ. ທ້າວໄຮໄດ້ຖືກຈັບ ແລະ ຖືກສົ່ງໄປຢູ່ໃນການຄຸ້ມຄອງດູແລ. ເມື່ອຖືກຖາມຄໍາຖາມ, ລາວສັບສົນ ແລະ ຢ້ານເກີນໄປ ທີ່ຈະບອກພວກທຸກຢ່າງ ແກ່ ຕໍາຫຼວດ. ທະນາຍຄວາມຄົນໜຶ່ງ ໄດ້ແນະນໍາໃຫ້ລາວຍອມຮັບຜິດ. ທ້າວໄຮ ໄດ້ຖືກຕັດສິນໃຫ້ເຂົ້າຄຸກ ເປັນເວລາ 24 ເດືອນ ໃນຄຸມຂັງຂອງຜູ້ໃຫຍ່ ແລະ ໄດ້ບອກວ່າລາວ ຈະຖືກເນລະເທດອອກນອກປະເທດ ຫຼັງຈາກທີ່ລາວໄດ້ປະຕິບັດຕາມ ການລົງໂທດ ຂອງລາວ.

ແຫຼ່ງຂໍ້ມູນ: ຄັດມາຈາກ ການຄ້າມະນຸດ ສໍາລັບກິດຈະກໍາອາຊະຍາກໍາ ທີ່ຖືກບັງຄັບ ແລະ ການຂໍທານ ໃນເອີຣົບ: ການສຶກສາຄົ້ນຄວ້າລາຍລະອຽດ ແລະ ຫຼັກການປະຕິບັດທີ່ດີ (Anti-Slavery International, ປີ 2014) 17

**ການຂົນສົ່ງ/ການຄ້າຂາຍຢາເສບຕິດ:** ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄດ້ຖືກຂູດຮີດໃຫ້ຜູ້ສົ່ງຢາເສບຕິດ, ຊຶ່ງມັກຈະເຮັດດ້ວຍວິທີການ ທີ່ອັນຕະລາຍສຸດຂີດ ເມື່ອເອົາຢາເສບຕິດເຊື່ອງໄວ້ໃນຮ່າງກາຍ ຂອງເຂົາເຈົ້າ.[234] ການລັກລອບຄ້າເດັກນ້ອຍ ເພື່ອໃຫ້ໄປຂົນສົ່ງ ຫຼື ແຈກຢາຍຢາເສບຕິດ ໄດ້ເປັນສິ່ງທີ່ຖືກບັນທຶກໄວ້ໃນເອກະສານ ເປັນຢ່າງດີ. ຢູ່ໃນປະເທດສະຫະລາດຊະອານາຈັກ, ຄະດີກ່ຽວກັບ ການຂົນສົ່ງຢາເສບຕິດ ລະຫວ່າງເມືອງ ແມ່ນກ່ຽວຂ້ອງກັບ ການຂູດຮີດເດັກນ້ອຍທີ່ມີຄວາມອ່ອນແອ, ລວມທັງເດັກນ້ອຍທີ່ຖືກຄ້າມະນຸດ ເພື່ອຂົນສົ່ງຢາເສບຕິດ ໄປທົ່ວປະເທດ.[235] ປະກົດການອັນດຽວກັນນີ້ ໄດ້ເກີດຂຶ້ນລະຫວ່າງປະເທດ, ໂດຍທີ່ເດັກນ້ອຍຖືກຈ້າງ ໃຫ້ລັກລອບຄ້າຢາເສບຕິດ ຢູ່ຕາມເສັ້ນທາງອົບພະຍົບ ຈາກຕາເວັນອອກກາງ ໄປຫາ ເອີຣົບ.[236]

ປະຊາຊົນຈຳນວນຫຼາຍ ທີ່ຖືກຂູດຮີດດ້ວຍວິທີນີ້ ຖືກຈັບ ແລະ ດຳເນີນຄະດີ ໃນຂໍ້ຫາລັກລອບຄ້າຢາເສບຕິດ, ຫຼາຍກວ່າທີ່ຈະຖືກກຳນົດຕົວຕົນ ແລະ ປະຕິບັດວ່າ ເປັນ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ. ຢູ່ໃນບາງກໍລະນີ, ຄວາມບໍ່ເຕັມໃຈທີ່ຈະປະຕິບັດຕໍ່ຄົນໃຫ້ເປັນຜູ້ຖືກເຄາະຮ້າຍ ອາດຈະເປັນຍ້ອນ ຄວາມຮ້າຍແຮງ ຂອງການກະທຳຜິດ, ເຊັ່ນດຽວກັນກັບ ການຜ່ານຂອງເວລາ ລະຫວ່າງ ການກະທຳຜິດ ແລະ ການຄ້າມະນຸດ. ມັນຍັງສາມາດ ມີຄວາມຫຍຸ້ງຍາກທີ່ຈະພິສູດ ການຕົກເປັນຜູ້ຖືກເຄາະຮ້າຍ ແລະ ຄວາມໜ້າເຊື່ອຖື ຂອງບຸກຄົນ.[237] ປະກົດການນີ້ ເກີດຂຶ້ນຢູ່ຫຼາຍແຫ່ງຂອງໂລກ, ແລະ ສິ່ງຜົນສະທ້ອນເຖິງ ພົນລະເມືອງ ຂອງບັນດາປະເທດສະມາຊິກອາຊຽນ.

ສູນຍຸຕິທຳຣິງກົງ ໄດ້ລາຍງານວ່າ ຜູ້ຖືກເຄາະຮ້າຍ ແລະ ຜູ້ທີ່ອາດຖືກເຄາະຮ້າຍ ຂອງການຄ້າມະນຸດ ໄດ້ຖືກຕັດສິນໂທດ ແລະ ເຂົ້າຄຸກສຳລັບ ການກະທຳຜິດ ທີ່ກ່ຽວຂ້ອງກັບ ຢາເສບຕິດ ໃນຮົງກົງ. ບົດລາຍງານ ຂອງສູນ, *ບໍ່ຢຸດຢູ່ນີ້: ຮົງກົງເປັນສະຖານທີ່ຜ່ານ ສຳລັບການຄ້າມະນຸດ* ໄດ້ບັນທຶກ ກໍລະນີ ຂອງ ແມ່ຍິງ ທີ່ໄດ້ຖືກຖາມ ໂດຍແຟນຂອງນາງ (ທີ່ນາງຄິດວ່າເປັນນັກທຸລະກິດ) ໃຫ້ເອົາເຄື່ອງນຸ່ງ ຈາກກວາງໂຈວຂອງຈີນ ໄປຫາ ກົວລາລຳເປີ, ມາເລເຊຍ. ຜ່ານທາງຮົງກົງ, ໂດຍບໍ່ຮູ້ວ່າສິ່ງຂອງທີ່ນາງຖື ແມ່ນຢາເສບຕິດ. ຍັງມີການລາຍງານອີກຫຼາຍໆເຫດການ ກ່ຽວກັບການຫຼອກລວງ, ບັງຄັບ ຫຼື ຂົ່ມຂູ່ຄົນ ໃຫ້ເຂົາໄປໃນການຄ້າຢາເສບຕິດ ຜ່ານຮົງກົງ ຈາກ ອາເມລິກາໃຕ້ ຫຼື ອາຟຣິກາ ໄປຫາຈີນ, ໂດຍ ການສ້າງສາຍພົວພັນມິດຕະພາບ ຖ້າແມ່ນຜູ້ຊາຍ ແລະ ດ້ວຍການສ້າງຄວາມສຳພັນຮັກ ຖ້າແມ່ນຜູ້ຍິງ.238 ບົດລາຍງານ ຍັງໄດ້ເວົ້າເຖິງ ຜູ້ຍິງຈາກຈີນແຜ່ນດິນໃຫຍ່ ຖືກຫຼອກລວງ ໃຫ້ຄ້າຢາເສບຕິດ ໄປມາເລເຊຍ. ໃນກໍລະນີທັງໝົດນີ້, ຄົນທີ່ຕົກເປັນເຫຍື່ອ ບໍ່ໄດ້ຖືກກຳນົດຕົວຕົນວ່າ ອາດຈະເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ, ເຂົາເຈົ້າພັດຖືກດຳເນີນຄະດີ ໃນຂໍຫາຄ້າຢາເສບຕິດ ແທນ.[239]

ຢູ່ຫຼາຍພາກພື້ນ ລວມທັງອາຊຽນ, ຄວາມພະຍາຍາມຢ່າງຕັ້ງໜ້າ ເພື່ອຕ້ານການຄ້າຢາເສບຕິດ ໄດ້ສົ່ງຜົນໃຫ້ມີຄວາມສ່ຽງສູງ ທີ່ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ຈະຖືກລົງໂທດ ດ້ວຍການປະຫານຊີວິດ. ໂດຍສະເພາະ, ໃນກໍລະນີປັດຈຸບັນ ຂອງ ນາງ Mary Jane Veloso ທີ່ລໍຖ້າການປະຫານຊີວິດ ໃນຂໍ້ຫາຄ້າຂາຍຢາເສບຕິດ ໃນປະເທດອິນໂດເນເຊຍ, ເຖິງແມ່ນວ່າ ນາງໄດ້ຖືກຮັບຮູ້ວ່າ ເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ສຳລັບຈຸດປະສົງດັ່ງກ່າວ ໂດຍເຈົ້າໜ້າທີ່ ຂອງ ຟີລິບປິນ, ເມື່ອຜູ້ຄ້າມະນຸດ ຂອງຜູ້ກ່ຽວ ຖືກກັກຂັງ (ໃຫ້ເບິ່ງຫ້ອງ 5).

---

234 ຢາເສບຕິດ ອາດຈະຖືກຄ້າ ດ້ວຍການສື່ສານທາງວາຈາ ຫຼື ປາກເປົ່າ ຫຼື ບໍ່ດັ່ງນັ້ນກໍດ້ວຍວິທີອື່ນ. ໃນກໍລະນີ ຢູ່ ແອັດສະປາຍ, ຜູ້ຖືກເຄາະຮ້າຍ ມີຢາເສບຕິດເຊື່ອງຢູ່ໃນເຕົ້ານົມທຽມ. ທ່ານ Carolina Villacampa ແລະ ທ່ານ Nria Torres, ການຄ້າມະນຸດ ສຳລັບການຂູດຮີດທາງອາຍາ: ຜົນກະທົບທີ່ຜູ້ຖືກເຄາະຮ້າຍປະສົບ ໃນທາງຜ່ານ ໄປສູ່ ລະບົບຍຸຕິທຳທາງອາຍາ, ບົດທົບທວນສາກົນ ກ່ຽວກັບຜູ້ຖືກເຄາະຮ້າຍ, 2019, ສະບັບທີ. 25(1) 318, ທີ່ 9.

235 *ຄວາມຮຸນແຮງລະຫວ່າງເມືອງ, ການຂູດຮີດ ແລະ ການສະໜອງຢາເສບຕິດ ປີ 2017: ບົດລາຍງານຫຍໍ້ແຫ່ງຊາດ* (ອົງການຈັດຕັ້ງອາຊະຍາກຳແຫ່ງຊາດ, ພະຈິກ 2017) 15

236 ທ່ານ Healy, Claire., *ສ້າງຄວາມເຂັ້ມແຂງ ໃນການສືບຕໍ່: ຄວາມສາມາດໃນການພົ້ນຕົວ ແລະ ຄວາມສ່ຽງ ຕໍ່ ການຄ້າມະນຸດ ແລະ ການຂູດຮີດອື່ນໆ ຂອງບັນດາຄົນທີ່ເດີນທາງ ຕາມເສັ້ນທາງຂອງການເຄື່ອນຍ້າຍ ໄປເອີຣົບ* (ICMPD, 2019), ໜ້າ210-212

237 ທ່ານ Carolina Villacampa ແລະ ທ່ານ Nria Torres, ການຄ້າມະນຸດ ສຳລັບການຂູດຮີດທາງອາຍາ: ຜົນກະທົບທີ່ຜູ້ຖືກເຄາະຮ້າຍປະສົບ ໃນທາງຜ່ານ ໄປສູ່ ລະບົບຍຸຕິທຳທາງອາຍາ, *ບົດທົບທວນສາກົນ ກ່ຽວກັບຜູ້ຖືກເຄາະຮ້າຍ,* 2019, ສະບັບທີ. 25(1) 318, ທີ່ 10.

238 ສູນຍຸຕິທຳປະເທດຮົງກົງ, *ບໍ່ຢຸດຢູ່ນີ້: ຮົງກົງ ເປັນບ່ອນຜ່ານ ສຳລັບການຄ້າມະນຸດ* (ມັງກອນ 2019) ໜ້າ10, 14.

239 ສູນຍຸຕິທຳປະເທດຮົງກົງ, *ການຍື່ນ ສຳລັບ ກຸ່ມປະຕິບັດງານ ກ່ຽວກັບ ບົດສຶກສາ ຂອງ ການກັກຂັງຕາມອຳເພີໃຈ ທີ່ກ່ຽວຂ້ອງກັບນະໂຍບາຍຢາເສບຕິດ* (ມີນາ, 2020)

## ການຄາດຕະກຳ (ແບບມີເຈດຈຳນົງ) ແລະ ການຄາດຕະກຳ (ບໍ່ມີເຈດຈຳນົງ)

ມີກໍລະນີ ທີ່ຜູ້ຖືກເຄາະຮ້າຍ ຖືກບອກໃຫ້ທຳຮ້າຍຜູ້ຖືກເຄາະຮ້າຍຄົນອື່ນ ຊຶ່ງເປັນວິທີການຄວບຄຸມ, ຊຶ່ງຕໍ່ມາ ຜູ້ຄ້າມະນຸດ ອາດຈະຍົກລະດັບມາເປັນຮູບແບບ ການບີບບັງຄັບ, ເຊັ່ນ ດ້ວຍການຂົ່ມຂູ່ ຜູ້ຖືກເຄາະຮ້າຍວ່າ ເຂົາເຈົ້າ ບໍ່ສາມາດໄປຫາຕຳຫຼວດໄດ້.[240] ມີສະຖານະການ ທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຖືກໃຊ້ກຳລັງ ຫຼື ບັງຄັບ ໃຫ້ກໍທຳອາດຊະຍາກຳ ທີ່ມີຄວາມຮຸນແຮງ ຫຼື ແມ້ກະທັ້ງເຖິງຂັ້ນການຂ້າຄົນ, ໂດຍທີ່ຜູ້ກ່ຽວບໍ່ຢາກເຮັດເຊັ່ນນັ້ນ. ໃນບາງກໍລະນີ, ເດັກນ້ອຍ ກໍຍັງຖືກບອກໃຫ້ເຂົ້າຮ່ວມ ໃນການຄາດຕະກຳ.[241]

**ກໍລະນີສຶກສາ: ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ຖືກຕັດສິນໂທດ ວ່າເປັນຄາດຕະກຳ**

ສານອາຍາສາກົນ ໄດ້ຕັດສິນໂທດ ໃນວັນທີ 4 ກຸມພາ 2021 ໃນຄະດີ ລະຫວ່າງ *ໄອຍະການ v ທ່ານ Dominic Ongwen,* ICC-02/04-01/15, ທີ່ພົບວ່າ Ongwen ມີຄວາມຜິດ ໃນຂໍ້ຫາກໍ່ອາຊະຍາກຳ ຕ້ານຄວາມເປັນມະນຸດສະທຳ ແລະ ອາດຊະຍາກຳສົງຄາມ ທີ່ໄດ້ກະທຳ ຢູ່ທາງພາກເໜືອ ຂອງປະເທດອູການດາ ລະຫວ່າງ ວັນທີ 1 ກໍລະກົດ 2002 ຫາ ວັນທີ 31 ທັນວາ ປີ 2005. ອາດຊະຍາກຳ ທີ່ Ongwen ຖືກຕັດສິນໂທດ ປະກອບມີ ການຄາດຕະກຳ, ການບັງຄັບໃຫ້ແຕ່ງງານ, ການທໍລະມານ, ການຂົ່ມຂືນ, ການເປັນຂ້າທາດທາງເພດ ແລະ ການເຮັດໃຫ້ເປັນທາດ, ແລະ ການເກນເດັກນ້ອຍອາຍຸຕໍ່າກວ່າ 15 ປີ ເປັນທະຫານເຂົ້າຮ່ວມໃນການເຮັດສົງຄາມ. ໃນວັນທີ 6 ພຶດສະພາ 2021, ICC ໄດ້ຕັດສິນລົງໂທດໃຫ້ Ongwen ເຂົ້າຄຸກເປັນເວລາ 25 ປີ. Ongwen ໄດ້ຖືກລັກພາຕົວໄປ ໂດຍ ກອງກຳລັງ LRA (Lord's Resistance Army) ໃນປີ 1987 ຊຶ່ງຜູ້ກ່ຽວມີອາຍຸປະມານ 9 ປີ, ແຕ່ເຖິງຢ່າງໃດກໍ່ຕາມ, ໄດ້ຄົ້ນພົບວ່າ ລາວ ໄດ້ກໍ່ອາຊະຍາກຳ ຕາມທີ່ຖືກຕັ້ງຂໍ້ຫາວ່າ ເປັນຜູ້ໃຫຍ່ທີ່ມີຄວາມຮັບຜິດຊອບເຕັມທີ່ ແລະ ເປັນຜູ້ບັນຊາການ ຂອງ ກອງກຳລັງ LRA. ໃນວັນທີ 21 ພຶດສະພາ 2021, ສະພາຝ່າຍຈຳເລີຍ ຂອງ Ongwen ໄດ້ຍື່ນແຈ້ງການ ກ່ຽວກັບຄວາມຕັ້ງໃຈຂອງຕົນທີ່ຈະຂໍອຸທອນ ຄຳຕັດສິນ ຈາກການພິຈາລະນາຄະດີໃນສານ. ໃນບັນດາເຫດຜົນທັງຫຼາຍ ສຳລັບການອຸທອນ, ຈຳເລີຍໄດ້ຍື່ນວ່າ ສານໄດ້ມີຄວາມຜິດພາດ ໃນການບໍ່ສົນໃຈຫຼັກຖານ ຂອງການລັກພາຕົວຕົນເອງຫນີ, ການປູກຝັງຈິດສຳນຶກ ແລະ ປະສົບການຕ່າງໆ ຂອງ Ongwen ທີ່ເປັນທະຫານເດັກນ້ອຍ ຢູ່ໃນກອງກຳລັງ LRA.[242]

ບົດສຶກສາ ປີ 2020 ຂອງ ອົງການ UNODC ທີ່ມີຫົວຂໍ້ຊື່ວ່າ *ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ສຳລັບຖືກຂູດຮີດທາງເພດ ໃນຖານະເປັນຈຳເລີຍ: ບົດວິເຄາະກົດໝາຍທີ່ອີງໃສ່ຄະດີ* ໄດ້ວິເຄາະ 53 ຄະດີ ຈາກ 16 ປະເທດ, ໂດຍເນັ້ນໃສ່ເອີຣົບ. ໄດ້ຄົ້ນພົບວ່າ ພວກຄ້າມະນຸດ ນຳໃຊ້ ຜູ້ຖືກເຄາະຮ້າຍ ເພື່ອປ້ອງກັນຕົນເອງ ຈາກການດຳເນີນຄະດີ ໂດຍນຳໃຊ້ ຜູ້ຖືກເຄາະຮ້າຍ ລົງມືກະທຳ ເຊັ່ນ ການຮັບເອົາຜູ້ຖືກເຄາະຄົນໃໝ່, ການຄວບຄຸມ, ການລວບລວມການດຳເນີນການຕ່າງໆ ນັບຕັ້ງແຕ່ ການຂູດຮີດ ແລະ ການໂຄສະນາການບໍລິການ. ຈຳເລີຍທີ່ເປັນຜູ້ຖືກເຄາະຮ້າຍ ຈຳນວນຫຼາຍ ຍັງສືບຕໍ່ຖືກຂູດຮີດທາງເພດ, ແຕ່ຖືກຜັກດັນໃຫ້ປະຕິບັດບົດບາດການຄ້າມະນຸດ ເພື່ອຫຼຸດຜ່ອນ ການຂູດຮີດຕົນເອງ, ຮັບປະກັນ ໃຫ້ຖືກໃຈ ແລະ ເປັນທີ່ໂປດປານ ຂອງຜູ້ຄ້າມະນຸດ ຫຼື ບໍ່ມີທາງເລືອກອື່ນ ນອກເຫນືອຈາກການປະຕິບັດບົດບາດເຫຼົ່ານີ້. ເຖິງຢ່າງໃດກໍ່ຕາມ, ໃນຄະດີ ທີ່ຖືກຊັກຖາມ ສຳລັບຈຸດປະສົງ ຂອງການສຶກສານັ້ນ, ໄດ້ພົບວ່າ ສານບໍ່ໄດ້ປຶກສາຫາລື ກ່ຽວກັບ ຫຼັກການການບໍ່ລົງໂທດ, ບໍ່ໄດ້ຮັບຮູ້ຈຳເລີຍວ່າເປັນ ຜູ້ຖືກເຄາະຮ້າຍ, ຫຼື ປະຕິເສດການນຳໃຊ້ຫຼັກການ ແບບງ່າຍໆ, ຊຶ່ງສົ່ງຜົນເຮັດໃຫ້ເກີດການດຳເນີນຄະດີເຂົາເຈົ້າ, ມີການຕັດສິນໂທດ ແລະ ການລົງໂທດ; ຜົນໄດ້ຮັບທີ່ເທົ່າກັບ ເຂົາເຈົ້າຕົກເປັນຜູ້ຖືກເຄາະຮ້າຍສອງເທົ່າ.[243]

---

240 ການສົນທະນາ ຂອງ ຄະນະກຳມະການຄວາມຍຸຕິທຳ ຂອງ ຜູ້ລອດຊີວິດ, ທ່ານ Dressember & ທ່ານ Karana Rising, 4pm PT / 7 ໂມງແລງ ET, 30 ເມສາ 2021. ເອກະສານບັນທຶກ ຂອງຜູ້ຂຽນ.

241 ບົດລາຍງານ ກ່ຽວກັບ ການຄ້າມະນຸດ ຢູ່ທົ່ວໂລກ ປີ 2020 (UNODC, 2021) ໜ້າ50. ຢູ່ໃນປະເທດສະຫະລັດອາເມລິການ, ມີຄະດີບາງອັນທີ່ມີປະຫວັດລະດັບສູງ ກ່ຽວກັບ ຜູ້ຖືກເຄາະຮ້າຍ ທີ່ຖືກຕັ້ງຂໍ້ຫາ ວ່າເປັນອາຊະຍາກອນ, ລວມມີ ທ່ານ Cyntoya Brown, ທ່ານ Jessica & Jordan Hampton ແລະ ທ່ານ Tiffany Simpson.

242 *ໄອຍະການ v ທ່ານ Dominic Ongwen,* ICC-02/04-01/15, https://www.icc-cpi.int/uganda/ongwen

243 ສຳນັກງານສະຫະປະຊາຊາດ ວ່າດ້ວຍ ຢາເສບຕິດ ແລະ ອາຊະຍາກຳ, ຜູ້ຖືກເຄາະຮ້າຍ ຈາກ ການຄ້າມະນຸດ ທີ່ເປັນເພດຍິງ ສຳລັບຖືກຂູດຮີດທາງເພດໃນນາມເປັນຈຳເລີຍ: ບົດວິເຄາະກົດໝາຍຄະດີ (ອົງການສະຫະປະຊາຊາດ, ນະຄອນວຽນນາ, 2020).

## ການກໍ່ການຮ້າຍ, ລັດທິໃຊ້ຄວາມຮຸນແຮງ ແລະ ຂໍ້ຂັດແຍ່ງ ທີ່ມີການໃຊ້ກຳລັງອາວຸດ

ຄົນອາດຈະຕົກເປັນຜູ້ຖືກເຄາະຮ້າຍ ຈາກຄ້າມະນຸດ ທີ່ຖືກຂູດຮີດ ໃຫ້ເຂົ້າຮ່ວມຢູ່ໃນ ຂໍ້ຂັດແຍ່ງທີ່ໃຊ້ກຳລັງອາວຸດ ແລະ ການກໍ່ການຮ້າຍ, ຊຶ່ງອາດຈະມີບົດບາດ ໃນການສູ້ຮົບ ຫຼື ບົດບາດທີ່ບໍ່ກ່ຽວກັບການສູ້ຮົບ, ເຊັ່ນ: ເປັນພໍ່ຄົວ, ຄົນເຝົ້າປະຕູ, ຫຼື ແມ້ກະທັ້ງເປັນຜູ້ທີ່ຢູ່ແນວໜ້າ. ການຮັບເຂົ້າສູ່ ການກໍ່ການຮ້າຍ ທີ່ມີການໃຊ້ກຳລັງອາວຸດ, ລັດທິຫົວຮຸນແຮງ ແລະ ການປະທະກັນດ້ວຍກຳລັງອາວຸດ ສາມາດສົ່ງຜົນໃຫ້ເກີດ ການຂູດຮີດຫຼາຍຮູບແບບ, ນັບຕັ້ງແຕ່ ການບັງຄັບໃຫ້ແຕ່ງງານ ແລະ ການຂູດຮີດທາງເພດ ຈົນໄປເຖິງ ການຂູດຮີດທາງອາຍາ ຢູ່ໃນການປະທະກັນດ້ວຍກຳລັງອາວຸດ, ລວມທັງການກໍ່ການຮ້າຍ, ອາດຊະຍາກຳສົງຄາມ ແລະ ອາດຊະຍາກຳ ຕ້ານຄວາມເປັນມະນຸດສະທຳ.[244] ສະຖານະການ ຂອງເດັກນ້ອຍ ທີ່ຖືກບັນຈຸເຂົ້າຮ່ວມ ໃນຂໍ້ຂັດແຍ່ງ ທີ່ມີການນຳໃຊ້ກຳລັງອາວຸດ ເກືອບທຸກຄັ້ງ ແມ່ນກໍໃຫ້ເກີດການຄ້າມະນຸດ (ທີ່ຕ້ອງການພຽງແຕ່ ການລົງມືປະຕິບັດ ແລະ ຈຸດປະສົງໃນການຂູດຮີດ). ເດັກນ້ອຍ ທີ່ຖືກບັນຈຸເຂົ້າຮ່ວມໃນຂໍ້ຂັດແຍ່ງ ທີ່ມີການນຳໃຊ້ກຳລັງອາວຸດ ຄວນຖືກຮັບຮູ້ ຢູ່ໃນກົດໝາຍສາກົນ ວ່າເປັນຜູ້ຖືກເຄາະຮ້າຍ ຈາກການລະເມີດສິດທິມະນຸດ ແລະ ກົດໝາຍມະນຸດສະທຳ ຢ່າງຮ້າຍແຮງ; ການທີ່ບໍ່ສາມາດ ຮັບຮູ້ເຂົາເຈົ້າໃນລັກສະນະນັ້ນ ສາມາດສົ່ງຜົນ ເຮັດໃຫ້ບໍ່ສາມາດປົກປ້ອງໄດ້. ຢູ່ໃນບາງກໍລະນີ, ຄົນທີ່ຖືກຂູດຮີດ ໃນນາມເປັນທະຫານເດັກນ້ອຍ ແມ່ນຫຼຸດພົ້ນ ໄປສູ່ ການຂູດຮີດຜູ້ອື່ນ. ເດັກນ້ອຍ ທີ່ຖືກຂູດຮີດໃນສະພາບການເຫຼົ່ານີ້ ຄວນຈະຖືກປະຕິບັດ ຊຶ່ງຕົ້ນຕໍ ແມ່ນໃຫ້ເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ແລະ ຖືວ່າເປັນການລະເມີດສິດທິມະນຸດ ແລະ ກົດໝາຍມະນຸດສະທຳ ຢ່າງຮ້າຍແຮງ, ແຕ່ສ່ວນຫຼາຍແລ້ວ ເຂົາເຈົ້າມັກຈະຖືກລົງໂທດທາງອາຍາແທນ. ເມື່ອບໍ່ຮັບຮູ້ ການທີ່ເຂົາເຈົ້າເປັນຜູ້ຖືກເຄາະຮ້າຍ, ເຂົາເຈົ້າຈະຕົກຢູ່ໃນຄວາມສ່ຽງ ທີ່ຈະຖືກດຳເນີນຄະດີຍ້ອນມີສ່ວນຮ່ວມກັບ ກຸ່ມກໍ່ການຮ້າຍ ແລະ ກຸ່ມຂັດແຍ່ງທີ່ປະກອບອາວຸດ, ແລະ ອາດຈະຖືກປະຕິບັດວ່າ ເປັນໄພຂົ່ມຂູ່ຕໍ່ ຄວາມໝັ້ນຄົງ ຫຼາຍກວ່າ ທີ່ຈະຖືກສົ່ງຕໍ່ ໄປຫາເຈົ້າໜ້າທີ່ປົກປ້ອງ.[245]

### ກໍລະນີສຶກສາ: ການຕັດສິນໂທດ ທ່ານ Dominic Ongwen ໂດຍສານອາຍາສາກົນ

ສານອາຍາສາກົນ ໄດ້ຕັດສິນໂທດ ໃນວັນທີ 4 ກຸມພາ 2021 ໃນຄະດີ ລະຫວ່າງ *ໄອຍະການ v ທ່ານ Dominic Ongwen,* ICC-02/04-01/15, ທີ່ພົບວ່າ Ongwen ມີຄວາມຜິດ ໃນຂໍ້ຫາກໍ່ອາຊະຍາກຳ ຕ້ານຄວາມເປັນມະນຸດສະທຳ ແລະ ອາດຊະຍາກຳສົງຄາມ ທີ່ໄດ້ກະທຳ ຢູ່ທາງພາກເໜືອ ຂອງປະເທດອູກັນດາ ລະຫວ່າງ ວັນທີ 1 ກໍລະກົດ 2002 ຫາ ວັນທີ 31 ທັນວາ ປີ 2005. ອາດຊະຍາກຳ ທີ່ Ongwen ຖືກຕັດສິນໂທດ ປະກອບມີ ການຄາດຕະກຳ, ການບັງຄັບໃຫ້ແຕ່ງງານ, ການທໍລະມານ, ການຂົ່ມຂືນ, ການເປັນຂ້າທາດທາງເພດ ແລະ ການເຮັດໃຫ້ເປັນທາດ, ແລະ ການເກນເດັກນ້ອຍອາຍຸຕໍ່າກວ່າ 15 ປີ ເປັນທະຫານເຂົ້າຮ່ວມໃນການເຮັດສົງຄາມ. ໃນວັນທີ 6 ພຶດສະພາ 2021, ICC ໄດ້ຕັດສິນລົງໂທດໃຫ້ Ongwen ເຂົ້າຄຸກເປັນເວລາ 25 ປີ. Ongwen ໄດ້ຖືກລັກພາຕົວໄປ ໂດຍ ກອງກຳລັງ LRA (Lord’s Resistance Army) ໃນປີ 1987 ຊຶ່ງຜູ້ກ່ຽວມີອາຍຸປະມານ 9 ປີ, ແຕ່ເຖິງຢ່າງໃດກໍ່ຕາມ, ໄດ້ຄົ້ນພົບວ່າ ລາວ ໄດ້ກໍ່ອາຊະຍາກຳ ຕາມທີ່ຖືກຕັ້ງຂໍ້ຫາວ່າ ເປັນຜູ້ໃຫຍ່ທີ່ມີຄວາມຮັບຜິດຊອບເຕັມທີ່ ແລະ ເປັນຜູ້ບັນຊາການ ຂອງ ກອງກຳລັງ LRA. ໃນວັນທີ 21 ພຶດສະພາ 2021, ສະພາຝ່າຍຈຳເລີຍ ຂອງ Ongwen ໄດ້ຍື່ນແຈ້ງການ ກ່ຽວກັບຄວາມຕັ້ງໃຈຂອງຕົນທີ່ຈະຂໍອຸທອນ ຄຳຕັດສິນ ຈາກການພິຈາລະນາຄະດີໃນສານ. ໃນບັນດາເຫດຜົນທັງຫຼາຍ ສຳລັບການອຸທອນ, ຈຳເລີຍໄດ້ຍື່ນວ່າ ສານໄດ້ມີຄວາມຜິດພາດ ໃນການບໍ່ສົນໃຈຫຼັກຖານ ຂອງການລັກພາຕົວຕົນເອງຫນີ, ການປູກຝັງຈິດສຳນຶກ ແລະ ປະສົບການຕ່າງໆ ຂອງ Ongwen ທີ່ເປັນທະຫານເດັກນ້ອຍ ຢູ່ໃນກອງກຳລັງ LRA.[246]

244 ບົດລາຍງານ ກ່ຽວກັບ ການຄ້າມະນຸດ ຢູ່ທົ່ວໂລກ ປີ 2020 (UNODC, 2021) ໜ້າ50
245 ໃຫ້ເບິ່ງ *ການຕໍ່ສູ້ ຕ້ານການຄ້າມະນຸດ ຢູ່ໃນສະພາບການທີ່ມີຂໍ້ຂັດແຍ່ງ* (UNODC, ປີ 2018).
246 *ໄອຍະການ v ທ່ານ Dominic Ongwen,* ICC-02/04-01/15, https://www.icc-cpi.int/uganda/ongwen

ການຄົ້ນຄວ້າ ທີ່ລົງເລິກໃສ່ ການຄ້າມະນຸດໂດຍ ກຸ່ມ ISIS ໄດ້ເປີດເຜີຍ ວິທີການທີ່ເປັນລະບົບ ທີ່ແນໃສ່ ບຸກຄົນສະເພາະແລະ ການຮັບເຂົາເຈົ້າ ເຂົ້າໄປໃນ ການຂູດຮີດທາງເພດ, ການເປັນທາດພາຍໃນ, ແຮງງານທີ່ຖືກບັງຄັບ ແລະ ການຂູດຮີດຮູບແບບອື່ນໆ ລວມທັງການມີສ່ວນຮ່ວມ ໃນການກໍ່ການຮ້າຍ. ການຄົ້ນຄວ້າ ທີ່ດຳເນີນໂດຍ Reprieve ທີ່ລົງເລິກ ການຄ້າມະນຸດ ທີ່ເປັນພົນລະເມືອງອັງກິດ ໂດຍ ກຸ່ມ ISIS ໄດ້ພົບວ່າ ແມ່ຍິງອັງກິດສ່ວນໃຫຍ່ ທີ່ຖືກກັກຂັງ ຢູ່ໃນພາກຕາເວັນອອກສຽງເໜືອ ຂອງປະເທດຊີເຣຍ (63%) ແມ່ນຖືກຄ້າມະນຸດ.[247] ໃນບາງກໍລະນີ, ແທນທີ່ຈະຖືກກໍານົດຕົວຕົນວ່າຕົກເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ, ອຳນາດການປົກຄອງຂອງລັດ ທີ່ຮັບຜິດຊອບ ຈະກີດກັ້ນເຂົາເຈົ້າ ຈາກການເປັນພົນລະເມືອງຂອງປະເທດ, ປະຕິເສດການຊ່ວຍເຫຼືອທາງກົງສຸນ, ປະຕິເສດສິດທີ່ຈະກັບຄືນປະເທດຂອງເຂົາເຈົ້າ, ຫຼື ກັກຂັງເຂົາເຈົ້າ ຢ່າງບໍ່ມີກຳນົດ ບົນພື້ນຖານ ທີ່ເຂົາເຈົ້າໄດ້ເລືອກ 'ດ້ວຍຄວາມສະໝັກໃຈຂອງຕົນເອງ' ເພື່ອເຂົ້າຮ່ວມໃນການກະທຳ, ຊຶ່ງອາດຈະບໍ່ແມ່ນປະເດັນ. ສ່ວນທີ່ສຳຄັນ ຂອງຜູ້ໄດ້ຮັບຜົນກະທົບ ແມ່ນເດັກນ້ອຍ.[248]

## ການຄ້າມະນຸດ

ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ອາດຈະຖືກຕັດສິນໂທດ ຍ້ອນການກະທຳຜິດ ໃນການຄ້າມະນຸດ. ໃນບາງກໍລະນີ, ຜູ້ຖືກເຄາະຮ້າຍ ອາດຈະມີສ່ວນຮ່ວມ ໃນການຮັບ ຫຼື ຄວບຄຸມ ຜູ້ຖືກເຄາະຮ້າຍຄົນອື່ນໆ, ຊຶ່ງເຂົາເຈົ້າອາດຈະເຮັດເພື່ອໃຫ້ເຫັນຄວາມແຕກຕ່າງ ຫຼື ໄດ້ຮັບການປະຕິບັດທີ່ມີຄວາມຮຸນແຮງໜ້ອຍລົງ ຈາກ ຜູ້ຄ້າມະນຸດ ທີ່ມີອຳນາດຫຼາຍກວ່າ.[249] ຍົກຕົວຢ່າງ, ມີກໍລະນີ ຂອງ ແມ່ຍິງ ທີ່ຖືກຄ້າມະນຸດ ສຳລັບການຖືກຂູດຮີດທາງເພດ, ຊຶ່ງເປັນຜູ້ທີ່ໄດ້ຈ່າຍຄືນໜີ້ສິນ ແລະ ຕໍ່ມາກໍກາຍເປັນ ແມ່ເລົ້າ/ຜູ້ທີ່ຮັບຜິດຊອບຮ້ານບັນເທີງ. ແມ່ນແຕ່ບາງຄົນ ຍັງຖືກດຳເນີນຄະດີ ໃນນາມຜູ້ຄ້າມະນຸດ ຍ້ອນພາຜູ້ຍິງຄົນອື່ນໆ ໄປເຮັດວຽກຢູ່ຕ່າງປະເທດ ໃນອຸດສະຫະກຳໃຫ້ບໍລິການທາງເພດ ໂດຍບໍ່ໃຊ້ວິທີການໃດໆ (ເຊັ່ນ: ການບັງຄັບ, ການສໍ້ໂກງ ຫຼື ການບີບບັງຄັບ).[250]

ບົດສຶກສາ ປີ *2020* ຂອງ ອົງການ UNODC ທີ່ມີຫົວຂໍ້ຊື່ວ່າ *ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ສຳລັບຖືກຂູດຮີດທາງເພດ ໃນຖານະເປັນຈຳເລີຍ:* ບົດວິເຄາະກົດໝາຍທີ່ອີງໃສ່ຄະດີ ໄດ້ວິເຄາະ 53 ຄະດີ ຈາກ 16 ປະເທດ, ໂດຍເນັ້ນໃສ່ເອີຣົບ. ໄດ້ຄົ້ນພົບວ່າ ພວກຄ້າມະນຸດ ນຳໃຊ້ ຜູ້ຖືກເຄາະຮ້າຍ ເພື່ອປ້ອງກັນຕົນເອງ ຈາກການດຳເນີນຄະດີ ໂດຍນຳໃຊ້ ຜູ້ຖືກເຄາະຮ້າຍ ລົງມືກະທຳ ເຊັ່ນ ການຮັບເອົາຜູ້ຖືກເຄາະຄົນໃໝ່, ການຄວບຄຸມ, ການລວບລວມການດຳເນີນການຕ່າງໆ ນັບຕັ້ງແຕ່ ການຂູດຮີດ ແລະ ການໂຄສະນາການບໍລິການ. ຈຳເລີຍທີ່ເປັນຜູ້ຖືກເຄາະຮ້າຍ ຈຳນວນຫຼາຍ ຍັງສືບຕໍ່ຖືກຂູດຮີດທາງເພດ, ແຕ່ຖືກຜັກດັນໃຫ້ປະຕິບັດບົດບາດການຄ້າມະນຸດ ເພື່ອຫຼຸດຜ່ອນ ການຂູດຮີດຕົນເອງ, ຮັບປະກັນ ໃຫ້ຖືກໃຈ ແລະ ເປັນທີ່ໂປດປານ ຂອງຜູ້ຄ້າມະນຸດ ຫຼື ບໍ່ມີທາງເລືອກອື່ນ ນອກເໜືອຈາກການປະຕິບັດບົດບາດເຫຼົ່ານີ້. ເຖິງຢ່າງໃດກໍ່ຕາມ, ໃນຄະດີ ທີ່ຖືກຊັກຖາມ ສຳລັບຈຸດປະສົງ ຂອງການສຶກສານັ້ນ, ໄດ້ພົບວ່າ ສານບໍ່ໄດ້ປຶກສາຫາລື ກ່ຽວກັບ ຫຼັກການການບໍ່ລົງໂທດ, ບໍ່ໄດ້ຮັບຮູ້ຈຳເລີຍວ່າເປັນ ຜູ້ຖືກເຄາະຮ້າຍ, ຫຼື ປະຕິເສດການນຳໃຊ້ຫຼັກການ ແບບງ່າຍໆ, ຊຶ່ງສິ່ງຜົນເຮັດໃຫ້ເກີດການດຳເນີນຄະດີເຂົາເຈົ້າ, ມີການຕັດສິນໂທດ ແລະ ການລົງໂທດ; ຜົນໄດ້ຮັບທີ່ເທົ່າກັບ ເຂົາເຈົ້າຕົກເປັນຜູ້ຖືກເຄາະຮ້າຍສອງເທົ່າ.[251]

---

247 *ການຖືກຄ້າມະນຸດ ເພື່ອເຂົ້າຮ່ວມກຸ່ມ ISIS: ຄອບຄົວຄົນອັງກິດ ທີ່ຖືກກັກຂັງໃນປະເທດຊີເຣຍ ຫຼັງຈາກຖືກຄ້າມະນຸດ ໄປປະເທດສາດສະໜາອິດສະລາມ* (Reprieve, 2021) 11

248 *ການຖືກຄ້າມະນຸດ ເພື່ອເຂົ້າຮ່ວມກຸ່ມ ISIS: ຄອບຄົວຄົນອັງກິດ ທີ່ຖືກກັກຂັງໃນປະເທດຊີເຣຍ ຫຼັງຈາກຖືກຄ້າມະນຸດ ໄປປະເທດສາດສະໜາອິດສະລາມ* (Reprieve, 2021). Also ໃຫ້ເບິ່ງ ທ່ານ Maya Foa, ຫົວໜ້າບໍລິຫານຮ່ວມ, Reprieve, ເວົ້າກ່ຽວກັບ ຫຼັກການບໍ່ລົງໂທດ ຕໍ່ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ, ຊຶ່ງເປັນງານໜຶ່ງທີ່ຈັດຂຶ້ນຄູ່ກັບ ວາລະກອງປະຊຸມ ຂອງ ສະພາສິດທິມະນຸດ 30 ມິຖຸນາ 2021, 13:00  14:30 CET. ເອກະສານບັນທຶກ ຂອງຜູ້ຂຽນໃນຟາຍເອກະສານ. ໃຫ້ເບິ່ງຕື່ມ ທ່ານ Maya Foa, Shamima Begum *ແມ່ນເປັນຜູ້ຖືກເຄາະຮ້າຍ ຈາກ ການຄ້າມະນຸດ – ແລະ ສະຫະລາຊະອານາຈັກ ຄວນຈະປະຕິບັດເຊັ່ນນັ້ນກັບຜູ້ກ່ຽວ, ໜັງສືພິມ* Guardian 27 ກຸມພາ 2021 (ໄດ້ເຂົ້າເບິ່ງ ໃນວັນທີ 31 ສິງຫາ 2021) ມີຢູ່ທີ່: https://www.theguardian.com/commentisfree/2021/feb/26/shamima-begum-trafficking-uk-citizenship-rights.

249 ຄຳແນະນຳ ກ່ຽວກັບ ບັນຫາ ການຕອບສະໜອງຄວາມຍຸຕິທຳທາງອາຍາ ທີ່ເໝາະສົມ ແກ່ ຜູ້ຖືກເຄາະຮ້າຍ ທີ່ໄດ້ຖືກບັງຄັບ ໃຫ້ກະທຳຜິດ ຍ້ອນເປັນຜົນມາຈາກ ການທີ່ເຂົາເຈົ້າຖືກຄ້າມະນຸດ: ເອກະສານຄວາມເປັນມາ ທີ່ຖືກກະກຽມ ໂດຍ ກອງເລຂາ ຂອງ ກຸ່ມປະຕິບັດງານ ກ່ຽວກັບ ການຄ້າມະນຸດ, ນະຄອນວຽນນາ 10 ແລະ 11 ກັນຍາ 2020, ເອກະສານ ຂອງ UN CTOC/COP/WG.4/2020/2 (15 ມິຖຸນາ 2020), ວັກ 8.

250 *ຄູ່ມືຫຍໍ້ ກ່ຽວກັບ ຄວາມເສຍຫາຍດ້ານຊັບສິນ ຂອງກົດໝາຍຕ້ານການຄ້າມະນຸດ ແລະ ມາດຕະການ ກ່ຽວກັບ ຜູ້ເຮັດວຽກບໍລິການທາງເພດ* (ຄະນະກຳມະການສາກົນ ກ່ຽວກັບ ສິດທິ ຂອງຜູ້ເຮັດວຽກບໍລິການທາງເພດ ໃນເອີຣົບ, 2019) 33.

251 ສຳນັກງານສະຫະປະຊາຊາດ ວ່າດ້ວຍ ຢາເສບຕິດ ແລະ ອາຊະຍາກຳ, ຜູ້ຖືກເຄາະຮ້າຍ ຈາກ ການຄ້າມະນຸດ ທີ່ເປັນເພດຍິງ ສຳລັບຖືກຂູດຮີດທາງເພດ ໃນນາມເປັນຈຳເລີຍ: ບົດວິເຄາະກົດໝາຍຄະດີ (ອົງການສະຫະປະຊາຊາດ, ນະຄອນວຽນນາ, 2020).

**ກໍລະນີສຶກສາ: ນາງ Tiffany Simpson – ຖືກຕັດສິນໂທດຄ້າມະນຸດ**

ນາງ Tiffany Simpson ໄດ້ຖືກລົງໂທດ ໃຫ້ເຂົ້າຄຸກ ເປັນເວລາ 30 ປີ ໃນລັດຈໍເຈຍ, ປະເທດສະຫະລັດອາເມລິກາ. ນາງ Tiffany ໄດ້ຖືກຄ້າມະນຸດ ຕອນທີ່ນາງມີອາຍຸ 17 ປີ, ຖືກທຸບຕີ, ແທງ, ມີຢາເສບຕິດ ແລະ ຖືກການບັງຄັບຄ້າເດັກນ້ອຍຄົນອື່ນໆ. ນາງໄດ້ຖືພາກັບຜູ້ຄ້າມະນຸດ ຂອງນາງ. ແທນທີ່ຈະຖືກປະຕິບັດ ໃນຖານະເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ, ນາງໄດ້ຖືກດຳເນີນຄະດີ ໂດຍຫ້ອງການໄອຍະການເມືອງ ຂອງລັດຈໍເຈຍໃຕ້ ແລະ ປ່ຽນດ້ວຍການກະທຳຜິດ ທີ່ພົວພັນກັບ ການຄ້າມະນຸດທີ່ເປັນໄວໜຸ່ມ. ໃນການດຳເນີນຄະດີ ຂອງນາງ, ນາງ Tiffany ບໍ່ສາມາດເວົ້າເພື່ອຕົນເອງໄດ້. ດັ່ງທີ່ຜູ້ຕ່າງໜ້າທາງດ້ານກົດໝາຍ ຂອງນາງໄດ້ອະທິບາຍ ຄື:

ການດຳເນີນຄະດີ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ບໍ່ຄວນເກີດຂຶ້ນ, ແຕ່ໃນອະດີ, ໄດ້ເກີດຂຶ້ນ ຍ້ອນວ່າ ຜູ້ຖືກເຄາະຮ້າຍ ທີ່ຢູ່ພາຍໃຕ້ ການຄວບຄຸມ ຂອງພວກຄ້າມະນຸດ ມັກຈະບໍ່ສາມາດເວົ້າ ຫຼື ຊ່ວຍຕົນເອງໄດ້, ຊຶ່ງຖືກຜູກມັດດ້ວຍ ຄວາມຢ້ານກົວ ແລະ ການຄວບຄຸມອັນດຽວ ທີ່ເກີດຈາກ ການຕົກເປັນຜູ້ຖືກເຄາະຮ້າຍ ຂອງເຂົາເຈົ້າ ທີ່ບັງຄັບເຂົາເຈົ້າ ໃຫ້ກະທຳ ອາຊະຍາກຳ. ຍ້ອນມົນທິນ ທີ່ນາງໄດ້ປະສົບ ແລະ ຄວາມຢ້ານກົວທີ່ນາງມີ ຕໍ່ ພວກຄ້າມະນຸດ, ນາງ Tiffany ບໍ່ໄດ້ຮັບຮູ້ວ່າ ຕົນເອງເປັນຜູ້ຖືກເຄາະຮ້າຍ ຈາກອາຊະຍາກຳ ແລະ ໄດ້ຮັບໂທດສອງຂໍ້ຫາ. ນາງ Tiffany ໄດ້ຖືກລົງໂທດ ໃຫ້ເຂົ້າຄຸກ 30 ປີ ໂດຍມີ 20 ໃຫ້ຊົດໃຊ້. ນາງ Tiffany ໄດ້ປະຕິບັດຕາມການລົງໂທດດັ່ງກ່າວ ເປັນເວລາເກົ້າປີ. ອີງຕາມກົດໝາຍ, ຕາມກົດໝາຍ, ນາງງ Tiffany ບໍ່ສາມາດສ້າງເຈດຕະນາ, ທີ່ເອີ້ນວ່າ ເຈດຕະນາ (mens rea), ເພື່ອກໍອາຊະຍາກຳ ໃນການຄ້າຄົນອື່ນ, ເພາະວ່າ ນາງໄດ້ຖືກບັງຄັບ ໃຫ້ເຮັດແນວນັ້ນ ຍ້ອນຄວາມຢ້ານກົວ ຕໍ່ ຄວາມປອດໄພຂອງຕົນເອງ ແລະ ແມ່ເຖົ້າ ຂອງນາງ. ໃນແງ່ຂອງສິນທຳ, ນາງ Tiffany ຄວນໄດ້ຮັບການບໍລິການ ເພື່ອຊ່ວຍເຫຼືອ ໃນການຟື້ນຟູຂອງນາງ, ບໍ່ຄວນຖືກລົງໂທດ ສຳລັບອາຊະຍາກຳ ຂອງຜູ້ຄ້າມະນຸດ ຕໍ່ ນາງແລະ ຜູ້ຖືກເຄາະຮ້າຍຄົນອື່ນໆ.[252]

ແຫຼ່ງຂໍ້ມູນ: ທ່ານ Susan Coppedge (ອະດີດ ເອກອັກຄະລັດຖະທູດພິເສດ, ທີ່ປຶກສາອາວຸໂສ ກັບ ທ່ານ Krevolin & Horst, ແລະ ທະນາຍຄວາມ ຂອງ ນາງ Tiffany Simpson), *ຄວາມຍຸຕິທຳ ເປັນສ່ວນໜຶ່ງ ຂອງການປິ່ນປົວ ແກ່ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ*, ເວັບໄຊ law.com, 18 ກຸມພາ 2021

## ການລັກລອບເອົາຄົນເຂົ້າເມືອງຜິດກົດໝາຍ

ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ອາດຈະເລີ່ມການເດີນທາງ ໃນຖານະເປັນຜູ້ລັກລອບເຂົ້າເມືອງຜິດກົດໝາຍ ທີ່ຈ່າຍເງິນຄ່າຜ່ານທາງໄປຫາປະເທດອື່ນ. ໃນກໍລະນີທີ່ ຜູ້ເຄື່ອນຍ້າຍ ດຳເນີນການ ລັກລອບທີ່ຜິດກົດໝາຍໃດໜຶ່ງ ເຊັ່ນ: ຂັບລົດລັກລອບຂົນສິ່ງເຄື່ອງ ຫຼື ຂັບເຮືອ ເພື່ອຮັບຄ່າຈ້າງລັກລອບຂົນເຄື່ອງ ຫຼື ເພື່ອແລກປ່ຽນກັບສ່ວນຫຼຸດ, ຜົນໄດ້ຮັບ ອາດຈະແມ່ນວ່າຜູ້ຖືກເຄາະຮ້າຍຈາກການຄ້າມະນຸດແມ່ນຖືກດຳເນີນຄະດີ ໃນຖານະເປັນຜູ້ລັກລອບຄົນເຂົ້າເມືອຜິດກົດໝາຍ. ຄວາມສ່ຽງສະເພາະ ໄດ້ສັງເກດເຫັນວ່າເກີດຂຶ້ນກັບເດັກນ້ອຍ, ລວມທັງການດຳເນີນຄະດີເດັກນ້ອຍສັນຊາດອິນໂດເນເຊຍ ສຳລັບການກະທຳຜິດລັກລອບຂົນສິ່ງ ໂດຍທີ່ເຂົາເຈົ້າມີບົດບາດ ໃນການຂົນສິ່ງຄົນ

---

252 ທ່ານ Susan Coppedge (ອະດີດເອກອັກຄະລັດຖະທູດພິເສດ ຂອງສະຫະລັດອາເມລິການ, ທີ່ປຶກສາອາວຸໂສ ກັບ ທ່ານ Krevolin ແລະ Horst, ແລະ ທະນາຍຄວາມ ສຳລັບ Tiffany Simpson), *ຄວາມຍຸຕິທຳ ແມ່ນເປັນສ່ວນໜຶ່ງ ຂອງການຮັກສາ ຜູ້ຖືກເຄາະຮ້າຍ ຈາກ ການຄ້າມະນຸດ,* law.com, 18 ກຸມພາ 2021, https://www.law.com/dailyreportonline/2021/02/18/justice-is-a-part-of-healing-for-victims-of-human-trafficking/?slreturn=20210405034616 ໄດ້ເຂົ້າເບິ່ງ ໃນວັນທີ 5 ພຶດສະພາ 2021.

ໄປອິດສະຕາລີ.[253] ຄວາມສ່ຽງ ທີ່ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ອາດຈະຖືກຕັ້ງຂໍ້ກ່າວຫາ ແທນ ສໍາລັບການກະທໍາຜິດ ໃນການລັກລອບຂົນສົ່ງ ຜູ້ເຄື່ອນຍ້າຍ ແມ່ນມີຄວາມຮ້າຍແຮງຂຶ້ນ ຢູ່ໃນປະເທດ ບ່ອນທີ່ໄດ້ລວມສອງປະເພດອາດຊະຍາກໍາ ເຂົ້າກັນ ແລະ ເຈົ້າໜ້າທີ່ປະຕິບັດຄວາມຍຸຕິທໍາທາງອາຍາ ຂາດຄວາມອາດສາມາດໃນການໃຈ້ແຍກ ຄວາມແຕກຕ່າງ.

## ອາດຊະຍາກໍາທາງການເງິນ ແລະ ການປອມແປງເອກະລັກ

**ການສໍ້ໂກງ:** ຜູ້ຖືກເຄາະຮ້າຍ ໄດ້ຖືກນໍາໃຊ້ ໂດຍຜູ້ຄ້າມະນຸດ ເພື່ອເຮັດການສໍ້ໂກງ ດ້ານສະຫວັດດີການ / ຜົນປະໂຫຍດ, ຍົກຕົວຢ່າງ, ເມື່ອຄົນພິການຖືກກໍານົດຂຶ້ນ ເພື່ອຮຽກຮ້ອງຜົນປະໂຫຍດ ທີ່ຖືກເກັບຮັກສາໄວ້ ໂດຍຜູ້ຄ້າມະນຸດ.[254] ນອກຈາກນັ້ນ ຍັງມີກໍລະນີ ທີ່ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ໄດ້ຮັບມອບຕົວຕົນ ຂອງ ຜູ້ອື່ນ ໃນຊ່ວງໄລຍະ ການຂູດຮີດ ຂອງເຂົາເຈົ້າ ສໍາລັບຈຸດປະສົງອື່ນ, ແລະ ຖືກດໍາເນີນຄະດີ ໃນຂໍ້ຫາສໍ້ໂກງຕົວຕົນ.[255] ການສໍ້ໂກງບັດເຄຣດິດ ກໍມີລາຍງານເຊັ່ນກັນ.[256] ພວກຄ້າມະນຸດ ຍັງອາດຈະໃຊ້ ຜູ້ຖືກເຄາະຮ້າຍ ໃນການສໍ້ໂກງພາສີ, ສິ່ງຜົນເຮັດໃຫ້ ຜູ້ຖືກເຄາະຮ້າຍປະເຊີນກັບ ການສືບສວນທາງແພ່ງ ແລະ ທາງອາຍາ ສໍາລັບການສືບສວນພາສີອາກອນຊຶ່ງບາງຄັ້ງ ເປັນເວລາຫຼາຍປີ ຫຼັງຈາກ ເຂົາເຈົ້າ ໄດ້ຖືກຄ້າມະນຸດ. ໃນທາງປະຕິບັດ, ມັນສາມາດເປັນສິ່ງທີ່ຫຍຸ້ງຍາກສໍາລັບຜູ້ຖືກເຄາະຮ້າຍ ທີ່ຈະຮຽກຮ້ອງ ການຂົ່ມເຫັງ ຢູ່ໃນສະຖານະການເຫຼົ່ານີ້.

**ກໍລະນີສຶກສາ: ນາງ Rebekah**

ຢູ່ໃນຄະດີໜຶ່ງ ທີ່ໜ້າເສຍດາຍ ໃນປະເທດສະຫະລັດອາເມລິກາ, ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ, ນາງ Rebekah, ໄດ້ເປັນຜູ້ທີ່ຖືກຂູດຮີດທາງເພດ ຈາກ ຜູ້ຄ້າມະນຸດທີ່ມັກໃຊ້ຄວາມຮຸນແຮງ. ຜູ້ຄ້າມະນຸດ ຂອງນາງ ໄດ້ຊື້ເຮືອນ ແລະ ລົດ ເປັນຊື່ຂອງນາງ, ແລະ ໃຫ້ນາງເປີດບັນຊີທະນາຄານ ພາຍໃຕ້ຊື່ ແລະ ເລກປະກັນສັງຄົມປອມ ເພື່ອໃຫ້ເງິນເອງຫຼີກລ້ຽງ ຈາກການກໍາໄລທີ່ຜິດກົດໝາຍ. ລາວບໍ່ໄດ້ອະນຸຍາດໃຫ້ນາງ ຍື່ນໃບແຈ້ງອາກອນ ສໍາລັບລາຍຮັບທີ່ໄດ້ຝາກເຂົ້າບັນຊີເຫຼົ່ານີ້. ຕໍ່ມາ ນາງ Rebekah ໄດ້ຖືກກ່າວຟ້ອງ ໃນຂໍ້ຫາກໍ່ອາຊະຍາກໍາທາງການເງິນ ທີ່ນາງຖືກບັງຄັບໃຫ້ກະທໍາ, ແລະ ໄດ້ຖືກຄວບຄຸມ ບໍ່ໃຫ້ຮ່ວມມືກັບເຈົ້າໜ້າທີ່, ບໍ່ໄດ້ເປີດເຜີຍການມີສ່ວນຮ່ວມ ຂອງ ຜູ້ຄ້າມະນຸດ ໃນອາຊະຍາກໍາເຫຼົ່ານີ້. ນາງໄດ້ສາລະພາບຜິດ ໃນຂໍ້ຫາຫລົບໜີພາສີ ແລະ ຖືກຕັດສິນໃຫ້ເຂົ້າຄຸກ ເປັນເວລາ 13 ເດືອນ. ຫຼັງຈາກ ນາງຖືກປ່ອຍຕົວອອກຈາກຄຸກແລ້ວ, ຜູ້ຄ້າມະນຸດ ໄດ້ບັງຄັບໃຫ້ນາງ ຍື່ນໃບແຈ້ງພາສີຄືນ ເຮັດໃຫ້ນາງເປັນໜີ້ອາກອນ ຫຼາຍກວ່າ 1/4 ຂອງ ເງິນຫຼາຍລ້ານໂດລາສະຫະລັດ.[257]

---

253 ທ່ານ Palmer, W., & Missbach, A. (2017). ການຄ້າມະນຸດ ຢູ່ພາຍໃນ ການດໍາເນີນການລັກລອບໄປມາ ຂອງຜູ້ເຄື່ອນຍ້າຍ: ແມ່ນ ຜູ້ຖືກເຄາະຮ້າຍ ຫຼື ຜູ້ກະທໍາຜິດ ເປັນຜູ້ຂົນສົ່ງທີ່ມີອາຍຸຕໍ່າກວ່າຄວາມຮັບຜິດຊອບທາງກົດໝາຍ? *ວາລະສານການເຄື່ອນຍ້າຍ ພາຍໃນ ອາຊີ ແລະ ປາຊີຟິກ,* 26(3), 287-307.

254 *ການຄ້າມະນຸດ ສໍາລັບກິດຈະກໍາອາຊະຍາກໍາ ທີ່ຖືກບັງຄັບ ແລະ ການຂໍທານ ໃນເອີຣົບ: ບົດສຶກສາລະອຽດ ແລະ ຫຼັກການປະຕິບັດ* (ອົງການສາກົນ ຕ້ານການເປັນທາດ, 2014) 72.

255 ການສົນທະນາ ຂອງ ຄະນະກໍາມະການຄວາມຍຸຕິທໍາ ຂອງ ຜູ້ລອດຊີວິດ, ທ່ານ Dressember ແລະ ທ່ານ Karana Rising, 7ໂມງແລງ ET, 30 ເມສາ 2021. ເອກະສານບັນທຶກ ຂອງຜູ້ຂຽນ.

256 ທ່ານ Carolina Villacampa ແລະ ທ່ານ Nria Torres, ການຄ້າມະນຸດ ສໍາລັບການຂູດຮີດທາງອາຍາ: ຜົນກະທົບທີ່ຜູ້ຖືກເຄາະຮ້າຍປະສົບ ໃນທາງຜ່ານໄປສູ່ ລະບົບຍຸຕິທໍາທາງອາຍາ, *ບົດທົບທວນສາກົນ ກ່ຽວກັບຜູ້ຖືກເຄາະຮ້າຍ,* 2019, ສະບັບທີ. 25(1) 318, ທີ່ 4

257 *ຄໍາແນະນໍາ ຂອງຜູ້ສະໜັບສະໜູນ ຕໍ່ ບັນຫາພາສີອາກອນ ທີ່ສົ່ງຜົນກະທົບ ຕໍ່ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ,* (ສູນນິຕິກໍາກ່ຽວກັບການຄ້າມະນຸດ, ທ່ານ Ropes & Gray LLP, ແລະ ມະຫາວິທະຍາໄລ Baltimore, ໂຮງຮຽນກົດໝາຍ, 2019) 4

**ການຕົວະຍົວະຫຼອກລວງ ທາງອອນລາຍ / ໂທລະສັບ:** ມີກໍລະນີ ຂອງ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ຈາກ ອາຊີຕາເວັນອອກ ທີ່ຖືກຂູດຮີດ ສໍາລັບຈຸດປະສົງ ຂອງ ການຕົວະຍົວະຫຼອກລວງ ທີ່ສູນໂທລະສັບ, ຊຶ່ງຖືກບອກໃຫ້ໂກງເງິນ ຄົນທີ່ຮັ່ງມີ ໃນຂະນະທີ່ໃຫ້ໃຊ້ຊີວິດຢູ່ໃນສະພາບ ທີ່ຕໍ່າກວ່າມະນຸດທົ່ວໄປ ແລະ ບໍ່ໄດ້ຮັບຄ່າຕອບແທນໃດໆ; ຊຶ່ງເປັນກິດຈະກໍາລັບ ທີ່ໄດ້ສັງເກດເຫັນ ທັງຢູ່ໃນ ປະເທດອິດສະຕາລີ ແລະ ເອີຣົບ ແລະ ອາດຈະເກີດຂຶ້ນຢູ່ບ່ອນອື່ນໆອີກ.[258]

**ການກະທໍາຜິດ ທີ່ກ່ຽວຂ້ອງກັບ ການສໍ້ລາດບັງຫຼວງ:** ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ອາດກະທໍາຜິດທີ່ກ່ຽວຂ້ອງກັບການສໍ້ລາດບັງຫຼວງ, ບໍ່ວ່າຈະເປັນການເຄື່ອນຍ້າຍ ແບບໄປໆມາໆ ຈາກຈຸດຕົ້ນກໍາເນີດ ໄປຫາ ຈຸດທີ່ຖືກຂູດຮີດ, ຫຼື ໃນຊ່ວງໄລຍະການຂູດຮີດ, ຍົກຕົວຢ່າງ ເຊັ່ນ ເມື່ອຜູ້ບັງຄັບໃຊ້ກົດໝາຍ ຂົ່ມຂູ່ເຂົາເຈົ້າ ເພື່ອຜົນປະໂຫຍດທາງການເງິນ ຫຼື ດ້ານວັດຖຸອື່ນໆ ລວມທັງ ການບໍລິການທາງເພດ. ຢູ່ໃນບາງກໍລະນີ, ການໃຫ້ສິນບົນ ຈະຖືກບັງຄັບ ຜ່ານທາງ ການຂົ່ມຂູ່ ກ່ຽວກັບການລົງໂທດ ສໍາລັບການເຮັດວຽກ ຫຼື ກິດຈະກໍາ ທີ່ຜິດກົດໝາຍ ທີ່ເຂົາເຈົ້າມີສ່ວນຮ່ວມໃນນັ້ນ.[259]

## ການກະທໍາຜິດອື່ນໆ

**ການລັກເລັກຂະໂມຍນ້ອຍ (Petty crimes):** ຜູ້ຖືກເຄາະຮ້າຍໄດ້ຖືກດໍາເນີນຄະດີ ໃນຂໍ້ຫາ ຂີ້ລັກ,[260] ການເກັບເງິນເພື່ອການກຸສົນ ທີ່ຜິດກົດໝາຍ ແລະ ເພື່ອການຂູດຮີດ ຂອງເຂົາເຈົ້າ ຢູ່ໃນອາຊະຍາກໍາລັກເລັກຂະໂມຍນ້ອຍ ລວມທັງ ການລັກເງິນໃນຖົງສົ້ງຖົງເສື້ອ, ການດຶງກະເປົາ, ການລັກເຄື່ອງໃນຮ້ານຄ້າ, ການລັກຈາກຕູ້ເອທີເອັມ ແລະ ການລັກຂະໂມຍ ດ້ວຍກົນອຸບາຍຕ່າງໆ. ຜູ້ທີ່ໄດ້ກ່ຽວຂ້ອງກັບ ການລັກເງິນໃນຖົງສົ້ງເສື້ອ ແລະ ການຂາຍສິນຄ້າປອມ ໃນບັນດາປະເທດທີ່ລວມມີ ອັງກິດ ແມ່ນເປັນຄົນ ທີ່ມາຈາກບັນດາກຸ່ມຊົນເຜົ່າທີ່ຖືກມອງຂ້າມ, ຕົ້ນຕໍແມ່ນຄົນ Roma. ເຈົ້າໜ້າ ທີ່ຝຣັ່ງ ໄດ້ມ້າງເຄືອຂ່າຍອາດຊະຍາກໍາ ທີ່ມີການຈັດຕັ້ງລະດັບສູງ ທີ່ໄດ້ກ່ຽວຂ້ອງກັບ ການຂູດຮີດເດັກນ້ອຍ ຫຼາຍກວ່າ 2,000 ຄົນໃນການລັກຂະໂມຍ, ທີ່ດໍາເນີນງານ ຢູ່ທົ່ວພາກໃຕ້ ຂອງປະເທດຝຣັ່ງ, ແອັດສະປາຍ, ອີຕາລີ ແລະ ອື່ນໆ.[261] ການຄ້າມະນຸດ ສໍາລັບການລັກໂລຫະໄປຂາຍ (ໂດຍທີ່ຜູ້ຖືກເຄາະຮ້າຍ ຖືກບອກໃຫ້ຊອກຫາໂລຫະ ທີ່ພວກຄ້າມະນຸດ ຈະເອົາໄປຂາຍຕໍ່ມາ) ໄດ້ຖືກລາຍງານວ່າ ມີຢູ່ໃນເອີຣົບ.[262]

**ການຂໍທານ:** ການຂໍທານ ອາດຈະມີຢູ່ໃນບາງປະເທດ ຊຶ່ງບໍ່ໄດ້ຖືກລະບຸວ່າ ເປັນການຖືກບັງຄັບ ຫຼື ບໍ່ຖືກຮັບຮູ້ວ່າເປັນບັນຫາການຄ້າມະນຸດ, ຊຶ່ງໝາຍຄວາມວ່າ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ທີ່ຖືກບັງຄັບໃຫ້ໄປຂໍທານອາດຈະບໍ່ຖືກກໍານົດຕົວຕົນໄດ້. ຍົກຕົວຢ່າງ ໃນປະເທດໂຮນລັງ, ການຂໍທານ ໄດ້ຖືກພິຈາລະນາ ເປັນບັນຫາ ຂອງຄວາມເປັນລະບຽບຮຽບຮ້ອຍ ຂອງສາທາລະນະ, ໂດຍຜູ້ທີ່ກ່ຽວຂ້ອງ ຖືກປະຕິບັດວ່າເປັນຜູ້ກະທໍາຜິດ ຫຼາຍກວ່າທີ່ຈະກໍານົດວ່າ ເຂົາເຈົ້າອາດຈະເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ. ຢູ່ບ່ອນອື່ນໆໃນເອີຣົບ (ເຊັ່ນ ປະເທດໂຣມັນນີ ແລະ ບຸງກາລີ) ການຂໍທານ ຖືກກໍານົດເປັນຄວາມຜິດທາງອາຊະຍາ, ເຮັດໃຫ້ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ເຂົ້າໄປຢູ່ໃນຂະບວນການຂໍທານ ມີຄວາມສ່ຽງ ທີ່ຈະຖືກດໍາເນີນຄະດີ. ການຂູດຮີດເດັກນ້ອຍ ໃນການຂໍທານ, ສາມາດເປັນອາຊະຍາກໍາ ທີ່ມີກໍາໄລສູງ ແລະ ມີຄວາມສ່ຽງຕໍ່າ ສໍາລັບຜູ້ຄ້າມະນຸດ, ຜູ້ທີ່ໃຊ້ປະໂຫຍດ ຈາກອາຍຸ ຂອງຄວາມຮັບຜິດຊອບ ທາງອາຍາ (ຊຶ່ງອາດຈະເປັນສິບ ຫຼື ແປດປີ) ຊຶ່ງໝາຍຄວາມວ່າ ເດັກນ້ອຍບໍ່ສາມາດຖືກດໍາເນີນຄະດີໄດ້, ແລະ ດັ່ງນັ້ນຈຶ່ງສາມາດ ເຄື່ອນຍ້າຍໄປທົ່ວເອີຣົບ ເພື່ອສືບຕໍ່ການຂູດຮີດ.[263]

**ການຂັດຂວາງຄວາມຍຸຕິທໍາ:** ຜູ້ຖືກເຄາະຮ້າຍ ອາດຈະຖືກສອບສວນ ໂດຍຕໍາຫຼວດ ທີ່ຕ້ອງການຊອກຮູ້ ກ່ຽວກັບພວກຄ້າມະນຸດ ຫຼື ອາດຊະຍາກໍາອື່ນໆ ທີ່ເຂົາເຈົ້າໄດ້ພົວພັນ. ໃນບາງກໍລະນີ, ສັນຊາດຕະຍານການຢູ່ລອດ ຂອງ ຜູ້ຖືກເຄາະຮ້າຍ ປ້ອງກັນບໍ່ໃຫ້ເຂົາເຈົ້າ ຮ່ວມມືກັບຕໍາຫຼວດ ຍ້ອນຄວາມຢ້ານກົວ ຕໍ່ ຄວາມປອດໄພຂອງຕົນ ຖ້າ

---

258 ບົດລາຍງານ ກ່ຽວກັບ ການຄ້າມະນຸດ ຢູ່ທົ່ວໂລກ 2020 (UNODC, 2021) ໜ້າ51

259 ໃຫ້ເບິ່ງ: *ການສໍ້ລາດບັງຫຼວງ ເປັນຕົວອໍານວຍຄວາມສະດວກ ແກ່ ການລັກລອບໄປມາ ຂອງຜູ້ເຄື່ອນຍ້າຍ ແລະ ການຄ້າມະນຸດ ໃນບາຫຼີ. ຂະບວນການລະດັບພາກພື້ນ ທີ່ເນັ້ນໜັກໃສ່ ອາຊີຕາເວັນອອກສ່ຽງໃຕ້* (UNODC ແລະ RSO, 2021) ໜ້າ10, 33, 35-36.

260 ການສົນທະນາ ຂອງ ຄະນະກໍາມະການຄວາມຍຸຕິທໍາ ຂອງ ຜູ້ລອດຊີວິດ, ທ່ານ Dressember ແລະ ທ່ານ Karana Rising, 7ໂມງແລງ ET, 30 ເມສາ 2021. ເອກະສານບັນທຶກ ຂອງຜູ້ຂຽນ.

261 ບົດລາຍງານ ກ່ຽວກັບ ການຄ້າມະນຸດ ຢູ່ທົ່ວໂລກ 2020 (UNODC, 2021) ໜ້າ50

262 ຍົກຕົວຢ່າງ, ຢູ່ໃນປະເທດອັງກິດ, *ການຄ້າມະນຸດ ສໍາລັບກິດຈະກໍາອາຊະຍາກໍາ ທີ່ຖືກບັງຄັບ ແລະ ການຂໍທານ ໃນເອີຣົບ: ບົດສຶກສາລະອຽດ ແລະ ຫຼັກການປະຕິບັດ* (ອົງການສາກົນ ຕ້ານການເປັນທາດ, 2014) ໜ້າ5, 15, 64, 73, 89.

263 *ການຄ້າມະນຸດ ສໍາລັບກິດຈະກໍາອາຊະຍາກໍາ ທີ່ຖືກບັງຄັບ ແລະ ການຂໍທານ ໃນເອີຣົບ: ບົດສຶກສາລະອຽດ ແລະ ຫຼັກການປະຕິບັດ* (ອົງການສາກົນ ຕ້ານການເປັນທາດ, 2014) ໜ້າ6, 22, 61, 64.

ເຂົາເຈົ້າ ຖືກຮັບຮູ້ວ່າ ໄດ້ຊ່ວຍເຫຼືອຕໍາຫຼວດ.[264] ຜູ້ຖືກເຄາະຮ້າຍ ອາດຈະມີຄວາມສ່ຽງ ຕໍ່ ການຖືກດໍາເນີນຄະດີ ພາຍໃຕ້ ກົດໝາຍພາຍໃນປະເທດ ລວມທັງ ກົດໝາຍການຄ້າມະນຸດ. ຍົກຕົວຢ່າງ, ໃນປະເທດສິງກະໂປ, ກົດໝາຍ ສະບັບເລກທີ 24 ປີ 2014 ວ່າດ້ວຍ ການຄ້າມະນຸດ ໄດ້ຫ້າມການຂັດຂວາງ ເຈົ້າໜ້າທີ່ຕໍາຫຼວດ ຫຼື ເຈົ້າໜ້າທີ່ບັງຄັບ ໃຊ້ກົດໝາຍ (ມາດຕາ 17); ຂໍ້ຄວາມ, ຂໍ້ມູນຂ່າວສານ ແລະ ອື່ນໆ ທີ່ຜິດ (ມາດຕາ 20), ທັງສອງເປັນການກະທໍາ ຜິດ ທີ່ເຮັດໃຫ້ຖືກປັບໃໝສູງສຸດເຖິງ $10,000 ແລະ/ຫຼື ເຂົ້າຄຸກ ບໍ່ເກີນ 12 ເດືອນ. ຢູ່ໃນຫຼາຍປະເທດ, ຄົນສາມາດ ຖືກຈັບ ແລະ ຖືກບອກໃຫ້ປະກົດຕົວໃນສານ ໃນຖານະເປັນພະຍານ.

**ການໝິ່ນປະໝາດ / ການໃສ່ຮ້າຍ:** ແຫຼ່ງຂໍ້ມູນ ລວມທັງຈາກ ບົດລາຍງານການຄ້າມະນຸດ ຂອງ ສະຫະລັດ ອາເມລິກາ ສະບັບ ປີ 2020 ສັງເກດວ່າ ນາຍຈ້າງທີ່ຂູດຮີດ ໄດ້ໃຊ້ກົດໝາຍການຫມິ່ນປະຫມາດ ເພື່ອນໍາເອົາ ຂໍ້ ກ່າວຫາທາງອາຍາ ຕໍ່ສູ້ກັບ ຜູ້ຖືກເຄາະຮ້າຍແລະ ຜູ້ສະຫນັບສະຫນູນ ຂອງເຂົາເຈົ້າ ເພື່ອໃຫ້ເຂົາເຈົ້າບໍ່ເວົ້າຈົ່ມຫຍັງ ຕໍ່ ສະພາບເງື່ອນໄຂ ຂອງ ການຈ້າງງານ. ບົດລາຍງານ ຍົກຕົວຢ່າງ ຈາກປະເທດໄທ ທີ່ບໍລິສັດໜຶ່ງ ໄດ້ດໍາເນີນການ ຮ້ອງທຸກ ຕໍ່ ຜູ້ສະຫນັບສະຫນູນສິດ ຜູ້ທີ່ໄດ້ກ່າວຫາ ໃຫ້ສາທາລະນະຮູ້ ກ່ຽວກັບເງື່ອນໄຂການເຮັດວຽກ ທີ່ຊີ້ໃຫ້ ເຫັນເຖິງ ການບັງຄັບໃຊ້ແຮງງານ, ເຖິງແມ່ນວ່າ ການປົກປ້ອງ ຜູ້ລາຍງານ (whistle-blower) ໄດ້ມີຢູ່ໃນ ກົດໝາຍ ວ່າດ້ວຍ ການຕ້ານການຄ້າມະນຸດ ກໍຕາມ. ຕົວຢ່າງອີກອັນນຶ່ງ ແມ່ນຂອງປະເທດມຽນມາ ທີ່ກ່ຽວຂ້ອງກັບ ເຈົ້າໜ້າທີ່ ຮຽກຄ່າຈ້າງ ຄືນງານຂອງໂຮງງານ ສໍາລັບ ການສືບຕໍ່ປະທ້ວງ ຫຼັງຈາກຖືກບັງຄັບໃຫ້ເຮັດວຽກລ່ວງເວລາ ຢູ່ໃນ ໂຮງງານຂອງຄົນຈີນ.[265]

**ການກະທໍາຜິດ ທີ່ກ່ຽວຂ້ອງກັບ ການຖືພາແທນຜູ້ອື່ນ:** ເມື່ອຄົນທີ່ຖືກຄ້າມະນຸດ ສໍາລັບຈຸດປະສົງ ໃຫ້ຖືພາ ແທນຜູ້ອື່ນ, ແລະ ການຖືພາແທນ ແບບຂູດຮີດ ແມ່ນບໍ່ໄດ້ຖືກຮັບຮູ້ວ່າ ເປັນຮູບແບບ ການຂູດຮີດ, ຜູ້ຖືກເຄາະຮ້າຍ ອາດຈະຍັງບໍ່ຖືກກໍານົດຕົວ, ໃນຄວາມເປັນຈິງ ແມ່ນປະເຊີນກັບ ການຖືກກໍານົດໃຫ້ມີຄວາມຜິດທາງອາຊະຍາ ສໍາ ລັບການກະທໍາຜິດ ທີ່ກ່ຽວຂ້ອງກັບ ການຖືພາແທນຜູ້ອື່ນ ເພື່ອທຸລະກິດ ຫຼື ເຕັກໂນໂລຢີການຈະເລີນພັນ.

**ການຂາຍອາໄວຍະວະ / ການຄ້າອາໄວຍະວະ:** ຢູ່ໃນຫຼາຍປະເທດ, ການຄ້າມະນຸດ ສໍາລັບຈຸດປະສົງ ເພື່ອເອົາ ອະໄວຍະວະອອກ ແມ່ນບໍ່ໄດ້ຖືກກໍານົດ ແລະ ຕອບໂຕ ຢ່າງມີປະສິດທິພາບ. ແທນທີ່ຈະເປັນເຊັ່ນນັ້ນ, ພາກສ່ວນທີ່ ກ່ຽວຂ້ອງ ລວມທັງ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ຖືກຄ້າມະນຸດ ສໍາລັບຈຸດປະສົງຂອງການເອົາອະໄວຍະວະ ອອກ, ອາດຈະຖືກດໍາເນີນຄະດີໃນຂໍ້ຫາຂາຍ ຫຼື ຄ້າອະໄວຍະວະ. ການສຶກສາໃນປັດຈຸບັນ ໄດ້ພົບເຫັນ ສະຖານະ ການ ທີ່ບໍ່ຢືນຢັນເປັນທາງການ ກ່ຽວກັບ ຜູ້ຊາຍ ທີ່ມາຈາກປະເທດທຸກຍາກ ທີ່ເດີນທາງຂ້າມແດນ ລວມທັງໃນພາກ ພື້ນອາຊຽນ ເພື່ອໄປຂາຍໝາກໄຂ່ຫຼັງ ຂອງຕົນ ຊຶ່ງຕໍ່ມາຖືກກໍານົດວ່າກະທໍາຜິດທາງອາຍາ ພາຍໃຕ້ ກົດໝາຍວ່າດ້ວຍ ການຄ້າມະນຸດ ທີ່ພົວພັນກັບ ການເອົາອະໄວຍະວະອອກ.

**ການກະທໍາຜິດ ທີ່ກ່ຽວຂ້ອງກັບ ການປະມົງ ແບບຜິດກົດໝາຍ, ທີ່ບໍ່ຖືກລາຍງານ ແລະ ບໍ່ຖືກຄວບຄຸມ ຈາກລະບຽບກົດໝາຍ (IUU):** ບຸກຄົນ ທີ່ຖືກຂູດຮີດ ຢູ່ໃນອຸດສະຫະກໍາ ການປະມົງ ແມ່ນມີຄວາມສ່ຽງສູງ ທີ່ຈະຖືກກໍານົດວ່າມີຄວາມຜິດ ທາງອາຍາ ທີ່ເຂົາເຈົ້າກະທໍາ ໃນໄລຍະຖືກຄ້າມະນຸດ, ລວມທັງ ການປະມົງຜິດ ກົດໝາຍ, ການລັກລອບລ່າຫຼືຈັບ, ການລັກລອບຂົນສິ່ງ ແລະ ການລັກລອບເຂົ້າໃນດິນແດນ ຂອງປະເທດ.[266] ຜູ້ ທີ່ຖືກຄ້າມະນຸດ ເຂົ້າໄປໃນອຸດສາຫະກໍາການປະມົງ ອາດຈະຖືກດໍາເນີນຄະດີ ແລະ ລົງໂທດ ສໍາລັບການທີ່ເຂົາເຈົ້າ ກ່ຽວຂ້ອງກັບການປະມົງ IUU.[267] ການສຶກສາໃນປັດຈຸບັນ ໄດ້ເປີດເຜີຍ ຄວາມເປັນຫ່ວງ ທີ່ສໍາຄັນ ທີ່ຜູ້ຖືກເຄາະ ຮ້າຍຈາກການຄ້າມະນຸດ ໄດ້ເຂົ້າໄປສູ່ ອຸດສາຫະກໍາການປະມົງ ໃນທົ່ວພາກພື້ນອາຊຽນ, ໂດຍສະເພາະ ແມ່ນເປັນ ພົນລະເມືອງ ທີ່ມາຈາກ ປະເທດກໍາປູເຈຍ, ອິນໂດເນເຊຍ ແລະ ຟີລິບປິນ ທີ່ຕົກຢູ່ໃນການລົງໂທດ ແລະ ຖືກປັບ ໃໝ ຍ້ອນການທີ່ເຂົາເຈົ້າ ມີສ່ວນພົວພັນກັບ ການປະມົງ ແບບ IUU ໃນປະເທດອື່ນໆ, ລວມທັງ ບໍ່ພຽງແຕ່ຢູ່ໃນ ອາຊີ, ແຕ່ຍັງຢູ່ໃນພາກພື້ນອື່ນໆ ລວມທັງປາຊີຟິກ. ແທ້ຈິງແລ້ວ, ພົນລະເມືອງ ຂອງບັນດາປະເທດອາຊຽນ ທີ່ໄດ້ ຖືກ ຄ້າມະນຸດ ເຂົ້າໄປໃນອຸດສະຫາກໍາການປະມົງ ໄດ້ຖືກສົ່ງໄປຫຼາຍພາກພື້ນ ໃນໂລກ. ໃນບາງກໍລະນີ, ບຸກຄົນເຫຼົ່າ ນີ້ ໄດ້ຖືກກໍານົດຕົວ ໂດຍອົງການ NGO ວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ແຕ່ບໍ່ໄດ້ຖືກກໍານົດຕົວ ແລະ ໄດ້ຮັບການປົກປ້ອງ ຢ່າງເປັນທາງການ.

---

264 ການສົນທະນາ ຂອງ ຄະນະກໍາມະການຄວາມຍຸຕິທໍາ ຂອງ ຜູ້ລອດຊີວິດ, ທ່ານ Dressember ແລະ ທ່ານ Karana Rising, 7ໂມງແລງ ET, 30 ເມສາ 2021. ເອກະສານບັນທຶກ ຂອງຜູ້ຂຽນ.

265 2020 ບົດລາຍງານການຄ້າມະນຸດ: ປະເທດພະມ້າ (ກະຊວງການຕ່າງປະເທດ ແຫ່ງປະເທດສະຫາລັດ, 2020)

266 ບົດລາຍງານການຄ້າມະນຸດ ສະບັບປີ 2021: ປະເທດອິນໂດເນເຊຍ (ກະຊວງການຕ່າງປະເທດ ແຫ່ງປະເທດສະຫາລັດ, 2021)

267 ທ່ານ Sallie Yea, *ການຄ້າມະນຸດ ແລະ ການເປັນຂ້າທາດສະໄໝໃໝ່* ໃນອາຊີ, ABC Big Ideas, 10 ພຶດສະພາ 2021

## ເອກະສານຊ້ອນທ້າຍ 2: ເຄື່ອງມືໃນການອຳນວຍຄວາມສະດວກ ສຳລັບການປຶກສາຫາລື ແບບໂຕະມົນ

**ກອງປະຊຸມປຶກສາຫາລືແບບໂຕະມົນ ການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນກົດໝາຍ ແລະ ການປະຕິບັດຕົວຈິງໃນບັນດາປະເທດສະມາຊິກອາຊຽນ**

**ຄຳແນະນຳສຳລັບຜູ້ອຳນວຍຄວາມສະດວກ:** ແບບຟອມນີ້ໄດ້ຖືກອອກແບບເພື່ອໃຫ້ທີມງານຂອງ AACT ເພື່ອໃຊ້ໃນການຈັດກອງປະຊຸມປຶກສາຫາລືແບບໂຕະມົນ ກ່ຽວກັບຫຼັກການບໍ່ລົງໂທດ. ແບບຟອມນີ້ຈະຖືກນຳໃຊ້ສຳລັບ:

- ໂດຍຜູ້ອຳນວຍຄວາມສະດວກ ເພື່ອອຳນວຍຄວາມສະດວກໃນການປຶກສາຫາແບບໂຕະມົນ
- ໂດຍຜູ້ບັນທຶກກອງປະຊຸມ ເພື່ອບັນທຶກການສົນທະນາປຶກສາຫາລື: ຜູ້ບັນທຶກກອງປະຊຸມຈະຕ້ອງບັນທຶກໃສ່ແບບຟອມອັນໜຶ່ງ ສຳລັບການປຶກສາຫາລືແບບໂຕະມົນໃນແຕ່ລະຄັ້ງ.

ແບບຟອມນີ້ຈະບໍ່ຖືກແບ່ງປັນໃຫ້ແກ່ແຂກຖືກເຊີນ/ຜູ້ເຂົ້າຮ່ວມໃນການປຶກສາຫາລືແບບໂຕະມົນ.

**ເພື່ອໃຫ້ທີມງານພາຍໃນປະເທດ ດຳເນີນການລ່ວງໜ້າກ່ອນກອງປະຊຸມ ແລະ ກວດສອບໃນລະຫວ່າງ:**

| | |
|---|---|
| **ວັນທີ/ເວລາ/ສະຖານທີ່ການຈັດການປຶກສາຫາລືແບບໂຕະມົນ** | |
| ວັນທີ: | |
| ເວລາ: | |
| ສະຖານທີ່: | |
| **ທີມງານ ASEAN-ACT ຢູ່ກອງປະຊຸມການປຶກສາລືແບບໂຕະມົນ** | |
| ຊື່ຜູ້ອຳນວຍຄວາມສະດວກ: | |
| ຊື່ຜູ້ບັນທຶກກອງປະຊຸມ: | |
| ຊື່ຜູ້ແປພາສາ: | |
| ທີມານອື່ນໆຂອງ AACT: | |
| ຈຳນວນຜູ້ເຂົ້າຮ່ວມທັງໝົດ: | |
| **ຂໍ້ມູນຂອງຜູ້ເຂົ້າຮ່ວມກອງປະຊຸມປຶກສາລືແບບໂຕະມົນ** | |
| ລັດຖະບານ/ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ: | |
| ຈຳນວນຜູ້ເຂົ້າຮ່ວມ / ເພດ: | ຈຳນວນຜູ້ຊາຍ:<br>ຈຳນວນຜູ້ຍິງ:<br>ຈຳນວນຜູ້ເຂົ້າຮ່ວມທັງໝົດ: |
| ບົດບາດຂອງຜູ້ເຂົ້າຮ່ວມ (ກະລຸນາລະບຸ): | |
| [ຕົວຢ່າງ ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ, ເຈົ້າໜ້າທີ່ກວດຄົນເຂົ້າ-ອອກເມືອງ, ພະນັກງານໄອຍະການ, ທະນາຍຄວາມ, ຜູ້ພິພາກສາ, ຜູ້ໃຫ້ການສະໜັບສະໜູນຜູ້ຖືກເຄາະຮ້າຍ, ຜູ້ອື່ນໆ.] | |

**ຄຳແນະນຳສຳລັບຜູ້ອຳນວຍຄວາມສະດວກ:**

**ຄວາມເປັນມາ:** ອາຊຽນ-ອົດສະຕາລີເພື່ອຕ້ານການຄ້າມະນຸດ (ASEAN-ACT) ກຳລັງຮ່າງເອກະສານໃນຫົວຂໍ້ 'ການຈັດຕັ້ງປະຕິບັດ ຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໃນບັນດາປະເທດສະມາຊິກອາຊຽນ'. ເອກະ ສານນີ້ໄດ້ຖືກກະກຽມໂດຍ ມາຣິກາ ແມັກອາດຳ (Marika McAdam), ທີ່ປຶກສາດ້ານນະໂຍບາຍ ແລະ ກົດໝາຍ ລະຫວ່າງປະເທດຂອງ ASEAN-ACT. ການລາຍງານບົດຄົ້ນຄວ້ານີ້, ພວກເຮົາປາຖະໜາທີ່ຈະເອົາຂໍ້ມູນ ແລະ ປະສົບການແບບເລິກເຊິ່ງຈາກຜູ້ປະຕິບັດຕົວຈິງຈາກລັດຖະບານ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ໃນທົ່ວປະເທດສະມາຊິກອາຊຽນ.

ຫຼັກການບໍ່ລົງໂທດ ໄດ້ກຳນົດໄວ້ວ່າຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ບໍ່ຄວນຖືກລົງໂທດຈາກການປະບັດກິດຈະ ກຳທີ່ບໍ່ຖືກຕ້ອງຕາມກົດໝາຍ ເຊິ່ງເປັນຜົນມາຈາກການຖືກຄ້າມະນຸດ. ຫຼັກການນີ້ ບໍ່ໄດ້ຄອບຄຸມທຸກໆການກະທຳ ຜິດທີ່ຜູ້ຖືກຄ້າມະນຸດອາດຈະໄດ້ກະທຳ, ແຕ່ກໍບໍ່ໄດ້ໝາຍຄວາມວ່າຈະຖືກຍົກເວັ້ນຈາກການກະທຳຜິດທາງອາຍາ ທີ່ຮ້າຍແຮງ. ຫຼັກການນີ້ ໄດ້ກໍາຖືກກຳນົດໄວ້ໃນມາດຕາ 14(7) *ຂອງສົນທິສັນຍາອາຊຽນວ່າດ້ວຍການຕ້ານການ ຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ* (2015). "ແຕ່ລະລັດພາຄີ ໂດຍອີງຕາມກົດໝາຍພາຍໃນ, ກົດ ລະບຽບ, ນິຕິກຳ ແລະ ນະໂຍບາຍຕ່າງໆ ແລະ ໃນກໍລະນີທີ່ເໝາະສົມ ຈະພິຈາລະນາ ບໍ່ໃຫ້ຜູ້ຖືກເຄາະຮ້າຍຈາກການ ຄ້າມະນຸດມີຄວາມຮັບຜິດຊອບທາງອາຍາ ແລະ ທາງບໍລິຫານຈາກການກະທຳທີ່ຜິດກົດໝາຍຂອງພວກເຂົາຖ້າຫາກ ວ່າການກະທຳດັ່ງກ່າວກ່ຽວຂ້ອງກັບການຄ້າມະນຸດ." ນອກຈາກນັ້ນ, ຫຼັກການບໍ່ລົງໂທດ ຍັງໄດ້ກຳນົດໃນ*ຄູ່ມືຂອງ ACWC ທີ່ຄຳນຶງເຖິງຄວາມລະອຽດອ່ອນດ້ານເພດໃນການຈັດການກັບແມ່ຍິງທີ່ຖືກເຄາະຮ້າຍຈາກການຄ້າມະນຸດ* (ພາກທີ III, 3.6.1) ແລະ ພາກທີ 1, C2 ຂອງ*ຄູ່ມືແນະນຳຂອງຜູ້ປະຕິບັດຕົວຈິງຂອງອາຊຽນໃນການຕອບໂຕ້ທາງ ດ້ານຍຸຕິທຳທາງອາຍາຢ່າງມີປະສິດທິພາບຕໍ່ກັບການຄ້າມະນຸດ.* (2007). ນອກຈາກນັ້ນ, ບັນດາປະເທດສ່ວນໃຫຍ່ ໃນພາກພື້ນອາຊຽນມີກົດໝາຍສະເພາະທີ່ກຳນົດຫຼັກການ ການບໍ່ລົງໂທດ.

**ຈຸດປະສົງຂອງການປຶກສາຫາລື:** ໃນການສົນທະນານີ້, ພວກເຮົາ ຕ້ອງການຖາມທ່ານບາງຄຳຖາມໃນຫົວຂໍ້ຕ່າງ ຕ່າງດັ່ງນີ້:

- ຄວາມເຂົ້າໃຈ ແລະ ການນຳໃຊ້ຫຼັກການ ການບໍ່ລົງໂທດ
- ການດຳເນີນຄະດີກັບຜູ້ຖືກຄ້າມະນຸດ ໃນຄວາມຜິດທີ່ກະທຳໃນເວລາຖືກຄ້າມະນຸດ
- ບົດບາດຂອງກົດໝາຍໃນການປົກປ້ອງຜູ້ຖືກເຄາະຮ້າຍຈາກການດຳເນີນຄະດີ ແລະ ການລົງໂທດ
- ຄຳແນະນຳ, ນະໂຍບາຍ ແລະ ສັນຍາສອງຝ່າຍ ແລະ ພາກພື້ນ ທີ່ກ່ຽວຂ້ອງກັບການບໍ່ລົງໂທດ
- ສິ່ງທ້າທາຍ ແລະ ການປະຕິບັດທີ່ເປັນຕົວແບບທີ່ດີໃນການຍຶດໝັ້ນ ແລະ ນຳໃຊ້ຫຼັກການບໍ່ລົງໂທດ

ແນ່ນອນທີ່ສຸດວ່າທ່ານ ສາມາດເລືອກທີ່ຈະບໍ່ຕອບຄຳຖາມໃດໜຶ່ງກໍໄດ້ ແລະ ບໍ່ຈຳເປັນຕ້ອງຕອບຄຳຖາມທີ່ທ່ານບໍ່ ຢາກຕອບ. ພວກເຮົາຄາດຄະເນເວລາໃນການສົນທະນາສູງສຸດປະມານ **2.5 ຊົ່ວໂມງ.**

**ການຮັກສາຄວາມລັບ:** ພວກເຮົາຈະສັງລວມເອົາບັນຊີລາຍຊື່ອົງກອນ ແລະ ໜ່ວຍງານທີ່ພວກເຮົາໄດ້ປຶກສາຫາລື ເຂົ້າໃນບົດຄົ້ນຄວ້ານີ້ ແຕ່ຈະບໍ່ອ້າງເຖິງຄຳເຫັນໃດໆຕໍ່ບຸກຄົນ ຫຼື ອົງການຈັດຕັ້ງທີ່ຂຶ້ນກັບຢູ່ໃນບົດຄົ້ນຄວ້າ. ທຸກ ການຈົດບັນທຶກໃນການປຶກສາຫາລື ຈະຖືກນຳໃຊ້ສະເພາະຈຸດປະສົງຂອງບົດລາຍງານໃນບົດຄົ້ນຄ້ວານີ້ເທົ່ານັ້ນ ແລະ ຈະບໍ່ຖືກແລກປ່ຽນ/ແບ່ງປັນ ນອກເໜືອຈາກທີມງານຂອງແຜນງານອາຊຽນ-ອົດສະຕາລີເພື່ອຕ້ານການຄ້າມະນຸດ.

**ຄຳຖາມ:** ທ່ານມີຄຳຖາມໃດ ກ່ອນທີ່ພວກເຮົາຈະເລີ່ມບໍ່?

## ພາກທີ 1: ຄຳຖາມທົ່ວໄປ (20 ນາທີ)

**ຜູ້ອຳນວຍຄວາມສະດວກ ອະທິບາຍ:** ຫຼັກການບໍ່ລົງໂທດ ໄດ້ກຳນົດໄວ້ວ່າ ຜູ້ຖືກຄ້າມະນຸດ ບໍ່ຄວນຈະຖືກລົງໂທດ ຫຼື ໄດ້ຮັບໂທດຈາກຄວາມຜິດທີ່ພວກເຂົາໄດ້ກະທຳອັນເປັນຜົນສະທ້ອນໂດຍກົງຈາກການຖືກຄ້າມະນຸດ ຫຼື ເປັນຜົນມາຈາກທີ່ຜູ້ຄ້າມະນຸດ ບັງຄັບໃຫ້ເຂົາເຈົ້າກະທຳ.

***ຈາກທັດສະນະຂອງທ່ານ...***

| | |
|---|---|
| <u>**ຄຳຖາມຂໍ້ທີ 1:**</u> ທ່ານຄິດວ່າຫຼັກການນີ້ ມີຄວາມເຂົ້າໃຈດີ ແລະ ໄດ້ນຳໃຊ້ໃນປະເທດຂອງທ່ານບໍ່?<br>• ຍ້ອນຫຍັງ ຫຼື ຍ້ອນຫຍັງຈຶ່ງບໍ່ມີເຂົ້າໃຈ ແລະ ນຳໃຊ້? | |

<u>**ຄຳຖາມຂໍ້ທີ 2:**</u> ຕໍ່ກັບຄວາມສາມາດໃນການຕ້ານການຄ້າມະນຸດ, ທ່ານມີບົດບາດສະເພາະອັນໃດ ໃນການຍົກສູງ ແລະ ນຳໃຊ້ຫຼັກການບໍ່ລົງໂທດ ໃນປະເທດຂອງທ່ານ?

| **ຄວາມສາມາດໃນການຕ້ານການຄ້າມະນຸດ**<br>[ຕົວຢ່າງ: ເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານໄອຍະການ, ທະນາຍຄວາມ, ຜູ້ພິພາກສາ, ເຈົ້າໜ້າທີ່ຊາຍແດນ/ກວດຄົນເຂົ້າ-ອອກ ເມືອງ/ເຈົ້າໜ້າທີ່ກວດກາດ້ານແຮງງານ, ຜູ້ໃຫ້ການສະໜັບສະໜູນຜູ້ຖືກເຄາະຮ້າຍ/ເຈົ້າໜ້າທີ່ອື່ນໆ (ກະລຸນາລະບຸ]<br>ໝາຍເຫດ: ໜຶ່ງແຖວຕໍ່ໜຶ່ງຜູ້ເຂົ້າຮ່ວມ | **ບົດບາດໃນການຍົກສູງ ແລະ ນຳໃຊ້ຫຼັກການບໍ່ລົງໂທດ:** |
|---|---|
| ຜູ້ເຂົ້າຮ່ວມຜູ້ທີ 1: | |
| ຜູ້ເຂົ້າຮ່ວມຜູ້ທີ 2: | |
| ຜູ້ເຂົ້າຮ່ວມຜູ້ທີ 3: | |
| ຜູ້ເຂົ້າຮ່ວມຜູ້ທີ 4: | |
| ຜູ້ເຂົ້າຮ່ວມຜູ້ທີ 5: | |
| ຜູ້ເຂົ້າຮ່ວມຜູ້ທີ 6: | |
| ຜູ້ເຂົ້າຮ່ວມຜູ້ທີ 7: | |
| ຜູ້ເຂົ້າຮ່ວມຜູ້ທີ 8: | |
| ຜູ້ເຂົ້າຮ່ວມຜູ້ທີ 9: | |
| ຜູ້ເຂົ້າຮ່ວມຜູ້ທີ 10: | |
| ຜູ້ເຂົ້າຮ່ວມຜູ້ທີ 11: | |
| ຜູ້ເຂົ້າຮ່ວມຜູ້ທີ 12: | |

## ພາກທີ 2. ການດໍາເນີນຄະດີ ແລະ ລົງໂທດຜູ້ຖືກເຄາະຮ້າຍໃນພາກປະຕິບັດ (40 ນາທີ)

**ຜູ້ອໍານວຍຄວາມສະດວກ ອະທິບາຍ:** ຜູ້ຖືກເຄາະຮ້າຍອາດຈະກະທໍາຜິດໃນຊ່ວງເວລາທີ່ຖືກຄ້າມະນຸດ. ການກະທໍາຜິດ ລວມມີການກະທໍາຜິດດ້ານເອກະສານ ຫຼື ການເຂົ້າອອກ-ເມືອງ ບ່ອນທີ່ຜູ້ຖືກເຄາະຮ້າຍໄດ້ຖືກຄ້າຂ້າມຊາຍແດນ. ໃນເວລາທີ່ຂູດຮີດ, ຜູ້ຖືກເຄາະຮ້າຍ ອາດຈະກະທໍາຜິດກ່ຽວຂ້ອງກັບການເຮັດວຽກໂດຍບໍ່ຖືກຕ້ອງຕາມກົດໝາຍ ໂດຍສະເພາະບ່ອນທີ່ການຄ້າໂສເພນີເປັນສິ່ງທີ່ຜິດກົດໝາຍ. ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດເພື່ອຈຸດປະສົງໃນການຕັດອະໄວຍະວະຂອງຮ່າງກາຍ ອາດຈະຖືກຕັດສິນລົງໂທດສະຖານການຄ້າອະໄວຍະວະຂອງຮ່າງກາຍ ແທນທີ່ຈະຖືກປົກປ້ອງໃນຖານະຜູ້ຖືກເຄາະຮ້າຍ. ແລະ ຜູ້ຖືກເຄາະຮ້າຍ ທີ່ຖືກຄ້າໃຫ້ເຂົ້າສູ່ການກະທໍາຜິດທາງອາຍາ (ເຊັ່ນ ການປູກຢາເສບຕິດ, ການຜະລິດຢາສູບທີ່ຜິດກົດໝາຍ, ການລັກກະເປົາເງິນ, ການລັກຊັບ ແລະ ການຂາຍສິນຄ້າປອມ ແລະ ການສໍ້ໂກງຜົນປະໂຫຍດ) ເຊິ່ງມີຄວາມສ່ຽງທີ່ຈະຖືກດໍາເນີນຄະດີທາງອາຍາ ເນື່ອງຈາກການກະທໍາຜິດທີ່ກະໄດ້ທໍາ ຍ້ອນພວກເຂົາຖືກຄ້າມະນຸດນັ້ນ.

<u>**ຄໍາຖາມຂໍ້ທີ 3:**</u> ທ່ານຮູ້ບໍ່ວ່າ ມີສະຖານະການໃດແດ່ທີ່ຜູ້ຖືກຄ້າມະນຸດ ຫຼື ສັນນິຖານວ່າຖືກຄ້າມະນຸດນັ້ນ <u>ຜູ້ທີ່ບໍ່ໄດ້ຮັບການກໍານົດຕົວ ຢ່າງເປັນທາງການວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ</u> ໄດ້ຖືກດໍາເນີນຄະດີຕໍ່ກັບການກະທໍາຜິດຕ່າງໆລຸ່ມນີ້? ກະລຸນາອະທິບາຍສະຖານະການນັ້ນ ໂດຍສັງເຂບ:

| **ການກະທໍາຜິດ** | **ຕົວຢ່າງໃນພາກປະຕິບັດ** |
|---|---|
| ການເຂົ້າເມືອງຜິດກົດໝາຍ | |
| ການອອກເມືອງຜິດກົດໝາຍ | |
| ການອາໄສຢູ່ແບບຜິດກົດໝາຍ | |
| ການເຮັດວຽກໂດຍບໍ່ຖືກຕ້ອງຕາມກົດໝາຍ | |
| (ຕົວຢ່າງ ການເປັນໂສເພນີ / ອື່ນໆ) | |
| ການກະທໍາຜິດທີ່ກ່ຽວຂ້ອງກັບເອກະສານ | |
| ການກະທໍາຜິດທີ່ກ່ຽວຂ້ອງກັບ ການສໍ້ລາດບັງຫຼວງ | |
| ການກະທໍາຜິດທີ່ກ່ຽວຂ້ອງກັບ ການໃສ່ຮ້າຍ/ການໝິ່ນປະໝາດ | |
| ການຂາຍອະໄວຍະວະ/ການຄ້າອະໄວຍະວະຂອງຮ່າງກາຍ | |
| ການກະທໍາຜິດກ່ຽວກັບການຖືພາແອບແຝງ | |
| ການປູກຢາເສບຕິດ ຫຼື ການຄ້າຂາຍຢາເສບຕິດ | |
| ການກະທໍາຜິດກ່ຽວກັບການຄ້າ (ຕົວຢ່າງການຄ້າຂາຍສິ່ງຜິດກົດໝາຍອື່ນໆ) | |
| ອາຊະຍາກໍາທີ່ກ່ຽວຂ້ອງກັບການກໍ່ການຮ້າຍ/ຂໍ້ຂັດແຍ່ງດ້ານອາວຸດ | |
| ອາຊະຍາກໍາທາງອາຍາ ທີ່ເລັກນ້ອຍ | |
| ອື່ນໆ (ກະລຸນາລະບຸ) | |

**ຄໍາຖາມຂໍ້ທີ 4:** ທ່ານຮູ້ບໍ່ວ່າ ມີສະຖານະການໃດແດ່ທີ່ຜູ້ຖືກຄ້າມະນຸດ ຜູ້ທີ່ໄດ້ຮັບການກໍານົດຕົວ ຢ່າງເປັນທາງການ ວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄດ້ຖືກດໍາເນີນຄະດີຕໍ່ກັບການກະທໍາຜິດທີ່ພວກເຂົາໄດ້ກະທໍາໃນເວລາທີ່ຖືກຄ້າມະນຸດ? ການກະທໍາຜິດໃດ? ກະລຸນາອະທິບາຍສະຖານະການນັ້ນ ໂດຍສັງເຂບ:

| ການກະທໍາຜິດ | ຕົວຢ່າງໃນພາກປະຕິບັດ |
|---|---|
| | |
| | |
| | |
| | |
| | |

**ຄໍາຖາມຂໍ້ທີ 5:** ທ່ານມີຕົວຢ່າງທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄດ້ປະສົບພົບພໍ້ກັບສະຖານະການນີ້ໃນປະເທດຂອງທ່ານບໍ່? ຜູ້ຖືກເຄາະຮ້າຍເຫຼົ່ານີ້ໄດ້ ໄດ້ຖືກກໍານົດຕົວ ຢ່າງເປັນທາງການ ຫຼື ບໍ່ໄດ້ຖືກກໍານົດຕົວບໍ່? ກະລຸນາອະທິບາຍສະຖານະການນັ້ນ ໂດຍສັງເຂບ.

| | |
|---|---|
| ການຈັບຕົວ | |
| ກັກຕົວໃນໜ່ວຍງານບັງຄັບໃຊ້ກົດໝາຍ ຫຼື ເຂົ້າ-ອອກເມືອງ | |
| ກັກຕົວໃນສູນພັກເຊົາ ຫຼື ບ່ອນເບິ່ງແຍງດູແລ | |
| ການຖືກສົ່ງຕົວກັບ/ບັງຄັບໃຫ້ກັບຄືນ | |
| ຖືກປັບໃໝການເຂົ້າ-ອອກເມືອງ/ລົງໂທດ | |
| ບໍ່ຕໍ່ໃບອະນຸຍາດພັກເຊົາ/ໃບອະນຸດຍາດເຮັດວຽກ | |
| ການຖອນສັນຊາດ | |
| ອື່ນໆ (ກະລຸນາລະບຸ) | |

**ຄຳຖາມຂໍ້ທີ 6:** ໃນກໍລະນີໃດແດ່, ຖ້າມີ, ທ່ານຄິດວ່າປະເພດຂອງຜູ້ຖືກຄ້າມະນຸດກຸ່ມນີ້ ມີລັກສະນະສະເພາະທີ່ໄດ້ຮັບຜົນກະທົບຕໍ່ຄວາມສ່ຽງທີ່ຈະຖືກລົງໂທດຍ້ອນການກະທຳຜິດທີ່ພວກເຂົາໄດ້ກະທຳ ທີ່ເປັນຜົນສະທ້ອນມາຈາກການຖືກຄ້າມະນຸດ?

| | |
|---|---|
| ຜູ້ຖືກເຄາະຮ້າຍເພດຊາຍ | |
| ຜູ້ຖືກເຄາະຮ້າຍເພດຍິງ | |
| ຜູ້ຖືກເຄາະຮ້າຍທີ່ເປັນຍິງຮັກຍິງ (Lesbian), ຊາຍຮັກຊາຍ (Gay), ຜູ້ທີ່ຮັກທັງເພດຍິງ ແລະ ເພດຊາຍ (Bisexual), ບຸກຄົນຂ້າມເພດ ຈາກເພດຍິງໄປເປັນເພດຊາຍ ຫຼື ຈາກເພດຊາຍ ໄປເປັນເພດຍິງ (transgender), ບຸກຄົນທີ່ມີສອງເພດຄືເພດຍິງ ແລະ ເພດຊາຍ (intersex), ບຸກຄົນທີ່ພໍໃຈຕໍ່ກັບເພດໃດເພດໜຶ່ງໂດຍບໍ່ຈຳກັດເລື່ອງເພດ (queer) | |
| ຜູ້ຖືກເຄາະຮ້າຍທີ່ເປັນເດັກ | |
| ພົນລະເມືອງຂອງປະເທດ | |
| ບຸກຄົນທີ່ບໍ່ແມ່ນພົນລະເມືອງຂອງປະເທດ | |
| ພົນລະເມືອງທີ່ບໍ່ມີເອກະສານ (ບໍ່ມີເອກະສານຖືກຕ້ອງ) | |
| ຜູ້ຖືກເຄາະຮ້າຍໃນຮູບແບບຂອງການຂູດຮີດທາງເພດ | |
| ຜູ້ຖືກເຄາະຮ້າຍທີ່ບໍ່ແມ່ນຮູບແບບການຂູດຮີດທາງເພດ | |
| ອື່ນໆ (ກະລຸນາລະບຸ) | |

## ພາກທີ 3: ກົດໝາຍທີ່ກ່ຽວຂ້ອງກັບການບໍ່ລົງໂທດ (40 ນາທີ)

<u>**ຜູ້ອຳນວຍຄວາມສະດວກ ອະທິບາຍ:**</u> **ສົນທິສັນຍາອາຊຽນວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ (2015)** ໄດ້ກຳນົດໄວ້ວ່າ "ແຕ່ລະລັດພາຄີ ໂດຍອີງຕາມກົດໝາຍພາຍໃນ, ກົດລະບຽບ, ນິຕິກຳ ແລະ ນະໂຍບາຍຕ່າງ ແລະ ໃນກໍລະນີທີ່ເໝາະສົມ ຈະພິຈາລະນາບໍ່ໃຫ້ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດມີຄວາມຮັບຜິດຊອບທາງອາຍາ ແລະ ທາງບໍລິຫານ ຈາກການກະທຳທີ່ຜິດກົດໝາຍຂອງພວກເຂົາ ຖ້າຫາກວ່າການກະທຳດັ່ງກ່າວກ່ຽວຂ້ອງກັບການຄ້າມະນຸດ." (ມາດຕາ 14(7)).

ໃນລະດັບຊາດ, ຢູ່**ປະເທດບຣູໄນ ດາຣູຊາລາມ** ຫຼັກການການບໍ່ລົງໂທດ ແມ່ນນອນຢູ່ໃນມາດຕາ 47 ຂອງ *ຄຳສັ່ງ ວ່າດ້ວຍ ການຕ້ານການຄ້າມະນຸດ ຂອງ ບຣູໄນດາຣູຊາລາມ* (ປີ 2019), ໂດຍລະບຸວ່າ ຜູ້ຖືກຄ້າມະນຸດ ຈະບໍ່ຕ້ອງຮັບຜິດ ຕໍ່ ການດຳເນີນຄະດີທາງອາຍາ ກ່ຽວກັບ ການເຂົ້າເມືອງຜິດກົດໝາຍ, ການຢູ່ອາໄສທີ່ຜິດກົດໝາຍ ແລະ ການຈັດຊື້ ຫຼື ການຄອບຄອງ ເອກະສານການເດີນທາງ ຫຼື ເອກະສານກຳນົດຕົວຕົນປອມ ອັນເປັນຜົນສະທ້ອນໂດຍກົງຈາກ ການກະທຳຜິດດ້ານການຄ້າມະນຸດ.

ໃນລະດັບຊາດ, ຢູ່**ປະເທດກຳປູເຈຍ** ມາດຕາ 44 ຂອງ *ກົດໝາຍ ວ່າດ້ວຍການປາບປາມການຄ້າມະນຸດ ແລະ ການຂູດຮີດທາງເພດ* (2008) ປ້ອງກັນບໍ່ໃຫ້ມີການລົງໂທດບຸກຄົນ ທີ່ມີອາຍຸຕໍ່າກວ່າ 15 ປີ, ສຳລັບ ບາງການກະທຳຜິດທີ່ໄດ້ຖືກກຳນົດໄວ້ ລວມທັງ ການມີເພດສຳພັນກັບ ເດັກນ້ອຍ ທີ່ມີອາຍຸຕໍ່າກວ່າສິບຫ້າປີ (ມາດຕາ 42) ແລະ ການກະທຳທີ່ຫຍາບຄາຍ ຕໍ່ ເດັກນ້ອຍ ທີ່ມີອາຍຸຕໍ່າກວ່າສິບຫ້າປີ (ມາດຕາ 43).

ໃນລະດັບຊາດ, ຢູ່**ປະເທດອິນໂດເນເຊຍ,** ມາດຕາ 18 ຂອງ *ກົດໝາຍ ວ່າດ້ວຍສາທາລະນະ ຂອງ ອິນໂດເນເຊຍ ສະບັບເລກທີ 21 (ປີ 2007) ວ່າດ້ວຍ ການລົບລ້າງ ກົດໝາຍອາຍາ ກ່ຽວກັບການຄ້າມະນຸດ,* ລະບຸວ່າ 'ຜູ້ຖືກເຄາະຮ້າຍ ທີ່ກະທຳຜິດທາງອາຍາ ພາຍໃຕ້ການບັງຄັບ ຈາກ ຜູ້ກະທຳຜິດ ຕໍ່ ກົດໝາຍອາຍາ ກ່ຽວກັບການຄ້າມະນຸດ ຈະບໍ່ຮັບຜິດຊອບ ຕໍ່ ຂໍ້ກ່າວຫາທາງອາຍາ.'

ໃນລະດັບຊາດ, ກົດໝາຍຂອງ **ສປປ ລາວ**, ມາດຕາ 39(7) ຂອງ *ກົດໝາຍ ວ່າດ້ວຍການຕ້ານການຄ້າມະນຸດ* (2015) ໄດ້ກຳນົດສິດຂອງຜູ້ຖືກເຄາະຮ້າຍໄວ້ວ່າ ບໍ່ຖືກດຳເນີນຄະດີອາຍາ ແລະ ບໍ່ຖືກກັກຂັງໃນສະຖານເປັນໂສເພນີ, ເຂົ້າ-ອອກເມືອງຜິດກົດໝາຍ". ນອກນັ້ນ, ມາດຕາ 25(6) *ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ* (2004) ໃນ ສປປ ລາວ ໄດ້ກຳນົດໄວ້ວ່າ ແມ່ຍິງ ແລະ ເດັກນ້ອຍມີສິດທີ່ "ຈະບໍ່ຖືກດຳເນີນຄະດີອາຍາ ແລະ ບໍ່ຖືກກັກຂັງໃນສະຖານການກະທຳຜິດກ່ຽວກັບການຄ້າແມ່ຍິງ ແລະ ເດັກນ້ອຍ, ການເປັນໂສເພນີ ຫຼື ການເຂົ້າ-ອອກເມືອງຜິດກົດໝາຍ."

ໃນລະດັບຊາດ, ຢູ່**ປະເທດມາເລເຊຍ**, *ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ແລະ ການຕ້ານການລັກລອບຂອງຜູ້ເຄື່ອນຍ້າຍ* (ປີ 2007), ກຳນົດໄວ້ ຢູ່ໃນມາດຕາ 25 ວ່າ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈະຕ້ອງບໍ່ຮັບຜິດຊອບ ຕໍ່ ການດຳເນີນຄະດີອາຍາ ທີ່ກ່ຽວຂ້ອງກັບ ການເຂົ້າເມືອງຜິດກົດໝາຍ, ການຢູ່ອາໄສທີ່ຜິດກົດໝາຍ ແລະ ການຈັດຊື້ ຫຼື ການຄອບຄອງ ເອກະສານເດີນທາງ ຫຼື ເອກະສານຢັ້ງຢືນຕົວຕົນປອມ, ເມື່ອການກະທຳດັ່ງກ່າວເປັນຜົນໂດຍກົງ ມາຈາກການຄ້າມະນຸດ ທີ່ຜູ້ກ່ຽວມີສ່ວນກ່ຽວຂ້ອງ.

ໃນລະດັບຊາດ, ຢູ່**ປະເທດພະມ້າ**, ພາກທີ V ຂອງ *ກົດໝາຍ ວ່າດ້ວຍການຕ້ານການຄ້າມະນຸດ* (ປີ 2005) ທີ່ປົກປ້ອງ ສິດຂອງຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ກຳນົດວ່າ ອົງການຈັດຕັ້ງຈາກສູນກາງ ຈະບໍ່ດຳເນີນການ ຕໍ່ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ສຳລັບທຸກການກະທຳຜິດ ພາຍໃຕ້ *ກົດໝາຍ ວ່າດ້ວຍການຕ້ານການຄ້າມະນຸດ*, ແລະ ຈະກຳນົດກຳນົດວ່າ ມັນເໝາະສົມ ຫຼື ບໍ່ ທີ່ຈະດຳເນີນການ ຕໍ່ ເຂົາເຈົ້າ ສຳລັບ ທຸກການກະທຳຜິດ ທີ່ເກີດຂຶ້ນຊຶ່ງເປັນຜົນໂດຍກົງ ມາຈາກການຖືກຄ້າມະນຸດ.

ໃນລະດັບຊາດ, ຢູ່**ປະເທດຟີລິບປິນ**:

- ມາດຕາທີ 17 ຂອງ *ກົດໝາຍ ວ່າດ້ວຍສາທາລະນະ, ສະບັບເລກທີ 9208* (ປີ 2003) ຊຶ່ງຖືກປັບປຸງໂດຍ *RA 10364* (ປີ 2012) ກຳນົດວ່າ ຜູ້ຖືກຄ້າມະນຸດ ຈະບໍ່ຖືກລົງໂທດ ສຳລັບການກະທຳຜິດກົດໝາຍທີ່ເປັນຜົນໂດຍກົງ ຫຼື, ຫຼື ເປັນເຫດການ ຫຼື ກ່ຽວກັບ, ການຖືກຄ້າມະນຸດ, ຫຼື ໃນການເຊື່ອຟັງຄຳສັ່ງ ທີ່ສັ່ງໂດຍ ຜູ້ຄ້າມະນຸດ. ມາດຕາດັ່ງກ່າວນັ້ນ ຍັງປົກປ້ອງ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ສຳລັບຈຸດປະສົງຂອງການຄ້າປະເວນີ ຈາກການດຳເນີນຄະດີ, ການປັບໃໝ ຫຼື ໂທດອື່ນໆ ພາຍໃຕ້ *ກົດໝາຍອາຍາສະບັບປັບປຸງ.*

- ມາດຕາ 88 ຂອງ ກົດລະບຽບ ແລະ ລະບຽບການ ສະບັບປັບປຸງ ທີ່ຈັດຕັ້ງປະຕິບັດ ກົດໝາຍສາທາລະນະ ສະບັບເລກທີ 9208, ທີ່ຖືກບັບປັບປຸງໂດຍ ກົດໝາຍສາທາລະນະ,ສະບັບເລກທີ 10364, ກຳນົດວ່າ "ການປ້ອງກັນ ຕ້ານ ການຟ້ອງຮ້ອງ ຕໍ່ ການກະທຳຜິດກົດໝາຍ ທີ່ໄດ້ກະທຳ ທີ່ພົວພັນກັບການຄ້າມະນຸດ ຫຼື ຕາມຄຳສັ່ງໂດຍກົງ ຂອງພວກຄ້າມະນຸດ" ທີ່ກ່າວວ່າ "ຄວາມຍິນຍອມ ຂອງຜູ້ຖືກຄ້າມະນຸດ ຕໍ່ ການຂູດຮີດດ້ວຍຄວາມຕັ້ງໃຈ ແມ່ນບໍ່ກ່ຽວຂ້ອງກັນ. ຜູ້ຖືກຄ້າມະນຸດ ຈະບໍ່ໄດ້ຮັບການລົງໂທດ ຍ້ອນການກະທຳທີ່ຜິດກົດໝາຍ ທີ່ໄດ້ກະທຳ ທີ່ເປັນຜົນໂດຍກົງມາຈາກ, ຫຼື ເປັນເຫດການ ຫຼື ກ່ຽວກັບ ການຖືກຄ້າມະນຸດ, ຫຼື ຢູ່ໃນການເຊື່ອຟັງຕາມຄຳສັ່ງທີ່ສັ່ງ ໂດຍ ຜູ້ຄ້າມະນຸດ ທີ່ກ່ຽວຂ້ອງກັບ ການກະທຳທີ່ເວົ້າມາ." ມາດຕາ 89 ສະເໜີຕື່ມວ່າ 'ການປົກປ້ອງ ການຟ້ອງຮ້ອງ ຕາມມາດຕາ 202 ຂອງປະມວນກົດໝາຍອາຍາສະບັບປັບປຸງ' ລະບຸວ່າ 'ຜູ້ຖືກຄ້າປະເວນີ ຈະບໍ່ຖືກດຳເນີນຄະດີ, ປັບໃໝ ຫຼື ລົງໂທດ ພາບໃຕ້ຂໍ້ກຳນົດໃນມາດຕາ 202 ຂອງ ປະມວນກົດໝາຍອາຍາສະບັບປັບປຸງ..'

ໃນ**ປະເທດສິງກະໂປ,** *ກົດໝາຍ ວ່າດ້ວຍການຕ້ານການຄ້າມະນຸດ ສະບັບປີ 2014* (ສະບັບເລກທີ 45 ຂອງ ປີ 2014) ບໍ່ມີຂໍ້ບັງຄັບສະເພາະໃດນຶ່ງ ເພື່ອປົກປ້ອງ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ຈາກການລົງໂທດ ຫຼື ການດຳເນີນຄະດີ.

ຢູ່**ປະເທດໄທ**, ມາດຕາ 41 ຂອງ *ກົດໝາຍ ວ່າດ້ວຍການຕ້ານການຄ້າມະນຸດ ຂອງ ໄທ ສະບັບປີ ພ.ສ. 2551* (2008) ລະບຸວ່າ ການດຳເນີນຄະດີອາຍາ ບໍ່ສາມາດດຳເນີນ ຕໍ່ ຜູ້ຖືກຄ້າມະນຸດ ສຳລັບການເຂົ້າເມືອງ ຫຼື ພັກເຊົາຢ່າງຜິດກົດໝາຍ, ການສະໜອງຂໍ້ມູນປອມ, ການກະທຳຜິດ ທີ່ກ່ຽວຂ້ອງກັບເອກະສານ, ການກະທຳຜິດ ທີ່ກ່ຽວຂ້ອງກັບການຄ້າປະເວນີ, ການກະທຳຜິດທີ່ກ່ຽວຂ້ອງກັບວຽກງານ ໂດຍບໍ່ໄດ້ຮັບອະນຸຍາດ ເປັນລາຍລັກອັກສອນ ຈາກລັດຖະມົນຕີກະຊວງຍຸຕິທຳ. ໄທຍັງໄດ້ລົງນາມໃນອະນຸສັນຍາ ILO ໃນປີ 2014 ຂອງ ສົນທິສັນຍາ ວ່າດ້ວຍ ແຮງງານທີ່ຖືກບັງຄັບ, ຊຶ່ງກຳນົດວ່າ ໂດຍອີງຕາມຫຼັກການພື້ນຖານ ຂອງ ລະບົບນິຕິກຳ ຂອງເຂົາເຈົ້າ, ບັນດາສະມາຊິກ ຈະຕ້ອງ 'ນຳໃຊ້ມາດຕະການ ທີ່ຈຳເປັນ ເພື່ອຮັບປະກັນວ່າ ເຈົ້າໜ້າທີ່ທີ່ມີສິດອຳນາດ ມີສິດ ທີ່ຈະບໍ່ດຳເນີນຄະດີ ຫຼື ລົງໂທດ ຜູ້ຖືກເຄາະຮ້າຍ ທີ່ຖືກບັງຄັບ ຫຼື ແຮງງານທີ່ຖືກບັງຄັບ ສຳລັບ ການທີ່ເຂົາເຈົ້າ ມີສ່ວນຮ່ວມໃນກິດຈະກຳທີ່ຜິດກົດໝາຍ ທີ່ເຂົາເຈົ້າຖືກບັງຄັບໃຫ້ກະທຳ ຊຶ່ງເປັນຜົນໂດຍກົງ ຈາກການຖືກບັງຄັບ ຫຼື ແຮງງານທີ່ຖືກບັງຄັບ.'

ຢູ່**ປະເທດຫວຽດນາມ** ບໍ່ມີຂໍ້ກຳນົດ ກ່ຽວກັບ ການບໍ່ລົງໂທດ ຢູ່ໃນກົດໝາຍສະບັບເລກທີ 66/2011/QH12 ວ່າດ້ວຍ ການປ້ອງກັນ, ສະກັດກັ້ນການຄ້າມະນຸດ. ເຊັ່ນດຽວກັນ, ຫຼັກການການບໍ່ລົງໂທດ ແມ່ນມີຢູ່ໃນ ດຳລັດ 62/2012/ND-CP ລົງວັນທີ 13 ສິງຫາ 2012 ທີ່ກຳນົດ ພື້ນຖານການກຳນົດຕົວ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ການປົກປ້ອງຄວາມປອດໄພ ຂອງ ຜູ້ຖືກເຄາະຮ້າຍ ແລະ ຍາດພີ່ນ້ອງ ຂອງເຂົາເຈົ້າ, ແລະ ດຳລັດສະບັບເລກທີ 09/2013. /ND-CP ກຳນົດລາຍລະອຽດ ໃນຫຼາຍມາດຕາ ຂອງກົດໝາຍຕ້ານການຄ້າມະນຸດ.

**ຕໍ່ກັບກົດໝາຍທີ່ມີຢູ່ໃນປະເທດຂອງທ່ານ, ໃນມຸມມອງຂອງທ່ານ**

| | |
|---|---|
| **<u>ຄຳຖາມຂໍ້ທີ 7:</u>** ກົດໝາຍມີປະໂຫຍດໃນການປົກປ້ອງຜູ້ຖືກຄ້າມະນຸດຈາກການລົງໂທດບໍ່?<br>• ຍ້ອນຫຍັງ ຫຼື ບໍ່ມີປະໂຫຍດ/ປົກປ້ອງຍ້ອນຫຍັງ? | |
| **<u>ຄຳຖາມຂໍ້ທີ 8:</u>** ກົດໝາຍນີ້ ໄດ້ຖືກນຳໃຊ້ໃນພາກປະຕິບັດຕົວຈິງ ໃນລະດັບໃດ?<br>• ທ່ານສາມາດໃຫ້ຕົວຢ່າງໄດ້ບໍ່ວ່າ ມັນຖືກນຳໃຊ້ຢູ່ໃນ ແລະ ຖືກນຳໃຊ້ແນວໃດ?<br>• ຄະດີການຄ້າມະນຸດປະເພດໃດທີ່ຖືກນຳໃຊ້ ແລະ ການກະທຳຜິດປະເພດໃດ? | |
| **<u>ຄຳຖາມຂໍ້ທີ 9:</u>** ໃນການນຳໃຊ້ກົດໝາຍນີ້, ຜູ້ຖືກຄ້າມະນຸດ ຈຳເປັນຕ້ອງໄດ້ຮັບການກຳນົດຕົວຢ່າງເປັນທາງການໃນຖານະຜູ້ຖືກເຄາະຮ້າຍຈາກການຄ້າມະນຸດບໍ່? | |
| **<u>ຄຳຖາມຂໍ້ທີ 10:</u>** ກົດໝາຍເຫຼົ່ານີ້ ມີບົດບາດແນວໃດໃນຂັ້ນຕອນການສືບສວນ-ສອບສວນ?<br>• ເຈົ້າໜ້າທີ່ສືບສວນ-ສອບສວນ ມີສິດພິຈາລະນາກຳນົດ ຫຼື ບໍ່ກຳນົດ ການປ່ຽນແປງບໍ່? | |
| **<u>ຄຳຖາມຂໍ້ທີ 11:</u>** ກົດໝາຍເຫຼົ່ານີ້ ມີບົດບາດແນວໃດໃນຂັ້ນຕອນການດຳເນີນຄະດີ?<br>• ພະນັກງານໄອຍະການມີສິດພິຈາລະນາທີ່ຈະດຳເນີນຄະດີ ຫຼື ບໍ່ດຳເນີນຄະດີບໍ່? | |
| **<u>ຄຳຖາມຂໍ້ທີ 12:</u>** ສານມີດຸນພິນິດໃນການພິຈາລະນາຄະດີແນວໃດ ກໍລະນີທີ່ຜູ້ກະທຳຜິດຖືກຄ້າມະນຸດ?<br>• ຕົວຢ່າງ, ຜູ້ພິພາກສາ ສາມາດຕັດສິນບໍ່ລົງໂທດ ຫຼື ຫຼຸດຜ່ອນໂທດ ຫຼື ບໍ່ມີການບັນທຶກການຕັດສິນຂອງຜູ້ຖືກເຄາະຮ້າຍບໍ່? | |

| | |
|---|---|
| **<u>ຄໍາຖາມຂໍ້ທີ 13 (ສໍາລັບຮູບແບບຕາມ ສາເຫດ (Causation)):</u>** ໃນການນໍາໃຊ້ກົດໝາຍນີ້, ມັນມີການສ້າງຄວາມເຊື່ອມໂຍງແນວໃດລະຫວ່າງ ການກະທໍາຜິດຂອງຜູ້ຖືກຄ້າມະນຸດ ແລະ ທີ່ພວກເຂົາຖືກຄ້າມະນຸດ? | |
| **<u>ຄໍາຖາມຂໍ້ທີ 13 (ສໍາລັບຮູບແບບການບັງຄັບ (compulsion)):</u>** ໃນການນໍາໃຊ້ບົດບັນຍັດນີ້, ການເຊື່ອມໂຍງ ລະຫວ່າງ ການກະທໍາຜິດ ຂອງບຸກຄົນທີ່ຖືກຄ້າມະນຸດ ແລະ ການທີ່ຜູ້ກ່ຽວ ຖືກບັງຄັບ ຈາກຜູ້ຄ້າມະນຸດ ແມ່ນເກີດຂຶ້ນໄດ້ແນວໃດ? | |

**ນອກເໜືອຈາກກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ:**

| | |
|---|---|
| **<u>ຄໍາຖາມຂໍ້ທີ 14:</u>** ມີຂໍ້ກໍານົດອື່ນໆໃນກົດໝາຍປົກຄອງ ຫຼື ກົດໝາຍອາຍາບໍ່ ທີ່ກ່ຽວຂ້ອງກັບການສົ່ງເສີມຫຼັກການບໍ່ລົງໂທດໃນປະເທດຂອງທ່ານ?<br><br>ຕົວຢ່າງ:<br><br>ການປົກປ້ອງໂດຍຖືກຕ້ອງຕາມກົດໝາຍໃນກົດໝາຍພາຍໃນ<br><br>ກົດໝາຍທີ່ກ່ຽວຂ້ອງກັບການຍົກເລີກ ຫຼື ລຶບລ້າງການບັນທຶກການກະທໍາຜິດທາງອາຍາ | |
| **<u>ຄໍາຖາມຂໍ້ທີ 15:</u>** ອີງຕາມຄວາມຮູ້ຂອງທ່ານ, ບັນດາຂໍ້ກໍານົດເຫຼົ່ານີ້ ໄດ້ຖືກນໍາໃຊ້ຢ່າງມີປະສິດທິພາບບໍ່ໃນການສົ່ງເສີມຫຼັກການບໍ່ລົງໂທດ?<br><br>ຍ້ອນຫຍັງ ຫຼື ບໍ່ມີປະສິດທິພາບຍ້ອນຫຍັງ?<br><br>ທ່ານສາມາດສະເໜີຕົວຢ່າງໃດໜຶ່ງ ໃນການນໍາໃຊ້ຫຼັກການເຫຼົ່ານີ້ໄດ້ບໍ່? | |

## ພາກທີ 4. ຄຳແນະນຳ, ນະໂຍບາຍ ແລະ ສັນຍາການຮ່ວມມື (20 ນາທີ)

**<u>ຜູ້ອຳນວຍຄວາມສະດວກ ອະທິບາຍ:</u>** ມີຄຳແນະນຳລະດັບພາກພື້ນຈຳນວນໜຶ່ງ ທີ່ກ່ຽວຂ້ອງກັບຫຼັກການບໍ່ລົງໂທດ ເຊິ່ງລວມມີ:

- *ຄູ່ມືຂອງ ACWC ທີ່ຄຳນຶງເຖິງຄວາມລະອຽດອ່ອນດ້ານເພດໃນການຈັດການກັບແມ່ຍິງທີ່ຖືກເຄາະຮ້າຍຈາກການຄ້າມະນຸດ* (ພາກທີ III, 3.6.1): "ຜູ້ຖືກເຄາະຮ້າຍບໍ່ຄວນຈະຖືກກັກຂັງ, ຖືກຈັບຕົວ ຫຼື ດຳເນີນຄະດີ ຕໍ່ອາຊະຍາກຳໃດ ໜຶ່ງທີ່ພວກເຂົາອາດຈະໄດ້ກະທຳ ອັນເປັນຜົນໂດຍກົງ ແລະ ທັນທີຈາກການຖືກຄ້າມະນຸດ".

- *ຄູ່ມືແນະນຳຂອງຜູ້ປະຕິບັດຕົວຈິງຂອງອາຊຽນໃນການຕອບໂຕ້ທາງດ້ານຍຸຕິທຳທາງອາຍາຢ່າງມີປະສິດທິພາບຕໍ່ກັບການຄ້າມະນຸດ.* (2007). (ພາກທີ1, C2): "ໃນກໍລະນີທີ່ເປັນໄປໄດ້, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດບໍ່ຄວນຈະຖືກຈັບຕົວ ຫຼື ດຳເນີນຄະດີ ທີ່ກ່ຽວຂ້ອງກັບອາຊະຍະກຳທີ່ພວກເຂົາອາດຈະກະທຳອັນເປັນສະທ້ອນໂດຍກົງຈາກສະຖານະຂອງພວກເຂົາ ທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ."

- *ບົດບັນທຶກຄວາມເຂົ້າໃຈ COMMIT ວ່າດ້ວຍການຮ່ວມມືເພື່ອຕ້ານການຄ້າມະນຸດໃນພາກພື້ນລຸ່ມແມ່ນ້ຳຂອງ* (2004) ເຊິ່ງ ປະເທດກຳປູເຈຍ, ປະເທດຈີນ, ປະເທດລາວ, ປະເທດມຽນມາ, ປະເທດໄທ ແລະ ປະເທດຫວຽດນາມທີ່ໃຫ້ຄຳໝັ້ນວ່າ: "ຮັບປະກັນວ່າຜູ້ຖືກເຄາະຮ້າຍທີ່ໄດ້ກຳນົດຕົວວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈະບໍ່ຖືກກຳກັກຕົວໃນສະຖານທີ່ກວດຄົນເຂົ້າ-ອອກເມືອງ ໂດຍເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ" (ວັກທີ 16).

- *ຄູ່ມືແນະນຳຂອງ COMMIT ວ່າດ້ວຍການກຳນົດຕົວ ແລະ ການສົ່ງຕໍ່ (ສຳລັບປະເທດກຳປູເຈຍ, ປະເທດຈີນ, ປະເທດລາວ, ປະເທດມຽນມາ, ປະເທດໄທ ແລະ ປະເທດຫວຽດນາມ)* ເຊິ່ງກຳນົດໄວ້ວ່າ "ບໍ່ວ່າໃນກໍລະນີໃດກໍຕາມ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈະບໍ່ຖືກດຳເນີນຄະດີໃນສະຖານການລະເມີດກົດໝາຍວ່າດ້ວຍການກວດຄົນເຂົ້າ-ອອກເມືອງ ຫຼື ກິດຈະກຳໃດໜຶ່ງທີ່ພວກເຂົາອາດຈະມີສ່ວນກ່ຽວຂ້ອງເຊິ່ງເປັນຜົນສະທ້ອນໂດຍກົງຈາກສະຖານະພາບຂອງພວກເຂົາໃນຖານະຜູ້ຖືກຄ້າມະນຸດ; ຫຼື ຖືກກັກຕົວ"

ໃນລະດັບຊາດ, ຢູ່ປະເທດ **ບຣູໄນ ດາຣູຊາລາມ** - ?

ໃນລະດັບຊາດ, ຢູ່ປະເທດ **ກຳປູເຈຍ** ມີເອກະສານນະໂຍບາຍ, ແບບຟອມບົດແນະນຳ ແລະ ຂັ້ນຕອນຫຼາຍຢ່າງ ທີ່ກ່ຽວຂ້ອງກັບ ຫຼັກການການບໍ່ລົງໂທດ.

- *ບົດແນະນຳ ກ່ຽວກັບ ແບບຟອມ ແລະ ຂັ້ນຕອນຕ່າງໆ ສຳລັບການກຳນົດຕົວ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ສຳລັບ ການສະໜອງ ການບໍລິການທີ່ເໝາະສົມ* (ຄະນະກຳມະການ ຕ້ານການຄ້າມະນຸດແຫ່ງຊາດ, NCCT, ປີ 2015) ກ່າວຢູ່ທີ 2.C, 2: 'ໃນຊ່ວງໄລຍະ ຂະບວນການ [ໃນການກຳນົດຕົວ ເບື້ອງຕົ້ນ] ຄົນຕ່າງປະເທດ ທີ່ໄດ້ຖືກກຳນົດຕົວ ຢ່າງເປັນທາງການ ວ່າ ເປັນຜູ້ຖືກເຄາະຮ້າຍ ຈະຕ້ອງບໍ່ຖືກກັກຂັງ ຫຼື ຖືກຕັ້ງຂໍ້ກ່າວຫາວ່າ ເຄື່ອນຍ້າຍ ແລະ/ຫຼື ເປັນໂສເພນີ ຜິດກົດໝາຍ. ເຂົາເຈົ້າ ຈະໄດ້ຮັບທີ່ພັກອາໄສ ແລະ ການປົກປັກຮັກສາ ໃນຂະນະທີ່ລໍຖ້າ ຂະບວນການສົ່ງກັບຄືນປະເທດ ຢ່າງເປັນທາງການ'.

- *ຂໍ້ຕົກລົງ ວ່າດ້ວຍ ບົດແນະນຳ ສຳລັບການປົກປ້ອງສິດ ຂອງເດັກນ້ອຍ ທີ່ຖືກຄ້າມະນຸດ ແຫ່ງ ປະເທດລາຊະອານາຈັກກຳປູເຈຍ* (ສະພາແຫ່ງຊາດກຳປູເຈຍ ສຳລັບເດັກນ້ອຍ, CNCC, ວັນທີ 20 ທັນວາ ປີ 2007, ສະບັບເລກທີ 107): ມາດຕາ 4, 2.3(a) ເດັກນ້ອຍທີ່ຖືກຄ້າມະນຸດ ແມ່ນເປັນຜູ້ຖືກເຄາະຮ້າຍ ຈາກການລະເມີດສິດທິມະນຸດ. ເຂົາເຈົ້າ ບໍ່ຄວນຖືກປະຕິບັດວ່າ ເປັນຜູ້ກະທຳຜິດ ຫຼື ຂຶ້ນກັບ ຫຼື ຖືກຂົ່ມຂູ່ ດ້ວຍການ

ຂວ້ຳບາດທາງອາຍາ ສຳລັບທຸກການກະທຳຜິດ ທີ່ກ່ຽວຂ້ອງກັບ ສະຖານະການ ຂອງເຂົາເຈົ້າ ໃນຖານະເປັນເດັກນ້ອຍທີ່ຖືກຄ້າມະນຸດ.

- ບົດແນະນຳ *ກ່ຽວກັບ ການຈັດຕັ້ງປະຕິບັດ ກົດໝາຍ ວ່າດ້ວຍ ການສະກັດກັ້ນການຄ້າມະນຸດ ແລະ ການຂູດຣີດທາງເພດ* (ການແປທີ່ບໍ່ເປັນທາງການ ຂອງ UNIAP, ປີ 2008) ບົດແນະນຳທົ່ວໄປ: (4) ໂສເພນີ ຈະຕ້ອງຖືກຖືວ່າ ເປັນຜູ້ຖືກເຄາະຮ້າຍ ຈາກການຈັດຊື້ໂສເພນີ. ໂສເພນີ ບໍ່ແມ່ນອາຊະຍາກຳ; ເພາະສະນັ້ນ, ໂສເພນີສ່ວນບຸກຄົນ ຈຶ່ງບໍ່ໄດ້ຖືກລົງໂທດ ເປັນຜູ້ກະທຳຜິດ ພາຍໃຕ້ກົດໝາຍໃໝ່.

- ປະເທດກຳປູເຈຍ ຍັງມີ MOU ໄວ້ແລ້ວ ກັບໄທ ແລະ ຫວຽດນາມ ຊຶ່ງວ່າໃນນັ້ນ ຝ່າຍຕ່າງໆຢືນຢັນວ່າ ຜູ້ຖືກເຄາະຮ້າຍ ທີ່ເປັນແມ່ຍິງ ແລະ ເດັກນ້ອຍ ແມ່ນຈະຕ້ອງຖືກປະຕິບັດ ໃນຖານະຜູ້ຖືກເຄາະຮ້າຍ ບໍ່ແມ່ນຜູ້ກະທຳຜິດ, ແລະ ຈະບໍ່ລົງໂທດ ຜູ້ຖືກເຄາະຮ້າຍ ສຳລັບການເຂົ້າ-ອອກ ປະເທດຂອງຕົນ ແບບຜິດກົດໝາຍ, ຫຼື ທຸກການກະທຳຜິດອື່ນໆ ທີ່ເກີດຂຶ້ນໂດຍກົງ ຈາກການຄ້າມະນຸດ.

ໃນລະດັບຊາດ, ຢູ່ **ປະເທດອິນໂດເນເຊຍ,** *ແຜນປະຕິບັດງານແຫ່ງຊາດ ສຳລັບລຶບລ້າງ ການຄ້າມະນຸດ ສະບັບປີ 2015-2019* ແມ່ນບໍ່ເວົ້າເຖິງ ຫຼັກການການບໍ່ລົງໂທດ. ແຜນປະຕິບັດງານແຫ່ງຊາດ ສະບັບປີ 2020-2024 ຍັງບໍ່ທັນມີເທື່ອ. ບົດແນະນຳ ການບັງຄັບໃຊ້ກົດໝາຍ ແລະ ການປົກປ້ອງຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ໃນການຈັດການກັບ ຄະດີການຄ້າມະນຸດ (ປີ 2009) ທີ່ໄດ້ສຳເລັດກັບ ການນຳໃຊ້ກົດໝາຍເລກທີ 21 ປີ 2007 ຍົກສູງ ສິ່ງທ້າທາຍ ຂອງຜູ້ຖືກເຄາະຮ້າຍ ທີ່ອາດຈະຖືກພິຈາລະນາ ເປັນຜູ້ກະທຳຜິດທາງອາຍາ ທີ່ກ່ຽວຂ້ອງກັບການຄ້າມະນຸດ (ຫນ້າ 36) ແລະ ເນັ້ນໜັກເຖິງ ຄວາມຈຳເປັນຂອງເຈົ້າໜ້າທີ່ ທີ່ຕ້ອງມີທັກສະສະເພາະ ເພື່ອເຂົ້າໃຈວ່າ ຜູ້ຖືກເຄາະຮ້າຍ ອາດຈະມີການກະທຳຜິດ ທີ່ກ່ຽວຂ້ອງກັບ ການຄ້າມະນຸດ (ໜ້າ 41).

ໃນລະດັບຊາດ, **ໃນ ສປປ ລາວ**, *ຄູ່ມືແນະນຳວ່າດ້ວຍການປົກປ້ອງ, ການຊ່ວຍເຫຼືອ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ* (ກະຊວງປ້ອງກັນຄວາມສະຫງົບ, ກອງເລຂາ ຄະນະກຳມະການເພື່ອຕ້ານການຄ້າມະນຸດລະດັບຊາດ, 2020), ຍັງບໍ່ໄດ້ກ່າວເຖິງຫຼັກການບໍ່ລົງໂທດໄວ້ຢ່າງຊັດເຈນ. ເຖິງແນວໃດກໍ່ຕາມ, ພວກເຂົາຍັງຍຶດໝັ້ນຫຼັກການດ້ານສິດທິມະນຸດ; ສິດຂອງຜູ້ຖືກເຄາະຮ້າຍໃນການໄດ້ຮັບການປົກປ້ອງ, ການປົກປ້ອງ ແລະ ການຊ່ວຍເຫຼືອ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍ ເພື່ອຜົນປະໂຫຍດສູງສຸດຂອງຜູ້ຖືກເຄາະຮ້າຍ ແລະ ບົນພື້ນຖານການຍິນຍອມ.

- MOU ທີ່ເຊັນກັບປະເທດຈີນ ສະບັບປີ 2014 ໄດ້ກຳນົດວ່າຄູ່ສັນຍາ "ຈະບໍ່ລົງໂທດຜູ້ຖືກເຄາະຮ້າຍໃນສະຖານການເຂົ້າ ຫຼື ອອກ ດິນແດນຂອງຕົນເອງ ຫຼື ການກະທຳຜິດອື່ນໆທີ່ເກີດຂຶ້ນໂດຍກົງຈາກການຄ້າມະນຸດ."

- MOU ສະບັບປີ 2017 ລະຫວ່າງປະເທດລາວ ແລະ ປະເທດໄທ ບໍ່ໄດ້ກ່າວສະເພາະເຈາະຈົງການບໍ່ລົງໂທດ ແຕ່ໄດ້ກ່າວເຖິງຄວາມຍຸຕິທຳ, ການປົກປ້ອງທາງກົດໝາຍ (ມາດຕາ 6) ແລະ ຄວາມຈຳເປັນທີ່ຈະບໍ່ເຮັດໃຫ້ພວກເຂົາເປັນຜູ້ຖືກເຄາະຮ້າຍໃນການດຳເນີນຄະດີທາງກົດໝາຍ (ມາດຕາ 17).

ໃນລະດັບຊາດ, ຢູ່ປະເທດ**ມາເລເຊຍ** ບໍ່ມີນະໂຍບາຍທີ່ຈະແຈ້ງ ຫຼື ຄຳແນະນຳອື່ນໆ ທີ່ບັງຄັບໃຊ້ ຫຼັກການການບໍ່ລົງໂທດ. ຂັ້ນຕອນການດຳເນີນງານ ທີ່ເປັນມາດຕະຖານ ໄດ້ຖືກພັດທະນາຂຶ້ນ ໂດຍ ສະພາຕ້ານການຄ້າມະນຸດ ແລະ ຕ້ານການລັກລອບ ຂອງຜູ້ເຄື່ອນຍ້າຍ (MAPO) ເພື່ອສະໜັບສະໜູນ ການກຳນົດຕົວຜູ້ຖືກເຄາະຮ້າຍ. ແຜນປະຕິບັດງານແຫ່ງຊາດ ວ່າດ້ວຍການຕ້ານການຄ້າມະນຸດ ສະບັບປີ 2016-2020 (MAPO) ຢືນຢັນຄຳໝັ້ນສັນຍາຕໍ່ກັບ ວິທີການ ທີ່ຖືເອົາຜູ້ຖືກເຄາະຮ້າຍ ແລະ ສິດທິມະນຸດເປັນໃຈກາງ ໃນການປະຕິບັດ ຕໍ່ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ແລະ ປັບປຸງຄຸນນະພາບ ຫຼື ການປົກປັກຮັກສາ ແລະ ການຟື້ນຟູ "ຜ່ານທາງ ການສົ່ງເສີມ ແລະ ຮັກສາສິດທິມະນຸດສາກົນ ໃນທຸກລະດັບ, ໂດຍບໍ່ໃຈແຍກ ເພດ, ອາຍຸ ແລະ ສາສະໜາ ຂອງ ຜູ້ຖືກເຄາະຮ້າຍ. ແຜນປະຕິບັດງານແຫ່ງຊາດ ປີ 2021-2025 ໃນປັດຈຸບັນ ແມ່ນກຳລັງຈະສຳເລັດສົມບູນ.

ໃນລະດັບຊາດ, **ປະເທດມຽນມາ** ມີ ແຜນປະຕິບັດງານການປົກປ້ອງ ຜູ້ຖືກເຄາະຮ້າຍ ຫຼາຍແຜນ ໃນສົກປີ 2017-2021, ແຕ່ບໍ່ມີແຜນໃດ ທີ່ເວົ້າສະເພາະເຈາະຈົງ ເຖິງການບໍ່ລົງໂທດ. ນອກນັ້ນ, ຍັງມີ MOU ໄວ້ແລ້ວ ຊຶ່ງວ່າໃນນັ້ນ ພາກສ່ວນຕ່າງໆ ຢືນຢັນວ່າ ຈະຕ້ອງປະຕິບັດກັບ ຜູ້ຖືກເຄາະຮ້າຍ ໃຫ້ເປັນສະເໝືອນຜູ້ຖືກເຄາະຮ້ານ, ບໍ່ແມ່ນຜູ້ກະທຳຜິດ ແລະ ຕົກລົງທີ່ຈະບໍ່ລົງໂທດ ຜູ້ຖືກເຄາະຮ້າຍ ໃນຂໍ້ຫາລັກລອບເຂົ້າ ຫຼື ອອກຈາກປະເທດຂອງຕົນ ຫຼື ທຸກການກະທຳຜິດອື່ນໆ ທີ່ເກີດຂຶ້ນໂດຍກົງ ຈາກການຄ້າມະນຸດ, ລວມທັງກັບ ປະເທດໄທ (2009, ມາດຕາ 8(a)) ແລະ ກັບປະເທດຈີນ (2009, ມາດຕາ 5(1))

ຢູ່ໃນ**ປະເທດຟີລິປິນ,**

- ບົດແນະນຳ ກ່ຽວກັບການປົກປ້ອງສິດທິ ຂອງແມ່ຍິງ ທີ່ຖືກຄ້າມະນຸດ (ຄະນະກຳມາການແມ່ຍິງ ແຫ່ງປະເທດຟີລິບປິນ ໂດຍປະສານສົມທົບກັບ ສະພາລະຫວ່າງອົງການຕ້ານການຄ້າມະນຸດ (IACAT) ປີ 2013) ເນັ້ນຫນັກວ່າ 'ແມ່ຍິງທີ່ຖືກຄ້າມະນຸດ ຄວນຖືກປະຕິບັດ ໃຫ້ເປັນຜູ້ຖືກເຄາະຮ້າຍ ບໍ່ແມ່ນ ຜູ້ກະທຳຜິດ' (5.3.8.1.1.)

- *ບົດແນະນຳ ກ່ຽວກັບລະບົບການສົ່ງຕໍ່ ທີ່ກ່ຽວຂ້ອງກັບຄະດີ ການຄ້າມະນຸດ ທີ່ຖືກຮັບຮອງໂດຍ ສະພາລະຫວ່າງອົງການຕ້ານການຄ້າມະນຸດ* (IACAT) ໃນວັນທີ 02 ມີນາ 2017 ຜ່ານມະຕິຕົກລົງ ສະບັບເລກທີ 006 ຂອງປີ 2017, ລະບຸວ່າ ຜູ້ຖືກຄ້າມະນຸດ ມີສິດທີ່ຈະ: 'ບໍ່ຖືກດຳເນີນຄະດີອາຍາ. (ຫຼື ຖືກຕັ້ງຂໍ້ກ່າວຫາ, ຫຼື ລົງໂທດ) ສຳລັບ ການມີສ່ວນຮ່ວມ ຂອງເຂົາເຈົ້າ ໃນກິດຈະກຳທີ່ຜິດກົດໝາຍ ໃນຊ່ວງໄລຍະ ທີ່ເຂົາເຈົ້າໄດ້ປະສົບກັບການການຄ້າມະນຸດ.'

ໃນ**ປະເທດສິງກະໂປ,** *ວິທີການຕ້ານການຄ້າມະນຸດແຫ່ງຊາດ ປີ 2016-2026* ຂອງ ຄະນະຮັບຜິດຊອບການຄ້າມະນຸດ ລະຫວ່າງອົງການຈັດຕັ້ງ ແຫ່ງປະເທດສິງກະໂປ ບໍ່ເວົ້າເຖິງ ບັນຫາການບໍ່ລົງໂທດ.

ຢູ່ໃນ**ປະເທດໄທ**

- ນະໂຍບາຍ, *ຍຸດທະສາດ ແລະ ມາດຕະການແຫ່ງຊາດ ສະບັບທີສອງ ເພື່ອສະກັດກັ້ນ ແລະ ຕ້ານການຄ້າມະນຸດ ໄລຍະປີ 2017-2021* (ກະຊວງພັດທະນາສັງຄົມ ແລະ ຄວາມໝັ້ນຄົງມະນຸດ, ປີ 2017) ແມ່ນບໍ່ເວົ້າເຖິງ ຫຼັກການການບໍ່ລົງໂທດ ແຕ່ໄດ້ກຳນົດເຖິງ ການສ້າງຄວາມເຂັ້ມແຂງ ໃນການກຳນົດຕົວ ຜູ້ຖືກເຄາະຮ້າຍ.

- ປະເທດໄທຍັງມີ MOU ໄວ້ແລ້ວ ຊຶ່ງວ່າໃນນັ້ນ ຝ່າຍຕ່າງໆ ຢືນຢັນວ່າ ຈະຕ້ອງປະຕິບັດກັບ ຜູ້ຖືກເຄາະຮ້າຍ ເປັນສະເໝືອນຜູ້ຖືກເຄາະຮ້າຍ, ບໍ່ແມ່ນຜູ້ກະທຳຜິດ, ແລະ ຕົກລົງທີ່ຈະບໍ່ລົງໂທດ ຜູ້ຖືກເຄາະຮ້າຍ ສຳລັບການເຂົ້າ ຫຼື ອອກຈາກປະເທດຂອງຕົນ ແບບຜິດກົດໝາຍ, ຫຼື ທຸກການກະທຳຜິດອື່ນໆ ທີ່ເກີດຂຶ້ນໂດຍກົງ ຈາກການຄ້າມະນຸດ, ລວມທັງປະເທດມຽນມາ (2009), ມາດຕາ 8(a)); ແລະກັບ ປະເທດກຳປູເຈຍ (2014) ສຳລັບແມ່ຍິງ ແລະ ເດັກນ້ອຍ (ມາດຕາ 6) ແລະ ຫວຽດນາມ (2008) ສຳລັບແມ່ຍິງ ແລະ ເດັກນ້ອຍ (ມາດຕາ 6). MOU ປີ 2017 ລະຫວ່າງ ລາວ ແລະ ໄທ ບໍ່ໄດ້ກ່າວສະເພາະເຖິງ ການບໍ່ລົງໂທດ ແຕ່ເວົ້າເຖິງຄວາມຍຸຕິທຳ, ການປົກປ້ອງທາງກົດໝາຍ (ມາດຕາ 6) ແລະ ຄວາມຈຳເປັນ ທີ່ບໍ່ໃຫ້ເຂົາເຈົ້າ ຕົກເປັນຜູ້ຖືກເຄາະຮ້າຍ ໃນການດຳເນີນຄະດີຕາມກົດໝາຍ (ມາດຕາ 17).

ຢູ່ໃນ **ປະເທດຫວຽດນາມ,** *ມາດຕະຖານຕໍ່າສຸດ ໃນການສະໜອງການບໍລິການ ໃຫ້ແກ່ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ* (ກະຊວງແຮງງານ, ທະຫານເສຍອົງຄະ ແລະ ສັງຄົມ, 2011) ແມ່ນບໍ່ເວົ້າເຖິງ ຫຼັກການການບໍ່ລົງໂທດ. ມີ MOU ໄວ້ແລ້ວ ສຳລັບປະເທດໄທ (ປີ 2013) ແລະ ກຳປູເຈຍ (2004) ທີ່ຢືນຍັນວ່າ ຈະຕ້ອງປະຕິບັດກັບ ຜູ້ຖືກເຄາະຮ້າຍ ໃນຖານະຜູ້ຖືກເຄາະຮ້າຍ ບໍ່ແມ່ນຜູ້ກະທຳຜິດ, ແລະ ຊຶ່ງຢູ່ໃນນັ້ນ, ບັນດາຝ່າຍຕ່າງໆ ຕົກລົງເຫັນດີ ບໍ່ລົງໂທດ ຜູ້ຖືກເຄາະຮ້າຍ ທີ່ເປັນແມ່ຍິງ ແລະ ເດັກນ້ອຍ ສຳລັບການເຂົ້າ-ອອກ ປະເທດຂອງຕົນ ແບບຜິດ

ກົດໝາຍ ຫຼື ທຸກການກະທຳຜິດອື່ນໆ ທີ່ເກີດຂຶ້ນໂດຍກົງ ຈາກການຄ້າມະນຸດ. ຢູ່ໃນ MOU ລະຫວ່າງ ຝ່າຍ ລາວ ແລະ ຫວຽດນາມ (ປີ 2010) ໃຫ້ຄຳໝັ້ນສັນຍາ ທີ່ຈະຮັບປະກັນວ່າ ຜູ້ຖືກເຄາະຮ້າຍ 'ບໍ່ຖືກກັກຂັງ ແລະ/ຫຼື ຖືກລົງໂທດຍ້ອນການເຄື່ອນຍ້າຍຜິດກົດໝາຍ ຫຼື ທຸກການກະທຳຜິດດ້ານບໍລິຫານອື່ນໆທີ່ກ່ຽວຂ້ອງ.' ຢູ່ໃນ MOU ກັບ ຈີນ (2010) ຝ່າຍຕ່າງໆ ຕົກລົງເຫັນດີ ທີ່ຈະບໍ່ລົງໂທດ ຜູ້ຖືກເຄາະຮ້າຍ ທີ່ເຂົ້າ ຫຼື ອອກ ຈາກປະເທດຂອງຕົນ ແບບຜິດກົດໝາຍ, ຫຼື ການກະທຳອື່ນໆ ທີ່ຜິດກົດ ໝາຍ ຊຶ່ງເປັນຜົນທີ່ເກີດຂຶ້ນທັນ ຈາກ ການຖືກຄ້າມະນຸດ (ມາດຕາ 2A).

| | |
|---|---|
| **ຄຳຖາມທີ 16:** ອີງຕາມຄວາມຮູ້ຂອງທ່ານ, ບັນດານິຕິກຳເຫຼົ່ານີ້ ມີບົດບາດແນວໃດໃນການປົກປ້ອງຜູ້ຖືກເຄາະຮ້າຍຈາກການລົງໂທດ?<br><br>ທ່ານສາມາດຍົກຕົວຢ່າງໄດ້ບໍ່ວ່າມັນຖືກນຳໃຊ້ແນວໃດໃນພາກປະຕິບັດ? | |
| **ຄຳຖາມຂໍ້ທີ 17:** ມີຄຳແນະນຳ ຫຼື ເອກະສານດ້ານນະໂຍບາຍ ທີ່ມີຢູ່ໃນປະເທດຂອງທ່ານ ທີ່ກ່ຽວຂ້ອງກັບຫຼັກການບໍ່ລົງໂທດອີກບໍ່?<br><br>ທ່ານສາມາດຍົກຕົວຢ່າງໄດ້ບໍ່ວ່າມັນຖືກນຳໃຊ້ແນວໃດໃນພາກປະຕິບັດ? | |

## ພາກທີ 5: ການສະຫຼຸບ/ປິດຄຳຖາມ (20 ນາທີ)

**ຜູ້ອຳນວຍຄວາມສະດວກ ອະທິບາຍ:** ພວກເຮົາກຳລັງຈະສຳເລັດການປຶກສາຫາລື. ໃນເວລາທີ່ຍັງເຫຼືອ, ຂ້າພະເຈົ້າ ຢາກຂໍຂໍ້ມູນ ແລະ ຄຳແນະນຳຈາກທ່ານ ຕໍ່ການຍົກສູງ ແລະ ນຳໃຊ້ຫຼັກການບໍ່ລົງໂທດຢ່າງມີປະສິດທິພາບ.

| | |
|---|---|
| **ຄຳຖາມທີ 18:** ທ່ານຄິດວ່າອັນໃດທີ່ເປັນ **ສິ່ງທ້າທາຍ** ແລະ/ຫຼື ຂໍ້ຈຳກັດ ທີ່ສຳຄັນໃນກົດໝາຍ, ນະໂຍບາຍ ແລະ ການປະຕິບັດ ຕໍ່ກັບຫຼັກການບໍ່ລົງໂທດໃນປະເທດຂອງທ່ານ? | |
| **ຄຳຖາມທີ 19:** ອັນໃດທີ່ເປັນຕົວຢ່າງ **ການປະຕິບັດທີ່ເປັນຕົວແບບທີ່ດີ** ແລະ ຄຳແນະນຳທີ່ທ່ານມີ ເພື່ອໃຫ້ບັນລຸຫຼັກການບໍ່ລົງໂທດໃນກົດໝາຍ, ນະໂຍບາຍ ແລະ ການປະຕິບັດ? | |

**ຄຳຖາມທີ 20:** ສຸດທ້າຍ, ທ່ານມີ:

- ຄຳເຫັນເພີ່ມເຕີມ ກ່ຽວກັບຫຼັກການບໍ່ລົງໂທດໃນປະເທດຂອງທ່ານ
- ຄຳແນະນຳເພີ່ມເຕີມກ່ຽວກັບເຄື່ອງມືຕ່າງໆ (ຕົວຢ່າງ ຄະດີດ້ານກົດໝາຍ, ບົດລາຍງານການຄົ້ນຄວ້າ) ທີ່ພວກເຮົາສາມາດສຶກສາໄດ້
- ຫຼື ຄຳແນະນຳກ່ຽວກັບຜູ້ຊ່ຽວຊານ ທີ່ພວກເຮົາຄວນຈະປຶກສານຳ?

| | |
|---|---|
| ຄຳເຫັນເພີ່ມເຕີມ | |
| ຄຳແນະນຳຕໍ່ກັບເຄື່ອງມື: | |
| ຜູ້ຊ່ຽວຊານ: | |

**ຈຸດທີ່ຜູ້ອຳນວຍຄວາມສະດວກຈະເຮັດໃນການປິດການປຶກສາຫາລື:**

- ຖ້າທ່ານຕ້ອງການປະກອບຄຳເຫັນເພີ່ມເຕີມເປັນລາຍລັກອັກສອນ ຫຼື ບົດຄົ້ນຄວ້າ, ບົດລາຍງານ, ຄະດີທາງດ້ານກົດໝາຍ ຫຼື ເອກະສານອື່ນໆ, ກະລຸນາສົ່ງຫາພວກຂ້າພະເຈົ້າ ຜ່ານ: [email]
- ພວກເຮົາຈະແປບົດບັນທຶກເປັນພາສາອັງກິດ ເພື່ອສົ່ງໃຫ້ກັບຜູ້ເຮັດບົດຄົ້ນຄວ້າ. ພວກເຮົາຈະບໍ່ບັນທຶກຊື່ຂອງທ່ານເຂົ້າໃນບົດບັນທຶກນັ້ນ.
- ພວກເຮົາຂໍສະແດງຄວາມຂອບໃຈຕໍ່ເວລາຂອງທ່ານໃນມື້ນີ້ ແລະ ການເສຍສະລະເວລາຂອງທ່ານ ລວມທັງປະກອບສ່ວນດ້ານຄວາມຊ່ຽວຊານຂອງທ່ານຕໍ່ກັບບົດຄົ້ນຄວ້າທີ່ສຳຄັນນີ້.
- ພວກເຮົາພ້ອມທີ່ຈະແບ່ງປັນບົດຄົ້ນຄວ້າສະບັບສຸດທ້າຍກັບທ່ານ ພາຍຫຼັງທີ່ໄດ້ເຜີຍແຜ່ແລ້ວ...

## ເອກະສານ ຊ້ອນທ້າຍ 3: ລາຍຊື່ຜູ້ເຂົ້າຮ່ວມ

ຜູ້ຂຽນ ແລະ ທີມງານ ຂອງແຜນງານ ASEAN-ACT ຂໍສະແດງຄວາມຮູ້ບຸນຄຸນ ມາຍັງ ບັນທ່ານ ທີ່ເປັນຜູ້ເຮັດວຽກຕົວຈິງຕາມລາຍຊື່ລຸ່ມນີ້ ສໍາລັບການປະກອບສ່ວນ ດ້ານຄວາມຄິດເຫັນ, ປະສົບການ ແລະ ວິຊາສະເພາະ ຂອງທ່ານ ຕໍ່ການສຶກສາໃນຄັ້ງນີ້.

- ພັນ(ຕໍາຫຼວດ) ເອກ ປອ ອັສມາດີ (Achmadi, S.H., M.AP), ຮອງປະທານ, ອົງການປົກປ້ອງພະຍານ ແລະຜູ້ຖືກເຄາະຮ້າຍ, ອິນໂດເນເຊຍ
- ທ່ານ ເຈີໂຣມ ອາຄັນຕາຣາ (Jerome Alcantara), ຫົວໜ້າ, ສະຖາບັນຝຶກອົບຮົມ Blas F Ople, ກົມຕໍາຫຼວດກາງ, ຟີລິປິນ
- ທ່ານ ນາງ ລີລຽນ ດໍລິຣ ອາເລໂຈ (Lilian Doris S. Alejo), ຜູ້ຊ່ຽວອາວຸໂສ, ໄອຍະການລັດ, ຫົວໜ້າ ໜ່ວຍສະເພາະກິດຕ້ານການຄ້າມະນຸດ (DOJTFATIP), ກະຊວງຍຸຕິທໍາ, ຟີລິປິນ
- ທ່ານ ລອນນີ ປັນກລາຕິອຸສ ອານິສ (Ronny Pancratius Anis, S.E., M.Si), ຮອງຜູ້ປະສານງານ ສໍາລັບການປົກປ້ອງ ເຂດຕາເວັນອອກກາງ 2, ຫົວໜ້າ ການປົກປ້ອງ ແລະໃຫ້ສິດອໍານາດ ຂອງເອີຣົບ ແລະຕາເວັນອອກກາງ, ໜ່ວຍງານປົກປ້ອງແຮງງານເຄື່ອນຍ້າຍ ຂອງ ອິນໂດເນເຊຍ (BP2MI)
- ທ່ານ ຊຸດຕິນັນ ອາຊາກິດ, ນັກສັງຄົມສົງເຄາະ, ອົງການ LIFT ສາກົນ (International), ປະເທດ ໄທ
- ທ່ານ ທັດສະນາ ບັນນາສານ, ຫົວໜ້າ ໜ່ວຍງານ ປົກປ້ອງ ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ແລະການຂູດຮີດທາງເພດເດັກ, ປະຕິບັດການໄຕ້ດິນ ຂອງການທາງລົດໄຟ (O.U.R.), ປະເທດ ໄທ
- ທ່ານ ມາ ທີໂມເຕ ບາຣິໂຊ, ຫົວໜ້າຜູ້ຊີ້ນໍາລວມ, TCEU, ຫ້ອງການກວດຄົນເຂົ້າເມືອງ (BI), ຟີລິປິນ
- ທ່ານ ຣຸດ ເບີນາເບ (Ruth P. Bernabe), ຜູ້ຊ່ວຍໄອຍະການເມືອງ, ກະຊວງຍຸຕິທໍາ, ຟີລິປິນ
- ທ່ານ ນະລູພົນ ບູນຍາບານ, ຜູ້ຊ່ວຍແຜນງານອາວຸໂສ, ພະແນກອົງການຈັດຕັ້ງສາກົນ, ກົມກວດຄົນເຂົ້າເມືອງ, ປະເທດ ໄທ
- ທ່ານ ພອນປະເສີດ ບົວພັນທອງ, ພະນັກງານ ວິຊາການ, ກົມຕໍາຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ, ກະຊວງປ້ອງກັນຄວາມສະຫງົບ, ສປປ ລາວ
- ທ່ານ ນາງ ອິນທະນາ ບຸບຜາສະຫວັນ, ຜູ້ອໍານວຍການ, ສະມາຄົມ ເພື່ອການພັດທະນາແມ່ຍິງ ແລະ ການສຶກສາດ້ານກົດໝາຍ (ADWLE), ສປປ ລາວ
- ທ່ານ ນາງ ຄລີສະຕີນນາ ປວງຊີບຸຍ, ຫົວໜ້າໂຄງການ, Pacific Link, ຫວຽດນາມ
- ທ່ານ ບິນ ກາວ, ພະນັກງານ, ABAROLI, ຫວຽດນາມ
- ທ່ານ ຊີເດອອນ ເອວໄຟລດ ໂກຕອນ (Gideon Elfred Cauton), ໄອຍະການ, ອົງການຍຸຕິທໍາສາກົນ(International Justice Mission), ຟີລິປິນ
- ພັນ(ຕໍາຫຼວດ) ເອກ ຕລີລົງ ໄຊຊະນະ, ຫົວໜ້າ(ຫ້ອງການສືບສວນສອບສວນ), ພະແນກຕ້ານການຄ້າມະນຸດ, ກົມຕໍາຫຼວດ, ປະເທດ ໄທ
- ທ່ານ ລັດຕາ ເຈຍ (Ratha Chey), ຫົວໜ້າກົມ, ກະຊວງການຕ່າງປະເທດ ແລະຮ່ວມມືສາກົນ, ກໍາປູເຈຍ

- ທ່ານ ປາລີ ຈິບ (Phally Chiv), ຫົວໜ້າ, ກົມຕ້ານການຄ້າມະນຸດ ແລະປົກປ້ອງເດັກ, ຕຳຫຼວດແຫ່ງຊາດກຳປູເຈຍ
- ທ່ານ ນາງ ບູນອັງ ຊູ (Bun Eng Chou), ຫົວໜ້າຫ້ອງການ, ກະຊວງພາຍໃນ, ຮອງປະທານຜູ້ປະຈຳການ, ຄະນະກຳມະການຕ້ານການຄ້າມະນຸດແຫ່ງຊາດ (NCCT), ກຳປູເຈຍ
- ທ່ານ ນາງ ທິນທູຫງຽນ ຊູ, ຫົວໜ້າພະແນກ, ກົມສັງລວມ, ສານປະຊາຊົນ, ຫວຽດນາມ
- ທ່ານ ນາງ ມາ ໂຣດາ ຊິເນໂຣ (Ma. Roda Cisnero), ພະນັກງານແຜນງານ, ມູນລະນິທິອາຊີ, ຟີລິປິນ
- ທ່ານ ນາງ ທິກົມອານ ແດງ, ອາຈານ, ໂຮງຮຽນຕຳຫຼວດປະຊາຊົນ ເລກ 2, ກະຊວງປ້ອງກັນຄວາມສະຫງົບ, ຫວຽດນາມ
- ທ່ານ ນາງ ແອນເຈລາ ມາຣີ ເດກາເຊຍ(Angela Marie M. De Garcia), ຫ້ອງການຕ້ານອາສະຍາກຳທາງອິນເຕີເນັດ, ກະຊວງ ຍຸຕິທຳ, ຟີລິປິນ
- ທ່ານ ຈິງກີ ເດດູໂມ (Jinky Dedumo), ຫົວໜ້າ, IACAT, ກະຊວງຍຸຕິທຳ, ຟີລິປິນ
- ທ່ານ ນາງ ອານິຕາ ເດວາຍານີ (Anita Dewayani, S.H., M.H.), ຫົວໜ້າພະແນກການກະກຽມກ່ອນການດຳເນີນຄະດີໃນຊັ້ນສານ, ພະແນກ ຕ້ານການກໍ່ການຮ້າຍ ແລະອາຊະຍາກຳຂ້າມຊາດ, ສຳນັກງານ ໄອຍະການສູງສຸດ (AGO), ອິນໂດເນເຊຍ
- ທ່ານ ນາງ ຮວງ ກວງ ດິນ, ມະຫາວິທະຍາໄລ ໄອຍາການຮາໂນ້ຍ, ຫງວດນາມ
- ທ່ານ ວັນ ຕິນ ດິນ, ຮອງຫົວໜ້າພະແນກ, ກົມຕຳຫຼວດ, ກະຊວງປ້ອງກັນຄວາມສະຫົງບ, ຫວຽດນາມ
- ທ່ານ ນາງ ວິມົນ ດີນູ, ນັກສັງຄົມສົງເຄາະ, ໂຄງການ HUG, ປະເທດ ໄທ
- ທ່ານ ດິນກວງ ດົງ, ອາຈານ,  ມະຫາວິທະຍາໄລ ໄອຍະການຮາໂນ້ຍ, ຫງວດນາມ
- ທ່ານ ສຳອອຍ ເອກ (Sam-Ol Ek), ຫົວໜ້າໂຄງການ, ພະແນກອົງການຈັດຕັ້ງສາກົນ, ອົງການຜູ້ອົບພະຍົກສາກົນ (IOM), ກຳປູເຈຍ
- ທ່ານ ຈິນ ເອັນລິເກ (Jean Enriquez), ຫົວໜ້າ, ສະມາຄົມຕ້ານການຄ້າມະນຸດ ແມ່ຍິງ ອາຊີປາຊີຟິກ (CATW-AP), ຟີລິປິນ
- ທ່ານ ນາງ ບາບາຣາ ເມ ຟລໍເຣັດ (Barbara Mae P. Flores), ຮອງໄອຍະການເຂດ (ພາກ XI), ກະຊວງຍຸຕິທຳ, ຟີລິປິນ
- ປອ ອັສມິນ ຟລາເຊັດສະກາ (Dr. iur. Asmin Fransiska, S.H., LL.M), ຫົວໜ້າຄະນະກົດໝາຍ, ມະຫາວິທະຍາໄລ ອັດມາຈາຍາ, ຈາກາຕາ, ອິນໂດເນເຊຍ
- ທ່ານ ເຈສ ເກຼໂກລໍໂອ (James Gregorio), ພະນັກງານຊ່ວຍວຽກບໍລິຫານ, ສະພາລະຫວ່າງອົງກອນເພື່ອຕ້ານການຄ້າມະນຸດ (IACAT),ກອງເລຂາ,  ກະຊວງຍຸຕິທຳ, ຟີລິປິນ
- ທ່ານ ນາງ ທິ ວັນ ກັນ ຮາ, ຜູ້ປະສານງານປະເທດ, ອົງການ UNDP, ຫວຽດນາມ
- ທ່ານ ຊິເວີນ ຫັງ (Chivorn Hang), ຫົວໜ້າກອງເລຂາ, ຄະນະກຳມະການຕ້ານການຄ້າມະນຸດແຫ່ງຊາດ (NCCT), ກຳປູເຈຍ
- ທ່ານ ຮາລີຍັນໂຕ (Hariyanto), ຫົວໜ້າ, ກຳມະບານແຮງງານເຄື່ອນຍ້າຍ ອິນໂດເນເຊຍ (SBMI), ອິນໂດເນເຊຍ

- ທ່ານ ອານນິສ ຫິດາຍາ (Anis Hidayah), ສະມາຊິກຄະນະສະເພາະກິດຂອງຊ່ຽວຊານ ເພື່ອການລຶບລ້າງແກ້ງ ອາສະຍາກອນ ດ້ານການເຄື່ອນຍ້າຍແບບຜິດກົດໝາຍຂອງອົງການປົກປ້ອງແຮງງານເຄື່ອນຍ້າຍອິນໂດເນເຊຍ (BP2MI), ອິນໂດເນເຊຍ
- ທ່ານ ໂສພົນ ຮິມ (Sophorn Him), ຫົວໜ້າທີມໃຫ້ການຊ່ວຍເຫຼືອ ຂອງສານ, APLE ກຳປູເຈຍ
- ທ່າ ນາງ ເຮືອງ ນັງ ຮວງ (Huong Nhung Hoang), ຜູ້ບັນລະຍາຍ, ກົມໂຄສະນາ, ສະຫະພັນແມ່ຍິງ, ຫວຽດນາມ
- ທ່ານ ສົມບູນ ໂຫສາກຸນ, ທະນາຍ, ບໍລິສັດກົດໝາຍທົງວິໄລ, ສປປ ລາວ
- ທ່ານ ຈັນວັນທອນ ທຳ, ນັກສັງຄົມສົງເຄາະ, ຫ້ອງການໃຫ້ຄວາມຊ່ວຍເຫຼືອດ້ານກົດໝາຍ ແກ່ແມ່ຍິງ ແລະເດັກ (LSCW), ກຳປູເຈຍ
- ທ່ານ ວິທິ ຫູ, ຫົວໜ້າຫ້ອງການ, ກະຊວງແຮງງານ ແລະຝຶກອົບຮົມວິຊາຊີບ, ກຳປູເຈຍ
- ທ່ານ ນາງ ວັນນາລີ ອິນພາພົມ, ຫົວໜ້າພະແນກໃຫ້ຄຳປຶກສາ, ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ, ສູນກາງສະຫະພັນແມ່ຍິງ, ສປປ ລາວ
- ທ່ານ ສຸລິຍາວົງ ອິນສີຊຽງໃໝ່, ພະນັກງານປົກປ້ອງເດັກ, ສະມາຄົມນ້ຳໃຈ (NCA), ສປປ ລາວ
- ປອ ລິເວຍ ອິສເນຍ ອິສການດານ (Livia Istania DF Iskandar, M.Sc. Psi.), ຮອງຫົວໜ້າ, ອົງການ ປົກປ້ອງພະຍານ ແລະຜູ້ຖືກເຄາະຮ້າຍ, ອິນໂດເນເຊຍ
- ທ່ານ ມາລິຈາ ໂຈວາໂນວິດ (Marija Jovanovic, MJur, MPhil, DPhil (Oxon), ອາຈານກົດໝາຍ, ມະຫາວິທະຍາໄລ ເອສເຊັສ (University of Essex), ອັງກິດ
- ທ່ານ ໂມຫາມັດ ຟາຍຊານ ໂອຫາມັດ ອັບດູນ ກາດີ (Mohamed Faizal Mohamed Abdul Kadir), ຮອງຫົວໜ້າໄອຍະການ, ສິງກະໂປ
- ທ່ານ ປາໂທມໃຈ ຂຽວນອນ (Patomchai Kaewnaul), ທະນາຍ, ອົງການກົດໝາຍສາກົນ (IJM), ປະເທດ ໄທ
- ພັນ(ຕຳຫຼວດ) ເອກ ລົງເລີດ ກັນຕາຈານ, ຫົວໜ້າ, ກຸ່ມຕ້ານອາສະຍາກຳຕໍ່ເດັກ ໜ່ວຍງານ TICAC, ພະແນກ ອົງການສືບສວນສອບສວນ ອາຊະຍາກຳໄຮເທັກ, ກົມຕຳຫຼວດ, ປະເທດ ໄທ
- ທ່ານ ນາງ ວັນນະສາ ແກ້ວນິບພະຣັດ, ຫົວໜ້າ, ສູນ ຂອງມູນລະນິທິ ປົກປ້ອງສິດທິເດັກ (CPCR), ປະເທດ ໄທ
- ພັນ(ຕຳຫຼວດ) ເອກ ພັດຊະລັດດາໄນ ກາລິນ, ຫົວໜ້າ(ເຈົ້າໜ້າທີ່ສືບສວນສອບສວນ), ພະແນກຕ້ານການຄ້າ ມະນຸດ, ກົມຕຳຫຼວດ, ປະເທດ ໄທ
- ທ່ານ ກາຊິເວັນ (Karsiwen), ຫົວໜ້າ, KABAR BUMI, ອິນໂດເນເຊຍ
- ທ່ນ ນາງ ຈູວິດຕາ ກາຍານາ, S.H, M.H., ຫົວໜ້າໜ່ວຍງານຍ່ອຍ ການປະຕິບັດ ແລະວິໃຈ, ພະແນກຕ້ານ ການກໍ່ການຮ້າຍ ແລະອາຊະຍາກຳຂ້າມຊາດ, ສຳນັກງານ ໄອຍະການປະຊາຊົນ(AGO), ອິນໂດເນເຊຍ
- ທ່ານ ກິດຕິ ກີຣາເດດ, ທະນາຍ, ບໍລິສິດ SR Law, ປະເທດ ໄທ
- ທ່ານ ປາລາ ແກ້ວ (ພົນໂທ), ຫົວໜ້າຫ້ອງການ, ຄະນະກຳມະການຕ້ານການຄ້າມະນຸດແຫ່ງຊາດ (NCCT), ກຳ ປູເຈຍ

- ທ່ານ ພັທ ຖາວອນ ແກ້ວພິລາ, ຫົວໜ້າພະແນກສືບສວນ, ກົມສະກັດກັ້ນ ແລະ ຕ້ານການຄ້າມະນຸດ, ກະຊວງປ້ອງກັນຄວາມສະຫງົບ, ສປປ ລາວ
- ທ່ານ ນາງ ວິລິດ ຂັນທິນຍາວົງ, ຜູ້ອໍານວຍການ (ສູນພັກເຊົາຊົ່ວຄາວ), ອົງການແສງສະຫວ່າງ, ສປປ ລາວ
- ທ່ານ ນາງ ວັນເພັນ ຊຸນທອງ, ໄອຍະການປະຊາຊົນຜູ້ຊ່ຽວຊານ, ກົມດໍາເນີນຄະດີຄ້າມະນຸດ, ສໍານັກງານ ໄອຍະການ, ປະເທດ ໄທ
- ທ່ານ ຟົງ ເລັງ ກຽວ (Phuong Lien Kieu), ຮອງຫົວໜ້າພະແນກ, ກົມ 13, ໄອຍະການປະຊາຊົນສູງສຸດ, ຫວຽດນາມ
- ທ່ານ ນາງ ທິ ຫງຽນ ຕຼັງ ກຽວ (Thi Huyen Trang Kieu), ເຈົ້າໜ້າທີ່, ກົມໃຫ້ຄວາມຊ່ວຍເຫຼືອທາງກົດໝາຍ, ກະຊວງຍຸຕິທໍາ, ຫວຽດນາມ
- ທ່ານ ວິລາ ກອງ, ຫົວໜ້າ, ACT ກໍາປູເຈຍ
- ທ່ານ ງອກ ຮອນ ລາ (Ngoc Hoan La), ເຈົ້າໜ້າທີ່, ພະແນກ 2, ກົມພົວພັນຕ່າງປະເທດ, ກະຊວງປ້ອງກັນຄວາມສະຫງົບ, ຫວຽດນາມ
- ທ່ານ ລິງ ລາວ (Lin Lao), ຮອງຫົວໜ້າ, ກົມຕ້ານການຄ້າມະນຸດ ແລະປົກປ້ອງເດັກ, ຕໍາຫຼວດແຫ່ງຊາດ ກໍາປູເຈຍ
- ທ່ານ ນາງ ຖິ ຫົງ ລວງລີ (Thi Hong Luong Le), ເຈົ້າໜ້າທີ່ແຜນງານ, ມູນິທິ Blue Dragan Foundation, ຫວຽດນາມ
- ທ່ານ ແສງເພັດ ລ່ຽມພະຈັນ, ຮອງຫົວໜ້າກົມ, ກະຊວງຍຸດຕິທໍາ, ສປປ ລາວ
- ທ່ານ ນາງ ລິເຊີເລຍ ໂລຟລາງໂກ-ລາບິລາສ (Liceria S. Lofranco-Rabilas), ໄອຍະການເມືອງ, OCP ເມືອງ ເຊບູ - ສະມາຊິກ TF ພາກ 7, ກະຊວງຍຸດຕິທໍາ (DOJ), ຟີລິປິນ
- ສາດສະດາຈານ ໂລລີຕາ ໂມມານຕາ (Pros Lolita L. Lomanta), ຜູ້ຊ່ວຍອາວຸໂສ ໄອຍາການແຂວງ (ແຂວງເຊບູ), ກະຊວງຍຸຕິທໍາ (DOJ), ຟີລິປິນ
- ທ່ານ ນາງ ແນນຊີ ລາສະໂນ (Nancy G. Losano), ທີ່ປຶກສາແຫ່ງລັດ, ກະຊວງຍຸຕິທໍາ (DOJ), ຟີລິປິນ
- ທ່ານ ຮາຍ ເຢັນ ລວງ (Hai Yen Luong), ຫົວໜ້າພາກວິຊາອາຍາວິທະຍາ ແລະສືບສວນສອບສວນ, ມະຫາວິທະຍາໄລ ໄອຍະການ ຮາໂນ້ຍ, ຫວຽດນາມ
- ທ່ານ ນາງ ຫົວລ້ອນ ລວງ (Hong Loan Luong), ເຈົ້າໜ້າທີ່ແຜນງານ, Pacific Link, ຫວຽດນາມ
- ທ່ານ ນາງ ທິ ລີ ລູ, ນັກຈິດຕະວິດທະຍາ, ສະຖາບັນສຶກສາມະນຸດ, ຫວຽດນາມ
- ທ່ານ ທົງຮຸຍ ລີ (Tonghuy Ly), ຮອງຫົວໜ້າກອງເລຂາ, ຄະນະກໍາມະການຕ້ານການຄ້າມະນຸດແຫ່ງຊາດ (NCCT), ກໍາປູເຈຍ
- ທ່ານ ສາລາວຸດ ມາບ (Saravuot Mab), ທະນາຍ, Chab Dai, ກໍາປູເຈຍ
- ທ່ານ ມາວິນ ມາບູລັກ (Melvin P. Mabulac), ວ່າການຫົວໜ້າ, ສູນປະຕິບັດງານແຫ່ງຊາດ BI, ຫ້ອງການກວດຄົນເຂົ້າເມືອງ, ຟີລິປິນ
- ທ່ານ ລາຊພົນ ມານິເລັກ, ຫົວໜ້າກຸ່ມປະສານຄວາມຊ່ວຍເຫຼືອ ແລະການປົກປ້ອງ, ພະແນກຕ້ານການຄ້າ

ມະນຸດ, ກະຊວງພັດທະນາສັງຄົມ ແລະຄວາມໝັ້ນຄົງຂອງມະນຸດ, ປະເທດ ໄທ

- ທ່ານ ຊາ ອິມ ເມ, ຮອງຫົວໜ້າພະແນກສິດທິແມ່ຍິງ ແລະເດັກ, ADHOC, ກຳປູເຈຍ
- ທ່ານ ນາງ ເກລັນດາ ເມໂລດີລາ, ເຈົ້າໜ້າທີ່ຊ່ວຍວຽກບໍລິຫານ, ກອງເລຂາ ຂອງສະພາລະຫວ່າງອົງກອນເພື່ອຕ້ານການຄ້າມະນຸດ (IACAT), (ກະຊວງຍຸດຕິທຳ) DOJ, ຟີລິປິນ
- ທ່ານ ນາງ ຣິເບກາ ມີເລີ, ຜູ້ປະສານງານພາກພື້ນ, ອົງການຕ້ານການຄ້າມະນຸດ ແລະລັກເອົາຄົນເຂົ້າອອກເມືອງ, ຫ້ອງການ ສຳລັບອາຊີຕາເວັນອອກສຽງໃຕ້ ແລະປາຊີຟິກ, ອົງການສະຫະປະຊາຊາດ ຕ້ານຢາເສບຕິດ ແລະອາຊະຍາກຳ (UNODC)
- ທ່ານ ໂຊກຊາ ມໍາ, ຫົວໜ້າ, ອົງການຊ່ວຍເຫຼືອດ້ານກົດໝາຍ ສຳລັບແມ່ຍິງ ແລະເດັກນ້ອຍ (LSCW), ກຳປູເຈຍ
- ທ່ານ ນາງ ວິລາວັນ ມີສບີ, ຜູ້ກໍ່ຕັ້ງ ແລະຫົວໜ້າ, ໂຄງການ HUG, ປະເທດ ໄທ
- ທ່ານ ເອນີ ໂລຟີອາຕູ ກາຊີຊາ (Eny Rofiatul Ngazizah), ເຈົ້າໜ້າທີ່ແຜນງານ OIC ແຫ່ງຊາດ CT/LMHD, ອົງການຜູ້ເຄື່ອນຍ້າຍສາກົນ (IOM), ອິນໂດເນເຊຍ
- ພັນ(ຕຳຫຼວດ) ເອກ ສຸພົດ ນວນສະຫວັນ, ຮອງຫົວໜ້າ(ເຈົ້າໜ້າທີ່ສືບສວນສອບສວນ), ໜ່ວຍງານ 3, ພະແນກປາບປາມອາຊະຍາກຳ, ໜ່ວຍສະເພາະກິດຕ້ານການຄ້າມະນຸດ ປະເທດ ໄທ, ກົມຕຳຫຼວດໄທ, ປະເທດ ໄທ
- ທ່ານ ຈຸດດາ ນຸກລາຫາ, ຫົວໜ້າ ວຽກງານການປົກປ້ອງພົນລະເມືອງ ແລະຕິນິບຸກຄົນ ອິນໂດເນເຊຍ, ຫົວໜ້າພະແນກພິທີການ ແລະກົງສູນ, ກະຊວງຕ່າງປະເທດ, ອິນໂດເນເຊຍ
- ທ່ານ ໂມຫາເມັດ ນູດິນ, ນັກການທູດເລຂາ 1, ກະຊວງຕ່າງປະເທດ, ອິນໂດເນເຊຍ
- ທ່ານ ດອກ ທັນ ຫງຽນ, ຮອງອະທິການ, ມະຫາວິທະຍາໄລຕຸລາການ ຮາໂນ້ຍ, ຫວຽດນາມ
- ທ່ານ ນາງ ບິກ ທ້ຽນ ຫງຽນ, ອາຈານ, ມະຫາວິທະຍາໄລຕຳຫຼວດ, ກະຊວງປ້ອງກັນຄວາມສະຫງົບ, ຫວຽດນາມ
- ທ່ານ ນາງ ທົງ ອານ ຫງຽນ, ຫົວໜ້າແຜນງານ, ຄະນະຜູ້ຕາງໜ້າ ສະຫະພາບເອີຣົບ ປະຈຳຫວຽດນາມ, ຫວຽດນາມ
- ທ່ານ ນາງ ຮາຍ ທົວ ຫງຽນ, ເຈົ້າໜ້າທີ່, ພະແນກ 5, ກົມຕຳຫຼວດອາຊະຍາກຳ, ກະຊວງປ້ອງກັນຄວາມສະຫງົບ, ຫວຽດນາມ
- ທ່ານ ທັນ ຫວງ ຫງຽນ, ອາຈານ, ມະຫາວິທະຍາໄລໄອຍະການ ຮາໂນ້ຍ, ຫວຽດນາມ
- ທ່ານ ນາງ ລ້ອນ ຫງຽນ, ອາຈານ ມະຫາວິທະຍາໄລໄອຍະການ ຮາໂນ້ຍ, ຫວຽດນາມ
- ທ່ານ ທັນ ທົງ ຫງຽນ, ຫົວໜ້າພາກວິຊາຕຳຫຼວດອາຊະຍາກຳ, ໂຮງຮຽນຕຳຫຼວດປະຊາຊົນ ເລກ 2, ກະຊວງປ້ອງກັນຄວາມສະຫງົບ, ຫວຽດນາມ
- ທ່ານ ນາງ ທິ ຫງຽນ ຕລັງ, ເຈົ້າໜ້າທີ່, ກົມສັງລວມ, ສານປະຊາຊົນສູງສຸດ, ຫວຽດນາມ
- ທ່ານ ນາງ ທິ ທົງ ວັນ ຫງຽນ, ເຈົ້າໜ້າທີ່, ໂຮງຮຽນຕຳຫຼວດປະຊາຊົນ, ກະຊວງ ປ້ອງກັນຄວາມສະຫງົບ, ຫວຽດນາມ
- ທ່ານ ນາງ ທິ ກົມ ຫງຽນ, ກົມບໍລິຫານ ແລະກົດໝາຍອາຍາ, ກະຊວງຍຸຕິທຳ, ຫວຽດນາມ

- ທ່ານ ນາງ ທິ ຫງອກ ຫງຽນ, ຫົວໜ້າພະແນກ, ມະຫາວິທະຍາໄລໄອຍະການ ຮາໂນ້ຍ, ຫວຽດນາມ
- ທ່ານ ນາງ ທິ ມາຍ ອານ ຫງຽນ, ຮອງຫົວໜ້າພະແນກ, ກົມປ້ອງກັນປະກັດການຍໍ້ທໍ້ທາງສັງຄົມ, ກະຊວງ ແຮງງານ, ໜ່ວຍງານຮັບຜິດຊອບຄົນພິການ ແລະສະຫວັດດີການ (MOLISA), ຫວຽດນາມ
- ທ່ານ ນາງ ທິ ມາຍ ຖຸຍ ຫງຽນ, ຜູ້ປະສານງານໂຄງການແຫ່ງຊາດ, ອົງການແຮງງານສາກົນ, ຫວຽດນາມ
- ທ່ານ ນາງ ທິ ມັນ ຫງຽນ, ອາຈານ, ກົມຄວາມສະເໝີພາບດ້ານບົດບາດຍິງຊາຍ, ກະຊວງ ແຮງງານ, ໜ່ວຍງານ ຮັບຜິດຊອບຄົນພິການ ແລະສະຫວັດດີການ (MOLISA), ຫວຽດນາມ
- ທ່ານ ນາງ ທິ ທັນ ຫງຽນ, ເຈົ້າໜ້າທີ່, ກົມເລກ 13, ໄອຍະການປະຊາຊົນສູງສຸດ, ຫວຽດນາມ
- ທ່ານ ນາງ ທິ ທັນ ຫງຽນ ຫງອັນ, ເຈົ້າໜ້າທີ່, ກົມກົດໝາຍ ແລະບໍລິຫານ ແລະການປະຕິຮູບຕຸລາການ, ກະຊວງ ປ້ອງກັນຄວາມສະຫງົບ, ຫວຽດນາມ
- ທ່ານ ນາງ ທິ ທັນ ຫງຽນ, ນັກສັງຄົມສົງເຄາະ, Pacific Link, ຫວຽດນາມ
- ທ່ານ ນາງ ທິ ທັນ ທູ ຫງຽນ, ອາຈານ, ມະຫາວິທະຍາໄລ ກົດໝາຍ ຮາໂນ້ຍ, ຫວຽດນາມ
- ທ່ານ ນາງ ທິ ທຸ ຮາ ຫງຽນ, ຄຸ້ມຄອງຄະດີ, ອົງການ Hagar ສາກົນ, ຫວຽດນາມ
- ທ່ານ ນາງ ທິ ຖຸຍ ທັນ ຫຼງອັນ, ອາຈານ, ພາກວິຊາຕຳຫຼວດອາຍາກຳ, ໂຮງຮຽນຕຳຫຼວດປະຊາຊົນ, ກະຊວງ ປ້ອງກັນຄວາມສະຫງົບ, ຫວຽດນາມ
- ທ່ານ ນາງ ທິ ຖຸຍ ຮັງ ຫງຽນ, ຮອງຫົວໜ້າ ພາກວິຊາຕຳຫຼວດອາຊະຍາກຳ, ໂຮງຮຽນຕຳຫຼວດ ເລກ 2, ກະຊວງ ປ້ອງກັນຄວາມສະຫງົບ, ຫວຽດນາມ
- ທ່ານ ນາງ ທິ ຖຸຍ ຫງອັນ, ພະແນກ 5, ກົມຕຳຫຼວດອາຊະຍາກຳ, ກະຊວງປ້ອງກັນຄວາມສະຫງົບ, ຫວຽດນາມ
- ທ່ານ ວັນ ຮວງ ຫງຽນ, ຫົວໜ້າ ພາກວິຊາກົດໝາຍອາຍາ, ມະຫາວິະທະຍາໄລກົດໝາຍ ຮາໂນ້ຍ, ຫວຽດນາມ
- ທ່ານ ວັນ ອາວ ຫງຽນ, ອາຈານ, ພາກວິຊາຕຳຫຼວດອາຊະຍາກຳ, ໂຮງຮຽນຕຳຫຼວດປະຊາຊົນ, ກະຊວງປ້ອງກັນ ຄວາມສະຫງົບ, ຫວຽດນາມ
- ທ່ານ ວັນ ທັດ ຫງຽນ, ຮອງຫົວໜ້າ, ກົມ 2, ໄອຍະການປະຊາຊົນສູງສຸດ, ຫວຽດນາມ
- ທ່ານ ຫວຽດ ດັງ ຫງຽນ, ເຈົ້າໜ້າທີ່, ກົມກົດໝາຍ, ສານປະຊາຊົນສູງສຸດ, ຫວຽດນາມ
- ທ່ານ ຊວນ ຮາ ຫງຽນ, Xuan Ha Nguyen, ຮອງຫົວໜ້າພາກວິຊາຕຳຫຼວດອາຊະຍາກຳ, ໂຮງຮຽນຕຳຫຼວດ ເລກ 2, ກະຊວງປ້ອງກັນຄວາມສະຫງົບ, ຫວຽດນາມ
- ທ່ານ ມົນທົນ ອິງມາລີ, ເຈົ້າໜ້າທີ່ກົດໝາຍ(ຊັ້ນອາຊີບ), ຫ້ອງການຕຸລາການ, ປະເທດ ໄທ
- ທ່ານ ທະນາກອນ, ເຈົ້າໜ້າທີ່ກົດໝາຍ, ອົງການຜູ້ອົບພະຍົກສາກົນ (IOM), ສປປ ລາວ
- ທ່ານ ນາງ ຊູກຽດ ປັນຍານຸວົງ, ຫົວໜ້າໂຄງການ, ອົງການ ວິນລອກສາກົນ, ສປປ ລາວ
- ທ່ານ ນາງ ຈານີຈິນດາ ພາວາດີ, ນັກສັງຄົມສົງເຄາະ, ອົງການ LIFT ສາກົນ, ປະເທດ ໄທ
- ທ່ານ ພິດສາລີ ເພັນ, ຫົວໜ້າກົມ, ພະແນກໃຫ່ຍ ການດຳເນີນຄະດີ ແລະອາຊະຍາກຳ, ກະຊວງ ຍຸຕິທຳ, ກຳປູເຈຍ

- ທ່ານ ໄຮ ຕລັງ ຟາມ, ຮອງຫົວໜ້າ ຮອງຫົວໜ້າ ພາກວິຊາຕໍາຫຼວດອາຊະຍາກໍາ, ໂຮງຮຽນຕໍາຫຼວດ ເລກ 1, ກະຊວງປ້ອງກັນຄວາມສະຫງົບ, ຫວຽດນາມ
- ທ່ານ ຊໍາ ອານ ພັດ, ຜູ້ຈັດການແຜນງານຕາເວັນອອກສຽງໄຕ້, ອົງການ ຮາກາ ສາກົນ, ກໍາປູເຈຍ
- ທ່ານ ໄຊສົມພອນ ເພັດຊົມພູ, ຜູ້ພິພາກສາ ສານປະຊາຊົນສູງສຸດ (PSC), ສປປ ລາວ
- ທ່ານ ພັຕ ນາງ ລັດຕະນົງ ພຽນມະນີ, ຮອງຫົວໜ້າພະແນກເສນາ, ກົມສະກັດກັ້ນ ແລະ ຕ້ານການຄ້າມະນຸດ, ກະຊວງປ້ອງກັນຄວາມສະຫງົບ, ສປປ ລາວ
- ທ່ານ ພັນ(ຕໍາຫຼວດ)ເອກ ແກ່ນຈັນ ພົມມາຈັກ, ຮອງກົມໃຫຍ່ຕໍາຫຼວດ,  ກະຊວງປ້ອງກັນຄວາມສະຫງົບ, ສປປ ລາວ
- ທ່ານ ນາງ ພຸດໂບຮາຍ ພົມ, ຫົວໜ້າກົມ, ກະຊວງແມ່ຍິງ, ກໍາປູເຈຍ
- ທ່ານ ນາງ ສຸລິວອນໄຊ ພົມມາລາ, ພະນັກງານໂຄງການອາວຸໂສ, ມູນລະນິທິເອເຊຍ TAF, ສປປ ລາວ
- ທ່ານ ນາງ ກົງແສງ ປ່ຽງປັນຍາ, ຜູ້ປະສານງານແຜນງານ, ອົງການ ບ້ານຈຸດສຸມສາກົນ (VFI), ສປປ ລາວ
- ທ່ານ ນາງ ເພລັດ ພິເຊຍ, ຜູ້ຊ່ວຍກົດໝາຍ, ໜ່ວຍງານຊ່ວຍເຫຼືອທາງກົດໝາຍ ສໍາລັບແມ່ຍິງ ແລະເດັກ (LSCW), ກໍາປູເຈຍ
- ທ່ານ ສໍາການ ປິນ, ເລຂາທິການໃຫ່ຍ, ຄະນະກໍາມະການຕ້ານການຄ້າມະນຸດແຫ່ງຊາດ (NCCT), ກໍາປູເຈຍ
- ທ່ານ ນາງ ການຈະນາ ພູຂຽວ, ຫົວໜ້າພະແນກປົກປ້ອງແຮງງານ, ກົມປົກປ້ອງແຮງງານ ແລະສະຫວັດດີການ, ກະຊວງແຮງງານ, ປະເທດ ໄທ
- ທ່ານ ສັນຍາ ພົນເພີນບູນ, ວ່າການຫົວໜ້າພະແນກຕ້ານອາຊະຍາກໍາການຄ້າມະນຸດ 1, ກົມສືບສວນຄະດີພິເສດ, ປະເທດ ໄທ
- ທ່ານ ນາງ ວິພາດາ ປລາສັນເພັງສີຣີ, ນັກກົດໝາຍ, ອົງການປະຕິບັດການໄຕ້ດິນທາງລົດໄຟ (O.U.R.), ປະເທດ ໄທ
- ທ່ານ ຣົນນາສິດ ໂພູກຊາຍາຈິວາ, ປະທານ, ມູນນິທິຣົນນາສິດ, ປະເທດ ໄທ
- ທານ ໂສການ ພລິມ, ຫົວໜ້າ, ກົມຕ້ານການຄ້າມະນຸດ ແລະການເອົາຜູ້ຖືກເຄາະຮ້າຍກັບຄືນສູ່ສັງຄົມ, ກະຊວງ ສັງຄົມ, ນັກຮົບເກົ່າ ແລະຟື້ນຟູໄວໜຸ່ມ (MoSVY), ກໍາປູເຈຍ
- ທ່ານ ອາດີ ພູວັນໂຕ (Adi Purwanto, S.H., M.H.), ເຈົ້າໜ້າທີ່ກວດຄົນເຂົ້າເມືອງ, ໜ່ວຍງານສືບສວນ ສອບສວນ, ພະແນກຕິດຕາມການເຂົ້າເມືອງ ແລະການດໍາເນີນຄະດີ, MOLHR, ກົມກວດຄົນເຂົ້າເມືອງ, ກະຊວງກົດໝາຍ ແລະສິດທິມະນຸດ, ອິນໂດເນເຊຍ
- ທ່ານ ນາງ ມາຣີ ມີເຊວ ມູນໂນສ ເກຊິນ, ເຈົ້າໜ້າທີ່ປົກປ້ອງເດັກ, ອົງການ UNICEF, SAFERKIDS PH, ຟີລີປິນ
- ທ່ານ ໄຊຊະນະ ລາສວົງ, ຮອງຫົວໜ້າກົມຕິດຕາມຄະດີອາຍາ, ອົງການໄອຍາການປະຊາຊົນສູງສຸດ, ສປປ ລາວ
- ທ່ານ ນາງ ວິລາມົນ ຣາມັງກູຣາ, ຜູ້ພິພາກສາ ຈາກ ສານສູງ, ສໍານັກງານ ຕຸລາການ, ປະເທດ ໄທ
- ທ່ານ ເຊເຣ ລີກົນາ ຮົນ, ຮອງເລຂາທິການ ຄະນະກໍາມະການຕ້ານການຄ້າມະນຸດແຫ່ງຊາດ (NCCT), ກໍາປູເຈຍ

- ທ່ານ ນາງ ສຸກັນຍາ ຣັດຕະນານາກິນ, ຊ່ຽວຊານອາວຸໂສ, ກົມດຳເນີນຄະດີຄ້າມະນຸດ, ຫ້ອງການໄອຍະການປະຊາຊົນ, ປະເທດໄທ
- ທ່ານ ນາງ ໂດລາຍາ ໂຣຈະນາຫາສະຕິນ, ນັກສັງຄົມສົງເຄາະຂັ້ນວິຊາການ, ພະແນກຕ້ານການຄ້າມະນຸດ, ກະຊວງພັດທະນາສັງຄົມ ແລະຄວາມໝັ້ນຄົງ ຂອງມະນຸດ, ປະເທດ ໄທ
- ທ່ານ ນາງ ຣາເຊວ ໂຣຊາສ, ເຈົ້າໜ້າທີ່ບໍລິຫານ, ຫ້ອງການສືບສວນສອບສວນແຫ່ງຊາດ (NBI), ຟີລິປິນ
- ທ່ານ ຈາຕຸພົນ ແສງທີຣັນ, ຮອງຫົວໜ້າກົມ, ກົມດຳເນີນຄະດີຄ້າມະນຸດ, ຫ້ອງການໄອຍະການປະຊາຊົນ, ປະເທດໄທ
- ທ່ານ ນາງ ຈາລີຣັດ ແສງສຸວັນ, ຜູ້ປະສານງານແຜນງານ, ສະມາຄົມຕ້ານການຄ້າເຖື່ອນ (AAT), ປະເທດ ໄທ
- ທ່ານ ໂຊນີ ຊົນ, ນັກກົດໝາຍ, Chab Dai, ກຳປູເຈຍ
- ພັນ(ຕຳຫຼວດ) ເອກ ທີເດດ ຊັດຈັນນູຣາກວົງ, ຮອງຫົວໜ້າ (ເຈົ້າໜ້າທີ່ສືບສວນສອບສວນ), ພະແນກສືບສວນສອບສວນ, ຫ້ອງການກວດຄົນເຂົ້າເມືອງ, ກົມຕຳຫຼວດໄທ, ປະເທດ ໄທ
- ທ່ານ ຄລີຊັນຕູດ ຊາເທີນນູສ (RD Chrisanctus Paschalis Saturnus), ຫົວໜ້າ, ຄະນະກຳມະການຍຸຕິທຳ ແລະສັນຕິພາບ– ການເບິ່ງແຍງແຮງງານເຄື່ອນຍ້າຍ ແລະຜູ້ເດີນທາງ ຈາກຊົນນະບົດ (KKPMP), ປັງການ ປີນນາງ, ອິນໂດເນເຊຍ
- ທ່ານ ວົງຕະວັນ ໄຊຍະວົງ, ຜູ້ປະສານໂຄງການແຫ່ງຊາດ, ອົງການແຮງງານສາກົນ  ILO, ສປປ ລາວ
- ທ່ານ ຊາໂຣອັນ ເຊັກ (Saroeun Sek), ອົງການຍຸຕິທຳສາກົນ (IJM), ກຳປູເຈຍ
- ທ່ານ ນາງ ຄິສຕິນາ ເຊວິນລາ, ໄອຍາການ, ສະມາຄົມຕ້ານການຄ້າມະນຸດແມ່ຍິງ-ອາຊີປາຊີຟິກ (CATW-AP), ຟີລິປິນ
- ທ່ານ ປາປິບ ສະຢາມທັນ, ຫົວໜ້າແຜນງານ, ມູນນິທິສິດທິມະນຸດ ແລະການພັດທະນາ (HRDF), ປະເທດໄທ
- ທ່າ ນໍ ຊິດທາຕາ, ເລຂາທິການໃຫ່ຍ, ອົງການປົກປ້ອງພະຍານ ແລະຜູ້ຖືກເຄາະຮ້າຍ, ອິນໂດເນເຊຍ
- ທ່ານ ຈາຄອບ ຊິມ, ຫົວໜ້າ, ອົງການຍຸຕິທຳສາກົນ (IJM), ກຳປູເຈຍ
- ທ່ານ ນາງ ເອເມີລີນາ ສີເກເຣຕາ, ຜູ້ປະສານງານ ໃນໜ່ວຍງານກົດໝາຍ, ສະມາຄົມຕ້ານການຄ້າມະນຸດແຫ່ງຊາດອິນໂດເນເຊຍ (JARNAS Anti TPPO), ອິນໂດເນເຊຍ
- ທ່ານ ບັນທະໄຊ ສິງຫັກ, ພະນັກງານວິຊາການ, ກົມຕ້ານການຄ້າມະນຸດ, ກະຊວງປ້ອງກັນຄວາມສະຫງົບ, ສປປ ລາວ
- ທ່ານ ນາງ ວາດສະໜາ ສິງທະວົງ, ພະນັກງານໂຄງການອາວຸໂສ, ມູນນິທິເອເຊຍ (TAF), ສປປ ລາວ
- ຮ້ອຍເອກ ສົງປາວ ສະມິດຕິ, ເຈົ້າໜ້າທີ່ວິເຄາະນະໂຍບາຍ ແລະແຜນປະຕິງານ(ຂັ້ນປະຕິບັດງານ), ກອງບັນຊາການ ຕ້ານການຄ້າມະນຸດ, ກະຊວງແຮງງານ, ປະເທດ ໄທ
- ທ່ານ ນາງ ວັນນະພາ ສຸກຄົງ, ຫົວໜ້າພະແນກຕ້ານການຄ້າມະນຸດ, ກົມພັດທະນາສັງຄົມ ແລະຄວາມໝັ້ນຄົງຂອງມະນຸດ, ປະເທດ ໄທ
- ທ່ານ ໂສຣາກລາຍ ສໍສິຣິ, ນັກກົດໝາຍ/ນັກຄົ້ນຄວ້າ, ບໍລິສັດ SR Law, ປະເທດ ໄທ

- ທ່ານ ມິງວາລິນ ສິຣິສີລິພົງ, ໄອຍະການປະຊາຊົນ, ກົມດຳເນີນຄະດີຄ້າມະນຸດ, ຫ້ອງການໄອຍະການປະຊາຊົນ, ປະເທດ ໄທ
- ທ່ານ ໂພວິສ ສຸບສິຣິສັນໃຈ, ຜູ້ປະສານງານແຜນງານ, ມູນນິທິສິດທິມະນຸດ ແລະການພັດທະນາ (HRDF), ປະເທດ ໄທ
- ປອ ຊຸດຣາມາວາຕີນິງສີ S.H., M.Hum., ຈ່າສານໜຸ່ມນ້ອຍ ສຳລັບຄະດີອາຍາ, ຫ້ອງການຈ່າສານ, ສານສູງ, ອິນໂດເນເຊຍ
- ທ່ານ ເດີວີ ຊຸເກຍໂຕ, S.H., M.H., ຜູ້ພິພາກສາຕຸລາການ/ ຜູ້ຊ່ວຍຈ່າສານ ຂອງຫ້ອງການຈ່າສານ, ສານສູງ, ອິນໂດເນເຊຍ
- ທ່ານ ບາກຸສ ຊຸຣາໂຍໂນ, ຂັ້ນ IV - ຫົວໜ້າໜ່ວຍງານ PPNS, ພະແນກໃຫ່ຍກວດຄົນເຂົ້າເມືອງ, ອິນໂດເນເຊຍ
- ທ່ານ ນາງ ເດສຊີຣີ ແອນ ຊຸມາລີນົງ, ເຈົ້າໜ້າທີ່ບໍລິຫານ V, ກອງເລຂາ ສະພາລະຫວ່າງອົງກອນເພື່ອຕ້ານການຄ້າມະນຸດ (IACAT), ກະຊວງ ຍຸຕິທຳ, ຟີລິປິນ
- ທ່ານ ໂນໂນ ຊຸມາໂຊໂນ, ຫົວໜ້າໂຄງການ SAFE Seas (ທະເລປອດໄພ), ອົງການ Yayasan PLAN ສາກົນ, ອິນໂດເນເຊຍ
- ທ່ານ ໂຊກຫາລິດາ ຊຸ້ນ, ຫົວໜ້າກົມອາຍາ, ກົມໃຫ່ຍ ຂອງໄອຍະການ ແລະອາຍາ, ກະຊວງຍຸຕິທຳ, ກຳປູເຈຍ
- ປອ ຫາສໂຕ ອັດໂມໂຈ ຊູໂຣໂຍ M. Krim, ປະທານ, ອົງການປົກປ້ອງພະຍານ ແລະຜູ້ຖືກເຄາະຮ້າຍ, ອິນໂດເນເຊຍ
- ປອ ອິດາ ຊູຊັນຕິ, LL.M, ອາຈານ, ວິທະຍາໄລປາຣາຍັນກັງ, ຈາວາຕາເວັນອອກ, ອິນໂດເນເຊຍ
- ທ່ານ ສຸສີລານິງຕິອາສ, S.H., M.H., ຮອງປະທານ, ອົງການປົກປ້ອງພະຍານ ແລະຜູ້ຖືກເຄາະຮ້າຍ, ອິນໂດເນເຊຍ
- ທ່ານ ວາຣິຢູ ຊຸຊີໂລ, S.S., ຜູ້ອຳນວຍການ, ອົງການ Migrant CARE, ອິນໂດເນເຊຍ
- ທ່ານ ນາງ ອາພິຍາ ຕາຈິດ, ຮອງຫົວໜ້າ, ສູນ Stella Maris, ປະເທດ ໄທ
- ທ່ານ ນາງ ທຳມາ ຕາຈິດ, ພະນັກງານພາກສະໜາມສູນ Stella Maris ແຂວງລະນອງ, ປະເທດ ໄທ
- ທ່ານ ນາງ ຊິນທິຊາ ຕັງວໍຣາມົງຄຸນ, ຜູ້ປະສານໂຄງການແຫ່ງຊາດ, ອົງການແຮງງານສາກົນ (ILO), ປະເທດ ໄທ
- ພັນຕີ ອາຣິດ ທັດສາພັນ, ຮອງຫົວໜ້າຫ້ອງການຕ້ານອາຊະຍາກຳການຄ້າມະນຸດ, ກົມສືບສວນຄະດີພິເສດ, ປະເທດ ໄທ
- ທ່ານ ຄຳພອນ ຖາວເຈີວັງ, ຮອງພະແນກ, ກະຊວງ ຍຸຕິທຳ, ສປປ ລາວ
- ທ່ານ ທອງພັນ ທິລາສັກ, ຫົວໜ້າພະແນກ, ພະແນກຕ້ານການຄ້າມະນຸດ ນະຄອນຫຼວງວຽງຈັນ, ສປປ ລາວ
- ທ່ານ ວຽງປະສິດ ທິບພາສຸດາ, ຜູ້ປະສານໂຄງການແຫ່ງຊາດ, ອົງການແຮງງານສາກົນ (ILO), ສປປ ລາວ
- ທ່ານ ສິດທາເຣດ ເຕ, ຮອງເລຂາທິການ, ຄະນະກຳມະການແຫ່ງຊາດຕ້ານການຄ້າມະນຸດ (NCCT), ກຳປູເຈຍ
- ທ່ານ ດິນ ຮາຍ ຕລັງ, ອາຈານ, ພາກວິຊາອາຊະຍາກຳວິທະຍາ ແລະການສືບສວນສອບສວນອາຊະຍາກຳ, ມະຫາວິທະຍາໄລ ໄອຍາການ ຮາໂນ້ຍ, ຫວຽດນາມ

- ທ່ານ ນາງ ທິ ຮອງ ຕັລງ, ເຈົ້າໜ້າທີ່ແຜນງານ, ອົງການຜູ້ອົບພະຍົກສາກົນ (IOM), ຫວຽດນາມ
- ທ່ານ ນາງ ທິ ຮອງ ຍັນ ຕັລງ, ຜູ້ຊ່ວຍດ້ານການສື່ສານ, ອົງການຜູ້ອົບພະຍົກສາກົນ (IOM), ຫວຽດນາມ
- ທ່ານ ດຸຍ ຖຽນ ຕລິນ, ອາຈານ, ໂຮງຮຽນຕຳຫຼວດປະຊາຊົນ ເລກ 2, ກະຊວງປ້ອງກັນຄວາມສະຫງົບ, ຫວຽດນາມ
- ທ່ານ ເຣເຊລາ ອຸກ, ຮອງກົມ ຮັບຜິດຊອບການດຳເນີນຄະດີ, ກົມກວດຄົນເຂົ້າເມືອງ, ກະຊວງພາຍໃນ, ກຳປູເຈຍ
- ທ່ານ ສົມສະນຸກ ວັນນາພົວທອງ, ຫົວໜ້າພະແນກ, ໄອຍະການແຂວງວຽງຈັນ, ສປປ ລາວ
- ທ່ານ ນາງ ສິຣິວັນ ວົງກຽດໄພສານ, ຫົວໜ້າໂຄງການ/ຫົວໜ້າທີມທະນາຍ, ບໍລິສັດ SR Law, ປະເທດ ໄທ
- ທ່ານ ມັນ ຕວນ ວູ, ໂຮງຮຽນຕຳຫຼວດປະຊາຊົນ ເລກ 2, ກະຊວງປ້ອງກັນຄວາມສະຫງົບ, ຫວຽດນາມ
- ທ່ານ ນາງ ທິ ທູ ຮວງ ວູ, ຮອງຫົວໜ້າ, ອົງການຊ່ວຍເຫຼືອດ້ານກົດໝາຍແຫ່ງຊາດ, ກະຊວງຍຸຕິທຳ, ຫວຽດນາມ
- ທ່ານ ງອກ ບິນ ວູ, ທີ່ປຶກສາອາວຸໂສ, ສະຖາບັນ ສຶກສາປະຊາກອນ, ຄອບຄົວ ແລະເດັກ (IPFCS) ພາຍໃຕ້ສະຫະພັນສະມາຄົມ ວິດທະຍາສາດ ແລະເຕັກໂນໂລຊີ, ຫວຽດນາມ
- ທ່ານ ນາງ ອານັດສະຕາເຊຍ ວິນນິສເຊັນໂກ, ເຈົ້າໜ້າທີ່ແຜນງານ, ອົງການຜູ້ອົບພະຍົບສາກົນ (IOM), ຫວຽດນາມ
- ທ່ານ ຣາດີ ວາຍຸນນິງກລັມ, ຫົວໜ້າ ອົງການປົກປ້ອງ ແລະສິດອຳນາດ ຂອງພາກພື້ນ ເອີຣົບ ແລະຕາເວັນອອກກາງ, ອົງການປົກປ້ອງແຮງງານເຄື່ອນຍ້າຍອິນໂດເນເຊຍ (BP2MI), ອິນໂດເນເຊຍ
- ທ່ານ ຊຳລວມ ໄວວະສາ, ນັກພັດທະນາສັງຄົມ, ພະແນກຕ້ານການຄ້າມະນຸດ, ກະຊວງພັດທະນາສັງຄົມ ແລະຄວາມໝັ້ນຄົງຂອງມະນຸດ, ປະເທດ ໄທ
- ທ່ານ ນາງ ອາກາຕາ ຊີ ວັງເກ, S.H, ສາດສະດາຈານ, ຫ້ອງການໄອຍະການແຂວງ ຈາວາ ຕາເວັນຕົກ, ອິນໂດເນເຊຍ
- (Dr. iur.) ອານໂຕນີອົສ PS ວິໂບໂວ, S.H., M.H., ຮອງປະທານ, ອົງການປົກປ້ອງພະຍານ ແລະຜູ້ຖືກເຄາະຮ້າຍ, ອິນໂດເນເຊຍ
- ທ່ານ ເດນນີ ດວີ ວູລັນດາຣີ, ຫົວໜ້າພະແນກ ອົງການຈັດຕັ້ງລັດ, ອົງການຕ້ານການກໍ່ການຮ້າຍ ແຫ່ງຊາດ, ອິນໂດເນເຊຍ
- ທ່ານ ສົມເພັດ ໄຊຍະສິດ, ວິຊາການ, ກົມຕຳຫຼວດຕ້ານການຄ້າມະນຸດ, ກະຊວງປ້ອງກັນຄວາມສະຫງົບ, ສປປ ລາວ
- ທ່ານ ພັທ ຄຳປານ ໄຊຍະວົງ, ຫົວໜ້າພະແນກ, ກົມຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ, ກະຊວງປ້ອງກັນຄວາມສະຫງົບ, ສປປ ລາວ
- ທ່ານ ພັນ(ຕຳຫຼວດ) ເອກ ລັດສະໝີ ໄຊຍາຄຳ, ຫົວໜ້າກົມຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ, , ກະຊວງປ້ອງກັນຄວາມສະຫງົບ, ສປປ ລາວ
- ທ່ານ ສາຣີ ຍາ, ຫົວໜ້າສູນຄົ້ນຄວ້າ, ພາກວິຊາສັງຄົມສຶກສາ, ມະຫາວິທະຍາໄລ ລາທລົບ, ລັດ ວິກໂຕເລຍ, ອົດສະຕາລີ

- ທ່ານ ນິຍົວ ເຮ ເຢຍ ຢີ (Nyoua Herr Xia Yee), ຜູ້ພິພາກສາ, ສານປະຊາຊົນສູງສຸດ, ສປປ ລາວ
- ທ່ານ ຈັນ ນາຣຸມ ເຢັມ, ຮອງເລຂາທິການ, ຄະນະກຳມະການຕ້ານການຄ້າມະນຸດແຫ່ງຊາດ (NCCT), ກຳປູເຈຍ
- ທ່ານ ໂຊກເຣມາຣິນ ໂຢສ, ຮອງຫົວໜ້າກົມກົງສູນ, ກະຊວງການຕ່າງປະເທດ ແລະຮ່ວມມືສາກົນ, ກຳປູເຈຍ
- ທ່ານ ນາງ ອາຢູ ຣານາ ເຊມາ, ຜູ້ຊ່ວຍໂຄງການ II - ໜ່ວຍງານຕ້ານການຄ້າມະນຸດ ແລະແຮງງານເຄື່ອນຍ້າຍ, ອົງການຜູ້ອົບພະຍົກສາກົນ (IOM), ອິນໂດເນເຊຍ

ຜູ້ຂຽນ ຂໍສະແດງຄວາມຂອບໃຈເພື່ອນຮ່ວມງານ ຈາກແຜນງານ ASEAN-ACT ສຳລັບຄວາມຊ່ວຍເຫຼືອ ໃນການເຮັດການສຶກສາໃນຄັ້ງນີ້, ລວມທັງ ທ່ານ ນາງ ດັງ ທິຣາ, ທ່ານ ນາງ ມະນີຈັນ ແກ້ວວິລິຍະວົງ, ທ່ານ ນາງ ຊີງ ນາຍ, ທ່ານ ອາສມິສ ສິຄວນ, ທ່ານ ນາງ ອາພິລາດີ, ທ່ານ ຖຽງທອງ ແລະ ທ່ານ ນາງ ນູຣູ ກົວຣາ ສຳລັບຄວາມຊ່ວຍເຫຼືອ ໃນການອຳນວຍຄວາມສະດວກການສົນທະນາຕ່າງໆ. ຂໍຂອບໃຈມາຍັງ ທີມງານທີ່ໃຫ້ຄວາມຊ່ວຍເຫຼືອ ຂອງ ASEAN-ACT, ລວມທັງ ທ່ານ ເທັດ ສັນດາ ອັງ, ທ່ານ ພັດສະດາ ຈັນທະວົງ, ທ່ານ ນາງ ຕລັງ ທູ ຫວງ, ທ່ານ ນາງ ວິການດາ ເຈລາດີທະພົງ, ທ່ານ ນາງ ທິ ທັນ ຮັງ ເລ, ທ່ານ ນາງ ທິ ວັນ ຫງຽນ, ທ່ານ ນາງ ດາລິນ ປາຈາລິໂຕ, ທ່ານ ນາງ ມາລີ ເພັນ, ທ່ານ ນາງ ບິກ ຟົງ ຟາມ, ທ່ານ ນາງ ຈັນທິດາ ບັນມານີວົງ, ທ່ານ ນາງ ເມທິນີ ສັງສຸວັນ, ທ່ານ ທູ ຫົງ ຕັລງ ແລະ ທ່ານ ວູທິ ອັນ.

# ເອກະສານອ້າງອີງ


- ສະພາທະນາຍຄວາມອາເມລິກາ, *ການປູກຈິດສຳນຶກຫຼັງການຕັດສິນໂທດ ສຳລັບຜູ້ລອດມາຈາກການຄ້າມະນຸດ: ຄູ່ມື ສຳລັບໄອຍະການ* (ສະພາທະນາຍຄວາມອາເມລິກາ, 2016)
- ທ່ານ ອານຈັນ, ຄຣິສຕິນ (Anchan, Christine), 'ປົກປ້ອງຜູ້ຖືກເຄາະຮ້າຍທີ່ບໍ່ມີຄວາມພ້ອມສົມບູນ: ຂະຫຍາຍ'ທີ່ພັກທີ່ປອດໄພ ' ກວມເອົາຜູ້ຖືກເຄາະຮ້າຍການຄ້າທາງເພດ ທີ່ເປັນຜູ້ໃຫຍ່', ວາລະສານ *William & Mary Journal of Race, Gender and Social Justice,* ເຫຼັ້ມ 23 (2016-2017) ພະຈິກ 2016
- ອົງການຕ້ານການເຮັດໃຫ້ເປັນຂ້າທາດສາກົນ, *Trafficking for Forced Criminal Activities and Begging in Europe: Exploratory Study and Good Practices* (ອົງການຕ້ານການເຮັດໃຫ້ເປັນຂ້າທາດສາກົນ, 2014)
- ບາລກັມວາລາ ຊາບລີນາ (Balgamwalla, Sabrina), 'ບັນລະຍາຍກ່ຽວກັບການຄ້າມະນຸດ: ທຳຄວາມເຂົ້າໃຈ ແລະແກ້ໄຂບັນຫາຜູ້ຖືກເຄາະຮ້າຍ, ຜູ້ກະທຳຜິດ ແລະຜູ້ກອບກູ້ ໃນສົງຄາມຕ້ານການຄ້າມະນຸດ, *ວາລະສານ Denver Law Review*, Vol 94:1, ມັງກອນ 2016.
- ເຊັບກິສ ເວັນດີ (Chapkis, Wendy), 'ການຄ້າມະນຸດ, ການເຄື່ອນຍ້າຍ ແລະກົດໝາຍ: ປົກປ້ອງຜູ້ບໍລິສຸດ, ລົງໂທດຜູ້ເຄື່ອນຍ້າຍ, ວາລະສານ *Gender & Society,* ເຫຼັ້ມ. 17, ເລກ. 6, ທັນວາ 2003, 923-937.
- ເດັມຊີ ມິແຊວ ມາເດັນ (Dempsey, Michelle Madden), 'ຍຸດຕິການລົງໂທດຜູ້ຄ້າປະເວນີ ທີ່ເປັນຜູ້ຖືກເຄາະຮ້າຍຈາການຄ້າມະນຸດ', ວາລະສານ *American Criminal Law Review,* 2015, ເຫຼັ້ມທີ 52:207,
- ເດເຣັນໂນວິຊ ດາເວີ (Dereninovi, Davor), 'ທັດສະນະແບບມີການສົມທຽບ ກ່ຽວກັບການບໍ່ລົງໂທດ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນການຄ້າມະນຸດ (2014) 46 ວາລະສານ *Annales de la Faculté de Droit d'Istanbul* 63, 3-20
- ເດັດເມເຈ ເວີມູນເລັນ ໂກລິນ ແລະລູກເອສເຊີ (Dettmeijer-Vermeulen, Corrinne, ແລະ Luuk Esser), 'ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນຖານະເປັນຜູ້ກະທຳຜິດ: ການປະສົມປະສານ ຂອງຜົນກະທົບຮ້າຍແຮງ, ການພິຈາລະນາກ່ຽວກັບ ລະບຽບການດ້ານອາຊະຍາກຳ ການເຄື່ອນຍ້າຍ ແລະກົດໝາຍແຮງງານ ທີ່ພົວພັນກັບການຄ້າມະນູດ ໃນຄະດີ ຂອງ ດັສ ມີຫັກ (Dutch Mehak)', ວາລະສານ *Journal of Trafficking and Human Exploitation,* 2017, ເຫຼັ້ມ. 1 Nr. 1, 77-94
- ECPAT *ສາກົນ, ຜ່ານສາຍຕາ ຂອງເດັກ: ສິ່ງກີດຂວາງ ຕໍ່ ຂະບວນຍຸດຕິທຳ ແລະການປຽວຢາ ສຳລັບ ຜູ້ຖືກເຄາະຮ້າຍ ການຂູດຮີດທາງເພດ ທີ່ເປັນເດັກ* (ECPAT International, 2017)

- Empower, *'ຕຳແລ້ວໜີ: ຜົນກະທົບ ຂອງນະໂຍບາຍ ແລະການປະຕິບັດ ກ່ຽວກັບການຄ້າມະນຸດ ຕໍ່ສິດທິມະນຸດ ຂອງຜູ້ຂາຍບໍລິການທາງເພດ ຢູ່ປະເທດ ໄທ* (RATS-W Team, Empower, 2012).
- ທ່ານ Gerry QC, Felicity., Karen Gomez Dumpit, Sara Kowal, Courtney Keefe, 'ການຄ້າມະນຸດ ແລະການສະເໜີໃຫ້ໃຊ້ການປະຫານຊີວິດອີກຄັ້ງ, 3 ເມສາ 2020, *ສະພາທະນາຍຄວາມສາກົນ,* ibanet.org ເຖິງວັນທີ 30 ກັນຍາ 2021
- ທ່ານ Giammarinaro, Maria Grazia., ຜູ້ລາຍງານພິເສດ ກ່ຽວກັບການຄ້າມະນຸດ, ໂດຍສະເພາະ ແມ່ຍິງ ແລະເດັກ, ຄວາມສຳຄັນ ຂອງການປະຕິບັດການບໍ່ລົງໂທດ: *ພັນທະໃນການປົກປ້ອງຜູ້ຖືກເຄາະຮ້າຍ* (ອົງການສະຫະປະຊາຊາດ, ກຸງວຽນ, 30 ກໍລະກົດ 2020)
- ທ່ານ Giammarinaro, Maria Grazia., ຜູ້ລາຍງານພິເສດ ກ່ຽວກັບການຄ້າມະນຸດ, ໂດຍສະເພາະ ແມ່ຍິງ ແລະເດັກ, *ການຄ້າມະນຸດ, ໂດຍສະເພາະ ແມ່ຍິງ ແລະເດັກ,* ບົດລາຍງານ ຂອງຜູ້ລາຍງານພິເສດ ກ່ຽວກັບການຄ້າມະນຸດ,ໂດຍສະເພາະ ແມ່ຍິງ ແລະເດັກ, UN Doc. A/HRC/44/45 (6 ເມສາ 2020)
- ພັນທະມິດສາກົນ ຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ, *ລະດົມຄືນໃໝ່ຜູ້ຂາຍບໍລິການທາງເພດ ເພື່ອການປ່ຽນແປງ: ການເປັນຕົວແທນໃຫ້ຕົນເອງ, ການລະດົມຊຸມຊົນ ແລະເງື່ອນໄຂການເຮັດວຽກ* (GAATW, 2018).
- *ບົດແນະນຳ ກ່ຽວກັບບັນຫາການຕອບໂຕ້ທາງຍຸດຕິທຳອາຍາທີ່ແທດເໝາະ ຕໍ່ຜູ້ຖືກເຄາະຮ້າຍ ທີ່ຖືກບັງຄັບໃຫ້ກະທຳຜິດ ຍ້ອນຖືກຄ້າມະນຸດ: ເອກະສານກ່ຽວກັບຄວາມເປັນມາ ກະກຽມ ໂດຍກອງເລຂາ ຂອງໜ່ວຍວິຊາການ ດ້ານການຄ້າມະນຸດ,* ກຸງວຽນ ວັນທີ 10 ແລະ 11 ກັນຍາ 2020, UN Doc. CTOC/COP/WG.4/2020/2 (15 ມິຖຸນາ 2020).
- ສູນກົດໝາຍການຄ້າມະນຸດ, *ການດຳເນີນຄະດີ ໂດຍບໍ່ຄຳນຶງເຖິງຜົນເສຍຫາຍງເລີຍ? ຜົນກະທົບ ຂອງການອອກຄຳສັ່ງຈັບກຸມພະຍານທີ່ເປັນບຸກຄົນສຳຄັນ ໃນຄະດີຄ້າມະນຸດ ຂອງລັດຖະບານກາງ* (HTLC, 2020)
- ສູນກົດໝາຍການຄ້າມະນຸດ, *ຄູ່ມື ຂອງນັກໂຄສະນາ ກ່ຽວກັບບັນຫາອາກອນ ທີ່ກະທົບຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ* (ສູນກົດໝາຍການຄ້າມະນຸດ, ທ່ານ Ropes & Gray LLP, ແລະພາກວິຊາກົດໝາຍ ຂອງມະຫາວິທະຍາ ໄລ ບາຕິມໍ, 2019)
- ຄະນະປະສານງານລະຫວ່າງອົງກອນເພື່ອຕ້ານການຄ້າມະນຸດ, *ການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ,* ເອກະສານຫຍໍ້ 8, 2020 (ສະຫະປະຊາຊາດ, ກຸງ ວຽນ 2020)
- ຄະນະກຳມະການສາກົນ ດ້ານສິດທິ ຂອງຜູ້ຂາຍບໍລິການທາງເພດ ຢູ່ ເອີຣົບ, *ບົດແນະນຳຫຍໍ້ ກ່ຽວກັບຄວາມເສຍຫາຍທີ່ຫຼີກລ້ຽງບໍ່ໄດ້ ຂອງກົດໝາຍຕ້ານການຄ້າມະນຸດ ແລະມາດຕະການ ຕໍ່ ຜູ້ຂາຍບໍລິການທາງເພດ* (ICRSWE, 2019)
- ຄະນະກຳມະການສາກົນ ດ້ານສິດທິ ຂອງຜູ້ຂາຍບໍລິການທາງເພດ ຢູ່ ເອີຣົບ, *ຈາກຄວາມບອບບາງ ສູ່ ຄວາມເຂັ້ມແຂງ: ລະດົມຜູ້ຂາຍບໍລິການທາງເພດ ເພື່ອສິ້ນສຸດການຂູດຮີດ* (ICRSWE, ພຶດສະພາ 2021)
- ຄະນະກຳມະການສາກົນ ດ້ານສິດທິ ຂອງຜູ້ຂາຍບໍລິການທາງເພດ ຢູ່ ເອີຣົບ, *ຜູ້ຖືກເຄາະຮ້າຍບໍ່ໄດ້ຮັບບໍລິການຢ່າງພຽງພໍ? ບົດລາຍງານຊຸມຊົນ ກ່ຽວກັບຜູ້ຂາຍບໍລິການທາງເພດເຄື່ອນຍ້າຍ ທີ່ເປັນຜູ້ຖືກເຄາະຮ້າຍຈາກອາຊະຍາກຳ ຢູ່ເອີຣົບ* (ICRSWE, 2020)
- ອົງການແຮງງານສາກົນ *ຄ່າຈັດຫາງານ ແລະລາຍຈ່າຍກ່ຽວຂ້ອງອື່ນ: ແຮງງານເຄື່ອນຍ້າຍ ຈາກກຳປູເຈຍ, ສປປ ລາວ ແລະມຽນມາ ຈ່າຍເງິນຕ້ອຍຫຍັງ ເພື່ອໄປເຮັດວຽກຢູ່ ໄທ* (ILO, 2020)
- ສູນສຸດທິມະນຸດຂອງແມ່ຍິງສາກົນ, *ຄາຍປົມ: ຊອກຫາການຢຽວຢາທີ່ມີປະສິດທິຜົນ ສຳລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ຖືກລົງໂທດທາງອາຍາ* (IWHRC ພາກວິຊາໃນໂຕເມືອງ ຂອງໂຮງຮຽນກົດໝາຍ ຂອງມະຫາ

ວິທະຍາໄລ ນິວຢອກ, ພຶດສະພາ 2015)

- ທ່ານ Jovanovi, Marija, 'ຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ: ການຕໍ່ສູ້ ເພື່ອໃຫ້ມີບົດແນະນໍາ ທີ່ສົມເຫດສົມຜົນ ແລະແຫດເໝະກັບຕົວຈິງ, ວາລະສານ *Journal of Trafficking and Human Exploitation,* 2017, ເຫຼັ້ມ 1 Nr. 1, 41-76
- ທ່ານ Jovanovi, Marija, 'ກົດໝາຍສາກົນ ແລະ ກົດເກນຂອງພາກພື້ນ ກ່ຽວກັບການຄ້າເຖື່ອນ: EU ແລະASEAN ນິຍາມ ກົດເກນສາກົນ ກ່ຽວກັບການຄ້າມະນຸດ ແນວໃດ, ວາລະສານ *The American Journal of International Law,* 2021, ເຫຼັ້ມ XX, 1.
- ທ່ານ Jovanovi, Marija, 'ຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ: ການຕໍ່ສູ້ ເພື່ອໃຫ້ມີບົດແນະນໍາ ທີ່ສົມເຫດສົມຜົນ ແລະແຫດເໝະກັບໂຕຈິງ' (2017) 1 (1) ວາລະສານ *Journal of Trafficking and Human Exploitation* 41-76;
- ສູນຍຸຕິທໍາຫ້ອງກົງ, *ບໍ່ຢຸດຢູ່ບ່ອນນີ້: ຫ້ອງກົງ ໃນຖານະເປັນບ່ອນ ສໍາລັບການຄ້າມະນຸດ* (ມັງກອນ 2019)
- ສູນຍຸຕິທໍາຫ້ອງກົງ, *Submission for the Working Group on Arbitrary Detention's Study on arbitrary detention relating to drug policies* (ມີນາ 2020)
- ທ່ານ Kulig, Teresa C. & Leah C. Butler (2019) 'ຈາກ "ໂສເພນີ" ສູ່ "ຜູ້ຖືກເຄາະຮ້າຍ": ການຂຶ້ນ ແລະ ສະຖານະພາບ ຂອງສານການຄ້າມະນຸດທາງເພດ', ວາລະສານ *Victims & Offenders,* 14:3, 299-321
- ອົງການ Liberty Asia, *ASEAN & ACTIP: ນໍາໃຊ້ກອບກົດໝາຍພາກພື້ນ ເພື່ອຕໍ່ສູ້ກັບອາຊະຍາກໍາສາກົນ* (Liberty Asia, 2017)
- ທ່ານ ນາງ McAdam, Marika, *ເອກະສານຫຍໍ້ ກ່ຽວກັບຮ່າງກົດໝາຍ ວ່າດ້ວຍແຮງງານຫວຽດນາມ ພາຍໃຕ້ສັນຍາ ຂອງສາທາລະນະລັດສັງຄົມນິຍົມຫວຽດນາມ (ຮ່າງກົດໝາຍ 72): ຄວາມໝາຍຄວາມສໍາຄັນ ຈາກການຄ້າມະນຸດ* (ແຜນງານ ASEAN-ACT, 2020)
- ທ່ານ ນາງ McAdam, Marika., *ອິດສະຫຼະພາບ ໃນການເຄື່ອນໄຫວ ຂອງບຸກຄົນ ທີ່ຖືກກໍານົດ ວ່າເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ: ການວິໄຈກົດໝາຍ, ນະໂຍບາຍ ແລະການປະຕິບັດ ໃນພາກພື້ນ ASEAN* (ແຜນງານASEAN-ACT, 2021)
- ທ່ານ Mullaly, Siobhán., *ການປະຕິບັດກົດເກນບໍ່ລົງໂທດ: ບົດລາຍງານ ຂອງຜູ້ລາຍງານພິເສດ ກ່ຽວກັບການຄ້າມະນຸດ, ໂດຍສະເພາະ ແມ່ຍິງ ແລະເດັກ, ທ່ານ Siobhán Mullaly,* UN Doc. A/HRC/47/34 (17 ພຶດສະພາ2021), ສົ່ງໃຫ້ ກອງປະຊຸມຄັ້ງທີ 47 ຂອງສະພາສິດທິມະນຸດ, 21 ມິຖຸນາ ຫາ 9 ກໍລະກົດ 2021.
- *ການບໍ່ລົງໂທດ ແລະການບໍ່ດໍາເນີນຄະດີຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ: ວິທີການດ້ານບໍລິຫານ ແລະ ຕຸລາການ ຕໍ່ການກະທໍາຜິດ ທີ່ກໍ່ຂຶ້ນ ໃນຂະບວນການຄ້າມະນຸດ,* UN Doc. CTOC/COP/WG.4/2010/4 (9 ກັນຍາ 2009)
- *ການບໍ່ລົງໂທດ ແລະການບໍ່ດໍາເນີນຄະດີຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ: ວິທີການດ້ານບໍລິຫານ ແລະ ຕຸລາການ ຕໍ່ການກະທໍາຜິດ ທີ່ກໍ່ຂຶ້ນ ໃນຂະບວນການຄ້າມະນຸດ, ເອກະສານຄວາມເປັນມາ ກະກຽມ ໂດຍກອງເລຂາ,* ກຸງວຽນ 27 – 29 ມັງກອນ 2010, UN Doc. CTOC/COP/WG.4/2010/4 (9 ກັນຍາ 2010)
- ທ່ານ ໂອເຟີ ໂນກາ (Ofer, Nogah), 'ການປະຕິບັດຫຼັກການບໍ່ລົງໂທດ ຢູ່ ອັງກິດ: ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ບໍ່ໄດ້ຮັບຜົນປະໂຫຍດການປົກປ້ອງ ຈາກການດໍາເນີນຄະດີ ທີ່ສະໜອງໂດຍກົດໝາຍສາກົນ?' ວາລະສານ *Journal of Human Rights Practice,* 11, 2019, 486–507

- ທ່ານ ໂອເຟີ ໂນກາ (Ofer, Nogah), 'ການດໍາເນີນຄະດີຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຢູ່ ອັງກິດ: ຄວາມແຕກຕ່າງລະຫວ່າງກົດໝາຍ ແລະການປະຕິບັດໂຕຈິງ, ວາລະສານ *University of Oxford, Border Criminologies Blog,* 11 ກຸມພາ 2019.
- ຫ້ອງການຂ້າຫຼວງໃຫຍ່ດ້ານສິດທິມະນຸດ, *ການຄ້າມະນຸດ: ຄໍາເຫັນຮ່ວມຂອງສະຫະປະຊາຊາດ ກ່ຽວກັບຄໍາສັ່ງ ຂອງສະຫະພາບເອີຣົບ– ວິທີການທີ່ອີງໃສ່ສິດທິມະນຸດ* (ອົງການ OHCHR, UNHCR, UNICEF, UNODC, UN Women ແລະ ILO, 2011)
- ອົງການຈັດຕັ້ງເພື່ອຄວາມໝັ້ນຄົງ ແລະການຮ່ວມມື ຢູ່ ເອີຣົບ, *ຄໍາແນະດ້ານນະໂຍບາຍ ແລະທາງກົດໝາຍ ກ່ຽວກັບການປະຕິບັດທີ່ມີປະສິດທິຜົນ ບົດບັນຍັດບໍ່ລົງໂທດຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ* (OSCE, ກໍລະກົດ, 2013)
- ທ່ານ ພາມເມີ (Palmer, W., & Missbach, A.) (2017). 'ການຄ້າມະນຸດພາຍໃນການລັກລອບເອົາຄົນເຂົ້າອອກເມືອງຜິດກົດໝາຍ:ຜູ້ຂົນສົ່ງຜູ້ຖືກເຄາະຮ້າຍທີ່ອາຍຸບໍ່ຮອດກະສຽນ ‹ຜູ້ຖືກເຄາະຮ້າຍ› ຫຼື ‹ຜູ້ກະທໍາຜິດ›?', ວາລະສານ *Asian and Pacific Migration Journal,* 26(3), 287-307.
- ທ່ານ ນາງ ລາມານັນ ເຊມີລາ (Parmanand, Sharmila) (2021). 'ການຊ່ວຍກອບກູ້ ໃນຖານະເປັນຄວາມຮຸນແຮງ: ການຕ້ານການຄ້າມະນຸດ ແລະການຟື້ນຟູແມ່ຍິງຟີລິປິນທີ່ຖືກຊ່ວຍກອບກູ້ ກາຍເປັນບັນຫາທາງມະນຸດສະທໍາ. ວາລະສານ *Journal of International Women›s Studies,* 22(2), 78-91
- ທ່ານ ປີໂອໂຕຼວິສ, ວິຊັນ ແລະລີລີນາ (Piotrowicz, Ryszard Wilson and Liliana Sorrentino), 'ການຄ້າມະນຸດ ແລະຫຼັກການບໍ່ລົງໂທດ 2016 (16) 4 *Human Rights Law Review* 669 – 699.
- ທ່ານ ປີໂອໂຕຼວິສ, ວິຊັນ ແລະລີລີນາ (Piotrowicz, Ryszard Wilson and Liliana Sorrentino), 'ທ່ານຄິດຫຍັງຢູ່? ກ້າວໄປສູ່ການເພີ່ມຂຶ້ນຂອງການຮັບຮູ້ຫຼັກການບໍ່ລົງໂທດ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ວາລະສານ *La Strada Newsletter,* ເຫຼັ້ມ 44, ເມສາ 2017
- ທ່ານ ປີໂອໂຕຼວິສ (Piotrowicz, Ryszard.), 'ມາດຕາ 26, ບົດບັນຍັດການບໍ່ລົງໂທດ ໃນ ເອກະສານຂອງທ່ານ ນາງ ໂຈເລຍ ແລະ ທ່ານ ເຮມູສ( Julia Planitzer and Helmut Sax (eds.) *ຄໍາເຫັນກ່ຽວກັບສະພາເອີຣົບ ຂອງສົນທິສັນຍາຕ້ານການຄ້າມະນຸດ* (ສໍານັກພິມ Edward Elgar, 2020)
- ທ່ານ ປີໂອໂຕຼວິສ (Piotrowicz, Ryszard.), 'ບົດບັນຍັດການບໍ່ລົງໂທດ ໃນ *ຄໍາເຫັນກ່ຽວກັບສະພາເອີຣົບ ຂອງສົນທິສັນຍາຕ້ານການຄ້າມະນຸດ* (ສໍານັກພິມ Edward Elgar, 2020)
- ທ່ານ ພລາເບັສ ສິນ(Plambech, Sine.), 'ລະຫວ່າງ "ຜູ້ຖືກເຄາະຮ້າຍ" ແລະ "ອາດຍາກອນ": ການກອບກູ້, ການຜັກດັນອອກເມືອງ ແລະການໃຊ້ຄວາມຮຸນແຮງໃນທຸກມື້ ຕໍ່ຜູ້ເຄື່ອນຍ້າຍຄົນໃນຈີເລຍ, ວາລະສານ *Social Politics.* ເຫຼັ້ມ 24. No. 3, 2014
- ໂປລາລິສ (Polaris), *ການຄ້າມະນຸດໂດຍສັງເຂບ: ປະຕິເສດການຕັດສິນໂທດ* (Polaris, 2015).
- ທ່ານ Schloenhardt, Andreas & Rebekkah Markey-Towler, "ການບໍ່ລົງໂທດອາຍາຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ – ຫຼັກການ, ຄໍາສັນຍາ ແລະທັດສະນະ", ວາລະສານ *Groningen Journal of International Law,* ເຫຼັ້ມ 4(1) (2016), 10-38
- ອົງການ ແບ່ງປັນຄວາມຫວັງສາກົນ (Shared Hope International), *ການຕອບໂຕ້ກັບການຄ້າມະນຸດທາງເພດ: Victim-Offender Intersectionality,* (Shared Hope International, 2020).
- ທ່ານ Surtees, Rebecca and Laura S. Johnson (2021) *ການກໍານົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ: ຄູ່ມືສໍາລັບຜູ້ປະຕິບັດໂຕຈິງ* (ຫ້ອງການຊ່ວຍເຫຼືອພາກພື້ນ ຂອງຂະບວນການບາຫລີ (RSO) ແລະສະຖາບັນເນຊູສ (NEXUS Institute), 2021)

- ອົງການ Unicef, ຜູ້ຖືກເຄາະຮ້າຍ, *ບໍ່ແມ່ນອາສະຍາກອນ: ເດັກທີ່ຖືກຄ້າມະນຸດ ແລະຫຼັກການບໍ່ລົງໂທດ ຢູ່ອັງກິດ* (Unicef, 2017)
- ໜ່ວຍງານບໍລິການດ້ານການດຳເນີນຄະດີ ຂອງລາສະອາຈາຈັກອັງກິດ(United Kingdom Crown Prosecution Services), *ບົດແນະນຳ ກ່ຽວກັບການຄ້າມະນຸດ, ການລັກລອບ ຂອງຜູ້ເຄື່ອນຍ້າຍ ແລະ ການເຮັດໃຫ້ເປັນຂ້າທາດ,* UK CPS, ປັບປຸງວັນທີ 30 ເມສາ 2020
- ກະຊວງພາຍໃນອັງກິດ, *ການທົບທວນເອກະລາດ ກ່ຽວກັບກົດໝາຍວ່າດ້ວຍການເຮັດໃຫ້ເປັນຂ້າທາດແບບໃໝ່ 2015: ບົດລາຍງານສົມບູນ* (ລັດຖະມົນຕີກະຊວງພາຍໃນຂອງອັງກິດ, 2019)
- ຫ້ອງການອົງການສະຫະປະຊາຊາດຕ້ານຢາເສບຕິດ ແລະອາຊະຍາກຳ, *ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທາງເພດທີ່ເປັນເພດຍິງ ໃນຖານະເປັນຈຳເລີຍ: ການວິເຄາະຄະດີທາງກົດໝາຍ* (ອົງການສະຫະປະຊາຊາດ, ກຸງວຽນ, 2020).
- ຫ້ອງການອົງການສະຫະປະຊາຊາດຕ້ານຢາເສບຕິດ ແລະອາຊະຍາກຳ, *ໃບຂ່າວ: ບົດບາດຂອງ 'ຄວາມຍິນຍອມ' ໃນອານຸສັນຍາ ວ່າດ້ວຍການຄ້າມະນຸດ* (UNODC, 2014)
- ຫ້ອງການອົງການສະຫະປະຊາຊາດຕ້ານຢາເສບຕິດ ແລະອາຊະຍາກຳ, *ບົດແນະນຳ ກ່ຽວກັບ 'ການສວຍໃຊ້ຄວາມບອບບາງ' ໃນຖານະເປັນເຄື່ອງມື ຈາກການຄ້າມະນຸດ ໃນມາດ 3 ຂອງສົນທິສັນຍາສະຫະປະຊາຊາດວ່າດ້ວຍການຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະເດັກ ທີ່ເສີມຕື່ມໃສ່ອານຸສັນຍາສະຫະປະຊາຊາດຕ້ານອາຊະຍາກຳຂ້າມຊາດແບບມີການຈັດຕັ້ງ* (UNODC, 2012)
- ຫ້ອງການອົງການສະຫະປະຊາຊາດຕ້ານຢາເສບຕິດ ແລະອາຊະຍາກຳ, *ຄູ່ມືທາງນິຕິບັນຍັດ ສຳລັບອານຸສັນຍາວ່າດ້ວຍການປ້ອງກັນ, ການປາບປາມ ແລະລົງໂທດການຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະເດັກ ທີ່ເສີມຕື່ມໃສ່ອານຸສັນຍາສະຫະປະຊາຊາດຕ້ານອາຊະຍາກຳຂ້າມຊາດແບບມີການຈັດຕັ້ງ* (ອົງການສະຫະປະຊາຊາດ, ກຸງວຽນ, 2020).
- ຫ້ອງການອົງການສະຫະປະຊາຊາດຕ້ານຢາເສບຕິດ ແລະອາຊະຍາກຳ, *ບົດບັນຍັດທາງນິຕິບັນຍັດໂຕແບບ ຕ້ານການຄ້າມະນຸດ* (ອົງການສະຫະປະຊາຊາດ, ກຸງວຽນ, 2020).
- ຫ້ອງການອົງການສະຫະປະຊາຊາດຕ້ານຢາເສບຕິດ ແລະອາສະຍາກຳ, *ບົດບາດຂອງຄ່າຈັດຫາງານ ແລະການສວຍໃຊ້ບໍລິສັດຈັດຫາງານທີ່ຫຼອກລວງ ໃນການຄ້າມະນຸດ* (UNODC, 2015)
- ຫ້ອງການອົງການສະຫະປະຊາຊາດຕ້ານຢາເສບຕິດ ແລະອາສະຍາກຳ, *ເຄື່ອງມື ຂອງອົງການ UNODC ສຳລັບການເສື່ອມສິດທິມະນຸດ ແລະຄວາມສະເໝີພາບດ້ານບົດບາດຍິງຊາຍ ເຂົ້າໃນວຽກງານຍຸຕິທຳອາຍາ ເພື່ອແກ້ໄຂການຄ້າມະນຸດ ແລະການລັກລອບ ຂອງຜູ້ເຄື່ອນຍ້າຍ ແບບຜິດກົດໝາຍ* (UNODC, 2021)
- ຫ້ອງການອົງການສະຫະປະຊາຊາດຕ້ານຢາເສບຕິດ ແລະອາສະຍາກຳ ແລະຫ້ອງການຊ່ວຍເຫຼືອພາກພື້ນ ຂອງຂະບວນການບາຫລີ, *ການຊໍ້ລາດບັງຫຼວງ ໃນຖານະເປັນໂຕອຳນວຍຄວາມສະດວກແກ່ການລັກລອບ ຂອງຜູ້ເຄື່ອນຍ້າຍ ແບບຜິດກົດໝາຍ ແລະການຄ້າມະນຸດໃນຂະບວນການບາຫລີຂອງພາກພື້ນ ແລະຈຸດສຸມໃສ່ອາຊີຕາເວັນອອກສຽງໃຕ້* (UNODC ແລະ RSO, 2021)
- ຫ້ອງການຂ້າຫຼວງໃຫຍ່ສະຫະປະຊາຊາດດ້ານສິດທິມະນຸດ, *ຄຳເຫັນ ກ່ຽວກັບຫຼັກການ ແລະຄູ່ມືທີ່ສະເໜີກ່ຽວກັບສິດທິມະນຸດ ແລະການຄ້າມະນຸດ* (ອົງການສະຫະປະຊາຊາດ, ກຸງວຽນ, 2010)
- ຫ້ອງການຂ້າຫຼວງໃຫ່ຍສະຫະປະຊາຊາດດ້ານສິດທິມະນຸດ, *ຫຼັກການທີ່ແນະນຳ ກ່ຽວກັບສິດທິມະນຸດ ແລະການຄ້າມະນຸດ* (ອົງການສະຫະປະຊາຊາດ, ກຸງວຽນ, 2002)
- ທ່ານ UrquizaHaas, Nayeli, 'ການປຶກສາຫາລືກ່ຽວກັບຄວາມບອບບາງ ແລະການລັກລອບຂົນຢາເສບຕິດ

ໃນຮ່າງກາຍ: ວິທີການທາງກົດໝາຍ ໃນການຕັດສິນໂທດ/ກົດການບໍ່ດຳເນີນຄະດີ/ການບໍ່ລົງໂທດ' (2017) 56(3) *The Howard Journal of Crime ແລະ Justice* 309

- ທ່ານ Villacampa, Carolina, ແລະ Núria Torres, 'ການຄ້າມະນຸດເພື່ອການຂູດຮີດທາງອາຊະຍາກຳ: ຜົນກະທົບ ທີ່ຜູ້ຖືກເຄາະຮ້າຍປະເຊີນ ໃນຂະບວນການໃນຕະຫຼອດລະບົບຍຸຕິທຳອາຍາ', ວາລະສານ *International Review of Victimology,* 2019, ເຫຼັ້ມ 25(1) 3–18

- ທ່ານ Zornosa, Francisco, 'ການປົກປ້ອງຜູ້ຖືກເຄາະຮ້າຍຈາກການລົງໂທດ ແລະການສົ່ງເສີມໃຫ້ມີການຟື້ນຟູເຂົາເຈົ້າ: ຄວາມຈຳເປັນສຳລັບການປ້ອງກັນໂຕເອງ', ວາລະສານ *Washington and Lee Journal of Civil Rights and Social Justice,* 2016, ເຫຼັ້ມ 22, ພາກທີ 1, 177-203.

Australian Aid | ASEAN-Australia Counter Trafficking

ການຈັດຕັ້ງປະຕິບັດ ຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍ
ຈາກການຄ້າມະນຸດໃນລັດສະມາຊິກອາຊຽນ